
ເອກະສານສະບັບນີ້ເປັນພຽງເອກະສານສະບັບຮ່າງ ເພື່ອນຳໃຊ້ໃນການກະກຽມເປັນຂໍ້ມູນເຜີຍແຜ່ແກ່ມວນຊົນທົ່ວໄປຕາມມາດຕາ 15 ຂອງລະບຽບການເລື່ອງການອອກຈຳໜ່າຍຮຸ້ນ ເລກທີ 017/ຄຄຊ ລົງວັນທີ 22/10/2014 ເທົ່ານັ້ນ. ຈະບໍ່ມີສ່ວນໜຶ່ງສ່ວນໃດຂອງຮ່າງເອກະສານສະບັບນີ້ມີຜົນທາງກົດໝາຍ ຫຼື ມີຜົນໃຊ້ບັງຄັບ ຈົນກວ່າຈະໄດ້ຮັບການອະນຸມັດຈາກ ສຄຄຊ. ຮ່າງເອກະສານສະບັບນີ້ຍັງບໍ່ສົມບູນ, ບໍ່ແມ່ນສະບັບສຸດທ້າຍ ແລະ ຂໍ້ມູນທັງໝົດໃນຮ່າງເອກະສານສະບັບນີ້ອາດມີການປ່ຽນແປງໄດ້ ຂຶ້ນຢູ່ນຳການກວດສອບຈາກ ສຄຄຊ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ທ່ານອ່ານຄຳເຕືອນ ແລະ ຂໍ້ຄວາມປະຕິເສດການຮັບຜິດຊອບກ່ອນການເຂົ້າເຖິງ ຫຼື ນຳໃຊ້ສ່ວນໜຶ່ງສ່ວນໃດຂອງເອກະສານສະບັບນີ້. ນອກຈາກນັ້ນແລ້ວ, ຈະບໍ່ມີບໍລິສັດ, ຫຼື ບໍລິສັດໃນເຄືອໃດໜຶ່ງ ຫຼື ບໍລິສັດທີ່ປຶກສາ ທີ່ຈະຕ້ອງຍອມຮັບຜິດ ຫຼື ຮັບຜິດຊອບ ກ່ຽວຂ້ອງກັບການແກ້ໄຂ ຫຼື ການປ່ຽນແປງເຊິ່ງອາດເກີດຂຶ້ນໃນລະຫວ່າງການກວດສອບຂອງ ສຄຄຊ ບໍ່ວ່າຈະໃນກໍລະນີໃດກໍ່ຕາມ, ຫຼື ຈະຕ້ອງບໍ່ຂຶ້ນຢູ່ນຳບຸກຄົນໃດໜຶ່ງໃນຮ່າງເອກະສານສະບັບນີ້ ເພື່ອປະກອບການຕັດສິນໃຈລົງທຶນ. ຫາກຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ ເບີໂທລະສັບ (+856-21) 265-461-4, ເບີໂທລະສານ: (+856-21) 265-465-6.

ຮ່າງໜັງສືຊວນຊື້ສະບັບລົງວັນທີ 23 ມິຖຸນາ 2015

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

(ຂຶ້ນທະບຽນເປັນບໍລິສັດມະຫາຊົນ ທີ່ມີຄວາມຮັບຜິດຊອບຈຳກັດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ)

ຮຸ້ນສາມັນ [x] ຮຸ້ນ
(ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ)



ການສະເໜີຂາຍຮຸ້ນ

ສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ	**ຈຳນວນ [x] ຮຸ້ນ**	**ລາຄາທີ່ສະເໜີຂາຍ [x] ກີບ**
ສະເໜີຂາຍໃຫ້ກັບມວນຊົນທົ່ວໄປ	**ຈຳນວນ [x] ຮຸ້ນ**	**ລາຄາທີ່ສະເໜີຂາຍ [x] ກີບ**

ໄລຍະເວລາຂອງການສະເໜີຂາຍຮຸ້ນ:

ໄລຍະການສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ: ເວລາ 8:30 ເຖິງ 16:30, ລະຫວ່າງວັນທີ [x]-[x] 2015.
(ໃນວັນທີ [x] 2015, ໄລຍະການສະເໜີຂາຍຮຸ້ນຈະປິດ ໃນເວລາ 12:00 ທ່ຽງ)
ໄລຍະການສະເໜີຂາຍຮຸ້ນໃຫ້ກັບມວນຊົນທົ່ວໄປ: ເວລາ 8:30 ເຖິງ 16:30 ລະຫວ່າງວັນທີ [x]-[x] 2015.
(ໃນວັນທີ [x] 2015, ໄລຍະການສະເໜີຂາຍຮຸ້ນຈະປິດ ໃນເວລາ 12:00 ທ່ຽງ)

ທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ	*ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ*	*ທີ່ປຶກສາກົດໝາຍ*
ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ	**ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ**	**ບໍລິສັດ ລາວພຣີເມຍ ອິນເຕີເນຊັນແນລ ລໍ ອອຟຟິສ ຈຳກັດ**

ໃນການສະເໜີຂາຍຮຸ້ນຈະຖືກດຳເນີນໂດຍ ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ ("**ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ** ") ຜ່ານທະນາຄານພັດທະນາລາວ ແລະ ບໍລິສັດ ຫຼັກຊັບ ເຄ ທີ ຊີມິໂກ້ ຈຳກັດ ("**ຕົວແທນຈຳໜ່າຍຮຸ້ນ**") ຈຳນວນຮຸ້ນສາມັນເພີ່ມທຶນຈະບໍ່ຈົດທະບຽນພາຍໃຕ້ກົດໝາຍວ່າດ້ວຍຫຼັກຊັບຂອງປະເທດອື່ນ ນອກຈາກການຈົດທະບຽນຕາມກົດໝາຍວ່າດ້ວຍຫຼັກຊັບຂອງ ສປປ ລາວ.

ຄຳເຕືອນ

ໜັງສືຊວນຊື້ສະບັບນີ້ສ້າງຂຶ້ນ ເພື່ອໃຫ້ຜູ້ລົງທຶນທີ່ສົນໃຈລົງທຶນໃນຮຸ້ນສາມັນເພີ່ມທຶນທີ່ອອກໂດຍບໍລິສັດ ໃຊ້ເປັນຂໍ້ມູນເບື້ອງຕົ້ນສຳລັບການລົງທຶນເທົ່ານັ້ນ. ບໍ່ໄດ້ໝາຍຄວາມວ່າ ສຄຄຊ ແນະນຳໃຫ້ລົງທຶນໃນຫຼັກຊັບທີ່ສະເໜີຂາຍ, ຮັບປະກັນກ່ຽວກັບລາຄາ ຫຼື ຜົນຕອບແທນຂອງຫຼັກຊັບດັ່ງກ່າວ, ຮັບຮອງຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນໃນໜັງສືຊວນຊື້ສະບັບນີ້ແຕ່ຢ່າງໃດ. ການຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເນື້ອໃນ ແລະ ຂໍ້ມູນຕ່າງໆ ໃນໜັງສືຊວນຊື້ສະບັບນີ້ເປັນຄວາມຮັບຜິດຊອບຂອງບໍລິສັດ.

ຫາກວ່າເນື້ອໃນ ຫຼື ຂໍ້ມູນໃນໜັງສືຊວນຊື້ສະບັບນີ້ບໍ່ເປັນຄວາມຈິງ ຫຼື ຂາດຂໍ້ມູນສຳຄັນທີ່ຄວນແຈ້ງ ຜູ້ຖືຫຼັກຊັບສາມາດຮຽກຮ້ອງຄ່າເສຍຫາຍຈາກບໍລິສັດ ຫຼື ຜູ້ອອກຫຼັກຊັບໄດ້ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

"ທຸກການລົງທຶນມີຄວາມສ່ຽງ, ຜູ້ລົງທຶນຄວນອ່ານໜັງສືຊວນຊື້ຢ່າງລະອຽດກ່ອນການຕັດສິນໃຈລົງທຶນ"

ໜັງສືຊວນຊື້ສະບັບນີ້ໄດ້ຍື່ນຕໍ່ ສຄຄຊ ("**ໜັງສືຊວນຊື້ສະບັບພາສາລາວ**") ແລະ ອີກສະບັບກໍ່ໄດ້ແປເປັນພາສາອັງກິດ ("**ໜັງສືຊວນຊື້ສະບັບພາສາອັງກິດ**"). ເຖິງຢ່າງໃດກໍ່ຕາມ ໜັງສືຊວນຊື້ສະບັບພາສາອັງກິດຈະບໍ່ມີຜົນທາງດ້ານກົດໝາຍ.

ການສະເໜີຂາຍຮຸ້ນຄັ້ງນີ້ຈະສອດຄ່ອງກັບລະບຽບການຂອງ ສຄຄຊ ແລະ ໜັງສືຊວນຊື້ສະບັບພາສາລາວໄດ້ເຮັດຂຶ້ນເພື່ອຈຸດປະສົງໃນການສະເໜີຂາຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນທົ່ວໄປ. **ດັ່ງນັ້ນ, ຈຳນວນຮຸ້ນສາມັນເພີ່ມທຶນຈະບໍ່ໄດ້ຈົດທະບຽນພາຍໃຕ້ ກົດໝາຍວ່າດ້ວຍຫຼັກຊັບຂອງປະເທດອື່ນໃດນອກຈາກການຈົດທະບຽນຕາມກົດໝາຍວ່າດ້ວຍຫຼັກຊັບຂອງ ສປປ ລາວ.** ບໍ່ມີການຢັ້ງຢືນວ່າຮູບແບບ ຫຼື ເນື້ອໃນຂອງໜັງສືຊວນຊື້ສະບັບພາສາອັງກິດຈະມີຄວາມເໝາະສົມ ຫຼື ມີຂໍ້ມູນທີ່ພຽງພໍສຳລັບການສະເໜີຂາຍຮຸ້ນ. ສະນັ້ນ, ຜູ້ລົງທຶນຄວນອ່ານໜັງສືຊວນຊື້ສະບັບພາສາລາວ ແລະ ພາສາອັງກິດ ກ່ອນຕັດສິນໃຈລົງທຶນຊື້ຮຸ້ນສາມັນເພີ່ມທຶນນີ້.

ການສະເໜີຂາຍຮຸ້ນໃນຄັ້ງນີ້ແມ່ນການສະເໜີຂາຍຮຸ້ນສາມັນເພີ່ມທຶນຂອງບໍລິສັດໃຫ້ກັບຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ. ບໍລິສັດຄາດວ່າການຍື່ນສຳນວນຄຳຮ້ອງເພີ່ມທຶນຈົດທະບຽນຂອງບໍລິສັດພ້ອມກັບການປ່ຽນແປງໃບທະບຽນວິສາຫະກິດກັບຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ກະຊວງອຸດສະຫະກຳ ແລະ ການຄ້າ ("**ກຊອ**") ພາຍໃນ 10 ວັນລັດຖະການ ຫຼັງຈາກທີ່ໄດ້ສະເໜີຂາຍຮຸ້ນສຳເລັດ. ນອກຈາກນັ້ນ, ບໍລິສັດຈະຍື່ນຄຳຮ້ອງເພື່ອຈົດທະບຽນຮຸ້ນສາມັນເພີ່ມທຶນຕໍ່ຕະຫຼາດຫຼັກຊັບລາວ ("**ຕລຊລ**") ພາຍຫຼັງທີ່ບໍລິສັດໄດ້ໃບທະບຽນວິສາຫະກິດໃໝ່ ຈາກ ກຊອ. ບໍລິສັດຄາດວ່າຮຸ້ນສາມັນເພີ່ມທຶນຄັ້ງນີ້ ຈະຖືກຮັບຮອງໃນການຈົດທະບຽນຮຸ້ນຢູ່ ຕລຊລ ພາຍໃນ 7 ວັນ ຫຼັງຈາກຍື່ນຄຳຮ້ອງຈົດທະບຽນຮຸ້ນສາມັນເພີ່ມທຶນຢ່າງເປັນທາງການ.

ບໍລິສັດຄາດວ່າຈະໄດ້ຮັບການຊຳລະຄ່າຮຸ້ນທີ່ສະເໜີຂາຍ ພາຍໃນ 10 ວັນລັດຖະການ ຫຼັງຈາກສຳເລັດການຂາຍຮຸ້ນ ເຊິ່ງຈະຖືກນຳມາໃຊ້ເປັນເງິນທຶນ, ຮຸ້ນທີ່ສະເໜີຂາຍຈະສົ່ງມອບໃຫ້ແກ່ຜູ້ລົງທຶນຜ່ານລະບົບການຮັບຝາກຫຼັກຊັບ ທີ່ສູນຮັບຝາກຫຼັກຊັບ ຂອງ ຕລຊລ ພາຍໃນ 15 ວັນລັດຖະການ.

ກ່ອນລົງທຶນຊື້ຮຸ້ນ, ຜູ້ລົງທຶນຄວນພິຈາລະນາຄວາມສ່ຽງຕ່າງໆ ທີ່ກ່ຽວຂ້ອງ, ກະລຸນາອ່ານພາກວ່າດ້ວຍ "ປັດໄຈຄວາມສ່ຽງ".

<u>ລາຍຊື່ທີ່ປຶກສາທາງການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍຮຸ້ນ, ຜູ້ຈັດສັນຮຸ້ນ, ບໍລິສັດທີ່ປຶກສາກົດໝາຍ ແລະ ຜູ້ກວດສອບພາຍນອກ</u>

ຜູ້ອອກຮຸ້ນ :
ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ
ຊັ້ນ 7, ອາຄານສຳນັກງານໃຫຍ່,
ຖະໜົນ ມິດຕະພາບ ລາວ-ໄທ, ຕູ້ ປ.ນ 2392, ບ້ານທົ່ງກາງ,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທລະສັບ: (+856-21) 316-142, ເບີໂທລະສານ: (+856-21) 316-141,
ເວັບໄຊ: www.edlgen.com.la

ທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ :
ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ
ຊັ້ນ 5, ຕຶກ ຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ,
ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ເບີໂທລະສັບ (+856-21) 265-461-4, ເບີໂທລະສານ: (+856-21) 265-465-6,
ເວັບໄຊ: www.lxs.com.la

ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ :
ບໍລິສັດ ຫຼັກຊັບ ເຄທີ ຊິມິໂກ້ ຈຳກັດ
ຊັ້ນ 16 ຕຶກລີເບີຕີ້ສະແຄວ 287, ຖະໜົນ ສີລົມ, ເຂດບາງຣັກ, ກຸງເທບ,
ປະເທດໄທ.
ເບີໂທລະສັບ (+66) 695-5103, ເບີໂທລະສານ: (+66) 631-2242,
ເວັບໄຊ: www.ktzmico.com

ບໍລິສັດທີ່ປຶກສາກົດໝາຍ :
ບໍລິສັດ ລາວພຣີເມຍ ອິນເຕີເນຊັນແນລ ລໍອຟຟິສ ຈຳກັດ
ຊັ້ນ 7, ຕຶກ ຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ,
ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ເບີໂທລະສັບ (+856-21) 265-471, ເບີໂທລະສານ: (+856-21) 265-474,
ເວັບໄຊ: www.laopremier.com

ຜູ້ກວດສອບພາຍນອກ :
ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ (ລາວ) ຈຳກັດ
ໜ່ວຍ 1, ຊັ້ນ 4, ອາຄານເອເອັນແຊັດ ວຽງຈັນພານິດ 33, ຖະໜົນລ້ານຊ້າງ,
ບ້ານ ຫ້ວຍສະຕີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທລະສັບ: (+856-21) 222-718
ເບີໂທລະສານ: (+856-21) 222-723,
ເວັບໄຊ: www.pwc.com.la

ສາລະບານ

ແຈ້ງການສຳຄັນ..... 1
ອະທິບາຍຄຳສັບ ແລະ ອັກສອນຫຍໍ້..... 3
ພາກສັງລວມ..... 8
ພາກ 1 ຂໍ້ມູນບໍລິສັດ..... 25
1. ຂໍ້ມູນບໍລິສັດ..... 25
2. ການນຳໃຊ້ລາຍຮັບຈາກການຂາຍຮຸ້ນ..... 28
3. ປັນດາປັດໄຈຄວາມສ່ຽງ..... 30
4. ການດຳເນີນທຸລະກິດ..... 42
5. ຊັບສິນທີ່ໃຊ້ໃນການດຳເນີນງານ..... 61
6. ໂຄງການໃນອະນາຄົດ..... 81
7. ຂໍ້ຂັດແຍ່ງທາງກົດໝາຍ..... 92
8. ໂຄງສ້າງທຶນ..... 93
9. ໂຄງຮ່າງການຈັດຕັ້ງ..... 97
10. ການກວດກາພາຍໃນ 105
11. ການດຳເນີນທຸລະກຳທີ່ກ່ຽວພັນ..... 110
12. ຖານະທາງການເງິນ ແລະ ຂໍ້ມູນການດຳເນີນງານ..... 112
13. ຂໍ້ມູນອື່ນທີ່ກ່ຽວຂ້ອງ..... 125
ພາກ 2 ຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີຂາຍຫຼັກຊັບ..... 126
1. ລາຍລະອຽດຂອງການເພີ່ມທຶນ..... 126
2. ຂໍ້ຈຳກັດໃນການໂອນຮຸ້ນ ແລະ ຂໍ້ຈຳກັດໃນການຖືຮຸ້ນໂດຍຄົນຕ່າງປະເທດ..... 126
3. ການກຳນົດລາຄາສະເໜີຂາຍ..... 127
4. ລາຍລະອຽດຂອງທີ່ປຶກສາການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ... 127
5. ເງື່ອນໄຂຂອງການຄ້ຳປະກັນ..... 127
6. ຄາດຄະເນລາຍຈ່າຍໃນການສະເໜີຂາຍຮຸ້ນ..... 128
7. ຂັ້ນຕອນການຂໍຮັບເອົາໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນ..... 128
8. ວິທີການຈອງຊື້ຮຸ້ນ..... 130
9. ວິທີການຊຳລະການຈອງຊື້ຮຸ້ນ..... 130
10. ການຈັດສັນຮຸ້ນໃນກໍລະນີທີ່ມີການຈອງຊື້ຮຸ້ນເກີນຈຳນວນຮຸ້ນທີ່ອອກຈຳໜ່າຍ..... 131
11. ການສົ່ງຄ່າຈອງຊື້ຮຸ້ນຄືນໃນກໍລະນີທີ່ບໍ່ໄດ້ຮັບການຈັດສັນຮຸ້ນ..... 131

12. ການຈັດສັນຮຸ້ນສາມັນເພີ່ມທຶນ..... 132
13. ການສົ່ງມອບຮຸ້ນສາມັນເພີ່ມທຶນ..... 132
14. ການໂອນຮຸ້ນ..... 132
15. ເງິນປັນຜົນ..... 132
16. ກອງປະຊຸມສາມັນຜູ້ຖືຮຸ້ນ..... 133
17. ສິດໃນການລົງຄະແນນສຽງ..... 134
18. ສິດໃນການຈອງຊື້ຮຸ້ນໃໝ່ ແລະ ການອອກຮຸ້ນສາມັນເພີ່ມທຶນ..... 134
19. ການເປີດເຜີຍບົດລາຍງານດ້ານງານເງິນ..... 135
20. ສິດໃນການຊຳລະສາງ..... 136
21. ການຊື້ຮຸ້ນຄືນຂອງບໍລິສັດ..... 136
22. ການຈົດທະບຽນຜູ້ຖືຮຸ້ນ..... 136
ພາກ 3 ໃບຢັ້ງຢືນຄວາມຖືກຕ້ອງຂອງໜັງສືຊວນຊື້ສະບັບພາສາລາວ..... 137
1. ໃບຢັ້ງຢືນຄວາມຖືກຕ້ອງໂດຍບໍລິສັດ..... 137
2. ໃບຢັ້ງຢືນຄວາມຖືກຕ້ອງຂອງບໍລິສັດຫຼັກຊັບ..... 139
ເອກະສານຊ້ອນທ້າຍ 1 ບົດລາຍງານດ້ານການເງິນ..... 140

ສາລະບານຕາຕະລາງ

ຕາຕະລາງ ກ ໂຄງສ້າງການຖືຮຸ້ນຂອງບໍລິສັດ ວັນທີ 17 ມີນາ 2015 15
ຕາຕະລາງ ຂ ສະພາບໍລິຫານຂອງບໍລິສັດ..... 16
ຕາຕະລາງ ຄ ຄະນະອຳນວຍການຂອງບໍລິສັດ..... 17
ຕາຕະລາງ ງ ສະຫຼຸບຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີການບັນຊີ 2014 ແລະ 2013..... 17
ຕາຕະລາງ ຈ ລາຍລະອຽດຂອງລາຍຮັບ..... 20
ຕາຕະລາງ ສ ລາຍລະອຽດຂອງການຜະລິດໄຟຟ້າ..... 20
ຕາຕະລາງ ຊ ລາຍລະອຽດຄ່າໃຊ້ຈ່າຍ..... 20
ຕາຕະລາງ ຍ ຜົນຂອງການດຳເນີນງານ..... 22
ຕາຕະລາງ 2.1 ເນື້ອໃນຂອງການລົງທຶນຂອງຊັບສິນ..... 28
ຕາຕະລາງ 4.1 ຕາຕະລາງຊັບສິນທີ່ໄດ້ໂອນໃຫ້ກັບບໍລິສັດໃນອັນສ້າງຕັ້ງ (ເປັນເຈົ້າຂອງແຕ່ພຽງຜູ້ດຽວ)..... 42
ຕາຕະລາງ 4.2 ການສະຫຼຸບພັນທະດ້ານໜີ້ສິນທີ່ຈະຕ້ອງຊຳລະຄືນໃນປະຈຸບັນ..... 43
ຕາຕະລາງ 4.3 ລາຍລະອຽດຂອງ ໂຄງການ IPP ທີ່ ຜ-ຟຟລ ຖືຮຸ້ນ..... 43
ຕາຕະລາງ 4.4 ລາຍລະອຽດໂຄງການເຂື່ອນໄຟຟ້ານ້ຳງື່ມ 5 44
ຕາຕະລາງ 4.5 ຂໍ້ມູນດ້ານການເງິນ 46
ຕາຕະລາງ 4.6 ລາຍລະອຽດຂອງລາຍຮັບ..... 47
ຕາຕະລາງ 4.7 ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ໃນໄລຍະເວລາ ແລະ ແຜນການກໍ່ສ້າງ (ເປັນເຈົ້າຂອງທັ

	ໝົດ).....	49
ຕາຕະລາງ 4.8	ໂຄງການ IPP ທີ່ ຟຟລ ຖືຮຸ້ນ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ.....	49
ຕາຕະລາງ 4.9	ໂຄງການ IPPs ຢູ່ພາຍໃຕ້ການດຳເນີນງານໂດຍ ຟຟລ ໃນປະຈຸບັນ.....	50
ຕາຕະລາງ 4.10	ແຜນການລົງທຶນໃນບັນດາໂຄງການໄຟຟ້າອື່ນ	50
ຕາຕະລາງ 4.11	ລາຍການຂອງເຂື່ອນຜະລິດໄຟຟ້າ ທີ່ຈະຕ້ອງຊື້ ທີ່ກ່ຽວພັນກັບການອອກຮຸ້ນກູ້.....	51
ຕາຕະລາງ 4.12	ການບໍລິຫານຊັບສິນ.....	52
ຕາຕະລາງ 4.13	ສະຖິຕິການຊົມໃຊ້ໄຟຟ້າແຕ່ລະກຸ່ມຜູ້ຊົມໃຊ້.....	54
ຕາຕະລາງ 5.1	ຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນອັນສ້າງຕັ້ງ.....	61
ຕາຕະລາງ 5.2	ໂຄງການ IPPs ຂອງ ຜ-ຟຟລ.....	70
ຕາຕະລາງ 5.3	ລາຄາຮຸ້ນຂອງ ຜ-ຟຟລ ທີ່ຜ່ານມາ	79
ຕາຕະລາງ 6.1	ປະຫວັດຄວາມຕ້ອງການຊົມໃຊ້ໄຟຟ້າພາຍໃນ ສປປ ລາວ.....	81
ຕາຕະລາງ 6.2	ແຜນການກໍ່ສ້າງການຜະລິດໄຟຟ້າຂອງບໍລິສັດ.....	87
ຕາຕະລາງ 6.3	ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ (ທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ).....	88
ຕາຕະລາງ 6.4	ໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ	88
ຕາຕະລາງ 6.5	ໂຄງການ IPPs ທີ່ໄດ້ດຳເນີນໂດຍ ຟຟລ ໃນປະຈຸບັນ	88
ຕາຕະລາງ 6.6	ແຜນການລົງທຶນໃນ ໂຄງການອື່ນໆ ຂອງ IPP	89
ຕາຕະລາງ 6.7	ລາຍການໂຄງການເຂື່ອນໄຟຟ້າທີ່ຖືກຊື້ອັນເນື່ອງມາຈາກການອອກຮຸ້ນກູ້.....	89
ຕາຕະລາງ 6.8	ການບໍລິຫານຊັບສິນ.....	91
ຕາຕະລາງ 8.1	ໃບລາຍງານຖານະການເງິນຂອງບໍລິສັດໃນວັນທີ 31 ທັນວາ 2014 ແລະ 31 ທັນວາ 2013.....	93
ຕາຕະລາງ 8.2	ໂຄງສ້າງທຶນບໍລິສັດ ໃນວັນທີ 17 ມີນາ 2015.....	95
ຕາຕະລາງ 8.3	ສະຫຼຸບພັນທະໜີ້ສິນປະຈຸບັນຂອງບໍລິສັດ.....	95
ຕາຕະລາງ 9.1	ສະພາບໍລິຫານຂອງບໍລິສັດ.....	98
ຕາຕະລາງ 9.2	ຄະນະຜູ້ອຳນວຍການໃຫຍ່ຂອງບໍລິສັດ.....	101
ຕາຕະລາງ 9.3	ທີມງານບໍລິຫານຂອງບໍລິສັດ.....	103
ຕາຕະລາງ 9.4	ພະນັກງານຂອງບໍລິສັດ.....	104
ຕາຕະລາງ 10.1	ຄະນະກຳມະການກວດກາພາຍໃນບໍລິສັດ.....	105
ຕາຕະລາງ 11.1	ການດຳເນີນລາຍການທີ່ກ່ຽວພັນ.....	110
ຕາຕະລາງ 12..1	ສະຫຼຸບຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີການບັນຊີ 2014 ແລະ 2013.....	112
ຕາຕະລາງ 12.2	ອັດຕາສ່ວນທາງການເງິນ.....	114
ຕາຕະລາງ 12.3	ຊັບສິນທີ່ໂອນໃຫ້ບໍລິສັດໃນອັນສ້າງຕັ້ງ.....	116
ຕາຕະລາງ 12.4	ອັດຕາສ່ວນການຖືຮຸ້ນໃນ 4 ໂຄງການທີ່ໄດ້ຈາກການລະດົມທຶນເພີ່ມ.....	116
ຕາຕະລາງ 12.5	ເຂື່ອນໄຟຟ້າ ແລະ ໂຄງການ IPPs ທີ່ນຳໃຊ້ທຶນຈາກຮຸ້ນກູ້.....	117
ຕາຕະລາງ 12.6	ລາຍລະອຽດຂອງລາຍຮັບ.....	118

ຕາຕະລາງ 12.7 ລາຍລະອຽດຂອງການຜະລິດ..... 118
ຕາຕະລາງ 12.8 ລາຍລະອຽດຂອງລາຍຈ່າຍ..... 119
ຕາຕະລາງ 12.9 ຜົນການດຳເນີນການ..... 120

ສາລະບານຮູບພາບ

ຮູບ ກ ໂຄງສ້າງຂອງທຸລະກິດ..... 15
ຮູບ 4.1 ໂຄງສ້າງບໍລິສັດ..... 42
ຮູບ 4.2 ລາຍລະອຽດການຂາຍ..... 47
ຮູບ 4.3 ປະຫວັດອັດຕາຄວາມຕ້ອງການໄຟຟ້າສູງສຸດ ສຳລັດໄລຍະ 2010-2013..... 54
ຮູບ 4.4 ຂະບວນການຜະລິດພະລັງງານໄຟຟ້າ..... 56
ຮູບ 6.1 ການຄາດຄະເນຄວາມຕ້ອງການ ແລະ ການສະໜອງພະລັງງານໄຟຟ້າພາຍໃນ ສປປ ລາວ..... 82
ຮູບ 8.1 ໂຄງສ້າງທຶນຂອງບໍລິສັດ ແລະ ໂຄງສ້າງທຶນໝູນວຽນໃນວັນທີ 31 ທັນວາ 2014..... 94
ຮູບ 9.1 ໂຄງຮ່າງການຈັດຕັ້ງ 97

<u>ແຈ້ງການສຳຄັນ</u>

ຂໍ້ມູນໃນໜັງສືຊວນຊື້ສະບັບນີ້ອາດມີຄວາມຖືກຕ້ອງສະເພາະແຕ່ໃນວັນທີທີ່ລະບຸໃນໜັງສືຊວນຊື້ສະບັບນີ້ເທົ່ານັ້ນ. ຜູ້ລົງທຶນຄວນເຂົ້າໃຈວ່າຫຼັງຈາກວັນທີທີ່ລະບຸໃນໜັງສືຊວນຊື້ສະບັບນີ້, ຂໍ້ມູນບາງຢ່າງອາດມີການປ່ຽນແປງ ເຊັ່ນ: ຂໍ້ມູນດ້ານທຸລະກິດ, ເງື່ອນໄຂດ້ານການເງິນ, ຜົນການດຳເນີນງານ ເຊິ່ງອາດມີຜົນກະທົບຕໍ່ຄວາມຖືກຕ້ອງ ຫຼື ຄົບຖ້ວນຂອງຂໍ້ມູນໃນໜັງສືຊວນຊື້ສະບັບນີ້.

ໃນການຕັດສິນໃຈລົງທຶນ, ຜູ້ລົງທຶນຕ້ອງອີງໃສ່ການສຶກສາດ້ວຍຕົນເອງໃນການສຶກສາໜັງສືຊວນຊື້ສະບັບພາສາລາວ, ໜັງສືຊວນຊື້ສະບັບພາສາອັງກິດ ແລະ ເອກະສານອື່ນທີ່ກ່ຽວກັບການສະເໜີຂາຍຮຸ້ນໃນຄັ້ງນີ້ ຢ່າງມີເຫດຜົນ ແລະ ຄວາມລະມັດລະວັງ. ຜູ້ລົງທຶນຕ້ອງບໍ່ຍຶດຖືເນື້ອໃນໜັງສືຊວນຊື້ສະບັບນີ້, ເອກະສານຊ້ອນທ້າຍເປັນຄຳແນະນຳດ້ານກົດໝາຍ, ທຸລະກິດ, ການເງິນ ຫຼື ອາກອນ. ຜູ້ລົງທຶນແຕ່ລະຄົນຄວນ ປຶກສາຫາລືກັບທີ່ປຶກສາດ້ານກົດໝາຍ, ດ້ານທຸລະກິດ ແລະ ອາກອນຂອງຕົນເອງ ກ່ຽວກັບການລົງທຶນຊື້ຮຸ້ນສາມັນເພີ່ມທຶນທີ່ສະເໜີຂາຍຕາມແຕ່ລະກໍລະນີ.

ການສະເໜີຂາຍຮຸ້ນຄັ້ງນີ້ບໍ່ໄດ້ຮັບການອະນຸມັດ ຫຼື ແນະນຳຈາກໜ່ວຍງານຂອງປະເທດອື່ນ ນອກຈາກ ສຄຄຊ ແລະ ຮູບແບບ ຫຼື ເນື້ອໃນຂອງໜັງສືຊວນຊື້ສະບັບນີ້ບໍ່ໄດ້ມີການຢັ້ງຢືນເຖິງຄວາມເໝາະສົມ ຫຼື ມີຂໍ້ມູນທີ່ພຽງພໍສຳລັບການສະເໜີຂາຍຮຸ້ນໃນປະເທດອື່ນ.

ໜັງສືຊວນຊື້ ສະບັບນີ້ ແມ່ນອີງຕາມຂໍ້ມູນທີ່ຕອບສະໜອງໂດຍບໍລິສັດ ແລະ ແຫຼ່ງຂໍ້ມູນອື່ນໆ. ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນໄດ້ສົ່ງມອບໜັງສືຊວນຊື້ສະບັບນີ້ໃຫ້ແກ່ຜູ້ລົງທຶນ ເພື່ອການສະເໜີຂາຍຮຸ້ນສາມັນເພີ່ມທຶນ ແລະ ນຳໃຊ້ເພື່ອເປັນການສຶກສາຂໍ້ມູນກ່ອນການຕັດສິນໃຈລົງທຶນໃນອະນາຄົດ. ໜັງສືຊວນຊື້ສະບັບນີ້ບໍ່ໄດ້ໝາຍຄວາມວ່າຈະມີຂໍ້ມູນຄົບຖ້ວນ ຫຼື ມີຂໍ້ມູນທີ່ຈຳເປັນທີ່ຜູ້ລົງທຶນຈະຕ້ອງມີການກວດສອບຂໍ້ມູນບໍລິສັດ ຫຼື ຈົນກວ່າຈະແນ່ໃຈວ່າມີຂໍ້ມູນທີ່ພຽງພໍ ກ່ອນການຕັດສິນໃຈລົງທຶນ. ໜັງສືຊວນຊື້ສະບັບພາສາລາວໄດ້ຮັບການສ້າງຂຶ້ນເພື່ອເປັນການແຈ້ງຈຸດປະສົງກ່ຽວກັບການສະເໜີຂາຍຮຸ້ນເທົ່ານັ້ນ ແລະ ເປັນທີ່ເຂົ້າໃຈແລ້ວວ່າໜັງສືຊວນຊື້ສະບັບນີ້ແມ່ນຈະຖືກນຳໃຊ້ຕາມຈຸດປະສົງທີ່ໄດ້ລະບຸໃນຂ້າງເທິງເທົ່ານັ້ນ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນໃນການຈຳໜ່າຍຮຸ້ນ ຫຼື ສະມາຊິກໃດໜຶ່ງ, ພະນັກງານໃນບໍລິສັດ, ກຸ່ມບຸກຄົນທີ່ກ່ຽວຂ້ອງ, ຄະນະອຳນວຍການ, ຜູ້ຕາງໜ້າ, ຕົວແທນ ຫຼື ບໍລິສັດໃນເຄືອ ບໍ່ໄດ້ໃຫ້ທັດສະນະ ຫຼື ໃຫ້ການຮັບຮອງ ຫຼື ໃຫ້ການຮັບຮອງຄວາມຖືກຕ້ອງ ຫຼື ຮັບຜິດຊອບຕໍ່ຄວາມພຽງພໍຂອງຂໍ້ມູນ, ຄວາມຖືກຕ້ອງຂອງເນື້ອຫາ, ຄວາມສົມເຫດສົມຜົນ ຫຼື ຄວາມສົມບູນຄົບຖ້ວນຂອງຂໍ້ມູນທີ່ລະບຸໃນໜັງສືຊວນຊື້ສະບັບນີ້ ຫຼື ເຮັດໃຫ້ມີຜົນຕໍ່ການກວດສອບຂໍ້ມູນໃນອະນາຄົດກ່ອນການຕັດສິນໃຈລົງທຶນ ຫຼື ຈະບໍ່ມີຂໍ້ມູນ ຫຼື ການຮັບຮອງໃດທີ່ຖືກລະເວັ້ນ ເຊິ່ງອາດຈະກະທົບຕໍ່ຄວາມສຳຄັນຂອງຂໍ້ມູນ ຫຼື ການຮັບຮອງທີ່ໄດ້ລະບຸໄວ້ໃນນີ້. ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍຮຸ້ນ ແລະ ທີ່ປຶກສາດ້ານກົດໝາຍຈະປະຕິເສດຄວາມຮັບຜິດຊອບໃດໜຶ່ງ ແລະ ທັງໝົດ ໃນຂໍ້ມູນທີ່ໄດ້ອ້າງອີງໄວ້ແລ້ວ ຫຼື ຄວາມຜິດພາດ ຫຼື ການລະເວັ້ນຂໍ້ມູນນັ້ນ. ຈະບໍ່ມີບຸກຄົນໃດທີ່ມີອຳນາດໃນການໃຫ້ຂໍ້ມູນ ຫຼື ໃຫ້ການຮັບຮອງທີ່ພົ້ນເຖິງການສະເໜີຂາຍຮຸ້ນໃນຄັ້ງນີ້ ນອກຈາກຂໍ້ມູນທີ່ໄດ້ລະບຸໃນໜັງສືຊວນຊື້ສະບັບນີ້ ແລະ ຖ້າມີການໃຫ້ຂໍ້ມູນອື່ນ ຫຼື ການຮັບຮອງໃດໜຶ່ງ, ຜູ້ລົງທຶນຈະຕ້ອງບໍ່ເຊື່ອວ່າຂໍ້ມູນດັ່ງກ່າວເປັນການຮັບຮອງ ຫຼື ໃຫ້ຂໍ້ມູນຈາກບໍລິສັດ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນໃນການຈຳໜ່າຍຮຸ້ນ ຫຼື ໂດຍບໍລິສັດໃນເຄືອໃດໜຶ່ງ ຫຼື ຜູ້ຕາງໜ້າ.

ໜັງສືຊວນຊື້ສະບັບນີ້ ມີການລະບຸເຖິງສະກຸນເງິນໂດລາສະຫະລັດຕາມອັດຕາແລກປ່ຽນທີ່ກຳນົດໄວ້ ເພື່ອສ້າງຄວາມສະດວກໃຫ້ຜູ້ລົງທຶນເທົ່ານັ້ນ. ນອກຈາກກໍລະນີທີ່ໄດ້ກຳນົດໄວ້ຢ່າງອື່ນ, ທຸກການແລກປ່ຽນສະກຸນເງິນກີບເປັນສະກຸນເງິນບາດໄທ ຫຼື ໂດລາສະຫະລັດ ທີ່ລະບຸໄວ້ໃນໃບລາຍງານການເງິນນັ້ນ ໄດ້ອີງໃສ່ອັດຕາແລກປ່ຽນ ຕາມທີ່ໄດ້ລະບຸໃນໝາຍເຫດ 9 ຂອງໃບລາຍງານການເງິນ ທີ່ໄດ້ກະກຽມໂດຍຜູ້ກວດສອບພາຍນອກເທົ່ານັ້ນ. ຈະບໍ່ມີການຮັບຮອງວ່າມູນຄ່າ ຫຼື ຈຳນວນເງິນ ກີບ/ບາດໄທ/ໂດລາສະຫະລັດ ທີ່ອ້າງເຖິງໃນນີ້ຈະຖືກປ່ຽນແປງ ໃນອັດຕາສະເພາະໃດໜຶ່ງ. ການຜິດຄ່ຽງໃດໆ ໃນຕາຕະລາງທີ່ບັນຈຸໃນໜັງສືຊວນຊື້ສະບັບນີ້ ລະຫວ່າງຈຳນວນໃດໜຶ່ງ ແລະ ຍອດລວມ ເກີດຂຶ້ນຈາກການປັບສ່ວນເສດ.

ອະທິບາຍຄຳສັບ ແລະ ອັກສອນຫຍໍ້

- "**ADB**" ໝາຍເຖິງ ທະນາຄານ ພັດທະນາອາຊີ;
- "**AOA**" ໝາຍເຖິງ ກິດລະບຽບຂອງບໍລິສັດ ລວມທັງກິດລະບຽບສະບັບປັບປຸງ
- "**ASEAN**" ໝາຍເຖິງ ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້;
- "**ການໂອນຊັບສິນໃຫ້ກັບບໍລິສັດໃນອັນສ້າງຕັ້ງ**" ໝາຍເຖິງ ຄວາມເປັນເຈົ້າຂອງທັງໝົດ ໃນຊັບສິນຂອງເຂື່ອນໄຟຟ້າ ແລະ ບັນດາຊັບສິນທີ່ເຂື່ອນໄຟຟ້າດັ່ງກ່າວໄດ້ໂອນຈາກ ຟຟລ ໃຫ້ກັບບໍລິສັດ ໃນອັນສ້າງຕັ້ງບໍລິສັດ;
- "**BCEL**" ໝາຍເຖິງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ;
- "**ຜູ້ຈັດສັນຮຸ້ນ**" ໝາຍເຖິງ ບໍລິສັດ ຫຼັກຊັບ ເຄທີຊີມີໂກ້ ຈຳກັດ;
- "**ກຳປູເຈຍ**" ໝາຍເຖິງ ລາຊະອານາຈັກກຳປູເຈຍ;
- "**ຮຸ້ນສາມັນເພີ່ມທຶນ**" ໝາຍເຖິງ ການສະເໜີຂາຍຮຸ້ນສາມັນຈຳນວນ [x] ຮຸ້ນຂອງບໍລິສັດ (ສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ ຈຳນວນ[x] ຮຸ້ນ ; ແລະ ສະເໜີຂາຍໃຫ້ກັບມວນຊົນທົ່ວໄປ ຈຳນວນ [x] ຮຸ້ນ) (ກະລຸນາເບິ່ງ "ລາຍລະອຽດກ່ຽວກັບການສະເໜີຂາຍ ແລະ ວິທີສະເໜີຂາຍ");
- "**CASAPPAC**" ໝາຍເຖິງ ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຜູ້ຖືຮຸ້ນ ແລະ ສັນຍາຊື້ຂາຍ ໄຟຟ້າ;
- "**CAs**" ໝາຍເຖິງ ສັນຍາສຳປະທານທີ່ພົວພັນເຖິງເຂື່ອນໄຟ້າ ລະຫວ່າງ ລັດຖະບານລາວ ແລະ ຜູ້ສຳປະທານ ແລະ "**CA**" ໝາຍເຖິງ ສັນຍາສຳປະທານແຕ່ລະສະບັບນັ້ນ;
- "**CAGR**" ໝາຍເຖິງ ອັດຕາການຂະຫຍາຍຕົວປະຈຳປີ;
- "**ຈີນ**" ໝາຍເຖິງ ສາທາລະນາລັດ ປະຊາຊົນຈີນ;
- "**COD**" ໝາຍເຖິງ ວັນເລີ່ມຕົ້ນດຳເນີນການຂາຍກະແສໄຟຟ້າ;
- "**ບໍລິສັດ**" ຫຼື "**ຜ-ຟຟລ**" ໝາຍເຖິງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ທີ່ຂຶ້ນທະບຽນຢູ່ ສປປ ລາວ ເປັນບໍລິສັດ ມະຫາຊົນທີ່ມີຄວາມຮັບຜິດຊອບຈຳກັດ;
- "**ສັນຍາຊຳລະໜີ້ສິນ**" ໝາຍເຖິງ ຊຳລະໜີ້ສິນລະຫວ່າງ ຟຟລ ແລະ ບໍລິສັດ;
- "**EBIT**" ໝາຍເຖິງ ກຳໄລກ່ອນຫັກຕົ້ນທຶນທາງການເງິນ ແລະ ອາກອນ;
- "**EBITDA**" ໝາຍເຖິງ ກຳໄລກ່ອນຫັກຕົ້ນທຶນທາງການເງິນ, ອາກອນ, ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ;

- "**ຟຟລ**" ໝາຍເຖິງ ລັດວິສາຫະກິດໄຟຟ້າລາວ;
- "**ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ**" ໝາຍເຖິງ ໂຄງການເຂື່ອນໄຟຟ້າ ທີ່ ຟຟລ ເປັນເຈົ້າຂອງທັງໝົດ ເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ ຕາມໜັງສືຊວນຊື້ສະບັບນີ້;
- "**ໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ**" ໝາຍເຖິງ ບັນດາໂຄງການເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງໃນປະຈຸບັນ ແລະມີ ຟຟລ ເປັນຜູ້ຖືຮຸ້ນ ຫຼື ຈະໄດ້ເປັນຜູ້ຖືຮຸ້ນໃນອະນາຄົດ;
- "**ໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນທີ່ກຳລັງດຳເນີນງານ**" ໝາຍເຖິງ ບັນດາໂຄງການ IPP ທີ່ກຳລັງດຳເນີນການ ແລະມີ ຟຟລ ເປັນຜູ້ຖືຮຸ້ນ;
- "**ຊັບສິນທີ່ໃຊ້ໃນການຜະລິດເຂື່ອນໄຟຟ້າຂອງ ຜ-ຟຟລ**" ໝາຍເຖິງ ຊັບສິນທັງໝົດທີ່ນຳໃຊ້ໃນການຜະລິດໃນເຂື່ອນໄຟຟ້າ ທີ່ກຳລັງດຳເນີນງານຢູ່ໃນປະຈຸບັນຂອງບໍລິສັດ ແລະ ບັນດາໂຄງການ IPP ເຊິ່ງມີ ຜ-ຟຟລ ເປັນຜູ້ຖືຮຸ້ນ.
- "**ໂຄງການ IPPs ຂອງ ຟຟລ**" ໝາຍເຖິງ ບັນດາໂຄງການ IPP ໃດໜຶ່ງ ເຊິ່ງ ຟຟລ ເປັນຜູ້ຖືຮຸ້ນ ຫຼື ຈະໄດ້ເຂົ້າໄປເປັນຜູ້ຖືຮຸ້ນ ແລະ ລວມເຖິງ "**ໂຄງການ IPPs ທີ່ ຟຟລ ເປັນຮຸ້ນສ່ວນທີ່ກຳລັງດຳເນີນງານ**" ແລະ "**ໂຄງການ IPPs ທີ່ ຟຟລ ເປັນຮຸ້ນສ່ວນເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ**";
- "**EGAT**" ໝາຍເຖິງ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ;
- "**ໜັງສືຊວນຊື້ສະບັບພາສາອັງກິດ**" ໝາຍເຖິງ ການແປເປັນສະບັບພາສາອັງກິດຈາກໜັງສືຊວນຊື້ສະບັບພາສາລາວ;
- "**ກົດໝາຍວິສາຫະກິດ**" ໝາຍເຖິງ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- "**ບົດລາຍງານດ້ານການເງິນ**" ໝາຍເຖິງ ໃບລາຍງານດ້ານການເງິນຂອງບໍລິສັດໃນປີການບັນຊີ 2014 ເຊິ່ງກວດສອບບັນຊີໂດຍບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດ;
- "**ປີການບັນຊີ**" ໝາຍເຖິງ ໄລຍະການບັນຊີຂອງບໍລິສັດ, ເລີ່ມວັນທີ 1 ມັງກອນ ເຖິງ 31 ທັນວາ;
- "**ລັດຖະບານລາວ**" ໝາຍເຖິງ ລັດຖະບານແຫ່ງ ສປປ ລາວ;
- "**ຮ່ອງກົງ**" ໝາຍເຖິງ ເຂດປົກຄອງພິເສດ ຮ່ອງກົງ;
- "**ວັນສ້າງຕັ້ງ**" ໝາຍເຖິງ ວັນທີ 15 ທັນວາ 2010;
- "**IPPs**" ໝາຍເຖິງ ຜູ້ຜະລິດພະລັງງານອິດສະລະໃນ ສປປ ລາວ ແລະ "**IPP**" ແລະ ໝາຍເຖິງ ຜູ້ຜະລິດພະລັງງານອິດສະລະໃນ ສປປ ລາວ ແຕ່ລະລາຍ;
- "**ເຢນ**" ໝາຍເຖິງ ສະກຸນເງິນຂອງປະເທດຍີ່ປຸ່ນ;

- "**ກີບ**" ໝາຍເຖິງ ສະກຸນເງິນຂອງ ສປປ ລາວ;
- "**ເກົາຫຼີ**" ໝາຍເຖິງ ສາທາລະນະລັດ ເກົາຫຼີ;
- "**ສປປ ລາວ**" ໝາຍເຖິງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- "**ໜັງສືຊວນຊື້ສະບັບພາສາລາວ**" ໝາຍເຖິງ ໜັງສືຊວນຊື້ສະບັບນີ້ໃນພາສາລາວ ທີ່ໄດ້ຍື່ນຕໍ່ ສຄຄຊ;
- "**ທະນາຄານ ພັດທະນາລາວ**" ໝາຍເຖິງ ທະນາຄານ ພັດທະນາລາວ;
- "**ສຄຄຊ**" ໝາຍເຖິງ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຂອງ ສປປ ລາວ;
- "**ບໍລິສັດທີ່ປຶກສາກົດໝາຍ**" ໝາຍເຖິງ ບໍລິສັດ ລາວພຣິເມຍ ອິນເຕີເນຊັນແນລ ລໍ ອອຟຟິສ ຈຳກັດ;
- "**ລຮລ**" ໝາຍເຖິງ ລັດວິສາຫະກິດຖືຮຸ້ນລາວ;
- "**ຕລຊລ**" ໝາຍເຖິງ ຕະຫຼາດຫຼັກຊັບລາວ;
- "**ກຊງ**" ໝາຍເຖິງ ກະຊວງການເງິນ;
- "**ກຊອ**" ໝາຍເຖິງ ກະຊວງອຸດສະຫະກຳ ແລະ ການຄ້າ;
- "**MOU**" ໝາຍເຖິງ ບົດບັນທຶກຄວາມເຂົ້າໃຈ;
- "**ສພຊ**" ຫຼື "**ສະພາແຫ່ງຊາດ**" ໝາຍເຖິງ ສະພາແຫ່ງຊາດຂອງ ສປປ ລາວ;
- "**ຄສພຊ**" ໝາຍເຖິງ ຄະນະປະຈຳສະພາແຫ່ງ ຊາດ ຂອງ ສປປ ລາວ;
- "**ໂຄງການ IPPs ທີ່ ຟຟລ ບໍ່ໄດ້ຖືຮຸ້ນ**" ໝາຍເຖິງບັນດາໂຄງການ IPP ທີ່ກຳລັງດຳເນີນງານ ແລະ ຟຟລ ບໍ່ໄດ້ເປັນຜູ້ຖືຮຸ້ນ;
- "**ມະຕິຕົກລົງ ຄສພຊ ວ່າດ້ວຍວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປີ 2010**" ໝາຍເຖິງ ມະຕິຕົກລົງຂອງ ຄສພຊ ເລກທີ 132/ຄປຈ ກ່ຽວກັບການຮັບຮອງ ແລະ ການຍົກເວັ້ນການປະຕິບັດກົດໝາຍບາງສະບັບທີ່ຕິດພັນກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ລົງວັນທີ 13 ທັນວາ 2010 ເຊິ່ງໄດ້ກຳນົດນະໂຍບາຍ ໃນການປັບປຸງໂຄງສ້າງທຸລະກິດການຜະລິດໄຟຟ້າຂອງ ຟຟລ ແລະ ອະນຸຍາດໃຫ້ ຟຟລ ໂອນຊັບສິນບາງສ່ວນຂອງ ຟຟລ ໃຫ້ແກ່ບໍລິສັດ ເຊິ່ງໃນປະຈຸບັນ ແມ່ນ ຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ;
- "**ມະຕິຕົກລົງຂອງ ຄສພຊ ວ່າດ້ວຍວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປີ 2012**" ໝາຍເຖິງ ມະຕິຕົກລົງຂອງ ຄສພຊ ເລກທີ 051/ຄປຈ ວ່າດ້ວຍການຮັບຮອງ ແລະ ການຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ສະເພາະສ່ວນທີ່ຕິດພັນກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ລົງວັນທີ 13 ມິຖຸນາ 2012 ເຊິ່ງອະນຸຍາດໃຫ້ ຟຟລ ຂາຍ

ແລະ ໂອນຮຸ້ນທີ່ ຟຟລ ຖືຢູ່ໃນ 4 ໂຄງການ IPPs ໃຫ້ແກ່ບໍລິສັດ ໄດ້ແກ່: (i) ບໍລິສັດ ໄຟຟ້າເຫີນຫີນບູນ ຈຳກັດ; (ii) ບໍລິສັດ ໄຟຟ້າຫ້ວຍເຫາະ ຈຳກັດ; (iii) ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ; ແລະ (iv) ບໍລິສັດ ໄຟຟ້ານ້ຳງຶ່ມ 2 ຈຳກັດ;

- "**ການສະເໜີຂາຍຮຸ້ນ**" ໝາຍເຖິງ ການສະເໜີຂາຍຮຸ້ນສາມັນເພີ່ມທຶນໃຫ້ແກ່ບັນດາຜູ້ຖືຮຸ້ນເດີມ ແລະ ມອບຊົນທີ່ວໄປ ອີງຕາມລະບຽບວ່າດ້ວຍການສະເໜີຂາຍຮຸ້ນ ເລກທີ 017/ຄຄຊ, ລົງວັນທີ 22 ຕຸລາ 2014;

- "**PDP 2010-2020 (ດັດແກ້-1)**" ໝາຍເຖິງ ແຜນພັດທະນາພະລັງງານໄຟຟ້າໃນຊ່ວງໄລຍະ ປີ 2010-2020 ທີ່ໄດ້ ກະກຽມໂດຍ ຟຟລ ໃນເດືອນ ສິງຫາ 2011 ທີ່ໄດ້ຮັບການປັບປຸງຈາກແຜນການການພັດທະນາພະລັງງານໄຟຟ້າໃນຊ່ວງ ໄລຍະ ປີ 2007-2016;

- "**PESC**" ໝາຍເຖິງ ຄະນະກຳມະຈັດຊື້ ແລະ ຕອບສະໜອງ ອຸປະກອນ

- "**ຂໍ້ຕົກລົງນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງບໍລິສັດ**" ໝາຍເຖິງ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 180/ນຍ ວ່າດ້ວຍການຮັບຮອງ ແລະ ຢັ້ງຢືນ ບັນຫາສະເພາະທີ່ຕິດພັນກັບການສ້າງຕັ້ງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ລົງ ວັນທີ 13 ທັນວາ 2010;

- "**ດຳລັດຂອງນາຍົກລັດຖະມົນຕີ ເລື່ອງ ການລະດົມທຶນຂອງບໍລິສັດ**" ໝາຍເຖິງ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 526/ນຍ ວ່າດ້ວຍການຍົກເວັ້ນການປະຕິບັດ ສະເພາະທີ່ຕິດພັນກັບການອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນຄັ້ງທຳ ອິດ ແລະ ການຈົດທະບຽນໃນ ຕລຊລ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ລົງວັນທີ 13 ທັນວາ 2010

- "**ການບໍລິຫານຊັບສິນ**" ໝາຍເຖິງ (i) ຊັບສິນທີ່ນຳໃຊ້ໃນການຜະລິດໄຟຟ້າທີ່ ຟຟລ ເປັນເຈົ້າຂອງທັງໝົດພຽງຜູ້ດຽວ ; (ii) ໂຄງການ IPPs ທີ່ ຟຟລ ເປັນຮຸ້ນສ່ວນ; ແລະ (iii) ການລົງທຶນໂດຍກົງຂອງບໍລິສັດໃນບັນດາໂຄງການໄຟຟ້າອື່ນໆ;

- "**PPAs**" ໝາຍເຖິງ ບັນດາສັນຍາຊື້ຂາຍໄຟຟ້າ ແລະ "**PPA**" ໝາຍເຖິງ ສັນຍາແຕ່ລະສະບັບ

- "**ຄ່າພາກຫຼວງ**" ໝາຍເຖິງຄ່າທຳນຽມແຫຼ່ງຊັບພະຍາກອນທີ່ຈະຕ້ອງຈ່າຍໃຫ້ກັບລັດຖະບານແຫ່ງ ສປປ ລາວ ໂດຍ ບຸກຄົນ ທີ່ມີສິດນຳໃຊ້ຊັບພະຍາກອນ ໂດຍຈະຖືກຄິດໄລ່ເປັນສ່ວນຮ້ອຍບົນພື້ນຖານລາຍໄດ້ທັງໝົດຈາກການຂາຍໄຟຟ້າ;

- "**ຕົວແທນຈຳໜ່າຍຮຸ້ນ**" ໝາຍເຖິງ ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ;

- "**ສິງກະໂປ**" ໝາຍເຖິງ ສາທາລະນະລັດສິງກະໂປ;

- "**ປະເທດໄທ**" ໝາຍເຖິງ ລາຊະອານາຈັກໄທ;

- "**ບາດ**" ໝາຍເຖິງ ສະກຸນເງິນຂອງປະເທດໄທ;

- "**ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ**" ໝາຍເຖິງ ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ;

- "**ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ**" ໝາຍເຖິງ ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ ລະຫວ່າງ ບໍລິສັດ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ;

- "**ໂດລາສະຫະລັດ**", " **$**", "**US$**", "**Dollars**" ຫຼື "**dollars**" ໝາຍເຖິງ ສະກຸນເງິນຂອງສະຫະລັດອາເມລິກາ;

- "**ຫວຽດນາມ**" ໝາຍເຖິງ ສາທາລະນະລັດສັງຄົມນິຍົມຫວຽດນາມ;

- "**ພວກຂ້າພະເຈົ້າ**" ໝາຍເຖິງ ບໍລິສັດຕາມບໍລິບົດຂອງເນື້ອຄວາມ.

ຄຳສັບຫົວໜ່ວຍເຕັກນິກຂ້າງລຸ່ມນີ້ ມີຄວາມໝາຍດັ່ງຕ່ຳໄປນີ້:

GWh	:	ກິກາວັດໂມງ
Km	:	ກິໂລແມັດ
km^2	:	ກິໂລແມັດມົນທົນ
km^3	:	ກິໂລແມັດກ້ອນ
kV	:	ກິໂລໂວນ
KVA	:	ກິໂລໂວນ-ອຳແປ
KWh	:	ກິໂລວັດໂມງ
M	:	ແມັດ
m^3	:	ແມັດກ້ອນ
m^3/s	:	ແມັດກ້ອນ/ວິນາທີ
Masl	:	ແມັດ (ທຽບໃສ່ໜ້ານ້ຳທະເລ)
mm^2	:	ມິນລິແມັດມົນທົນ
mm^3	:	ມິນລິແມັດກ້ອນ
MW	:	ເມກາວັດ

ພາກສັງລວມ

ບົດສັງລວມຕໍ່ໄປນີ້ອາດບໍ່ໄດ້ບັນຈຸຂໍ້ມູນທັງໝົດທີ່ສຳຄັນສຳລັບຜູ້ລົງທຶນ. ຜູ້ລົງທຶນຄວນອ່ານໜັງສືຊວນຊື້ສະບັບນີ້ທັງໝົດລວມທັງຂໍ້ມູນດ້ານການເງິນ ແລະ ຂໍ້ມູນທີ່ກ່ຽວຂ້ອງ ລວມເຖິງ "ປັດໄຈຄວາມສ່ຽງ" ກ່ອນການຕັດສິນໃຈລົງທຶນ.

1. ຂໍ້ມູນບໍລິສັດ

ບໍລິສັດສ້າງຕັ້ງຂຶ້ນໃນຮູບແບບບໍລິສັດມະຫາຊົນທີ່ມີຄວາມຮັບຜິດຊອບຈຳກັດໃນວັນທີ 15 ທັນວາ 2010 ພາຍໃຕ້ກົດໝາຍຂອງ ສປປ ລາວ, ມີສຳນັກງານຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວ-ໄທ, ບ້ານ ທົ່ງ ກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດໄດ້ສ້າງຕັ້ງຂຶ້ນໂດຍ ຟຟລ ເພື່ອປັບໂຄງສ້າງທຸລະກິດພະລັງງານໄຟຟ້າຂອງ ຟຟລ ໂດຍການໂອນຊັບສິນໃຫ້ກັບບໍລິສັດໃນວັນສ້າງຕັ້ງຕາມຂໍ້ຕົກລົງນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງບໍລິສັດ ແລະ ມະຕິຕົກລົງ ຄສພຊ ວ່າດ້ວຍວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປີ 2010.

ອີງຕາມຂໍ້ຕົກລົງນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງບໍລິສັດ ແລະ ມະຕິຕົກລົງ ຄສພຊ ວ່າດ້ວຍວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປີ 2010, ທ່ານນາຍົກລັດຖະມົນຕີໄດ້ອະນຸມັດການສ້າງຕັ້ງບໍລິສັດ ແລະ ສະພາແຫ່ງຊາດໄດ້ອະນຸຍາດໃຫ້ມີການໂອນຍ້າຍຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ ແລະ ບັນດາຊັບສິນອື່ນໆ ຂອງ ຟຟລ ໃຫ້ກັບບໍລິສັດໃນວັນສ້າງຕັ້ງບໍລິສັດ ລວມເຖິງບັນດາພັນທະໜ້າທີ່ຂອງ ຟຟລ ພາຍໃຕ້ສັນຍາກູ້ຍືມເງິນ ແລະ ສັນຍາອື່ນໆ ທີ່ກ່ຽວຂ້ອງກັບຊັບສິນທີ່ໂອນໃຫ້ກັບບໍລິສັດໃນວັນສ້າງຕັ້ງ.

ໃນວັນສ້າງຕັ້ງ, ຟຟລ ໄດ້ຊຳລະເປັນເງິນສົດ ແລະຊັບສິນໃຫ້ແກ່ບໍລິສັດ ເພື່ອແລກກັບການໃຫ້ ຟຟລ ຈອງຊື້ຮຸ້ນຂອງບໍລິສັດເຊິ່ງເທົ່າກັບຈຳນວນ 651.448.042 ຮຸ້ນ, ເທົ່າກັບ 99,99 ສ່ວນຮ້ອຍຂອງທຶນທັງໝົດຂອງບໍລິສັດ. ຮຸ້ນຂອງບໍລິສັດສ່ວນທີ່ເຫຼືອອີກ 0,01 ສ່ວນຮ້ອຍຂອງທຶນທັງໝົດຂອງບໍລິສັດຖືໂດຍບຸກຄົນທຳມະດາອີກ 8 ຄົນ.

ໃນວັນດຽວກັນ, ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ຮັບຮອງການເພີ່ມທຶນຂອງຕົນຈາກ 2.605.792.200.000 ກີບ ເປັນ 3.474.388.200.000 ກີບ ເພື່ອໃຫ້ບໍລິສັດສະເໜີຂາຍຮຸ້ນຂອງຕົນໃນຄັ້ງທຳອິດໃຫ້ແກ່ມວນຊົນ ພາຍຫຼັງສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນວັນທີ 11 ມັງກອນ 2011, ຮຸ້ນຂອງບໍລິສັດໄດ້ເປັນຫຼັກຊັບທຳອິດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ລາວ. ນັບຈາກນັ້ນມາ, ຟຟລ ໄດ້ຮັກສາສະຖານະພາບຂອງຕົນໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ໃນບໍລິສັດ ເຊິ່ງຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນທັງໝົດໃນບໍລິສັດ.

ຕໍ່ມາໃນວັນທີ 3 ຕຸລາ 2011, ກອງປະຊຸມວິສາມັນຜູ້ຖືຮຸ້ນຂອງບໍລິສັດ ຄັ້ງທີ 1/2011 ໄດ້ມີມະຕິໃຫ້ມີການເພີ່ມທຶນຈົດທະບຽນຂອງບໍລິສັດຈາກ 3.474,388.200.000 ກີບ, ແບ່ງອອກເປັນ 868.597.050 ຮຸ້ນ, ມູນຄ່າກຳນົດຮຸ້ນລະ 4.000 ກີບ, ເປັນຈຳນວນ 4.904.867.060.000 ກີບ, ແບ່ງອອກເປັນ 1.226.216.765 ຮຸ້ນ, ມູນຄ່າກຳນົດຮຸ້ນລະ 4.000 ກີບ ໂດຍການອອກຮຸ້ນໃໝ່ຈຳນວນ 357.619.715 ຮຸ້ນ, ມູນຄ່າກຳນົດຮຸ້ນລະ 4.000 ກີບ. ການເພີ່ມທຶນແມ່ນສຳເລັດໃນວັນທີ 24 ກໍລະກົດ 2012.

ໃນວັນທີ 28 ເມສາ 2015, ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2014 ໄດ້ຮັບຮອງການເພີ່ມທຶນຈົດທະບຽນຂອງບໍລິສັດ ໂດຍການອອກຮຸ້ນສາມັນໃໝ່ ຈຳນວນບໍ່ເກີນ [x] ຮຸ້ນ ມູນຄ່າກຳນົດຮຸ້ນລະ 4.000 ກີບ ແລະຈະສະເໜີຂາຍໃຫ້ແກ່ ຜູ້ຖືຮຸ້ນເດີມ ແລະ ສະເໜີຂາຍໃຫ້ແກ່ມວນຊົນທົ່ວໄປ.

ເພື່ອອຳນວຍຄວາມສະດວກໃນການເພີ່ມທຶນ, ກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ຍັງໄດ້ອະນຸມັດ (i) ການຈັດສັນຮຸ້ນສາມັນ ຈຳນວນ [x] ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕາມສັດສ່ວນການຖືຮຸ້ນແມ່ນ ສາມ (3) ຮຸ້ນເດີມ ຕໍ່ ໜຶ່ງ (1) ຮຸ້ນ ໃໝ່ ດ້ວຍລາຄາສະເໜີຂາຍ [x] ກີບຕໍ່ຮຸ້ນ; ແລະ (ii) ການຈັດສັນຮຸ້ນສາມັນຈຳນວນ [x] ຮຸ້ນ ໃຫ້ແກ່ມວນຊົນທົ່ວໄປ ດ້ວຍລາຄາສະເໜີຂາຍ [x] ກີບຕໍ່ຮຸ້ນ.

ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງບໍລິສັດໃນຄັ້ງນີ້ ແມ່ນຈຳນວນ [x] ຮຸ້ນ ໂດຍປະຕິບັດຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໄດ້ອະນຸມັດການອອກຮຸ້ນສາມັນເພີ່ມທຶນໄວ້ບໍ່ເກີນ [x] ຮຸ້ນ.

ລາຍລະອຽດຂອງການສະເໜີຂາຍຮຸ້ນມີດັ່ງຕໍ່ໄປນີ:

ສະເໜີຂາຍຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ, ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ລາຍລະອຽດມີດັ່ງລຸ່ມນີ້:

ພາກ 1: ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ກັບຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ 3 ຮຸ້ນເດີມ ຕໍ່ 1 ຮຸ້ນໃໝ່.

ສະເໜີຂາຍຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ໃຫ້ກັບຜູ້ຖືຮຸ້ນເດີມ ດ້ວຍລາຄາທີ່ສະເໜີຂາຍ [x] ກີບຕໍ່ຮຸ້ນ.

ຈຳນວນຮຸ້ນສາມັນທີ່ຍັງເຫຼືອຈາກການບໍ່ໃຊ້ສິດໃນການຈອງຊື້ຮຸ້ນຂອງຜູ້ຖືຮຸ້ນເດີມ ຈະຕ້ອງຈັດສັນໃຫ້ກັບຜູ້ຖືຮຸ້ນເດີມລາຍອື່ນທີ່ສະເໜີຈອງຊື້ຮຸ້ນຫຼາຍກວ່າສັດສ່ວນທີ່ຕົນຈະໄດ້ຮັບການຈັດສັນ ຈົນກວ່າຈະບໍ່ມີຮຸ້ນເຫຼືອໃຫ້ຈັດສັນຕາມທີ່ບໍລິສັດເຫັນວ່າເໝາະສົມ.

ໝາຍເຫດ: ສິດໃນການສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບຜູ້ຖືຮຸ້ນເດີມ ທີ່ໄດ້ຮັບສິດໃນການຈອງຊື້ຮຸ້ນ ເພີ່ມທຶນໃໝ່ນີ້ໄດ້ໂດຍກົງຈາກບໍລິສັດ ຕາມສັດສ່ວນຮຸ້ນທີ່ຕົນຖືຄອງພາຍໃນໄລຍະເວລາທີ່ກຳນົດ. ມື້ປັນທຶກປັນຊີລາຍຊື່ຜູ້ຖືຄອງຮຸ້ນ/ມື້ປິດການປັນທຶກປັນຊີລາຍຊື່ຜູ້ຖືຄອງຮຸ້ນ ເຊິ່ງຈະເປັນສິ່ງທີ່ໃຊ້ໃນການໃຫ້ສິດແກ່ຜູ້ຖືຮຸ້ນທີ່ຈະໄດ້ຮັບການຈັດສັນຮຸ້ນສາມັນທີ່ອອກໃໝ່ຜ່ານການໃຊ້ສິດການສະເໜີຂາຍຮຸ້ນ ຈະປິດລົງໃນວັນທີ່ [x].

ພາກ 2: ການສະເໜີຂາຍຮຸ້ນໃໝ່ໃຫ້ກັບມວນຊົນທົ່ວໄປ (PO)

ສະເໜີຂາຍຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ໃຫ້ກັບມວນຊົນທົ່ວໄປ ຕາມລາຄາຂາຍ [x] ກີບຕໍ່ຮຸ້ນ.

ໝາຍເຫດ: ການສະເໜີຂາຍຮຸ້ນໃຫ້ກັບມວນຊົນ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບມວນຊົນທົ່ວໄປ.

ການຊຳລະເງິນເພື່ອຈອງຊື້ຮຸ້ນຂອງຜູ້ລົງທຶນຈະຕ້ອງຊຳລະເປັນເງິນສົດ ຍົກເວັ້ນໃນກໍລະນີສັດສ່ວນຂອງການສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມທີ່ຖືກຈອງໂດຍ ຟຟລ ເຊິ່ງຈະຕ້ອງໄດ້ຊຳລະໂດຍການໂອນຊັບສິນ.

ຮຸ້ນສາມັນເພີ່ມທຶນນີ້ ຈະໄດ້ຮັບການຈົດທະບຽນໃນ ຕລຊລ. ຕລຊລ ແມ່ນ ຕະຫຼາດຮັ້ນສອງທີ່ຖືກສ້າງຕັ້ງຂຶ້ນຢູ່ ສປປ ລາວ ໃນເດືອນ ຕຸລາ 2010.

ຮູບແບບທຸລະກິດຂອງບໍລິສັດໃນປະຈຸບັນຄືການເປັນເຈົ້າຂອງ ແລະ ນຳໃຊ້ຊັບສິນທີ່ໄດ້ຮັບການໂອນຈາກ ຟຟລ ແລະ ຂາຍໄຟຟ້າທັງໝົດກັບຄືນໃຫ້ກັບ ຟຟລ. ໃນອະນາຄົດ, ບໍລິສັດຈະດຳເນີນທຸລະກິດຂອງຕົນໂດຍການກໍ່ສ້າງສະຖານີໄຟຟ້າ ແລະ ສາຍສົ່ງທີ່ຈຳເປັນເພື່ອເຊື່ອມຕໍ່ລະບົບສາຍສົ່ງແຫ່ງຊາດ ລວມທັງການລົງທຶນສ້າງເຂື່ອນໂດຍກົງ ແລະ/ຫຼື ລົງທຶນດ້ວຍຮູບການ

ສັນຍາຮ່ວມທຶນ ແລະ ຕອບສະໜອງການດຳເນີນການ ແລະ ການບໍລິການບຳລຸງຮັກສາເຂື່ອນໄຟຟ້າຕາມຍຸດທະສາດຂອງບໍລິສັດ, ພາຍຫຼັງໄດ້ຮັບອະນຸຍາດຈາກລັດຖະບານ.

ອີງຕາມຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງບໍລິສັດສຳລັບປີການບັນຊີປີ 2014, ລາຍຮັບຕົ້ນຕໍ ຂອງບໍລິສັດທັງໝົດ 839,193 ລ້ານກີບ ຈາກການຂາຍກະແສໄຟຟ້າທີ່ຜະລິດໄດ້.

2. ປັດໃຈຄວາມສ່ຽງ

ການລົງທຶນໃນບໍລິສັດນີ້ອາດມີຄວາມສ່ຽງ, ຜູ້ລົງທຶນຄວນພິຈາລະນາຂໍ້ມູນໃນໜັງສືຊວນຊື້ສະບັບນີ້ໃຫ້ລະອຽດ, ໂດຍ ສະເພາະແມ່ນຄວາມສ່ຽງທີ່ໄດ້ອະທິບາຍໄວ້ໃນ “ພາກ 1 ຂໍ້ມູນບໍລິສັດ - ປັດໃຈສ່ຽງ” ກ່ອນຕັດສິນໃຈລົງທຶນ.

ໂດຍທົ່ວໄປ, ການລົງທຶນໃນ “ຕະຫຼາດໃໝ່” ເຊັ່ນ: ໃນ ສປປ ລາວ ທີ່ມີຕະຫຼາດຫຼັກຊັບທີ່ຫາກໍ່ສ້າງຕັ້ງນັ້ນອາດມີຄວາມ ສ່ຽງອື່ນໆ ທີ່ບໍ່ມີໃນ “ຕະຫຼາດທີ່ຫາກໍ່ສ້າງໃໝ່” ທົ່ວໄປ. ດັ່ງນັ້ນ, ນອກຈາກບັນຫາທີ່ກ່ຽວຂ້ອງກັບບໍລິສັດ (ຄຸນນະພາບຂອງຊັບ ສິນ ແລະ ການບໍລິຫານຈັດການ, ຄວາມສາມາດໃນການສ້າງກະແສເງິນສົດ, ຄວາມໝັ້ນຄົງທາງການເງິນ, ກົດລະບຽບທີ່ຄວບຄຸມ ຕະຫຼາດພະລັງງານໄຟຟ້າ), ຜູ້ລົງທຶນຄວນເອົາໃຈໃສ່ໃນບັນຫາທີ່ກ່ຽວຂ້ອງກັບຕະຫຼາດຫຼັກຊັບທີ່ຫາກໍ່ເປີດໃໝ່ ລວມເຖິງກົດ ລະບຽບ, ສ່ວຍສາອາກອນ, ສະພາບຄ່ອງ ແລະ ຕົ້ນທຶນທາງທຸລະກິດຂອງບໍລິສັດ.

ປັດໃຈຄວາມສ່ຽງຕົ້ນຕໍ ມີດັ່ງນີ້:

(1) ບັນດາຄວາມສ່ຽງຈາກການສະເໜີຂາຍ

- ການຈົດທະບຽນເພີ່ມທຶນຊັກຊ້າ
- ການທີ່ບໍ່ສາມາດຈົດທະບຽນຮຸ້ນສາມັນເພີ່ມທຶນ
- ຄວາມສ່ຽງທີ່ຕິດພັນກັບ ຕລຊລ

(2) ຄວາມສ່ຽງດ້ານທຸລະກິດ

- ປະຫວັດກ່ຽວກັບປະຫວັດການດຳເນີນທຸລະກິດຂອງບໍລິສັດທີ່ມີຈຳກັດ
- ຄວາມສ່ຽງກ່ຽວກັບ CAs
- ຄວາມສ່ຽງຈາກການທີ່ບໍລິສັດບໍ່ສາມາດບັນລຸຜົນຕອບແທນທີ່ຕັ້ງໄວ້ຈາກການລົງທຶນ
- ຄວາມສ່ຽງກ່ຽວກັບລູກຄ້າຫຼັກ
- ການຂຶ້ນກັບການສະໜັບສະໜູນ ແລະ ການຮັບຊື້ພະລັງງານໄຟຟ້າຂອງ ຟຟລ
- ນະໂຍບາຍຂອງລັດຖະບານລາວໃນນາມຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມສູງສຸດຂອງບໍລິສັດ
- ຄວາມສ່ຽງການດຳເນີນງານຂອງເຂື່ອນໄຟຟ້າ
- ມາດຕະຖານການບໍລິຫານຄຸ້ມຄອງບໍລິສັດ
- ການລົງທຶນໃສ່ໂຄງການອື່ນໆ ເພີ່ມເຕີມ
- ການແຂ່ງຂັນໃນການພັດທະນາໂຄງການໃນອະນາຄົດ
- ຄວາມແຕກຕ່າງດ້ານລະບຽບການ, ການເປີດເຜີຍຂໍ້ມູນ ແລະ ການບັນຊີ
- ຄວາມສ່ຽງທາງດ້ານອັດຕາແລກປ່ຽນເງິນຕາຕ່າງປະເທດ

(3) ຄວາມສ່ຽງດ້ານກົດໝາຍ

- ການລົງຄະແນນສຽງຂອງ ຟຟລ ໃນເລື່ອງທີ່ອາດຈະມີຜົນປະໂຫຍດ
- ຂໍ້ຈຳກັດໃນການຖືຮຸ້ນໂດຍຄົນຕ່າງປະເທດ
- ການບັງຄັບໃຊ້ຄຳຕັດສິນຂອງສານຕ່າງປະເທດຢູ່ ສປປ ລາວ

(4) ຄວາມສ່ຽງດ້ານເສດຖະກິດ

- ປັດໃຈດ້ານການເມືອງ ແລະ ເສດຖະກິດຂອງ ສປປ ລາວ
- ຄວາມບໍ່ແນ່ນອນຂອງລະບຽບກົດໝາຍທີ່ກ່ຽວຂ້ອງກັບຂະແໜງການໄຟຟ້າຢູ່ ສປປ ລາວ

ເບິ່ງ ພາກ 1 “ຂໍ້ມູນບໍລິສັດ - ບັນດາປັດໄຈສ່ຽງ”.

3. ຂໍ້ມູນກ່ຽວກັບຈຳນວນຮຸ້ນສາມັນເພີ່ມທຶນ

ບໍລິສັດອອກຫຼັກຊັບ	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ການສະເໜີຂາຍ	ຮຸ້ນສາມັນຈຳນວນ [x] ຮຸ້ນ ທີ່ສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ ແລະ ມອບຊົນທົ່ວໄປ ໂດຍຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ ເຊິ່ງປະກອບມີ: **ພາກ 1: ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ກັບຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ 3 ຮຸ້ນເດີມ ຕໍ່ 1 ຮຸ້ນໃໝ່.** ສະເໜີຂາຍຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ໃຫ້ກັບຜູ້ຖືຮຸ້ນເດີມ ດ້ວຍລາຄາທີ່ສະເໜີຂາຍ [x] ກີບຕໍ່ຮຸ້ນ. ຈຳນວນຮຸ້ນສາມັນທີ່ຍັງເຫຼືອຈາກການບໍ່ໃຊ້ສິດໃນການຈອງຊື້ຮຸ້ນຂອງຜູ້ຖືຮຸ້ນເດີມ ຈະຕ້ອງຈັດສັນໃຫ້ກັບຜູ້ຖືຮຸ້ນເດີມລາຍອື່ນທີ່ສະເໜີຈອງຊື້ຮຸ້ນຫຼາຍກວ່າສັດສ່ວນທີ່ຕົນຈະໄດ້ຮັບການຈັດສັນ ຈົນກວ່າຈະບໍ່ມີຮຸ້ນເຫຼືອໃຫ້ຈັດສັນຕາມທີ່ບໍລິສັດເຫັນວ່າເໝາະສົມ. ໝາຍເຫດ: ການສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບຜູ້ຖືຮຸ້ນເດີມ ທີ່ໄດ້ຮັບສິດໃນການຈອງຊື້ຮຸ້ນທີ່ເພີ່ມຂຶ້ນນີ້ໄດ້ໂດຍກົງຈາກບໍລິສັດ ຕາມອັດຕາສ່ວນທີ່ຕົນຖືຄອງພາຍໃນໄລຍະເວລາທີ່ກຳນົດ. ມື້ປັນທຶກປັນຊີລາຍຊື່ຜູ້ຖືຄອງຮຸ້ນ/ມື້ປິດການປັນທຶກປັນຊີລາຍຊື່ຜູ້ຖືຄອງຮຸ້ນ ເຊິ່ງຈະເປັນສິ່ງທີ່ໃຊ້ໃນການໃຫ້ສິດແກ່ຜູ້ຖືຮຸ້ນທີ່ຈະໄດ້ຮັບການຈັດສັນຮຸ້ນສາມັນທີ່ອອກໃໝ່ຜ່ານການໃຊ້ສິດການສະເໜີຂາຍຮຸ້ນນັ້ນ ຈະປິດລົງໃນວັນທີ [x]. **ພາກ 2: ການສະເໜີຂາຍຮຸ້ນໃໝ່ໃຫ້ກັບມວນຊົນທົ່ວໄປ (PO)** ຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ຈະຖືກສະເໜີຂາຍ ໃຫ້ກັບມວນຊົນທົ່ວໄປ ການສະເໜີຂາຍຮຸ້ນໃຫ້ກັບມວນຊົນໄດ້ຮັບການອະນຸຍາດໃຫ້ສະເໜີຂາຍຮຸ້ນ ກັບ ສຄຄຊ ໂດຍຈຳນວນຮຸ້ນສາມັນເພີ່ມທຶນ ຈະບໍ່ໄດ້ຈົດທະບຽນພາຍໃຕ້ ກົດໝາຍວ່າດ້ວຍຫຼັກຊັບຂອງປະເທດອື່ນນອກຈາກການຈົດທະບຽນຕາມກົດໝາຍວ່າດ້ວຍຫຼັກຊັບຂອງ ສປປ ລາວ. ໝາຍເຫດ: ການສະເໜີຂາຍຮຸ້ນໃຫ້ກັບມວນຊົນ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບມວນຊົນທົ່ວໄປ.
ມູນຄ່າກຳນົດ	4.000 ກີບຕໍ່ຮຸ້ນ

ລາຄາທີ່ສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ	[x] ກົບຕໍ່ຮຸ້ນ
ລາຄາທີ່ສະເໜີຂາຍໃຫ້ກັບມວນຊົນທົ່ວໄປ	[x] ກົບຕໍ່ຮຸ້ນ
ສິດໃນການລົງຄະແນນສຽງ	ຜູ້ທີ່ເປັນເຈົ້າຂອງຮຸ້ນມີສິດເຕັມສ່ວນໃນການລົງຄະແນນສຽງ. ເບິ່ງພາກ 2 "ຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີອອກຈຳໜ່າຍຮຸ້ນ - ສິດໃນການລົງຄະແນນສຽງ".
ເງິນປັນຜົນ	ຜູ້ທີ່ເປັນເຈົ້າຂອງຮຸ້ນມີສິດໄດ້ຮັບເງິນປັນຜົນຕາມການຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ ໃນອັດຕາບໍ່ໜຸດ 50 ສ່ວນຮ້ອຍ ຂອງກຳໄລສຸດທິຂອງບໍລິສັດ ຫຼັງຈາກໄດ້ຫັກອາກອນກຳໄລ ແລະ ຄັງສຳຮອງຕາມກົດໝາຍ ຫຼື ຄັງສະສົມອື່ນ (ຖ້າມີ). ເບິ່ງ ພາກ 2 "ຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີອອກຈຳໜ່າຍຮຸ້ນ - ເງິນປັນຜົນ" ໂດຍທົ່ວໄປແລ້ວ, ການແບ່ງເງິນປັນຜົນໃນບໍລິສັດຕ່າງໆ ໃນ ສປປ ລາວຈະຕ້ອງໄດ້ເສຍອາກອນລາຍໄດ້ໃນອັດຕາ 10 ສ່ວນຮ້ອຍ. ເຖິງຢ່າງໃດກໍ່ຕາມ, ລາຍຮັບທີ່ໄດ້ຈາກເງິນປັນຜົນຂອງບໍລິສັດທີ່ຈົດທະບຽນຢູ່ທີ່ ຕລຊລ ແມ່ນໄດ້ຮັບການຍົກເວັ້ນ.
ຂໍ້ຈຳກັດຂອງການໂອນຮຸ້ນ	ອີງຕາມກົດລະບຽບຂອງບໍລິສັດ, ຮຸ້ນຂອງບໍລິສັດສາມາດໂອນໄດ້ຢ່າງເສລີ ເວັ້ນເສຍແຕ່ການໂອນຮຸ້ນໃຫ້ບຸກຄົນຕ່າງປະເທດ ຫຼື ນິຕິບຸກຄົນຕ່າງປະເທດທີ່ຖືຮຸ້ນໃນບໍລິສັດເກີນກວ່າຈຳນວນທີ່ໄດ້ລະບຸໄວ້ໃນລະບຽບຂອງ ສຄຄຊ ແລະ/ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ. ໃນປະຈຸບັນ, ໄດ້ອີງໃສ່ຂໍ້ຕົກລົງຂອງ ຄລຕ ເລກທີ 021/ຄລຕ ວ່າດ້ວຍການເພີ່ມສັດສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ໃນບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ລົງວັນທີ 5 ມັງກອນ 2012, ວ່າດ້ວຍ ການເພີ່ມກຳມະສິດຂອງຄົນຕ່າງປະເທດໃນການຖືຮຸ້ນຂອງ ຜ-ຟຟລ, ອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດເປັນເຈົ້າຂອງຮຸ້ນໃນບໍລິສັດບໍ່ເກີນ 20 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ ເຊິ່ງບຸກຄົນຕ່າງປະເທດໜຶ່ງຄົນ ສາມາດຖືຮຸ້ນໄດ້ບໍ່ເກີນ 1 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ແລະ ຜູ້ລົງທຶນທີ່ເປັນສະຖາບັນ ຫຼື ນິຕິບຸກຄົນສາມາດຖືໄດ້ບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ. ເບິ່ງ ພາກ 2 "ຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີອອກຈຳໜ່າຍຮຸ້ນ - ຂໍ້ມູນກ່ຽວກັບຂໍ້ຈຳກັດໃນການໂອນຮຸ້ນ ແລະ ຂໍ້ຈຳກັດໃນການຖືກຳມະສິດໃນຮຸ້ນຂອງຜູ້ລົງທຶນຕ່າງປະເທດ ".
ການນຳໃຊ້ທຶນທີ່ໄດ້ຈາກການ	ເຫດຜົນຂອງການເພີ່ມທຶນໃນຄັ້ງນີ້ ແມ່ນເພື່ອອຳນວຍຄວາມສະດວກໃຫ້ກັບບໍລິສັດໃນການວາງແຜນໄລຍະຍາວ ແລະ ຕອບສະໜອງຕາມຈຸດປະສົງຂອງບໍລິສັດທີ່ວາງໄວ້ ຄື: (i) ຮັກສາ

ລະດົມທຶນ	ສ່ວນແບ່ງທາງການຕະຫຼາດຂອງບໍລິສັດ; (ii) ຮັກສາອັດຕາການເຕີບໂຕຂອງບໍລິສັດ; (iii) ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພະລັງງານ ຂອງ ສປປ ລາວ ແລະ ການສົ່ງອອກໃນອະນາຄົດ. ເພື່ອຕອບສະໜອງທຶນໃນການກໍ່ສ້າງເຂື່ອນໄຟຟ້າທີ່ບໍ່ສາມາດດຳເນີນການໃນໄລຍະເວລາອັນສັ້ນໄດ້, ບໍລິສັດຈະຕ້ອງມີການລະດົມທຶນເພື່ອອຳນວຍຄວາມສະດວກໃນການເຂົ້າໄປຊື້ກິດຈະການຈາກ ຟຟລ ແລະ ລົງທຶນໂດຍກົງດ້ວຍການອອກຮຸ້ນເພີ່ມທຶນ ເພື່ອເຮັດໃຫ້ ສປປ ລາວ ມີໄຟຟ້າໃຊ້ຢ່າງພຽງພໍຕາມແຜນການທີ່ລັດຖະບານວາງໄວ້ ຮອດປີ 2020. ທຶນທີ່ໄດ້ຈາກການສະເໜີຂາຍຮຸ້ນຈະຖືກນຳໃຊ້ໃນ: (i) ເພື່ອຊື້ຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງພຽງຜູ້ດຽວ ; (ii) ບັນດາໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນ; (iii) ການລົງທຶນໂດຍກົງຂອງບໍລິສັດໃນບັນດາໂຄງ ການໄຟຟ້າອື່ນ; ແລະ (iv) ໃຊ້ເປັນທຶນໝຸນວຽນໃນບໍລິສັດ. ໂດຍທີ່ (i)-(iii) ໃນຂ້າງເທິງນີ້ ອາດເອີ້ນລວມກັນວ່າ "**ການບໍລິຫານຊັບສິນ**" (Portfolio of Assets) ເບິ່ງ ພາກ 1 "ຂໍ້ມູນບໍລິສັດ - ການນຳໃຊ້ລາຍຮັບຈາກການຂາຍຮຸ້ນ".
ຈຳນວນຮຸ້ນສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ	ຮຸ້ນເພີ່ມທຶນທີ່ສະເໜີຂາຍຄັ້ງນີ້ ເປັນຮຸ້ນອອກໃໝ່ຂອງບໍລິສັດ ແລະ ບໍ່ໄດ້ນຳຮຸ້ນເດີມມາສະເໜີຂາຍ.

ຕໍ່ໄປນີ້ຄືການສັງລວມລາຍລະອຽດບາງຢ່າງໃນການສະເໜີຂາຍຮຸ້ນຄັ້ງນີ້. ການຄາດຄະເນເວລາຂອງບໍລິສັດໃນການຂາຍຮຸ້ນ ອາດມີການປ່ຽນແປງໄດ້, ການກຳນົດເອົາເວລາໃນໜັງສືຊວນຊື້ສະບັບນີ້ ແມ່ນກຳນົດອີງເວລາທ້ອງຖິ່ນຢູ່ ສປປ ລາວ (Greenwich + 7).

ໄລຍະເວລາຂອງການສະເໜີຂາຍຮຸ້ນ	ແຕ່ 8:30 ເຖິງ 16:30 ໂມງ, ລະຫວ່າງວັນທີ [x] - [x] 2015 (ສະເພາະໃນວັນທີ [x] 2015, ການຈອງຊື້ຮຸ້ນຈະປິດໃນເວລາ 12:00 ໂມງ) ໄລຍະຂອງການສະເໜີຂາຍຮຸ້ນ ສຳລັບການສະເໜີຂາຍໃຫ້ກັບມວນຊົນທົ່ວໄປ: ແຕ່ 8:30 ເຖິງ 16:30 ໂມງ, ລະຫວ່າງວັນທີ [x]-[x] 2015 (ສະເພາະໃນວັນທີ [x] 2015, ການຈອງຊື້ຮຸ້ນຈະປິດໃນເວລາ 12:00 ໂມງ)
ການຈອງຊື້ຮຸ້ນ ແລະ ການຊຳລະເງິນ	ການຊຳລະເງິນຄ່າຈອງຊື້ຮຸ້ນຂອງບໍລິສັດຄັ້ງນີ້ ແມ່ນຈະຕ້ອງຊຳລະຕາມວັນ ແລະ ເວລາທີ່ກຳນົດ ກ່ອນໄລຍະເວລາການສະເໜີຂາຍຮຸ້ນຈະສິ້ນສຸດ.

ການສົ່ງມອບຮຸ້ນສາມັນເພີ່ມທຶນ	ຮຸ້ນສາມັນເພີ່ມທຶນ ຈະຖືກສົ່ງມອບໃຫ້ແກ່ຜູ້ຈອງຊື້ຫຼັງຈາກມີການຊຳລະເງິນຄ່າຈອງຊື້ຮຸ້ນແລ້ວ, ເຊິ່ງບໍລິສັດຄາດວ່າຈະສົ່ງມອບຮຸ້ນທັງໝົດນີ້ ຜ່ານລະບົບການຮັບຝາກຫຼັກຊັບຂອງສູນຮັບຝາກຫຼັກຊັບຂອງ ຕລຊລ ພາຍໃນ 15 ວັນລັດຖະການ ຫຼັງຈາກມື້ສິ້ນສຸດການສະເໜີຂາຍ.
ການຈົດທະບຽນການເພີ່ມທຶນ ແລະ ການແຈ້ງການປ່ຽນແປງໃບທະບຽນວິສາຫະກິດ	ຄຳຮ້ອງຂໍຈົດທະບຽນເພີ່ມທຶນຂອງບໍລິສັດ ຄາດວ່າຈະຍື່ນພ້ອມກັນກັບການຍື່ນຄຳຮ້ອງປ່ຽນແປງໃບທະບຽນວິສາຫະກິດນຳ ກຊອ ພາຍໃນ 10 ວັນລັດຖະການ ພາຍຫຼັງທີ່ການສະເໜີຂາຍຮຸ້ນສິ້ນສຸດລົງ.
ຄຳຮ້ອງຂໍຈົດທະບຽນ ຮຸ້ນສາມັນເພີ່ມທຶນ	ບໍລິສັດຈະຍື່ນຄຳຮ້ອງເພື່ອຈົດທະບຽນຮຸ້ນສາມັນເພີ່ມທຶນກັບ ຕລຊລ ທັນທີພາຍຫຼັງທີ່ບໍລິສັດ: (i) ຈົດທະບຽນເພີ່ມທຶນທີ່ ກຊອ ໄດ້ສຳເລັດ; ແລະ (ii) ໄດ້ຮັບໃບທະບຽນວິສາຫະກິດສະບັບໃໝ່ຈາກ ກຊອ ໂດຍຈະດຳເນີນການຫຼັງຈາກທີ່ສຳເລັດການສະເໜີຂາຍແລ້ວ.
ການຈົດທະບຽນຫຼັກຊັບທີ່ຕະຫຼາດຫຼັກຊັບ	ບໍລິສັດຄາດວ່າຮຸ້ນສາມັນເພີ່ມທຶນຂຶ້ນຂອງຕົນຈະໄດ້ຮັບການຈົດທະບຽນເຂົ້າໃນ ຕລຊລ ພາຍໃນ 7 ວັນ ຫຼັງຍື່ນຄຳຮ້ອງຂໍຈົດທະບຽນຮຸ້ນສາມັນເພີ່ມທຶນ.

4. ໂຄງສ້າງຂອງທຸລະກິດ

ຮູບ ກ: ໂຄງສ້າງຂອງທຸລະກິດ

Wholly-owned

- **Nam Ngum 1 (155 MW)**
- **Nam Leuk (60 MW)**
- **Nam Mang 3 (40 MW)**
- **Nam Song (6 MW)**
- **Xeset 1 (45MW)**
- **Xeset 2 (76 MW)**
- **Selabam (5 MW)**

IPPS

25%	10%	60%	20%	15%
Nam Ngum 2 Power Co., Ltd.	**Nam Lik 1-2 Power Co., Ltd.**	**Theun-Hinboun Power Co, Ltd.**	**Houay Ho Power Co., Ltd.**	**Nam Ngum 5 Power Co, Ltd.**
(154 MW)	**(10 MW)**	**(300 MW)**	**(30 MW)**	**(18 MW)**

ແຫຼ່ງຂໍ້ມູນ: ຜ-ຟຟລ
ໝາຍເຫດ: ກຳລັງຄວາມສາມາດ

5. ໂຄງສ້າງການຖືຮຸ້ນ

ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ຕາມວັນທີ 17 ມີນາ 2015 (ມື້ປິດປຶ້ມບັນຊີລາຍຊື່ຜູ້ຖືຮຸ້ນ ທີ່ພົ້ອພັນເຖິງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014) ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ ກ: ໂຄງສ້າງການຖືຮຸ້ນຂອງບໍລິສັດ ວັນທີ 17 ມີນາ 2015

ລ/ດ	ລາຍຊື່ບັນດາຜູ້ຖືຮຸ້ນ	ວັນທີ 17 ມີນາ 2015	
		ຈຳນວນຮຸ້ນທີ່ຖື	ສັດສ່ວນການຖືຮຸ້ນ
1	ELECTRICITE DU LAOS	919.662.992	75,00%
2	RATCH-LAO SERVICES COMPANY LIMITED	71.136.243	5,80%
3	RH INTERNATIONAL (SINGAPORE) CORPORATION PTE. LTD	52.811.108	4,31%
4	BANQUE POUR LE COMMERCE EXTERIEUR LAO PUBLIC	28.762.552	2,35%
5	KRUNG THAI BANK PUBLIC COMPANY LIMITED	18.737.500	1,53%
6	NT ASIA DISCOVERY MASTER FUND	12.257.587	1,00%
7	DRAGON CAPITAL CLEAN DEVELOPMENT LTD.	11.056.500	0,90%
8	MEKONG HOLDING INS	6.212.699	0,51%
9	THAVEERAT PROONGPATTANASKUL	5.003.600	0,41%
10	KT ZMICO SECURITIES COMPANY LIMITED	3.989.189	0,33%
11	OTHER SHAREHOLDERS	96.586.795	7,88%
	ລວມທັງໝົດ	**1.226.216.765**	**100,00%**

ແຫຼ່ງຂໍ້ມູນ: ຜ-ຟຟລ

6. ສະພາບໍລິຫານ

ຕາມໜັງສືຊວນຊື້ສະບັບນີ້, ສະພາບໍລິຫານຂອງບໍລິສັດປະກອບມີສະມາຊິກທັງໝົດ 10 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ, ມີລາຍລະອຽດດັ່ງນີ້:

ຕາຕະລາງ ຂ: ສະພາບໍລິຫານຂອງບໍລິສັດ

ລ/ດ	ຊື່	ຕຳແໜ່ງ
1.	ທ່ານ ດຣ. ຄຳມະນີ ອິນທິລາດ	ປະທານ
2.	ທ່ານ ສີສະຫວາດ ທິຣະວົງ	ຮອງປະທານ
3.	ທ່ານ ບຸນອຸ້ມ ສີວັນເພັ້ງ	ຜູ້ອຳນວຍການ
4.	ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການ
5.	ທ່ານ ບຸນມາ ມະນີວົງ	ຜູ້ອຳນວຍການ
6.	ທ່ານ ນາງ ວານິດາ ສະຫວັດດີ	ຜູ້ອຳນວຍການ
7.	ທ່ານ ສີຈາດ ບຸດຊາກົດຕິລາດ	ຜູ້ອຳນວຍການ
8.	ທ່ານ ຮສ. ດຣ. ກອງສີ ແສງມະນີ	ຜູ້ອຳນວຍການອິດສະຫຼະ
9.	ທ່ານ ສຈ. ດຣ. ຄຳລືຊາ ນວນສະຫວັນ	ຜູ້ອຳນວຍການອິດສະຫຼະ
10.	ທ່ານ ຮສ. ຄຳເຜີຍ ພົມມະຈັນ	ຜູ້ອຳນວຍການອິດສະຫຼະ

ແຫຼ່ງຂໍ້ມູນ: ຜ-ຟຟລ

7. ຄະນະອຳນວຍການ

ຕາມໜັງສືຊວນຊື້ສະບັບນີ້, ທີມງານບໍລິຫານຂອງບໍລິສັດປະກອບມີ ຄະນະອຳນວຍການ ສາມທ່ານ ແລະ ບັນດາ ອຳນວຍການຝ່າຍ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ ຄ: ຄະນະອຳນວຍການຂອງບໍລິສັດ

ລ/ດ	ຊື່	ຕຳແໜ່ງ
1.	ທ່ານ ບຸນອູ້ມ ສີວັນເພັ້ງ	ຜູ້ອຳນວຍການໃຫຍ່
2.	ທ່ານ ນາງ ລັດຕະນາ ປະທຸມວັນ	ຮອງຜູ້ອຳນວຍການໃຫຍ່ (ສາຍງານການຜະລິດ)
3.	ທ່ານ ດຣ. ບຸນສະຫງອງ ສຸດທິດາຣາ	ຮອງຜູ້ອຳນວຍການໃຫຍ່ (ສາຍງານການເງິນ)
4.	ທ່ານ ພູມີ ເນຕິບັນດິດ	ຜູ້ອຳນວຍການຝ່າຍຜະລິດ
5.	ທ່ານ ວິຣະຖາ ພອນແກ້ວ	ຜູ້ອຳນວຍການຝ່າຍວາງແຜນຍຸດທະສາດ ແລະພັດທະນາທຸລະກິດ
6.	ທ່ານ ນາງ ສຸກສັນ ພິງພິລາ	ຜູ້ອຳນວຍການຝ່າຍ ບໍລິຫານງານ ແລະ ສະໜັບສະໜຸນອົງກອນ
7.	ທ່ານ ອັນແສງ ອັນນະວົງ	ວ່າການຜູ້ອຳນວຍການ ຝ່າຍການເງິນ

ແຫຼ່ງຂໍ້ມູນ: ຜ-ຟຟລ

8. ຖານະການເງິນ ແລະ ຂໍ້ມູນການດຳເນີນງານ

8.1 ຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີ 2014 ແລະ 2013

ຕາຕະລາງ ງ: ສະຫຼຸບຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີການບັນຊີ 2014 ແລະ 2013

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ບົດລາຍງານຖານະການເງິນ		
ຊັບສິນ		
ຊັບສິນບໍ່ໝຸນວຽນ		
ເງິນລົງທຶນໃນວິສາຫະກິດຂາຮຸ້ນ	610.357	571.745
ເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	1.498.609	1.298.247
ເງິນລົງທຶນຈ່າຍລ່ວງໜ້າ	779.005	474.411
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	4.145.851	4.011.109
ຊັບສິນບໍ່ໝຸນວຽນອື່ນໆ	1.885	3.465
ລວມຊັບສິນບໍ່ໝຸນວຽນອື່ນໆ	**7.035.707**	**6.358.977**
ຊັບສິນໝຸນວຽນ		
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	1.251.534	159.914
ເງິນລົງທຶນໄລຍະສັ້ນ	20.000	20.000
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	502.382	519.355
ເຄື່ອງໃນສາງ, ສຸດທິ	4.043	3.020
ໜີ້ຕ້ອງຮັບອື່ນໆ	7.595	5.905
ລວມຊັບສິນໝຸນວຽນ	**1.785.554**	**708.194**
ລວມຊັບສິນ	**8.821.261**	**7.067.171**
ທຶນ		
ທຶນຂອງຜູ້ຖືຮຸ້ນ		
ເງິນລົງທຶນ	4.904.867	4.904.867
ສ່ວນເພີ່ມມູນຄ່າຮຸ້ນ	142.229	142.229
ຄ້າງສະສົມຕາມລະບຽບການ	297.210	206.442
ຜົດຕ່າງຂອງການແປງຄ່າເອກະສານລາຍງານການເງິນ	(1.476)	7.001
ກຳໄລສະສົມ	978.811	744.348
ລວມທຶນ	**6.321.641**	**6.004.887**
ໜີ້ສິນ		
ໜີ້ສິນບໍ່ໝຸນວຽນ		
ເງິນກູ້ຍືມໃນໄລຍະຍາວ, ສຸດທິ	499.263	805.295

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ຮຸ້ນກູ້, ສຸດທິ	1.575.862	-
ໜີ້ຕ້ອງຈ່າຍຂອງສັນຍາ SWAP, ສຸດທິ	11.105	-
ລວມໜີ້ສິນບໍ່ໝຸນວຽນ	**2.086.230**	**805.295**
ໜີ້ສິນໝຸນວຽນ		
ໜີ້ຕ້ອງສິ່ງຜູ້ສະໜອງ	174.589	30.823
ເງິນກູ້ຍືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	99.519	132.003
ໜີ້ຕ້ອງສິ່ງອື່ນໆ	134.936	66.077
ໜີ້ຕ້ອງສິ່ງອາກອນລາຍໄດ້	4.306	9.278
ໜີ້ສິນໝຸນວຽນອື່ນໆ	40	18.808
ລວມໜີ້ສິນໝຸນວຽນ	**413.390**	**256.989**
ລວມຍອດໜີ້ສິນ	**2.499.620**	**1.062.284**
ລວມຍອດທຶນຕົນເອງ ແລະ ໜີ້ສິນ	**8.821.261**	**7.067.171**
ລາຍການກຳໄລ ແລະ ຂາດທຶນ		
ຂາຍ	839.193	862.429
ຕົ້ນທຶນໃນການຂາຍ	(215.613)	(203.935)
ກຳໄລ	**623.580**	**658.494**
ລາຍຮັບອື່ນໆ	5.680	6.700
ລາຍຈ່າຍຄ່າບໍລິຫານ	(123.528)	(113.489)
ກຳໄລ/(ຂາດທຶນ)	(18.098)	24.463
ລາຍຈ່າຍດອກເບ້ຍ	(31.722)	(30.845)
ກຳໄລຂອງຮຸ້ນຂອງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	474.467	453.746
ກຳໄລ ກ່ອນອາກອນກຳໄລ	**930.379**	**999.069**
ອາກອນກຳໄລ	(22.695)	(27.327)
ກຳໄລສຸດທິສຳລັບປີ	**907.684**	**971.742**
ໃບລາຍງານກະແສເງິນສົດ		
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ		
ກຳໄລ ອາກອນກຳໄລ	**930.379**	**999.069**
ປັບປຸງ		
ຄ່າສູນເສຍມູນຄ່າ	222	-
ຫັກຄ່າຫຼຸ້ຍຫ້ຽນ	181.555	167.060
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ, ສຸດທິ	(11.555)	(25.753)
ກຳໄລຮຸ້ນ ຈາກເງິນລົງທຶນ	(474.467)	(453.746)
ລາຍຈ່າຍການເງິນ	31.722	30.845
ກະແສເງິນສົດຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ	**657.756**	**717.475**
ການປ່ຽນແປງຈາກ ການດຳເນີນງານ ຊັບສິນ ແລະໜີ້ສິນ		
- ການເພີ່ມຂອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	16.973	(105.722)
- ການເພີ່ມຂອງເຄື່ອງໃນສາງ	(1.021)	108
- ຊັບສິນໝຸນວຽນອື່ນໆ	(1.691)	(4.100)
- ໜີ້ຕ້ອງສິ່ງ	(30.373)	(34.520)
- ຊັບສິນອື່ນ	1.579	1.732
- ໜີ້ສິນໝຸນວຽນອື່ນໆ	(18.767)	15.537
- ໜີ້ຄ້າງຈ່າຍ	50.934	43.945
ກະແສເງິນສົດທີ່ກຳເນີດຈາກການດຳເນີນງານ	675.490	634.455
ອາກອນກຳໄລທີ່ໄດ້ຈ່າຍ	(27.668)	(24.878)
ເງິນສົດ ສຸດທິ ຈາກກິດຈະກຳ ການລົງທຶນ	**647.822**	**609.577**
ກະແສເງິນສົດຈາກກິດຈະກຳການລົງທຶນ		
ການເພີ່ມຂອງເງິນລົງທຶນຈ່າຍລ່ວງໜ້າ	(304.594)	(95.410)
ຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ	(142.162)	(168.379)

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ຊື້ເງິນລົງທຶນໄລຍະສັ້ນ, ສຸດທິ	(20.000)	(20.000)
ການເພີ່ມຂອງເງິນລົງທຶນໄລຍະສັ້ນ, ສຸດທິ	20.000	40.000
ຮັບເງິນປັນຜົນ	227.016	313.129
ເງິນສິດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ	**(219.740)**	**(69.340)**
ກະແສເງິນສິດຈາກກິດຈະກຳການເງິນ		
ການເພີ່ມຂອງເງິນກູ້ໄລຍະຍາວ	-	90.113
ຈ່າຍເງິນກູ້ຍືມໄລຍະຍາວ	(333.145)	-
ຮັບເງິນຈາກເງິນກູ້ຍືມໄລຍະສັ້ນ	160.000	-
ຈ່າຍເງິນກູ້ຍືມໄລຍະສັ້ນ	(160.000)	-
ຮັບເງິນຈາກຮຸ້ນກູ້	1.616.810	-
ຕົ້ນທຶນການອອກຮຸ້ນກູ້	(17.734)	-
ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ	(436.840)	(424.884)
ຈ່າຍເງິນປັນຜົນ	(145.613)	(141.628)
ຈ່າຍດອກເບ້ຍ	(30.733)	(31.696)
ເງິນສິດສຸດທິ ຈາກກິດຈະກຳການເງິນ	**652.745**	**(682.758)**
ການຫຼຸດລົງສຸດທິ ໃນເງິນສິດ ແລະ ລາຍການທຽບເທົ່າເງິນສິດ	**1.080.827**	**(3.841)**
ເງິນສິດ ແລະ ລາຍການທຽບເທົ່າເງິນສິດຕົ້ນປີ	159.914	164,511
ຜົນຂອງອັດຕາແລກປ່ຽນ ປ່ຽນເງິນສິດ ແລະ ລາຍການທຽບເທົ່າເງິນສິດ	10.793	(756)
ເງິນສິດ ແລະ ລາຍການທຽບເທົ່າເງິນສິດທ້າຍປີ	1.251.534	159.914
ລາຍການບໍ່ແມ່ນເງິນສິດ		
ໜີ້ສິນອື່ນໆ ສຳລັບການຊື້ຊັບສົມບັດພາຍໃຕ້ສັນຍາສຳປະທານ	174.165	64.890
ເຈົ້າໜີ້ຄ້າງຄ່າໃຊ້ຈ່າຍໃນການອອກຮຸ້ນກູ້	16.936	-

ແຫຼ່ງຂໍ້ມູນ: ຜ-ຟຟລ

8.1.1 ບົດລາຍງານ ແລະ ບົດວິເຄາະຜົນການດຳເນີນງານ

ສຳລັບຜົນການດຳເນີນງານປີ 2013 ແລະ 2014, ບໍລິສັດມີລາຍຮັບ ແລະ ກຳໄລສຸດທິເທົ່າກັບ 971.742 ລ້ານກີບ ແລະ 907.684 ລ້ານກີບ ຕາມລຳດັບ. ລາຍຮັບຈາກການຂາຍ ແລະ ກຳໄລສຸດທິຫຼຸດລົງ 2,69 ສ່ວນຮ້ອຍ ແລະ 6,59 ສ່ວນຮ້ອຍຕາມລຳດັບ. ປັດໄຈສຳຄັນທີ່ເຮັດໃຫ້ຜົນການດຳເນີນງານຫຼຸດລົງ ແມ່ນເກີດມາຈາກການຫຼຸດລົງຂອງການຜະລິດຕົວຈິງ. ໃນປີ 2014 ການຜະລິດໄຟຟ້າຈາກເຂື່ອນຕ່າງໆ ແມ່ນໜ້ອຍກວ່າປີ 2013. ສາຍເຫດໃນນັ້ນຄ່າໃຊ້ຈ່າຍໃນການ ບໍລິຫານກໍ່ເພີ່ມຂຶ້ນພ້ອມກັບ ການຂາດທຶນຈາກການເໜັງຕີງຂອງອັດຕາແລກປ່ຽນ ໃນປີ 2014.

ລາຍຮັບຈາກການດຳເນີນງານໃນເບື້ອງຕົ້ນຂອງບໍລິສັດໃນປີ 2013 ແລະ 2014 ມີຈຳນວນ 658.494 ລ້ານກີບ ຫຼື 76 ສ່ວນຮ້ອຍ ແລະ 623.580 ລ້ານກີບ ຫຼື 74 ສ່ວນຮ້ອຍ ຕາມລຳດັບ. ຕົ້ນທຶນການຂາຍສ່ວນໃຫຍ່ ແມ່ນມາຈາກຄ່າຫຼຸຍຫ້ຽນເຊິ່ງມີຕົ້ນຕໍ່ມາຈາກຄ່າໃຊ້ຈ່າຍໃນການກໍ່ສ້າງ. ອັດຕາສ່ວນ EBITDA ແລະ ອັດຕາສ່ວນກຳໄລສຸດທິ ໃນປີ 2013 ແລະ 2014 ມີຈຳນວນ 91 ສ່ວນຮ້ອຍ, 74 ສ່ວນຮ້ອຍ ແລະ 87 ສ່ວນຮ້ອຍ, 69 ສ່ວນຮ້ອຍ ຕາມລຳດັບ. ການ ເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການບໍລິຫານ ລວມໄປເຖິງການຂາດທຶນຈາກອັດຕາແລກປ່ຽນ ເຮັດໃຫ້ທັງ EBITDA ແລະ ກຳໄລ ສຸດທິຫຼຸດລົງ.

8.1.2 ລາຍຮັບ

ລາຍຮັບສ່ວນໃຫຍ່ຂອງບໍລິສັດແມ່ນໄດ້ມາຈາກການຂາຍໄຟຟ້າໃຫ້ກັບ ຟຟລ, ເຊິ່ງລາຍລະອຽດໄດ້

ສະແດງໃຫ້ເຫັນໃນຕາຕະລາງລຸ່ມນີ້:

ຕາຕະລາງ ຈ: ລາຍລະອຽດຂອງລາຍຮັບ

	31 ທັນວາ 2014 (ລ້ານກີບ)	31 ທັນວາ 2013 (ລ້ານກີບ)
ການຂາຍກະແສໄຟຟ້າ	839.193	862.429
ລາຍຮັບອື່ນໆ	5.680	6.700
ລາຍຮັບທັງໝົດ	844.873	869.129

ແຫຼ່ງຂໍ້ມູນ: ຜ-ຟຟລ

ສຳລັບຜົນການດຳເນີນງານປີ 2014, ລາຍຮັບຈາກການຂາຍໄຟຟ້າເທົ່າກັບ 839.193 ລ້ານກີບ ຫຼື ເທົ່າກັບ 99,32 ສ່ວນຮ້ອຍຂອງລາຍຮັບທັງໝົດ ແລະ ລາຍຮັບອື່ນໆ ສ່ວນໃຫຍ່ແມ່ນໄດ້ຈາກດອກເບ້ຍປະມານ 5.680 ລ້ານ ກີບ. ໃນປີ 2014, ການຜະລິດກະແສໄຟຟ້າສຳລັບຂາຍແມ່ນປະມານ 1.996 GWh ດ້ວຍລາຄາກະແສໄຟຟ້າໃນອັດຕາ 426,43 ກີບຕໍ່ KWh. ລາຍລະອຽດຂອງການຜະລິດໄຟຟ້າຂອງແຕ່ລະເຂື່ອນໃນປີ 2014:

ຕາຕະລາງ ສ: ລາຍລະອຽດຂອງການຜະລິດໄຟຟ້າ

	ລວມທັງໝົດ	ນ້ຳງື່ມ 1	ນ້ຳມັງ 3	ນ້ຳເລີກ	ເຊເສັດ 1+2	ແຊລະບ໋ຳ	ນ້ຳຊອງ
ການຜະລິດໄຟຟ້າ (GWh)	1.996	1.142	178	197	436	30	13

ແຫຼ່ງຂໍ້ມູນ: ຜ-ຟຟລ

ໃນປີ 2013, ບໍລິສັດຜະລິດໄຟຟ້າສຳລັບຂາຍໄດ້ 2.043 GWh ໃນອັດຕາຄ່າໄຟຟ້າສະເລ່ຍເທົ່າກັບ 422,21 ກີບຕໍ່ KWh.

ຜົນການດຳເນີນງານຂອງບໍລິສັດແມ່ນມີຄວາມແຕກຕ່າງໃນແຕ່ລະໄຕມາດ ແລະ ລະດູການ. ການ ຜະລິດໄຟຟ້າແມ່ນອີງໃສ່ການໄຫລຂອງນ້ຳເຂົ້າໄປຍັງອ່າງເກັບນ້ຳຂອງແຕ່ລະເຂື່ອນໂດຍສິ່ງຜົນສະທ້ອນໃຫ້ຄວາມສາມາດໃນການ ຜະລິດໄຟຟ້າຂອງບໍລິສັດເພີ່ມຂຶ້ນໃນທ້າຍປີເຊິ່ງເປັນລະດູຝົນ.

8.1.3 ຄ່າໃຊ້ຈ່າຍໃນການດຳເນີນງານ

ຄ່າໃຊ້ຈ່າຍທັງໝົດຂອງພວກເຮົາປະກອບດ້ວຍຕົ້ນທຶນການຂາຍ, ຄ່າໃຊ້ຈ່າຍໃນການຂາຍ ແລະ ການ ບໍລິຫານ. ຄ່າໃຊ້ຈ່າຍທັງໝົດມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ ຊ: ລາຍລະອຽດຄ່າໃຊ້ຈ່າຍ

	ລາຍງານດ້ານການເງິນຂອງບໍລິສັດ ປີ 2014 (ລ້ານກີບ)	ລາຍງານດ້ານການເງິນຂອງບໍລິສັດ ປີ 2013 (ລ້ານກີບ)
ຕົ້ນທຶນ		
ຄ່າຊ່ອມແປງ ແລະ ຄ່າບຳລຸງຮັກສາ	21.623	21.873
ຄ່າຫຼຸ້ຍຫ້ຽນຊັບສິນພາຍໃຕ້ສັນຍາສຳປະທານ	181.555	167.060

	ລາຍງານດ້ານການເງິນຂອງບໍລິສັດ ປີ 2014 (ລ້ານກີບ)	ລາຍງານດ້ານການເງິນຂອງບໍລິສັດ ປີ 2013 (ລ້ານກີບ)
ລາຍຈ່າຍອື່ນໆ	12.435	15.002
ຕົ້ນທຶນຂອງການຂາຍທັງໝົດ	**215.613**	**203.935**
ລາຍຈ່າຍໃນການຂາຍ ແລະ ການບໍລິຫານ		
ຄ່າໃຊ້ຈ່າຍໃຫ້ພະນັກງານ	40.112	42.173
ການບໍລິຫານຈັດການທົ່ວໄປ	83.415	71.316
ອື່ນໆ (ການຫຼຸບທຶນໃນອັດຕາການແລກປ່ຽນເງິນຕາ)	18.098	(24.463)
ລາຍຈ່າຍໃນການຂາຍແລະການບໍລິຫານທັງໝົດ	**141.626**	**89.026**

ແຫຼ່ງຂໍ້ມູນ: ຜ-ຟຟລ

8.1.4 ລາຍຈ່າຍ

ສຳລັບຜົນການດຳເນີນງານປີ 2014, ລາຍຈ່າຍທັງໝົດ ແມ່ນ 357.239 ລ້ານກີບ ເຊິ່ງເທົ່າກັບ 42,28 ສ່ວນຮ້ອຍຂອງລາຍຮັບທັງໝົດ. ຕົ້ນທຶນການຂາຍ, ຄ່າໃຊ້ຈ່າຍໃນການຂາຍ ແລະ ການບໍລິຫານ ແມ່ນ 215.613 ລ້ານກີບ ແລະ 141.626 ລ້ານກີບ ຕາມລຳດັບດັ່ງລາຍລະອຽດລຸ່ມນີ້:

(1) ຕົ້ນທຶນການຂາຍ ແມ່ນ 215.613 ລ້ານກີບ ຫຼື 25,52 ສ່ວນຮ້ອຍຂອງລາຍຮັບທັງໝົດ. ໃນນັ້ນ ປະກອບດ້ວຍຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ ໂດຍອີງຕາມໄລຍະສຳປະທານ ພາຍໃຕ້ສັນຍາສຳປະທານໃນໄລຍະເວລາ 30 ປີ ແມ່ນ 181.555 ລ້ານກີບ ຫຼື 84,20 ສ່ວນຮ້ອຍຂອງຕົ້ນທຶນການຂາຍທັງໝົດ, ຄ່າບຳລຸງຮັກສາແມ່ນ 21.623 ລ້ານກີບ ຫຼື 10,03 ສ່ວນຮ້ອຍຂອງຕົ້ນທຶນການຂາຍທັງໝົດ. ຍິ່ງໄປກວ່ານັ້ນ, ພວກເຮົາຍັງໄດ້ຈ່າຍຄ່າພາກຫລວງໃນອັດຕາໜຶ່ງສ່ວນຮ້ອຍຂອງການຂາຍກະແສໄຟຟ້າໄດ້ທັງໝົດ ແລະ ຍັງມີຄ່າໃຊ້ຈ່າຍອື່ນໆອີກ.

(2) ຄ່າໃຊ້ຈ່າຍໃນການຂາຍ ແລະ ບໍລິຫານ ແມ່ນ 141.626 ລ້ານກີບ ຫຼື 16,76 ສ່ວນຮ້ອຍຂອງລາຍຮັບທັງໝດ; ໃນນີ້, ມີລາຍຈ່າຍ ເງິນເດືອນ ແລະ ສະຫວັດດີການ ເທົ່າກັບ 40.112 ລ້ານກີບ ຫຼື 28,32 ສ່ວນຮ້ອຍຂອງຄ່າໃຊ້ຈ່າຍໃນການຂາຍ ແລະ ບໍລິຫານທັງໝົດ ຫຼື ເທົ່າກັບ 4,7 ສ່ວນຮ້ອຍຂອງລາຍຮັບທັງໝົດ.

8.1.5 ກຳໄລກ່ອນຫັກ ຕົ້ນທຶນທາງການເງິນ ແລະ ອາກອນກຳໄລ

ຜົນຈາກການດຳເນີນງານ ໃນປີ 2014 ແລະ 2013, ກຳໄລຈາກການດຳເນີນງານຂອງບໍລິສັດກ່ອນຕົ້ນທຶນທາງການເງິນ ແລະ ອາກອນກຳໄລ ແມ່ນ 487.634 ລ້ານກີບ ແລະ 576.168 ລ້ານກີບ ຫຼື 57,71 ສ່ວນຮ້ອຍ ແລະ 66,29 ສ່ວນຮ້ອຍຂອງຈຳນວນລາຍຮັບທັງໝົດຕາມລຳດັບ.

ຕາຕະລາງ ຍ: ຜົນຂອງການດຳເນີນງານ

	ລາຍງານດ້ານການເງິນຂອງບໍລິສັດ ປີ 2014 (ລ້ານກີບ)	ລາຍງານດ້ານການເງິນຂອງບໍລິສັດ ປີ 2013 (ລ້ານກີບ)
ກຳໄລສຸດທິຈາກການດຳເນີນກິດຈະການກ່ອນຫັກຕົ້ນທຶນທາງການເງິນ ແລະ ອາກອນ	487.634	576.168
ຕົ້ນທຶນທາງການເງິນ	31.722	30.845
ອາກອນ	22.695	27.327
ກຳໄລສຸດທິກ່ອນການແບ່ງຜົນກຳໄລຈາກການຮ່ວມລົງທຶນ ແລະ ຮຸ້ນສ່ວນ	433.217	517.996
ການແບ່ງຜົນກຳໄລຈາກການຮ່ວມລົງທຶນ ແລະ ຮຸ້ນສ່ວນ	474.467	453.746
ກຳໄລສຸດທິໃນປີ	**907.684**	**971.742**

ແຫຼ່ງຂໍ້ມູນ: ຜ-ຟຟລ

8.1.6 ຕົ້ນທຶນທາງການເງິນ

ປີ 2014, ຕົ້ນທຶນທາງການເງິນຂອງບໍລິສັດ ແມ່ນ 31.722 ລ້ານກີບ ຫຼື 3,75 ສ່ວນຮ້ອຍ ຂອງ ຈຳນວນລາຍຮັບທັງໝົດ ເຊິ່ງສ່ວນໃຫຍ່ແລ້ວແມ່ນມາຈາກການຊຳລະດອກເບ້ຍຂອງການກູ້ຢືມໄລຍະຍາວ ໂດຍທີ່ການເກັບດອກ ເບ້ຍດັ່ງກ່າວຢູ່ໃນລະຫວ່າງ 2,00 ສ່ວນຮ້ອຍ ເຖິງ 6,51 ສ່ວນຮ້ອຍ ຕໍ່ປີ.

ປີ 2014, ອາກອນລາຍໄດ້ຈາກການດຳເນີນທຸລະກິດແມ່ນ 22.695 ລ້ານກີບ ຫຼື 5 ສ່ວນຮ້ອຍ ຂອງອາກອນກຳໄລ. ເມື່ອຮຸ້ນຂອງບໍລິສັດໄດ້ຈົດທະບຽນທີ່ ຕລຊລ, ບໍລິສັດຈະໄດ້ຮັບບຸລິມະສິດຂອງອາກອນລາຍໄດ້ຈາກການ ດຳເນີນທຸລະກິດໃນອັດຕາສ່ວນຫຼຸດ 5 ສ່ວນຮ້ອຍ ເປັນໄລຍະ 4 ປີ ນັບຈາກ ປີ 2011 ເຖິງ ປີ 2014 ພາຍໃຕ້ກຳນົດເວລາຂອງ CA ຈາກອັດຕາປົກກະຕິ 10 ສ່ວນຮ້ອຍ. ຢ່າງໃດກໍ່ຕາມ, ຖ້າຫາກບໍລິສັດແຈ້ງວ່າບໍ່ມີກຳໄລ ຫຼື ມີກຳໄລຕ່ຳກວ່າລະດັບ, ບໍລິສັດ ຕ້ອງໄດ້ຈ່າຍໃນອັດຕາອາກອນຕ່ຳສຸດ 0,25 ສ່ວນຮ້ອຍ ຂອງຈຳນວນລາຍຮັບທັງໝົດ.

8.1.7 ກຳໄລສຸດທິ

ກຳໄລສຸດທິກ່ອນການຈັດສັນຜົນກຳໄລຈາກການຮ່ວມທຶນແລະຮຸ້ນສ່ວນໃນປີ 2014 ເທົ່າກັບ 433.217 ລ້ານກີບ ຫຼື 51,27 ສ່ວນຮ້ອຍຂອງລາຍຮັບທັງໝົດ, ມີການຫຼຸດລົງ 84.779 ລ້ານກີບ ຈາກປີຜ່ານມາ ຫຼື 16.40 ສ່ວນຮ້ອຍ. ຄວາມສາມາດຂອງການຜະລິດໄຟຟ້າຫຼຸດລົງ ເກີດຈາກສາຍເຫດທີ່ລະດັບນ້ຳຫຼຸດລົງ, ຈຶ່ງສົ່ງຜົນສະທ້ອນເຖິງການ ປະຕິບັດງານຫຼຸດລົງ. ຍິ່ງໄປກວ່ານັ້ນ, ໃນປີ 2013 ບໍລິສັດມີລາຍຮັບຈາກອັດຕາແລກປ່ຽນ 24.463 ລ້ານກີບ, ເຊິ່ງສົ່ງຜົນໃຫ້ລາຍ ຈ່າຍທັງໝົດຫຼຸດລົງ. ແຕ່ເຖິງຢ່າງໃດກໍ່ຕາມ, ພວກເຮົາພົບວ່າບໍລິສັດຍັງມີກຳໄລສຸດທິໃນອັດຕາທີ່ສູງ ຖ້າທຽບໃສ່ທຸລະກິດອື່ນຍ້ອນ ວ່າມູນຄ່າຂອງການຜະລິດກະແສໄຟຟ້າທັງໝົດໃນທຸລະກິດເຂື່ອນແມ່ນມີການບຳລຸງຮັກສາ ແລະ ການຫັກຄ່າເສື່ອມເຊິ່ງເປັນລາຍ ຈ່າຍທາງບັນຊີ, ບໍ່ແມ່ນລາຍຈ່າຍຈາກເງິນສົດ, ບໍ່ພຽງແຕ່ເທົ່ານັ້ນ, ມູນຄ່າຫນີ້ດ້ານການເງິນຂອງພວກເຮົາແມ່ນຢູ່ໃນລະດັບຕ່ຳ ແລະ ຫລຸດລົງຢ່າງຕໍ່ເນື່ອງ ເຊິ່ງເຮັດໃຫ້ບໍລິສັດຂອງພວກເຮົາມີໂອກາດທີ່ຈະໄດ້ຮັບຜົນກຳໄລສູງ.

8.2 ບົດລາຍງານ ແລະ ການວິເຄາະຖານະການເງິນ

8.2.1 ການວິເຄາະຊັບສິນ

ປີ 2014 ຊັບສິນຂອງບໍລິສັດທັງໝົດແມ່ນ 8.821.261 ລ້ານກີບ ເພີ່ມຂຶ້ນ 1.754.090 ລ້ານກີບ ຫຼື 24,8 ສ່ວນຮ້ອຍ ທຽບກັບປີ 2013. ສາຍເຫດຕົ້ນຕໍເນື່ອງມາຈາກການເພີ່ມຂຶ້ນຂອງເງິນສົດ ແລະ ທຽບເທົ່າເງິນສົດ ລາຍ ລະອຽດມີດັ່ງລຸ່ມນີ້:

(1) ຈຳນວນເງິນສົດ ແລະ ລາຍການທຽບເທົ່າເງິນສົດມີຈຳນວນເຖິງ 1.251.534 ລ້ານກີບ ຫຼື 14,19 ສ່ວນຮ້ອຍຂອງຈຳນວນຊັບສິນທັງໝົດ ໂດຍເພີ່ມຂຶ້ນ 1.091.620 ລ້ານກີບ ຈາກປີທີ່ຜ່ານມາ. ໃນຊ່ວງ ປີ 2014, ບໍລິສັດໄດ້ເພີ່ມທຶນຂອງຕົນໂດຍການອອກຮຸ້ນກູ້ ຈຳນວນ 6.500 ລ້ານບາດ ເປັນສາຍເຫດເຮັດໃຫ້ທຶນເພີ່ມຂຶ້ນ.

(2) ລາຍຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ຈຳນວນ 502.382 ລ້ານກີບ ຫຼື 5,70 ສ່ວນຮ້ອຍ ຂອງຈຳນວນຊັບສິນທັງໝົດ ເຊິ່ງເພີ່ມຂຶ້ນເລັກນ້ອຍ 16.973 ລ້ານກີບ ຈາກປີທີ່ ຜ່ານມາ. ກຳນົດເວລາດ້ານບັນຊີແມ່ນອີງຕາມຮອບວຽນ 45 ວັນ. ຢ່າງໃດກໍ່ຕາມວັນໃນຮອບ ວຽນບັນຊີຂອງປີ 2014 ແລະ 2013 ແມ່ນມີ 216 ວັນ, ເຮັດໃຫ້ອັດຕາການໝຸນວຽນ ຂອງລູກໜີ້ເປັນ 1,7 ຮອບ ເຊິ່ງອາດສົ່ງຜົນກະທົບຕໍ່ຮອບວຽນເງິນສົດ ແລະ ໂອກາດທີ່ ຈະສູນເສຍດອກເບ້ຍ.

(3) ການລົງທຶນໄລຍະສັ້ນມີຈຳນວນເຖິງ 20.000 ລ້ານກີບ ທີ່ໄດ້ຝາກໄວ້ກັບສະຖາບັນການ ເງິນພາຍໃນ, ເລີ່ມຈາກ ວັນທີ 18 ພະຈິກ 2014 ເຖິງ 2015 ໂດຍມີອັດຕາດອກເບ້ຍ 10 ສ່ວນຮ້ອຍຕໍ່ປີ.

(4) ຊັບສິນທັງໝົດພາຍໃຕ້ CA ມີຈຳນວນເຖິງ 4.145.851 ລ້ານກີບ ຫຼື 46,99 ສ່ວນ ຮ້ອຍຂອງຈຳນວນຊັບສິນທັງໝົດ. ຊັບສິນດັ່ງກ່າວນັ້ນສ່ວນໃຫຍ່ແມ່ນເຂື່ອນໄຟຟ້າ ພາຍໃຕ້ CA ທີ່ມີກຳນົດເວລາ 30 ປີ ໂດຍອີງຕາມການກໍ່ສ້າງ ແລະ ການຕິດຕັ້ງເຂື່ອນ ໄຟຟ້າ.

(5) ຜົນຕອບແທນຂອງບໍລິສັດໃນຊັບສິນ ແລະ ຊັບສິນຄົງທີ່ ໃນປີ 2014 ມີ 10 ສ່ວນຮ້ອຍ ແລະ 15 ສ່ວນຮ້ອຍ ຕາມລຳດັບ ເຊິ່ງສະແດງໃຫ້ເຫັນເຖິງກຳໄລທີ່ໄດ້ຈາກການລົງທຶນ ເຂົ້າໃສ່ໃນຊັບສິນ

8.2.2 ການວິເຄາະໜີ້ສິນ

ວັນທີ 31 ທັນວາ 2014 ໜີ້ສິນທັງໝົດຂອງບໍລິສັດມີ 2.499.620 ລ້ານກີບ ທຽບໃສ່ປີ 2013 ເພີ່ມຂຶ້ນ 1.437.336 ລ້ານກີບ. ສາຍເຫດຂອງການເພີ່ມຂຶ້ນແມ່ນມາຈາກການອອກຮຸ້ນກູ້ດ້ວຍມູນຄ່າ 1.575.862 ລ້ານກີບ. ຈຸດປະສົງໃນການລະດົມທຶນດັ່ງກ່າວນີ້ແມ່ນເພື່ອລົງທຶນຊື້ເຂື່ອນໄຟຟ້າ ແລະ ລົງທຶນສ້າງເຂື່ອນເອງ.

ໜີ້ສິນຂອງບໍລິສັດທັງໝົດເປັນໜີ້ສິນໄລຍະຍາວມີຈຳນວນ 2.185.749 ລ້ານກີບ ຫຼື 87,44 ສ່ວນ ຮ້ອຍຂອງໜີ້ສິນທັງໝົດ, ການຊຳລະໜີ້ສິນຈາກການກູ້ຢືມພາຍໃນ 1 ປີ ມີ 99.519 ລ້ານກີບ ຫຼື 3,98 ສ່ວນຮ້ອຍ ແລະ ການ

ຊຳລະໜີ້ສິນໄລຍະຍາວກວ່າ 1 ປີ ແມ່ນ 499.263 ລ້ານກີບ ຫຼື 19,97 ສ່ວນຮ້ອຍ ແລະ ມີໜີ້ສິນຈາກການອອກຮຸ້ນກູ້ອາຍຸ 10 ປີ ມູນຄ່າ 1.575.862 ລ້ານກີບ ຫຼື 63,04 ສ່ວນຮ້ອຍຂອງໜີ້ສິນທັງໝົດ.

8.2.3 ການຊຳລະໜີ້ຈາກລາຍຮັບ

ໃນປີ 2013 ແລະ 2014, ບໍລິສັດມີສັດສ່ວນທຶນໝຸນວຽນເຖິງ 5,7 ເທົ່າ ເຊິ່ງສະແດງໃຫ້ເຫັນເຖິງ ການບໍລິຫານຈັດການທຶນໝຸນວຽນທີ່ດີ. ນອກຈາກນີ້ແລ້ວ, ສັດສ່ວນໜີ້ຕໍ່ຊັບສິນຍັງຄົງຕ່ຳ ໂດຍຢູ່ທີ່ 0,2 ແລະ 0,4 ເທົ່າ ໃນປີ 2013 ແລະ 2014 ຕາມລຳດັບ. ໃນທາງດຽວກັນ, ດອກເບ້ຍທີ່ມີຕໍ່ສັດສ່ວນໜີ້ຕໍ່ຊັບສິນ ຢູ່ທີ່ 0,2 ແລະ 0,3 ເທົ່າ ໂດຍຖືເປັນ ອັດຕາທີ່ຂ້ອນຂ້າງຕ່ຳ.

ຢ່າງໃດກໍ່ຕາມ, ຄວນເອົາໃຈໃສ່ການປະກັນດອກເບ້ຍ ແລະ ການຊຳລະໜີ້ຈາກລາຍຮັບດ້ວຍ. ໃນປີ 2013 ແລະ 2014, ການປະກັນດອກເບ້ຍ ຢູ່ທີ່ 38,8 ແລະ 36,1 ເທົ່າ ຕາມລຳດັບ. ເຊິ່ງສະແດງໃຫ້ເຫັນວ່າຄວາມສາມາດໃນ ການຈ່າຍດອກເບ້ຍທີ່ມາຈາກຈຳນວນໜີ້ທີ່ເພີ່ມຂຶ້ນນັ້ນຫຼຸດລົງເລັກໜ້ອຍ. ຢ່າງໃດກໍ່ຕາມ, ພວກເຮົາພົບວ່າບໍລິສັດຍັງຄົງມີຄວາມ ສາມາດໃນການຊຳລະໜີ້ສິນ. ສັດສ່ວນໃນການປະກັນດອກເບ້ຍ ໃນປີ 2013 ແລະ 2014 ຢູ່ທີ່ 5,8 ແລະ 3,1 ຕາມລຳດັບ.

8.2.4 ການວິເຄາະຊັບສິນຂອງຜູ້ຖືຮຸ້ນ

ໃນວັນທີ 31 ທັນວາ 2014, ການສະຫຼຸບຊັບສິນຂອງບັນດາຜູ້ຖືຮຸ້ນມີເຖິງ 6.321.641 ລ້ານກີບ ຫຼື 71,66 ສ່ວນຮ້ອຍຂອງຈຳນວນຊັບສິນທັງໝົດ. ຊັບສິນຂອງບັນດາຜູ້ຖືຮຸ້ນປະກອບດ້ວຍທຶນທີ່ໄດ້ຊຳລະແລ້ວທີ່ມີຈຳນວນ ເຖິງ 4.904.867 ລ້ານກີບ ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ (ແບ່ງເປັນຮຸ້ນສາມັນທັງໝົດ 1.226.216.765 ຮຸ້ນ). ສ່ວນເພີ່ມມູນຄ່າ ຮຸ້ນ ແມ່ນ 142.229 ລ້ານກີບ. ປະຈຸບັນຍັງມີເງິນໃນຄັງສຳຮອງຕາມກົດໝາຍແມ່ນ 295.734 ລ້ານກີບ ເພີ່ມຂຶ້ນເປັນຈຳນວນ 82.291 ລ້ານກີບ ໃນປີ 2013. ກຳໄລສະສົມມີຈຳນວນເຖິງ 978.811 ລ້ານກີບ ເພີ່ມຂຶ້ນເປັນ 234.463 ລ້ານກີບ ຈາກປີທີ່ຜ່ານ ມາ. ໃນປີ 2014 ການຫຼຸດລົງເລັກໜ້ອຍຂອງກຳໄລສຸດທິເຮັດໃຫ້ຜົນຕອບແທນຈາກທຶນຫຼຸດລົງ 14 ສ່ວນຮ້ອຍ.

ພາກທີ 1
ຂໍ້ມູນບໍລິສັດ

1. ຂໍ້ມູນບໍລິສັດ

1.1. ຂໍ້ມູນທົ່ວໄປຂອງບໍລິສັດ

ຊື່ຂອງບໍລິສັດ : ບໍລິສັດ ຜະລິດໄຟຟ້າ ລາວ ຈຳກັດ

ຊື່ສັນຍາລັກ : ຜ-ຟຟລ

ວັນສ້າງຕັ້ງ : 15 ທັນວາ 2010

ປະເພດທຸລະກິດ :
1. ຜະລິດໄຟຟ້າເພື່ອຂາຍຍົກໃຫ້ກັບ ຟຟລ ແລະ ລວມທັງດຳເນີນການ ພັດທະນາລະບົບສາຍສົ່ງ ແລະ ສະຖານີໄຟຟ້າຫາກມີຄວາມຈຳເປັນ;
2. ລົງທຶນ ຫຼື ຮ່ວມທຶນ ໃນໂຄງການຜະລິດໄຟຟ້າອື່ນໆ.
3. ໃຫ້ບໍລິການໃນການບໍລິຫານ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າ ອື່ນໆ.

ສຳນັກງານໃຫຍ່ : ຊັ້ນທີ 7 ອາຄານສຳນັກງານໃຫຍ່ ຟຟລ, ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງ ກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ.

ໂທລະສັບ : (+85621) 316 142

ແຟັກ : (+85621) 316 141

Email : edlgenhq@edlgen.com

Website : www.edlgen.com.la

1.2 ຄວາມເປັນມາຂອງບໍລິສັດ

ຈາກປີ 2008 ເປັນຕົ້ນມາ ຟຟລ ໄດ້ສຸມໃສ່ໃນການຈັດຕັ້ງປະຕິບັດໂດຍກົງໃນການປັບປຸງໂຄງສ້າງທາງດ້ານທຸລະກິດເພື່ອຮອງຮັບການພັດທະນາອຸດສະຫະກຳໄຟຟ້າຂອງ ສປປ ລາວ, ບໍລິສັດໄດ້ຮັບໜ້າທີ່ໃນການເປັນຜູ້ຜະລິດ ແລະ ຈຳໜ່າຍໄຟຟ້າ (ຂາຍ); ເພື່ອເຮັດໃຫ້ບໍລິສັດມີການຈະເລີນເຕີບໂຕ ແລະ ພັດທະນາອຸດສາຫະກຳໄຟຟ້າຂອງ ສປປ ລາວເຊິ່ງເປັນບັນຫາສຳຄັນຂອງຊາດ, ບໍລິສັດໄດ້ຈ້າງທີ່ປຶກສາເພື່ອສຶກສາຄວາມເປັນໄປໄດ້ຂອງການປັບປຸງໂຄງສ້າງທຸລະກິດ.

ປີ 2010, ຜົນຈາກການສຶກສາຄວາມເປັນໄປໄດ້ຢັ້ງຢືນໃຫ້ເຫັນວ່າການຜະລິດໄຟຟ້າຂອງ ຟຟລ ສາມາດ ນຳໃຊ້ເປັນທຶນສຳລັບສ້າງຕັ້ງບໍລິສັດໄດ້. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ເພີ່ມທຶນຈົດທະບຽນໂດຍການຂາຍຮຸ້ນ 25 ສ່ວນຮ້ອຍໃຫ້ກັບມວນຊົນທົ່ວໄປ ແລະ ໄດ້ກາຍເປັນບໍລິສັດຈົດທະບຽນຢູ່ ຕລຊລ.

ພາຍໃຕ້ການຊີ້ນຳຂອງ ສຄຄຊ, ບໍລິສັດໄດ້ສ້າງຕັ້ງຄະນະກຳມະການເພື່ອກະກຽມໃນການເຂົ້າຈົດທະບຽນຢູ່ ຕລຊລ. ໂດຍຄະນະກຳມະການດັ່ງກ່າວນັ້ນປະກອບດ້ວຍຄະນະບຸກຄົນທີ່ມາຈາກຫຼາຍກະຊວງທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ.

ການກະກຽມດັ່ງກ່າວນັ້ນມີສ່ວນກ່ຽວຂ້ອງກັບກະຊວງຕ່າງໆ, ໜ່ວຍງານຂອງລັດຖະບານ, ສະພາແຫ່ງຊາດ ແລະ ສຳນັກງານນາຍົກລັດຖະມົນຕີ ເຊິ່ງໜ່ວຍງານດັ່ງກ່າວນັ້ນໄດ້ຮັບການຍົກເວັ້ນໃນການຈັດຕັ້ງປະຕິບັດບາງລະບຽບ ແລະ ບາງມາດຕາຂອງດຳລັດ ແລະ ກົດໝາຍທີ່ກ່ຽວຂ້ອງເພື່ອເຮັດໃຫ້ການສ້າງຕັ້ງຕະຫຼາດຫຼັກຊັບເກີດຂຶ້ນ.

ວັນທີ 15 ທັນວາ 2010, ກຊຊ ໄດ້ອອກໃບທະບຽນວິສາຫະກິດ ສະບັບເລກທີ 4637/ຈຫວ ໃຫ້ກັບບໍລິສັດ ໂດຍມີທຶນຈົດທະບຽນໃນການສ້າງຕັ້ງຈຳນວນ 2.605.792.200.000 ກີບ ແບ່ງເປັນຮຸ້ນສາມັນ 651.448.050 ຮຸ້ນ (ລາຄາ ກຳນົດ 4.000 ກີບຕໍ່ຮຸ້ນ). ຟຟລ ໄດ້ດຳເນີນການຈອງຊື້ຮຸ້ນຂອງບໍລິສັດ ແລະ ໄດ້ຊຳລະມູນຄ່າຮຸ້ນທີ່ຈອງຊື້ດ້ວຍການໂອນຊັບສິນຂອງຕົນເຊິ່ງປະກອບມີເຂື່ອນໄຟຟ້າ 7 ເຂື່ອນຄື: ນ້ຳງື່ມ 1, ນ້ຳເລີກ, ນ້ຳມັງ 3, ນ້ຳຊອງ, ເຊເສັດ 1, ເຊເສັດ 2 ແລະ ແຊລະບຳ ("ຊັບສິນທີ່ໂອນໃຫ້ກັບບໍລິສັດໃນວັນສ້າງຕັ້ງ"). ກຳລັງຕິດຕັ້ງທັງໝົດ 387 ເມກາວັດ (MW) ກຳລັງການຜະລິດ 1,923.5 GWh ຕໍ່ປີ.

ເດືອນ ທັນວາ ປີ 2010, ກອງປະຊຸມສາມັນຜູ້ຖືຮຸ້ນຂອງບໍລິສັດໄດ້ຮັບຮອງການເພີ່ມທຶນຈົດທະບຽນຂອງ ບໍລິສັດຈຳນວນ 3.474.388.200,000 ກີບ ໂດຍການອອກຮຸ້ນສາມັນຈຳນວນ 217.149.000 ຮຸ້ນ ສຳລັບການສະເໜີຂາຍ ໃຫ້ມວນຊົນທົ່ວໄປ, ພະນັກງານຂອງບໍລິສັດ ແລະ ຟຟລ ໃນຄັ້ງທຳອິດຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບ ເລກທີ 002/ສຄລຕ, ລົງວັນທີ 15 ທັນວາ 2010.

ວັນທີ 7 ມັງກອນ ປີ 2011, ບໍລິສັດມີທຶນຈົດທະບຽນທັງໝົດ 3.474.388.200.000 ກີບ ເຊິ່ງແບ່ງເປັນ ຮຸ້ນສາມັນ 868.597.050 ຮຸ້ນ ແລະ ວັນທີ 11 ມັງກອນ 2011 ບໍລິສັດໄດ້ເອົາຮຸ້ນຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບຢ່າງເປັນທາງການ.

ຫຼັງຈາກນັ້ນ, ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2011 ວັນທີ 3 ຕຸລາ 2011 ໄດ້ຮັບຮອງເອົາການເພີ່ມທຶນ ຈົດທະບຽນຂອງບໍລິສັດຈາກ 3.474.388.200.000 ກີບ ແບ່ງອອກເປັນຮຸ້ນສາມັນ 868.597.050 ຮຸ້ນທີ່ມີມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ມາເປັນ 4.904.867.060.000 ກີບ ແບ່ງອອກເປັນຮຸ້ນສາມັນ 1.226.216.765 ຮຸ້ນ ທີ່ມີມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ໂດຍການອອກຮຸ້ນໃໝ່ 357.619.715 ຮຸ້ນ ທີ່ມີມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ. ເຊິ່ງການລະດົມທຶນຄັ້ງນີ້

ໄດ້ສຳເລັດໃນວັນທີ 24 ກໍລະກົດ 2012.

ເດືອນ ສິງຫາ ປີ 2012, ບໍລິສັດໄດ້ສຳເລັດໃນການຊື້ຮຸ້ນຂອງ 4 ເຂື່ອນໄຟຟ້າ IPPs ຈາກ ຟຟລ. ການຊື້ຮຸ້ນ ດັ່ງກ່າວນີ້ມລວມມີ:

(i) 60 ສ່ວນຮ້ອຍໃນບໍລິສັດ ໄຟຟ້າ ເຫີນຫີນບູນ ຈຳກັດ;

(ii) 25 ສ່ວນຮ້ອຍຈາກບໍລິສັດ ໄຟຟ້ານ້ຳງຶມ 2 ຈຳກັດ;

(iii) 20 ສ່ວນຮ້ອຍ ຈາກ ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ; ແລະ

(iv) 10 ສ່ວນຮ້ອຍຈາກ ເຂື່ອນນ້ຳລີກ 1, 2

ເຊິ່ງມີກຳລັງກຳລັງການຜະລິດລວມກັນໃນ 4 ເຂື່ອນ ແມ່ນ 494 MW, ເຊິ່ງໄດ້ ເພີ່ມກຳລັງກຳລັງການຜະລິດ ຂອງບໍລິສັດເຖິງ 881 MW.

ປີ 2014, ບໍລິສັດໄດ້ອອກຮຸ້ນກູ້ດ້ວຍມູນຄ່າ 6.500 ລ້ານບາດ ເພື່ອລົງທຶນເຂົ້າໃນການຊື້ເຂື່ອນໄຟຟ້າຂອງ ໂຄງການ IPPs 1 ເຂື່ອນ. ເດືອນ ກຸມພາ ປີ 2015 ທຶນທີ່ໄດ້ຈາກການອອກຮຸ້ນກູ້ສ່ວນໜຶ່ງຖືກນຳໃຊ້ໃນການຊື້ຮຸ້ນຂອງບໍລິສັດ ໄຟຟ້ານ້ຳງຶມ 5 ຈຳກັດຈາກ ຟຟລ. ໜັງສືຊວນຊື້ສະບັບນີ້ ບໍລິສັດໄດ້ມີເຂື່ອນໄຟຟ້າທີ່ຕົນເອງເປັນເຈົ້າຂອງທັງມົດ 7 ເຂື່ອນ ແລະ ມີຮຸ້ນຢູ່ເຂື່ອນໄຟຟ້າຂອງໂຄງການ IPP ທັງໝົດ 5 ເຂື່ອນ ເຊິ່ງມີກຳລັງການຜະລິດທັງໝົດ 899,15 MW

ວັນທີ 28 ເມສາ ປີ 2015 ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014 ໄດ້ອະນຸມັດການເພີ່ມທຶນຈົດທະບຽນ ຂອງບໍລິສັດ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ເຊິ່ງຈະສະເໜີຂາຍຕໍ່ຜູ້ຖືຮຸ້ນ ເດີມ ແລະ/ຫຼື ຜູ້ຖືຮຸ້ນໃນວົງຈຳກັດ ແລະ/ຫຼື ມວນຊົນທົ່ວໄປ.

ເພື່ອອຳນວຍຄວາມສະດວກໃນການເພີ່ມທຶນຄັ້ງນີ້, ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014 ຍັງໄດ້ອະນຸມັດ: (i) ການຈັດສັນຮຸ້ນສາມັນ ຈຳນວນບໍ່ເກີນ [x] ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕາມສັດສ່ວນການຖືຮຸ້ນແມ່ນ ສາມ (3) ຮຸ້ນເດີມ ຕໍ່ ໜຶ່ງ (1) ຮຸ້ນໃໝ່ ດ້ວຍລາຄາສະເໜີຂາຍບໍ່ຕ່ຳກວ່າ [x] ກີບຕໍ່ຮຸ້ນ; ແລະ (ii) ການຈັດສັນຮຸ້ນສາມັນບໍ່ເກີນ [x] ຮຸ້ນ ໃຫ້ແກ່ມວນຊົນທົ່ວ ໄປ ດ້ວຍລາຄາສະເໜີຂາຍ ບໍ່ຕ່ຳກວ່າ [x] ກີບຕໍ່ຮຸ້ນ.

ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງບໍລິສັດໃນຄັ້ງນີ້ ແມ່ນ [x] ຮຸ້ນ ໂດຍປະຕິບັດຕາມກອງປະຊຸມຜູ້ຖື ຮຸ້ນສາມັນປະຈຳປີ 2014 ໄດ້ອະນຸມັດການອອກຮຸ້ນສາມັນເພີ່ມທຶນໄວ້ບໍ່ເກີນ [x] ຮຸ້ນ.

2. ການນຳໃຊ້ລາຍຮັບຈາກການຂາຍຮຸ້ນ

ເຫດຜົນຂອງການເພີ່ມທຶນໃນຄັ້ງນີ້ ແມ່ນເພື່ອອຳນວຍຄວາມສະດວກໃຫ້ບໍລິສັດໃນການວາງແຜນໄລຍະຍາວ ແລະ ຕອບສະໜອງຕາມຈຸດປະສົງຂອງບໍລິສັດທີ່ວາງໄວ້ຄື:

(i) ຮັກສາສ່ວນແບ່ງທາງການຕະຫຼາດຂອງບໍລິສັດ;

(ii) ຮັກສາອັດຕາການເຕີບໂຕຂອງບໍລິສັດ;

(iii) ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າໃຫ້ກັບ ສປປ ລາວ ແລະ ການສົ່ງອອກ.

ເພື່ອຕອບສະໜອງທຶນໃນການກໍ່ສ້າງເຂື່ອນໄຟຟ້າທີ່ບໍ່ສາມາດດຳເນີນງານໃນໄລຍະເວລາອັນສັ້ນໄດ້, ບໍລິສັດ ຈະຕ້ອງມີການລະດົມທຶນເພື່ອອຳນວຍຄວາມສະດວກໃນການເຂົ້າໄປຊື້ກິດຈະການຈາກ ຟຟລ ແລະ ລົງທຶນໂດຍກົງດ້ວຍການ ອອກຮຸ້ນເພີ່ມທຶນເພື່ອເຮັດໃຫ້ ສປປ ລາວ ມີໄຟຟ້າໃຊ້ຢ່າງພຽງພໍຕາມແຜນການທີ່ລັດຖະບານວາງໄວ້ໃນປີ 2019-2020.

ທຶນທີ່ໄດ້ຈາກການສະເໜີຂາຍຮຸ້ນຄັ້ງນີ້ຈະຖືກນຳໃຊ້ຄື:

(i) ຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວທັງໝົດ;

(ii) ໂຄງການ IPP ທີ່ ຟຟລ ເປັນຮຸ້ນສ່ວນ;

(iii) ການລົງທຶນໂດຍກົງຂອງບໍລິສັດໃນບັນດາໂຄງການໄຟຟ້າອື່ນ;

(iv) ໃຊ້ເປັນທຶນໝຸນວຽນໃນບໍລິສັດ.

ໂດຍທີ່ (i)-(iii) ໃນຂ້າງເທິງນີ້ ອາດເອີ້ນລວມກັນວ່າ "ການບໍລິຫານຊັບສິນ" (Portfolio of Assets)

ສັນຍາໂອນຊັບສິນທີ່ກ່ຽວຂ້ອງ ຈະຕ້ອງໄດ້ເຊັນໂດຍບໍລິສັດ ແລະ ຟຟລ ເພື່ອການບັນລຸເປົ້າໝາຍຂອງ COD ຂອງບັນດາຊັບສິນ ຫຼື ຮຸ້ນຂອງ ຟຟລ ໃນບັນດາໂຄງການ IPPs ດັ່ງລຸ່ມນີ້ ຫຼື ຕາມວັນທີ ທີ່ທັງສອງຝ່າຍໄດ້ຕົກລົງເຫັນດີຮ່ວມ ກັນຢ່າງເປັນລາຍລັກອັກສອນ ຕາມແຕ່ລະກໍລະນີ.

ຕາຕະລາງ 2.1: ເນື້ອໃນຂອງການລົງທຶນຂອງຊັບສິນ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ສັດສ່ວນການຖືຮຸ້ນ	ກຳລັງການຜະລິດ	ຕະຫຼາດ ເປົ້າໝາຍ	ໝາຍເຫດ	ປີທີ່ຄາດວ່າຈະມີການ ການໂອນ
ໂຄງການທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ							
1	ນ້ຳຈຽນ 1	ຊຽງຂວງ	100%	104,0	ສປປ ລາວ	ກຳລັງກໍ່ສ້າງ	2016
2	ນ້ຳຫີນບຸນ	ຄຳມ່ວນ	100%	30,0	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊເສັດ 3	ຈຳປາສັກ	100%	24,0	ສປປ ລາວ	ກຳລັງກໍ່ສ້າງ	2016
4	ນ້ຳງື່ມ 1 Ext DFE	ວຽງຈັນ	100%	80,0	ສປປ ລາວ	ກຳລັງກໍ່ສ້າງ	2018
5	ນ້ຳງື່ມ 1 Ext ໜ່ວຍທີ6	ວຽງຈັນ	100%	40,0	ສປປ ລາວ	ຢູ່ລະຫວ່າງການ ສຶກສາຄວາມ	2018

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ສັດສ່ວນການຖືຮຸ້ນ	ກຳລັງການຜະລິດ	ຕະຫຼາດ ເປົ້າໝາຍ	ໝາຍເຫດ	ປີທີ່ຄາດວ່າຈະມີການ ການໂອນ
						ເປັນໄປໄດ້	
	ລວມ			**278,0**			
ບັນດາໂຄງການ IPPs ທີ່ ຟຟລ ຖືຮຸ້ນ							
1	ນ້ຳງຽບ 2	ວຽງຈັນ	10%	18,0	ສປປ ລາວ	ກຳລັງກໍ່ສ້າງ	2015
2	ນ້ຳແບ່ງ	ອຸດົມໄຊ	20%	6,8	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊກະໝານ 3	ເຊກອງ	15%	37,5	ສປປ ລາວ	ກຳລັງກໍ່ສ້າງ	2015
4	ນ້ຳລິກ 1	ວຽງຈັນ	10%	6,0	ສປປ ລາວ	ກຳລັງກໍ່ສ້າງ	2016
5	ນ້ຳມັງ 1	ບໍລິຄຳໄຊ	10%	6,4	ສປປ ລາວ	ກຳລັງກໍ່ສ້າງ	2016
6	ນ້ຳທາ 1	ຫຼວງນ້ຳທາ/ບໍ່ແກ້ວ	20%	33,6	ສປປ ລາວ	ກຳລັງກໍ່ສ້າງ	2017
	ລວມ			**108,3**			
ໂຄງການໄຟຟ້າອື່ນ							
1	ນ້ຳພູນ	ໄຊຍະບູລີ	51%	30,6	ສປປ ລາວ	ຢູ່ລະຫວ່າງການ ພັດທະນາ ໂຄງການຕາມ PDA	2018
2	ນ້ຳບີ	ເຊກອງ	80%	104,0	ສປປ ລາວ	ຢູ່ລະຫວ່າງການ ສຶກສາຄວາມເປັນ ໄປໄດ້	2018
	ລວມ			**134,6**			
	ລວມທັງໝົດ			**520,9**			

ແຫຼ່ງຂໍ້ມູນ: ຜ-ຟຟລ

3. ປັນດາປັດໄຈຄວາມສ່ຽງ

ການລົງທຶນໃນບໍລິສັດນີ້ອາດມີຄວາມສ່ຽງ, ຜູ້ລົງທຶນຄວນພິຈາລະນາຂໍ້ມູນໃນໜັງສືຊວນຊື້ສະບັບນີ້ໃຫ້ລະອຽດ ໂດຍສະເພາະແມ່ນຄວາມສ່ຽງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້ກ່ອນຕັດສິນໃຈລົງທຶນ. ຂໍ້ມູນຕໍ່ໄປນີ້ອະທິບາຍເຖິງຄວາມສ່ຽງເຊິ່ງອາດສົ່ງຜົນກະທົບກັບບໍລິສັດ ແລະ ມູນຄ່າການລົງທຶນຂອງບໍລິສັດ. ນອກຈາກນັ້ນ, ອາດມີຄວາມສ່ຽງອື່ນໆ ອີກທີ່ພວກເຮົາບໍ່ສາມາດຮູ້ໄດ້ ແລະ ຄວາມສ່ຽງເຫຼົ່ານັ້ນພວກເຮົາເຊື່ອວ່າບໍ່ແມ່ນຄວາມສ່ຽງທີ່ສາມາດຫຼີກລ້ຽງໄດ້.

ໂດຍທົ່ວໄປ, ການລົງທຶນໃນຕະຫຼາດໃໝ່ເຊັ່ນໃນ ສປປ ລາວ ທີ່ເປັນຕະຫຼາດຫຼັກຊັບທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ ເຊິ່ງຄວາມສ່ຽງເຫຼົ່ານັ້ນບໍ່ມີໃນຕະຫຼາດທີ່ເຄື່ອນໄຫວມາດົນແລ້ວ. ດັ່ງນັ້ນ, ນອກຈາກບັນຫາທີ່ຕິດພັນກັບບໍລິສັດ (ປະສິດທິພາບຂອງການບໍລິຫານຊັບສິນ ແລະ ການບໍລິຫານອົງກອນ, ຄວາມສາມາດໃນການສ້າງກະແສເງິນສົດ, ຄວາມໝັ້ນຄົງທາງການເງິນແລະ ກົດລະບຽບທີ່ຄອບຄຸມຕະຫຼາດພະລັງງານໄຟຟ້າ) ຜູ້ລົງທຶນຄວນເອົາໃຈໃສ່ໃນບັນຫາທີ່ກ່ຽວຂ້ອງກັບຕະຫຼາດຫຼັກຊັບທີ່ຫາກໍ່ເປີດໃໝ່ລວມເຖິງລະບຽບກົດໝາຍ, ສ່ວຍສາອາກອນ, ສະພາບຄ່ອງ ແລະ ຕົ້ນທຶນທາງທຸລະກິດຂອງບໍລິສັດ.

ຕໍ່ໄປນີ້ແມ່ນການສັງລວມຄວາມສ່ຽງຕົ້ນຕໍ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງທີ່ກ່ຽວຂ້ອງ:

3.1 ປັນດາຄວາມສ່ຽງ

3.1.1 ການຈົດທະບຽນເພີ່ມທຶນຊັກຊ້າ

ຜູ້ຈອງຊື້ຮຸ້ນເພີ່ມທຶນໃນຄັ້ງນີ້ອາດຈະບໍ່ໃຊ້ສິດໃນຖານະເປັນຜູ້ຖືຮຸ້ນເດີມ ແລະ ບໍ່ສາມາດຂາຍຮຸ້ນຢູ່ຕະຫຼາດຂັ້ນສອງໄດ້ຈົນກວ່າບໍລິສັດຈະຮູ້ຜົນການຈົດທະບຽນເພີ່ມທຶນຈາກ ກຊອ, ພາຍຫຼັງທີ່ໄດ້ຮັບໃບທະບຽນວິສາຫະກິດສະບັບດັດແກ້ຈາກກະຊວງອຸດສາຫະກຳ ແລະ ການຄ້າ. ໃນໄລຍະນີ້, ຜູ້ຈອງຊື້ຮຸ້ນອາດມີຖານະເປັນເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນຂອງບໍລິສັດແທນທີ່ຈະມີຖານະເປັນຜູ້ຖືຮຸ້ນ.

3.1.2 ການທີ່ບໍ່ສາມາດຈົດທະບຽນຮຸ້ນສາມັນເພີ່ມທຶນ

ພາຍຫຼັງສຳເລັດການສະເໜີຂາຍຮຸ້ນທັງໝົດ ແລະ ຈົດທະບຽນການເພີ່ມທຶນກັບກະຊວງອຸດສາຫະກຳ ແລະ ການຄ້າ, ການຂໍອະນຸຍາດຈົດທະບຽນດັ່ງກ່າວຄາດວ່າຈະໄດ້ຮັບການຮັບຮອງຈາກ ຕລຊລ ເພື່ອເຮັດໃຫ້ບໍລິສັດສາມາດຈົດທະບຽນເພື່ອຊື້-ຂາຍຢູ່ຕະຫຼາດຂັ້ນສອງໄດ້.

ຖ້າຫາກບໍລິສັດບໍ່ສາມາດຈົດທະບຽນຮຸ້ນເພີ່ມທຶນຂອງຕົນ, ຜູ້ລົງທຶນຈະບໍ່ສາມາດຊື້-ຂາຍຮຸ້ນໃນຕະຫຼາດຂັ້ນສອງໄດ້. ກໍລະນີດັ່ງກ່າວນີ້, ຜູ້ຄ້ຳປະກັນການຂາຍຮຸ້ນຕ້ອງໄດ້ຊອກຫາຄູ່ໃນການຊື້-ຂາຍເພື່ອໃຫ້ການຈົດທະບຽນຮຸ້ນປະສົບຜົນສຳເລັດ.

3.1.3 ຄວາມສ່ຽງທີ່ຕິດພັນກັບ ຕລຊລ

ຕລຊລ ເປັນຕະຫຼາດຫຼັກຊັບທີ່ສ້າງຕັ້ງຂຶ້ນໃໝ່ ແລະ ພົວພັນເຖິງລະບົບ ແລະນັນດາລະບຽບການເພື່ອຕອບສະໜອງກັບການຂະຫຍາຍຕົວທາງດ້ານເສດຖະກິດຂອງ ສປປ ລາວໃນອະນາຄົດ. ຢ່າງໃດກໍ່ຕາມ, ຖ້າປຽບທຽບກັບ

ຕະຫຼາດຫຼັກຊັບອື່ນທີ່ມີການພັດທະນາແລ້ວໃນບາງປະເທດ ເຊັ່ນວ່າ: ຮ່ອງກົງ ຫຼື ສິງກະໂປ, ຕະຫຼາດຫຼັກຊັບລາວແມ່ນມີສະພາບຄ່ອງຕ່ຳ ແລະ ບັນດາຂໍ້ມູນຂອງບໍລິສັດທີ່ມີຢູ່ໃນຕະຫຼາດຫຼັກຊັບລາວກໍ່ມີນ້ອຍກວ່າປົກກະຕິ ຖ້າຫາກທຽບໃສ່ບັນດາບໍລິສັດທີ່ໄດ້ຮັບການຈົດທະບຽນໃນຕະຫຼາດທີ່ພັດທະນາແລ້ວ. ສະນັ້ນ, ຜູ້ລົງທຶນອາດຈະພົບວ່າຄວາມຫຍຸ້ງຍາກໃນການຊອກຫາຂໍ້ມູນຂອງບໍລິສັດໃນ ຕລຊລ ຫຍຸ້ງຍາກວ່າການຊອກຫາຂໍ້ມູນຂອງບັນດາບໍລິສັດທີ່ໄດ້ຮັບການຈົດທະບຽນໃນຕະຫຼາດອື່ນທີ່ໄດ້ພັດທະນາແລ້ວ.

3.2 ຄວາມສ່ຽງດ້ານທຸລະກິດ

3.2.1 ປະຫວັດກ່ຽວກັບການດຳເນີນທຸລະກິດຂອງບໍລິສັດທີ່ມີຈຳກັດ

ຊັບສິນທີ່ໄດ້ມອບໂອນໃຫ້ບໍລິສັດໃນວັນສ້າງຕັ້ງສ່ວນຫຼາຍ ແມ່ນໄດ້ດຳເນີນການຜະລິດຢ່າງເຕັມສ່ວນມາຫຼາຍປີແລ້ວ ແລະ ຄາດໝາຍວ່າຊັບສິນເຫຼົ່ານີ້ຈະສືບຕໍ່ດຳເນີນງານເຊັ່ນດຽວກັບກ່ອນທີ່ຈະມີການມອບໂອນຈາກ ຟຟລ ມາໃຫ້ບໍລິສັດ. ຢ່າງໃດກໍ່ຕາມ, ບໍລິສັດກໍ່ບໍ່ສາມາດຮັບປະກັນໄດ້ວ່າຊັບສິນທີ່ໄດ້ມອບໂອນໃຫ້ບໍລິສັດໃນວັນສ້າງຕັ້ງຈະສືບຕໍ່ດຳເນີນງານຄືກັບທີ່ຜ່ານມາ ຫຼື ໃນລະດັບທີ່ ຟຟລ ເຄີຍເຮັດໄດ້ ແລະ ດ້ວຍເຫດນີ້ເອງ ບໍລິສັດບໍ່ສາມາດຮັບປະກັນໄດ້ວ່າບໍລິສັດຈະມີລາຍຮັບ ຫຼື ກຳໄລຈາກການດຳເນີນທຸລະກິດຕາມທີ່ຄາດຄະເນໄວ້. ຢ່າງໃດກໍ່ຕາມ, ໃນວັນສ້າງຕັ້ງ ບໍລິສັດໄດ້ຮັບໂອນພະນັກງານຈຳນວນໜຶ່ງຈາກ ຟຟລ ເຊິ່ງພະນັກງານທີ່ມີສີມື ແລະ ມີຄວາມຮູ້ດ້ານເຕັກນິກເຫຼົ່ານັ້ນຍັງສືບຕໍ່ເຮັດວຽກໃນການບໍລິຫານຊັບສິນຕໍ່ໄປ. ດັ່ງນັ້ນ, ບໍລິສັດຈຶ່ງເຊື່ອໝັ້ນວ່າການດຳເນີນທຸລະກິດໃນຊັບສິນທີ່ມອບໂອນດັ່ງກ່າວ ຈະບໍ່ໄດ້ຮັບຜົນກະທົບຈາກປະສົບການດຳເນີນທຸລະກິດທີ່ມີຈຳກັດ.

3.2.2. ຄວາມສ່ຽງກ່ຽວກັບ CAs

ຕາມກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 30 ທັນວາ 2011, ໄລຍະເວລາສຳປະທານສູງສຸດແມ່ນ 30 ປີນັບຈາກ COD; ໂດຍອີງຕາມກົດໝາຍສະບັບປະຈຸບັນ ຈະບໍ່ໃຫ້ສິດໃນການຕໍ່ອາຍຸສັນຍາຕື່ມອີກ. ແຫຼ່ງລາຍຮັບຕົ້ນຕໍຂອງບໍລິສັດ (ເຊິ່ງແມ່ນການຂາຍພະລັງງານໄຟຟ້າໃຫ້ ຟຟລ ຕາມ ສັນຍາ PPAs) ກໍ່ຂຶ້ນຢູ່ກັບຂໍ້ຈຳກັດດັ່ງກ່າວ.

ນອກຈາກນີ້, ສິດຕ່າງໆ ທີ່ໄດ້ຮັບຕາມ CA ແຕ່ລະສະບັບ ແລະ ສິດໃນການນຳໃຊ້ຊັບພະຍາກອນ ເຊັ່ນ: ການນຳໃຊ້ຊັບພະຍາກອນນ້ຳ ແລະ ທີ່ດິນທີ່ກ່ຽວພັນກັບຊັບສິນທີ່ໂອນໃຫ້ກັບບໍລິສັດໃນວັນສ້າງຕັ້ງ ອາດຈະຖືກຖອດຖອນໂດຍລັດຖະບານໄດ້ ຍ້ອນວ່າສັນຍາ PPA ທີ່ກ່ຽວຂ້ອງກັບໂຄງການ ສິ້ນສຸດລົງ ເນື່ອງຈາກບໍລິສັດມີໜີ້ສິນເກີນຄວາມສາມາດທີ່ຈະຊຳລະຄ່າທຳນຽມ ຫຼື ອາກອນຕ່າງໆ ຫຼື ບໍລິສັດລະເມີດບັນດາຂໍ້ກຳນົດຂອງ CA ຫຼື PPA. ເຖິງແມ່ນວ່າການສິ້ນສຸດລົງຂອງ CA ສະບັບໃດໜຶ່ງ ຈະບໍ່ເປັນຜົນໃຫ້ CA ສະບັບອື່ນໆ ສິ້ນສຸດລົງດ້ວຍ, ແຕ່ຖ້າ CA ສະບັບໃດໜຶ່ງສິ້ນສຸດລົງດ້ວຍເຫດໃດກໍ່ຕາມ, ບໍລິສັດຈະບໍ່ສາມາດ ຫຼື ຈະຖືກຈຳກັດສືບຕໍ່ການດຳເນີນງານໃນຊັບສິນເຫຼົ່ານັ້ນພາຍໃນເນື້ອທີ່ທີ່ໄດ້ຮັບສຳປະທານ ເຊິ່ງຈະເຮັດໃຫ້ ທຸລະກິດ, ຖານະທາງການເງິນ, ຜົນການດຳເນີນກິດຈະການ ແລະ ຊ່ອງທາງການດຳເນີນກິດຈະການຂອງບໍລິສັດ ອາດຈະໄດ້ຮັບຜົນກະທົບໃນທາງລົບຢ່າງຫຼວງຫຼາຍ.

3.2.3 ຄວາມສ່ຽງຈາກການທີ່ບໍລິສັດບໍ່ສາມາດບັນລຸຄວາມຄາດຫວັງຈາກການລົງທຶນ

ບໍລິສັດມີຄວາມຮັບຜິດຊອບໃນການຕິດຕາມ ແລະ ບໍລິຫານໂຄງການໃຫ້ເປັນໄປຢ່າງເໝາະສົມ ເພື່ອໃຫ້ບັນລຸ ຫຼື ໃຫ້ເກີນເປົ້າໝາຍທີ່ຄາດຫວັງໄວ້. ມາດຕະການທີ່ບໍລິສັດກຳນົດດັ່ງຕໍ່ໄປນີ້ມີຂຶ້ນເພື່ອໃຫ້ບໍລິສັດຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ຄື:

(1) ຈັດຕັ້ງການບໍລິຫານ ແລະ ມອບໝາຍການບໍລິຫານຈັດການ ແລະ ບຸກຄະລາກອນເພື່ອເປັນຕົວແທນໃຫ້ກັບຜູ້ອຳນວຍການ ໃນການບໍລິຫານໂຄງການເຂື່ອນໄຟຟ້າທີ່ບໍລິສັດ ເປັນເຈົ້າຂອງແຕ່ຜູ້ດຽວ ແລະ ໃນທຸລະກິດຮ່ວມຕາມສັນຍາ.

(2) ຈັດຕັ້ງຂະແໜງການບໍລິຫານຊັບສິນຂອງບໍລິສັດເພື່ອຕິດຕາມການດຳເນີນງານຂອງແຕ່ລະໂຄງການຢ່າງຕໍ່ເນື່ອງ ແລະ ເພື່ອວິເຄາະ ແລະ ຕິດຕາມຜົນຕອບແທນຕົວຈິງຈາກການລົງທຶນ ທຽບກັບຜົນຕອບແທນທີ່ຄາດໄວ້.

(3) ກະກຽມບົດລາຍງານຄວາມຄືບໜ້າໃນແຕ່ລະໄລຍະ ແລະ ບົດລາຍງານຜົນການດຳເນີນງານພິເສດ ໃຫ້ຄະນະຜູ້ບໍລິຫານຂັ້ນສູງ ແລະ ສະພາບໍລິຫານ ເພື່ອບໍລິສັດຈະມີມາດຕະການແກ້ໄຂຢ່າງທັນການ ແລະ ແທດເໝາະ.

3.2.4 ຄວາມສ່ຽງກ່ຽວກັບລູກຄ້າຫຼັກ

ປະຈຸບັນ, ແຫຼ່ງລາຍຮັບພຽງແຫຼ່ງດຽວຂອງບໍລິສັດແມ່ນການຜະລິດ ແລະ ຈຳໜ່າຍໄຟຟ້າໃຫ້ແກ່ ຟຟລ ຕາມ PPA ເຊິ່ງກຳນົດໃຫ້ ຟຟລ ຊື້ໄຟຟ້າທີ່ຜະລິດໄດ້ຈາກຊັບສິນທີ່ມອບໂອນໃຫ້ບໍລິສັດໃນອັນສ້າງຕັ້ງ. ບໍລິສັດເຊື່ອວ່າຄວາມສ່ຽງກ່ຽວກັບລາຍຮັບຂອງບໍລິສັດມີຕ່ຳ ຍ້ອນວ່າ ຟຟລ ຕ້ອງຮັບຜິດຊອບໃນການຮັບປະກັນການສະໜອງພະລັງງານໄຟຟ້າໃນ ສປປ ລາວ. ຢ່າງໃດກໍ່ຕາມ, ບໍລິສັດອີງໃສ່ລູກຄ້າຫຼັກລາຍດຽວ ອາດຈະສົ່ງຜົນໃຫ້ລາຍຮັບຂອງບໍລິສັດຫຼຸດລົງ ໃນກໍລະນີທີ່ບັນຫາຕ່າງໆເກີດຂຶ້ນ ກັບ ຟຟລ. ໂດຍລາຍຮັບຂອງບໍລິສັດຈະອີງໃສ່ການສືບຕໍ່ການປະຕິບັດຕາມ PPA, ຄວາມສາມາດຂອງບໍລິສັດໃນການປະຕິບັດຕາມພັນທະພາຍໃຕ້ PPA ລວມທັງຄວາມສາມາດ ແລະ ຄວາມສະໝັກໃຈໃນການຊຳລະຄ່າໄຟຟ້າຂອງ ຟຟລ ເຊິ່ງຄວາມສ່ຽງບາງຢ່າງທີ່ກ່ຽວພັນກັບ PPA ໄດ້ອະທິບາຍໄວ້ລຸ່ມນີ້.

ການປ່ຽນແປງຂອງລະບຽບກົດໝາຍ: PPA ກຳນົດຄ່າຊົດເຊີຍໃຫ້ແກ່ບໍລິສັດໃນກໍລະນີທີ່ມີການປ່ຽນແປງຂອງລະບຽບກົດໝາຍເຊິ່ງສົ່ງຜົນກະທົບໃນທາງລົບຕໍ່ລາຍຮັບ ຫຼື ຕົ້ນທຶນຂອງບໍລິສັດ.

ການຍົກເລີກ ເມື່ອມີເຫດການລະເມີດບາງຢ່າງຕາມທີ່ກຳນົດໄວ້ໃນ PPA ເກີດຂຶ້ນ, ຟຟລ ສາມາດຍົກເລີກ PPA ໄດ້.

ນອກຈາກນັ້ນ, ລັດຖະບານອາດຈະປັບໂຄງສ້າງ ຟຟລ ທັງໝົດ ຫຼື ບາງສ່ວນໃນອະນາຄົດ, ໂດຍລັດຖະບານຈະຍັງຄົງຮັກສາຜົນປະໂຫຍດໃນ ຟຟລ ໄວ້. ຢ່າງໃດກໍ່ຕາມ, ບໍລິສັດບໍ່ສາມາດຮັບປະກັນໄດ້ວ່າການປັບໂຄງສ້າງຂອງ ຟຟລ ໂດຍລັດຖະບານ ຈະເປັນປະໂຫຍດກັບບໍລິສັດ ຫຼື ພັນທະການຊຳລະເງິນຂອງ ຟຟລ ພາຍໃຕ້ PPA ຈະສືບຕໍ່ເປັນພັນທະ

ຂອງລັດວິສາຫະກິດ ຫຼື ບໍ່. ບໍລິສັດເຊື່ອວ່າລັດຖະບານຈະສືບຕໍ່ຄວບຄຸມ ແລະ ສະໜັບສະໜຸນ ຟຟລ ໃນອະນາຄົດຍ້ອນວ່າ ຟຟລ ຈະຍັງສືບຕໍ່ມີຄວາມສຳຄັນໃນການສົ່ງ ແລະ ຈຳໜ່າຍໄຟຟ້າຢູ່ ສປປ ລາວ. ຢ່າງໃດກໍ່ຕາມ, ບໍລິສັດກໍ່ບໍ່ສາມາດຮັບປະກັນຜົນດັ່ງກ່າວໄດ້ເຊັ່ນກັນ.

3.2.5. ການຂຶ້ນກັບການສະໜັບສະໜຸນ ແລະ ການຮັບຊື້ພະລັງງານໄຟຟ້າຂອງ ຟຟລ

ໃນໜັງສືຊວນຊື້ສະບັບນີ້, ຟຟລ ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ໂດຍຖືຮຸ້ນປະມານ 75 ສ່ວນຮ້ອຍຂອງຮຸ້ນທັງໝົດທີ່ອອກແລ້ວ. ພາຍຫຼັງສຳເລັດການສະເໜີຂາຍຮຸ້ນທັງໝົດ, ຟຟລ ຈະຮັກສາອັດຕາສ່ວນການຖືຮຸ້ນໄວ້ ແລະ ຈະສືບຕໍ່ການຄອບຄຸມບໍລິສັດ. ເຖິງວ່າບໍລິສັດຈະມີສະພາບໍລິຫານຂອງຕົນເອງ, ແຕ່ ຟຟລ ສາມາດຄວບຄຸມບໍລິສັດ ຫຼື ໂດຍຮ່ວມກັບຜູ້ຖືຮຸ້ນອື່ນໆ ຈຳນວນບໍ່ຫຼາຍ ແຕ່ກໍ່ຍັງຄົງມີຄວາມສາມາດໃນການຄວບຄຸມບໍລິສັດ ແລະ ສະພາບໍລິຫານໄດ້ໂດຍຕົນເອງ ແລະ ສາມາດກຳນົດໃຫ້ບໍລິສັດສາມາດດຳເນີນການຕ່າງໆ ທີ່ຕ້ອງໄດ້ຮັບຄວາມເຫັນດີຈາກຜູ້ຖືຮຸ້ນຂອງບໍລິສັດໄດ້.

ຟຟລ ເປັນລັດວິສາຫະກິດພາຍໃຕ້ການຄຸ້ມຄອງດູແລ ແລະ ຄວບຄຸມ ຂອງ ກຊງ ໂດຍກົງ ເຊິ່ງ ຟຟລ ເປັນເຈົ້າຂອງ ແລະ ດຳເນີນການສົ່ງ ແລະ ຈຳໜ່າຍໄຟຟ້າຕົ້ນຕໍຂອງປະເທດ ລວມທັງບໍລິຫານການນຳເຂົ້າໄຟຟ້າຈາກຕ່າງປະເທດເຂົ້າສູ່ລະບົບໄຟຟ້າ ແລະ ສົ່ງອອກໄຟຟ້າໄປຕ່າງປະເທດຈາກສະຖານີຕ່າງໆ ຂອງຕົນ. ຟຟລ ຍັງມີພາລະບົດບາດພັດທະນາໂຄງການ ແລະ ໄດ້ຮັບການຈັດຕັ້ງປະຕິບັດເປັນຕົວແທນອົງການຈັດຕັ້ງໂຄງການເຂື່ອນໄຟຟ້າຂອງລັດຖະບານ. ໃນກໍລະນີໂຄງການ IPPs, ຟຟລ ກໍ່ເປັນຜູ້ຖືຮຸ້ນດ້ວຍ. ປະຈຸບັນ ຟຟລ ຍັງເປັນລູກຄ້າພຽງລາຍດຽວຂອງບໍລິສັດທີ່ຮັບຊື້ພະລັງງານໄຟຟ້າທີ່ຜະລິດໄດ້ຈາກຊັບສິນທີ່ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ. ໂດຍ ຟຟລ ມີໜ້າທີ່ຮັບຊື້ພະລັງງານໄຟຟ້າຈາກບໍລິສັດພາຍໃຕ້ PPA, ເຊິ່ງເປັນສັນຍາໄລຍະຍາວມີກຳນົດ 30 ປີ ແລະ ມີສິດຕໍ່ອາຍຸສັນຍາອີກ 10 ປີ ຕາມໄລຍະເວລາທີ່ກຳນົດໃນ CA. PPA ນີ້ມີຄວາມສຳຄັນຕໍ່ຜົນປະໂຫຍດ ແລະ ທຸລະກິດຂອງ ບໍລິສັດ.

ຟຟລ ເປັນພາກສ່ວນພື້ນເດັ່ນໃນຕະຫຼາດພະລັງງານໄຟຟ້າຂອງລາວ ໂດຍເປັນຜູ້ຊື້ພະລັງງານໄຟຟ້າແຕ່ຜູ້ດຽວ ແລະ ເປັນຜູ້ຄວບຄຸມການສົ່ງໄຟຟ້າແຕ່ຜູ້ດຽວຂອງ ສປປ ລາວ. ບໍລິສັດຈຶ່ງເຊື່ອໝັ້ນວ່າບໍລິສັດ ຈະໄດ້ຮັບຜົນປະໂຫຍດຈາກການທີ່ ຟຟລ ໃຫ້ການສະໜັບສະໜຸນທຸລະກິດ ແລະ ຕິດຕາມການດຳເນີນການຂອງບໍລິສັດ. ຢ່າງໃດກໍ່ຕາມ, ຖ້າຫາກວ່າ ຟຟລ ຕ້ອງພົບພໍ້ກັບບັນຫາທາງດ້ານການເງິນ, ການດຳເນີນກິດຈະການ ຫຼື ບັນຫາອື່ນໆ ທີ່ບໍ່ສາມາດຄາດເດົາໄດ້, ບໍລິສັດກໍ່ອາດຈະໄດ້ຮັບຜົນກະທົບທາງລົບຢ່າງຫຼວງຫຼາຍ.

ນອກຈາກຂໍ້ຜູກພັນໃນສັນຍາອື່ນໆ ຟຟລ ບໍ່ມີພັນທະຕ້ອງຮັກສາຮຸ້ນຂອງຕົນໃນບໍລິສັດ ແລະ ບໍລິສັດບໍ່ສາມາດຮັບປະກັນວ່າ ຟຟລ ຈະສືບຕໍ່ຮັກສາຮຸ້ນເປັນໄລຍະເວລາເທົ່າໃດ. ນະໂຍບາຍຂອງລັດຖະບານອາດກຳນົດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນບໍລິສັດໃຫ້ຫຼຸດລົງ ໂດຍການສັ່ງໃຫ້ ຟຟລ ຂາຍຮຸ້ນຕາມຄວາມຕ້ອງການ. ການຂາຍຮຸ້ນໃນບໍລິສັດຂອງ ຟຟລ ຫຼື ສາຍພົວພັນຂອງບໍລິສັດກັບ ຟຟລ ຫຼຸດ ລົງຍ້ອນສາຍເຫດໃດກໍຕາມ ອາດສ້າງຜົນກະທົບໃນທາງລົບຢ່າງຫຼວງຫຼາຍຕໍ່ທຸລະກິດ, ຜົນການດຳເນີນກິດຈະການ, ຖານະການເງິນ ແລະ ຊ່ອງທາງການດຳເນີນກິດຈະການຂອງບໍລິສັດ. ເຖິງຢ່າງໃດກໍ່ຕາມ, ບໍລິສັດເຊື່ອໝັ້ນວ່າ ຟຟລ ຈະຍັງຮັກສາສັດສ່ວນໃນການຖືຮຸ້ນຂອງຕົນປະມານ 75 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ ເພື່ອຮັກສາສະຖານະຂອງຕົນໃນນາມຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ.

3.2.6. ນະໂຍບາຍຂອງລັດຖະບານຈະໄດ້ຮັບການເຫັນດີຈາກຜູ້ຖືຮຸ້ນ

ພາຍຫຼັງຈາກການສະເໜີຂາຍຮຸ້ນ, ຟຟລ ຈະຖືຮຸ້ນປະມານ 75 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ ທີ່ບໍລິສັດໄດ້ອອກ ແລະ ຄວບຄຸມບໍລິສັດໂດຍກົງ. ເຖິງຢ່າງໃດກໍຕາມ, ລັດຖະບານເປັນຜູ້ຄວບຄຸມ ຟຟລ ແລະ ອາດຈະແຕ່ງຕັ້ງ ສະພາບໍລິຫານຂອງບໍລິສັດຈຶ່ງມາວ່າຈະມີການປ່ຽນແປງນະໂຍບາຍໃໝ່. ບໍລິສັດເຊື່ອວ່າຈະໄດ້ຮັບການປະຕິບັດໃນຖານະເປັນ ບໍລິສັດມະຫາຊົນ ແລະ ຈະສາມາດຕັດສິນໃຈທາງທຸລະກິດໃນເລື່ອງການຊື້ຊັບສິນ, ລາຄາໄຟຟ້າ, ພະນັກງານ ແລະ ເລື່ອງອື່ນໆ ດ້ວຍຕົນເອງໄດ້. ຢ່າງໃດກໍ່ຕາມ, ລັດຖະບານອາດຈະອອກນະໂຍບາຍອື່ນທີ່ບັງຄັບໃຊ້ກັບບໍລິສັດໃນອະນາຄົດ ເຊິ່ງອາດຈະຂັດ ແຍ່ງກັບຜົນປະໂຫຍດຂອງຜູ້ຖືຮຸ້ນຂອງບໍລິສັດ.

3.2. 7. ຄວາມສ່ຽງການດຳເນີນງານຂອງເຂື່ອນໄຟຟ້າ

(i) ຄວາມເສຍຫາຍຕໍ່ເຂື່ອນໄຟຟ້າ, ເຄື່ອງຈັກ ແລະ ຄອງລະບາຍນ້ຳ

ການດຳເນີນການຜະລິດໄຟຟ້າແມ່ນອີງໃສ່ເຂື່ອນ ແລະ ເຄື່ອງຈັກເປັນຕົ້ນຕໍເຊັ່ນ: ໃບພັດ ແລະ ເຄື່ອງ ຈັກປັ່ນໄຟ. ຄວາມເສຍຫາຍອາດຈະເກີດຈາກຄວາມຫຍຸ້ງຍາກໃນການດຳເນີນງານຂອງເຂື່ອນໄຟຟ້າ ຫຼື ເຄື່ອງຈັກ ຫຼື ຄອງລະບາຍ ນ້ຳຂອງບໍລິສັດ ເຊິ່ງອາດຈະກໍ່ໃຫ້ເກີດຜົນເສຍຫາຍ ແລະ ຜົນກະທົບທາງທຸລະກິດ, ເງື່ອນໄຂທາງດ້ານການເງິນ, ຜົນຂອງການ ດຳເນີນງານ ແລະ ຊ່ອງທາງການດຳເນີນທຸລະກິດຂອງບໍລິສັດ.

(ii) ປະສິດທິຜົນຂອງເຂື່ອນໄຟຟ້າ

ບໍລິສັດເຊື່ອວ່າ ຫາກໄດ້ດຳເນີນການບຳລຸງຮັກສາສ້ອມແປງຕາມສະຖິຕິແລ້ວ, ຄວາມສ່ຽງໃນການບໍ່ ສາມາດສືບຕໍ່ການຜະລິດ ແລະ ສົ່ງພະລັງງານໄຟຟ້າໃຫ້ໄດ້ຈຳນວນເທົ່າກັບກຳລັງຕິດຕັ້ງທີ່ໄດ້ອອກແບບໄວ້ສຳລັບແຕ່ລະຊັບສິນທີ່ ໂອນໃຫ້ບໍລິສັດໃນອັນສ້າງຕັ້ງນັ້ນຈະຢູ່ໃນລະດັບຕ່ຳ. ບໍລິສັດກໍ່ສຸມໃສ່ເພື່ອຮັບປະກັນໃຫ້ທຸກເປົ້າໝາຍການຜະລິດທີ່ກ່ຽວຂ້ອງ ສາມາດບັນລຸຜົນທີ່ຄາດໝາຍໄວ້ໄດ້.

(iii) ການຂາດນ້ຳໃນການຜະລິດໄຟຟ້າ

ເນື່ອງຈາກວ່າການດຳເນີນທຸລະກິດຂອງບໍລິສັດສ່ວນໃຫຍ່ແລ້ວແມ່ນລະດູຝົນ. ຖ້າຫາກວ່າ ຝົນຕົກ ຕາມປົກກະຕິໃນແຕ່ລະປີ ປະລິມານຂອງນ້ຳແມ່ນຈະມີຄວາມພຽງພໍໃນການຜະລິດໄຟຟ້າ. ແຕ່ໃນກົງກັນຂ້າມຖ້າຫາກວ່ານ້ຳຫາກ ບົກແຫ້ງ ແລະ ມີການຂາດນ້ຳໃນປີໃດໜຶ່ງ ອາດເປັນສາຍເຫດເຮັດໃຫ້ການຜະລິດໄຟຟ້າມີການຫຼຸດລົງ ຫຼື ສິ່ງຜົນໃຫ້ເຂື່ອນໄຟຟ້າບໍ່ ສາມາດຜະລິດໄດ້ ແລະ ເຮັດໃຫ້ລາຍຮັບຫຼຸດລົງ. ອີງຕາມປະຫວັດທີ່ຜ່ານມາແລ້ວ, ຟຟລ ແລະ ບໍລິສັດບໍ່ໄດ້ພົບກັບບັນຫາຮຸນ ແຮງຕໍ່ການຂາດນ້ຳ. ດັ່ງນັ້ນ, ບໍລິສັດຖືວ່າຄວາມສ່ຽງແມ່ນມີຕ່ຳ. ຢ່າງໃດກໍ່ຕາມ, ຄວາມສ່ຽງດັ່ງກ່າວຢູ່ນອກເໜືອການຄວບຄຸມ ຂອງບໍລິສັດ ແລະ ຄວາມບໍ່ແນ່ນອນອາດຈະເກີດຂຶ້ນໄດ້. ໃນກໍລະນີພິເສດຫາກເກີດຄວາມແຫ້ງແລ້ງ ຫຼື ສະພາບອາກາດມີການ ປ່ຽນແປງທີ່ສິ່ງຜົນໃຫ້ມີການຂາດແຄນນ້ຳ ບໍລິສັດຈະຕ້ອງໄດ້ນຳໃຊ້ການເງິນຂອງບໍລິສັດ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ.

(iv) ປະກັນໄພທີ່ຄຸ້ມຄອງອາດບໍ່ພຽງພໍ, ຄວາມປອດໄພ, ສຸຂະພາບ ແລະ ສິ່ງແວດລ້ອມ (ຄວາມສ່ຽງ "ລຮລ").

ບໍລິສັດອາດເກີດຄວາມເສຍຫາຍທີ່ບໍ່ມີຄວາມແນ່ນອນຢ່າງຫຼວງຫຼາຍ, ທັງຄວາມເສຍຫາຍທາງດ້ານທຸລະກິດ, ເງື່ອນໄຂທາງດ້ານການເງິນ ແລະ ຜົນຈາກດຳເນີນການທີ່ອາດໄດ້ຮັບຜົນກະທົບຮ້າຍແຮງ.

ຊັບສິນທີ່ໂອນໃຫ້ບໍລິສັດໃນອັນສ້າງຕັ້ງ ມີປະຫວັດການດຳເນີນງານທີ່ດີໃນດ້ານ ລຮລ. ບໍລິສັດໄດ້ເອົາໃຈໃສ່ຢ່າງດີເພື່ອຮັບປະກັນວ່າບັນດາພະນັກງານຂອງບໍລິສັດ ແລະ ຊຸມຊົນອ້ອມຂ້າງຈະມີສິ່ງແວດລ້ອມທີ່ປອດໄພ ແລະ ມີຄຸນນະພາບຊີວິດທີ່ດີຂຶ້ນ. ຢ່າງໃດກໍ່ຕາມ, ບໍລິສັດຕ້ອງບໍລິຫານຈັດການນ້ຳຈຳນວນຫຼາຍ, ຈັດການງານທາງດ້ານວິສະວະກຳໂຍທາ ແລະ ອຸປະກອນທີ່ໃຊ້ໃນອຸດສາຫະກຳຂະໜາດໃຫຍ່, ດັ່ງນັ້ນ ອາດເກີດອຸບັດຕິເຫດທີ່ເກີດຈາກຄວາມຜິດພາດຂອງມະນຸດ ຫຼື ເຫດການຕາມທຳມະຊາດ ທີ່ອາດສົ່ງຜົນກະທົບກັບຊີວິດ, ຊັບສິນ ແລະ ທຸລະກິດຂອງບໍລິສັດ. ລະດູຝົນຂອງ ສປປ ລາວ ຢູ່ລະຫວ່າງເດືອນມິຖຸນາ ຫາ ເດືອນພະຈິກຂອງແຕ່ລະປີ ເຊິ່ງໃນໄລຍະເວລາດັ່ງກ່າວອາດກໍ່ໃຫ້ເກີດສະພາບທີ່ພາໃຫ້ເກີດອຸບັດຕິເຫດໄດ້ງ່າຍຂຶ້ນ.

ພາຍໃຕ້ CA, ລັດຖະບານລາວໄດ້ກຳນົດໃຫ້ບໍລິສັດມີນະໂຍບາຍປະກັນໄພ ແລະ ຄຸ້ມຄອງຕະຫຼອດໄລຍະເວລາຂອງການສຳປະທານ. ການປະກັນໄພຂອງບໍລິສັດຢ່າງໜ້ອຍຕ້ອງຄອບຄຸມສິ່ງຕ່າງໆ ດັ່ງນີ້:

(1) ການປະກັນ "ຄ່າຊົດເຊີຍພະນັກງານ" ທີ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ;

(2) ການປະກັນ "ຄວາມຮັບຜິດຊອບຕໍ່ຝ່າຍທີສາມ"; ແລະ

(3) ໂດຍຂຶ້ນກັບຄວາມພໍໃຈຂອງບໍລິສັດໃນຂໍ້ຕົກລົງທາງການຄ້າ ບໍລິສັດອາດຈັດໃຫ້ມີການປະກັນໄພດັ່ງນີ້:

(3.1) "ການປະກັນ "ຄວາມສ່ຽງຕໍ່ຊັບສິນຮອບດ້ານ" ຕໍ່ຄວາມເສຍຫາຍ ຕໍ່ຊັບສິນທີ່ກ່ຽວຂ້ອງກັບໂຄງການເຂື່ອນໄຟຟ້າ (ບົນພື້ນຖານ "ມູນຄ່າປ່ຽນແທນ"); ແລະ

(3.2) ການປະກັນການຢຸດສະງັກຂອງເຄື່ອງຈັກ; ແລະ

(3.3) ການປະກັນ "ການຢຸດສະງັກຂອງທຸລະກິດ" ຖ້າຫາກມີຄວາມຈຳເປັນ ແລະ ເປັນປະໂຫຍດຕໍ່ບໍລິສັດ.

ບໍລິສັດເຊື່ອໝັ້ນວ່າຈະສາມາດຮັກສາການປະກັນໄພທີ່ພຽງພໍ ເພື່ອປ້ອງກັນບໍລິສັດຈາກເຫດການທີ່ອາດຈະເກີດຂຶ້ນ. ຢ່າງໃດກໍ່ຕາມ, ບໍລິສັດກໍ່ບໍ່ສາມາດຮັບປະກັນໄດ້ວ່າການປະກັນໄພຈະຄຸ້ມຄອງພຽງພໍໃນກໍລະນີທີ່ເກີດຜົນກະທົບຕໍ່ຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງບໍລິສັດໃນປະຈຸບັນໜ່ວຍໃດໜຶ່ງ ຫຼື ຫຼາຍໜ່ວຍ.

3.2.8. ມາດຕະຖານການບໍລິຫານຄຸ້ມຄອງບໍລິສັດ

ມາດຕະຖານການບໍລິຫານຄຸ້ມຄອງບໍລິສັດໃນ ສປປ ລາວ ອາດແຕກຕ່າງຈາກມາດຕະຖານໃນປະເທດອື່ນໆ ຫຼາຍສົມຄວນ ລວມເຖິງມາດຕະຖານກ່ຽວກັບຄວາມເປັນເອກະລາດຂອງສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ມາດຕະຖານການລາຍງານທັງພາຍໃນ ແລະ ພາຍນອກ.

3.2.9. ຄວາມສາມາດຈັດຫາບຸກຄະລາກອນທີ່ມີຄວາມສາມາດ

ຄວາມສາມາດໃນການພັດທະນາ ແລະ ດຳເນີນງານໃນຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນອັນສ້າງຕັ້ງ ລວມເຖິງການຄຸ້ມຄອງລາຍຈ່າຍແຮງງານກ່ຽວກັບການດຳເນີນງານ ແລະ ການບຳລຸງຮັກສາກິດຈະການຂອງຕົນນັ້ນ ຂຶ້ນຢູ່ກັບ ຄວາມສາມາດໃນການດຶງດູດ ແລະ ຮັກສາວິສະວະກອນ, ສະຖາປະນິກ ລວມທັງຜູ້ຊ່ຽວຊານທີ່ມີຄຸນວຸດທິ ແລະ ປະສົບການ ພຽງພໍກ່ຽວກັບວຽກງານວິສະວະກຳ, ອອກແບບ, ກໍ່ສ້າງ, ດຳເນີນງານ ແລະ ບຳລຸງຮັກສາໂຄງການດັ່ງກ່າວ. ບໍລິສັດຄາດວ່າຈະ ສາມາດຈັດຫາບຸກຄະລາກອນທີ່ມີຄຸນວຸດທິ, ໂດຍສະເພາະຈາກ ຟຟລ ດ້ວຍການສະເໜີເງິນເດືອນ ແລະ ຜົນປະໂຫຍດທີ່ສາມາດ ແຂ່ງຂັນໃນຕະຫຼາດແຮງງານໄດ້. ແຕ່ບໍລິສັດບໍ່ສາມາດຮັບປະກັນວ່າບໍລິສັດຈະດຶງດູດ ຫຼື ຮັກສາບຸກຄະລາກອນດັ່ງກ່າວນີ້ໄວ້ໄດ້.

3.2.10. ການລົງທຶນໃສ່ໂຄງການເພີ່ມເຕີມ

(i) ການລົງທຶນໃສ່ໂຄງການເພີ່ມເຕີມ

ທຸລະກິດຫຼັກຂອງບໍລິສັດແມ່ນກ່ຽວພັນກັບການຊື້, ການເປັນເຈົ້າຂອງ ແລະ ການດຳເນີນ ງານໃນຊັບສິນທີ່ໃຊ້ໃນການຜະລິດພະລັງງານໄຟຟ້າທີ່ໄດ້ຮັບການພັດທະນາ ແລະ ກໍ່ສ້າງຂຶ້ນໂດຍ ຟຟລ. ຢ່າງໃດກໍ່ຕາມ, ບໍລິສັດ ອາດຈະລົງທຶນເພີ່ມເຕີມໃສ່ໂຄງການການຜະລິດ ແລະ ທຸລະກິດກ່ຽວຂ້ອງທີ່ສອດຄ່ອງກັບເປົ້າໝາຍການລົງທຶນຂອງຕົນ. ກະລຸນາ ເບິ່ງ "ຂໍ້ມູນບໍລິສັດ - ແຜນການລົງທຶນ". ບັນດາໂຄງການເພີ່ມເຕີມອາດຖືກຄາດໝາຍວ່າຈະມີການລົງທຶນໃສ່ເຂື່ອນໄຟຟ້າຂະໜາດ ໃຫຍ່ທີ່ໃຊ້ເຕັກນິກໃນການຜະລິດຊັບຊ້ອນ ດ້ວຍເຫດນັ້ນ, ການດຳເນີນການດັ່ງກ່າວອາດມີຄວາມສ່ຽງຫຼາຍຢ່າງຕໍ່ບໍລິສັດ. ກ່ອນ ບໍລິສັດຈະລົງທຶນໃນໂຄງການໃດໜຶ່ງ, ບໍລິສັດຕ້ອງສຶກສາຄວາມເປັນໄປໄດ້ຂອງໂຄງການ ບັນຫາທາງດ້ານການເງິນ ແລະ ບັນຫາ ອື່ນໆ. ໂຄງການດັ່ງກ່າວອາດຈະກຳນົດໃຫ້ໄດ້ຮັບການອະນຸຍາດຕ່າງໆ ເປັນການສະເພາະ ຖືວ່າເປັນສິ່ງທີ່ສຳຄັນສຳລັບການບັນລຸ ການລົງທຶນຂອງບໍລິສັດ. ການໄດ້ຮັບອະນຸຍາດຕ່າງໆ ອາດຈະໃຊ້ເວລາພໍສົມຄວນ. ພ້ອມດຽວກັນນັ້ນ, ການອະນຸມັດດັ່ງກ່າວອາດ ມີເງື່ອນໄຂທີ່ບໍລິສັດບໍ່ສາມາດຍອມຮັບໄດ້.

ການລົງທຶນໃນເຂື່ອນໄຟຟ້າທີ່ກໍ່ສ້າງຂຶ້ນໃໝ່ ອາດມີຄວາມສ່ຽງຫຼາຍດ້ານ ເຊັ່ນ: ອຸປະກອນ ເປ່ເພ ແລະ ໃຊ້ງານບໍ່ໄດ້ ຫຼື ຂະບວນການຜະລິດ ແລະ ຜົນການດຳເນີນງານຕ່ຳກວ່າລະດັບການຜະລິດທີ່ຄາດໝາຍໄວ້ ຫຼື ຕ່ຳກວ່າ ປະສິດທິຜົນທີ່ຄາດໝາຍ. ນອກຈາກນີ້, ເຂື່ອນໄຟຟ້າໃໝ່ອາດໃຊ້ອຸປະກອນທີ່ພັດທະນາຂຶ້ນໃໝ່ ແລະ ເຕັກນິກທາງດ້ານອຸປະກອນ ມີຄວາມທັນສະໄໝເຊິ່ງຈະເຮັດໃຫ້ການຜະລິດຕ້ອງນຳໃຊ້ແຮງງານມາກກວ່າແຜນການທີ່ໄດ້ວາງໄວ້. ການດຳເນີນການຂອງເຂື່ອນ ໄຟຟ້າໃໝ່ອາດໄດ້ຮັບຜົນກະທົບທາງລົບຢ່າງຫຼວງຫຼາຍຈາກປັດໄຈອື່ນເຊັ່ນ: ຄວາມຂັດແຍ່ງດ້ານແຮງງານ, ໄພພິບັດຕາມທຳມະ ຊາດ ແລະ ສິ່ງທີ່ຕ້ອງປະຕິບັດຕາມລະບຽບການຂອງລັດຖະບານ ແລະ ມາດຕະຖານຂອງອຸດສາຫະກຳໃນດ້ານຕ່າງໆ.

ສືບເນື່ອງຈາກຄວາມສ່ຽງຢ່າງຫຼວງຫຼາຍທີ່ກ່ຽວພັນກັບການພັດທະນາ, ການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການເຂື່ອນໄຟຟ້າຂະໜາດໃຫຍ່, ບໍລິສັດບໍ່ສາມາດຮັບປະກັນໄດ້ວ່າຈະສາມາດບິ່ງບອກ, ພັດທະນາ, ດຳເນີນງານ ແລະ ຈັດຫາເງິນທຶນໃນໂຄງການເພີ່ມເຕີມ ຫຼື ທຸລະກິດທີ່ກ່ຽວຂ້ອງໄດ້ຈົນສຳເລັດຜົນ.

(ii) ການນຳໃຊ້ທຶນທີ່ໄດ້ຈາກການລະດົມເພື່ອລົງທຶນໃນຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ ແລະ/ຫຼື ໂຄງການ IPPs ທີ່ ຟຟລ ຖືຮຸ້ນ ແລະ/ຫຼື ໂຄງການ IPPs ອື່ນໆ

ບໍລິສັດຄາດໝາຍວ່າ ຟຟລ ຈະມອບໂອນຊັບສິນທີ່ໃຊ້ໃນການຜະລິດ ແລະ ໂຄງການ IPP ຂອງ ຟຟລ ໃຫ້ກັບຕົນ.

ຢ່າງໃດກໍ່ຕາມ, ບໍລິສັດບໍ່ຮັບປະກັນວ່າການນຳໃຊ້ທຶນທີ່ໄດ້ຈາກການລະດົມ ຈະຖືກໃຊ້ໄປເພື່ອລົງທຶນໃນຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ, ໂຄງການ IPPs ທີ່ ຟຟລ ຖືຮຸ້ນ ແລະ/ຫຼື ໂຄງການ IPPs ອື່ນໆ ໃນອະນາຄົດ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບຊັບສິນດັ່ງກ່າວຈະມີຄວາມພຽງພໍທີ່ຈະເປີດເຜີຍຕໍ່ບໍລິສັດໃນໄລຍະການກວດສອບຊັບສິນ. ຂໍ້ມູນນີ້ອາດຈະບໍ່ມີຄວາມພຽງພໍ ແລະ ອາດຈະມີຜົນກະທົບຕໍ່ແຜນການລົງທຶນຂອງບໍລິສັດ. ນອກຈາກນັ້ນ, ການໂອນຊັບສິນທີ່ມີມູນຄ່າສູງ ຫຼື ເປັນຊັບສິນທີ່ສຳຄັນ ຂອງ ຟຟລ ເຊິ່ງກ່ອນອື່ນຈະຕ້ອງຖືກຮັບຮອງຈາກ ຄສພຊ ຫຼື ລັດຖະບານລາວ. ບໍລິສັດອາດຈະບໍ່ໃຫ້ການຮັບຮອງໄດ້ວ່າການໂອນຊັບສິນດັ່ງກ່າວແມ່ນຈະໄດ້ຮັບການອະນຸຍາດ ຫຼື ບໍ່. ນອກຈາກນັ້ນ, ກຊງ ໃນຖານະເປັນຜູ້ຄວບຄຸມ ແລະ ກຳນົດການໂອນຊັບສິນບັດແຫ່ງຊາດ, ລັດຖະບານລາວ ຫຼື ຄສພຊ ອາດຈະມີການປ່ຽນແປງບັນດານະໂຍບາຍຕ່າງໆ.

ໃນການຊື້ ໂຄງການ IPPs ຂອງ ຟຟລ ອາດມີການກ່ຽວຂ້ອງກັບການຕີກລົງ ຫຼື ເງື່ອນໄຂຕາມລະບຽບການຕ່າງໆ ທີ່ກຳນົດໃຫ້ແຕ່ລະໂຄງການ IPP ຕ້ອງໄດ້ຮັບການເຫັນດີຈາກຜູ້ຖືຮຸ້ນອື່ນທີ່ບໍ່ແມ່ນ ຟຟລ ຫຼື ເຈົ້າໜີ້ ກ່ອນການໂອນຊັບສິນຂອງ ຟຟລ ໃນໂຄງການ IPPs ໃຫ້ກັບບໍລິສັດ. ໃນການດຳເນີນການດັ່ງກ່າວ, ບໍລິສັດຈະຕ້ອງອີງໃສ່ການເຈລະຈາລະຫວ່າງ ຟຟລ ແລະ ບັນດາຜູ້ມີສ່ວນກ່ຽວຂ້ອງ ໂດຍບໍລິສັດບໍ່ສາມາດຮັບຮອງໄດ້ວ່າການເຈລະຈາຈະປະສົບຜົນສຳເລັດ. ສິ່ງເຫຼົ່ານີ້ອາດຈະມີຜົນກະທົບເຖິງການດຳເນີນທຸລະກິດ, ຜົນການດຳເນີນທຸລະກິດ ແລະ ໂອກາດທາງດ້ານທຸລະກິດ ເຊິ່ງເກີດຈາກການເຈລະຈາທີ່ບໍ່ປະສົບຜົນສຳເລັດ.

(iii) ການໂອນຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ກ່ຽວຂ້ອງກັບການນຳໃຊ້ທຶນທີ່ລະດົມໄດ້ ແລະ/ຫຼື ໂຄງການ IPP ທີ່ ຟຟລ ເປັນຜູ້ຖືຮຸ້ນ

ການໂອນຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ແລະ/ຫຼື ໂຄງການ IPP ທີ່ ຟຟລ ເປັນຜູ້ຖືຮຸ້ນ ອີງຕາມການນຳໃຊ້ທຶນທີ່ລະດົມໄດ້ຈາກການສະເໜີຂາຍຮຸ້ນໃນຄັ້ງນີ້ ອາດມີການຊັກຊ້າໃນສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໂດຍອີງຕາມຄວາມສ່ຽງໃດໜຶ່ງເຊິ່ງກ່ຽວຂ້ອງກັບການນຳໃຊ້ຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ ແລະ/ຫຼື COD ຕົວຈິງ ແລະ/ຫຼື ມີການປ່ຽນແປງຢ່າງຫຼວງຫຼາຍຕໍ່ຄວາມຄາດໝາຍຈາກການລົງທຶນ. ຖ້າການໂອນຊັບສິນດັ່ງກ່າວມາຊ້າງເທິງນັ້ນຊັກຊ້າ, ບໍລິສັດຈະດຳເນີນການເຈລະຈາກັບ ຟຟລ ເພື່ອໃຫ້ໄດ້ຮັບໂອນຊັບສິນທີ່ມີມູນຄ່າທຽບເທົ່າກັບຊັບສິນທີ່ກຳນົດໄວ້ໃນການສະເໜີຂາຍຮຸ້ນຄັ້ງນີ້.

(iv) ການລົງທຶນໂດຍກົງຂອງບໍລິສັດໃນໂຄງການພະລັງງານອື່ນ

ບໍລິສັດແມ່ນໄດ້ຮັບຮູ້ເຖິງຄວາມສ່ຽງຈາກການກໍ່ສ້າງໂຄງການຊັກຊ້າ ເຊິ່ງອາດເກີດຈາກຜູ້ຮັບເໝົາ ຫຼື ຊຸມຊົນທ້ອງຖິ່ນ ຫຼື ໄພທຳມະຊາດ. ວິທີການໃນການຫຼຸດຜ່ອນຜົນກະທົບຂອງຄວາມສ່ຽງເຫຼົ່ານັ້ນຈະຕ້ອງລວມເຖິງການຊອກຫາຜູ້ຮັບເໝົາໂຄງການ EPC ທີ່ມີຊື່ສຽງບົນເງື່ອນໄຂທີ່ບໍລິສັດເຫັນດີ, ການມີກົດຈະກຳຮ່ວມກັບຊຸມຊົນທ້ອງຖິ່ນ,

ການມີນະໂຍບາຍຮັບປະກັນຜົນກະທົບຈາກໄພທຳມະຊາດ ແລະ ການຈັດໃຫ້ມີທີມງານບໍລິຫານທີ່ຕິດຕາມກວດກາໂຄງການຢ່າງໃກ້ຊິດເພື່ອເຮັດໃຫ້ແນ່ໃຈວ່າໂຄງການຈະສຳເລັດຕາມກຳນົດເວລາ. ປະຈຸບັນໂຄງການນ້ຳພຸນ ແລະ ນ້ຳບີ ເຊິ່ງບໍລິສັດຈະນຳທຶນທີ່ລະດົມໄດ້ໄປລົງທຶນໂດຍກົງນັ້ນ ກຳລັງຢູ່ລະຫວ່າງການສຶກສາຄວາມເປັນໄປໄດ້.

3.2.11. ການແຂ່ງຂັນໃນການພັດທະນາໂຄງການໃນອະນາຄົດ

ບໍລິສັດອາດປະສົບກັບການແຂ່ງຂັນໃນການດຳເນີນການຕາມຍຸດທະສາດການລົງທຶນ ແລະ ການພັດທະນາໂຄງການພະລັງງານໄຟຟ້າໃໝ່ຢູ່ ສປປ ລາວ. ຄູ່ແຂ່ງຈຳນວນໜຶ່ງຂອງບໍລິສັດອາດມີແຫຼ່ງການເງິນ ແລະ ປະສົບການສູງກວ່າບໍລິສັດໃນການພັດທະນາ ຫຼື ປະກອບທຶນສ້າງເຂື່ອນຜະລິດໄຟຟ້າ. ນອກຈາກນັ້ນ, ນະໂຍບາຍຂອງລັດຖະບານອາດມີຄວາມສຳຄັນໃນການຕົກລົງທີ່ຈະມອບໂຄງການໃຫ້ແກ່ບໍລິສັດອື່ນ. ໂດຍສະເພາະ, ລັດຖະບານອາດຕັດສິນໃຈທີ່ຈະໂອນການດຳເນີນງານໃນເຂື່ອນໄຟຟ້າປະຈຸບັນ ຫຼື ໃນເຂື່ອນໃໝ່ ຫຼື ການລົງທຶນໃນໂຄງການ IPP ຕ່າງໆໃນອະນາຄົດໃຫ້ແກ່ນິຕິບຸກຄົນອື່ນນອກຈາກບໍລິສັດ. ດັ່ງນັ້ນ, ບໍລິສັດອາດຈະປະເຊີນກັບການແຂ່ງຂັນກັບບັນດາບໍລິສັດ IPP ໃໝ່ ລວມທັງ ຟຟລ ຍ້ອນ ຟຟລ ເປັນໜຶ່ງໃນຜູ້ຜະລິດໄຟຟ້າທີ່ຍັງບໍ່ໄດ້ໂອນເຂື່ອນໃຫ້ກັບບໍລິສັດ. ຖ້າຫາກບໍລິສັດບໍ່ຊະນະໃນການແຂ່ງຂັນ ແນ່ນອນວ່າບັນຫາເຫຼົ່ານີ້ຈະສ້າງຜົນກະທົບຢ່າງຫຼວງຫຼາຍຕໍ່ທຸລະກິດ, ຜົນການດຳເນີນງານ, ຖານະດ້ານການເງິນ ແລະ ຊ່ອງທາງການດຳເນີນກິດຈະການຂອງບໍລິສັດ.

3.2.12. ຄວາມແຕກຕ່າງດ້ານລະບຽບການ, ການເປີດເຜີຍຂໍ້ມູນ ແລະ ການບັນຊີ

ມາດຕະຖານການເປີດເຜີຍຂໍ້ມູນ ແລະ ການບັນຊີຢູ່ ສປປ ລາວ ບໍ່ເຂັ້ມງວດໃນບາງດ້ານທຽບກັບໃນຕະຫຼາດທີ່ມີການພັດທະນາແລ້ວເຊັ່ນ: ຮົງກົງ, ສິງກະໂປ ແລະ ປະເທດທີ່ເປັນສະມາຊິກຂອງ Organisation for Economic Cooperation and Development (OECD) ແລະ ອາດມີຂໍ້ມູນກ່ຽວກັບບໍລິສັດລາວເຜີຍແຜ່ໜ້ອຍກວ່າປະເທດອື່ນ.

ນອກຈາກນັ້ນ, ບັນດາຄວາມເຂັ້ມງວດຂອງລະບຽບກົດໝາຍ, ການກວດສອບຂອງ ສປປ ລາວ ໃນຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວຂອງຜູ້ລົງທຶນ, ນາຍໜ້າ ແລະ ຜູ້ກ່ຽວຂ້ອງອື່ນໆ ມີຄວາມແຕກຕ່າງກັບຕະຫຼາດໃນຮົງກົງ, ສິງກະໂປ ແລະ ປະເທດທີ່ເປັນສະມາຊິກ OECD. ສຄຄຊ ແລະ ຕລຊລ ມີຄວາມຮັບຜິດຊອບໃນການປັບປຸງມາດຕະຖານການເປີດເຜີຍຂໍ້ມູນ ແລະ ລະບຽບອື່ນໆ ທີ່ກ່ຽວຂ້ອງກັບມາດຕະຖານຂອງຕະຫຼາດທຶນໃນ ສປປ ລາວ. ສຄຄຊ ໄດ້ອອກບັນດາລະບຽບ ແລະ ບົດແນະນຳໃນການເປີດເຜີຍຂໍ້ມູນ ແລະ ລະບຽບທີ່ກ່ຽວຂ້ອງອື່ນໆ. ຢ່າງໃດກໍ່ຕາມ, ບໍລິສັດບໍ່ສາມາດຮັບປະກັນໄດ້ວ່າ: (i) ລະບຽບດັ່ງກ່າວຈະພຽງພໍໃນການຄຸ້ມຄອງຜູ້ລົງທຶນ, (ii) ຜູ້ກ່ຽວຂ້ອງອື່ນໆ ໃນຕະຫຼາດຈະປະຕິບັດຕາມລະບຽບນັ້ນ ຫຼື (iii) ໜ່ວຍງານຮັບຜິດຊອບຂອງ ສປປ ລາວ ຈະສາມາດຄຸ້ມຄອງ ແລະ ບັງຄັບໃຊ້ລະບຽບດັ່ງກ່າວໄດ້ຢ່າງເໝາະສົມ ຫຼື ບໍ່.

3.2.13. ຄວາມສ່ຽງດ້ານອັດຕາແລກປ່ຽນ

ບໍລິສັດມີຄວາມສ່ຽງກ່ຽວກັບອັດຕາແລກປ່ຽນໃນຫຼາຍແງ່. ລາຍຈ່າຍເພື່ອດຳເນີນງານທັງໝົດແມ່ນຈ່າຍດ້ວຍສະກຸນເງິນກີບ. ແຕ່ເຖິງຢ່າງໃດກໍ່ຕາມ, ລາຍຈ່າຍຂອງບໍລິສັດກໍ່ຍັງຈ່າຍເປັນເງິນໂດລາສະຫະລັດ ແລະ ສະກຸນເງິນອື່ນໆ. ບໍລິສັດບໍ່ສາມາດຫຼີກລ່ຽງການເໜັງຕີງຂອງຄ່າໃຊ້ຈ່າຍໃນສ່ວນນີ້ໄດ້ (ລວມທັງ ການເໜັງຕີງຂອງອັດຕາແລກປ່ຽນຕ່າງໆ) ໃຫ້ກັບ ຟຟລ ໃນອັດຕາລາຄາໄຟຟ້າຕາມ PPA. ນອກຈາກນັ້ນ, ໜີ້ໄລຍະຍາວສ່ວນຫຼາຍຂອງ ຟຟລ ເຊິ່ງບໍລິສັດມີໜ້າທີ່ຊຳລະແທນຕາມສັນຍາໃນການໃຊ້ແທນໜີ້ສິນເປັນສະກຸນເງິນຕ່າງປະເທດເຊິ່ງອາດທຳໃຫ້ເກີດຄວາມສ່ຽງກັບບໍລິສັດໃນກໍລະນີທີ່ມີວິກິດການທາງ

ການເງິນ ຫຼື ການປ່ຽນແປງທາງເສດຖະກິດ. ດ້ວຍເຫດນີ້, ການເໜັງຕີງໃນອັດຕາແລກປ່ຽນຢ່າງຮຸນແຮງອາດສ້າງຜົນກະທົບທາງລົບຢ່າງຫຼວງຫຼາຍຕໍ່ທຸລະກິດ, ຜົນການດຳເນີນງານ, ຖານະດ້ານການເງິນ ແລະ ຊ່ອງທາງການດຳເນີນກິດຈະການຂອງບໍລິສັດ. ຢ່າງໃດກໍ່ຕາມ, ເງິນປັນຜົນທີ່ບໍລິສັດຈະໄດ້ຮັບໃນໂຄງການ IPPs ຈະໄດ້ຮັບເປັນສະກຸນເງິນໂດລາສະຫະລັດ ແລະ ບາດໄທ ການຈັດການນີ້ ອາດເຮັດໃຫ້ປັດໄຈຄວາມສ່ຽງໃນອັດຕາແລກປ່ຽນຫຼຸດລົງ.

3.3 ຄວາມສ່ຽງດ້ານກົດໝາຍ

3.3.1 ການລົງຄະແນນສຽງທີ່ ຟຟລ ອາດມີຜົນປະໂຫຍດ

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ຜູ້ຖືຮຸ້ນອາດຈະຖືກຈຳກັດສິດໃນການລົງຄະແນນສຽງຫາກຜູ້ຖືຮຸ້ນນັ້ນມີສ່ວນໄດ້ເສຍ ຫຼື ມີຜົນປະໂຫຍດຕໍ່ບັນຫາທີ່ຈະຖືກລົງຄະແນນສຽງຮັບຮອງ. ເຊິ່ງກອງປະຊຸມຜູ້ຖືຮຸ້ນຈະຕົກລົງກັນເອງວ່າຜູ້ຖືຮຸ້ນນັ້ນຈະຖືກຈຳກັດສິດ ຫຼື ບໍ່. ຕົວຢ່າງ, ຫາກໃນກໍລະນີທີ່ບໍລິສັດຈະຊື້ຊັບສິນໃນອະນາຄົດຈາກ ຟຟລ, ຟຟລ ອາດຖືກຈຳກັດສິດໃນການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນໃນບັນຫາທີ່ກ່ຽວພັນກັບການຂາຍຊັບສິນໃຫ້ແກ່ບໍລິສັດ ຍ້ອນວ່າ ຟຟລ ຈະເປັນຜູ້ມີຜົນປະໂຫຍດໄດ້ເສຍຕໍ່ການຂາຍຊັບສິນດັ່ງກ່າວ ເວັ້ນເສຍແຕ່ ກອງປະຊຸມຜູ້ຖືຮຸ້ນຈະຕົກລົງກັນໃຫ້ ຟຟລ ລົງຄະແນນສຽງໃນເລື່ອງດັ່ງກ່າວໄດ້. ໃນກໍລະນີທີ່ຜູ້ຖືຮຸ້ນບໍ່ສາມາດຕົກລົງກັນທີ່ຈະອະນຸຍາດໃຫ້ ຟຟລ ລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນໃນບັນຫາທີ່ ຟຟລ ຈະມີຜົນປະໂຫຍດໄດ້ເສຍ, ຜູ້ຖືຮຸ້ນຈະບໍ່ສາມາດລົງມະຕິໃຫ້ມີການຊື້ຊັບສິນຈາກ ຟຟລ ໄດ້ ຍ້ອນວ່າມະຕິຕົກລົງຈະຕ້ອງມີສຽງຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນ ຢ່າງໜ້ອຍສອງສ່ວນສາມຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງນ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

3.3.2 ຂໍ້ຈຳກັດໃນການຖືຮຸ້ນໂດຍຄົນຕ່າງປະເທດ

ອີງຕາມກົດລະບຽບຂອງບໍລິສັດ, ຮຸ້ນຂອງບໍລິສັດສາມາດໂອນໄດ້ຢ່າງເສລີ ນອກຈາກການໂອນຮຸ້ນດັ່ງກ່າວໃຫ້ຄົນຕ່າງປະເທດ ຫຼື ນິຕິບຸກຄົນຕ່າງປະເທດທີ່ຖືຮຸ້ນໃນບໍລິສັດເກີນຈຳນວນຕາມທີ່ໄດ້ລະບຸໄວ້ໃນກົດລະບຽບຂອງ ສຄຄຊ ແລະ/ຫຼື ບັນດາກົດລະບຽບອື່ນທີ່ກ່ຽວຂ້ອງກັບການໂອນຮຸ້ນ. ໃນປະຈຸບັນ, ອີງຕາມຂໍ້ຕົກລົງຂອງ ຄລຕ ເລກທີ 021/ຄລຕ ວ່າດ້ວຍການເພີ່ມສັດສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ໃນບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ລົງວັນທີ 5 ມັງກອນ 2012 ກ່ຽວກັບການເພີ່ມສັດສ່ວນການຖືຮຸ້ນຂອງຕ່າງປະເທດໃນ ຜ-ຟຟລ ໄດ້ອະນຸຍາດໃຫ້ນຜູ້ລົງທຶນຕ່າງປະເທດມີກຳມະສິດໃນຮຸ້ນຂອງບໍລິສັດບໍ່ເກີນ 20 ສ່ວນຮ້ອຍຂອງຮຸ້ນທັງໝົດ ເຊິ່ງຜູ້ລົງທຶນໜຶ່ງລາຍສາມາດຊື້ຮຸ້ນໄດ້ບໍ່ເກີນ 1 ສ່ວນຮ້ອຍ ແລະ ຜູ້ລົງທຶນທີ່ເປັນສະຖາບັນ ຫຼື ນິຕິບຸກຄົນຖືຮຸ້ນໄດ້ບໍ່ເກີນ 5 ສ່ວນຮ້ອຍຂອງຮຸ້ນທັງໝົດໃນບໍລິສັດ. ດັ່ງນັ້ນ, ຜູ້ລົງທຶນຕ່າງປະເທດທີ່ໄດ້ຈອງຊື້ຮຸ້ນສາມັນເພີ່ມທຶນຈະບໍ່ໄດ້ຮັບການຈັດສັນເຕັມຈຳນວນທີ່ຈອງໄວ້. ໃນກໍລະນີດັ່ງກ່າວ, ຜູ້ຈັດສັນຮຸ້ນຈະສົ່ງຄືນເງິນຈອງຊື້ຮຸ້ນໃຫ້ກັບຜູ້ລົງທຶນດັ່ງກ່າວ ໂດຍອີງຕາມລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນສະບັບເລກທີ 017/ຄຄຊ, ລົງວັນທີ 22 ຕຸລາ 2014 ເຊິ່ງກຳນົດວ່າຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນຕ້ອງສົ່ງຄືນເງິນຄ່າຈອງຊື້ຮຸ້ນພາຍໃນ 5 ວັນລັດຖະການ ພາຍຫຼັງການສິ້ນສຸດການສະເໜີຂາຍຮຸ້ນດັ່ງກ່າວ (ກະລຸນາເບິ່ງຂໍ້ມູນກ່ຽວກັບການສະເໜີຂາຍຮຸ້ນ-ການສົ່ງຄືນມູນຄ່າທີ່ໄດ້ຈອງຊື້ຮຸ້ນ).

3.3.3 ການບັງຄັບໃຊ້ຄຳຕັດສິນຂອງສານຕ່າງປະເທດຢຸ່ ສປປ ລາວ

ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ. ຜູ້ອຳນວຍການ ແລະ ພະນັກງານສ່ວນຫຼາຍຂອງບໍລິສັດ ເປັນພົນລະເມືອງລາວ ແລະ ອາໄສຢຸ່ ສປປ ລາວ, ລວມທັງຊັບສິນທີ່ສຳຄັນທັງໝົດຂອງບໍລິສັດ ແລະ ຂອງບຸກຄົນດັ່ງກ່າວ ແມ່ນຕັ້ງຢຸ່ໃນ ສປປ ລາວ. ດ້ວຍເຫດນີ້, ຜູ້ລົງທຶນຕ່າງປະເທດອາດມີຄວາມຫຍຸ້ງຍາກທີ່ຈະຮຽກໃຫ້ບໍລິສັດ ຫຼື ບຸກຄົນດັ່ງກ່າວຮັບຜິດຕາມຄຳຕັດສິນຂອງສານຕ່າງປະເທດ ພາຍໃນ ສປປ ລາວ.

ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 17 ກໍລະກົດ 2014, ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງສານຕ່າງປະເທດໂດຍຜ່ານສະຖານທູດຂອງ ສປປ ລາວ, ຫຼື ກົງສູນ ຫຼື ອົງການຜູ້ຕາງໜ້າ ຂອງ ສປປ ລາວ ໃນປະເທດດັ່ງກ່າວ. ເພື່ອໃຫ້ສານຂອງ ສປປ ລາວ ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ, ຄຳຕັດສິນນັ້ນຈະຕ້ອງ:

(i) ແປເປັນພາສາລາວ;

(ii) ມາຈາກປະເທດທີ່ເປັນພາຄີຂອງສົນທິສັນຍາສາກົນເຊິ່ງ ສປປ ລາວ ໄດ້ເປັນພາຄີ;

(iii) ຈະຕ້ອງບໍ່ແຕະຕ້ອງເຖິງອະທິປະໄຕ ແລະ ບໍ່ຂັດກັບກົດໝາຍຂອງ ສປປ ລາວ; ແລະ

(iv) ບໍ່ແຕະຕ້ອງເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມລາວ

ຢ່າງໃດກໍ່ຕາມ, ສານຂອງ ສປປ ລາວ ອາດຈະບໍ່ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຖ້າຄຳຕັດສິນດັ່ງກ່າວຫາກ:

(i) ຄຳຕັດສິນດັ່ງກ່າວຍັງຢຸ່ໃນຂັ້ນຕອນຂອງການດຳເນີນຄະດີເຊິ່ງຍັງບໍ່ເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ;

(ii) ຜູ້ເສຍຄະດີໃນຄຳຕັດສິນຂອງສານຕ່າງປະເທດນັ້ນຍັງບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີໂດຍມີການຕັດສິນລັບຫຼັງຜູ້ກ່ຽວ;

(iii) ຄະດີທີ່ສານຕ່າງປະເທດດຳເນີນນັ້ນຕົກຢຸ່ໃນສິດອຳນາດຂອງສານແຫ່ງ ສປປ ລາວ ເປັນຜູ້ດຳເນີນ;

(iv) ຄຳຕັດສິນດັ່ງກ່າວຂັດກັນລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ; ແລະ

(v) ບັນຫາອື່ນທີ່ບໍ່ໄດ້ລະບຸກ່ຽວກັບຄຳຕັດສິນຂອງສານຕ່າງປະເທດ.

ເຖິງຢ່າງໃດກໍ່ຕາມ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງເສດຖະກິດ ເລກທີ 06/ສພຊ, ລົງວັນທີ 17 ທັນວາ 2010 ໄດ້ກຳນົດໄວ້ໂດຍລວມວ່າ ສປປ ລາວ ຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ລະຫວ່າງປະເທດ ໂດຍໄດ້ຮັບການຢັ້ງຢືນຈາກສານປະຊາຊົນຂອງ ສປປ ລາວ. ສານປະຊາຊົນລາວຈະພິຈາລະນາຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ລະຫວ່າງປະເທດ ຖ້າຄຳຕັດສິນນັ້ນເປັນໄປຕາມເງື່ອນໄຂດັ່ງນີ້: (i) ຄູ່

ກໍລະນີຕ້ອງຖືສັນຊາດຂອງປະເທດທີ່ເປັນພາຄີຂອງສົນທິສັນຍາ ນິວຢອກ ປີ 1958 ວ່າດ້ວຍ ການຮັບຮູ້ ແລະ ການບັງຄັບ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ; (ii) ບໍ່ຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍກ່ຽວກັບຄວາມ ມັ່ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ; (iii) ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ. ຢ່າງໃດກໍ່ຕາມ, ການບັງຄັບຄຳຕັດສິນຂອງກຳມະການຕັດສິນ ຕ່າງປະເທດໃນ ສປປ ລາວ ແມ່ນມີໜ້ອຍ.

3.4. ຄວາມສ່ຽງດ້ານເສດຖະກິດ

3.4.1 ບັດໄຈດ້ານການເມືອງ ແລະ ເສດຖະກິດຂອງ ສປປ ລາວ

ການເຄື່ອນໄຫວຂອງບໍລິສັດຂຶ້ນຢູ່ກັບເງື່ອນໄຂສະພາບການເມືອງ, ເສດຖະກິດ, ລະບຽບກົດໝາຍ ໃນ ສປປ ລາວ ເຊິ່ງມີຄວາມແຕກຕ່າງກັບປະເທດອື່ນໆ ທີ່ເສດຖະກິດພັດທະນາແລ້ວ. ສະພາວະຕຶງຕຳ່ດ້ານເສດຖະກິດອາດສົ່ງ ຜົນກະທົບໃນທາງລົບຢ່າງຫຼວງຫຼາຍຕໍ່ທຸລະກິດ, ຖານະການເງິນ, ຜົນການດຳເນີນງານ ແລະ ຊ່ອງທາງການດຳເນີນກິດຈະການ ຂອງບໍລິສັດ. ການແຊກແຊງທາງເສດຖະກິດຂອງລັດຖະບານລາວຈະສົ່ງຜົນຕໍ່ການປ່ຽນແປງນະໂຍບາຍເສດຖະກິດ ແລະ ອາດ ສົ່ງຜົນກະທົບທາງລົບຕໍ່ບໍລິສັດໄດ້. ການປ່ຽນແປງນະໂຍບາຍຂອງລັດຖະບານກ່ຽວກັບລາຄາໄຟຟ້າ, ອັດຕາຄ່າຕອບແທນ, ການ ຄຸ້ມຄອງອັດຕາແລກປ່ຽນ, ນະໂຍບາຍດ້ານພາສີອາກອນ ແລະ ດ້ານອື່ນໆ ອາດສົ່ງຜົນກະທົບທາງລົບຕໍ່ບໍລິສັດ, ໜ່ວຍ ແລະລູກຄ້າໃນ ອະນາຄົດ. ນອກຈາກນີ້, ນະໂຍບາຍການປັບໂຄງສ້າງຂະແໜງການຜະລິດໄຟຟ້າຂອງລັດຖະບານອາດມີການປ່ຽນແປງໄດ້ໃນອະນາຄົດ.

3.4.2. ຄວາມບໍ່ແນ່ນອນຂອງລະບຽບກົດໝາຍທີ່ກ່ຽວຂ້ອງກັບຂະແໜງການໄຟຟ້າຢູ່ ສປປ ລາວ

ໃນອະນາຄົດ ລັດຖະບານອາດຈະມີການປ່ຽນແປງລະບຽບກົດໝາຍຂອງອຸດສາຫະກຳໄຟຟ້າທີ່ ສຳຄັນ ເຊິ່ງອາດສົ່ງຜົນກະທົບທາງລົບກັບບໍລິສັດ. ເຖິງວ່າ ບໍລິສັດເຊື່ອວ່າລັດຖະບານຈະພະຍາຍາມທຸກວິທີເພື່ອຊ່ວຍເຫຼືອບໍລິສັດ ແລະ ສະໜັບສະໜູນທຸລະກິດຂອງບໍລິສັດ, ແຕ່ບໍລິສັດກໍ່ບໍ່ສາມາດຮັບປະກັນໄດ້ວ່າລະບຽບກົດໝາຍໃນອະນາຄົດຂອງ ລັດຖະບານລາວຈະເປັນແບບດຽວກັບປະຈຸບັນ.

4. ການດຳເນີນທຸລະກິດ

4.1 ຂໍ້ມູນເບື້ອງຕົ້ນ

ບໍລິສັດແມ່ນໜຶ່ງໃນບໍລິສັດຜະລິດໄຟຟ້າຊັ້ນນຳຂອງ ສປປ ລາວ. ເຊິ່ງໃນການດຳເນີນທຸລະກິດປະຈຸບັນ ບໍລິສັດແມ່ນເປັນເຈົ້າຂອງ ແລະ ດຳເນີນການບໍລິຫານຊັບສິນໃນການຜະລິດໄຟຟ້າຂອງຕົນ ແລະ ໄດ້ຂາຍພະລັງງານໄຟຟ້າທັງໝົດ ທີ່ຜະລິດໄດ້ໃຫ້ແກ່ ຟຟລ ຜູ້ຮັບຜິດຊອບການນຳສົ່ງ ແລະ ຈັດຈຳໜ່າຍໄຟຟ້າພາຍໃນ ສປປ ລາວ. ໃນປະຈຸບັນບໍລິສັດມີສ່ວນແບ່ງ ທາງການຕະຫຼາດປະມານ 27 ສ່ວນຮ້ອຍຂອງກຳລັງການຜະລິດຕາມການຕິດຕັ້ງໃນ ສປປ ລາວ (ລວມທັງໂຄງການ IPP ຂອງ ຟຟລ ແລະ ໂຄງການ IPP ອື່ນໆ). ເຊິ່ງຕາຕະລາງລຸ່ມນີ້ໄດ້ສະແດງຊັບສິນທີ່ໄດ້ໂອນໃຫ້ກັບບໍລິສັດໃນອັນສ້າງຕັ້ງ.

ຮູບ 4.1: ໂຄງສ້າງບໍລິສັດ

Wholly-owned

- **Nam Ngum 1 (155 MW)**
- **Nam Leuk (60 MW)**
- **Nam Mang 3 (40 MW)**
- **Nam Song (6 MW)**
- **Xeset 1 (45MW)**
- **Xeset 2 (76 MW)**
- **Selabam (5 MW)**

IPPS

25%	10%	60%	20%	15%
Nam Ngum 2 Power Co., Ltd.	**Nam Lik 1-2 Power Co., Ltd.**	**Theun-Hinboun Power Co, Ltd.**	**Houay Ho Power Co., Ltd.**	**Nam Ngum 5 Power Co, Ltd.**
(154 MW)	**(10 MW)**	**(300 MW)**	**(30 MW)**	**(18 MW)**

ແຫຼ່ງຂໍ້ມູນ: ຜ-ຟຟລ
ໝາຍເຫດ: ກຳລັງຄວາມສາມາດ

ຕາຕະລາງ 4.1: ຕາຕະລາງຊັບສິນທີ່ໄດ້ໂອນໃຫ້ກັບບໍລິສັດໃນອັນສ້າງຕັ້ງ (ເປັນເຈົ້າຂອງແຕ່ພຽງຜູ້ດຽວ)

ເຂື່ອນໄຟຟ້າ	ທີ່ຕັ້ງ	ກຳລັງການຜະລິດຕາມການຕິດຕັ້ງ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ (GWh p.a.)	COD
ພາກກາງ				
ນ້ຳງື່ມ 1	ວຽງຈັນ	155,0	1.002,0	1971
ນ້ຳເລິກ	ວຽງຈັນ	60,0	218,0	2000
ນ້ຳມັງ 3	ວຽງຈັນ	40,0	1800	2005
ນ້ຳຊອງ	ວຽງຈັນ	6,0	13,5	2012
ພາກໃຕ້				
ເຊເສັດ 1	ສາລະວັນ	45,0	180,0	1991
ເຊເສັດ 2	ສາລະວັນ	76,0	309,0	2009
ແຊລະບຳ	ຈຳປາສັກ	5,0	21,0	1969
ລວມທັງໝົດ		**387,0**	**1.923,5**	-

ແຫຼ່ງຂໍ້ມູນ: ຜ-ຟຟລ

ນອກຈາກການໂອນຊັບສິນແລ້ວ, ບໍລິສັດໄດ້ເຊັນສັນຍາກ່ຽວກັບການຊໍາລະໜີ້ຄືນໃຫ້ ຟຟລ ໃນວັນທີ 15 ທັນວາ 2010 ໂດຍທີ່ ຟຟລ ເປັນຜູ້ກູ້ຢືມຕາມສັນຍາກູ້ຢືມທີ່ບໍ່ມີຫຼັກຊັບຄ້ໍາປະກັນກັບ ລັດຖະບານລາວ ເຊິ່ງທຶນຂອງການກູ້ແມ່ນ ໄດ້ຮັບການຕອບສະໜອງຈາກບັນດາຜູ້ໃຫ້ກູ້ຢືມຫຼາຍພາກສ່ວນທີ່ຊໍາລະຜ່ານລັດຖະບານລາວ. ຫຼັງຈາກທີ່ໄດ້ຮັບການໂອນຊັບສິນ ໃຫ້ກັບບໍລິສັດໃນວັນສ້າງຕັ້ງ, ບໍລິສັດໄດ້ຕົກລົງເຫັນດີກັບ ຟຟລ ວ່າບໍລິສັດຈະຊໍາລະໜີ້ທີ່ຍັງຄ້າງໃຫ້ກັບ ຟຟລ ແລະ ຫຼັງຈາກນັ້ນ ຟຟລ ຈະຊໍາລະຄືນໃຫ້ກັບລັດຖະບານພາຍໃນ ວັນທີ 10 ມັງກອນ 2010 ຫາ ວັນທີ 15 ກໍລະກົດ 2022, ສໍາລັບການຊໍາລະເງິນ ຄືນຂອງລັດຖະບານລາວໃຫ້ເຈົ້າໜີ້ ແມ່ນປະຕິບັດຕາມສັນຍາກູ້ຢືມທີ່ໄດ້ຕົກລົງກັນໄວ້.

ຕາຕະລາງລຸ່ມນີ້ ສະຫຼຸບພັນທະທາງດ້ານໜີ້ສິນໃນປະຈຸບັນຕາມວັນທີ 31 ທັນວາ 2014.

ຕາຕະລາງ 4.2: ການສະຫຼຸບພັນທະດ້ານໜີ້ສິນທີ່ຈະຕ້ອງຊໍາລະຄືນໃນປະຈຸບັນ

ຜູ້ໃຫ້ກູ້ຢືມ	ມູນຄ່າການກູ້ຢືມໃນຄັ້ງທໍາອິດ (ລ້ານໂດລາສະຫະລັດ)	ຈໍານວນໜີ້ສິນທີ່ຍັງເຫຼືອ (ຕາມວັນທີ 31 ທັນວາ 2014) (ລ້ານໂດລາສະຫະລັດ)	ຄົບກໍານົດວັນຊໍາລະ	ອັດຕາດອກເບ້ຍ (ສ່ວນຮ້ອຍຕໍ່ປີ)	ສະກຸນເງິນກູ້ຢືມ
ການກູ້ຢືມໄລຍະຍາວ					
ຟຟລ (OECF)	25,29	10,12	1 ທັນວາ 2020	2,30%	ເງິນເຢນ
ຟຟລ (Norinco)	108,40	54,20	7 ກຸມພາ 2020	2,00%	ໂດລາສະຫະລັດ
ຟຟລ (Exim India)	11,00	9,53	21 ກໍລະກົດ 2027	1,75%-2,75%	ໂດລາສະຫະລັດ
ລວມທັ້ງໝົດ	**144,69**	**73,85**			
ການອອກຮຸ້ນກູ້					
ເລກລໍາດັບ ຮຸ້ນກູ້ 1	45,83	45,83	12 ທັນວາ 2019	4,95%	ບາດ
ເລກລໍາດັບຮຸ້ນກູ້ 2	61,11	61,11	12 ທັນວາ 2021	5,20%	ບາດ
ເລກລໍາດັບຮຸ້ນກູ້ 3	91,67	91,67	12 ທັນວາ 2024	5,45%	ບາດ
ລວມ	**198,61**	**198,61**			
ລວມທັ້ງໝົດ	**343,30**	**272,46**			

ໝາຍເຫດ: ອັດຕາແລກປ່ຽນ31 ທັນວາ 2014 = 8.108 ກີບ/ໂດລາສະຫະລັດ; ແລະ
ອັດຕາແລກປ່ຽນ 31 ທັນວາ 2014 = 247,74 ກີບ/ໄທບາດ.
ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ເດືອນ ກໍລະກົດ ປີ 2012, ບໍລິສັດໄດ້ເຊັນສັນຍາໂອນຮຸ້ນກັບ ຟຟລ ເຊິ່ງອາດມີຜົນເຮັດໃຫ້ທຸລະກິດຂອງ ບໍລິສັດມີການຂະຫຍາຍຕົວໃນອະນາຄົດ, ດັ່ງນັ້ນ, ຈຶ່ງໄດ້ຊີ້ຮຸ້ນທີ່ຖືໂດຍ ຟຟລ ໃນແຕ່ລະໂຄງການ IPPs ດັ່ງລຸ່ມນີ້:

ຕາຕະລາງ 4.3: ລາຍລະອຽດຂອງ ໂຄງການ IPP ທີ່ ຜ-ຟຟລ ຖືຮຸ້ນ

ເຂື່ອນໄຟຟ້າ	ສັດສ່ວນການຖືຮຸ້ນ	ທີ່ຕັ້ງ	ກໍາລັງການຜະລິດຕາມການຕິດຕັ້ງ (MW)	ກໍາລັງການຜະລິດ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ (GWh p.a.)	COD
ເທີນຫິນບຸນ	60%	ບໍລິຄໍາໄຊ	500,0	300,0	3.316,0	1998, 2013
ນ້ໍາງຶມ 2	25%	ວຽງຈັນ	615,0	153,8	2.300,0	2012
ຫ້ວຍເຫາະ	20%	ອັດຕະປື	152,0	30,4	450,0	1998
ນ້ໍາລີກ 1-2	10%	ວຽງຈັນ	100,0	10,0	435,0	2010
ລວມທັ້ງໝົດ			**1.367,0**	**494,2**	**6.501,0**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ປີ 2014 ບໍລິສັດໄດ້ອອກຮຸ້ນກູ້ມູນຄ່າ 6.500 ລ້ານບາດ ເພື່ອລົງທຶນຊື້ເຂື່ອນໄຟຟ້າຈາກໂຄງການ IPP ພາຍຫຼັງ COD. ເຊິ່ງຈະເຮັດໃຫ້ບໍລິສັດບັນລຸເປົ້າໝາຍຂອງກຳລັງການຜະລິດ 1.273 MW

ເດືອນ ທັນວາ ປີ 2014 ບໍລິສັດຜະລິດໄຟຟ້າໄດ້ທັງໝົດ 4.660,95 GWh ໃນນັ້ນ 1.996,09 GWh ແມ່ນໄດ້ຈາກເຂື່ອນໄຟຟ້າ 7 ເຂື່ອນທີ່ບໍລິສັດເປັນເຈົ້າຂອງທັງໝົດ ແລະ 2.664,86 GWh ແມ່ນໄດ້ມາຈາກການເຂົ້າໄປຖືຮຸ້ນໃນເຂື່ອນໄຟຟ້າ IPP 4 ໂຄງການ.

ເດືອນ ກຸມພາ ປີ 2015 ບໍລິສັດໄດ້ນຳໃຊ້ທຶນຈຳນວນໜຶ່ງທີ່ໄດ້ຈາກການສະເໜີຂາຍຮຸ້ນກູ້ປີ 2014 ເພື່ອຊື້ຮຸ້ນສັດສ່ວນການຖືຮຸ້ນ 15 ສ່ວນຮ້ອຍໃນບໍລິສັດ ເຂື່ອນໄຟຟ້ານ້ຳງຶ່ມ 5 ຈຳກັດ (IPP) ຈາກ ຟຟລ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 4.4: ລາຍລະອຽດໂຄງການເຂື່ອນໄຟຟ້ານ້ຳງຶ່ມ 5

ເຂື່ອນໄຟຟ້າ	ການຖືຮຸ້ນ	ທີ່ຕັ້ງ	ກຳລັງການຜະລິດຕາມການຕິດຕັ້ງ	ກຳລັງການຜະລິດ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ (GWh)	COD
ນ້ຳງຶ່ມ 5	15%	ວຽງຈັນ	120,0	18,0	500,0	2012
ໂຄງການ IPP ທັງໝົດ 5 ໂຄງການ			**1.455,0**	**512,2**	**7.001,0**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ໃນປະຈຸບັນນີ້ ບໍລິສັດເປັນເຈົ້າຂອງໃນເຂື່ອນໄຟຟ້າ 7 ເຂື່ອນ ເຊິ່ງມີກຳລັງການຜະລິດຕາມການຕິດຕັ້ງທັງໝົດ 387 MW ແລະ ຍັງມີໂຄງການ IPPs ທີ່ບໍລິສັດເຂົ້າໄປຖືຮຸ້ນ 5 ໂຄງການເຊິ່ງມີກຳລັງການຜະລິດຕາມການຕິດຕັ້ງທັງໝົດ 512,2 GWh ເຮັດໃຫ້ກຳລັງການຜະລິດຕາມການຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 899,2 GWh.

ໃນໄລຍະທີ່ຜ່ານມາ, ຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ສປປ ລາວ ແມ່ນໄດ້ຮັບການລົງທຶນ ແລະ ກໍ່ສ້າງ ໂດຍ ຟຟລ ແລະ ສຳປະທານອະນຸມັດໃຫ້ກັບຜູ້ພັດທະນາໂຄງການ IPP ຫຼາຍໆ ກຸ່ມ. ໃນອະນາຄົດ, ບໍລິສັດຈະສືບຕໍ່ໃນການເຂົ້າຊື້ຊັບສິນທີ່ ຟຟລ ເປັນເຈົ້າຂອງທັງໝົດ ແລະ/ຫຼື ໂຄງການ IPP ຟຟລ ຖືຮຸ້ນ ຕາມ COD ທີ່ທັງສອງຝ່າຍໄດ້ລົງນາມກັນໄວ້ (ແລ້ວແຕ່ລະກໍລະນີ).

ບໍລິສັດອາດດຳເນີນທຸລະກິດຂອງຕົນໂດຍການກໍ່ສ້າງສະຖານີໄຟຟ້າ ແລະ ສາຍສົ່ງສຳລັບການເຊື່ອມຕໍ່ສາຍສົ່ງແຫ່ງຊາດ, ລວມທັງການລົງທຶນໂດຍກົງ ແລະ/ຫຼື ລົງທຶນໃນຮູບແບບສັນຍາຮ່ວມທຶນໃນໂຄງການຜະລິດໄຟຟ້າອື່ນໆ ແລະ ຕອບສະໜອງການບໍລິການໃນການຜະລິດ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າໂດຍອີງຕາມຍຸດທະສາດຂອງບໍລິສັດ. ບໍລິສັດອາດຈະລົງທຶນໃນໂຄງການຜະລິດໄຟຟ້າເພີ່ມເຕີມ ແລະ ທຸລະກິດທີ່ກ່ຽວຂ້ອງເປັນແຕ່ລະໄລຍະເວລາທີ່ເປັນໜ້າເພິ່ງພໍໃຈໃນ ການລົງທຶນຂອງຕົນເຊັ່ນວ່າ: (i) ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ; (ii) ໂຄງການ IPP ທີ່ ຟຟລ ຖືຮຸ້ນເຊິ່ງຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ; (iii) ໂຄງການ IPP ທີ່ ຟຟລ ຖືຮຸ້ນ ເຊິ່ງກຳລັງດຳເນີນງານຢູ່; ແລະ (iv) ບັນດາໂຄງການໄຟຟ້າອື່ນໆ. COD ຫຼື ວັນໃດໜຶ່ງທີ່ ຟຟລ ແລະ ບໍລິສັດໄດ້ຕົກລົງຮ່ວມກັນ (ແລ້ວແຕ່ລະກໍລະນີ) ສຳລັບຊັບສິນທີ່ນຳໃຊ້ໃນການຜະລິດໄຟຟ້າຂອງ ຟຟລ, ບໍລິສັດຈະຊື້ສິ່ງທີ່ຈຳເປັນ ຈາກ ຟຟລ ໂດຍອາດຈະຊຳລະເປັນເງິນສົດ ຫຼື ໂດຍການອອກຮຸ້ນໃໝ່ ເຊິ່ງຂຶ້ນກັບການໄດ້ຮັບອະນຸມັດຈາກຜູ້ຖືຮຸ້ນຂອງບໍລິສັດ ແລະ ການອະນຸມັດຈາກເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງ (ລວມທັງບັນດາຝ່າຍທີ່ກ່ຽວຂ້ອງກັບການໂອນຊັບສິນຂອງ ຟຟລ).

ເພື່ອເປັນການເຂົ້າໄປຖືຮຸ້ນໃນໂຄງການ IPPs ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ ຂອງ ຟຟລ ແລະ/ຫຼື ໂຄງການທີ່ ຟຟລ ເປັນເຈົ້າຂອງທັງໝົດທີ່ກຳລັງດຳເນີນງານຢູ່ ບໍລິສັດຈະຕ້ອງໄດ້ຮັບຮຸ້ນທີ່ ຟຟລ ຖືຢູ່ໃນໂຄງການເຫຼົ່ານັ້ນ. ໃນການເຂົ້າໄປຖືຮຸ້ນໃນໂຄງການ IPPs ຂອງ ຟຟລ ຈະຕ້ອງຢູ່ພາຍໃຕ້ເງື່ອນໄຂໃນສັນຍາລະຫວ່າງຜູ້ຖືຮຸ້ນກັບ ຟຟລ (ຖ້າມີ) ແລະ ອາດ ຈະຕ້ອງໄດ້ຮັບຄວາມຕົກລົງເຫັນດີ ຈາກພາກສ່ວນທີ່ກ່ຽວຂ້ອງ. ບັນດາໂຄງການ IPPs ມີຮູບແບບສັນຍາຢູ່ແລ້ວ ລວມເຖິງ PPAs, ການກູ້ຍືມເງິນເພື່ອນຳໃຊ້ໃນໂຄງການ ແລະ ອື່ນໆ. ດັ່ງນັ້ນ, ບົດບາດຂອງບໍລິສັດຈະເປັນພຽງຜູ້ຖືຮຸ້ນໃນໂຄງການ IPPs ເຫຼົ່ານັ້ນ.

ເພື່ອຈະຊື້ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ, ບໍລິສັດອາດຈະ ຊື້ຊັບສິນດັ່ງກ່າວຈາກ ຟຟລ ໂດຍກົງ ໃນຮູບແບບການຊື້ນີ້ ຈະຍັງບໍ່ແມ່ນການນຳໃຊ້ຂອບເຂດດ້ານສັນຍາເທື່ອ. ບໍລິສັດຄາດວ່າຈະ ເຂົ້າເຮັດ CA ກັບລັດຖະບານລາວ ແລະ ຈະເຂົ້າເຮັດ PPA ກັບ ຟຟລ ສຳລັບແຕ່ລະຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ ໂດຍມີຂໍ້ ຕົກລົງທີ່ສອດຄ່ອງກັບ ຂໍ້ຕົກລົງທີ່ເຄີຍໄດ້ຕົກລົງກັບໂຄງການ IPPs.

ໃນອະນາຄົດ, ບໍລິສັດຍັງມີແຜນເພື່ອເພີ່ມລາຍຮັບຂອງຕົນ ຈາກ 2 ແຫຼ່ງ ໂດຍມີລາຍລະອຽດດັ່ງນີ້:

(1) ລາຍຮັບຈາກການດຳເນີນ ແລະ ການບໍລິການບຳລຸງຮັກສາໂຄງການເຂື່ອນໄຟຟ້າ: ກວ່າ 90 ສ່ວນ ຮ້ອຍຂອງພະນັກງານບໍລິສັດ ເຮັດວຽກໃນສະຖານທີ່ໂຄງການ ແລະ ພະນັກງານເຫຼົ່ານີ້ມີຄວາມສຳນິສຳນານທາງດ້ານເຕັກນິກທີ່ ຈຳເປັນໃນການຄຸ້ມຄອງ ແລະ ບຳລຸງຮັກສາ, ບໍລິສັດຄາດວ່າໃນອະນາຄົດຈະຍັງສືບຕໍ່ສະໜອງການບໍລິການດ້ານການດຳເນີນງານ ແລະ ສ້ອມແປງບຳລຸງຮັກສາໃຫ້ກັບບັນດາໂຄງການເຂື່ອນໄຟຟ້າທີ່ມີຢູ່ໃນປະຈຸບັນ ແລະ ບັນດາໂຄງການເຂື່ອນໄຟຟ້າອື່ນ.

(2) ລາຍຮັບຈາກການຂາຍຄາບອນ (Clean Development Mechanism, CDM or carbon credit) ບໍລິສັດ ຄາດຫວັງວ່າ ຈະມີລາຍຮັບຈາກບັນດາໂຄງການດັ່ງລຸ່ມນີ້:

(i) ເຊເສັດ 2; ແລະ

(ii) ຫ້ວຍລຳພັນໃຫຍ່ ແລະ ນ້ຳຄານ 2 ເຊິ່ງບໍລິສັດໄດ້ເຊັນ MOU ກັບ Asia Net Service ທີ່ຄາດວ່າຈະ COD ໃນປີ 2015.

ບໍລິສັດເຊື່ອວ່າຕົນເອງຢູ່ໃນບ່ອນທີ່ສາມາດຂະຫຍາຍຕົວໄດ້ໄວດ້ວຍເຫດຜົນດັ່ງລຸ່ມນີ້:

(i) ບໍລິສັດ ມີການບໍລິຫານຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ ໂດຍມີເງິນສົດໝຸນວຽນຢ່າງໝັ້ນຄົງ;

(ii) ບໍລິສັດມີການພົວພັນຢ່າງໃກ້ຊິດກັບ ຟຟລ ໃນການເຂົ້າເຖິງໂຄງການທີ່ມີຜົນຕອບແທນສູງເຊິ່ງສາມາດ ຕໍ່ລອງທາງດ້ານລາຄາໄດ້ ແລະ ມີຂັ້ນຕອນການບໍລິຫານຄວາມສ່ຽງກ່ອນ COD ;

(iii) ມີສັນຍາໃນການຊື້-ຂາຍໄຟຟ້າທີ່ຊັດເຈນກັບ ຟຟລ, ມີເງິນສົດໝຸນວຽນຢ່າງໝັ້ນຄົງທຽບໃສ່ອັດຕາ ແລກປ່ຽນ ແລະ ອັດຕາເງິນເຟີ້.

4.2 ປະຫວັດການດຳເນີນງານ

4.2.1 ປະຫວັດຂອງບໍລິສັດ

ຕາຕະລາງຕໍ່ໄປນີ້ແມ່ນເປັນບົດສະຫຼຸບທີ່ສະແດງຂໍ້ມູນທາງດ້ານການເງິນ ແລະ ຂໍ້ມູນອື່ນໆ ທີ່ຜ່ານມາ ຂອງບໍລິສັດໃນປີ 2014. ຜູ້ລົງທຶນຄວນອ່ານຕາຕະລາງທີ່ມີສ່ວນກ່ຽວຂ້ອງພ້ອມກັບບົດລາຍງານການເງິນຂອງບໍລິສັດ ເບິ່ງ ສຳເນົາໃນເອກະສານ ຊ້ອນທ້າຍ 2.

ຕາຕະລາງ 4.5: ຂໍ້ມູນດ້ານການເງິນ

ບົດສະຫຼຸບດ້ານການເງິນ	ບົດລາຍງານຖານະການເງິນຂອງບໍລິສັດ ປີ 2014 (ລ້ານກີບ)
ບົດລາຍງານຖານະການເງິນ	
ເງິນສົດແລະລາຍການທຽບເທົ່າເງິນສົດ	1.251.534
ຊັບສິນໝຸນວຽນ	534.020
ຊັບສິນບໍ່ໝຸນວຽນ	7.035.707
ລວມຍອດຊັບສິນ	**8.821.261**
ໜີ້ສິນໝຸນວຽນ	413.390
ໜີ້ສິນບໍ່ໝຸນວຽນ	2.086.230
ໜີ້ສິນທັງໝົດ	**2.499.620**
ສ່ວນຂອງຜູ້ຖືຮຸ້ນ ແລະ ອື່ນໆ	5.342.830
ກຳໄລສະສົມ	978.811
ລວມທຶນ	**6.321.641**
ບົດລາຍງານຜົນໄດ້ຮັບ	
ການຂາຍ	839.193
ກຳໄລເບື້ອງຕົ້ນ	**623.580**
ລາຍຮັບອື່ນໆ	5.680
ການແບ່ງກຳໄລຈາກການຮ່ວມທຸລະກິດ ແລະ ການຮ່ວມທຶນ	474.467
ລາຍຈ່າຍບໍລິຫານ	141.626
ກຳໄລກ່ອນຕົ້ນທຶນທາງການເງິນ ແລະ ອາກອນ	962.101
ຕົ້ນທຶນທາງການເງິນ	31.722
ອາກອນລາຍໄດ້	22.695
ກຳໄລສຸດທິ	**907.684**

ແຫຼ່ງຂໍ້ມູນ: ຜ-ຟຟລ

4.2.2 ໂຄງສ້າງລາຍຮັບ

ຜົນການດຳເນີນທຸລະກິດປີ 2014, ບໍລິສັດມີລາຍຮັບທັງໝົດ ແລະ ກຳໄລສຸດທິ 839.193 ລ້ານກີບ ແລະ 907.684 ລ້ານກີບຕາມລຳດັບ. ການຂາຍຫຼຸດລົງ 2,69 ສ່ວນຮ້ອຍ ແລະ ອັດຕາກຳໄລສຸດທິ 6,59 ສ່ວນຮ້ອຍ. ສາຍເຫດຕົ້ນຕໍຂອງການຫຼຸດລົງແມ່ນເກີດມາຈາກກຳລັງການຜະລິດຕົວຈິງມີການຫຼຸດລົງ. ໃນປີ 2014 ໄຟຟ້າທີ່ຜະລິດໄດ້ທັງໝົດ ຫຼຸດລົງທຽບໃສ່ປີ 2013. ການຫຼຸດລົງຂອງກຳລັງຜະລິດເປັນສາຍເຫດໃຫ້ມີຕົ້ນທຶນການຜະລິດເພີ່ມຂຶ້ນ ລວມທັງການຂາດຄວາມດຸ່ນດຽງທາງດ້ານເສດຖະກິດ. ນອກຈາກນັ້ນຄ່າໃຊ້ຈ່າຍໃນການບໍລິຫານກໍ່ເພີ່ມຂຶ້ນໂດຍສະເພາະແມ່ນການຂາດທຶນຈາກອັດຕາແລກປ່ຽນປີ 2014.

4.2.3 ລາຍຮັບ

ລາຍຮັບຕົ້ນຕໍຂອງບໍລິສັດແມ່ນໄດ້ມາຈາກການຂາຍກະແສໄຟຟ້າໃຫ້ ຟຟລ ໂດຍມີລາຍລະອຽດດັ່ງລຸ່ມນີ້:


ຕາຕະລາງ 4.6: ລາຍລະອຽດຂອງລາຍຮັບ

	31 ທັນວາ 2014 (ລ້ານກີບ)	31 ທັນວາ 2013 (ລ້ານກີບ)
ການຂາຍກະແສໄຟຟ້າ	839.193	862.429
ລາຍຮັບອື່ນໆ	5.680	6.700
ລາຍຮັບທັງໝົດ	844.873	869.129

ແຫຼ່ງຂໍ້ມູນ: ຜ-ຟຟລ

ຜົນການດຳເນີນທຸລະກິດປີ 2014, ລາຍຮັບຈາກການຂາຍກະແສໄຟຟ້າແມ່ນ 839.193 ລ້ານກີບ ຫຼື 99,32 ສ່ວນຮ້ອຍຂອງລາຍຮັບທັງໝົດ ແລະ ລາຍຮັບອື່ນໆ ແມ່ນໄດ້ມາຈາກດອກເບ້ຍປະມານ 5.680 ລ້ານກີບ. ໃນຂະນະດຽວກັນ, ການຂາຍກະແສໄຟຟ້າທັງໝົດມີປະມານ 1.968 GWh ດ້ວຍລາຄາສະເລ່ຍ 426,43 ກີບຕໍ່ KWh

ຮູບ 4.2: ລາຍລະອຽດການຂາຍ



ແຫຼ່ງຂໍ້ມູນ: ຜ-ຟຟລ

ຈາກການຄາດຄະເນປີ 2014, ບໍລິສັດຄາດວ່າການສົ່ງອອກໄຟຟ້າຈະມີການເພີ່ມຂຶ້ນ ໂດຍບໍ່ຄຳນຶງເຖິງການຂາຍໄປຍັງປາຍທາງສຸດທ້າຍ. ຖ້າຫາກບໍລິສັດຂາຍໄຟຟ້າໃຫ້ ຟຟລ ບໍລິສັດຈະໄດ້ຮັບການຊຳລະຄ່າກະແສໄຟຟ້າຈາກ ຟຟລ ຕາມ ທີ່ໄດ້ລະບຸໄວ້ໃນສັນຍາຊື້-ຂາຍກະແສໄຟຟ້າ. ພ້ອມດຽວກັນນັ້ນ, ບໍລິສັດຄາດວ່າຈະຂາຍກະແສໄຟຟ້າໃຫ້ກັບຜູ້ຊື້ທີ່ເປັນຄົນຕ່າງປະເທດໄດ້ຢ່າງເສລີ (ຄືກັນກັບໂຄງການ IPP ອື່ນໆ) ໃນລາຄາທີ່ສາມາດຕໍ່ລອງໄດ້. ເຖິງຢ່າງໃດກໍ່ຕາມ, ບໍລິສັດຈະ

ຂາຍກະແສໄຟຟ້າທັງໝົດຢູ່ພາຍໃນປະເທດໂດຍຜ່ານ ຟຟລ. ໃນກໍລະນີທີ່ບໍລິສັດຈະຂາຍໃຫ້ກັບຜູ້ຊື້ຈາກຕ່າງປະເທດ, ບໍລິສັດຈະບໍ່ສ້າງສາຍສົ່ງດ້ວຍຕົນເອງ.

4.2.4 ໂຄງສ້າງດ້ານລາຄາໄຟຟ້າ

ຟຟລ ກຳນົດໂຄງສ້າງລາຄາໄຟຟ້າເພື່ອເຮັດໃຫ້ບໍລິສັດເປັນທີ່ໜ້າສົນໃຈຂອງຕະຫຼາດ ແລະ ມີຄວາມໝັ້ນຄົງດ້ານລາຍຮັບ. ລາຄາໄຟຟ້າເລີ່ມຕົ້ນໃນວັນສ້າງຕັ້ງບໍລິສັດ ແມ່ນ 413,89 ກີບ/KWh (ປະມານ 0,0513 USD/KWh). ລາຄາໄຟຟ້ານີ້ແມ່ນໄດ້ຖືກກຳນົດ ພາຍຫຼັງທີ່ໄດ້ມີການປຶກສາຫາລືພາຍໃນ ຟຟລ (ລະຫວ່າງພະແນກຜະລິດ ແລະ ພະແນກຈັດຈຳໜ່າຍ) ແລະ ອີງຕາມອັດຕາລາຄາໄຟຟ້າທຽບກັບໂຄງການ IPPs. ຂໍ້ສົມມຸດທີ່ນຳໃຊ້ໃນການພັດທະນາລາຄາໄຟຟ້າມີດັ່ງນີ້:

(i) ເພີ່ມລາຄາໄຟຟ້າ 1 ສ່ວນຮ້ອຍຕໍ່ປີ;

(ii) ກຳນົດເອົາອັດຕາຜົນຕອບແທນ (IRR) ຫຼາຍກວ່າ 11 ສ່ວນຮ້ອຍ;

(iii) ບໍລິຫານປັດໄຈຂອງການຜະລິດໃຫ້ມີຄວາມໝັ້ນຄົງທີ່ລະດັບ 56,6 ສ່ວນຮ້ອຍ ທຽບກັບສັດສ່ວນຂອງການບໍລິຫານຊັບສິນ;

(iv) ຄ່າພາກຫຼວງ 1 ສ່ວນຮ້ອຍ ແລະ ອາກອນລາຍໄດ້ 10 ສ່ວນຮ້ອຍ ຈະນຳໃຊ້ກັບບໍລິສັດຄືກັນກັບໂຄງການ IPP ອື່ນໆ.

ໂຄງສ້າງດ້ານລາຄາໃນປະຈຸບັນນີ້ ນຳໃຊ້ກັບຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ.

4.2.5 ກຳໄລຈາກການຮ່ວມທຸລະກິດ ແລະ ເປັນຮຸ້ນສ່ວນ

ບໍລິສັດໄດ້ຮັບໂອນສິດ ແລະ ຜົນປະໂຫຍດຂອງຕົນທັງໝົດຈາກ ຟຟລ ໃນໂຄງການ IPPs 5 ໂຄງການ. ບໍລິສັດໄດ້ຮັບເງິນສ່ວນແບ່ງຂອງກຳໄລຈາກໂຄງການ IPPs ດັ່ງກ່າວຕາມສັດສ່ວນຂອງການຖືຮຸ້ນຂອງບໍລິສັດ.

ໂຄງການ IPPs ທັງ 5 ໂຄງການ ໄດ້ຜະລິດໄຟຟ້າ ໃນ ສປປ ລາວ, ແຕ່ວ່າໄຟຟ້າທີ່ຜະລິດສ່ວນໃຫຍ່ (ປະມານ 83 ສ່ວນຮ້ອຍ) ແມ່ນຕອບສະໜອງໃຫ້ປະເທດໄທໂດຍການຂາຍໃຫ້ EGAT. ສຳລັບບໍລິສັດໄຟຟ້າເທີນຫິນບູນ (500 MW), ບໍລິສັດໄຟຟ້າຫ້ວຍເຫາະ (152 MW) ແລະ ບໍລິສັດ ນ້ຳງື່ມ 2 (615 MW) ໄດ້ສະໜອງໄຟຟ້າຈຳນວນ 95 ສ່ວນຮ້ອຍ, 98 ສ່ວນຮ້ອຍ ແລະ 100 ສ່ວນຮ້ອຍ ໃຫ້ EGAT, ສ່ວນ ບໍລິສັດ ໄຟຟ້ານ້ຳລີກ 1 - 2 (100 MW) ແລະ ນ້ຳງື່ມ 5 (120 MW) ແມ່ນໄດ້ຕອບສະໜອງ 100 ສ່ວນຮ້ອຍຂອງການຜະລິດໄຟຟ້າໃຫ້ກັບ ຟຟລ.

4.3 ການນຳໃຊ້ທຶນຂອງບໍລິສັດ

ບໍລິສັດຄາດວ່າອາດຈະມີການໃຊ້ທຶນຂອງບໍລິສັດໃນອະນາຄົດ, ສ່ວນຫຼາຍແມ່ນຈະໃຊ້ເຂົ້າໃນບຳລຸງຮັກສາ ແລະ ການສ້ອມແປງຊັບສິນຂອງຕົນທີ່ໃຊ້ໃນການດຳເນີນງານ.

ປະຈຸບັນ ຟຟລ ມີຊັບສິນທີ່ໃຊ້ໃນການຜະລິດຢ່າງຫຼວງຫຼາຍໃນໄລຍະການກໍ່ສ້າງ ແລະ ໃນໄລຍະການພັດທະນາ. ບໍລິສັດເຊື່ອວ່າສິ່ງເຫຼົ່ານີ້ຈະເຮັດໃຫ້ການດຳເນີນງານມີປະສິດທິພາບໃນອະນາຄົດສຳລັບ ຟຟລ ໃນການສືບຕໍ່ຄວາມ

ຮັບຜິດຊອບ ແລະ ການພັດທະນາ ແລະ ການກໍ່ສ້າງຂອງບັນດາຊັບສິນ ລວມທັງເພື່ອທີ່ຈະໂອນຊັບສິນເຫຼົ່ານັ້ນຈາກ ຟຟລ ໃຫ້ ບໍລິສັດ ໃນວັນກ່ອນໜ້າ ຫຼື ໃນວັນ COD ຫຼື ວັນທີທີ່ທັງສອງຝ່າຍຕົກລົງເຫັນດີເປັນເອກະພາບຮ່ວມກັນ (ຕາມແຕ່ລະກໍລະນີ).

ບໍລິສັດຄາດວ່າ ວັນກ່ອນໜ້າ ຫຼື ໃນວັນ COD ຫຼື ວັນທີທີ່ທັງສອງຝ່າຍຕົກລົງເຫັນດີເປັນເອກະພາບຮ່ວມກັນ (ຕາມແຕ່ລະກໍລະນີ) ກ່ຽວກັບຊັບສິນທີ່ນຳໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ແຕ່ລະຢ່າງ, ບໍລິສັດຈະຮັບໂອນຄວາມເປັນເຈົ້າ ຂອງຈາກ ຟຟລ, ໂດຍອີງຕາມການອະນຸມັດຂອງຜູ້ຖືຮຸ້ນໃນບໍລິສັດ ແລະ ລັດຖະບານ, ລວມທັງພາກສ່ວນທີ່ກ່ຽວຂ້ອງໃຫ້ມີການ ຕົກລົງເຫັນດີໃນການຈັດສັນຊັບສິນຂອງ ຟຟລ. ໃນການພິຈາລະນາການຮັບໂອນຊັບສິນແຕ່ລະຢ່າງ, ບໍລິສັດອາດຈະຊຳລະໂດຍ ເງິນສົດ ຫຼື ອາດຈະອອກຮຸ້ນໃໝ່ໃຫ້ ຟຟລ. ພ້ອມດຽວກັນນັ້ນ, ບໍລິສັດມີຄວາມຫວັງວ່າຈະໄດ້ເຊັນ PPA ກັບ ຟຟລ ແລະ ເຊັນ CA ກັບລັດຖະບານກ່ຽວຊັບສິນທີ່ນຳໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ແຕ່ລະຢ່າງ ຕາມຂໍ້ກຳນົດເຊັ່ນດຽວກັນກັບທີ່ໄດ້ຕົກລົງ ໄວ້ໃນໂຄງການ IPPs ອື່ນ.

ລາຍລະອຽດລຸ່ມນີ້ແມ່ນການສະຫຼຸບຊັບສິນທີ່ຊື້ມາຈາກ ຟຟລ.

ຕາຕະລາງ 4.7: ຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ (ເປັນ ເຈົ້າຂອງທັງໝົດ)

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດຕາມການ ຕິດຕັ້ງ (MW)	COD	ຕະຫຼາດເປົ້າໝາຍ
1	ຫ້ວຍລຳພັນໃຫຍ່	ເຊກອງ	88,00	2015	ສປປ ລາວ
2	ນ້ຳຫີນບຸນ	ຄຳມ່ວນ	30,00	2016	ສປປ ລາວ
3	ນ້ຳຄານ 2	ຫຼວງພະບາງ	130,00	2016	ສປປ ລາວ
4	ນ້ຳຄານ 3	ຫຼວງພະບາງ	60,00	2016	ສປປ ລາວ
5	ເຊເສັດ 3	ຈຳປາສັກ	24,00	2016	ສປປ ລາວ
6	ນ້ຳຈຽນ 1	ຊຽງຂວາງ	104,00	2016	ສປປ ລາວ
7	ນ້ຳງຶມ 1 Ext DFE	ວຽງຈັນ	80,00	2018	ສປປ ລາວ
8	ນ້ຳງຶມ 1 Ext ໜ່ວຍທີ 6	ວຽງຈັນ	40,00	2018	ສປປ ລາວ
ລວມທັງໝົດ			**556**		

ແຫຼ່ງຂໍ້ມູນ:ຜ-ຟຟລ

ຕາຕະລາງ 4.8: ໂຄງການ IPP ທີ່ ຟຟລ ຖືຮຸ້ນ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ.

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດ ຕາມການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ໄຊຍະບຸລີ (ແມ່ນ້ຳຂອງ)	ໄຊຍະບຸລີ/ຫຼວງພະບາງ	1.285,00	ສປປ ລາວ/ໄທ	ກຳລັງກໍ່ສ້າງ
2	ນ້ຳແບ່ງ	ອຸດົມໄຊ	34,00	ສປປ ລາວ	ກຳລັງກໍ່ສ້າງ
3	ນ້ຳອູ 2	ຫຼວງພະບາງ	120,00	ສປປ ລາວ	ກຳລັງກໍ່ສ້າງ
4	ນ້ຳອູ 5	ຜົ້ງສາລີ	240,00	ສປປ ລາວ	ກຳລັງກໍ່ສ້າງ
5	ນ້ຳອູ 6	ຜົ້ງສາລີ	180,00	ສປປ ລາວ	ກຳລັງກໍ່ສ້າງ
6	ນ້ຳໄພ	ໄຊສົມບຸນ	86,00	ສປປ ລາວ	ກຳລັງກໍ່ສ້າງ
7	ນ້ຳທາ 1	ຫຼວງນ້ຳທາ	168,00	ສປປ ລາວ	ກຳລັງກໍ່ສ້າງ
8	ນ້ຳມັງ 1	ໄຊສົມບຸນ	64,00	ສປປ ລາວ	ກຳລັງກໍ່ສ້າງ
9	ນ້ຳລີກ 1	ວຽງຈັນ	60,00	ສປປ ລາວ	ກຳລັງກໍ່ສ້າງ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດ ຕາມການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
10	ນ້ຳງຽບ 2	ຊຽງຂວາງ	180,00	ສປປ ລາວ	ກຳລັງກໍ່ສ້າງ
11	ເຊກະມານ 3	ເຊກອງ	250,00	ສປປ ລາວ/ຫວຽດນາມ	ກຳລັງກໍ່ສ້າງ
ລວມທັງໝົດ			**2.667,00**		

ແຫຼ່ງຂໍ້ມູນ:ຜ-ຟຟລ

ຕາຕະລາງ 4.9: ໂຄງການ IPPs ຢູ່ພາຍໃຕ້ການດຳເນີນງານໂດຍ ຟຟລ ໃນປະຈຸບັນ

ລ/ດ	ຊື່ຂອງໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດຕາມ ການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ນ້ຳທາ 3	ຫຼວງນ້ຳທາ	1,50	ສປປ ລາວ	
2	ນ້ຳເພົາ	ບໍລິຄຳໄຊ	1,80	ສປປ ລາວ	
3	ນ້ຳລອງ	ຫຼວງນ້ຳທາ	5,00	ສປປ ລາວ	
ລວມທັງໝົດ			**8,30**		

ແຫຼ່ງຂໍ້ມູນ:ຜ-ຟຟລ

ຕາຕະລາງ 4.10 ແຜນການລົງທຶນໃນບັນດາໂຄງການໄຟຟ້າອື່ນ

ລ/ດ	ຊື່ໂຄງການ	ທີ່ຕັ້ງ(ແຂວງ)	ກຳລັງຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ນ້ຳຍອນ	ບໍ່ແກ້ວ	2,40	ສປປ ລາວ	
2	ນ້ຳເທີນ 2	ຄຳມ່ວນ	1.088,00	ສປປ ລາວ/ໄທ	
3	ຕາດສະແລັນ	ສະຫວັນນະເຂດ	3,20	ສປປ ລາວ	
4	ເຊນ້ຳນ້ອຍ1	ອັດຕະປື	14,80	ສປປ ລາວ	
5	ເຊກະມານ 1	ອັດຕະປື	322,00	ສປປ ລາວ/ຫວຽດນາມ	ກຳລັງກໍ່ສ້າງ
6	ນ້ຳຊຶມ	ຫົວພັນ	9,00	ສປປ ລາວ	ກຳລັງກໍ່ສ້າງ
7	ຫົງສາ ລິກໄນ	ໄຊຍະບຸລີ	1.878,00	ສປປ ລາວ	ກຳລັງກໍ່ສ້າງ
8	ເຊປຽນ-ເຊນ້ຳນ້ອຍ	ອັດຕະປື/ຈຳປາສັກ	410,00	ສປປ ລາວ	ກຳລັງກໍ່ສ້າງ
9	ນ້ຳງຽບ 3 A	ຊຽງຂວາງ	44,00	ສປປ ລາວ	ກຳລັງກໍ່ສ້າງ
10	ນ້ຳຂອງ 2	ອັດຕະປື	66,00	ສປປ ລາວ	ກຳລັງກໍ່ສ້າງ
11	ນ້ຳງຽບ 1	ບໍລິຄຳໄຊ/ຊຽງຂວາງ	290,00	ສປປ ລາວ/ໄທ	ກຳລັງກໍ່ສ້າງ
12	ນ້ຳຊານ3 A ແລະ 3 B	ຊຽງຂວາງ	114,00	ສປປ ລາວ	ກຳລັງກໍ່ສ້າງ
13	ເຊກະຕຳ	ຈຳປາສັກ	81,30	ສປປ ລາວ	ກຳລັງກໍ່ສ້າງ
14	ຫ້ວຍປ໋	ສາລະວັນ	15,00	ສປປ ລາວ	ກຳລັງກໍ່ສ້າງ
ລວມທັງໝົດ			**4.337,70**		

ແຫຼ່ງຂໍ້ມູນ: ຜ-ຟຟລ

4.3.1 ບັນດາຂໍ້ຜູກພັນ

ປີ 2014 ບໍລິສັດໄດ້ອອກຮຸ້ນກູ້ມູນຄ່າ 6.500 ລ້ານບາດ ເພື່ອລົງທຶນຊື້ເຂື່ອນໄຟຟ້າໂຄງການ IPP. ເດືອນ ກຸມພາ ປີ 2015, ທຶນສ່ວນໜຶ່ງທີ່ໄດ້ຮັບຈາກການອອກຮຸ້ນກູ້ປີ 2014 ແມ່ນຖືກນຳໃຊ້ເພື່ອຊື້ຮຸ້ນ 15 ສ່ວນຮ້ອຍ ຂອງ ບໍລິສັດເຂື່ອນນ້ຳງື່ມ 5 (IPP) ຈາກ ຟຟລ. ສ່ວນທີ່ຍັງເຫຼືອຈາກການອອກຮຸ້ນກູ້ດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ເຂົ້າໃນການຊື້ເຂື່ອນ ດັ່ງລຸ່ມນີ້:

ຕາຕະລາງ 4.11: ລາຍການເຂື່ອນຜະລິດໄຟຟ້າ ທີ່ຈະຕ້ອງຊື້ ໂດຍໃຊ້ທຶນຈາກການອອກຮຸ້ນກູ້

ເຂື່ອນໄຟຟ້າ	ສັດສ່ວນການຖືຮຸ້ນ	ທີ່ຕັ້ງ	ກຳລັງການຜະລິດ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ(GWh p.a.)	COD
ເປັນເຈົ້າຂອງທັງໝົດ					
ຫ້ວຍລຳພັນໃຫຍ່	100%	ເຊກອງ	88,0	500,0	2015
ນ້ຳຄານ 2	100%	ຫຼວງພະບາງ	130,0	558,0	2015
ນ້ຳຄານ 3	100%	ຫຼວງພະບາງ	60,0	249,5	2016
ນ້ຳສະນາ	100%	ວຽງຈັນ	14,0	49,5	2014
ລວມ			**292,0**	**1.357,0**	
ໂຄງການ IPPs ທີ່ ຟຟລ ຖືຮຸ້ນ					
ນ້ຳລອງ	20%	ຫຼວງນ້ຳທາ	1,0	37,0	2015
ນ້ຳອຸ 2	15%	ຜົ້ງສາລີ	18,0	546,0	2017
ນ້ຳອຸ 5	15%	ຜົ້ງສາລີ	36,0	1.049,0	2017
ນ້ຳອຸ 6	15%	ຜົ້ງສາລີ	27,0	739,0	2017
ລວມ			**82,0**	**2.371,0**	
ລວມທັງໝົດ			**374,0**	**3.728,0**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ບໍລິສັດໄດ້ເຊັນ MOU ກັບ ຟຟລ ເພື່ອຊື້ຊັບສິນ ແລະ ຮຸ້ນ ລວມທັງຈະເຊັນສັນຍາການໂອນທີ່ກ່ຽວຂ້ອງໃນອະນາຄົດ

4.3.2 ການນຳໃຊ້ລາຍຮັບຈາກການຂາຍຮຸ້ນ

ສາຍເຫດຂອງການເພີ່ມທຶນໃນຄັ້ງນີ້ ແມ່ນເພື່ອຕອບສະໜອງຄວາມສະດວກໃຫ້ກັບແຜນການດຳເນີນທຸລະກິດຂອງບໍລິສັດໃນໄລຍະຍາວເພື່ອ: (i) ຮັກສາສ່ວນແບ່ງທາງການຕະຫຼາດຂອງຕົນ; (ii) ຮັກສາອັດຕາການເຕີບໂຕຂອງບໍລິສັດ; (iii) ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າຂອງ ສປປ ລາວ ແລະ ການສົ່ງອອກໃນອະນາຄົດ.

ເພື່ອຕອບສະໜອງໃນການກໍ່ສ້າງເຂື່ອນໄຟຟ້າທີ່ບໍ່ສາມາດດຳເນີນການໃນໄລຍະເວລາອັນສັ້ນໄດ້, ບໍລິສັດຈຳເປັນຕ້ອງມີການລະດົມທຶນ ເພື່ອອຳນວຍຄວາມສະດວກໃນການເຂົ້າໄປຊື້ກິດຈະການຈາກ ຟຟລ ແລະ ບໍລິສັດມີແຜນການຈະລົງທຶນໂດຍກົງຈາກການເພີ່ມທຶນໃນຄັ້ງນີ້. ເພື່ອເຮັດໃຫ້ ສປປ ລາວມີໄຟຟ້າໃຊ້ຢ່າງພຽງພໍຕາມແຜນການຂອງລັດຖະບານທີ່ວາງໄວ້ໃນປີ 2019 - 2020. ການລະດົມທຶນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການຊື້ກິດຈະການດັ່ງນີ້:

(i) ຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງພຽງຜູ້ດຽວ;

(ii) ໂຄງການ IPPs ທີ່ ຟຟລ ຖືຮຸ້ນ;

(iii) ການລົງທຶນໂດຍກົງຂອງບໍລິສັດໃນໂຄງການໄຟຟ້າອື່ນໆ;

(iv) ໃຊ້ເປັນທຶນໝຸນວຽນໃນບໍລິສັດ.

ໂດຍທີ່ (i)-(iii) ໃນຂ້າງເທິງນີ້ ອາດຮຽກລວມກັນວ່າ "ການບໍລິຫານຊັບສິນ" (Portfolio of Assets)

ສັນຍາໂອນຊັບສິນທີ່ກ່ຽວຂ້ອງ ຈະຕ້ອງໄດ້ເຊັນໂດຍບໍລິສັດ ແລະ ຟຟລ ເພື່ອບັນລຸເປົ້າໝາຍ ຂອງ COD ຂອງບັນດາຊັບສິນ ຫຼື ຮຸ້ນຂອງ ຟຟລ ຫຼື ບັນດາໂຄງການ IPPs ທີ່ກ່ຽວຂ້ອງລຸ່ມນີ້ ຫຼື ຕາມວັນທີທີ່ທັງສອງຝ່າຍໄດ້ຕົກລົງເຫັນດີຮ່ວມກັນຢ່າງເປັນລາຍລັກອັກສອນ, ຕາມແຕ່ລະກໍລະນີ.

ລາຍລະອຽດຂອງການບໍລິຫານຊັບສິນມີດັ່ງນີ້:

ຕາຕະລາງ 4.12: ການບໍລິຫານຊັບສິນ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ສັດສ່ວນ ການຖືຮຸ້ນ	ກຳລັງການ ຜະລິດ (MW)	ແຜນການຕະຫຼາດ	ໝາຍເຫດ	ປີທີ່ຄາດວ່າຈະໂອນ
ຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງພຽງຜູ້ດຽວ							
1	ນ້ຳຈຽນ 1	ຊຽງຂວາງ	100%	104,0	ສປປ ລາວ	ກຳລັງກໍ່ສ້າງ	2016
2	ນ້ຳຫົ້ມບຸນ	ຄຳມ່ວນ	100%	30,0	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊເສັດ 3	ຈຳປາສັກ	100%	24,0	ສປປ ລາວ	ກຳລັງກໍ່ສ້າງ	2016
4	ນ້ຳງື່ມ 1 Ext DFE	ວຽງຈັນ	100%	80,0	ສປປ ລາວ	ກຳລັງກໍ່ສ້າງ	2018
5	ນ້ຳງື່ມ 1 Ext ໜ່ວຍທີ່ 6	ວຽງຈັນ	100%	40,0	ສປປ ລາວ	ຢູ່ລະຫວ່າງການສຶກສາ ຄວາມເປັນໄປໄດ້	2018
	ລວມ			**278,0**			
ໂຄງການ IPP ທີ່ ຟຟລ ຖືຮຸ້ນ							
1	ນ້ຳງຽບ 2	ຊຽງຂວາງ	10%	18,0	ສປປ ລາວ	ກຳລັງກໍ່ສ້າງ	2015
2	ນ້ຳແບ່ງ	ອຸດົມໄຊ	20%	6,8	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊກະມານ 3	ເຊກອງ	15%	37,5	ສປປ ລາວ	ກຳລັງກໍ່ສ້າງ	2015
4	ນ້ຳລີກ 1	ວຽງຈັນ	10%	6,0	ສປປ ລາວ	ກຳລັງກໍ່ສ້າງ	2016
5	ນ້ຳມ້ຽ 1	ບໍລິຄຳໄຊ	10%	6,4	ສປປ ລາວ	ກຳລັງກໍ່ສ້າງ	2016
6	ນ້ຳທາ 1	ຫຼວງນ້ຳທາ/ບໍ່ແກ້ວ	20%	33,6	ສປປ ລາວ	ກຳລັງກໍ່ສ້າງ	2017
	ລວມ			**108,3**			
ການລົງທຶນໂດຍກົງຂອງບໍລິສັດ ໃນໂຄງການໄຟຟ້າອື່ນໆ							
1	ນ້ຳພູນ	ໄຊຍະບູລີ	51%	30,6	ສປປ ລາວ	ຢູ່ລະຫວ່າງການ ພັດທະນາໂຄງການ ຕາມ PDA	2018
2	ນ້ຳບີ	ເຊກອງ	80%	104,0	ສປປ ລາວ	ຢູ່ລະຫວ່າງການສຶກສາ ຄວາມເປັນໄປໄດ້	2018
ລວມ				**134,6**			
ລວມທັງໝົດ				**520,9**			

ແຫຼ່ງຂໍ້ມູນ: ຜ-ຟຟລ

4.4. ແຜນການ ແລະ ນະໂຍບາຍຂອງລັດຖະບານ

ແຜນການ ແລະ ນະໂຍບາຍຂອງລັດຖະບານລາວ ຕໍ່ຂະແໜງພະລັງງານແມ່ນມີຄວາມຊັດເຈນ ແລະ ໄດ້ມີການຜັນຂະຫຍາຍຢ່າງວ່ອງໄວດັ່ງລາຍລະອຽດລຸ່ມນີ້:

(i) ຂະຫຍາຍກຳລັງການຜະລິດ, ການສ້າງສາຍສົ່ງ, ການກະຈາຍກະແສໄຟຟ້າ ແລະ ພັດທະນາເຄືອຂ່າຍ ໃຫ້ທົ່ວເຖິງໃນຂອບເຂດທົ່ວປະເທດບໍ່ໃຫ້ຫຼຸດ 90 ສ່ວນຮ້ອຍ ໃນປີ 2020;

(ii) ເພີ່ມລາຍຮັບໃຫ້ລັດຖະບານໃນການສົ່ງອອກໄຟຟ້າຈາກການລົງທຶນໃນໂຄງການ IPP ແລະ ເຮັດໃຫ້ ປະເທດເພື່ອນບ້ານມີໝັ້ນໃຈຕໍ່ການສົ່ງອອກກະແສໄຟຟ້າຈາກ ສປປ ລາວ ດ້ວຍການສະໜັບສະໜຸນ ໃຫ້ຜູ້ຜະລິດພາກເອກະຊົນດຳເນີນການໄດ້;

(iii) ການສົ່ງເສີມການເພີ່ມກຳລັງສາຍສົ່ງ 500 kV ໃນບັນດາປະເທດລຸ່ມແມ່ນ້ຳຂອງ (GMS) ເພື່ອ ພັດທະນາລະບົບກະແສໄຟຟ້າ ຂອງ ສປປ ລາວ ແລະ ບັນດາປະເທດໃກ້ຄຽງ .

ຕາມການສົ່ງອອກກະແສໄຟຟ້າຂອງ ສປປ ລາວ ຫາກໍ່ໄດ້ຮັບການພັດທະນາເມື່ອບໍ່ດົນມານີ້. ປະຈຸບັນນີ້ ສປປ ລາວໄດ້ເຊັນ MOU ກັບປະເທດໄທ ແລະ ຫວຽດນາມ, ລວມເຖິງໄດ້ຮ່ວມມືກັບປະເທດກຳປູເຈຍ ແລະ ຈີນໃນການສະໜອງ ກະແສໄຟຟ້າຜ່ານໂຄງການ IPPs ທີ່ຕັ້ງຢູ່ ສປປ ລາວ. ບັນດາ MOU ແລະ ສັນຍາທີ່ໄດ້ຮັບການລົງນາມໂດຍລັດຖະບານລາວມີ ດັ່ງນີ້:

(i) ລັດຖະບານຂອງລາຊາອະນາຈັກໄທເພື່ອສະໜອງໄຟຟ້າ 7.000 MW ຮອດທ້າຍປີ 2015 ແລະ ຍັງ ຈະຕ້ອງໄດ້ມີການພິຈາລະນາເພີ່ມເຕີມ ເຖິງ 12.000 MW;

(ii) ລັດຖະບານຂອງ ຫວຽດນາມ ເພື່ອສະໜອງໄຟຟ້າ 5.000 MW ຮອດປີ 2020; ແລະ


(iii) ລົງນາມຮ່ວມກັບໜ່ວຍງານດ້ານໄຟຟ້າຂອງກຳປູເຈຍເພື່ອຕອບສະໜອງໄຟຟ້າ 2.000 MW ຮອດປີ 2020;

ລັດຖະບານລາວຍັງໄດ້ປະກາດແຜນການສະໜອງດ້ານການເງິນຕໍ່ໂຄງການເຂື່ອນໄຟຟ້າຂະໜາດໜ້ອຍ ແລະ ຂະໜາດກາງ ນອກຈາກນັ້ນຍັງໄດ້ສຶກສາລະບົບສາຍສົ່ງໂດຍຜ່ານແຫຼ່ງພະລັງງານທີ່ສ້າງຂຶ້ນໃໝ່.

4.5 ອຸດສະຫະກຳພະລັງງານໄຟຟ້າ

ຄວາມຕ້ອງການໄຟຟ້າໃນ ສປປ ລາວ ແມ່ນມີອັດຕາຂະຫຍາຍຕົວຢ່າງວ່ອງໄວໃນໄລຍະທົດສະວັດທີ່ຜ່ານມາ. ອັດຕາການຊົມໃຊ້ໄຟຟ້າພາຍໃນປະເທດໄດ້ເພີ່ມຂຶ້ນຈາກ 2.228,15 GWh ໃນປີ 2010 ເຖິງ 3.380,96 GWh ໃນປີ 2013, ຫຼື 13,9 ສ່ວນຮ້ອຍ CAGR. ປະລິມານຄວາມຕ້ອງການນຳໃຊ້ໄຟຟ້າສູງສຸດ (Peak Load) ໃນໄລຍະ 2010 - 2013 ແມ່ນເພີ່ມຂຶ້ນຈາກ 475,78 MW ເຖິງ 649,13 MW. ຫຼື 10,9 ສ່ວນຮ້ອຍ CAGR. ໂດຍປັດໃຈຫຼັກໃນການຍູ້ດັນອັດຕາ ດັ່ງກ່າວແມ່ນເປັນຜົນມາຈາກການຂະຫຍາຍຕາໜ່າງໄຟຟ້າໃຫ້ປະຊາຊົນໃນເຂດຊົນນະບົດ ລວມໄປເຖິງການຂະຫຍາຍຕົວໃນພາກ ອຸດສາຫະກຳ ແລະ ຄວາມຕ້ອງການໃນພາກທຸລະກິດ ມີການເພີ່ມທະວີຢ່າງສູງໃນການຊົມໃຊ້ກະແສໄຟຟ້າຈາກບັນດາໂຄງການບໍ່ ແຮ່, ໂຮງຈັກໂຮງງານ ແລະ ພາກສ່ວນທຸລະກິດ.

ຮູບ 4.3: ປະຫວັດຄວາມຕ້ອງການໄຟຟ້າສູງສຸດແຕ່ປີ 2010 - 2013



ແຫຼ່ງຂໍ້ມູນ: ສະຖິຕິ ປີ 2013 ຂອງ ຟຟລ

ບໍລິສັດຄາດວ່າຄວາມຕ້ອງການຊົມໃຊ້ກະແສໄຟຟ້າພາຍໃນປະເທດຍັງຈະສືບຕໍ່ເພີ່ມຂຶ້ນເລື້ອຍໆ. ຈາກສາຍເຫດດັ່ງກ່າວນີ້ໂຄງການຂະຫຍາຍຕາໜ່າງໄຟຟ້າຂອງລັດຖະບານລາວໄປສູ່ຊຸມຊົນບົດຍັງເປັນສິ່ງຈຳເປັນ. ໃນຂະນະດຽວກັນ ມາດຕະຖານການຄອງຊີບຂອງປະຊາຊົນລາວກໍ່ໄດ້ຮັບການປັບປຸງ ແລະ ຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ ສະນັ້ນແນ່ນອນວ່າຄວາມຕ້ອງການໃນການຊົມໃຊ້ກະແສໄຟຟ້າຂອງປະຊາຊົນກໍ່ເພີ່ມຂຶ້ນເຊັ່ນກັນ. ເປົ້າໝາຍຂອງລັດຖະບານລາວແມ່ນຢາກໃຫ້ປະຊາຊົນກວ່າ 85 ສ່ວນຮ້ອຍ ມີກະແສໄຟຟ້າຊົມໃຊ້ໃນປີ 2015 ແລະ 90 ສ່ວນຮ້ອຍໃນປີ 2020. ການເຕີບໂຕຂອງພາກອຸດສາຫະກຳ ແລະ ທຸລະກິດກໍ່ມີຄວາມຕ້ອງການເພີ່ມຂຶ້ນເຊັ່ນດຽວກັນ.

4.5.1 ການຊົມໃຊ້ພະລັງງານພາຍໃນປະເທດແບ່ງຕາມປະເພດຜູ້ຊົມໃຊ້

ບໍລິສັດໄດ້ຂາຍພະລັງງານໄຟຟ້າທີ່ຜະລິດໄດ້ທັງໝົດໃຫ້ກັບ ຟຟລ ເຊິ່ງເປັນການຂາຍໃຫ້ຕະຫຼາດພາຍໃນໂດຍກົງ. ຟຟລ ໄດ້ແບ່ງປະເພດຂອງຜູ້ຊົມໃຊ້ໄຟຟ້າອອກເປັນ 8 ກຸ່ມ (ອີງຕາມອັດຕາຄ່າໄຟຟ້າທີ່ແຕກຕ່າງກັນ) (i) ທີ່ຢູ່ອາໄສ; (ii) ພາກທຸລະກິດ; (iii) ພາກບັນເທີງ; (iv) ສຳນັກງານຂອງລັດຖະບານ; (v) ພາກຊົນລະປະທານ; (vi) ອົງການຈັດຕັ້ງສາກົນ ,(vii) ພາກອຸດສະຫະກຳ; ແລະ (viii) ພາກທຸລະກິດການສຶກສາ ແລະ ກິລາ. ເພື່ອເຮັດໃຫ້ໂຄງການດຳເນີນງານດ້ານພະລັງງານໄຟຟ້າຂອງລັດຖະບານລາວປະສົບຜົນສຳເລັດ ແລະ ເພື່ອຮອງຮັບອັດຕາການຂະຫຍາຍຕົວໃນພາກອຸດສາຫະກຳ ແລະ ທຸລະກິດທີ່ນັບມື້ຈະສູງຂຶ້ນ ແລະ ຈຳນວນຂອງຜູ້ຊົມໃຊ້ໃນແຕ່ລະພາກສ່ວນກໍ່ໄດ້ເພີ່ມຂຶ້ນເຊັ່ນດຽວກັນລະຫວ່າງປີ 2010 ເຖິງ 2013.

ຕາຕະລາງ 4.13: ສະຖິຕິການຊົມໃຊ້ໄຟຟ້າແຕ່ລະກຸ່ມຜູ້ຊົມໃຊ້

ກຸ່ມຜູ້ຊົມໃຊ້	ຫົວໜ່ວຍ	2010	%	2011	%	2012	%	2013	%	CAGR
ທີ່ຢູ່ອາໄສ	GWh	942,6	42,3%	1.004,1	41,8%	1,161.0	40,4%	1.278,4	37,8%	10,7%
ພາກທຸລະກິດ	GWh	584,4	26,2%	598,7	25,0%	796,7	27,7%	733,0	21,7%	7,8%
ພາກບັນເທີງ	GWh	8,0	0,4%	7,8	0,3%	8,8	0,3%	9,2	0,3%	4,8%

ກຸ່ມຜູ້ຊົມໃຊ້	ຫົວໜ່ວຍ	2010	%	2011	%	2012	%	2013	%	CAGR
ສຳນັກງານພາກລັດຖະບານ	GWh	145,8	6,5%	149,1	6,2%	173,9	6,1%	189,1	5,6%	9,1%
ພາກຊົນລະປະທານ	GWh	42,5	1,9%	46,2	1,9%	39,5	1,4%	35,2	1,0%	-6,1%
ອົງການຈັດຕັ້ງສາກົນ	GWh	10,3	0,5%	9,4	0,4%	10,4	0,4%	10,5	0,3%	0,5%
ພາກອຸດສະຫະກຳ	GWh	494,6	22,2%	584,1	24,3%	680,9	23,7%	1,118,2	33,1%	31,2%
ພາກການສຶກສາ ແລະ ກິລາ	GWh	-	n/a	-	n/a	3,0	0,1%	7,4	0,2%	144,9%
ລວມທັ້ງໝົດ	**GWh**	**2.228,2**	**100,0%**	**2.399,4**	**100,0%**	**2.874,2**	**100,0%**	**3.381,0**	**100,0%**	**13,9%**

ແຫຼ່ງຂໍ້ມູນ: ສະຖິຕິ ປີ 2013 ຂອງ ຟຟລ

4.5.2 ການດຳເນີນງານ ທີ່ເປັນອິດສະຫຼະ ແລະ ມີຜົນກຳໄລ

ຕາມປົກກະຕິແລ້ວ, ຟຟລ ມີບົດບາດສຳຄັນໃນການປະຕິບັດນະໂຍບາຍດ້ານພະລັງງານຂອງຊາດ, ເນື່ອງຈາກວ່າ ຟຟລ ເປັນຂະແໜງທີ່ສ້າງຂຶ້ນເພື່ອວັດຖຸປະສົງໃນການຕອບສະໜອງນະໂຍບາຍລັດຖະບານລາວ. ດັ່ງນັ້ນ, ຟຟລ ຈຶ່ງຖືກກຳນົດໃຫ້ເປັນຜູ້ສະໜອງພະລັງງານໄຟຟ້າບາງໂຄງການຂອງລັດຖະບານໂດຍບໍ່ຫວັງຜົນກຳໄລ. ນັບຕັ້ງແຕ່ບໍລິສັດໄດ້ຫັນເປັນມະຫາຊົນ, ບໍລິສັດເອງບໍ່ໄດ້ມີພັນທະ ແລະ ຄວາມຮັບຜິດຊອບໃນການປະຕິບັດນະໂຍບາຍອີກຕໍ່ໄປ

4.5.3 ການບໍລິຫານຊັບສິນ ແລະ ທຶນກູ້ຢືມເຂົ້າໃນໂຄງການຂອງບໍລິສັດໃຫ້ມີປະສິດທິພາບ

ຊັບສິນຂອງບໍລິສັດໃນປະຈຸບັນ (ຊັບສິນທີ່ບໍລິສັດເປັນເຈົ້າຂອງແຕ່ພຽງຜູ້ດຽວ ແລະ ຖືຮຸ້ນໃນໂຄງການ IPPs) ແມ່ນຢູ່ໃນຄວາມຮັບຜິດຊອບຂອງບໍລິສັດໂດຍກົງ ສະນັ້ນຈຶ່ງເຮັດໃຫ້ມີທຶນໝຸນວຽນທີ່ພຽງພໍ. ບໍ່ພຽງແຕ່ເທົ່ານັ້ນ, ຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າຢູ່ພາຍໃນ ແລະ ຕ່າງປະເທດເປັນສິ່ງຜັກດັນໃຫ້ບໍລິສັດຂະຫຍາຍຕົວ ແລະ ເຮັດໃຫ້ໂຄງສ້າງດ້ານລາຍຮັບຂອງບໍລິສັດກໍ່ເພີ່ມຂຶ້ນ. ສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ຖານະຂອງບໍລິສັດມີຄວາມໜ້າເຊື່ອຖື ແລະ ສາມາດເຂົ້າເຖິງແຫຼ່ງເງິນທຶນເພື່ອມາພັດທະນາໂຄງການຂອງບໍລິສັດ.

ບໍລິສັດມີແຜນການທີ່ຈະນຳໃຊ້ແຫຼ່ງທຶນໃນຮູບແບບເງິນກູ້ຢ່າງລະມັດລະວັງເພື່ອໃຫ້ເກີດຜົນຕອບແທນໃນໂຄງການຂອງບໍລິສັດເດີນໜ້າຕໍ່ໄປໄດ້ ແລະ ເພື່ອເຮັດໃຫ້ອັດຕາສ່ວນໜີ້ສິນຕໍ່ທຶນມີຄວາມເໝາະສົມຕໍ່ບໍລິສັດ, ດັ່ງນັ້ນ ບໍລິສັດຈະນຳໃຊ້ທຶນດັ່ງກ່າວຕາມຄວາມເໝາະສົມ.


4.6 ຂັ້ນຕອນການຜະລິດ

ຄວາມຈຳເປັນໃນການສຶກສາຄວາມເປັນໄປໄດ້ຕໍ່ສາຂາແມ່ນ້ຳຂອງແມ່ນໄດ້ສຶກສາແລ້ວ ເຊິ່ງການສຶກສາດັ່ງກ່າວ ແມ່ນພົວພັນເຖິງໂຄງການເຂື່ອນໄຟຟ້າຂະໜາດໜ້ອຍ ແລະ ໃຫຍ່.

ສ່ວນປະກອບໃນການສ້າງພະລັງງານຈາກໂຄງການເຂື່ອນໄຟຟ້າມີ ພະລັງງານໂນ້ມຖ່ວງ, ພະລັງງານທີ່ເກີດຈາກການເຄື່ອນໄຫວຂອງວັດຖຸ, ພະລັງງານແບບໄດນາມິກ ແລະ ພະລັງງານໄຟຟ້າ ເຊິ່ງພະລັງງານດັ່ງກ່າວນີ້ເປັນສ່ວນໜຶ່ງໃນລະບົບການຜະລິດໄຟຟ້າຂອງບໍລິສັດ.

ນ້ຳທີ່ເກັບຂັງໄວ້ຢູ່ໜ້າເຂື່ອນ ແມ່ນຈະຖືກນຳສົ່ງຜ່ານທໍ່ສົ່ງນ້ຳໃຫ້ໄຫຼໄປຍັງກົງຫັນນ້ຳ. ກະແສນ້ຳຈະເຮັດໃຫ້ກົງຫັນປັ່ນ ເຊິ່ງຈະພາໃຫ້ເກີດກະແສໄຟຟ້າຕັດຜ່ານອາກາດໄປຍັງສະໜາມໄຟຟ້າແມ່ເຫຼັກ 3 ເຟດ ທີ່ຜະລິດແຮງໄຟຟ້າໄປຍັງໝໍ້ແປ່ງໄຟຟ້າ. ເພື່ອໃຫ້ໝໍ້ແປ່ງໄຟຟ້າປ່ຽນແປງພະລັງງານຈາກໜ່ວຍພະລິດໄຟຟ້າແຕ່ລະອັນໄປຍັງວົງຈອນໄຟຟ້າອື່ນ, ຫຼັງຈາກນັ້ນໄຟຟ້າແມ່ນກຽມເພື່ອທີ່ຈະນຳສົ່ງໄປຍັງຜູ້ຊົມໃຊ້ສຸດທ້າຍ.

ຮູບ 4.4 ຂະບວນການຜະລິດພະລັງງານໄຟຟ້າ



ແຫຼ່ງຂໍ້ມູນ: ຜ-ຟຟລ

4.7 ການດຳເນີນງານ ແລະ ການບຳລຸງຮັກສາ

ການບຳລຸງຮັກສາສະຖານທີ່ຜະລິດໄຟຟ້າຂອງບໍລິສັດ ເປັນວຽກງານສຳຄັນທີ່ສຸດອັນໜຶ່ງໃນທຸລະກິດຂອງບໍລິສັດ. ການບຳລຸງຮັກສາທີ່ຖືກຕ້ອງ ແລະ ການປະຕິບັດຕາມກຳນົດເວລາການທົດແທນເພື່ອຊ່ອມແປງບຳລຸງຮັກສາໃນທາງປ້ອງກັນ ຈະເຮັດໃຫ້ການດຳເນີນງານມີປະສິດທິພາບສູງຂຶ້ນ ແລະ ຜະລິດໄຟຟ້າໄດ້ຫຼາຍຂຶ້ນ.

ບໍລິສັດໄດ້ດຳເນີນການໃຫ້ມີກຳນົດເວລາບຳລຸງຮັກສາເຂື່ອນໄຟຟ້າຂອງບໍລິສັດ ເພື່ອຫຼຸດຜ່ອນບັນຫາຕິດຂັດໃນການຜະລິດໄຟຟ້າ, ລວມທັງມີການປະສານງານເລື່ອງການຕັດໄຟຟ້າເພື່ອບຳລຸງຮັກສາຕາມເງື່ອນໄຂການຮ້ອງຂໍຂອງລູກຄ້າຂອງບໍລິສັດ.

PPAs ຂອງບໍລິສັດ ໄດ້ຈັດສັນງົບປະມານສຳລັບກຳນົດເວລາໃນການຕັດໄຟຟ້າເພື່ອບຳລຸງຮັກສາ ແລະ ບໍລິສັດ ເອງກໍ່ໄດ້ດຳເນີນການເພື່ອໃຫ້ແນ່ໃຈວ່າຢູ່ໃນຂອບເຂດຂອງມາດຕະການດັ່ງກ່າວ. ບໍລິສັດໄດ້ເບິ່ງແຍງໃຫ້ມີ ພະນັກງານສາຍ ເຕັກນິກ ແລະ ວິສະວະກຳເປັນຈຳນວນຫຼາຍ ເພື່ອໃຫ້ບໍລິການໃນການດຳເນີນງານ ແລະ ບຳລຸງຮັກສາປະຈຳວັນ. ໂດຍທົ່ວໄປແລ້ວ , ບໍລິສັດແມ່ນໄດ້ເກັບຮັກສາສ່ວນປະກອບຫຼັກຂອງເຄື່ອງຈັກ ແລະ ສຳຮອງອາໄຫຼ່ໄວ້ບາງສ່ວນ ເພື່ອປ້ອງກັນ ແລະ ຮັບມືໃນ ກໍລະນີ ທີ່ໄຟຟ້າຕັດ. ນອກຈາກນີ້, ບໍລິສັດມີແຜນການການບຳລຸງຮັກສາຢ່າງເປັນປະຈຳເພື່ອໃຫ້ໝັ້ນໃຈວ່າການຜະລິດເປັນໄປຕາມເປົ້າໝ າຍທີ່ວາງໄວ້. ຂັ້ນຕອນໃນການບຳລຸງຮັກສາມີດັ່ງຕໍ່ໄປນີ້:

(1) ການບຳລຸງຮັກສາ ບັນດາເຄື່ອງຈັກລຸ່ມນີ້ ໂດຍພະນັກງານຂອງພະແນກຜະລິດໄຟຟ້າ ປະຈຳວັນ, ປະຈຳ ເດືອນ ແລະ ປະຈຳປີ:

- ເຄື່ອງປັ່ນໄຟຟ້າ;
- ລະບົບປັບນ້ຳເຢັນ;
- ເຄື່ອງລະບາຍອາກາດ;
- ລະບົບການປັ່ນ;
- ໝໍ້ແປງໄຟຟ້າ;
- ເຄື່ອງຄວບຄຸມໄຟຟ້າແຮງກາງ;
- ເຄື່ອງຄວບຄຸມໄຟຟ້າແຮງສູງ;
- ເຄື່ອງຄວບຄຸມລະດັບນ້ຳມັນ;
- ປະຕູຄວບຄຸມນ້ຳລົ້ນ;
- ລະບົບປ້ອງກັນສາຍໄຟ;
- ລະບົບປັບປ່ຽນເຄື່ອງຈັກອັດຕະໂນມັດ (PABX);
- ປະຕູຄວບຄຸມປະລິມານນ້ຳເຂົ້າ;
- ລະບົບປັບອາກາດທີ່ໃຊ້ໃນຫ້ອງ;
- ເຄື່ອງປັ່ນໄຟທີ່ໃຊ້ນ້ຳມັນກາຊ່ອນ;
- ເຄື່ອງຄວບຄຸມປ້ຳນ້ຳ;
- ຫ້ອງ ແລະ ເຄື່ອງວັດແທກລະດັບໄຟ;
- ລະບົບການປ້ອງກັນເຄື່ອງປັ່ນໄຟ;
- ລະບົບຄວບຄຸມການປັ່ນ;
- ລະບົບຄວບຄຸມໄຟຟ້າແຮງຕ່ຳ.

(2) ລາຍການບຳລຸງຮັກສາອຸປະກອນກົນຈັກ ແລະ ການຄວບຄຸມລະດັບນ້ຳປະຈຳວັນ, ປະຈຳເດືອນ ແລະ ປະຈຳ ປີຂອງພະແນກກໍ່ສ້າງມີດັ່ງນີ້:

(2.1) ການບຳລຸງຮັກສາໂຮງໄຟຟ້າ

- ການບຳລຸງຮັກສາທໍ່ສົ່ງນ້ຳຫາເຄື່ອງຈັກ;
- ກວດກາ ແລະ ບັນທຶກຄວາມດັນ, ການໄຫຼ ແລະ ລະດັບຂອງນ້ຳ;
- ກວດກາ ແລະ ບັນທຶກການຕິກຕະກອນ;
- ກວດກາ ແລະ ບັນທຶກການປ່ຽນແປງທິດທາງນ້ຳ;
- ກວກການ້ຳຮົ່ວ;
- ການບຳລຸງຮັກສາທຸ່ນປ້ອງກັນສິ່ງກີດຂວາງ.

(2.2) ບຳລຸງຮັກສາທີ່ພັກ ແລະ ຖະໜົນ

- ສ້ອມແປງ ແລະ ບຳລຸງຮັກສາທີ່ພັກຂອງພະນັກງານ ແລະ ກຳມະກອນ;
- ສ້ອມແປງ ແລະ ບຳລຸງຮັກສາຫ້ອງການ, ຫ້ອງເຄື່ອງຈັກ, ເຮືອນ ແລະ ປ້ອມຍາມຂອງພະນັກງານ ຮັກສາຄວາມປອດໄພ ແລະ ສະໂມສອນ;
- ສ້ອມແປງ ແລະ ບຳລຸງຮັກສາຖະໜົນທີ່ໄປເຖິງທີ່ພັກຂອງພະນັກງານ ແລະ ກຳມະກອນ.

(3) ບຳລຸງຮັກສາອຸປະກອນກົນຈັກ ປະຈຳວັນ,ປະຈຳເດືອນ ແລະ ປະຈຳປີຂອງພະແນກຄວບຄຸມຄຸນນະພາບ

- ທົດສອບ ແລະ ກວດກາການທຳງານຂອງອຸປະກອນ;
- ກວດກາລະດັບນ້ຳໜ້າເຂື່ອນ ແລະ ທ້າຍເຂື່ອນ;
- ທຳຄວາມສະອາດຫ້ອງບັນຊາການ
- ບຳລຸງຮັກສາເຄື່ອງຈັກທີ່ກຳລັງໃຊ້ງານເປັນປະຈຳທຸກໆ ປີ ເຊັ່ນ: ລອກເກຍກະຕຸກ ແລະ ນ້ຳມັນເຊື້ອໄຟ; ປ່ຽນເຄື່ອງຈັກຄວບຄຸມນ້ຳ, ເຄື່ອງຄວບຄຸມອຸນຫະພູມຂອງນ້ຳ; ປິດລະບົບຄວບຄຸມກະແສໄຟໂດຍກົງ.

ນອກຈາກນັ້ນ, ບໍລິສັດໄດ້ກຳນົດເວລາສຳລັບການບຳລຸງຮັກສາສ້ອມແປງໃຫຍ່ ໃນທຸກໆ 10 ປີຕາມການສະເລ່ຍເຄື່ອງຈັກແຕ່ລະປະເພດ ໂດຍເນັ້ນໃສ່ການກວດກາອຸປະກອນຫຼັກ ລວມເຖິງ ອຸປະກອນໄຟຟ້າ ແລະ ອຸປະກອນສົ່ງກະແສໄຟຟ້າຕ່າງໆ (ເຊັ່ນ ເຄື່ອງຜະລິດໄຟຟ້າ,ໃບພັດ, ໃບພັດຄູ່, ໝໍ້ແປງ, ອຸປະກອນສະຖານີໄຟຟ້າອື່ນໆ.) ເຊິ່ງການກວດກາໃຫຍ່ນີ້ຈະມີທັງການສ້ອມແປງ ແລະ ປ່ຽນແທນອຸປະກອນດັ່ງກ່າວ ແລ້ວແຕ່ກໍລະນີ.

4.8 ການປະກັນໄພ

ພາຍໃຕ້ CA, ລັດຖະບານລາວໄດ້ກຳນົດໃຫ້ບໍລິສັດມີນະໂຍບາຍປະກັນໄພ ແລະ ຄຸ້ມຄອງຕະຫຼອດໄລຍະເວລາຂອງການສຳປະທານ. ການປະກັນໄພຂອງບໍລິສັດຢ່າງໜ້ອຍຕ້ອງຄອບຄຸມສິ່ງຕ່າງໆ ດັ່ງນີ້:

(1) ການປະກັນ "ຄ່າຊົດເຊີຍພະນັກງານ" ທີ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ;

(2) ການປະກັນ "ຄວາມຮັບຜິດຊອບຕໍ່ຝ່າຍທີສາມ"; ແລະ

(3) ໂດຍຂຶ້ນກັບຄວາມພໍໃຈຂອງບໍລິສັດໃນຂໍ້ຕົກລົງທາງການຄ້າ ບໍລິສັດອາດຈັດໃຫ້ມີການປະກັນໄພດັ່ງນີ້:

(3.1) "ການປະກັນ "ຄວາມສ່ຽງຕໍ່ຊັບສິນຮອບດ້ານ" ຕໍ່ຄວາມເສຍຫາຍ ຕໍ່ຊັບສິນທີ່ກ່ຽວຂ້ອງກັບໂຄງການເຂື່ອນໄຟຟ້າ (ບົນພື້ນຖານ "ມູນຄ່າປ່ຽນແທນ"); ແລະ

(3.2) ການປະກັນການຢຸດສະງັກຂອງເຄື່ອງຈັກ; ແລະ

(3.3) ການປະກັນ "ການຢຸດສະງັກຂອງທຸລະກິດ" ຖ້າຫາກມີຄວາມຈຳເປັນ ແລະ ເປັນປະໂຫຍດຕໍ່ບໍລິສັດ.

ບໍລິສັດເຊື່ອໝັ້ນວ່າຈະສາມາດຮັກສາການປະກັນໄພທີ່ພຽງພໍ ເພື່ອປ້ອງກັນບໍລິສັດຈາກເຫດການທີ່ອາດຈະເກີດຂຶ້ນ. ຢ່າງໃດກໍ່ຕາມ, ບໍລິສັດກໍ່ບໍ່ສາມາດຮັບປະກັນໄດ້ວ່າການປະກັນໄພຈະຄຸ້ມຄອງພຽງພໍໃນກໍລະນີທີ່ເກີດຜົນກະທົບຕໍ່ຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງບໍລິສັດໃນປະຈຸບັນໜ່ວຍໃດໜຶ່ງ ຫຼື ຫຼາຍໜ່ວຍ.

4.9 ປະເດັນເລື່ອງຄວາມປອດໄພ, ສຸຂະພາບ ແລະ ສິ່ງແວດລ້ອມ (ລຮລ)

ເຖິງວ່າຊັບສິນຂອງບໍລິສັດອາດຈະມີຜົນກະທົບຕໍ່ຄວາມປອດໄພ, ສິ່ງແວດລ້ອມ ແລະ ຄຸນນະພາບຊີວິດ ຂອງຊຸມຊົນອ້ອມຂ້າງ, ເຊິ່ງຄວນໄດ້ຮັບການແກ້ໄຂກ່ອນ ຫຼື ໃນໄລຍະກໍ່ສ້າງ, ບໍລິສັດຍັງໄດ້ໃຊ້ມາດຕະການຕໍ່ໄປນີ້ ເພື່ອຫຼຸດຜ່ອນຄວາມສ່ຽງ ຕໍ່ຄວາມປອດໄພ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງຊຸມຊົນອ້ອມຂ້າງ:

- ປະຕິບັດຕາມມາດຕະການທີ່ກຳນົດໄວ້ໃນປຶ້ມຄູ່ມືການບໍລິຫານຂອງ ລຮລ, ເຊິ່ງປຶ້ມຄູ່ມືດັ່ງກ່າວລະບຸນະໂຍບາຍຂອງ ລຮລ, ແຜນວຽກ ແລະ ແນວທາງປະຕິບັດງານ ລວມທັງຂັ້ນຕອນການກວດກາເພື່ອຮັບປະກັນໃຫ້ການດຳເນີນງານ, ການບຳບັດສິ່ງເສດເຫຼືອ ແລະ ວຽກງານທີ່ກ່ຽວຂ້ອງ ໃຫ້ມີປະສິດທິຜົນຕາມຂໍ້ກຳນົດຂອງ ລຮລ.
- ກະກຽມປຶ້ມຄູ່ມືວຽກງານ ແລະ ແຜນການແກ້ໄຂສະຖານະການສຸກເສີນ, ປະຕິບັດແຜນການຝຶກອົບຮົມ ແລະ ການທົດສອບແຜນການ, ອຸປະກອນ ແລະ ລະບົບເຕືອນໄພ ລວມທັງຮັບປະກັນການປະຕິບັດຕາມປຶ້ມຄູ່ມືຢ່າງເຂັ້ມງວດ.
- ຈັດບັນຊີລາຍຊື່ລະບຽບກົດໝາຍທີ່ມີຜົນບັງຄັບໃຊ້ ແລະ ກຳນົດຜູ້ຮັບຜິດຊອບໃຫ້ຕິດຕາມການປະຕິບັດລະບຽບກົດໝາຍດັ່ງກ່າວ.
- ຕິດຕາມ ແລະ ຮັບປະກັນການປະຕິບັດຕາມປຶ້ມຄູ່ມືຂອງ ລຮລ.

4.10 ຊັບພະຍາກອນມະນຸດ

ນັບແຕ່ວັນສ້າງຕັ້ງ, ການດຳເນີນທຸລະກິດຂອງບໍລິສັດ ແມ່ນບໍ່ເຄີຍຢຸດສະງັກ ໂດຍການຢຸດງານ ຫຼື ການເດີນປະທ້ວງໃດໜຶ່ງ. ບໍລິສັດໄດ້ສັງເກດເຫັນວ່າການພົວພັນລະຫວ່າງບໍລິສັດກັບພະນັກງານ ແມ່ນປະຕິບັດໄດ້ດີ.

ພະນັກງານເປັນໜຶ່ງໃນຊັບສິນທີ່ມີຄວາມສຳຄັນທາງດ້ານຍຸດທະສາດ ແລະ ມີມູນຄ່າຫຼາຍທີ່ສຸດຂອງບໍລິສັດເຊິ່ງເປັນຮາກຖານຂອງຄວາມສຳເລັດ ແລະ ການຂະຫຍາຍຕົວ. ປັດຊະຍາກັບການບໍລິຫານຊັບພະຍາກອນມະນຸດຂອງ

ບໍລິສັດ ແມ່ນມຸ່ງຫວັງເພື່ອສ້າງສະພາບແວດລ້ອມໃນການເຮັດວຽກທີ່ພະນັກງານຂອງບໍ ລິສັດສາມາດເຕີບໃຫຍ່ໃນໜ້າທີ່ວຽກງານ ແລະ ສາມາດພັດທະນາຕົນເອງ ລວມທັງສາມາດປະຕິບັດວຽກງານໄດ້ເຕັມຄວາມສາມາດທີ່ສຸດ. ພະນັກງານທີ່ມີທັກສະທາງດ້ານ ເຕັກນິກ ແລະ ວິດສະວະກຳສູງ ລວມເຖິງທີ່ກ່ຽວຂ້ອງກັບການຜະລິດໄຟຟ້ານັ້ນ ໄດ້ຖືກມອບໂອນມາຍັງບໍລິສັດ ຈາກ ຟຟລ, ເຊິ່ງ ໝາຍຄວາມວ່າບໍລິສັດໄດ້ຮັບປະໂຫຍດຈາກການທີ່ມີຊັບພະຍາກອນມະນຸດໃນພາກການຜະລິດໄຟຟ້າທີ່ດີທີ່ສຸດໃນປະເທດ. ການ ມີຊັບພະຍາກອນມະນຸດທີ່ດີນີ້ ແມ່ນເປັນຂໍ້ໄດ້ປຽບທາງດ້ານຍຸດທະສາດຂອງບໍລິສັດ ເຊິ່ງບໍລິສັດເຊື່ອວ່າຈະຮັບປະກັນການ ຂະຫຍາຍຕົວໃນອະນາຄົດ, ສະຖານະພາບທີ່ໝັ້ນຄົງໃນອຸດສາຫະກຳການຜະລິດໄຟຟ້າ ແລະ ໂອ ກາດໃນການຂະຫຍາຍໄປສູ ທຸລະກິດອື່ນທີ່ກ່ຽວຂ້ອງ.

ບໍລິສັດຕັ້ງໃຈທີ່ຈະສ້າງວັດທະນະທຳທີ່ມຸ່ງໝັ້ນສ້າງຜົນງານຜ່ານລະບົບການຄຸ້ມຄອງຜົນງານ ເຊິ່ງຈະປະເມີນ ຜົນການປະຕິບັດງານ ແລະ ຄວາມອາດສາມາດ ຕະຫຼອດຮອດການຍົກລະດັບພະນັກງານ. ການຍ້ອງຍໍແມ່ນຈະໄດ້ປະຕິບັດຕາມ ຜົນການປະຕິບັດງານຂອງພະນັກງານ. ການຝຶກອົບຮົມທີ່ຈຳເປັນແມ່ນຈະຖືກກຳນົດຕາມຜົນຂອງການປະເມີນລະດັບຄວາມ ສາມາດ ແລະ ວິຊາສະເພາະ. ດັ່ງນັ້ນ, ການພັດທະນາຊັບພະຍາກອນມະນຸດຈຶ່ງໄດ້ຖືກວາງແຜນເພື່ອສະໜັບສະໜູນທິດທາງທຸລະ ກິດແລະ ແຜນແຮງງານຂອງບໍລິສັດ.

5. ຊັບສິນທີ່ໃຊ້ໃນການດຳເນີນງານ

5.1. ຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ

ຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ ແມ່ນເຂື່ອນໄຟຟ້າ ເຊິ່ງມີກຳລັງການຜະລິດຕາມການຕິດຕັ້ງ 387 MW. ບົດສະຫຼຸບຂອງການໂອນຊັບສິນໃຫ້ກັບບໍລິສັດໃນວັນສ້າງຕັ້ງມີລາຍລະອຽດດັ່ງລຸ່ມນີ້.

ຕາຕະລາງ 5.1: ຊັບສິນທີ່ໄດ້ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ

ເຂື່ອນໄຟຟ້າ	ທີ່ຕັ້ງ	ກຳລັງການຜະລິດ (MW)	COD
ພາກກາງ			
ນ້ຳງື່ມ 1	ວຽງຈັນ	155,0	1971
ນ້ຳເລີກ	ວຽງຈັນ	60,0	2000
ນ້ຳມັງ 3	ວຽງຈັນ	40,0	2005
ນ້ຳຊອງ	ວຽງຈັນ	6,0	2012
ພາກໃຕ້			
ເຊເສັດ 1	ສາລະວັນ	45,0	1991
ເຊເສັດ 2	ສາລາວັນ	76,0	2009
ແຊລະບຳ	ຈຳປາສັກ	5,0	1969
ລວມທັງໝົດ		**387,0**	-

ແຫຼ່ງຂໍ້ມູນ: ຜ-ຟຟລ

5.1.1 ເຂື່ອນໄຟຟ້ານ້ຳງື່ມ 1

ນ້ຳງື່ມເປັນແມ່ນ້ຳສາຍສຳຄັນແຫ່ງໜຶ່ງໃນ ສປປ ລາວ. ຈາກການສຶກສາຄວາມເປັນໄປໄດ້, ນ້ຳງື່ມອາດສາມາດກໍ່ສ້າງເຂື່ອນໄຟຟ້າເຊິ່ງມີກຳລັງການຜະລິດໄດ້ເຖິງ 1.600 MW. ເຂື່ອນໄຟຟ້ານ້ຳງື່ມ 1 ໄດ້ກໍ່ສ້າງ ແລະ ເລີ່ມການຂາຍກະແສໄຟຟ້າມາແຕ່ປີ 1971 ໂດຍມີກຳລັງການຜະລິດຕາມການຕິດຕັ້ງ 150 MW. ປີ 2003-2004, ເຂື່ອນໄຟຟ້ານ້ຳງື່ມ 1 ໄດ້ມີການປັບປຸງເຄື່ອງຈັກໜ່ວຍທີ 1 ແລະ ໜ່ວຍທີ 2 ເຊິ່ງໄດ້ເຮັດໃຫ້ກຳລັງການຜະລິດຕາມການຕິດຕັ້ງຂອງເຄື່ອງຈັກເພີ່ມຂຶ້ນໜ່ວຍລະ 25 MW. ໃນປະຈຸບັນ, ເຂື່ອນໄຟຟ້ານ້ຳງື່ມ 1 ມີກຳລັງການຜະລິດຕາມການຕິດຕັ້ງ 155 MW. ເຂື່ອນໄຟຟ້ານ້ຳງື່ມ 1 ຕັ້ງຢູ່ແຂວງວຽງຈັນຫ່າງຈາກນະຄອນຫຼວງວຽງຈັນໄປທາງທິດເໜືອປະມານ 90 ກິໂລແມັດ. ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 1 ໄດ້ແບ່ງອອກເປັນ 3 ໄລຍະດັ່ງລຸ່ມນີ້:

ໄລຍະການກໍ່ສ້າງທີ I

ໄລຍະການກໍ່ສ້າງຂອງເຂື່ອນໄຟຟ້ານ້ຳງື່ມ 1 ຄັ້ງທີ 1 ໄດ້ເລີ່ມໃນປີ 1968 ແລະ ສຳເລັດໃນປີ 1971 ເຊິ່ງມູນຄ່າການລົງທຶນທັງໝົດ 28 ລ້ານໂດລາສະຫະລັດ. ເຂື່ອນໄຟຟ້ານ້ຳງື່ມ 1 ໃນໄລຍະນີ້ປະກອບດ້ວຍເຂື່ອນຊິມັງລ້ວນໆ, ໂຮງໄຟຟ້າເຊິ່ງຕັ້ງຢູ່ເຂື່ອນປະກອບດ້ວຍເຄື່ອງຜະລິດໄຟຟ້າ 2 ໜ່ວຍ, ໜ່ວຍລະ 15 MW ແລະ ຍັງມີສະຖານທີ່ກຽມສຳລັບຕິດຕັ້ງເຄື່ອງຜະລິດໄຟຟ້າເພີ່ມເຕີມອີກ 3 ໜ່ວຍ. ໄຟຟ້າທີ່ຜະລິດໄດ້ຈາກເຄື່ອງຜະລິດໄຟຟ້າຈະຖືກສົ່ງເຂົ້າລະບົບສາຍສົ່ງໄຟຟ້າແຮງສູງຂະໜາດ 115 kV ວົງຈອນດ່ຽວໂດຍຈະສົ່ງຈາກເຂື່ອນໄຟຟ້ານ້ຳງື່ມຫາສະຖານີຍ່ອຍໂພນຕ້ອງທີ່ນະຄອນຫຼວງວຽງຈັນຈົນຮອດເຂົ້າສູ່ລະບົບສາຍສົ່ງແຮງສູງຂອງ EGAT ທີ່ສະຖານີຍ່ອຍໜອງຄາຍ (ປະເທດໄທ)

ໄລຍະການກໍ່ສ້າງທີ II

ໄລຍະການກໍ່ສ້າງຂອງເຂື່ອນໄຟຟ້ານ້ຳງື່ມ 1 ໄລຍະທີ 2 ໄດ້ເລີ່ມກໍ່ສ້າງໃນປີ 1976 ແລະສຳເລັດໃນປີ 1978, ເຊິ່ງມີມູນຄ່າການລົງທຶນທັງໝົດ 49 ລ້ານໂດລາສະຫະລັດ. ໂຄງການກໍ່ສ້າງໃນລະຍະນີ້ປະກອບດ້ວຍ ການຕິດຕັ້ງປະຕູນ້ຳລົ້ນ, ທໍ່ສົ່ງນ້ຳ ແລະ ປະຕູນ້ຳເຂົ້າກົງຫັນໃໝ່, ການຂະຫຍາຍໂຮງໄຟຟ້າຕື່ມ ເພື່ອຮອງຮັບການຕິດຕັ້ງເຄື່ອງຜະລິດໄຟຟ້າຂະໜາດ 40 MW ຕື່ມອີກ 3 ໜ່ວຍ, ປະກອບມີສາຍສົ່ງ ແຮງສູງຂະໜາດ 115 KV ວົງຈອນຄູ່ຂອງຟຟລ ຈາກເຂື່ອນໄຟຟ້ານ້ຳງື່ມ 1 ຫາ ສະຖານີໂພນຕ້ອງທີ່ນະຄອນຫຼວງ ວຽງຈັນຮອດເຂົ້າສູ່ລະບົບສາຍສົ່ງແຮງສູງ ຂອງ EGAT ທີ່ສະຖານີຍ່ອຍອຸດອນ 1 ແລະ 2 (ປະເທດໄທ).

ໄລຍະການກໍ່ສ້າງທີ III

ໄລຍະການກໍ່ສ້າງຂອງເຂື່ອນໄຟຟ້ານ້ຳງື່ມ 1 ໄລຍະທີ 3 ໄດ້ເລີ່ມກໍ່ສ້າງໃນປີ 1983 ແລະ ສຳເລັດໃນປີ 1984, ເຊິ່ງມູນຄ່າການລົງທຶນທັງໝົດ 20 ລ້ານໂດລາສະຫະລັດ. ໄດ້ມີການຕິດຕັ້ງເຄື່ອງຈັກເພີ່ມອີກ 1 ເຄື່ອງທີ່ມີກຳລັງຜະລິດ ຕາມການຕິດຕັ້ງ 40 MW ເພື່ອນຳໃຊ້ພະລັງນ້ຳແລະໂຮງໄຟຟ້າໄດ້ຢ່າງເຕັມຄວາມອາດສາມາດ ເມື່ອຕິດຕັ້ງສຳເລັດ. ພາຍຫຼັງໄລຍະ ການກໍ່ສ້າງທີ III ສຳເລັດ ເຂື່ອນໄຟຟ້ານ້ຳງື່ມ 1 ຈຶ່ງສາມາດຜະລິດພະລັງງານໄຟຟ້າໄດ້ໂດຍສະເລ່ຍ ເຖິງ 865 GWh ຕໍ່ປີ.

ການຜັນນ້ຳຈາກເຂື່ອນນ້ຳຊອງ ແລະ ເຂື່ອນໄຟຟ້ານ້ຳເລິກ

ພາຍຫຼັງໂຄງການເຂື່ອນຜັນນ້ຳຊອງສຳເລັດລົງໃນປີ 1996 ໄດ້ຜັນນ້ຳຊອງເຂົ້າອ່າງເກັບນ້ຳຂອງເຂື່ອນ ໄຟຟ້ານ້ຳງື່ມ 1 ເຮັດໃຫ້ການຜະລິດພະລັງງານໄຟຟ້າໂດຍສະເລ່ຍຂອງເຂື່ອນໄຟຟ້ານ້ຳງື່ມ 1 ເພີ່ມຂຶ້ນເປັນ 995 GWh ຕໍ່ປີ. ນອກຈາກນີ້, ພາຍຫຼັງໂຄງການສ້າງເຂື່ອນໄຟຟ້ານ້ຳເລິກ ສຳເລັດລົງ ໄດ້ເພີ່ມການຜະລິດພະລັງງານໄຟຟ້າໂດຍສະເລ່ຍຂອງເຂື່ອນ ໄຟຟ້ານ້ຳງື່ມ 1 ຂຶ້ນເປັນ 1,025 GWh ຕໍ່ປີ.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້ານ້ຳງື່ມ 1 ໂດຍຫຍໍ້

1. ກຳລັງການຜະລິດ

ກຳລັງການຜະລິດຕາມການຕິດຕັ້ງ	:	155 MW
ຈຳນວນເຄື່ອງຈັກທັງໝົດ	:	5 ໜ່ວຍ 2 ໜ່ວຍ x 17.5 MW 3 ໜ່ວຍ x 40 MW
ພະລັງງານໄຟຟ້າຜະລິດສະເລ່ຍຕໍ່ປີ	:	1.025 GWh/ປີ

2. ອ່າງເກັບນ້ຳ

ເນື້ອທີ່ອ່າງໂຕ່ງນ້ຳ	:	8.460 ກິໂລຕາແມັດ
ລະດັບນ້ຳເຕັມອ່າງ	:	212,30 masl
ລະດັບນ້ຳຕ່ຳສຸດ	:	196,0 masl
ລະດັບໜ້າເຂື່ອນສູງສຸດ	:	213,0 masl
ເນື້ອທີ່ອ່າງເກັບນ້ຳ (ທີ່ El. 212,00)	:	370 ກິໂລຕາແມັດ

	ບໍລິມາດນ້ຳເຕັມອ່າງ	:	7.030 x 10^6 m^3
	ບໍລິມາດນ້ຳໃຊ້ເຂົ້າການຜະລິດ	:	4.700 x 10^6 m^3
3.	**ລະດັບນ້ຳທ້າຍເຂື່ອນ**		
	ລະດັບນ້ຳທ້າຍເຂື່ອນຕ່ຳສຸດ (Q=0)	:	164,0 masl
4.	**ເຂື່ອນ**		
	ປະເພດ	:	ເຂື່ອນຊີມັງ
	ລວງຍາວ	:	468 ແມັດ
	ລວງສູງ	:	70 ແມັດ
	ລວງກ້ວາງ	:	6 ແມັດ
5.	**ປະຕູນ້ຳລົ້ນ**		
	ປະເພດປະຕູ	:	ແບບໂຄ້ງ
	ຈຳນວນ	:	4
	ລວງກ້ວາງ x ລວງສູງ	:	12,5 m x 10,0

5.1.2 ເຂື່ອນໄຟຟ້ານ້ຳຊອງ

ເຂື່ອນຜັນນ້ຳຊອງໄດ້ສຳເລັດລົງ ປີ 1996 ເພື່ອຜັນນ້ຳຈາກສາຍນ້ຳຊອງເຂົ້າອ່າງເກັບນ້ຳຂອງເຂື່ອນໄຟຟ້ານ້ຳງື່ມ 1 ແລະ ໄດ້ຊ່ວຍເພີ່ມການຜະລິດພະລັງງານໄຟຟ້າຂອງເຂື່ອນໄຟຟ້ານ້ຳງື່ມ 1. ປະຈຸບັນ, ໄດ້ມີໂຄງການຕິດຕັ້ງເຄື່ອງຈັກໄຟຟ້າ ຕາມຄອງຜັນນ້ຳ ເພື່ອພັດທະນາເຂື່ອນຜັນນ້ຳຊອງໃຫ້ເປັນເຂື່ອນໄຟຟ້າ, ເຊິ່ງໂຄງການນີ້ໃຊ້ທຶນປະມານ 13 ລ້ານໂດລາສະຫະລັດ. ເຂື່ອນໄຟຟ້ານ້ຳຊອງມີກຳລັງການຜະລິດຕາມການຕິດຕັ້ງ 6 MW ແລະໃນປີ 2013 ມີການຜະລິດພະລັງງານໄຟຟ້າເຖິງ 13.2 GWh . ພະລັງງານທີ່ຜະລິດຈາກເຂື່ອນໄຟຟ້ານ້ຳຊອງຈະສົ່ງເຂົ້າລະບົບ 22 kV ຂອງ ຟຟລ. ຄາດວ່າໂຄງການດັ່ງກ່າວຈະສຳເລັດລົງໃນ ປີ 2012.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້ານ້ຳຊອງ

1.	**ກຳລັງການຜະລິດ**		
	ກຳລັງການຜະລິດຕາມການຕິດຕັ້ງ	:	6 MW
	ຈຳນວນເຄື່ອງຈັກ	:	3 ໜ່ວຍ
			3 ໜ່ວຍ x 2 MW
	ການຜະລິດໄຟຟ້າສະເລ່ຍ	:	13,51 GWh/ປີ
2.	**ອ່າງເກັບນ້ຳ**		
	ເນື້ອທີ່ອ່າງໂຕ່ງນ້ຳ	:	1.330 ກິໂລຕາແມັດ
	ລະດັບນ້ຳເຕັມ	:	219,70 masl

ລະດັບນ້ຳເຕັມປົກກະຕິສູງສຸດ	:	214,50 masl
ໜ້ານ້ຳໃນອ່າງ(ຢູ່ທີ່ El. 214.20)	:	1.030 ກິໂລຕາແມັດ
ຄວາມສາມາດໃນການເກັບນ້ຳ	:	14.400 x 10^6 m^3
ບໍລິມາດນຳໃຊ້ເຂົ້າໃນການຜະລິດ	:	12.600 x 10^6 m^3

3. ລະດັບນ້ຳທ້າຍເຂື່ອນ

ລະດັບນ້ຳທ້າຍເຂື່ອນຕ່ຳສຸດ (Q=0)	:	209 masl

4. ເຂື່ອນ

ປະເພດ	:	ເຂື່ອນດິນຖົມ & ທາງນ້ຳລົ້ນຊິມັງ
ລວງຍາວ	:	75 ແມັດ
ລວງສູງ	:	21 ແມັດ
ລວງກວ້າງ	:	209 ແມັດ

5.1.3 ເຂື່ອນໄຟຟ້ານ້ຳເລີກ

ເຂື່ອນໄຟຟ້ານ້ຳເລີກໄດ້ກໍ່ສ້າງສຳເລັດໃນປີ 2000 ເຊິ່ງມີກຳລັງຜະລິດໄຟຟ້າ 60 MW ປະກອບມີເຄື່ອງຈັກຜະລິດໄຟຟ້າ 2 ໜ່ວຍ ໂດຍມີກຳລັງຜະລິດໜ່ວຍລະ 30 MW. ເຂື່ອນດັ່ງກ່າວຕັ້ງຢູ່ຕອນເທິງຫ່າງຈາກໂຮງໄຟຟ້າປະມານ 10 ກິໂລແມັດ ມີອຸໂມງສົ່ງນ້ຳຍາວ 2.830 ແມັດ, ຖັງຫຼຸດແຮງກະແທກ ແລະ ທໍ່ສົ່ງນ້ຳແບບເປີດໜ້າດິນ ມີຄວາມຍາວ 458 ແມັດຈາກທາງອອກອຸໂມງຫາໂຮງໄຟຟ້າ. ທໍ່ສົ່ງນ້ຳແບບເປີດໜ້າດິນມີເສັ້ນຜ່າສູນກາງ 3,40 ແມັດ. ໄດ້ຜັນນ້ຳຈາກຝາຍນ້ຳປູນເຂົ້າຫາອ່າງເກັບນ້ຳຕື່ມຕາມອຸໂມງເສັ້ນຜ່າສູນກາງ 3,30 ແມັດ ລວງຍາວປະມານ 2.600 ແມັດ.

ຝາຍນ້ຳລົ້ນ (ປະຕູນ້ຳລົ້ນ)

ຝາຍນ້ຳລົ້ນຕົ້ນຕໍແມ່ນຝາຍນ້ຳລົ້ນແບບເປີດ, ເຊິ່ງຢູ່ເບື້ອງຊ້າຍຂອງຕົວເຂື່ອນ, ມີລວງຍາວ 60 ແມັດ ແລະ ສາມາດລະບາຍນ້ຳໄດ້ 2.100 m^3/s. ຝາຍນ້ຳລົ້ນສຳຮອງຕັ້ງຢູ່ຮ່ອມພູທີ່ໃກ້ທີ່ສຸດໄປທາງເບື້ອງຊ້າຍ, ຝາຍນ້ຳລົ້ນດັ່ງກ່າວແມ່ນເພື່ອລະບາຍນ້ຳຊ່ວຍຝາຍນ້ຳລົ້ນຕົ້ນຕໍ,ໃນເວລາຫາກນ້ຳຂຶ້ນສູງສຸດ ໂດຍຝາຍດັ່ງກ່າວສາມາດລະບາຍນ້ຳໄດ້ 1.500 m^3/s.

ສາຍສົ່ງ

ຈາກສະຖານີໄຟຟ້າຍ່ອຍຫາໂຮງໄຟຟ້າ, ກະແສໄຟຟ້າຖືກສົ່ງເຂົ້າສາຍສົ່ງ 115 kV ວົງຈອນດ່ຽວ ຈຳນວນ 3 ສາຍ, ທັງໝົດນີ້ແມ່ນ ຟຟລ ເປັນເຈົ້າຂອງ. ສາຍສົ່ງທີ 1 ແມ່ນຈາກສະຖານີນ້ຳເລີກຫາສະຖານີປາກຊັນມີລວງຍາວ 85 ກິໂລແມັດ ບ່ອນທີ່ສະຖານີຍ່ອຍ 115 kV ຕັ້ງຢູ່ , ສາຍສົ່ງ 115 kV ທີ 2 ແມ່ນຈາກສະຖານີນ້ຳເລີກໂດຍເລາະຕາມແຄມອ່າງນ້ຳງື່ມ, ເຊື່ອມຕໍ່ໂຮງໄຟຟ້ານ້ຳເລີກຫາໂຮງໄຟຟ້ານ້ຳງື່ມ ລວງຍາວ 55 ກິໂລແມັດ ແລະ ສາຍສົ່ງ 115 kV ທີ 3 ແມ່ນຈາກສະຖານີນ້ຳເລີກຫາສະຖານີໂພນສະຫວັນ ໃນແຂວງຊຽງຂວາງ ມີລວງຍາວ 187 ກິໂລແມັດ.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້ານ້ຳເລົກ

ເຂື່ອນໄຟຟ້ານ້ຳເລົກແມ່ນເປັນແບບຫີນຖົມ, ແກນກາງເປັນດິນຖົມ. ຄວາມສູງເໜືອຮ່ອງນ້ຳແມ່ນ 45,5 ແມັດ ມີຄວາມຍາວສັນເຂື່ອນ 800 ແມັດ ແລະ ມີບໍລິມາດເຂື່ອນປະມານ 1.2 mm^3.

1. ອ່າງເກັບນ້ຳ

ລະດັບນ້ຳສູງສຸດ	:	405 m
ລະດັບນ້ຳຕ່ຳສຸດ	:	388 m
ເນື້ອທີ່ອ່າງເກັບນ້ຳ (ລະດັບນ້ຳ ເຕັມສ່ວນ)	:	12,8 km^2
ຄວາມສາມາດເກັບນ້ຳທີ່ໃຊ້ການໄດ້	:	154 x 10^6 mm^3
ຄວາມສາມາດເກັບນ້ຳທີ່ໃຊ້ການບໍ່ໄດ້	:	31 x 10^6 mm^3
ບໍລິມາດນ້ຳລົ້ນອ່າງຕໍ່ປີ	:	517 x 10^6 mm^3
ລວງສູງສຸດທີ	:	182,9 m

2. ເຂື່ອນ

ລວງສູງ	:	45,5 m

3. ລະບົບລະບາຍນ້ຳ

ລວງຍາວອຸໂມງ	:	2.830 m
ຂະໜາດເສັ້ນຜ່າສູນກາງຂອງອຸໂມງ	:	4,90 m
ທໍ່ເຫຼັກສົ່ງນ້ຳ	:	305 m
ທໍ່ສົ່ງນ້ຳເຂົ້າຈັກປັ່ນ (ເປີດໜ້າດິນ)	:	458 m
ກຳລັງການຜະລິດ	:	60 MW
ປະລິມານການລະບາຍນ້ຳສູງສຸດ	:	39 m^3/s

5.1.4 ເຂື່ອນໄຟຟ້ານ້ຳມັງ 3

ເຂື່ອນໄຟຟ້ານ້ຳມັງ 3 ເປັນໂຄງການທີ່ມີຜົນປະໂຫຍດຫຼາຍດ້ານ. ໂຄງການນີ້ ນອກຈາກຈະສາມາດສະໜອງໄຟຟ້າໄດ້ແລ້ວ, ຍັງມີຜົນປະໂຫຍດໃນດ້ານການຊົນລະປະທານ. ເຂື່ອນໄຟຟ້ານ້ຳມັງ 3 ຕັ້ງຢູ່ພູເຂົາຄວາຍ, ແຂວງວຽງຈັນ ຫ່າງຈາກນະຄອນຫຼວງວຽງຈັນໄປທາງທິດເໜືອ ປະມານ 60 ກິໂລແມັດ ແລະ ຫ່າງຈາກເຂື່ອນໄຟຟ້ານ້ຳເລົກໄປທາງຕາເວັນຕົກສຽງໃຕ້ປະມານ 15 ກິໂລແມັດ. ເຂື່ອນໄຟຟ້ານ້ຳມັງ 3 ເປັນໂຄງການເຂື່ອນນ້ຳລົ້ນ. ນ້ຳຈາກສາຍນ້ຳຍອງ (750 masl) ເຊິ່ງເປັນສາຂາໜຶ່ງຂອງນ້ຳມັງທີ່ໄຫຼມາຈາກຈຸດທີ່ຢູ່ສູງກວ່າເຂົ້າອ່າງເກັບນ້ຳ (200 masl). ຄວາມສູງທີ່ແຕກຕ່າງກັນເຖິງ 550 ແມັດ ນີ້ ເຮັດໃຫ້ຜະລິດພະລັງງານໄຟຟ້າໄດ້ເຖິງ 40 MW ໂດຍຜະລິດພະລັງງານ 138 GWh ຫາ 140 GWh ສະເລ່ຍຕໍ່ປີ.

ການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນໃນປີ 1992, ໄດ້ສະເໜີໃຫ້ມີອ່າງເກັບນ້ຳຂະໜາດໃຫຍ່ ເຊິ່ງໄດ້ລວມເອົາອ່າງເກັບນ້ຳຂອງເຂື່ອນອີກແຫ່ງໜຶ່ງທີ່ມີກຳລັງການຜະລິດຕາມການຕິດຕັ້ງ 35 MW. ຕໍ່ມາໄດ້ສຶກສາຄວາມເປັນໄປໄດ້

ອີກໃນປີ 1994, ດ້ວຍຂໍ້ມູນທີ່ແນ່ນອນແລະເພີ່ມຂຶ້ນ ກ່ຽວກັບພູມສັນຖານຂອງ ສປປ ລາວ ຈຶ່ງມີຂໍ້ສະເໜີທີ່ມີຫຼາຍທາງເລືອກ. ເຖິງຢ່າງໃດກໍ່ຕາມການສະຫຼຸບຕອນທ້າຍ ໄດ້ອີງໃສ່ການສຶກສາຄວາມເປັນໄປໄດ້ໃນປີ 2001, ທີ່ໄດ້ສຶກສາຜົນກະທົບຕໍ່ສິ່ງແວດລ້ອມຢ່າງຮອບຄອບ ແລະ ໄດ້ສະເໜີສ້າງອ່າງເກັບນ້ຳຂະໜາດນ້ອຍແລະ ເຂື່ອນພຽງແຫ່ງດຽວສູງ 28 ແມັດ, ຕັ້ງຢູ່ສ່ວນຕົ້ນຂອງນ້ຳຍອງກັບນ້ຳມັງ. ເຂື່ອນທີ່ສະເໜີນີ້ມີເນື້ອທີ່ອ່າງໂຕ່ງ 68 ກິໂລຕາແມັດ ໂດຍຜັນນ້ຳຈາກຫ້ວຍກວາງ ທີ່ເປັນສາຂາຂອງນ້ຳຍອງ ຜ່ານປະຕູນ້ຳ, ອຸໂມງ ແລະ ທໍ່ສົ່ງນ້ຳແຮງດັນສູງເຂົ້າອ່າງເກັບນ້ຳນ້ຳມັງ 3 ເຊິ່ງມີເນື້ອທີ່ອ່າງໂຕ່ງນ້ຳ 14 ກິໂລຕາແມັດ, ພື້ນທີ່ເກັບນ້ຳເຕັມລະດັບ ມີ 10,2 ກິໂລຕາແມັດ, ປ່ອຍນ້ຳໂດຍສະເລ່ຍ 4.19 m^3/s ແລະ ລະບາຍນ້ຳໄດ້ທັງໝົດ 132 km^3/ປີ.

ການກໍ່ສ້າງເຂື່ອນໄຟຟ້ານ້ຳມັງ 3 ແບ່ງເປັນ 2 ໄລຍະ. ມູນຄ່າການກໍ່ສ້າງໄລຍະທີ່ໜຶ່ງໃຊ້ທຶນ 63 ລ້ານໂດລາສະ ຫະລັດ ແລະ ໄລຍະທີ່ສອງໃຊ້ທຶນ 27 ລ້ານໂດລາສະຫະລັດ. ໃນທັງສອງໄລຍະນີ້, 80 ສ່ວນຮ້ອຍຂອງທຶນໄດ້ມາຈາກ Export-Import Bank of China ແລະ ອີກ 20 ສ່ວນຮ້ອຍໄດ້ມາຈາກ ຟຟລ.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້ານ້ຳມັງ 3

1.	**ອ່າງເກັບນ້ຳ**		
	ເນື້ອທີ່ອ່າງໂຕ່ງນ້ຳ	:	68 ກິໂລຕາແມັດ
	ລະດັບນ້ຳສູງສຸດ	:	750 masl
	ລະດັບນ້ຳຕ່ຳສຸດ	:	742 masl
	ຄວາມສາມາດເກັບນ້ຳທີ່ໃຊ້ໄດ້	:	59 x 10^6 m^3
	ບໍລິມາດນຳໃຊ້ເຂົ້າການຜະລິດ	:	44,5 x 10^6 m^3
	ເນື້ອທີ່ອ່າງເກັບນ້ຳ (ລະດັບນ້ຳເຕັມສ່ວນ)	:	10,20 ກິໂລຕາແມັດ
2.	**ເຂື່ອນ**		
	ປະເພດ	:	ຊີມັ້ງເສີມເຫຼັກ
	ລວງສູງ	:	28 ແມັດ
	ລວງຍາວ	:	150,93 ແມັດ
	ລະດັບການເກັບນ້ຳ	:	754 masl
	ປະລິມານນ້ຳລົ້ນ	:	1.030 m^3/s
3.	**ເຂື່ອນດິນກັ້ນຮ່ອມພູ**		
	ລວງສູງ	:	19,9 ແມັດ
	ລວງສູງຂອງເຂື່ອນ	:	755 masl
	ລວງຍາວ	:	435,8 ແມັດ
4.	**ລະບົບລະບາຍນ້ຳ**		
	ອຸໂມງ:		
	ຂະໜາດ	:	1.8 X 2,2 ແມັດ

ລວງຍາວ	:	512 ແມັດ

ທໍ່ສົ່ງນ້ຳ:

ຂະໜາດເສັ້ນຜ່າສູນກາງຂອງອຸໂມງ	:	0,95 - 1,8 ແມັດ
ລວງຍາວຂອງອຸໂມງ	:	3,152 ແມັດ
ປະລິມານການລະບາຍນ້ຳສູງສຸດ	:	9,14 m^3/s
ກຳລັງການຜະລິດ	:	40 MW

5.1.5 ເຂື່ອນໄຟຟ້າເຊເສັດ 1

ເຂື່ອນໄຟຟ້າເຊເສັດ 1 ໄດ້ສະໜອງໄຟຟ້າໃຫ້ແຂວງສາລະວັນ, ຈຳປາສັກ ແລະ ສົ່ງອອກໄຟຟ້າສ່ວນທີ່ເຫຼືອໃຫ້ປະເທດໄທ.

ສປປ ລາວ ໄດ້ຮັບເງິນກູ້ຈາກ ADB ແລະ ທຶນຊ່ວຍເຫຼືອລ້າຈາກ UNDP, ລັດຖະບານຊູແອັດ ແລະລັດຖະບານນອກແອເພື່ອກໍ່ສ້າງໂຄງການນີ້. ເຂື່ອນໄຟຟ້າເຊເສັດ 1 ເປັນເຂື່ອນນ້ຳລົ້ນທີ່ລວງຍາວປະມານ 1.5 ກິໂລແມັດ ດ້ວຍລະດັບແນວເນີນ 157 ແມັດ. ເຂື່ອນປະເພດນີ້ມີຄວາມຈຳກັດໃນການເກັບຮັກສານ້ຳ, ການຜະລິດພະລັງງານໄຟຟ້າຈະຂຶ້ນກັບກະແສນ້ຳໄຫຼຂອງນ້ຳໃນແຕ່ລະວັນ. ຄວາມຖ່ວງຂອງເຂື່ອນສູງ 10 ແມັດໄດ້ສ້າງຂຶ້ນເພື່ອໃຊ້ເປັນອ່າງເກັບນ້ຳ. ຈາກອ່າງເກັບນ້ຳສູ່ໂຮງໄຟຟ້າ, ນ້ຳແລ່ນຜ່ານອຸໂມງໃຕ້ດິນທີ່ຮອງດ້ວຍທໍ່ເຫຼັກເພື່ອໃຫ້ທົນທານຕໍ່ຄວາມດັນສູງຂອງນ້ຳ. ໂຮງໄຟຟ້າຕັ້ງຢູ່ກາງແຈ້ງ ແລະ ປະກອບດ້ວຍໜ່ວຍຈັກປັ່ນໄຟ 5 ໜ່ວຍ, ໃນນີ້ 3 ໜ່ວຍມີກຳລັງການຜະລິດໜ່ວຍລະ 13 MW ແລະ ອີກ 2 ໜ່ວຍມີກຳລັງການຜະລິດໜ່ວຍລະ 3 MW . ທຸກວຽກງານກໍ່ສ້າງໄດ້ດຳເນີນພາຍໃນໄລຍະເວລາດຽວກັນ ແລະ ໄດ້ສຳເລັດໃນປີ 1991 ພາຍຫຼັງໃຊ້ເວລາກໍ່ສ້າງສອງປີເຄິ່ງ.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້າເຊເສັດ 1

1. ອ່າງເກັບນ້ຳ

ເນື້ອທີ່ອ່າງໂຕ່ງນ້ຳ	:	325 km^2
ຄວາມສາມາດເກັບນ້ຳ	:	0,3 x 10^6 m^3
ລະດັບນ້ຳສູງສຸດ	:	482 masl
ລະດັບນ້ຳຕ່ຳສຸດ	:	478 masl

2. ເຂື່ອນ

ລວງສູງຂອງເຂື່ອນ	:	10 m
ລວງຍາວຂອງເຂື່ອນ	:	91 m

3. ລະບົບລະບາຍນ້ຳ

ລວງຍາວຂອງອຸໂມງ	:	436 m

ຂະໜາດເສັ້ນຜ່າສູນກາງຂອງອຸໂມງ	:	3,2 m
ປະລິມານການລະບາຍນ້ຳສູງສຸດ(ລະດັບ 1 ຫຼື 2)	:	2,25 m^3/s
ປະລິມານການລະບາຍນ້ຳສູງສຸດ(ລະດັບ 3, 4 ຫຼື 5)	:	9,5 m^3/s

5.1.6 ເຂື່ອນໄຟຟ້າເຊເສັດ 2

ເຂື່ອນໄຟຟ້າເຊເສັດ 2 ກໍ່ເປັນເຂື່ອນໜຶ່ງທີ່ຕັ້ງຢູ່ທາງພາກໃຕ້ຂອງ ສປປ ລາວ ເຊິ່ງຕັ້ງຢູ່ທີ່ແຂວງສາລະວັນ ແລະ ຈຳປາສັກ ຫ່າງຈາກຕົວເມືອງສາລະວັນປະມານ 35 ກິໂລແມັດ ແລະ ຫ່າງຈາກເຂື່ອນໄຟຟ້າເຊເສັດ 1 ປະມານ 5 ກິໂລແມັດ.

ຟຟລ ແລະ ບໍລິສັດ Norinco ຈາກຈີນໄດ້ເຊັນ MOU ກ່ຽວກັບການພັດທະນາເຂື່ອນໄຟຟ້າພະລັງນ້ຳເຊເສັດ 2 ໃນເດືອນສິງຫາ ປີ 2001. ໃນເດືອນຕຸລາ ປີ 2003, ຟຟລ ໄດ້ຮັບຍົດລາຍງານການອອກແບບຂັ້ນພື້ນຖານ ແລະ ໃນເດືອນມັງກອນ ປີ 2004, ຟຟລ ໄດ້ເຊີນທີ່ປຶກສາຈາກປະເທດນອກເວເພື່ອທົບທວນຍົດລາຍງານການອອກແບບຂັ້ນພື້ນຖານ. ຍົດລາຍງານການອອກແບບຂັ້ນສຸດທ້າຍໄດ້ສຳເລັດລົງໃນເດືອນກັນຍາ ປີ 2005. ໂຄງການໄດ້ເລີ່ມຕົ້ນການກໍ່ສ້າງໃນປີ 2005 ແລະ ໄດ້ສຳເລັດລົງໃນປີ 2009.

ເຂື່ອນໄຟຟ້າເຊເສັດ 2 ປະກອບດ້ວຍເຄື່ອງຈັກຜະລິດໄຟຟ້າ 2 ໜ່ວຍທີ່ມີກຳລັງຜະລິດຕາມການຕິດຕັ້ງ ໜ່ວຍລະ 38 MW ແລະ ຜະລິດພະລັງງານໄຟຟ້າໄດ້ໂດຍສະເລ່ຍ 309 GWh. ນອກຈາກນັ້ນ, ເຂື່ອນໄຟຟ້າເຊເສັດ 2 ແມ່ນເຂື່ອນໄຟຟ້ານ້ຳລົ້ນ ແລະ ຍັງໄດ້ຜັນນ້ຳຈາກຫ້ວຍຕາປຸງເຂົ້າຫາອ່າງເກັບນ້ຳເຊເສັດຕື່ມອີກ.

ໂຄງການໃຊ້ທຶນທັງໝົດປະມານ 135,5 ລ້ານໂດລາສະຫະລັດ. ໃນຈຳນວນເງິນດັ່ງກ່າວ 80 ສ່ວນຮ້ອຍ ຫຼື ປະມານ 108 ລ້ານໂດລາສະຫະລັດ ມາຈາກການໃຫ້ສິນເຊື່ອຂອງທະນາຄານຂາອອກ-ຂາເຂົ້າຂອງຈີນ ແລະ ອີກ 20 ສ່ວນຮ້ອຍ ຫຼື ປະມານ 27 ລ້ານໂດລາສະຫະລັດ ເປັນທຶນສົມທົບຂອງ ຟຟລ.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້າເຊເສັດ 2

1. ພື້ນທີ່ອ່າງເກັບນ້ຳ:

ເນື້ອທີ່ອ່າງໂຕ່ງນ້ຳ	:	392 km^2
ປະລິມານນ້ຳຝົນປະຈຳປີສະເລ່ຍ	:	2.066 mm
ການລະເຫີຍປະຈຳປີສະເລ່ຍ	:	1.188 mm
ລະດັບບັນຈຸນ້ຳປົກກະຕິໃນອ່າງ	:	813 masl
ລະດັບນ້ຳຖ້ວມອ່າງຕາມການອອກແບບ	:	816 masl
ຄວາມສາມາດບັນຈຸລວມ	:	800.000 m^3
ກຳລັງການຜະລິດຕາມການຕິດຕັ້ງ	:	2 x 38 MW

2. ເຂດອ່າງຫ້ວຍຕາປຸງ:

ລະດັບບັນຈຸນ້ຳປົກກະຕິໃນອ່າງ	:	824 masl
ລະດັບນ້ຳຖ້ວມອ່າງຕາມການອອກແບບ	:	826 masl

5.1.7 ເຂື່ອນໄຟຟ້າແຊລະບໍ

ເຂື່ອນໄຟຟ້າແຊລະບໍຕັ້ງຢູ່ ແຂວງຈຳປາສັກຫ່າງຈາກຕົວເມືອງປາກເຊໄປທາງທິດເໜືອ 35 ກິໂລແມັດ. ເຂື່ອນໄຟຟ້າພະລັງນ້ຳແຊລະບໍເປັນເຂື່ອນໄຟຟ້າທຳອິດໃນ ສປປ ລາວ ແລະເປັນເຂື່ອນໄຟຟ້າຂະໜາດນ້ອຍມີກຳລັງຕິດຕັ້ງ 5,04 MW ສາມາດຜະລິດພະລັງງານໄດ້ໂດຍສະເລ່ຍ 25 GWh ຕໍ່ ປີ. ເຂື່ອນໄຟຟ້າແຊລະບໍມີພາລະບົດບາດໃນການຜະລິດ ແລະ ສະໜອງພະລັງງານໄຟຟ້າໃຫ້ແກ່ການພັດທະນາເສດຖະກິດສັງຄົມຕາມແນວ ທາງ ນະໂຍບາຍຂອງລັດຖະບານ.

ການກໍ່ສ້າງແບ່ງອອກເປັນ 2 ໄລຍະດັ່ງນີ້ :

ໄລຍະທີ I : ການກໍ່ສ້າງເລີ່ມຕົ້ນໃນປີ 1966 ແລະສຳເລັດໃນປີ 1970 ປະກອບດ້ວຍເຄື່ອງຈັກຜະລິດໄຟຟ້າ 3 ໜ່ວຍ ເຊິ່ງແຕ່ລະໜ່ວຍມີກຳລັງການຜະລິດຕາມການຕິດຕັ້ງ 850 KVA ແລະ

ໄລຍະທີ II : ການກໍ່ສ້າງເລີ່ມຕົ້ນໃນປີ 1990 ແລະ ສຳເລັດໃນປີ 1994 ປະກອບດ້ວຍ ໂດຍມີເຄື່ອງຈັກໜ່ວຍດຽວ ເຊິ່ງມີກຳລັງການຜະລິດຕາມການຕິດຕັ້ງ 3.530 KVA.

ຂໍ້ມູນທີ່ສຳຄັນດ້ານເຕັກນິກຂອງເຂື່ອນໄຟຟ້າແຊລະບໍ

1. ອ່າງເກັບນ້ຳ:

ເນື້ອທີ່ອ່າງໂຕ່ງນ້ຳ	:	6.360 km^2
ລະດັບນ້ຳສູງສຸດ	:	120,70 masl
ລະດັບນ້ຳຕ່ຳສຸດ	:	118,80 masl

2. ເຂື່ອນ:

ລວງຍາວຂອງເຂື່ອນ	:	435 m
ລວງສູງຂອງເຂື່ອນ	:	23 m

3. ລະບົບລະບາຍນ້ຳ

ຂະໜາດເສັ້ນຜ່າສູນກາງຂອງອຸໂມງ(ເບີ 1, 2 ແລະ 3)	:	2 m
ຂະໜາດເສັ້ນຜ່າສູນກາງຂອງອຸໂມງ (ເບີ 4)	:	3,2 m
ປະລິມານການລະບາຍນ້ຳສູງສຸດ (ເບີ 1, 2 ແລະ 3)	:	15 m^3/s
ປະລິມານການລະບາຍນ້ຳສູງສຸດ(ເບີ 4)	:	25 m^3/s

5.2 ການລົງທຶນໃນໂຄງການ IPPs

ປີ 2012 ບໍລິສັດໄດ້ຊື້ຮຸ້ນຂອງໂຄງການ IPPs 4 ໂຄງການເພື່ອຂະຫຍາຍກຳລັງການຜະລິດໄຟຟ້າຂອງບໍລິສັດ ໃຫ້ພຽງພໍກັບຄວາມຕ້ອງການທີ່ເພີ່ມຂຶ້ນ. ໂຄງການ IPPs 4 ໂຄງການໄດ້ເພີ່ມກຳລັງການຜະລິດໄຟຟ້າຕາມການຕິດຕັ້ງເປັນ 881 MW. ຜົນຂອງໂຄງການ IPPs ທີ່ບໍລິສັດໄດ້ມີການລົງທຶນແມ່ນມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 5.2: ໂຄງການ IPPs ຂອງ ຜ-ຟຟລ

ເຂື່ອນໄຟຟ້າ	ທີ່ຕັ້ງ	ສັດສ່ວນຖືຮຸ້ນ%	ກຳລັງການຜະລິດ (MW)	COD	ປີລົງທຶນ
ນ້ຳງຶມ 2	ວຽງຈັນ	25	153,8	2011	2012
ນ້ຳລີກ 1-2	ວຽງຈັນ	10	10,0	2011	2012
ເຫີນຫີນບູນ	ບໍລິຄຳໄຊ	60	300,0	1998, 2012	2012
ຫ້ວຍເຫາະ	ຈຳປາສັກ	20	30,4	1999	2012
ກຳລັງການຜະລິດຂອງເຂື່ອນ IPP ທັງໝົດ			**494,2**		

ແຫຼ່ງຂໍ້ມູນ ຜ-ຟຟລ

5.2.1 ໂຄງການເຂື່ອນໄຟຟ້າ ບໍລິສັດ ເຫີນຫີນບູນ ຈຳກັດ

ໂຄງການ ເຂື່ອນໄຟຟ້າບໍລິສັດເຫີນຫີນບູນ ຈຳກັດ (ບໍ່ລວມເຖິງພາກຂະຫຍາຍໂຄງການ ແລະ ໂຄງການນ້ຳຍອງ, 220 MW) ໄດ້ເລີ່ມຂາຍໄຟຟ້າຢ່າງເປັນທາງການແຕ່ປີ 1998. ປະຈຸບັນນີ້, ບໍລິສັດໄດ້ຖືຮຸ້ນ 60 ສ່ວນຮ້ອຍ ຂອງທຶນທັງໝົດໃນຂະນະທີ່ບໍລິສັດ GMS ລາວຈຳກັດ ແລະ Statkraft SF ຖືຮຸ້ນຜູ້ລະ 20 ສ່ວນຮ້ອຍ. ເພື່ອເປັນການເພີ່ມ ກຳລັງການຜະລິດກະແສໄຟຟ້າຂອງໂຄງການ, ໄດ້ມີການເລີ່ມຕົ້ນຂະຫຍາຍໂຄງການ 2 ພາກຄື: ພາກການຂະຫຍາຍເຫີນຫີນບູນ (220 MW) ແລະ ພາກການຂະຫຍາຍໂຄງການນ້ຳຍອງ (60 MW) ສຳເລັດໃນປີ 2012. ຈາກຜົນສຳເລັດດັ່ງກ່າວ, ກຳລັງການ ຜະລິດຕາມການຕິດຕັ້ງລວມກັນທັງໝົດເປັນ 500 MW, ໃນ 440 MW ແມ່ນໄດ້ສົ່ງອອກຂາຍໃຫ້ປະເທດໄທ ແລະ ອີກ 60 MW ຕອບສະໜອງໃຫ້ແກ່ ຟຟລ.

ໂຄງການ ເຂື່ອນໄຟຟ້າເຫີນຫີນບູນ (ບໍ່ລວມເຖິງພາກຂະຫຍາຍ ແລະ ໂຄງການເຂື່ອນນ້ຳຍອງ) ແມ່ນໂຄງການເຂື່ອນໄຟຟ້ານ້ຳລົ້ນເຊິ່ງຜັນເອົານ້ຳປະມານ 110 m^3/s ຈາກນ້ຳເຫີນຜ່ານອຸໂມງເຂົ້າເຖິງຈັກປັ່ນໄຟເຊິ່ງຕັ້ງຢູ່ຮ່ອມພູທີ່ຢູ່ ໃນລະດັບ 240 ແມັດ ຕ່ຳກວ່າລະດັບເຂື່ອນ. ນ້ຳຈະໄຫຼຜ່ານທາງນ້ຳລົ້ນ ແລະ ອ່າງເກັບນ້ຳກ່ອນຈະຖືກປ່ອຍໄປສູ່ນ້ຳໄຮເຊິ່ງເປັນ ສ່ວນໜຶ່ງຂອງສາຍນ້ຳຫີນບູນ. ໂຄງການເຂື່ອນໄຟຟ້າດັ່ງກ່າວແມ່ນນຳໃຊ້ອຸປະກອນທີ່ທັນສະໄໝເຊິ່ງຜະລິດໂດຍບໍລິສັດສາກົນ, ປະກອບມີບໍລິສັດ ABB Generator ຂອງຊູແອດ ແລະ ບໍລິສັດ Kvaener Energy. ບໍ່ພຽງແຕ່ເທົ່ານັ້ນ, ບໍລິສັດຍັງໄດ້ຈ້າງ International Engineering Company ເປັນຜູ້ອອກແບບເຂື່ອນ ແລະ ໃຫ້ວິສະວະກອນຈາກບໍລິສັດ International Engineer Company ເປັນຜູ້ຕິດຕັ້ງ.

EGAT ແມ່ນເປັນບໍລິສັດທຳອິດທີ່ຊື້ກະແສໄຟຟ້າຈາກ ໂຄງການເຂື່ອນໄຟຟ້າ ເຫີນຫີນບູນ ຈຳກັດ (ບໍ່ລວມເຖິງພາກຂະຫຍາຍ ແລະ ໂຄງການນ້ຳຍອງ). ພາຍໃຕ້ສັນຍາຊື້ຂາຍໄຟຟ້າທີ່ມີກຳນົດເວລາ 27 ປີ, ບໍລິສັດ EGAT ຈະໄດ້ ຮັບການສະໜອງໄຟຟ້າຢ່າງໜ້ອຍ 95 ສ່ວນຮ້ອຍ ຂອງໄຟຟ້າທີ່ຜະລິດໄດ້ທັງໝົດຈາກໂຄງການນີ້. ບໍ່ພຽງແຕ່ເທົ່ານັ້ນ, ໂຄງການ ເຂື່ອນໄຟຟ້າ ບໍລິສັດ ເຫີນຫີນບູນ ຈຳກັດ ຍັງໄດ້ສະໜອງພະລັງງານໄຟຟ້າທີ່ຜະລິດໄດ້ໃຫ້ກັບ ຟຟລ ເພື່ອຕອບສະໜອງກັບຄວາມ ຕ້ອງການກະແສ ໄຟຟ້າ ໃນທ້ອງຖິ່ນຂອງແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ.

ທຶນສ່ວນໃຫຍ່ທີ່ປະກອບເຂົ້າໃນໂຄງການ IPPs ນີ້ແມ່ນເກີດຈາກການກູ້ຍືມຈາກສະຖາບັນການເງິນຫຼາຍແຫ່ງເປັນສະກຸນໂດລາສະຫະລັດ ມູນຄ່າ 84 ລ້ານໂດລາສະຫະລັດ ແລະ ການກູ້ຢືມເປັນສະກຸນເງິນບາດໄທຈາກກຸ່ມທະນາຄານທຸລະກິດຂອງໄທ ມູນຄ່າ 2,8 ຕື້ບາດ.

ໃນເດືອນເມສາ ປີ 2002, ໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ແມ່ນໄດ້ສຳເລັດການຊຳລະໜີ້ຂອງຕົນ ມູນຄ່າ 152 ລ້ານໂດລາສະຫະລັດ.

ໂດຍອີງຕາມການປຶກສາຫາລືກັບລັດຖະບານລາວ ແລະ ບັນດາຜູ້ທີ່ຖືກຜົນກະທົບຈາກໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ໄດ້ສຳເລັດການຈ່າຍຊົດເຊີຍ ໃນຈຳນວນເງິນທັງໝົດຫຼາຍກວ່າ 2.5 ລ້ານໂດລາ ສະຫະລັດ ເພື່ອເປັນການ ຊົດເຊີຍ ແລະ ການຫຼຸດຜ່ອນຜົນກະທົບທັງໝົດຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່ເກີດຈາກໂຄງການດັ່ງກ່າວ. ບໍ່ພຽງແຕ່ເທົ່ານັ້ນ, ບໍລິສັດຍັງໄດ້ປະຕິບັດພັນທະຂອງຕົນຢ່າງຖືກຕ້ອງຕາມທີ່ໄດ້ຕົກລົງໂດຍ ລັດຖະບານຂອງ ສປປ ລາວ, ໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ຈຳກັດ ຍັງໄດ້ປະກອບສ່ວນທຶນຂອງຕົນເຂົ້າໃນການຕອບສະໜອງການຊ່ວຍເຫຼືອດ້ານການເງິນໃຫ້ໂຄງການອື່ນ ທີ່ຈັດສັນໂດຍເຈົ້າໜ້າທີ່ແຂວງ ແລະ ເມືອງ ເພື່ອສ້າງໂຮງຮຽນ, ຂົວ ແລະ ເຮືອ ເພື່ອຕິດຕໍ່ໄປຍັງເສັ້ນທາງເລກທີ 1 ຂອງແຂວງບໍລິຄຳໄຊ.

ໂດຍອີງຕາມການດຳເນີນງານຂອງຕົນໃນຫຼາຍປີຜ່ານມາ, ໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ເຫັນວ່າຍັງມີຜົນກະທົບເພີ່ມເຕີມທີ່ເກີດຈາກໂຄງການ ແລະ ຍັງບໍ່ໄດ້ຮັບການແກ້ໄຂ. ເພາະສະນັ້ນ, ໃນທ້າຍປີ 1999, ໂຄງການໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ໄດ້ສະເໜີໄປຍັງທະນາຄານພັດທະນາອາຊີ (ADB) ເພື່ອສົ່ງຄະນະກຳມະການສຶກສາ ແລະ ຕິດຕາມ ມາດຕະຖານທັງໝົດທີ່ໄດ້ຮັບການປະຕິບັດຜ່ານມາໃນພາກສະໜາມ ແລະ ທຳການຄົ້ນຄວ້າເພີ່ມເຕີມຕໍ່ກັບຄຳແນະນຳເພື່ອແກ້ໄຂບັນຫາ. ຫຼັງຈາກນັ້ນ, ໃນຕົ້ນປີ 2000, ໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ໄດ້ວ່າຈ້າງທີ່ປຶກສາທີ່ມີປະສົບການເພື່ອຊອກຫາວິທີ ແລະ ກະກຽມມາດຕະການບັນເທົາເພື່ອໃຊ້ມາດຕະການແກ້ໄຂຕໍ່ຜົນກະທົບທີ່ເກີດຂຶ້ນຈາກໂຄງການ.ໃນທ້າຍປີ 2000, ມາດຕະການການແກ້ໄຂ ແລະ ຈ່າຍຄ່າຊົດເຊີຍເປັນໄລຍະເວລາ 10 ປີ (MCM) ແມ່ນໄດ້ຖືກສ້າງຕັ້ງຂຶ້ນ, ແລະ ໄລຍະຕໍ່ມາ ໃນຕົ້ນປີ 2001 ໂຄງການໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ ແມ່ນໄດ້ສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມພາຍໃນ (EMU) ເພື່ອຈັດຕັ້ງປະຕິບັດ MCM. ການປະຕິບັດແຜນ MCM ໃນຂັ້ນຕົ້ນ ແມ່ນເພື່ອກຳນົດກອບໜ້າວຽກ ແລະ ແຜນງົບປະມານ.

ຂໍ້ມູນທາງດ້ານເຕັກນິກທີ່ສຳຄັນຂອງໂຄງການເຂື່ອນໄຟຟ້າ ບໍລິສັດ ເທີນຫີນບູນ ຈຳກັດ (ລວມທັງພາກຂະຫຍາຍ ແລະ ໂຄງການນ້ຳຍວງ):

1. **ອ່າງເກັບນ້ຳ**

ເນື້ອທີ່ອ່າງໂຕ່ງນ້ຳ	:	8.937 km^2
ຄວາມສາມາດລະບາຍນ້ຳສະເລ່ຍຕໍ່ປີ	:	460 m^3/s

2. **ເຂື່ອນ**

ປະເພດ	:	ຊີມັງຖ່ວງດຶງ

	ລະດັບສັນເຂື່ອນ	:	400 masl
	ລວງສູງ	:	25 m
	ລວງກວ້າງ	:	268 m

3. ອຸໂມງ

ປະເພດ	:	ເບຕົ້ງ
ລວງກວ້າງ	:	5.540 m
ພື້ນທີ່ຕັດຂວາງ	:	48,5 m
ລວງສູງ (ດ້ານເທິງທໍ່ສົ່ງນ້ຳ)	:	390,7 m
ຄວາມສາມາດລະບາຍຕາມການອອກແບບ	:	110 m^3/s

4. ຄອງລະບາຍນ້ຳທ້າຍເຂື່ອນ

ເສັ້ນລັດສະໝີ	:	5,2 m
ລວງຍາວ	:	900 m

5. ເຂື່ອນໄຟຟ້າ

ປະເພດ ແລະ ຈຳນວນ	:	2 ໜ່ວຍເໜືອພື້ນ
ປະເພດກົງຫັນ	:	Vertical Francis
ນ້ຳທີ່ສະໜອງການຜະລິດ (ຜ່ານກົງຫັນ)	:	2 x 55 m^3/s
ຫົວມອນລວມ	:	230 m
ກຳລັງການຜະລິດຕາມການຕິດຕັ້ງ	:	2 x 105 MW
ການຜະລິດໄຟຟ້າສະເລ່ຍຕໍ່ປີ	:	1.561 GWh

6. ລ່ອງນ້ຳ

ລວງຍາວ	:	3.500 m
ລວງກວ້າງ	:	12 m
ລວງເລິກສູງສຸດ	:	4 m
ຄວາມສາມາດໃນການເກັບນ້ຳ	:	540.000 m^3

7. ສາຍສົ່ງ

ປະເພດ	:	ວົງຈອນຄູ່ (ໄຟຟ້າທະແສສະລັບ)
ແຮງດັນໄຟຟ້າ	:	230 kV
ໄລຍະທາງຈາກໂຮງໄຟຟ້າຫາສະຖານີໄຟຟ້າຍ່ອຍແຮງດັນສູງທ່າແຂກ	:	86 km
ໄລຍະທາງຈາກສະຖານີໄຟຟ້າຍ່ອຍແຮງດັນສູງ	:	74 km

ທ່າແຂກຫາສະຖານທີ່ຍ່ອຍສະກົນນະຄອນ

5.2.2 ໂຄງການເຂື່ອນໄຟຟ້າ ບໍລິສັດ ຫ້ວຍເຫາະ ຈຳກັດ

ໂຄງການເຂື່ອນໄຟຟ້າ ບໍລິສັດ ຫ້ວຍເຫາະ ຈຳກັດ (152 MW) ເລີ່ມຜະລິດໄຟຟ້າອອກຂາຍໃນປີ 1999 ມີຜູ້ຖືຮຸ້ນໃນປະຈຸບັນແມ່ນບໍລິສັດ ໂກ໊ວ ຈຳກັດ ຖືຮຸ້ນ 55 ສ່ວນຮ້ອຍ, ບໍລິສັດ ຫ້ວຍເຫາະໄຫ ຈຳກັດ ຖືຮຸ້ນ 25 ສ່ວນຮ້ອຍ, ແລະ ຟຟລ ຖືຮຸ້ນ 20 ສ່ວນຮ້ອຍ. ນອກຈາກມີການປະກອບທຶນແລ້ວ ໂຄງການດັ່ງກ່າວຍັງໄດ້ຮັບເງິນກູ້ ຈາກ ທະນາຄານ ເອກະຊົນສາກົນຫຼາຍແຫ່ງ. ຈຳນວນ 98 ສ່ວນຮ້ອຍຂອງພະລັງງານໄຟຟ້າທີ່ຜະລິດໄດ້ ແມ່ນຕອບສະໜອງໃຫ້ EGAT ໂດຍ ສອດຄ່ອງກັບຄຳໝັ້ນສັນຍາຮັບເອົາ ຫຼື ຈ່າຍ ໃນໄລຍະເວລາ 30 ປີ ແລະ ສ່ວນພະລັງງານໄຟຟ້າທີ່ຍັງເຫຼືອແມ່ນສົ່ງໄປຍັງເຄືອຂ່າຍ ໄຟຟ້າ ຟຟລ ເພື່ອແຈກຢາຍໄປຍັງພື້ນທີ່ອ້ອມຂ້າງ.

ໂຄງການນີ້ໄດ້ຮັບການພັດທະນານັບແຕ່ປີ 1993 ໂດຍບໍລິສັດ Daewoo ວິສະວະກຳ ແລະ ກໍ່ສ້າງ ຈາກປະເທດເກົາຫຼີ ເຊິ່ງເປັນຜູ້ປະກອບທຶນໃນໂຄງການດັ່ງກ່າວແລ້ວ ແລະ ຍັງເປັນຜູ້ນຮັບເໝົາກໍ່ສ້າງໂຄງການເຊັ່ນກັນ. ບໍລິສັດ Daewoo ວິສະວະກອນ ແລະ ກໍ່ສ້າງ ໄດ້ເຊັນສັນຍາສຳປະທານກັບລັດຖະບານລາວ ໃນວັນທີ 23 ກັນຍາ 1993 ເປັນໄລຍະ ເວລາສຳປະທານ 30 ປີ ເລີ່ມຈາກ ປີ 1999 ຈົນເຖິງ 2029. ໂຄງການເຂື່ອນໄຟຟ້າ ບໍລິສັດ ຫ້ວຍເຫາະ ຈຳກັດ ໄດ້ຮັບການ ສ້າງຕັ້ງຂຶ້ນໃນວັນທີ 27 ມິຖຸນາ 1996 ແລະ ໄດ້ເຊັນ PPA ກັບ EGAT ເປັນໄລຍະເວລາ 30 ປີ ເລີ່ມຈາກ 1999 ເຖິງ 2029 ກຳນົດເວລາດັ່ງກ່າວເທົ່າກັບກຳນົດເວລາໃນ CA. ໂຄງການເຂື່ອນໄຟຟ້າ ບໍລິສັດ ຫ້ວຍເຫາະ ຈຳກັດ ແມ່ນໄດ້ຮັບການເປີດດຳເນີນ ການຄ້າຢ່າງເປັນທາງການໃນວັນທີ 3 ກັນຍາ 1999.

ຂໍ້ມູນທາງດ້ານເຕັກນິກທີ່ສຳຄັນຂອງໂຄງການເຂື່ອນໄຟຟ້າບໍລິສັດ ຫ້ວຍເຫາະ ຈຳກັດ

1. ອ່າງເກັບນ້ຳ

ເນື້ອທີ່ອ່າງເກັບນ້ຳ	:	37 km^2
ລະດັບນ້ຳຖ້ວມສູງສຸດ	:	883 masl
ລະດັບນ້ຳຖ້ວມຕ່ຳສຸດ	:	861 masl
ປະລິມານນ້ຳທີ່ພຽງພໍ	:	527 x 10^6 m^3
ຄວາມແຮງນ້ຳໄຫຼ	:	22 m^3/s
ສະເລ່ຍປະລິມານນ້ຳຝົນປະຈຳປີ	:	2.300 mm
ເນື້ອທີ່ອ່າງໂຕ່ງ	:	192 km^2

2. ເຂື່ອນ

ປະເພດ	:	ຊີມັ້ງເສີມເຫຼັກ
ລວງສູງ	:	79 m
ບໍລິມາດ	:	1,11x 10^6 m^3

3. ເຂື່ອນໄຟຟ້າ ແລະ ສາຍສົ່ງ

ກຳລັງການຜະລິດຕາມການຕິດຕັ້ງ	:	150 MW (75 MW x 2) ແລະ ຫົວໜ່ວຍກົງຫັນຂະໜາດນ້ອຍຂອງ 2.1 MW ສຳລັບຕອບສະໜອງພາຍໃນ
ຍີ່ຫໍ້ກົງຫັນ	:	Pelton
ຫົວມອນລວມ	:	775,5 m
ທາງນ້ຳໄຫຼ	:	3.540 m (ແຮງດັນອຸໂມງໃຕ້ດິນ)
ສາຍສົ່ງ	:	230 kV x 2 (ມີຄວາມຍາວກວ່າ 161 km ໄປຫາຊາຍແດນລາວ-ໄທ)

5.2.3 ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳລີກ 1-2 ຈຳກັດ

ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳລີກ 1-2 ຈຳກັດ (100 MW) ໄດ້ຮັບການສ້າງຕັ້ງໂດຍການຮ່ວມທຶນລະຫວ່າງ China Water & Energy ຈຳກັດ. ຖືຮຸ້ນ 90 ສ່ວນຮ້ອຍ ແລະ ຟຟລ ຖືຮຸ້ນ 10 ສ່ວນຮ້ອຍ. ອີງຕາມສັນຍາຊື້ຂາຍໄຟຟ້າລະຫວ່າງ ຟຟລ ແລະ ໂຄງການເຂື່ອນໄຟຟ້າບໍລິສັດ ນ້ຳລີກ 1-2 ຈຳກັດ (ໄດ້ລົງນາມໃນຄັ້ງອັນທີ 19 ພະຈິກ 2006, ການຜະລິດກະແສໄຟຟ້າແມ່ນຖືກສົ່ງໂດຍທໍ່ສົ່ງ115 kV ຂອງ ຟຟລ. ພະລັງງານທີ່ຜະລິດໄດ້ທັງໝົດຈາກໂຄງການແມ່ນຕອບສະໜອງໃຫ້ກັບຟຟລ ໂດຍອີງຕາມຄຳໝັ້ນສັນຍາຮັບເອົາ ຫຼື ຈ່າຍ ໃນກຳນົດເວລາ 25 ປີ ສຳລັບການຊົມໃຊ້ພາຍໃນປະເທດ. ໂຄງການດັ່ງກ່າວໄດ້ສ້າງຂຶ້ນໃນປີ 2007 ແລະ ໄດ້ສຳເລັດໃນປີ 2010 ແລະ ເລີ່ມຂາຍໄຟຟ້າຢ່າງເປັນທາງການໃນວັນທີ 29 ສິງຫາ 2011.

ຂໍ້ມູນທາງດ້ານເຕັກນິກທີ່ສຳຄັນຂອງໂຄງການເຂື່ອນໄຟຟ້າບໍລິສັດ ນ້ຳລີກ 1-2 ຈຳກັດ:

1. ອ່າງເກັບນ້ຳ

ເນື້ອທີ່ອ່າງໂຕ່ງນ້ຳ	:	1.993 km^2
ຄ່າສະເລ່ຍການໄຫຼໄລຍະຍາວໂດຍຄາດຄະເນ	:	883 masl
ການເກັບນ້ຳທັງໝົດ	:	84,9 m^3/s
ລະດັບນ້ຳຕ່ຳກວ່າປົກກະຕິ	:	1,33 x 109 m^3
ຄວາມສາມາດເກັບນ້ຳ	:	0,97 x 109 m^3
ລະດັບນ້ຳທີ່ເກັບໄດ້ປົກກະຕິ	:	305,0 m
ລະດັບນ້ຳທີ່ໃຊ້ການບໍ່ໄດ້	:	275,0 m
ພື້ນທີ່ອ່າງເກັບນ້ຳໃນລະດັບນ້ຳປົກກະຕິ	:	46 km^2

2. ເຂື່ອນຫຼັກ

ປະເພດ	:	ເຂື່ອນຫີນຖົມດາດຊີມັງ
ລວງສູງສູງສຸດ	:	103,0 m
ລວງຍາວແນວສັນເຂື່ອນ	:	327,84 m

3. ເຂື່ອນດິນປິດຊ່ອງເຂົ້າຕ່ຳ

ປະເພດ	:	ເຂື່ອນດິນເນື້ອດຽວ
ຄວາມສູງສູງສຸດ	:	5 m / 10 m / 16 m
ຄວາມຍາວແນວສັນເຂື່ອນ	:	44 m/ 81 m/ 102,3 m

4. ອຸໂມງນ້ຳລົ້ນ

ປະເພດ	:	ຝາຍໂຄ້ງ / ອຸໂມງ WES
ຂະໜາດ	:	13 m (W) x 20 m (H)
ການລະບາຍນ້ຳຖ້ວນຕາມການອອກແບບ	:	2.513 m^3/s

5. ອຸໂມງລະບາຍນ້ຳຖ້ວມ

ຂະໜາດ	:	ລັດສະໝີ 6 m/ 10 m x 12 m (ເພີ່ມແຮງດັນ /ຫຼຸດແຮງດັນ)
ການລະບາຍນ້ຳຖ້ວນຕາມການອອກແບບ	:	1.371 m^3/s
ການລະບາຍນ້ຳຖ້ວນຕາມການກວດກາ	:	1.390 m^3/s

6. ອຸໂມງ

ຈຳນວນ	:	1 ໜ່ວຍ
ລວງຍາວ	:	280,73 m
ເສັ້ນຜ່າສູນກາງ	:	8,0 m
ການເສີມ	:	ຊີມັງເສີມເຫຼັກ

7. ທໍ່ສົ່ງນ້ຳ

ລວງຍາວ	:	128,94 m
ລັດສະໝີດ້ານໃນ	:	ທໍ່ / ສາຍ 6.4 m / 4.0 m
ຄວາມດັນສະຖຽນສູງສຸດ	:	85,71 m

8. ໂຮງໄຟຟ້າ

ປະເພດ	:	ໜ້າກະດານ
ຂະໜາດຂອງໂຮງໄຟຟ້າຫຼັກ	:	60 m (l) x 21,6 m (w) x 43,67 ແມັດ (h)
ຂະໜາດຂອງໂຮງໄຟຟ້າສຳຮອງ	:	21,6 m (L) x 12 m (W)

9. ອຸປະກອນການຜະລິດໄຟຟ້າ

ຈຳນວນ ແລະ ປະເພດຂອງກົງຫັນ	:	2 ໜ່ວຍ/ HL240LJ300 (ປະເພດ Francis)
ສ່ວນຫົວເຄື່ອງຈັກ	:	72 m
ອັດຕາການໝຸນວຽນ	:	214,3 r/min
ອັດຕາການລະບາຍ	:	80,31 m^3/s
ກຳລັງການຜະລິດຕາມການຕິດຕັ້ງລວມ	:	2 x 50 MW
ພະລັງງານຜະລິດອອກໃຊ້	:	435 GWh ຕໍ່ປີ
ປະເພດຂອງເຄື່ອງຈັກ	:	SF5028 / 6300
ອັດຕາຄວາມສາມາດໃນການຜະລິດ	:	50 MW
ອັດຕາຄວາມແຮງ	:	10,5 kV

10. ການເຊື່ອມຕໍ່ລະບົບສາຍສົ່ງຂອງ ຟຟລ

ຄວາມແຮງສາຍສົ່ງ	:	115 kV
ຂະໜາດຕົວຊັກນຳ	:	240 mm^2
ຈຳນວນການໃຫ້ວຽນ	:	2
ລວງຍາວສາຍສົ່ງ	:	15 km
ຈຸດໄປເຖິງຂອງສາຍສົ່ງ	:	ນ້ຳລິກ-ບ້ານດອນ

5.2.4 ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 2 ຈຳກັດ

ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 2 ຈຳກັດ (615 MW) ໄດ້ເລີ່ມດຳເນີນການຄັ້ງທຳອິດ ວັນທີ 26 ມີນາ 2011. ໂຄງການດັ່ງກ່າວໄດ້ຮັບການສ້າງຕັ້ງໂດຍ ການຮ່ວມທຶນລະຫວ່າງ ບໍລິສັດ South East Asia Energy ຈຳກັດ ຖືຮຸ້ນ 75 ສ່ວນຮ້ອຍ ແລະ ຟຟລ ຖືຮຸ້ນ 25 ສ່ວນຮ້ອຍ. ພະລັງງານໄຟຟ້າທີ່ຜະລິດໄດ້ທັງໝົດຈາກໂຄງການດັ່ງກ່າວ ແມ່ນໄດ້ຕອບສະໜອງໃຫ້ປະເທດໄທ.

ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 2 ຈຳກັດ ມີຄວາມສາມາດຜະລິດໄຟຟ້າ 2.310 GWh ຕໍ່ປີ. ໄຟຟ້າທັງໝົດທີ່ໄດ້ຜະລິດຈາກໂຄງການເຂື່ອນໄຟຟ້າບໍລິສັດ ນ້ຳງື່ມ 2 ຈຳກັດ ແມ່ນໄດ້ສົ່ງໄປປະເທດໄທ ໂດຍຜ່ານສາຍສົ່ງຂອງ EGAT ເຊິ່ງຈະສ້າງຜົນປະໂຫຍດໃຫ້ກັບ ສປປ ລາວ ແລະ ປະເທດໄທ.

ໂຄງການເຂື່ອນໄຟຟ້າບໍລິສັດ ນ້ຳງື່ມ 2 ຈຳກັດ ໄດ້ເລີ່ມສຶກສາເບື້ອງຕົ້ນຈາກໂຄງການຊ່ວຍເຫຼືອລ້າ (UNDP) ໂດຍການຮ່ວມມືກັບທະນາຄານການກໍ່ສ້າງຄືນ ແລະ ການພັດທະນາສາກົນ (IBRD) ແຕ່ປີ 1986 ແລະ ໄດ້ດຳເນີນການສຶກສາຄວາມເປັນໄປໄດ້ຂອງໂຄງການ ນັບຈາກປີ 1986 ເຖິງ 1996. ເພາະສະນັ້ນ, ໂຄງການຈຶ່ງໄດ້ມີການເຊັນ PPA ກັບ EGAT ໃນປີ 2005 ແລະ ເຊັນ CA ກັບລັດຖະບານລາວ ໃນວັນທີ 14 ມີນາ 2006.

ຂໍ້ມູນທາງດ້ານເຕັກນິກທີ່ສຳຄັນຂອງໂຄງການເຂື່ອນໄຟຟ້າໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງຶ່ມ 2 ຈຳກັດ

1. ອ່າງເກັບນ້ຳ

ເນື້ອທີ່ອ່າງເກັບນ້ຳ	:	5.640 km^2
ຄວາມສາມາດລະບາຍນ້ຳສະເລ່ຍຕໍ່ປີ	:	6.270 MCM
ລະດັບນ້ຳສູງສຸດ	:	378,75 masl
ລະດັບນ້ຳຖ້ວມສູງສຸດ	:	375 masl
ພື້ນທີ່ອ່າງເກັບນ້ຳ (ການສະໜອງນ້ຳເຕັມສ່ວນ)	:	122 km^2
ການເກັບນ້ຳ (ການສະໜອງນ້ຳເຕັມສ່ວນ)	:	6.774 MCM
ລະດັບນ້ຳຕ່ຳສຸດ	:	345 masl
ການເກັບນ້ຳ (ປໍລິມານນ້ຳຕ່ຳສຸດ)	:	3.780 MCM
ການເກັບນ້ຳທີ່ນຳໃຊ້ໃນປະຈຸບັນ	:	2.994 MCM

2. ເຂື່ອນ

ປະເພດ	:	ຊິມັ່ງເສີມຫີນ
ລວງຍາວຂອງສັນເຂື່ອນ	:	485 m
ລະດັບຂອງສັນເຂື່ອນ	:	381 masl
ລວງສູງຈາກຖານ	:	181 m
ລວງກວ້າງຂອງໜ້າສີເມັນ	:	0.,30-0,90 m

3. ອຸໂມງ

ປະເພດ	:	ທໍ່ຊິມັ່ງ - ແບ່ງອອກເປັນ 2
ອຸໂມງ		
ເສັ້ນຜ່າສູນກາງ	:	11.7 m
ລວງຍາວຂອງອຸໂມງທຳອິດ	:	1.141 m
ລວງຍາວຂອງອຸໂມງທີສອງ	:	1.263 m
ລວງສູງ (ເທິງທໍ່ສົ່ງນ້ຳ)	:	209,1 masl

4. ຄອງລະບາຍນ້ຳທ້າຍເຂື່ອນ

ຈຳນວນ	:	3 ໜ່ວຍ
ເສັ້ນຜ່າສູນກາງ	:	5,35 m
ລວງຍາວ	:	212 m

5.3 ເຂື່ອນໄຟຟ້າ ແລະໂຄງການ IPPs ທີ່ພົວພັນກັບທຶນຈາກການອອກຮຸ້ນກູ້

ໃນປີ 2014 ບໍລິສັດໄດ້ອອກຮຸ້ນກູ້ໃນຈຳນວນເງິນເທົ່າກັບ 6.500 ລ້ານບາດ ເພື່ອລົງທຶນເຂົ້າໃນຊັບສິນທີ່ໃຊ້

ໃນການຜະລິດໄຟຟ້າ ແລະ ລົງທຶນໃນບັນດາເຂື່ອນໄຟຟ້າ. ພາຍຫຼັງໄດ້ເລີ່ມການຜະລິດໄຟຟ້າ, ບໍລິສັດຄາດໝາຍວ່າຈະສາມາດ ຜະລິດໄດ້ບັນລຸເປົ້າໝາຍ ຄື 1.273 MW. ນອກເໜືອຈາກຮຸ້ນຂອງໂຄງການເຂື່ອນໄຟຟ້າ ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ ເຊິ່ງຖືໂດຍ ຟຟລ ການໂອນເຂື່ອນໄຟຟ້າອື່ນໆ ແລະ ໂຄງການ IPP ຕາມການອອກຮຸ້ນກູ້ທີ່ຈະເກີດຂຶ້ນໃນອັນທີໃນອະນາຄົດເຊິ່ງຈະເປັນ ວັນທີ່ກ່ອນ ຫຼື ໃນວັນ COD ຂອງໂຄງການນັ້ນໆ.

5.3.1 ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 5 ຈຳກັດ

ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 5 ຈຳກັດ (120 MW) ໄດ້ເລີ່ມດຳເນີນການຄັ້ງທຳອິດໃນວັນ ທີ 2 ທັນວາ 2012. ໂຄງການແມ່ນໄດ້ຮ່ວມລົງທຶນລະຫວ່າງ ບໍລິສັດ Sinhydro Corporation ຈາກຈີນ ແລະ ຟຟລ. ໄຟຟ້າທີ່ໂຄງການໄດ້ຜະລິດທັງໝົດແມ່ນໄດ້ຕອບສະໜອງໃຫ້ປະເທດໄທ.

ໂຄງການເຂື່ອນໄຟຟ້າ ບໍລິສັດ ນ້ຳງື່ມ 5 ຈຳກັດ ສາມາດຜະລິດໄດ້ 507 GWh ຕໍ່ປີ. ໄຟຟ້າທີ່ ໂຄງການຜະລິດໄດ້ທັງໝົດແມ່ນໄດ້ຕອບສະໜອງໃຫ້ກັບ ຟຟລ. ອີງຕາມສັນຍາ Take or Pay ໃນໄລຍະ 25 ປີ ສຳລັບການ ຊົມໃຊ້ພາຍໃນ.

ຂໍ້ມູນທາງດ້ານເຕັກນິກທີ່ສຳຄັນຂອງ ໂຄງການເຂື່ອນໄຟຟ້ານ້ຳງື່ມ 5 ຈຳກັດໂດຍຫຍໍ້:

1. ອ່າງເກັບນ້ຳ

ເນື້ອທີ່ອ່າງເກັບນ້ຳ	:	483 km^2
ສະເລ່ຍຄວາມສາມາດບັນຈຸໃນແຕ່ລະປີ	:	314 MCM
ລະດັບນ້ຳສູງສຸດ	:	1.100 masl
ເນື້ອທີ່ອ່າງເກັບນ້ຳ (ການສະໜອງນ້ຳເຕັມສ່ວນ I)	:	15 km^2
ລະດັບນ້ຳຕ່ຳສຸດ	:	1.060 masl

2. ເຂື່ອນ

ປະເພດ	:	ຫີນໃຫຍ່ຊິມັ້ງເສີມ ເຫຼັກ
ລວງຍາວຂອງສັນເຂື່ອນ	:	234,83 m
ລະດັບຂອງສັນເຂື່ອນ	:	99 masl
ລວງສູງຈາກພື້ນ	:	99 m

3. ອຸໂມງ

ປະເພດ	:	ຊິມັ້ງເສີມເຫຼັກ
ເສັ້ນຜ່າສູນກາງ	:	4,2 m
ລວງຍາວ	:	8.917 m

5.4 ການຄ້ຳປະກັນຊັບສິນ

ຕາມໜັງສືຊວນຊື້ສະບັບນີ້, ບໍລິສັດບໍ່ໄດ້ມີພາລະຜູກພັນ, ການມັດຈຳ ຫຼື ການຊວດຈຳໃດໜຶ່ງຕໍ່ຊັບສິນທີ່ ກຳລັງດຳເນີນງານ.

5.5 ລາຄາຮຸ້ນຂອງ ຜ-ຟຟລ ທີ່ຜ່ານມາ

ຕາຕະລາງ 5.3 ລາຄາຮຸ້ນຂອງ ຜ-ຟຟລ ທີ່ຜ່ານມາ

ໄລຍະເວລາ	ລາຄາຕ່ຳສຸດ (ກີບ)	ລາຄາສູງສຸດ (ກີບ)
ໄລຍະ 3 ປີຜ່ານມາ (ມິຖຸນາ 2012-2015)	4.600	8.100
ລາຍໄຕມາດ		
ເມສາ-ມິຖຸນາ 2015	7.000	7.950
ມັງກອນ-ມີນາ 2015	6.900	8.100
ຕຸລາ-ທັນວາ 2014	6.800	7.150
ກໍລະກົດ-ກັນຍາ 2014	6.350	7.200
ເມສາ-ມິຖຸນາ 2014	6.050	6.400
ມັງກອນ-ມີນາ 2014	5.800	6.500
ຕຸລາ-ທັນວາ 2013	5.800	6.300
ກໍລະກົດ-ກັນຍາ 2013	5.900	6.500
ລາຍເດືອນ		
ມິຖຸນາ 2015	7.000	7.100
ພຶດສະພາ 2015	7.050	7.500
ເມສາ 2015	7.500	7.950
ມີນາ 2015	7.100	8.100
ກຸມພາ 2015	6.900	7.100
ມັງກອນ 2015	7.000	7.100
ທັນວາ 2014	7.000	7.100
ພະຈິກ 2014	6.900	7.150
ຕຸລາ 2014	6.800	7.100
ກັນຍາ 2014	6.800	7.100
ສິງຫາ 2014	6.700	7.200
ກໍລະກົດ 2014	6.350	6.800

ມິຖຸນາ 2014	6.200	6.400
ພຶດສະພາ 2014	6.100	6.400
ເມສາ 2014	6.050	6.400
ມີນາ 2014	6.100	6.500
ກຸມພາ 2014	5.900	6.300
ມັງກອນ 2014	5.800	6.000
ທັນວາ 2013	5.800	6.000
ພະຈິກ 2013	6.050	6.200
ຕຸລາ 2013	6.100	6.300
ກັນຍາ 2013	5.900	6.300
ສິງຫາ 2013	6.200	6.450
ກໍລະກົດ 2013	6.000	6.500
ມິຖຸນາ 2013	6.200	6.550

ແຫ່ງຂໍ້ມູນ: ຕລຊລ

6. ໂຄງການໃນອະນາຄົດ

6.1 ຍຸດທະສາດໃນການດຳເນີນທຸລະກິດຂອງບໍລິສັດ

ບໍລິສັດມີຈຸດປະສົງໃນການຮັກສາສະຖານະຂອງບໍລິສັດ ໃນການເປັນຜູ້ນຳຕະຫຼາດການຜະລິດໄຟຟ້າພາຍໃນປະເທດ. ບໍລິສັດຄາດວ່າຈະຂະຫຍາຍທຸລະກິດເພື່ອໃຫ້ສາມາດຕອບສະໜອງກັບຄວາມຕ້ອງການພະລັງງານໄຟຟ້າຂອງຕະຫຼາດພາຍໃນປະເທດແລະຕ່າງປະເທດ.

ບໍລິສັດເຊື່ອໝັ້ນເປັນຢ່າງຍິ່ງວ່າຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດຈະສ້າງໂອກາດໃນການຂະຫຍາຍຕົວໃຫ້ແກ່ບໍລິສັດຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍ່ຕາມ, ບໍລິສັດຍັງຈະສືບຕໍ່ສ້າງລາຍຮັບເພີ່ມເຕີມຈາກຫຼາຍໆ ພາກສ່ວນທີ່ແທດເໝາະກັບລັກສະນະສະເພາະຂອງຄວາມສາມາດ ແລະ ສະຖານະຂອງບໍລິສັດ.

6.1.1 ການຂະຫຍາຍທຸລະກິດການຜະລິດຫຼັກພາຍໃນລາວ

ຄວາມຕ້ອງການພະລັງງານໄຟຟ້າໃນຕະຫຼາດພາຍໃນປະເທດມີອັດຕາການຂະຫຍາຍຕົວປະຈຳປີເພີ່ມຂຶ້ນ ສະເລ່ຍ 14,91 ສ່ວນຮ້ອຍ CAGR ໃນຊ່ວງປີ 2010 – 2013, ແລະໄດ້ຄາດໝາຍວ່າບໍລິສັດຈະມີການສືບຕໍ່ການຂະຫຍາຍ CAGR ນີ້ຕໍ່ໄປໃນອະນາຄົດ.

ເຖິງວ່າ ສປປ ລາວ ຈະເປັນປະເທດນ້ອຍ ແຕ່ໂອກາດໃນການຂະຫຍາຍຕົວຂອງຕະຫຼາດພາຍໃນປະເທດແມ່ນມີຫຼວງຫຼາຍຢູ່ພໍສົມຄວນ. ບໍລິສັດເອງອາດຈະນຳໃຊ້ຄວາມສຳພັນຢ່າງໃກ້ຊິດກັບ ຟຟລ ແລະ ລັດຖະບານ ເພື່ອໃຫ້ການຂະຫຍາຍຕົວຂອງບໍລິສັດເປັນໄປຢ່າງດີທີ່ສຸດ. ນອກຈາກນັ້ນ, ຟຟລ ເອງ ກໍ່ຍັງຕ້ອງເອື່ອຍອີງຢ່າງຫຼວງຫຼາຍກັບເງິນປັນຜົນຈາກບໍລິສັດ ແລະ ມີຄວາມຕ້ອງການເຫັນບໍລິສັດມີການເຕີບໂຕຢ່າງຕໍ່ເນື່ອງ ຈຶ່ງໄດ້ນຳສິ່ງໂຄງການທີ່ໜ້າສົນໃຈຕ່າງໆ ໃຫ້ແກ່ບໍລິສັດ.

ໃນໄລຍະຊຸມປີຜ່ານມານີ້, ສປປ ລາວ ໄດ້ພົບກັບບັນຫາການຂະຫຍາຍຕົວຂອງຄວາມຕ້ອງການພະລັງງານໄຟຟ້າຢ່າງຫຼວງຫຼາຍ ຢູ່ໃນລະດັບສະເລ່ຍ 18 ສ່ວນຮ້ອຍ ໃນຊ່ວງປີ 2001 ເຖິງ 2009. ການຂະຫຍາຍຕົວດັ່ງກ່າວແມ່ນໄດ້ຮັບການຍູ້ດັນຢ່າງໜັກມາຈາກພາກສ່ວນອຸດສາຫະກຳບໍ່ແຮ່, ອຸດສາຫະກຳການຜະລິດ ແລະ ການຂະຫຍາຍຕົວຂອງການເຄື່ອນໄຫວທຸລະກິດ ແລະ ແຜນການຂອງລັດຖະບານໃນການຂະຫຍາຍຕາໜ່າງໄຟຟ້າໃຫ້ຊຸມຊົນບົດສາມາດເຂົ້າເຖິງໄຟຟ້າໄດ້.

ຕາຕະລາງ 6.1: ປະຫວັດຄວາມຕ້ອງການຊົມໃຊ້ໄຟຟ້າພາຍໃນ ສປປ ລາວ

	2010	2011	2012	2013	CAGR 2010-2013	ຄາດຄະເນ 2020
ຄວາມຕ້ອງການພາຍໃນ (GWh)	2.228.15	2.399,36	2.874,21	3.380,96	13,9%	11.661,77
ອັດຕາການເຕີບໂຕ		7,7%	19,8%	17,6%		
ຄວາມຕ້ອງການສູງສຸດ (MW)	475,78	527,09	613,56	649,13	10,9%	3. 488
ອັດຕາການເຕີບໂຕ		10,8%	16,4%	5,8%		


ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິປີ 2013 ຂອງ ຟຟລ
ຈາກ PDP ໃນປີ 2010-2020 (ດັດແກ້ 1)

ອັດຕາຄວາມຕ້ອງການພະລັງງານໄຟຟ້າພາຍໃນປະເທດ ມີຈຳນວນ 13.9 ສ່ວນຮ້ອຍ ຕັ້ງແຕ່ປີ 2010 ເຖິງປີ 2013 ອີງຕາມ PDP ໃນປີ 2010-2020 (ດັດແກ້-1). ຄວາມຕ້ອງການພະລັງງານໄຟຟ້າສູງສຸດພາຍໃນ ສປປ ລາວ ຄາດວ່າຈະຂະຫຍາຍຕົວເຖິງ 3.488 MW ໃນປີ 2020. ເຖິງວ່າຈະມີບັນຫາໃນເລື່ອງວິກິດເສດຖະກິດໂລກກໍ່ຕາມ, ບໍລິສັດປະເມີນວ່າຄວາມຕ້ອງການພະລັງງານໄຟຟ້າໃນ ສປປ ລາວ ຍັງຄົງມີຢູ່ສູງ.

ການຄາດໝາຍເລື່ອງການເພີ່ມຂຶ້ນຢ່າງວ່ອງໄວຂອງຄວາມຕ້ອງການດັ່ງກ່າວ ເປັນບັນຫາທີ່ທ້າທາຍພໍສົມຄວນຕໍ່ທັງ ຟຟລ ແລະ ລັດຖະບານ. ອີງຕາມ PDP ໃນປີ 2010-2020, ຄວາມຕ້ອງການພະລັງງານໄຟຟ້າທັງໝົດໃນ ສປປ ລາວ ຄາດວ່າຈະເພີ່ມຂຶ້ນເຖິງ 14.547 GWh ໃນປີ 2020. ສຳລັບການຕ້ອງການເງິນທຶນທີ່ຈຳເປັນໃນການພັດທະນາຂະແໜງການໄຟຟ້າໃນ ສປປ ລາວ ທີ່ຜ່ານມາ ແມ່ນເປັນອຸປະສັກ ຂອງ ຟຟລ ທີ່ໃຫຍ່ຫຼວງ. ໃນຊຸມປີທີ່ຜ່ານມານີ້, ເນື່ອງຈາກແຫຼ່ງທຶນທີ່ຈຳເປັນມີຈຳກັດຈຶ່ງເຮັດໃຫ້ ຟຟລ ແລະ ລັດຖະບານໃຊ້ທຶນຂອງຕົນເອງ ລວມທັງກູ້ຍືມຈາກທະນາຄານເພື່ອການພັດທະນາ ເພື່ອນຳໃຊ້ໃນການຂະຫຍາຍກຳລັງການຜະລິດ. ໃນຄວາມເປັນຈິງແລ້ວແຫຼ່ງທຶນຈາກສາກົນ ເຊັ່ນ ຈາກ IPP, ທະນາຄານເພື່ອການພັດທະນາ ແລະ ອື່ນໆ ໄດ້ປະກອບສ່ວນທຶນຢ່າງໜັກແໜ້ນໃນຮູບແບບຂອງເງິນກູ້ຍືມ ແລະ ເງິນທຶນທີ່ລົງທຶນປະກອບໃຫ້ແກ່ໂຄງການສຳລັບການຂະຫຍາຍກຳລັງການຜະລິດ. ດັ່ງນັ້ນ, ຟຟລ ແລະ ລັດຖະບານ ຍັງຈຳເປັນຕ້ອງໄດ້ສືບຕໍ່ອາໄສຜູ້ພັດທະນາ IPPs ຕ່າງປະເທດ ແລະ ແຫຼ່ງທຶນຈາກຕ່າງປະເທດ ເພື່ອສືບຕໍ່ພັດທະນາແຫຼ່ງພະລັງງານໄຟຟ້າພາຍໃນປະເທດລວມທັງທຸລະກິດການສົ່ງອອກໄຟຟ້າ.

ຟຟລ ຄາດຄະເນວ່າຄວາມຕ້ອງການໃນການໃຊ້ຈ່າຍເງິນທຶນເພື່ອກໍ່ສ້າງຂະແໜງການຜະລິດໄຟຟ້າໃໝ່ (ໃນໄລຍະເວລາ 10 ປີ ຈົນເຖິງປີ 2020), ສະເພາະແຕ່ ຟຟລ ມີຄວາມຕ້ອງການທຶນເຖິງ 1.29 ພັນລ້ານ USD (ບໍ່ລວມເຖິງ IPPs ທັງໝົດ).

ຮູບ 6.1: ການຄາດຄະເນຄວາມຕ້ອງການ ແລະ ການສະໜອງພະລັງງານໄຟຟ້າພາຍໃນ ສປປ ລາວ



ແຫຼ່ງຂໍ້ມູນ: ຜ-ຟຟລ

ປີ 2009, ຟຟລ ໄດ້ເລີ່ມຕົ້ນສຳຫຼວດເພື່ອປັບປຸງໂຄງສ້າງ ແລະ ຫາທາງເລືອກທາງການເງິນ ເຊິ່ງຈະຊ່ວຍໃຫ້ ຟຟລ ສາມາດກຸ້ມຕົນເອງດ້ານການເງິນໃນການຂະຫຍາຍທຸລະກິດໄດ້ ແລະ ມີການວາງແຜນການຜະລິດໄຟຟ້າລະດັບຊາດໄດ້ຢ່າງວ່ອງໄວ. ການກຸ້ມຕົນເອງດ້ານການເງິນດັ່ງກ່າວຈະເຮັດໃຫ້ປະຊາຊົນລາວສາມາດຮັກສາຜົນປະໂຫຍດຈາກແຫຼ່ງພະລັງງານ ນ້ຳທີ່ສຳຄັນຂອງປະເທດໄດ້ຫຼາຍຂຶ້ນ. ໂດຍອີງຕາມປີ 2008, ຟຟລ ໄດ້ເລີ່ມຕົ້ນໂຄງການຍູ້ດັນທາງດ້ານການເງິນ (Financial Task Force ຫຼື FTF) ໂດຍປະສານສົມທົບກັບອົງການຈັດຕັ້ງຂອງລັດຖະບານທີ່ກ່ຽວຂ້ອງເພື່ອ "ແກ້ປັນຫາທາງດ້ານການເງິນຢ່າງເປັນລະບົບ". ໂດຍໜຶ່ງໃນບັນດາຄວາມພະຍາຍາມດັ່ງກ່າວ ຟຟລ ໄດ້ມອບໝາຍໃຫ້ທີ່ປຶກສາທາງການເງິນ; (i) ສຶກສາອຸດສາຫະກຳດ້ານພະລັງງານຂອງ ສປປ ລາວ, ສະພາບການຂອງ ຟຟລ ໃນປະຈຸບັນ ແລະ ໂອກາດຂອງ ຟຟລ ໃນອະນາຄົດ; ແລະ (ii) ສະເໜີຄວາມເຫັນກ່ຽວກັບບັນຫາການປັບປຸງໂຄງສ້າງຂອງ ຟຟລ ແລະ ອຸດສາຫະກຳດ້ານພະລັງງານຂອງ ສປປ ລາວ ໂດຍສະເພາະການຫັນເປັນເອກະຊົນ ແລະ ທາງເລືອກໃນການລະດົມທຶນຂອງ ຟຟລ.

6.1.2 ໂອກາດໃນການຂະຫຍາຍຕົວໂດຍຜ່ານການຂາຍໄຟຟ້າໃຫ້ແກ່ປະເທດໃກ້ຄຽງ

ຂະແໜງພະລັງງານ, ໂດຍສະເພາະເຂື່ອນໄຟຟ້າແມ່ນຂະແໜງໜຶ່ງທີ່ສຳຄັນຕໍ່ການຂະຫຍາຍຕົວຂອງເສດຖະກິດໃນ ສປປ ລາວ. ໃນໄລຍະຜ່ານມາ, ເຂື່ອນໄຟຟ້າໃນ ສປປ ລາວ ແມ່ນໄດ້ຮັບການກໍ່ສ້າງ ແລະ ພັດທະນາໂດຍ ຟຟລ ແລະ ບັນດາ IPPs. ຕາມທຳມະດາແລ້ວ, ຟຟລ ໄດ້ກໍ່ສ້າງເຂື່ອນໄຟຟ້າເພື່ອສະໜອງໄຟຟ້າໃຫ້ຕະຫຼາດພາຍໃນ. ສຳລັບໂຄງການ IPPs ທີ່ ຟຟລ ຫຼື ລຮລ ເຂົ້າໄປຖືຮຸ້ນແມ່ນເພື່ອການສົ່ງອອກ. ໂດຍທົ່ວໄປແລ້ວບໍລິສັດຈະເຂົ້າໄປຊື້ກິດຈະການຈາກເຂື່ອນໄຟຟ້າທີ່ ຟຟລ ຖືຮຸ້ນເອງທັງໝົດ ຫຼື ມີຮຸ້ນຢູ່ໂຄງການ IPPs ເຊິ່ງຂຶ້ນກັບວັນໃກ້ ຫຼື ວັນກ່ອນ COD ຫຼື ສັນຍາທີ່ທັງສອງຝ່າຍໄດ້ຕົກລົງກັນ (ແລ້ວແຕ່ກໍລະນີ). ເຖິງຢ່າງໃດກໍ່ຕາມ, ທີ່ຜ່ານມາ ຟຟລ ກໍ່ຍັງຂາດເງິນທຶນມາສ້າງເຂື່ອນໄຟຟ້າເພື່ອສະໜອງໄຟຟ້າໃຫ້ຕ່າງປະເທດ. ໃນອະນາຄົດບໍລິສັດຫວັງວ່າຄວາມຕ້ອງການຊົມໃຊ້ພະລັງງານຈາກຕ່າງປະເທດຍັງຈະເພີ່ມຂຶ້ນ.

ນອກຈາກໂຄງການ IPPs ແລ້ວ, ຊັບສິນທີ່ ຟຟລ ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ ເຊິ່ງການຜະລິດສ່ວນເກີນແມ່ນໄດ້ຂາຍໃຫ້ຕ່າງປະເທດ (ໂດຍຜ່ານ ຟຟລ). ການຜະລິດສ່ວນເກີນໃນເຂດພາກກາງມີ ນ້ຳງື່ມ1, ນ້ຳເລີກ ແລະ ນ້ຳມັງ 3, ພາກໃຕ້ມີ ເຊເສັດ 1 ແລະ ແຊລະບຳແມ່ນໄດ້ສົ່ງຂາຍໃຫ້ປະເທດໄທໂດຍຜ່ານສາຍສົ່ງ 115 KV ຈາກສະຖານີໂພນຕ້ອງຫາ ສະຖານີທ່ານາແລ້ງ (ນະຄອນຫຼວງວຽງຈັນ) ແລະ ຈາກສະຖານີປາກຊັນ (ບໍລິຄຳໄຊ) ຫາສະຖານີບ້ຽເຢາະ (ປາກເຊ).

ໃນອະນາຄົດ, ບໍລິສັດຈະຊອກຫາຊ່ອງທາງຂະຫຍາຍໂອກາດການສົ່ງອອກເພື່ອນຳລາຍຮັບມາໃຫ້ຫຼາຍທີ່ສຸດໂດຍຂາຍຜ່ານ ຟຟລ ຫຼື ສົ່ງອອກໂດຍກົງຈາກການຖືຮຸ້ນໃນໂຄງການ IPPs. ອີງຕາມແຜນພັດທະນາພະລັງງານຂອງປະເທດທີ່ນຳເຂົ້າໄຟຟ້າຫຼັກຈາກ ສປປ ລາວ ເຊັ່ນ: ຈີນ, ປະເທດໄທ ແລະ ຫວຽດນາມ ໄດ້ສະແດງໃຫ້ເຫັນວ່າມີຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າສູງໃນສອງທົດສະວັດຕໍ່ໜ້າ .

ການສົ່ງອອກພະລັງງານໄຟຟ້າເປັນການພັດທະນາທີ່ກໍ່ຫາມີຂຶ້ນໃນ ສປປ ລາວ. ປະຈຸບັນນີ້ ສປປ ລາວ ມີ MOU ຢູ່ກັບທັງປະເທດໄທ ແລະ ຫວຽດນາມ ອີກທັງຍັງຮ່ວມມືກັບກຳປູເຈຍ ແລະ ຈີນ ໃນການສະໜອງພະລັງງານໄຟຟ້າຜ່ານບັນດາ IPPs ທີ່ຢູ່ໃນ ສປປ ລາວ. ບໍ່ແມ່ນທຸກໂຄງການ IPPs ທີ່ບໍລິສັດຈະໄດ້ເຂົ້າຮ່ວມລົງທຶນ ຢ່າງໃດກໍ່ຕາມ, ຈຳນວນ IPPs ເຫຼົ່ານີ້ຈະມີສ່ວນກ່ຽວຂ້ອງກັບບໍລິສັດ.

6.1.3 ແຜນການສະໜອງໄຟຟ້າໃຫ້ປະເທດໄທ

ເດືອນ ມິຖຸນາ ປີ 1993, ລັດຖະບານລາວ ແລະ ລັດຖະບານໄທ ໄດ້ເຊັນ MOU ສະບັບທຳອິດ ເພື່ອສະໜັບສະໜຸນການພັດທະນາໂຄງການໄຟຟ້າໃນ ສປປ ລາວ ດ້ວຍການສະໜອງພະລັງງານໄຟຟ້າເຖິງ 1.500 MW ໃຫ້ ປະເທດໄທ. ເພື່ອເປັນການສະໜອງຄວາມຕ້ອງການໄຟຟ້າທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນປະເທດໄທ, ທັງສອງລັດຖະບານໄດ້ມີການ ຂະຫຍາຍໄລຍະເວລາຂອງບົດບັນທຶກອີກຫຼາຍຄັ້ງ. ແຜນທີ່ຈະສະໜອງພະລັງງານໄຟຟ້າໃຫ້ແກ່ປະເທດໄທ ອາດຈະມີການ ຂະຫຍາຍຈາກ 7.000 MW ເຖິງ 12.000 ພາຍໃນປີ 2020.

6.1.4 ແຜນການສະໜອງໄຟຟ້າໃຫ້ຫວຽດນາມ

ປີ 1998, ລັດຖະບານລາວໄດ້ເຊັນ MOU ກັບລັດຖະບານຫວຽດນາມເພື່ອສະໜອງພະລັງງານ ໄຟຟ້າ 2,000 MW ຈາກ ສປປ ລາວ ໃຫ້ແກ່ຫວຽດນາມ. ເດືອນທັນວາ 2006, ທັງສອງຝ່າຍກໍ່ໄດ້ເຊັນ MOU ສະບັບທີ່ສອງ ໂດຍຕົກລົງທີ່ຈະສະໜອງລະດັບພະລັງງານໄຟຟ້າເພີ່ມຂຶ້ນຈາກ 2,000 MW ເປັນ 3.000 MW ພາຍໃນປີ 2015. ຕໍ່ມາເດືອນມັງກອນ 2008, ກໍ່ໄດ້ມີການຕົກລົງເພີ່ມການສະໜອງພະລັງງານໄຟຟ້າຈາກ 3.000 MW ເປັນ 5.000 MW ພາຍໃນປີ 2020.

ນອກຈາກນີ້, ໄດ້ຂຶ້ນບັນຊີລາຍການອີກ 20 ໂຄງການກ່ຽວກັບສາຍສົ່ງເພື່ອສະໜອງໄຟຟ້າໃຫ້ເຖິງ 5.000 MW ພາຍໃຕ້ MOU ທີ່ໄດ້ເຊັນກັນລະຫວ່າງສອງຝ່າຍ.

6.1.5 ແຜນການສະໜອງໄຟຟ້າໃຫ້ກຳປູເຈຍ

ເດືອນທັນວາ ປີ 2009, ຟຟລ ໄດ້ເລີ່ມສົ່ງໄຟຟ້າປະມານ 10 MW ຈາກພາກໃຕ້ເພື່ອໃຫ້ສະຖານີ ໄຟຟ້າຂະໜາດໜ້ອຍໃນກຳປູເຈຍ. ປະຈຸບັນ, ໄດ້ມີການເຮັດຂໍ້ຕົກລົງກັບການໄຟຟ້າກຳປູເຈຍເພື່ອການສະໜອງໄຟຟ້າ ຈາກ ສປປ ລາວເພີ່ມຂຶ້ນເປັນ 200 MW ໃນປີ 2020. ໂດຍມີເຂື່ອນດອນສະໂຮງເຊິ່ງຢູ່ເທິງແຄມແມ່ນ້ຳຂອງເປັນໂຄງການເຂື່ອນ ພະລັງງານນ້ຳແຫ່ງທຳອິດທີ່ຈະສະໜອງໄຟຟ້າເຂົ້າລະບົບສາຍສົ່ງໃຫ້ແກ່ທາງຕອນເໜືອຂອງກຳປູເຈຍ

6.1.6 ການບໍລິຫານ ແລະ ຄຸ້ມຄອງຄວບຄຸມສະຖານີໄຟຟ້າ

ປັດໄຈສຳຄັນທີ່ສາມາດນຳໃຊ້ຜົນປະໂຫຍດຈາກຄວາມຕ້ອງການຊຶມໃຊ້ພະລັງງານທັງພາຍໃນ ແລະ ຕ່າງປະເທດແມ່ນການປະສານງານ ແລະ ຕອບສະໜອງໄຟຟ້າໃຫ້ກົງກັບເວລາ. ດັ່ງນັ້ນ ຟຟລ ຈຶ່ງໄດ້ພັດທະນາລະບົບການຄວບ ຄຸມສູນຈ່າຍກະແສໄຟຟ້າແຫ່ງຊາດໃໝ່ (NLDC). ໂດຍວັດຖຸປະສົງຫຼັກຂອງລະບົບ NLDC ແມ່ນເພື່ອຄວບຄຸມລະບົບໃຫ້ມີ ຄວາມໜ້າເຊື່ອຖື, ມີຄວາມຊັດເຈນທາງດ້ານເຕັກນິກ, ລາຄາສົມເຫດສົມຜົນ ແລະ ເຮັດໃຫ້ການບໍລິຫານການຊື້-ຂາຍພະລັງງານ ໄຟຟ້າລະຫວ່າງ ຟຟລ ແລະ ໂຄງການ IPPs ມີປະສິດທິພາບ. ນອກຈາກນັ້ນ, NLPC ມີແຜນການທີ່ຈະຄຸ້ມຄອງສູນຄວບຄຸມ 4 ພາກ (Regional Control Centre) ດັ່ງລາຍລະອຽດລຸ່ມນີ້:

(1) ສູນຄວບຄຸມພາກກາງ ແມ່ນຕັ້ງຢູ່ສະຖານີໂພນຕ້ອງ ນະຄອນຫຼວງວຽງຈັນ;

(2) ສູນຄວບຄຸມພາກເໜືອ ແມ່ນຕັ້ງຢູ່ສະຖານນີແສນສຸກ ແຂວງຫຼວງພະບາງ;

(3) ສູນຄວບຄຸມພາກໃຕ້ ແມ່ນຕັ້ງຢູ່ສະຖານີທ່າແຂກ ແຂວງຄຳມ່ວນ; ແລະ

(4) ສູນຄວບຄຸມພາກໃຕ້ອີກແຫ່ງໜຶ່ງ ແມ່ນຕັ້ງຢູ່ສະຖານນີບັງເຢາະ ແຂວງຈຳປາສັກ.

ນອກຈາກນັ້ນ NLDC ຍັງມີແຜນການທີ່ຈະຄວບຄຸມເຂື່ອນໄຟຟ້າ (Hydropower Plant Control Centres (HPCC)) ອີກສອງແຫ່ງ ດັ່ງລຸ່ມນີ້:

(1) ສູນຄວບຄຸມເຂື່ອນໄຟຟ້າ ເຂດພາກເໜືອ ແລະ ພາກກາງເຊິ່ງຕັ້ງຢູ່ເຂື່ອນໄຟຟ້າ ນ້ຳງື່ມ 1, ແຂວງວຽງຈັນ; ແລະ

(2) ສູນຄວບຄຸມເຂື່ອນໄຟຟ້າ ເຂດພາກໃຕ້ເຊິ່ງຕັ້ງຢູ່ເຂື່ອນໄຟຟ້າ ເຊເສັດ 1 ແຂວງສາລະວັນ.

6.2 ການສ້າງລາຍຮັບຈາກແຫຼ່ງອື່ນໆ ໃນຊ່ອງທາງທີ່ພວກເຮົາມີທ່າແຮງທີ່ດີ

ບໍລິສັດເອງອາດຈະຫາຊ່ອງທາງໃນການສ້າງລາຍຮັບຈາກການຂາຍຄາບອນເຄຣດິດ (carbon credit) ຈາກຊັບສິນເຂື່ອນໄຟຟ້າທີ່ມີຢູ່. ປະເທດເພື່ອນບ້ານຂອງສປປ ລາວ ທີ່ເປັນຜູ້ຊົມໃຊ້ໄຟຟ້າຈຳນວນຫຼວງຫຼາຍ ແມ່ນໄດ້ກ່ຽວຂ້ອງກັບການຜະລິດໄຟຟ້າໃນລະບົບທີ່ນຳໃຊ້ທາດອາຍກາກໂບນິກສູງ. ເຊິ່ງວ່າ ສປປ ລາວ ເອງໄດ້ເຄີຍຄາດໝາຍວ່າຈະສ້າງລາຍຮັບແບບບໍ່ຈຳກັດຈາກການຂາຍຄາບອນເຄຣດິດທີ່ໄດ້ຈາກລະບົບການຜະລິດໄຟຟ້າພະລັງງານນ້ຳທຳມະຊາດ 100 ສ່ວນຮ້ອຍ. ຢ່າງໃດກໍ່ຕາມ , ຕາມ UN Executive Board Decision of EB 28 ທີ່ອະນຸຍາດໃຫ້ມີການຂາຍຄາບອນເຄຣດິດຢູ່ ສປປ ລາວໄດ້ໃນປະຈຸບັນ ເຊິ່ງບໍລິສັດເອງກໍ່ຄາດຄະເນວ່າມີໂຄງການໃນ ສປປ ລາວ ຢ່າງນ້ອຍ 3 ໂຄງການທີ່ຈະຫາລາຍໄດ້ຈາກການຂາຍຄາບອນເຄຣດິດໄດ້.

ເນື້ອໃນຫຼັກຂອງຫຼັກ Kyoto Protocol ແມ່ນເພື່ອສ້າງຄວາມຮັບຜິດຊອບໃຫ້ແກ່ 37 ປະເທດອຸດສາຫະກຳ ແລະ ໃນກຸ່ມປະເທດເອີຣົບໃນການຫຼຸດຜ່ອນການປ່ອຍມົນລະພິດອາຍແກັດເຮືອນແກ້ວ (Greenhouse gas, GHG). ຫຼັກການປະຕິບັດດັ່ງກ່າວແມ່ນໄດ້ສ້າງຄວາມຮັບຜິດຊອບອັນໜັກໜ່ວງຕໍ່ປະເທດທີ່ພັດມະນາແລ້ວ ພາຍໃຕ້ຫຼັກການຄວາມເທົ່າທຽມກັນແຕ່ຈັດສັນໜ້າທີ່ຄວາມຮັບຜິດຊອບ (Common but differentiated responsibilities) ຍ້ອນການຮັບຮູ້ວ່າບັນດາປະເທດພັດທະນາແລ້ວ ມີຄວາມຮັບຜິດຊອບຕົ້ນຕໍຕໍ່ມົນລະພິດຂອງອາຍພິດເຮືອນແກ້ວທີ່ມີຢູ່ໃນຊັ້ນບັນຍາກາດໃນປະຈຸບັນເຊິ່ງເກີດມາຈາກຂະບວນການໃນການຜະລິດ ແລະ ການຂະຫຍາຍຕົວພາກອຸດສາຫະກຳຫຼາຍກວ່າ 150 ປີມາແລ້ວ.

ກົນໄກການພັດທະນາທີ່ສະອາດ (Clean Development Mechanism, CDM) ເຊິ່ງໄດ້ນິຍາມໄວ້ ໃນມາດຕາ 12 ຂອງ Kyoto Protocol ແມ່ນອະນຸຍາດໃຫ້ບັນດາປະເທດທີ່ມຸ່ງໝັ້ນຈະ ຫຼຸດຜ່ອນມົນລະພິດ ຫຼື ຈຳກັດການປ່ອຍມົນລະພິດຕາມ Kyoto Protocol (ເອກະສານຊ້ອນທ້າຍ B) ໃນການຈັດຕັ້ງປະຕິບັດໂຄງການເພື່ອຫຼຸດຜ່ອນມົນລະພິດໃນປະເທດທີ່ກຳລັງພັດທະນາ. ເຊິ່ງໂຄງການດັ່ງກ່າວອາດມີລາຍຮັບຈາກການຂາຍໃບຢັ້ງຢືນການຫຼຸດຜ່ອນມົນລະພິດໄດ້ (Certificated Emission Reduction, CER) ໂດຍໜຶ່ງໜ່ວຍຂອງຄາບອນເຄຣດິດເທົ່າກັບ 1 ໂຕນຂອງທາດອາຍກາກໂບນິກ ເຊິ່ງສາມາດນັບຮວມເຂົ້າກັນ ເພື່ອໃຫ້ບັນລຸເປົ້າໝາຍຂອງ Kyoto Protocol.

ໃນຂະນະທີ່ຕົ້ນກຳເນີດພະລັງງານໄຟຟ້າຫຼັກຂອງ ສປປ ລາວ ແມ່ນມາຈາກແຫຼ່ງພະລັງງານໝຸນວຽນທີ່ມີລະບົບສາຍສົ່ງທີ່ເປັນລະບົບລະຫວ່າງປະເທດເຊິ່ງຄອບຄຸມເອົາ ສປປ ລາວ, ປະເທດໄທ, ປະເທດກຳປູເຈຍ ແລະ ສສ. ຫວຽດນາມ ພາຍໃຕ້ກົນໄກການພັດທະນາທີ່ສະອາດຂອງ UNFCCC ເຊິ່ງມີຂອບເຂດໂຄງການທີ່ສາມາດກຳນົດໃນລະບົບສາຍ

ສິ່ງທີ່ກ່ວ້າງຂວ້າງ, ຄະນະບໍລິຫ້ານງ້ານຂອງ UNFCCC ກ່ໍໄດ້ອະນຸມ້ດບ້ນດ້າໂຄງກ້ານທ່ີມ້ຂອບເຂດໃນລ້ກສະນະຂ້ວ້ມຜ່ວ້ນຊ້ວ້ຍ ແດນລະຫ່ວ້ວ້ງປະເທດແລ້ວ.

ຂ້ໍຕ້ກລ້ງຂອງ UN Executive Board Decision of EB 28 ໄດ້ລະບຸໄວ້ຊ້ດເຈນແລ້ວວ່ວ້ລະບ້ບສ້ວ້ຍສ່ິງ ທ່ີຂ້ວ້ມຊ້ວ້ຍແດນແມ່ນໃຫ້ສ້ວ້ມ້ດຖ້ວ່ວ້ເປ້ນໂຄງກ້ານດຽວກ້ນໄດ້ ແລະຍ້ງໄດ້ຮ້ບກ້ານຢ້ັ້ງຢ້ນຈ້ວ້ກ້ານອະນຸມ້ດໂຄງກ້ານທ່ີ 2746 (Project 2746): ໂຄງກ້ານເຂ່ືອນໄຟຟ້ວ້ດ້ວ້ກ້ວ້ຈູແຫ່ງປະເທດບູຖ້ານ ໃນເດ້ອນມ້ນ້ 2010 ເຊ່ິງມ້ສ້ວ້ມປ້ດໄຈທ່ີມ້ອ້ດທ້ພ້ນຕ່ໍ ຄະນະບໍລິຫ້ານງ້ານ ໄດ້ແກ່:

- ລະບ້ບສ້ວ້ຍສ່ິງຂອງປະເທດບູຖ້ານ ໄດ້ເຊ່ືອມຕ່ໍແບບສ້ມບ້ນແລ້ວກ້ບລະບ້ບສ້ວ້ຍສ່ິງຕ້ວ້ເວ້ນອອກ ຂອງປະເທດອ້ນເດຍ ແລະ ໄດ້ສ່ິງອອກ 90 ສ່ວນຮ້ວ້ຍຂອງຈ້ວ້ນວ້ນໄຟຟ້ວ້ທ່ີຜະລ້ດໄດ້ທ້ງໝ້ດ ອອກໄປໃນລະບ້ບສ້ວ້ຍສ່ິງຕ້ວ້ເວ້ນອອກ້ຂອງອ້ນເດຍ.
- ລະບ້ບສ້ວ້ຍສ່ິງໄຟຟ້ວ້ແຮງສ້ງສ່ວ້ນໃຫ່ຍ່ຂອງປະເທດບູຖ້ານໄດຮ້ບກ້ານສ້ວ້ງຂ້ໍ້ນແລ້ວສ້ໍ້ລ້ບກ້ານສະໜ ອງກ້ານສ່ິງໄຟຟ້ວ້ໃຫ້ກ້ບອ້ນເດຍ.
- ແນວຄ້ດໃນກ້ານຂ້ວ້ຍໄຟຟ້ວ້ຂ້ວ້ມປະເທດ ລະຫ່ວ້ວ້ງອ້ນເດຍ ແລະ ບູຖ້ານ ແມ່ນສ້ວ້ມ້ດພ້ສ້ດໄດ້ຈ້ວ້ກ ສ້ນຍ້ວ້ລະຫ່ວ້ວ້ງສ້ວ້ງຝ່ວ້ຍທ່ີໄດ້ເຊ້ນກ້ນໃນວ້ນທ່ີ 28 ກ້ໍລະກ້ດ 2006.

ສປປ ລ້ວ ແລະ ປະເທດໄທ ກ່ໍມ້ສະຖ້ວ້ນະທ່ີຄ້ກ້ບອ້ນເດຍ ແລະ ບູຖ້ານ ໃນທ້ງສ້ວ້ມປ້ດໄຈເທ້ງນ້ໍ້ນ. ດ້ງນ້ໍ້ນ, ເມ່ືອອ້ງໃສ່ກ້ານປະສ້ມປະສ້ວ້ນກ້ນທ້ວ້ງດ້ວ້ນພະລ້ງງ້ນຂອງລະບ້ບສ້ວ້ຍສ່ິງລະຫ່ວ້ວ້ງປະເທດໄທ ແລະ ສປປ ລ້ວ ຈ້ງ້ວ້ດສະໜ້ບ ໄດ້ວ່ວ້ທ້ກໆ ປະລ້ມ້ວ້ນໄຟຟ້ວ້ 100 GWh ທ່ີຜະລ້ດໃນ ສປປ ລ້ວ ຈະມ້ລ້ວ້ຍຮ້ບຈ້ວ້ກ້ວ້ບອນເຄຣດ້ດປະມ້ວ້ນ 55,000 ໂຕລ້ວ ສະຫະລ້ດຕ່ໍ່ປ້. ເຊ່ິງເຄຣດ້ດດ້ງກ່ວ້ວ້ວ້ສ້ວ້ມ້ວ້ດຊ້ື ຂ້ວ້ຍ ແລວ້ປ່ຽນໄດ້ໂດຍຜ່ວ້ນ European Climate Exchange (ECX) ຫ້ ຜ່ວ້ນສ້ນຍ້ວ້ຊ້ື້ຂ້ວ້ຍລ່ວ້ວ້ງໜ້ວ້ເຊ່ິງຮ້ຈ້ກ້ກ້ນໃນນ້ວ້ມສ້ນຍ້ວ້ຊ້ື້ຂ້ວ້ຍກ້ານຫ້ດຜ່ວ້ນກ້ານປ່ວ້ຍມ້ນລະພ້ດ (Emissions Purchase Reductions Agreement, ERPA) ເຊ່ິງສ້ວ້ມ້ດເຊ້ນສ້ນຍ້ວ້ກ້ນໃນໄລຍ້ວ 7 ປ້ ຫ້ 10 ປ້ ແລະ ສ້ວ້ມ້ດກ້ໍ້ນ້ດລ້ວ້ຍຮ້ບໄດ້ ຕ້ງ້ແຕ່ວ້ນ້ທ່ີເລ່ີມຕ້ນກ້ານຜະລ້ດເປ້ນຕ້ນໄປ. ໂດຍສ້ນຍ້ວ້ ERPA ເ້ໜ້ວ້ນ້ສ້ວ້ມ້ດຕ່ໍ່ວ້ວ້ຍຸໄດ້ເຖ້ງ 21 ປ້. ເມ່ືອພ້ຈ້ວ້ລະນ້ວ້ເຖ້ງ ໂຄງກ້ານ, ລ້ວ້ຍຮ້ບຈ້ວ້ກ້ວ້ບອນເຄຣດ້ດສ້ວ້ມ້ດກ້ວ້ຍເປ້ນລ້ວ້ຍຮ້ບ້ໜ້ກ້ວ້ສ່ວ້ນໜ້ໍ່ງ້ທ່ີສ້ວ້ມ້ດຍ້ກລະດ້ບ IRR ຂອງແຕ່ລະໂຄງກ້ານ ໄດ້ໃນລະດ້ບສ້ງ.

ບໍລິສ້ດຍ້ງໄດ້ເບ່ິງຄວ້ມເປ້ນໄປໄດ້ໃນກ້ານໃຫ້ບໍລິກ້ານພ້ດທະນ້ໂຄງກ້ານແກ່ຜ້ພ້ດທະນ້ໂຄງກ້ານ IPPs ລວ້ມ້ທ້ງກ້ານດ້ໍ້ເນ້ນ້ງ້ານ ແລະ ບ້ໍ້ລຸງຮ້ກ້ວ້ສ້ໃຫ້ແກ່ໂຄງກ້ານດ້ງກ່ວ້ວ. ພະນ້ກ້ງ້ານວ້ິສະວ້ະກອນຂອງບໍລິສ້ດ ແມ່ນມ້ຄວ້ມສ້ວ້ມ້ດ ສ້ງ ແລະສ້ວ້ມ້ດສະໜອງບໍລິກ້ານທ້ວ້ງດ້ວ້ນກ້ານດ້ໍ້ເນ້ນ້ງ້ານ ແລະບ້ໍ້ລຸງຮ້ກ້ວ້ສ້ໃຫ້ແກ່ໂຄງກ້ານ IPPs ໃນອະນ້ວ້ຄ້ດໄດ້. ຍ້ງ່ໄປ ກ່ວ້ນ້ໍ້ນ, ທ້ມ້ງ້ານພ້ດທະນ້ໂຄງກ້ານຂອງບໍລິສ້ດມ້ສະຖ້ວ້ນະທ່ີໄດ້ປ້ຽບໃນກ້ານເຂ້ວ້ເຖ້ງ ແລະກ້ານໄດຮ້ບກ້ານອະນຸຍ້ວ້ດຕ່ວ້ງ້ໆ ໄດ້ ດ້ກ່ວ້ວ້ທ້ມ້ງ້ານທ່ີມ້ຈ້ວ້ກຕ່ວ້ງ້ປະເທດ.

6.3 ແຜນກ້ານກ່ໍ່ສ້ວ້ງຊ້ບສ້ມທ່ີໃຊ້ໃນກ້ານຜະລ້ດໄຟຟ້ວ້ຂອງບໍລິສ້ດ.

ເພ່ືອໃຫ້ສ້ວ້ມ້ດຕອບສະໜອງຄວ້ມຕ້ອງກ້ານຊ້ມໃຊ້ພະລ້ງ້ງ້ານໄຟຟ້ວ້ພ້ວ້ຍໃນ ສປປ ລ້ວ ແລະ ຄວ້ມຕ້ອງ ກ້ານເພ່ືອກ້ານສ່ິງອອກໃນອະນ້ວ້ຄ້ດ, ຟຟລ ໄດ້ພ້ດທະນ້ແຜນກ້ານສະໜອງໄຟຟ້ວ້ (ເຊ່ິງລະບຸໄວ້ໃນ PDP 2010-2020

(ດັດແກ້1)). ແຜນດັ່ງກ່າວໄດ້ຮຽກຮ້ອງໃຫ້ມີການປະສົມປະສານກັນລະຫວ່າງເຂື່ອນໄຟຟ້າທີ່ເປັນຂອງບໍລິສັດແຕ່ພຽງຜູ້ດຽວໃນ ອະນາຄົດ ແລະ IPPs ອື່ນໆ. ຕາຕະລາງ 5.2 ລຸ່ມນີ້ໄດ້ສະຫຼຸບແຜນດັ່ງກ່າວໄວ້ດັ່ງນີ້.

ຕາຕະລາງ 6.2: ແຜນການກໍ່ສ້າງການຜະລິດໄຟຟ້າຂອງບໍລິສັດ

ປີ	ລວມກຳລັງການຜະລິດເພີ່ມເຕີມ (MW)
2011 – 2015	1.202
2016 – 2020	1.233
ລວມທັງໝົດ 2011 - 2020	**2.435**

ແຫຼ່ງຂໍ້ມູນ: ຜ-ຟຟລ

ແຜນການກໍ່ສ້າງກຳລັງການຜະລິດໄຟຟ້າຂອງບໍລິສັດບໍ່ໄດ້ລວມເຖິງໂຄງການ IPPs.

6.4 ແຜນການລົງທຶນ

6.4.1 ການຂະຫຍາຍຕົວຂອງບໍລິສັດໃນອະນາຄົດ ແລະ ນະໂຍບາຍຂອງລັດຖະບານ

ບໍລິສັດເຊື່ອໝັ້ນວ່າບໍລິສັດຢູ່ໃນສະຖານະທີ່ດີທີ່ຈະສາມາດຂະຫຍາຍໂຕໄປໄດ້ຢ່າງວ່ອງໄວດ້ວຍ ເຫດຜົນດັ່ງຕໍ່ໄປນີ້:

(i) ບໍລິສັດມີໂຄງສ້າງໃນການນຳໃຊ້ຊັບສິນເຂົ້າໃນການຜະລິດໄຟຟ້າດ້ວຍເງິນໝຸນວຽນທີ່ໝັ້ນຄົງ;

(ii) ບໍລິສັດແມ່ນມີຄວາມໃກ້ຊິດກັບ ຟຟລ ເຊິ່ງທຳໃຫ້ເພີ່ມການເຂົ້າເຖິງ IRR ເພື່ອແຂ່ງຂັນ ລາຄາໃນຕະຫຼາດ ແລະ ບັນເທົາຄວາມສ່ຽງກ່ອນຂັ້ນຕອນການເປີດການດຳເນີນການ ຜະລິດທາງການຄ້າ; ແລະ

(iii) ຜ່ານການກະກຽມການຜູກພັນໃນ PPAs ຕອບສະໜອງການໝຸນວຽນທຶນທີ່ໝັ້ນຄົງ ລວມໄປເຖິງການປົກປ້ອງເງິນເຟີ້ ແລະ ອັດຕາແລກປ່ຽນ.

6.4.2 ແຜນການລົງທຶນຂອງບໍລິສັດ

ບໍລິສັດເຊື່ອວ່າໃນອະນາຄົດອັນໃກ້ນີ້ຈະເກີດປະສິດທິພາບສູງສຸດສຳລັບ ຟລລ ທີ່ຈະສືບຕໍ່ ຮັບຜິດຊອບໃນການພັດທະນາ ແລະ ການກໍ່ສ້າງຂອງບັນດາຊັບສິນເຫຼົ່ານີ້ ແລະ ເພື່ອທີ່ຈະໂອນຊັບສິນເຫຼົ່ານີ້ໃນ ຫຼື ໃກ້ວັນ COD ຫຼື ວັນທີ່ທີ່ມີການຕົກລົງເຫັນດີລະຫວ່າງບໍລິສັດ ແລະ ຟຟລ (ຕາມແຕ່ກໍລະນີ), ລວມທັງການລົງທຶນໃນການຈັດຈຳໜ່າຍ ແລະ ການຈັດການດຳເນີນການໄລ່ເບ້ຍ.

ລຸ່ມນີ້ແມ່ນບົດສະຫຼຸບລາຍການຊັບສິນຂອງບໍລິສັດ ທີ່ໄດ້ຮັບມາຈາກ ຟຟລ

ຕາຕະລາງ 6.3: ຊັບສິນທີ່ໃຊ້ໃນການຜະລິດຂອງ ຟຟລ ທີ່ຢູ່ໃນໄລຍະເວລາ ແລະ ແຜນການກໍ່ສ້າງ (ທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ)

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງຕິດຕັ້ງ (MW)	COD	ຕະຫຼາດເປົ້າໝາຍ
1	ຫ້ວຍລໍາພັນໃຫຍ່	ເຊກອງ	88,00	2015	ສປປ ລາວ
2	ນ້ຳຫີນບຸນ	ຄຳມ່ວນ	30,00	2016	ສປປ ລາວ
3	ນ້ຳຄານ 2	ຫຼວງພະບາງ	130,00	2016	ສປປ ລາວ
4	ນ້ຳຄານ 3	ຫຼວງພະບາງ	60,00	2016	ສປປ ລາວ
5	ເຊເສັດ 3	ຈຳປາສັກ	24,00	2016	ສປປ ລາວ
6	ນ້ຳຈຽນ 1	ຊຽງຂວງ	104,00	2016	ສປປ ລາວ
7	ນ້ຳງຶມ 1 Ext DFE	ວຽງຈັນ	80,00	2018	ສປປ ລາວ
8	ນ້ຳງຶມ 1 Ext ໜ່ວຍທີ 6	ວຽງຈັນ	40,00	2018	ສປປ ລາວ
ລວມທັງໝົດ			**556,00**		

ແຫຼ່ງຂໍ້ມູນ: ຜ-ຟຟລ

ຕາຕະລາງ 6.4: ໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນເຊິ່ງຢູ່ໃນໄລຍະການເວລາ ແລະ ແຜນການກໍ່ສ້າງ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດຕາມການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ໄຊຍະບຸລີ (ແມ່ນ້ຳຂອງ)	ໄຊຍະບຸລີ/ຫຼວງພະບາງ	1.285,00	ປະເທດໄທ/ສປປ ລາວ	ກຳລັງກໍ່ສ້າງ
2	ນ້ຳແບ່ງ	ອຸດົມໄຊ	34,00	ສປປ ລາວ	ກຳລັງກໍ່ສ້າງ
3	ນ້ຳອູ 2	ຫຼວງພະບາງ	120,00	ສປປ ລາວ	ກຳລັງກໍ່ສ້າງ
4	ນ້ຳອູ 5	ຜົ້ງສາລີ	240,00	ສປປ ລາວ	ກຳລັງກໍ່ສ້າງ
5	ນ້ຳອູ 6	ຜົ້ງສາລີ	180,00	ສປປ ລາວ	ກຳລັງກໍ່ສ້າງ
6	ນ້ຳໄຟ	ໄຊສົມບຸນ	86,00	ສປປ ລາວ	ກຳລັງກໍ່ສ້າງ
7	ນ້ຳທາ 1	ຫຼວງນ້ຳທາ	168,00	ສປປ ລາວ	ກຳລັງກໍ່ສ້າງ
8	ນ້ຳມັງ 1	ໄຊສົມບຸນ	64,00	ສປປ ລາວ	ກຳລັງກໍ່ສ້າງ
9	ນ້ຳລີກ 1	ວຽງຈັນ	60,00	ສປປ ລາວ	ກຳລັງກໍ່ສ້າງ
10	ນ້ຳງຽບ 2	ຊຽງຂວງ	180,00	ສປປ ລາວ	ກຳລັງກໍ່ສ້າງ
11	ເຊກະມານ 3	ເຊກອງ	250,00	ສປປ ລາວ/ຫວຽດນາມ	ກຳລັງກໍ່ສ້າງ
ລວມທັງໝົດ			**2.667,00**		

ແຫຼ່ງຂໍ້ມູນ: ຜ-ຟຟລ

ຕາຕະລາງ 6.5: ໂຄງການ IPPs ທີ່ໄດ້ດຳເນີນໂດຍ ຟຟລ ໃນປະຈຸບັນ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດຕາມການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ນ້ຳທາ 3	ຫຼວງນ້ຳທາ	1,50	ສປປ ລາວ	-
2	ນ້ຳພ້າວ	ບໍລິຄຳໄຊ	1,80	ສປປ ລາວ	-
3	ນ້ຳລອງ	ຫຼວງນ້ຳທາ	5,00	ສປປ ລາວ	-
ລວມທັງໝົດ			**8,30**		-

ແຫຼ່ງຂໍ້ມູນ: ຜ-ຟຟລ

ໂດຍອີງຕາມການຕົກລົງການໂອນຊັບສິນແຕ່ລະຢ່າງ ບໍລິສັດຈະຊຳລະເປັນເງິນສົດ ຫຼື ອອກຮຸ້ນໃໝ່ ໃຫ້ກັບ ຟຟລ ແລະ ອາດຈະລົງນາມໃນ PPA ກັບ ຟຟລ ແລະ CA ກັບລັດຖະບານພາຍໃຕ້ບັນດາຂໍ້ກຳນົດທີ່ສອດຄ່ອງກັບຂໍ້

ຕົກລົງທີ່ໄດ້ຕົກລົງກັບກັບໂຄງການ IPPs ມາກ່ອນໜ້ານີ້. ໃນເມື່ອຊັບສິນແຕ່ລະຢ່າງໄດ້ຮັບການໂອນ, ບໍລິສັດຈະກາຍເປັນເຈົ້າຂອງ ແລະ ດຳເນີນການກັບຊັບສິນຕ່າງໆ ແລະ ມີລາຍຮັບຕາມທີ່ໄດ້ລະບຸໄວ້ໃນ PPA.

ນອກຈາກການລົງທຶນໃນຊັບສິນຂອງ ຟຟລ ນັ້ນ, ບໍລິສັດຈະຊອກຫາໂອກາດໃນການລົງທຶນໃນໂຄງການ IPPs ຂອງ ຟຟລ ມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງທີ 6.6: ແຜນການລົງທຶນໃນ ໂຄງການອື່ນໆ ຂອງ IPP

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ກຳລັງການຜະລິດຕາມການຕິດຕັ້ງ (MW)	ແຜນການຕະຫຼາດ	ໝາຍເຫດ
1	ນ້ຳຍອນ	ບໍ່ແກ້ວ	2,40	ສປປ ລາວ	-
2	ນ້ຳເທີນ 2	ຄຳມ່ວນ	1.088,00	ສປປ ລາວ/ໄທ	-
3	ຕາດສະແລ້ນ	ສະຫວັນນະເຂດ	3,20	ສປປ ລາວ	-
4	ເຊນ້ຳນ້ອຍ 1	ອັດຕະປື	14,80	ສປປ ລາວ	-
5	ເຊກະໝານ 1	ອັດຕະປື	322,00	ສປປ ລາວ/ຫວຽດນາມ	ກຳລັງກໍ່ສ້າງ
6	ນ້ຳຊຶມ	ຫົວພັນ	9,00	ສປປ ລາວ	ກຳລັງກໍ່ສ້າງ
7	ຫົງສາ ລິກໄນ	ໄຊຍະບູລີ	1.878,00	ສປປ ລາວ/ໄທ	ກຳລັງກໍ່ສ້າງ
8	ເຊປຽນ-ເຊນ້ຳນ້ອຍ	ອັດຕະປື/ຈຳປາສັກ	410,00	ສປປ ລາວ/ໄທ	ກຳລັງກໍ່ສ້າງ
9	ນ້ຳງຽບ 3 A	ຊຽງຂວງ	44,00	ສປປ ລາວ	ກຳລັງກໍ່ສ້າງ
10	ນ້ຳກົງ 2	ອັດຕະປື	66,00	ສປປ ລາວ	ກຳລັງກໍ່ສ້າງ
11	ນ້ຳງຽບ 1	ບໍລິຄຳໄຊ/ຊຽງຂວງ	290,00	ສປປ ລາວ/ໄທ	ກຳລັງກໍ່ສ້າງ
12	ນ້ຳຊານ 3 A ແລະ 3 B	ຊຽງຂວງ	114,00	ສປປ ລາວ	ກຳລັງກໍ່ສ້າງ
13	ເຊກະຕຳ	ຈຳປາສັກ	81,3	ສປປ ລາວ	ກຳລັງກໍ່ສ້າງ
14	ຫ້ວຍເປາະ	ສາລະວັນ	15,00	ສປປ ລາວ	ກຳລັງກໍ່ສ້າງ
ລວມທັງໝົດ			**4.337,70**		

ແຫຼ່ງຂໍ້ມູນ: ຜ-ຟຟລ

6.4.3 ບັນດາຂໍ້ຜູກພັນ

ໃນປີ 2014, ບໍລິສັດໄດ້ອອກຮຸ້ນກູ້ມູນຄ່າ 6.500 ລ້ານບາທ ເພື່ອໃຊ້ໃນການລົງທຶນທັງໃນຊັບສິນເພື່ອໃຊ້ໃນການຜະລິດ ແລະ ລງທຶນໃນຮຸ້ນຂອງ IPP. ໃນເດືອນກຸມພາ 2015, ສ່ວນໜຶ່ງຂອງການດຳເນີນການອອກຮຸ້ນກູ້ຈາກປີ 2014 ໄດ້ຖືກໃຊ້ໄປເພື່ອຊື້ຮຸ້ນ 15 ສ່ວນຮ້ອຍໃນບໍລິສັດ ເຂື່ອນໄຟຟ້ານ້ຳງື່ມ 5 ຈຳກັດ (IPP) ຈາກ ຟຟລ. ສ່ວນທີ່ເຫຼືອຈາກການອອກຮຸ້ນກູ້ໄດ້ຖືກໃຊ້ໄປເພື່ອຊື້ຊັບສິນແລະຮຸ້ນຕາມລາຍການທີ່ສະຫຼຸບໄວ້ດ້ານລຸ່ມນີ້:

ຕາຕະລາງທີ 6.7: ລາຍການໂຄງການເຂື່ອນໄຟຟ້າທີ່ຖືກຊື້ອັນເນື່ອງມາຈາກການອອກຮຸ້ນກູ້

ເຂື່ອນໄຟຟ້າ	ສັດສ່ວນການຖືຮຸ້ນ	ທີ່ຕັ້ງ	ກຳລັງການຜະລິດ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ (GWh p.a.)	COD
ເປັນເຈົ້າຂອງແຕ່ພຽງຜູ້ດຽວ					
ຫ້ວຍລຳພັນໃຫຍ່	100%	ເຊກອງ	88,0	500,0	2015
ນ້ຳຄານ 2	100%	ຫຼວງພະບາງ	130,0	558,0	2015

ເຂື່ອນໄຟຟ້າ	ສັດສ່ວນການຖືຮຸ້ນ	ທີ່ຕັ້ງ	ກຳລັງການຜະລິດ (MW)	ປະລິມານໄຟຟ້າທີ່ຜະລິດໄດ້ຕາມການອອກແບບ (GWh p.a.)	COD
ນ້ຳຄານ 3	100%	ຫຼວງພະບາງ	60,0	249,5	2016
ນ້ຳສະນາ	100%	ວຽງຈັນ	14,0	49,5	2014
ລວມ			**292,0**	**1.357,0**	
IPPs ທີ່ ຟຟລ ເປັນຜູ້ຖືຮຸ້ນ					
ນ້ຳລອງ	20%	ຫຼວງນ້ຳທາ	1,0	37,0	2015
ນ້ຳອູ 2	15%	ຜົ້ງສາລີ	18,0	546,0	2017
ນ້ຳອູ 5	15%	ຜົ້ງສາລີ	36,0	1.049,0	2017
ນ້ຳອູ 6	15%	ຜົ້ງສາລີ	27,0	739,0	2017
ລວມ			**82,0**	**2.371,0**	
ລວມທັງໝົດ			**374,0**	**3.728,0**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ບໍລິສັດໄດ້ເຮັດ MOU ກັບ ຟຟລ ເພື່ອຊື້ຊັບສິນ ແລະ ຮຸ້ນ ລວມໄປເຖິງຈະເຂົ້າເຮັດສັນຍາທີ່ກ່ຽວຂ້ອງກັບການໂອນຊັບສິນອື່ນຕື່ມໃນອະນາຄົດ.

6.4.4 ການນຳໃຊ້ລາຍຮັບຈາກການຂາຍຮຸ້ນ

ເຫດຜົນຂອງການເພີ່ມທຶນໃນຄັ້ງນີ້ ແມ່ນເພື່ອອຳນວຍຄວາມສະດວກໃຫ້ກັບບໍລິສັດໃນການວາງແຜນໄລຍະຍາວ ແລະ ຕອບສະໜອງຕາມຈຸດປະສົງຂອງບໍລິສັດທີ່ວາງໄວ້ ຄື: (i) ຮັກສາສ່ວນແບ່ງທາງການຕະຫຼາດຂອງບໍລິສັດ; (ii) ຮັກສາອັດຕາການເຕີບໂຕຂອງບໍລິສັດ; (iii) ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພະລັງງານ ຂອງ ສປປ ລາວ ແລະ ການສົ່ງອອກໃນອະນາຄົດ.

ເພື່ອຕອບສະໜອງທຶນໃນການກໍ່ສ້າງເຂື່ອນໄຟຟ້າທີ່ບໍ່ສາມາດດຳເນີນການໃນໄລຍະເວລາອັນສັ້ນໄດ້, ບໍລິສັດຈະຕ້ອງມີການລະດົມທຶນເພື່ອອຳນວຍຄວາມສະດວກໃນການເຂົ້າໄປຊື້ກິດຈະການຈາກ ຟຟລ ແລະ ລົງທຶນໂດຍກົງດ້ວຍການອອກຮຸ້ນເພີ່ມທຶນ ເພື່ອເຮັດໃຫ້ ສປປ ລາວ ມີໄຟຟ້າໃຊ້ຢ່າງພຽງພໍຕາມແຜນການທີ່ລັດຖະບານວາງໄວ້ ຮອດປີ 2020.

ທຶນທີ່ໄດ້ຈາກການສະເໜີຂາຍຮຸ້ນຈະຖືກນຳໃຊ້ໃນ:

(i) ເພື່ອຊື້ຊັບສິນທີ່ໃຊ້ໃນການຜະລິດທີ່ ຟຟລ ເປັນເຈົ້າຂອງພຽງຜູ້ດຽວ;

(ii) ບັນດາໂຄງການ IPPs ທີ່ມີ ຟຟລ ເປັນຮຸ້ນສ່ວນ;

(iii) ການລົງທຶນໂດຍກົງຂອງບໍລິສັດໃນບັນດາໂຄງ ການໄຟຟ້າອື່ນ; ແລະ

(iv) ໃຊ້ເປັນທຶນໝຸນວຽນໃນບໍລິສັດ.

ໂດຍທີ່ (i)-(iii) ໃນຂ້າງເທິງນີ້ ອາດເອີ້ນລວມກັນວ່າ "**ການບໍລິຫານຊັບສິນ**" (Portfolio of Assets)

ສັນຍາໂອນຊັບສິນທີ່ກ່ຽວຂ້ອງຈະຕ້ອງໄດ້ເຊັນໂດຍບໍລິສັດ ແລະ ຟຟລ ເພື່ອບັນລຸເປົ້າໝາຍຂອງ COD ຂອງ ບັນດາຊັບສິນ ຫຼື ຮຸ້ນຂອງ ຟຟລ ທີ່ຢູ່ໃນບັນດາ IPPs ທີ່ກ່ຽວຂ້ອງ ຫຼື ຕາມວັນທີທີ່ທັງສອງຝ່າຍໄດ້ຕົກລົງເຫັນດີຮ່ວມກັນເປັນ ລາຍລັກອັກສອນ (ຕາມແຕ່ກໍລະນີ).

ຕາຕະລາງທີ 6.8: ການບໍລິຫານຊັບສິນ

ລ/ດ	ຊື່ໂຄງການ	ທີ່ຕັ້ງ (ແຂວງ)	ສັດສ່ວນການຖືຮຸ້ນ	ກຳລັງການຜະລິດ (MW)	ແຜນການຕະຫຼາດ	ໝາຍເຫດ	ປີທີ່ຄາດວ່າຈະມີການໂອນ
ຊັບສິນທີ່ໃຊ້ໃນການຜະລິດ ທີ່ ຟຟລ ເປັນເຈົ້າຂອງແຕ່ພຽງຜູ້ດຽວ ແລະ ກ່ຽວພັນກັບການນຳໃຊ້ລາຍຮັບຈາກການຂາຍຮຸ້ນ							
1	ນ້ຳຈຽນ 1	ຊຽງຂວງ	100%	104,0	ສປປ ລາວ	ກຳລັງກໍ່ສ້າງ	2016
2	ນ້ຳຫົ້ມບຸນ	ຄຳມ່ວນ	100%	30,0	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊເສັດ 3	ຈຳປາສັກ	100%	24,0	ສປປ ລາວ	ກຳລັງກໍ່ສ້າງ	2016
4	ນ້ຳງື່ມ 1 Ext DFE	ວຽງຈັນ	100%	80,0	ສປປ ລາວ	ກຳລັງກໍ່ສ້າງ	2018
5	ນ້ຳງື່ມ 1Extໜ່ວຍທີ 6	ວຽງຈັນ	100%	40,0	ສປປ ລາວ	ຢຸ່ລະຫວ່າງການສຶກສາຄວາມເປັນໄປໄດ້	2018
	ລວມ			**278,0**			
ໂຄງການ IPP ທີ ຟຟລ ຖືຮຸ້ນ							
1	ນ້ຳງຽບ 2	ວຽງຈັນ	10%	18,0	ສປປ ລາວ	ກຳລັງກໍ່ສ້າງ	2015
2	ນ້ຳແບ່ງ	ອຸດົມໄຊ	20%	6,8	ສປປ ລາວ	ກຳລັງກໍ່ສ້າງ	2016
3	ເຊກະມານ 3	ເຊກອງ	15%	37,5	ສປປ ລາວ	ກຳລັງກໍ່ສ້າງ	2015
4	ນ້ຳລີກ 1	ວຽງຈັນ	10%	6,0	ສປປ ລາວ	ກຳລັງກໍ່ສ້າງ	2016
5	ນ້ຳມັ່ງ 1	ບໍລິຄຳໄຊ	10%	6,4	ສປປ ລາວ	ກຳລັງກໍ່ສ້າງ	2016
6	ນ້ຳທາ 1	ຫຼວງນ້ຳທາ/ບໍ່ແກ້ວ	20%	33,6	ສປປ ລາວ	ກຳລັງກໍ່ສ້າງ	2017
	ລວມ			**108,3**			
ບໍລິສັດນຳໄປລົງທຶນໂດຍກົງໃນໂຄງການໄຟຟ້າອື່ນໆ							
1	ນ້ຳພູນ	ໄຊຍະບຸລີ	51%	30,6	ສປປ ລາວ	ຢຸ່ລະຫວ່າງການພັດທະນາໂຄງການຕາມ PDA	2018
2	ນ້ຳບີ	ເຊກອງ	80%	104,0	ສປປ ລາວ	ຢຸ່ລະຫວ່າງການສຶກສາຄວາມເປັນໄປໄດ້	2018
	ລວມ			**134,6**			
	ລວມທັງໝົດ			**520,9**			

ແຫຼ່ງຂໍ້ມູນ: ຜ-ຟຟລ

7. ຂໍ້ຂັດແຍ່ງທາງກົດໝາຍ

ໃນຊ່ວງເວລາດຳເນີນທຸລະກິດໂດຍທົ່ວໄປ, ບໍລິສັດບໍ່ໄດ້ມີການຮ້ອງຟ້ອງໄປຍັງສານໃດໜຶ່ງ ຫຼື ບໍ່ມີຂໍ້ຂັດແຍ້ງໃດໜຶ່ງທີ່ອາດຈະສົ່ງຜົນກະທົບເຖິງຊັບສິນຂອງບໍລິສັດ ຫຼື ອາດເຮັດໃຫ້ມີຄະດີຄວາມ ຫຼື ດຳເນີນຂັ້ນຕອນຕາມກົດໝາຍ. ປະຈຸບັນນີ້, ບໍລິສັດບໍ່ມີການດຳເນີນຄະດີ, ການແກ້ໄຂຂໍ້ຂັດແຍ້ງ, ການຮ້ອງຟ້ອງ, ການດຳເນີນຄະດີທາງອາຍາ ຫຼື ການດຳເນີນຂໍ້ຂັດແຍ້ງອື່ນ ບໍ່ວ່າຈະຕາມຄວາມເປັນຈິງ ຫຼື ອາດຈະເກີດຂຶ້ນ, ແລະ ບໍ່ມີການຮຽກຮ້ອງ, ປົກປ້ອງທີ່ພົວພັນເຖິງບຸກຄົນທີ່ສາມ ຫຼື ພະຍານ.

ໃບຢັ້ງຢືນຈາກສານປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 56/ສປຊ.ນວ, ລົງວັນທີ 22 ພຶດສະພາ 2015 ລະບຸວ່າ ບໍລິສັດບໍ່ມີຄະດີຄ້າງຢູ່ໃນສານ.

8. ໂຄງສ້າງທຶນ

8.1 ທຶນຈົດທະບຽນ

ຕາມໜັງສືຊວນຊື້ສະບັບນີ້, ທຶນຈົດທະບຽນຂອງບໍລິສັດຄື 4.904.867.060.000 ແບ່ງເປັນຮຸ້ນສາມັນ 1.226.216.765 ຮຸ້ນ

8.2 ຂໍ້ມູນທາງດ້ານການເງິນ

ຕາຕະລາງລຸ່ມນີ້ແມ່ນສະແດງໃຫ້ເຫັນການສະຫຼຸບບັນຊີຫຼັກຂອງບໍລິສັດເຊັ່ນ: ເງິນສົດ, ໜີ້ ແລະ ທຶນ ໃນວັນທີ 31 ທັນວາ 2013 ແລະ 31 ທັນວາ 2014. ຕາຕະລາງດັ່ງກ່າວແມ່ນໄດ້ມາຈາກບົດລາຍງານການເງິນຂອງບໍລິສັດທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້. ຜູ້ລົງທຶນຄວນອ່ານຕາຕະລາງນີ້ລວມກັບ:

- ບົດລາຍງານຖານະການເງິນຂອງບໍລິສັດ, ໝາຍເຫດທີ່ກ່ຽວຂ້ອງ ແລະ ຂໍ້ມູນການເງິນອື່ນໆ ທີ່ຢູ່ໃນພາກອື່ນຂອງໜັງສືຊວນຊື້ສະບັບນີ້; ແລະ
- ເນື້ອໃນໃນໜັງສືຊວນຊື້ສະບັບນີ້ ໃນຫົວຂໍ້ "ການພິຈາລະນາ ແລະ ວິເຄາະຂອງສະພາຜູ້ບໍລິຫານທີ່ກ່ຽວກັບຖານະການເງິນ ແລະ ຜົນການດຳເນີນງານ" ແລະ "ຂໍ້ມູນການເງິນ ແລະ ການດຳເນີນງານ".


ຕາຕະລາງ 8.1: ໃບລາຍງານຖານະການເງິນຂອງບໍລິສັດໃນວັນທີ 31 ທັນວາ 2014 ແລະ 31 ທັນວາ 2013

ສະຫຼຸບຖານະການເງິນ	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ຊັບສິນ		
ຊັບສິນບໍ່ໝຸນວຽນ		
ເງິນລົງທຶນໃນວິສາຫະກິດຮ່ວມ	610.357	571.745
ເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	1.498.609	1.298.247
ເງິນລົງທຶນຈ່າຍລ່ວງໜ້າ	779.005	474.411
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	4.145.851	4.011.109
ຊັບສິນບໍ່ໝຸນວຽນອື່ນໆ	1.885	3.465
ລວມຊັບສິນບໍ່ໝຸນວຽນອື່ນໆ	**7.035.707**	**6.358.977**
ຊັບສິນໝຸນວຽນ		
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	1.251.534	159.914
ເງິນລົງທຶນໄລຍະສັ້ນ	20.000	20.000
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	502.382	519.355
ເຄື່ອງໃນສາງ, ສຸດທິ	4.043	3.020
ໜີ້ຕ້ອງຮັບອື່ນໆ	7.595	5.905
ລວມຊັບສິນໝຸນວຽນ	**1.785.554**	**708.194**
ລວມຊັບສິນ	**8.821.261**	**7.067.171**
ທຶນ		
ທຶນຂອງຜູ້ຖືຮຸ້ນ		
ເງິນລົງທຶນ	4.904.867	4.904.867

ສະຫຼຸບຖານະການເງິນ	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ສ່ວນເພີ່ມມູນຄ່າຮຸ້ນ	142.229	142.229
ຄ້ຳສະສົມຕາມລະບຽບການ	297.210	206.442
ຜົດຕ່ຳງຂອງການແປງຄ່າເອກະສານລາຍງານການເງິນ	(1.476)	7.001
ກຳໄລສະສົມ	978.811	744.348
ລວມທຶນ	**6.321.641**	**6.004.887**
ໜີ້ສິນ		
ໜີ້ສິນບໍ່ໝຸນວຽນ		
ເງິນກູ້ຍືມໃນໄລຍະຍາວ, ສຸດທິ	499.263	805.295
ຮຸ້ນກູ້, ສຸດທິ	1.575.862	-
ໜີ້ຕ້ອງຈ່າຍຂອງສັນຍາ SWAP, ສຸດທິ	11.105	-
ລວມໜີ້ສິນບໍ່ໝຸນວຽນ	**2.086.230**	**805.295**
ໜີ້ສິນໝຸນວຽນ		
ໜີ້ຕ້ອງສົ່ງຜູ້ສະໜອງ	174.589	30.823
ເງິນກູ້ຍືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	99.519	132.003
ໜີ້ຕ້ອງສົ່ງອື່ນໆ	134.936	66.077
ໜີ້ຕ້ອງສົ່ງອາກອນລາຍໄດ້	4.306	9.278
ໜີ້ສິນໝຸນວຽນອື່ນໆ	40	18.808
ລວມໜີ້ສິນໝຸນວຽນ	**413.390**	**256.989**
ລວມຍອດໜີ້ສິນ	**2.499.620**	**1.062.284**
ລວມຍອດທຶນຕົນເອງ ແລະ ໜີ້ສິນ	**8.821.261**	**7.067.171**

ແຫຼ່ງຂໍ້ມູນ: ຜ-ຟຟລ

ຮູບ 8.1 ໂຄງສ້າງທຶນຂອງບໍລິສັດ ແລະ ໂຄງສ້າງທຶນຫມຸນວຽນໃນວັນທີ 31 ທັນວາ 2014.



ແຫຼ່ງຂໍ້ມູນ: ຜ-ຟຟລ

ຕາຕະລາງ 8.2 ໂຄງສ້າງທຶນບໍລິສັດ ໃນວັນທີ 17 ມີນາ 2015

ລຳດັບ	ຊື່ຜູ້ຖືຮຸ້ນ	ໃນວັນທີ 17 ມີນາ 2015	
		ຈຳນວນຮຸ້ນທີ່ຖື	ສັດສ່ວນການຖືຮຸ້ນ
1	ELECTRICITE DU LAOS	919.662.992	75,00%
2	RATCHLAO SERVICES COMPANY LIMITED	71.136.243	5,80%
3	RH INTERNATIONAL (SINGAPORE) CORPORATION PTE. LTD	52.811.108	4,31%
4	BANQUE POUR LE COMMERCE EXTERIEUR LAO PUBLIC	28.762.552	2,35%
5	KRUNG THAI BANK PUBLIC COMPANY LIMITED	18.737.500	1,53%
6	NT ASIA DISCOVERY MASTER FUND	12.257.587	1,00%
7	DRAGON CAPITAL CLEAN DEVELOPMENT LTD.	11.056.500	0,90%
8	MEKONG HOLDING INS	6.212.699	0,51%
9	THAVEERAT PROONGPATTANASKUL	5.003.600	0,41%
10	KT ZMICO SECURITIES COMPANY LIMITED	3.989.189	0,33%
11	OTHER SHAREHOLDERS	96.586.795	7,88%
	ລວມທັງໝົດ	**1.226.216.765**	**100,00%**

ແຫຼ່ງຂໍ້ມູນ: ຜ-ຟຟລ

8.3 ພັນທະດອກເບ້ຍທີ່ຕ້ອງຈ່າຍ

ໂດຍອີງຕາມການໂອນຊັບສິນ, ບໍລິສັດໄດ້ລົງລາຍເຊັນໃນຂໍ້ຕົກລົງໃນການຊຳລະໜີ້ກັບ ຟຟລ ໃນວັນທີ 15 ທັນວາ 2010 ເຊິ່ງ ຟຟລ ແມ່ນເປັນຜູ້ກູ້ຢືມໂດຍອີງຕາມຂໍ້ຕົກລົງການກູ້ຢືມທີ່ບໍ່ມີການຄ້ຳປະກັນ ຫຼາຍສະບັບກັບລັດຖະບານ ເຊິ່ງ ວ່າຕົ້ນທຶນແມ່ນໄດ້ຮັບການສະໜອງຈາກຜູ້ໃຫ້ກູ້ຫຼາຍລາຍ ໂດຍຜ່ານລັດຖະບານ. ພາຍຫຼັງທີ່ໄດ້ຮັບການໂອນຊັບສິນທີ່ໂອນໃຫ້ກັບບໍລິສັດໃນວັນສ້າງຕັ້ງ. ບໍລິສັດໄດ້ຕົກລົງກັບ ຟຟລ ວ່າ ບໍລິສັດຈະຈ່າຍໜີ້ທີ່ຍັງເຫຼືອໃຫ້ກັບ ຟຟລ ແລະ ຟຟລ ຈະເປັນຜູ້ຈ່າຍໜີ້ດັ່ງກ່າວໃຫ້ກັບລັດຖະບານ ພາຍໃນກຳນົດເວລານັບຈາກ 10 ມັງກອນ 2010 ຫາ 15 ກໍລະກົດ 2022, ແລ້ວລັດຖະບານກໍ່ຈະເປັນຜູ້ສືບຕໍ່ຈ່າຍໜີ້ໃຫ້ກັບບັນດາຜູ້ໃຫ້ກູ້ຢືມ ໂດຍອີງຕາມຂໍ້ຕົກລົງສະບັບຕົ້ນ.

ຕາຕະລາງລຸ່ມນີ້ແມ່ນໄດ້ສະຫຼຸບພັນທະໜີ້ສິນຂອງບໍລິສັດໃນປະຈຸບັນ

ຕາຕະລາງ 8.3: ສະຫຼຸບພັນທະໜີ້ສິນປະຈຸບັນຂອງບໍລິສັດ

ຜູ້ໃຫ້ກູ້ຢືມ	ຈຳນວນເງິນຕົ້ນ (ຕາມວັນທີຂອງສັນຍາ) (ລ້ານໂດລາສະຫະລັດ)	ຈຳນວນທີ່ຍັງເຫຼືອ (31 ທັນວາ 2014) (ລ້ານໂດລາສະຫະລັດ)	ວັນເຖິງກຳນົດ	ອັດຕາດອກເບ້ຍ (% p.a.)	ສະກຸນເງິນກູ້ຢືມ
ໜີ້ເງິນກູ້ໄລຍະຍາວ					
ຟຟລ (OECF)	25,29	10,12	1 ທັນວາ 2020	2,30%	ເຍນ
ຟຟລ (Norinco)	108,40	54,20	7 ກຸມພາ 2020	2,00%	ໂດລາສະຫະລັດ
ຟຟລ (ExIm India)	11,00	9,53	21 ກໍລະກົດ 2027	1,75% - 2,75%	ໂດລາສະຫະລັດ
ລວມ	**144,69**	**73,85**			
ຮຸ້ນກູ້					
ຮຸ້ນກູ້ ຊຸດທີ 1	45,83	45,83	12 ທັນວາ 2019	4,95%	ບາດໄທ
ຮຸ້ນກູ້ ຊຸດທີ 2	61,11	61,11	12 ທັນວາ 2021	5,20%	ບາດໄທ
ຮຸ້ນກູ້ ຊຸດທີ 3	91,67	91,67	12 ທັນວາ 2024	5,45%	ບາດໄທ
ລວມ	**198,61**	**198,61**			

ຜູ້ໃຫ້ກູ້ຍືມ	ຈຳນວນເງິນຕົ້ນ (ຕາມວັນທີຂອງສັນຍາ) (ລ້ານໂດລາສະຫະລັດ)	ຈຳນວນທີ່ຍັງເຫຼືອ (31 ທັນວາ 2014) (ລ້ານໂດລາສະຫະລັດ)	ວັນເຖິງກຳນົດ	ອັດຕາດອກເບ້ຍ (% p.a.)	ສະກຸນເງິນກູ້ຍືມ
ລວມໝົ້ທັ້ງໝົດ	**343,30**	**272,46**			

ໝາຍເຫດ: ອັດຕາແລກປ່ຽນ 31 ທັນວາ 2014=8.108 ກີບ/ໂດລາ

ອັດຕາແລກປ່ຽນ 31 ທັນວາ 2014=247,74 ກີບ/ບາດ

ແຫ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9. ໂຄງຮ່າງການຈັດຕັ້ງ


9.1. ໂຄງຮ່າງບໍລິຫານ

ເພື່ອເຮັດໃຫ້ການບໍລິຫານພາຍໃນບໍລິສັດດີ ແລະ ມີປະສິດທິຜົນ, ບໍລິສັດໄດ້ມີໂຄງຮ່າງບໍລິສັດດັ່ງນີ້:

(1) ສະພາບໍລິຫານປະກອບມີຜູ້ອຳນວຍການ 10 ທ່ານ;
(2) ຄະນະຜູ້ອຳນວຍການໃຫຍ່ ປະກອບມີຜູ້ອຳນວຍການສາມທ່ານ

ລຸ່ມນີ້ແມ່ນໂຄງຮ່າງການຈັດຕັ້ງຂອງບໍລິສັດ:

ຮູບ 9.1: ໂຄງຮ່າງການຈັດຕັ້ງ



ແຫຼ່ງຂໍ້ມູນ: ຜ-ຟຟລ

9.2 ສະພາບໍລິຫານ

ຕາມໜັງສືຊວນຊື້ສະບັບນີ້, ສະພາບໍລິຫານຂອງບໍລິສັດປະກອບມີຜູ້ອຳນວຍການທັງໝົດ 10 ທ່ານ ທີ່ມີຄຸນວຸດທິ ແລະ ປະສົບການໃນການບໍລິຫານ, ມີລາຍລະອຽດດັ່ງນີ້:

ຕາຕະລາງ 9.1: ສະພາບໍລິຫານຂອງບໍລິສັດ

ລ/ດ	ຊື່ ແລະນາມສະກຸນ	ຕຳແໜ່ງ
1.	ທ່ານ ດຣ. ຄຳມະນີ ອິນທິລາດ	ປະທານສະພາບໍລິຫານ
2.	ທ່ານ ສີສະຫວາດ ທິຣະວົງ	ຮອງປະທານສະພາບໍລິຫານ
3.	ທ່ານ ບຸນອຸ້ມ ສີວັນເພັງ	ຜູ້ອຳນວຍການ
4.	ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການ
5.	ທ່ານ ບຸນມາ ມະນີວົງ	ຜູ້ອຳນວຍການ
6.	ທ່ານ ນາງ ອານິດາ ສະຫວັດດີ	ຜູ້ອຳນວຍການ
7.	ທ່ານ ສີຈາດ ບຸດຊາກົດຕິລາດ	ຜູ້ອຳນວຍການ
8.	ທ່ານ ຮສ. ດຣ. ກອງສີ ແສງມະນີ	ຜູ້ອຳນວຍການອິດສະຫລະ
9.	ທ່ານ ສຈ. ດຣ. ຄຳລືຊາ ນອນສະຫວັນ	ຜູ້ອຳນວຍການອິດສະຫລະ
10.	ທ່ານ ຮສ. ຄຳເພີຍ ພົມມະຈັນ	ຜູ້ອຳນວຍການອິດສະຫລະ

ແຫຼ່ງຂໍ້ມູນ: ຜ-ຟຟລ

9.2.1 ສິດອຳນາດຂອງສະພາບໍລິຫານ

ຜູ້ທີ່ສາມາດລົງລາຍເຊັນເພື່ອຜູກພັນກັບບໍລິສັດ ແມ່ນ:

(1) ປະທານສະພາບໍລິຫານ ຫຼື ຮອງປະທານສະພາບໍລິຫານ ຫຼື ຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານສູງສຸດ) ສາມາດລົງລາຍເຊັນຜູ້ດຽວພ້ອມກັບການປະທັບຕາຂອງບໍລິສັດ; ຫຼື

(2) ຜູ້ອຳນວຍການສອງທ່ານສາມາດເຊັນຮ່ວມກັນພ້ອມກັບການປະທັບຕາຂອງບໍລິສັດ.

9.2.2 ກອງປະຊຸມຂອງສະພາບໍລິຫານ

ບໍລິສັດມີແຜນໃນການຈັດກອງປະຊຸມປະຈຳປີຂອງສະພາບໍລິຫານ, ເຊິ່ງປະກອບມີກອງປະຊຸມສອງປະເພດຄື: (i) ກອງປະຊຸມສາມັນຂອງສະພາບໍລິຫານຈະຈັດຂຶ້ນສີ່ຄັ້ງຕໍ່ປີ; (ii) ກອງປະຊຸມວິສາມັນຂອງສະພາບໍລິຫານຈະຈັດຂຶ້ນເມື່ອມີການສະເໜີຈາກຜູ້ອຳນວຍການຂອງບໍລິສັດ.

9.2.3 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ໃນນາມເປັນຕົວແທນຂອງບັນດາຜູ້ຖືຮຸ້ນ ແລະ ບໍລິສັດ, ສະພາບໍລິຫານແມ່ນມີໜ້າທີ່ຊີ້ນຳລວມໃນບໍລິສັດ ແລະ ຮັບຜິດຊອບທັງໝົດທຸກກິດຈະກຳຂອງບໍລິສັດ ເພື່ອໃຫ້ສາມາດປະຕິບັດໄດ້ຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມຂອງສະພາບໍລິຫານ, ກົດລະບຽບຂອງບໍລິສັດ ແລະ ກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານມີລາຍລະອຽດດັ່ງນີ້:

(1) ກຳນົດນະໂຍບາຍ, ຍຸດທະສາດ ແລະ ແຜນຂອງການດຳເນີນທຸລະກິດ ແລະ ງົບປະມານຕາມຍຸດທະສາດ, ອະນຸມັດວຽກງານ ຫຼື ຊີ້ນຳລວມກິດຈະການ ແລະ ນະໂຍບາຍທີ່ສຳຄັນຂອງບໍລິສັດ; ກວດກາ ແລະ ອະນຸມັດແຜນດຳເນີນທຸລະກິດປະຈຳປີ ແລະ ແຜນງົບປະມານ

ເພື່ອນຳໃຊ້ເຂົ້າໃນວຽກງານຫຼາຍຢ່າງຂອງການນຳໃຊ້ທຶນ; ແລະ ພິຈາລະນາປະເດັນ ແລະ ບັນຫາທີ່ນຳສະເໜີໂດຍຜູ້ອຳນວຍການໃຫຍ່.

(2) ພິຈາລະນາຮ່ວມກັບຜູ້ອຳນວຍການໃຫຍ່ ແລະ ໃຫ້ຄຳເຫັນຕໍ່ກັບແຜນພັດທະນາຊັບພະຍາກອນມະນຸດ ແລະ ການຄຸ້ມຄອງບໍລິຫານ; ພິຈາລະນາ ແລະ ອະນຸມັດງົບປະມານຕາມແຜນນະໂຍບາຍໃນການຕອບແທນທີ່ແຕກຕ່າງກັນຂອງບໍລິສັດ ໂດຍອີງຕາມການປະຕິບັດໜ້າທີ່ເພື່ອໃຫ້ການຈ້າງງານມີປະສິດທິຜົນ ແລະ ເພື່ອຮັກສາພະນັກງານທີ່ມີຄຸນນະພາບ. ໂດຍປະຕິບັດຕາມຫຼັກການປະຕິບັດໜ້າທີ່ຈະແຈ້ງ, ໂປ່ງໃສ, ເຊື່ອໝັ້ນໄດ້, ເໝາະສົມ ແລະ ມີປະໂຫຍດໃນຮັບເອົາພະນັກງານ ຫຼື ຍົກເລີກສັນຍາແຮງງານຈາກການບໍລິຫານຂອງບໍລິສັດ ເພື່ອເຮັດໃຫ້ບໍລິສັດມີທີມງານທີ່ມີຄຸນນະພາບ, ມີຄວາມສາມາດທີ່ເໝາະສົມ ແລະ ປະສົບການດ້ານທຸລະກິດຢ່າງມີປະສິດທິຜົນ ແລະ ສາມາດບັນລຸຜົນສຳເລັດ.

(3) ເປັນຈຸດໃຈກາງຂອງການປະສານງານ ແລະ ການປັບປ່ຽນວຽກງານ ຫຼື ກິດຈະການຂອງຜູ້ອຳນວຍການ.

(4) ສະເໜີ ແລະ ອະນຸມັດແຕ່ງຕັ້ງຜູ້ອຳນວຍການຄົນໃໝ່ເພື່ອປ່ຽນແທນຕຳແໜ່ງທີ່ຫວ່າງລົງໃນລະຫວ່າງສອງກອງປະຊຸມຂອງບັນດາຜູ້ຖືຮຸ້ນ.

(5) ກຳນົດທິດທາງ ແລະ ແຜນການບໍລິຫານ ແລະ ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອຂໍອະນຸມັດ.

(6) ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກິດລະບຽບຂອງບໍລິສັດ.

(7) ພິຈາລະນາ ແລະ ອະນຸມັດແຜນພັດທະນາໄລຍະສັ້ນ ແລະ ຍາວ, ແຜນການລາຍງານຂອງການດຳເນີນງານໃນໄລຍະເວລາ ຫົກເດືອນ ແລະ ປະຈຳປີ.

(8) ພິຈາລະນາ ແລະ ກຳນົດເງິນເດືອນ ແລະ ເງິນໂບນັດໃຫ້ກັບພະນັກງານ ແລະ ກຳມະກອນ ໂດຍອີງຕາມກິດລະບຽບຂອງບໍລິສັດ ແລະ ນຳສະເໜີຕໍ່ກັບກອງປະຊຸມຂອງບັນດາຜູ້ຖືຮຸ້ນເພື່ອຂໍອະນຸມັດ.

(9) ພິຈາລະນາ ແລະ ຕົກລົງໃນການນຳໃຊ້ທຶນ, ກຳນົດທຶນ, ອັດຕາສ່ວນໜີ້ຕໍ່ທຶນ, ນະໂຍບາຍຄ່າເສື່ອມ, ສັນຍາເງິນກູ້, ສັນຍາລະຫວ່າງຜູ້ຖືຮຸ້ນ, ສັນຍາຊື້ຂາຍໄຟຟ້າ ແລະ ສັນຍາຈັດຊື້ຈັດຈ້າງ ໃນການຊື້ສິນຄ້າທີ່ມີລາຄາແພງ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອອະນຸມັດ.

(10) ສະເໜີແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນໃຫ້ກັບຜູ້ກວດສອບພາຍນອກດັ່ງກ່າວໃນກອງປະຊຸມຜູ້ຖືຮຸ້ນເພື່ອອະນຸມັດ.

(11) ພິຈາລະນາ ແລະ ອະນຸມັດໃນການແຈກຢາຍຜົນກຳໄລປະຈຳປີພາຍຫລັງຫັກອາກອນໂດຍ

ປະຕິບັດຕາມບັນດາຂໍ້ກຳນົດ ແລະ ກົດລະບຽບ.

(12) ສະພາບໍລິຫານມີອຳນາດໃນການບໍລິຫານບໍລິສັດໂດຍອີງຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ, ກົດລະບຽບຂອງບໍລິສັດ ແລະ ກົດໝາຍ ດ້ວຍຄວາມຊື່ສັດສຸດຈະລິດ ຕໍ່ຜົນປະໂຫຍດຂອງບໍລິສັດ.

(13) ສະພາບໍລິຫານມີໜ້າທີ່ໃນການກຳນົດວັດຖຸປະສົງ, ທິດທາງ, ນະໂຍບາຍ, ແຜນ ແລະ ງົບປະມານຂອງບໍລິສັດ, ລວມເຖິງການຄວບຄຸມ ແລະ ຈັດການ ແລະ ບໍລິຫານ ຫຼື ຜູ້ທີ່ໄດ້ຮັບມອບອຳນາດ ເພື່ອຮັບປະກັນວ່າການບໍລິຫານ ແລະ ຜູ້ໄດ້ຮັບການມອບໝາຍດັ່ງກ່າວສາມາດປະຕິບັດຕາມນະໂຍບາຍທີ່ໄດ້ກຳນົດໄວ້ໂດຍສະພາບໍລິຫານ.

(14) ສະພາບໍລິຫານມີອຳນາດໃນການກວດສອບ ແລະ ພິຈາລະນາ ຫຼື ອະນຸມັດທິດທາງ, ນະໂຍບາຍ ແລະ ແຜນປະຕິບັດວຽກສຳລັບໂຄງການລົງທຶນຂະໜາດໃຫຍ່ຂອງບໍລິສັດ.

(15) ສະພາບໍລິຫານມີອຳນາດໃນການແຕ່ງຕັ້ງ ແລະ ອະນຸມັດ ຫຼື ນຳສະເໜີຄະນະຜູ້ອຳນວຍການໃຫຍ່ເພື່ອກຳນົດ ຫຼື ປະຕິບັດວຽກງານໃດໜຶ່ງທີ່ເຫັນວ່າເໝາະສົມໂດຍສະພາບໍລິຫານ.

(16) ສະພາບໍລິຫານມີອຳນາດໃນການຕິດຕາມຜົນຂອງການດຳເນີນງານໂດຍສອດຄ່ອງກັບແຜນວຽກ ແລະ ແຜນງົບປະມານໃນການດຳເນີນງານຂອງບໍລິສັດ.

(17) ສະພາບໍລິຫານມີໜ້າທີ່ຊີ້ນຳບໍລິສັດເພື່ອໃຫ້ການຄຸ້ມຄອງພາຍໃນ ແລະ ກວດກາພາຍໃນມີປະສິດທິຜົນ ໂດຍການແຕ່ງຕັ້ງພະແນກກວດກາພາຍໃນ.

(18) ສະພາບໍລິຫານມີອຳນາດໃນການກຳນົດບັນຫາທີ່ມີຄວາມຈຳເປັນ ແລະ ມີສ່ວນກ່ຽວຂ້ອງພົວພັນກັບບໍລິສັດ ຫຼື ທີ່ເຫັນວ່າເໝາະສົມ ແລະ ເປັນປະໂຫຍດຕໍ່ບໍລິສັດ.

ບັນຫາລຸ່ມນີ້ແມ່ນສະພາບໍລິຫານຈະເປັນຜູ້ຕົກລົງພາຍຫລັງທີ່ໄດ້ຮັບການລົງຄະແນນສຽງຂອງບັນດາຜູ້ຖືຮຸ້ນທີ່ບໍ່ໜ້ອຍກວ່າສອງສ່ວນສາມຂອງການລົງຄະແນນສຽງທັງໝົດຂອງບັນດາຜູ້ຖືຮຸ້ນທີ່ເຂົ້າຮ່ວມໃນກອງປະຊຸມ ແລະ ຢ່າງໜ້ອຍ ຕ້ອງມີ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ອອກທັງໝົດຂອງບໍລິສັດ:

(1) ດັດແກ້ກົດລະບຽບຂອງບໍລິສັດ ຫຼື ສັນຍາສ້າງຕັ້ງຂອງບໍລິສັດ
(2) ເພີ່ມ ຫຼື ຫຼຸດທຶນຈົດທະບຽນ
(3) ການຄວບ ຫຼື ການຍຸບເລີກບໍລິສັດ
(4) ການຂາຍ ຫຼື ການໂອນທຸລະກິດທັງໝົດ ຫຼື ບາງສ່ວນທີ່ມີຄວາມສຳຄັນຂອງບໍລິສັດໃຫ້ກັບບຸກຄົນອື່ນ.
(5) ການຊື້ ຫຼື ການຮັບຮອງເອົາການໂອນທຸລະກິດຈາກວິສາຫະກິດອື່ນ.
(6) ເງື່ອນໄຂທັງໝົດ ແລະ/ຫຼື ບັນຫາທີ່ຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ກົດໝາຍແມ່ນຕ້ອງໄດ້

ຮັບການອະນຸມັດຈາກກອງປະຊຸມຂອງສະພາບໍລິຫານແລະ ກອງປະຊຸມຜູ້ຖືຮຸ້ນພ້ອມດ້ວຍ ຕ້ອງໄດ້ຮັບການລົງຄະແນນສຽງດັ່ງທີ່ໄດ້ກ່າວໃນຂ້າງເທິງ.

ເຖິງຢ່າງໃດກໍຕາມ, ບັນຫາໃດໜຶ່ງທີ່ຜູ້ອຳນວຍການມີຜົນປະໂຫຍດ ຫຼື ກ່ຽວໂລໂດຍກົງກັບບໍລິສັດ, ຜູ້ອຳນວຍການຜູ້ທີ່ໄດ້ຮັບຜົນປະໂຫຍດ ຫຼື ກ່ຽວໂລໂດຍກົງດັ່ງກ່າວຈະບໍ່ມີສິດລົງຄະແນນສຽງໃນບັນຫາດັ່ງກ່າວ.

9.2.4 ຄ່າຕອບແທນຂອງສະພາບໍລິຫານ

ສະພາບໍລິຫານແມ່ນໄດ້ຮັບຄ່າຕອບແທນຈາກເບ້ຍປະຊຸມດັ່ງນີ້:

(1) ປະທານກອງປະຊຸມໄດ້ຮັບເງິນເບ້ຍປະຊຸມເທົ່າກັບ 100 ສ່ວນຮ້ອຍຂອງເງິນເດືອນສອງ ເດືອນຂອງຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) (ກ່ອນການຫັກອາກອນ).

(2) ຮອງປະທານກອງປະຊຸມໄດ້ຮັບເງິນເບ້ຍປະຊຸມເທົ່າກັບ 75 ສ່ວນຮ້ອຍຂອງເງິນເດືອນສອງ ເດືອນຂອງຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) (ກ່ອນການຫັກອາກອນ); ແລະ

(3) ຜູ້ອຳນວຍການແຕ່ລະຄົນໄດ້ຮັບເງິນເບ້ຍປະຊຸມເທົ່າກັບ 50 ສ່ວນຮ້ອຍຂອງເງິນ ເດືອນສອງ ເດືອນຂອງຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) (ກ່ອນການຫັກອາກອນ).

ນອກຈາກມີຄ່າຕອບແທນໃຫ້ກັບສະພາບໍລິຫານ, ພະແນກກອງເລຂາຂອງສະພາບໍລິຫານແຕ່ລະຄົນ ແລະ ຜູ້ທີ່ໄດ້ຮັບການເຊີນເຂົ້າຮ່ວມກອງປະຊຸມຂອງສະພາບໍລິຫານ ແມ່ນໄດ້ຮັບເບ້ຍປະຊຸມເທົ່າກັບ 80 ສ່ວນຮ້ອຍຂອງເບ້ຍ ປະຊຸມຂອງຜູ້ອຳນວຍການ.

9.3 ຄະນະຜູ້ອຳນວຍການໃຫຍ່

ຄະນະຜູ້ອຳນວຍການໃຫຍ່ຂອງບໍລິສັດປະກອບມີສາມທ່ານຄື:

ຕາຕະລາງ 9.2: ຄະນະຜູ້ອຳນວຍການໃຫຍ່ຂອງບໍລິສັດ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1.	ທ່ານ ບຸນອຸ້ມ ສີວັນເພັງ	ຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ)
2.	ທ່ານ ນາງ ລັດຕະນາ ປະທຸມວັນ	ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ
3.	ທ່ານ ດຣ. ບຸນສະຫງວງ ສຸດທິດາຣາ	ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ແຫຼ່ງຂໍ້ມູນ: ຜ-ຟຟລ

9.3.1 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການໃຫຍ່

ຜູ້ອຳນວຍການໃຫຍ່ແມ່ນເປັນຕົວແທນຂອງບໍລິສັດທັງເປັນຜູ້ປະສານງານລະຫວ່າງບໍລິສັດ,ສະພາບໍ ລິຫານ ແລະ ບຸກຄົນທີສາມ ແລະ ມີໜ້າທີ່ໃນການດຳເນີນທຸລະກິດ ຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິ

ຫານ, ກົດລະບຽບຂອງບໍລິສັດ ແລະ ຂໍ້ກຳນົດ ແລະ ກົດໝາຍທີ່ກ່ຽວຂ້ອງ.

ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) ມີດັ່ງນີ້:

(1) ພິຈາລະນາບັນຫາທີ່ພົວພັນເຖິງຊັບພະຍາກອນມະນຸດ ແລະ ແຜນພັດທະນາການບໍລິຫານ; ພິຈາລະນາງົບປະມານຕ່ຳກັບບັນດາລາຍຈ່າຍທີ່ແຕກຕ່າງກັນຂອງອົງກອນໂດຍອີງຕາມການປະຕິບັດໜ້າທີ່ເພື່ອເຮັດໃຫ້ການຈ້າງງານມີປະສິດທິຜົນ ແລະ ເພື່ອຮັກສາໄວ້ພະນັກງານທີ່ມີຄຸນວຸດທິ ແລະ ຄວາມສາມາດ ແລະ ສະເໜີເຖິງສະພາບໍລິຫານເພື່ອຂໍອະນຸມັດ. ໂດຍຕາມຫຼັກການແລ້ວແມ່ນປະຕິບັດໜ້າທີ່ຢ່າງຈະແຈ້ງ, ໂປ່ງໃສ ແລະ ປະຕິບັດຕາມຂັ້ນຕອນການຮັບເອົາພະນັກງານ ແລະ ຍົກເລີກສັນຍາຈ້າງງານຢ່າງມີປະໂຫຍດເພື່ອເຮັດໃຫ້ບໍລິສັດມີພະນັກງານທີ່ມີຄຸນນະພາບ ແລະ ຄວາມສາມາດທີ່ເໝາະສົມ;

(2) ສ້າງແຜນນະໂຍບາຍ, ແຜນດຳເນີນທຸລະກິດ, ຍຸດທະສາດໃນການດຳເນີນທຸລະກິດ ແລະ ງົບປະມານປະຈຳປີຂອງບໍລິສັດ ແລະ ນຳສະເໜີຕໍ່ສະພາບໍລິຫານຂອງບໍລິສັດເພື່ອອະນຸມັດ;

(3) ຕິດຕາມການດຳເນີນທຸລະກິດຂອງບໍລິສັດຕາມນະໂຍບາຍ, ແຜນການດຳເນີນທຸລະກິດ, ແຜນຍຸດທະສາດ ແລະ ງົບປະມານທີ່ອະນຸມັດໂດຍສະພາບໍລິຫານ;

(4) ກຳນົດໂຄງຮ່າງການຈັດຕັ້ງຂອງອົງກອນ ແລະ ສິດອຳນາດໃນການບໍລິຫານໂດຍການຄວບຄຸມລາຍລະອຽດຂອງການຮັບເອົາພະນັກງານໃໝ່, ການຈ້າງງານ, ຜົນປະໂຫຍດ, ການສັບປ່ຽນໜ້າວຽກ, ການຝຶກອົບຮົມ ແລະການຍົກເລີກສັນຍາຈ້າງພະນັກງານຂອງບໍລິສັດ;

(5) ແຕ່ງຕັ້ງ ຫຼື ມອບໝາຍບຸກຄົນໃດໜຶ່ງ ຫຼື ຫຼາຍຄົນເພື່ອເຮັດວຽກງານໃດໜຶ່ງຕາງໜ້າສະພາບໍລິຫານຕາມຄວາມເໝາະສົມ. ເຖິງຢ່າງໃດກໍຕາມ, ສະພາບໍລິຫານອາດຍົກເລີກ, ປ່ຽນແປງ ຫຼື ປັບປຸງສິດອຳນາດດັ່ງກ່າວ;

(6) ມີອຳນາດໃນການພິຈາລະນາ ແລະ ອະນຸມັດລາຍຈ່າຍຕາມປົກກະຕິໃນການດຳເນີນທຸລະກິດຂອງບໍລິສັດ ເຊັ່ນ: ການຊື້ຊັບສິນ ແລະ ການລົງທຶນ ທີ່ສຳຄັນເພື່ອຜົນປະໂຫຍດຂອງບໍລິສັດໃນງົບປະມານທີ່ມີຈຳກັດ;

(7) ປະຕິບັດໜ້າທີ່ອື່ນໃດໜຶ່ງຕາມການມອບໝາຍຂອງສະພາບໍລິຫານ. ເຖິງຢ່າງໃດກໍ່ຕາມ, ການອະນຸມັດໃຫ້ປະຕິບັດວຽກງານໃດໜຶ່ງຂອງສະພາບໍລິຫານ ເປັນວຽກງານສະເພາະຂອງສະມາຊິກຂອງຄະນະຜູ້ອຳນວຍການໃຫຍ່ ຫຼື ບຸກຄົນຜູ້ທີ່ມີຜົນປະໂຫຍດຂັດກັນ, ມີສ່ວນໄດ້ສ່ວນເສຍ ຫຼື ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງບໍລິສັດ ແລະ ບັນຫາດັ່ງກ່າວນັ້ນແມ່ນໄດ້ກຳນົດໂດຍສະພາບໍລິຫານ ແຕ່ວ່າຈະຕ້ອງໄດ້ຮັບອະນຸຍາດກ່ອນລ່ວງໜ້າຈາກກອງປະຊຸມຜູ້ຖືຮຸ້ນ, ໂດຍສະເພາະແມ່ນການໄດ້ມາ ແລະ ການຈົ່ງໃຈຈຳໜ່າຍໃນລາຄາທີ່ບໍ່ສົມຄວນເຊິ່ງບັນດາຊັບສິນທີ່ສຳຄັນຂອງບໍລິສັດ ໂດຍອີງຕາມກົດລະບຽບຂອງ ຕລຊລ ຫຼື ກົດໝາຍທີ່

ກ່ຽວຂ້ອງກັບບໍລິສັດ;

(8) ຄຸ້ມຄອງການດຳເນີນງານຂອງບໍລິສັດ ໂດຍອີງຕາມບັນດາຂໍ້ກຳນົດຂອງສັນຍາສ້າງຕັ້ງບໍລິສັດ, ກິດລະບຽບຂອງບໍລິສັດ ແລະ ມະຕິຕົກລົງກອງປະຊຸມຜູ້ຖືຮຸ້ນ;

(9) ຄຸ້ມຄອງ ແລະ ນຳໃຊ້ທຶນຂອງບໍລິສັດໂດຍສອດຄ່ອງກັບວັດຖຸປະສົງ ແລະ ເປົ້າໝາຍທີ່ໄດ້ກຳນົດໄວ້ແລ້ວ;

(10) ຕັ້ງລະບົບບັນຊີ ແລະ ການເກັບຮັກສາເອກະສານທັງໝົດຂອງບໍລິສັດໃຫ້ເປັນລະບຽບຮຽບຮ້ອຍ;

(11) ໃຫ້ການຮ່ວມມືກັບຜູ້ກວດສອບພາຍນອກໃນການອະທິບາຍທີ່ມາ ແລະ ຄວາມຖືກຕ້ອງຂອງຕົວເລກ ແລະ ຂໍ້ມູນທີ່ສະແດງໃນບົດສະຫຼຸບບັນຊີກ່ອນທີ່ຈະນຳສະເໜີໃຫ້ກັບກອງປະຊຸມຜູ້ຖືຮຸ້ນອະນຸມັດ;

(12) ສົ່ງສຳເນົາບົດສະຫຼຸບບັນຊີໃຫ້ກັບຜູ້ຖືຮຸ້ນ ແລະ ຮັກສາໄວ້ພາຍໃນບໍລິສັດເພື່ອອາດມີການກວດສອບຕາມຄວາມຕ້ອງການໃນອະນາຄົດ;

(13) ຈັດການແບ່ງປັນຜົນກຳໄລຢ່າງຖືກຕ້ອງ ແລະ ເໝາະສົມ;

(14) ຄຸ້ມຄອງ ແລະ ນຳໃຊ້ ພະນັກງານ ແລະ ກຳມະກອນຂອງບໍລິສັດ; ແລະ

(15) ລາຍງານບໍລິສັດໂດຍທາງກົງ ຫຼື ທາງອ້ອມ ຕໍ່ຜົນປະໂຫຍດໃນສັນຍາໃດໜຶ່ງຂອງບໍລິສັດ, ແລະ ລາຍງານກ່ຽວກັບການເພີ່ມ ຫຼື ຫຼຸດຈຳນວນຮຸ້ນທີ່ຕົນຖືໃນບໍລິສັດ ຫຼື ໃນບໍລິສັດໃນກຸ່ມ ໃນລະຫວ່າງປີການບັນຊີ.

ຮອງຜູ້ອຳນວຍການປະຕິບັດຕາມໜ້າທີ່ໄດ້ຮັບການມອບໝາຍຈາກຜູ້ອຳນວຍການໃຫຍ່ ແລະ ຕາງໜ້າຜູ້ອຳນວຍການໃຫຍ່.

9.4 ທີມງານບໍລິຫານ

ຕາມໜັງສືຊວນຊື້ສະບັບນີ້, ທີມງານບໍລິຫານຂອງບໍລິສັດປະກອບມີສະມາຊິກຄະນະຜູ້ອຳນວຍການໃຫຍ່ສາມທ່ານ ແລະ ຜູ້ອຳນວຍການຝ່າຍສີ່ທ່ານມີດັ່ງນີ້:

ຕາຕະລາງ 9.3: ທີມງານບໍລິຫານຂອງບໍລິສັດ

ເລກທີ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1.	ທ່ານ ບຸນອູ້ມ ສີວັນເພັງ	ຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ)
2.	ທ່ານ ນາງ ລັດຕະນາ ປະທຸມວັນ	ຮອງຜູ້ອຳນວຍການໃຫຍ່ ສາຍງານຜະລິດ
3.	ທ່ານ ດຣ. ບຸນສະຫງວງ ສຸດທິດາຣາ	ຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
4.	ທ່ານ ພູມີ ເນຕິບັນດິດ	ຜູ້ອຳນວຍການພະແນກສັງລວມ
5.	ທ່ານ ວິຣະຖາ ພອນແກ້ວ	ຜູ້ອຳນວຍການ ຝ່າຍວາງແຜນຍຸດທະສາດ ແລະ ພັດທະນາທຸລະກິດ
6.	ທ່ານ ສຸກສັນ ພິງພິລາ	ຜູ້ອຳນວຍການ ຝ່າຍບໍລິຫານງານສະໜັບສະໜຸນຄວາມຮ່ວມມື
7.	ທ່ານ ອັນແສງ ອັນນະວົງ	ວ່າການ ຜູ້ອຳນວຍການ ຝ່າຍການເງິນ

ແຫຼ່ງຂໍ້ມູນ: ຜ-ຟຟລ

9.5 ການພັດທະນາຊັບພະຍາກອນມະນຸດ

ບໍລິສັດສືບຕໍ່ປະຕິບັດແຜນນະໂຍບາຍພັດທະນາຊັບພະຍາກອນມະນຸດ ເພື່ອຍົກລະດັບຄວາມສາມາດ ແລະມີຄວາມຮູ້ ຄວາມຊຳນິຊຳນານ ແລະ ປະສົບການຫຼາຍກວ່າເກົ່າໃນທຸກຂົງເຂດວຽກງານ.

ໃນວັນທີ 31 ທັນວາ 2014, ບໍລິສັດມີພະນັກງານ 636 ຄົນ, ລາຍລະອຽດມີດັ່ງນີ້:

ຕາຕະລາງ 9.4: ພະນັກງານຂອງບໍລິສັດ

ຫ້ອງການ/ສະໜາມ	ຈຳນວນຂອງພະນັກງານ
ສຳນັກງານໃຫຍ່	80
ໂຄງການເຂື່ອນໄຟຟ້ານ້ຳງື່ມ 1	175
ໂຄງການເຂື່ອນໄຟຟ້ານ້ຳມັງ 3	73
ໂຄງການເຂື່ອນໄຟຟ້ານ້ຳເລີກ	69
ໂຄງການເຂື່ອນໄຟຟ້າເຊເສັດ 1-2	142
ໂຄງການເຂື່ອນໄຟຟ້າແຊລະບຳ	52
ສະໜອງບໍລິການໃຫ້ເຂື່ອນໄຟຟ້ານ້ຳຊອງ	27
ສະໜອງບໍລິການໃຫ້ເຂື່ອນໄຟຟ້າຕາດສະເລັນ	9
ສະໜອງບໍລິການໃຫ້ເຂື່ອນໄຟຟ້ານ້ຳສະນາ	18

ແຫຼ່ງຂໍ້ມູນ: ຜ-ຟຟລ

ພະນັກງານຂອງບໍລິສັດທັງໝົດແມ່ນໄດ້ຮັບການຝຶກອົບຮົມຢ່າງຕໍ່ເນື່ອງທັງການຝຶກອົບຮົມພາຍໃນ(ການຝຶກອົບກັບທາງພາກລັດ ແລະ ການຝຶກອົບຮົມພາຍໃນສູນຝຶກອົບຮົມຂອງ ຜ-ຟຟລ) ແລະການຝຶກອົບຮົມທີ່ຕ່າງປະເທດ. ນອກຈາກນັ້ນ, ທາງບໍລິສັດແມ່ນໍ້ໄດ້ມີການຮ່ວມມືກັບສູນຝຶກອົບຮົມສາກົນດ້ານເຂື່ອນໄຟຟ້າ (ICH) ຈັດຕັ້ງການຝຶກອົບຮົມໃນຫົວຂໍ້ "ການກວດກາຄວາມປອດໄພຂອງເຂື່ອນ" ເຊິ່ງມີພະນັກງານເຂົ້າຮ່ວມທັງໝົດ 24 ທ່ານຈາກ 12 ປະເທດ.

10. ການກວດກາພາຍໃນ

10.1 ຄະນະກຳມະການ

ນອກຈາກການດຳເນີນງານທີ່ອີງຕາມການບໍລິຫານຈັດການແລ້ວ, ທາງບໍລິສັດຍັງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆ, ປະກອບມີ:

10.1.1 ຄະນະກຳມະການກວດກາພາຍໃນ (IAC)

ໜ່ວຍງານກວດກາພາຍໃນໄດ້ຖືກສ້າງຕັ້ງຂຶ້ນເພື່ອກວດກາແຜນການດຳເນີນການທີ່ໄດ້ຮັບການອະນຸມັດແລ້ວຈາກຄະນະກຳມະການເພື່ອຫຼຸດຜ່ອນຄວາມສ່ຽງທີ່ເກີດຂຶ້ນຈາກການຈັດການ ແລະ ເພື່ອປະເມີນຜົນການດຳເນີນການຂອງບໍລິສັດ ໂດຍການນຳສະເໜີບົດແນະນຳໃນການພັດທະນາ ແລະ ວິທີພັດທະນາ ແລະ ເຮັດບົດລາຍງານທີ່ກ່ຽວຂ້ອງ.

ໂດຍອີງຕາມການອະນຸມັດຂອງສະພາບໍລິຫານຂອງບໍລິສັດ ສະບັບເລກທີ 005/ຊ-ຟຟລ ລົງວັນທີ 25 ພຶດສະພາ 2013 . ຄະນະກຳມະການກວດກາພາຍໃນ ໄດ້ຮັບການແຕ່ງຕັ້ງເພື່ອຕິດຕາມ ແລະ ກວດກາລາຍຮັບ ແລະ ລາຍຈ່າຍຂອງບໍລິສັດ, ລວມທັງການປະເມີນຜົນ, ການແນະນຳ ແລະ ລາຍງານຕໍ່ກັບບັນຫາຄວາມສ່ຽງໃດໜຶ່ງຂອງທຸລະກິດທີ່ຕົນລາຍງານໃຫ້ກັບສະພາບໍລິຫານ ທີ່ພົວພັນເຖິງວຽກງານທັງໝົດຜ່ານທາງພະແນກກວດກາພາຍໃນ.

ກອງປະຊຸມຂອງຄະນະກຳມະການກວດກາພາຍໃນ ໄດ້ຮັບການຈັດຂຶ້ນທັງໝົດ 6 ຄັ້ງໃນປີ 2014, ລວມທັງການຈັດກອງປະຊຸມສາມັນ 4 ຄັ້ງ ແລະ ກອງປະຊຸມວິສາມັນ 2 ຄັ້ງ ທີ່ມີການປຶກສາຫາລື ແລະ ພິຈາລະນາຕໍ່ກັບບັນຫາທີ່ມີຄວາມສຳຄັນຫຼາຍຢ່າງ ໂດຍສະເພາະແມ່ນບົດລາຍງານການເງິນຂອງບໍລິສັດ. ບັນຫາທີ່ໄດ້ກ່າວມາແມ່ນໄດ້ສະຫຼຸບດັ່ງນີ:

(1) ປຶກສາຫາລື ແລະອະນຸມັດບົດລາຍງານການເງິນຂອງຜູ້ກວດສອບບັນຊີອິດສະຫຼະ ປະຈຳປີ ແລະ ຫົກເດືອນຕົ້ນປີ

(2) ອະນຸມັດ ບົດລາຍງານການເງິນໄຕມາດທີໜຶ່ງ, ທີສອງ,ແລະທີ ສາມ ປະຈຳປີ 2014.

ຕາມໜັງສືຊວນຊື້ສະບັບນີ້, ສະມາຊິກຂອງຄະນະກຳມະການກວດກາພາຍໃນຂອງບໍລິສັດ ປະກອບດ້ວຍ ສະມາຊິກ 6 ຄົນ, ດັ່ງລຸ່ມນີ້:

ຕາຕະລາງ 10.1: ຄະນະກຳມະການກວດກາພາຍໃນບໍລິສັດ

ເລກທີ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1.	ທ່ານ ດຣ. ບຸນສະຫງວງ ສຸດທິດາຣາ	ປະທານ
2.	ທ່ານ ພູມີ ເມຕີບັນດິດ	ຮອງປະທານ
3.	ທ່ານ ຣສ. ຄຳເພີຍ ພິມມະຈັນ	ສະມາຊິກ
4.	ທ່ານ ວິຣະຖາ ພອນແກ້ວ	ສະມາຊິກ
5.	ທ່ານ ນາງ ສຸກສັນ ພິງພິລາ	ສະມາຊິກ
6.	ທ່ານ ນາງ ມະນີວັນ ຍອດກອງມີ	ສະມາຊິກ

ແຫຼ່ງຂໍ້ມູນ: ຊ-ຟຟລ

10.1.2 ຄະນະກຳມະການເຈລະຈາ CA, ສັນຍາລະຫວ່າງຜູ້ຖືຮຸ້ນ ແລະ PPA (CASAPPAC).

ໃນວັນທີ 21 ມັງກອນ 2011 CASAPPAC ໄດ້ຮັບການສ້າງຕັ້ງຂຶ້ນເພື່ອຮັບຜິດຊອບໃນການເຈລະຈາກັບຕົວແທນຂອງລັດຖະບານ ແລະ ຟຟລ ລວມເຖິງ IPPs ເພື່ອຜົນປະໂຫຍດຂອງບໍລິສັດ. ໃນປີ 2014 ຄະນະກຳມະການໄດ້ສຳເລັດບັນຫາສຳຄັນດັ່ງລຸ່ມນີ້:

(1) ຍື່ນຮ່າງ CA ແລະ ລາຍງານການສຳລວດໂຄງການສະບັບສົມບູນ ຂອງໂຄງການເຂື່ອນໄຟຟ້ານ້ຳສະນາ

(2) ປຶກສາຫາລືກ່ຽວກັບຮ່າງ CA ຂອງໂຄງການນ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ແລະ

(3) ເຊັນ MOU ກ່ຽວກັບການພັດທະນາເຂື່ອນໄຟຟ້ານ້ຳບີ ກັບ ບໍລິສັດ ຈັນທະວອນ ກໍ່ສ້າງ-ຂົວທາງ ຈຳກັດ ແລະ ບໍລິສັດ Powerchina Chengdu ຈຳກັດ

10.1.3 ຄະນະກຳມະການຈັດຊື້ ແລະ ຕອບສະໜອງອຸປະກອນ (PESC)

PESC ໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ອຳນວຍການໃຫຍ່ຂອງບໍລິສັດ, ໂດຍອີງຕາມໜັງສືແຕ່ງຕັ້ງ ສະບັບເລກທີ 011/ຜ-ຟຟລ ລົງວັນທີ 7 ມັງກອນ 2011, ບົດບາດຂອງ PESC ແມ່ນເພື່ອ: ກວດກາບັນດາເອກະສານກ່ຽວກັບການປະມູນ, ປະເມີນເອກະສານປະມູນຕາມລະບຽບການ.

ໃນປີ 2014 PESC ໄດ້ຮັບການຈັດຕັ້ງກອງປະຊຸມ 5 ຄັ້ງກ່ຽວກັບການຈັດຊື້ ແລະ ການຈ້າງງານ, ນອກຈາກນັ້ນຍັງໄດ້ທຳການເຈລະຈາປະຊຸມກັບຄູ່ຮ່ວມທຸລະກິດ, ຊຶ່ງເຮັດໃຫ້ມີການລົງລາຍເຊັນໃນ 30 ສັນຍາ ປະກອບມີ:

(1) ສັນຍາກ່ຽວກັບການບຳລຸງຮັກສາ ແລະ ກໍ່ສ້າງ ຈຳນວນ 8 ສັນຍາ;

(2) ສັນຍາກ່ຽວກັບການປັບປຸງລະບົບໄຟຟ້າ ແລະເຄື່ອງຈັກ ຈຳນວນ 3 ສັນຍາ;

(3) ສັນຍາກ່ຽວກັບການສະໜອງລະບົບໄຟຟ້າ ແລະ ເຄື່ອງຈັກ ຈຳນວນ 13 ສັນຍາ; ແລະ

(4) ສັນຍາກ່ຽວກັບການບໍລິການ ແລະ ການອອກແບບການສຳຫຼວດ ຈຳນວນ 6 ສັນຍາ.

10.2 ພະແນກກວດກາພາຍໃນ

ບໍລິສັດໄດ້ເຫັນຄວາມສຳຄັນຂອງການກວດກາພາຍໃນເຊິ່ງແບ່ງການຈັດການອອກເປັນ:

10.2.1 ການບໍລິຫານທຸລະກິດ

ບໍລິສັດຄຳນຶງ ແລະ ເນັ້ນໜັກເຖິງຄວາມສຳຄັນຂອງການເຮັດວຽກທີ່ມີປະສິດທິຜົນ,ໂປ່ງໃສ ແລະ ສາມາດກວດສອບໄດ້. ລະບົບການຄຸ້ມຄອງບໍລິຫານເຊິ່ງຈະສ້າງຄວາມໝັ້ນໃຈໃຫ້ກັບທຸກພາກສ່ວນທີ່ມີສ່ວນກ່ຽວຂ້ອງ ແລະ ອາດນຳທຸລະກິດໄປສູ່ການຂະຫຍາຍຕົວຢ່າງໝັ້ນຄົງ. ພາຍໃຕ້ຈັນຍາບັນຂອງການບໍລິຫານ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ, ບໍລິສັດແມ່ນມີການຄຸ້ມຄອງບໍລິຫານທີ່ດີເພື່ອເປັນການຍົກລະດັບການຄຸ້ມຄອງບໍລິຫານໃນປະຈຸບັນເພື່ອໃຫ້ເປັນລະບົບການບໍລິຫານມີມາດຕະຖານກວ່າເກົ່າ. ບໍລິສັດໄດ້ແຈກຢາຍວຽກງານໃຫ້ກັບພະນັກງານໃນທຸກລະດັບເຊິ່ງໄດ້ສ້າງທຳນຽມ

ໃນການເຮັກວຽກທີ່ດີ ແລະ ເຂົ້າຮ່ວມຢ່າງພ້ອມພຽງ. ສະພາບໍລິຫານຂອງບໍລິສັດແມ່ນປະກອບມີບັນດາທ່ານຜູ້ທີ່ມີຄວາມຮູ້, ຄວາມສາມາດແລະປະສົບການຊຶ່ງສາມາດສ້າງປະໂຫຍດໃຫ້ກັບບໍລິສັດ ເພາະວ່າບຸກຄົນເຫຼົ່ານີ້ແມ່ນມີບົດບາດທີ່ສຳຄັນໃນການເບິ່ງ ນະໂຍບາຍລວມແລະແຜນດຳເນີນທຸລະກິດໃຫ້ກັບບໍລິສັດ. ເພາະສະນັ້ນ, ລະບົບການຄວບຄຸມພາຍໃນແມ່ນມີຄວາມໝາຍຄວາມ ສຳຄັນ ເພາະວ່າລະບົບດັ່ງກ່າວແມ່ນໄດ້ສ້າງຄວາມເຊື່ອໝັ້ນໃນການບໍລິຫານເພື່ອຫຼຸດຜ່ອນຄວາມສ່ຽງໃນການດຳເນີນທຸລະກິດ ແລະທັງປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິຜົນ, ໃນການສັບຊ້ອນພະນັກງານທີ່ເໝາະສົມ ເພື່ອບັນລຸ ເປົ້າໝາຍ ແລະ ເພື່ອໃຫ້ພະແນກຈັດຕັ້ງປະຕິບັດວຽກງານໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

10.2.2 ສິດຂອງຜູ້ຖືຮຸ້ນ

ບໍລິສັດເນັ້ນໜັກ ແລະ ໃຫ້ຄວາມສຳຄັນຕໍ່ສິດທິພື້ນຖານຂອງຜູ້ຖືຮຸ້ນໃນນາມຜູ້ລົງທຶນໃນຫຼັກຊັບ ແລະທັງເປັນເຈົ້າຂອງສ່ວນຫນຶ່ງຂອງບໍລິສັດ, ຕົວຢ່າງ: ສິດໃນການຊື້-ຂາຍຫຼັກຊັບ, ສິດໃນການຮັບເງິນປັນຜົນ, ສິດໃນການໄດ້ຮັບ ຂໍ້ມູນຢ່າງຄົບຖ້ວນ, ສິດໃນການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນ, ສິດສະແດງຄວາມຄິດເຫັນ, ສິດໃນການແນະນຳຢ່າງເທົ່າທຽມ ແລະ ສິດລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພື່ອຕົກລົງບາງບັນຫາທີ່ສຳຄັນຕໍ່ບໍລິສັດ, ເຊັ່ງວ່າບໍລິສັດບໍ່ໄດ້ເຮັດສິ່ງໃດສິ່ງຫນຶ່ງທີ່ ຮຸນແຮງ ຫຼື ມີຜົນກະທົບຕໍ່ສິດຂອງຜູ້ຖືຮຸ້ນ ແລະ ບໍລິສັດກໍ່ສົ່ງເສີມຜູ້ຖືຮຸ້ນຂອງຕົນເພື່ອນຳໃຊ້ສິດ. ຕໍ່ກັບບັນຫາດັ່ງກ່າວນີ້, ກອງ ປະຊຸມຜູ້ຖືຮຸ້ນແຕ່ລະຄັ້ງ, ບໍລິສັດຈະສົ່ງໜັງສືເຊີນ ແລະ ບັນດາຂໍ້ມູນທີ່ກ່ຽວຂ້ອງກັບແຕ່ລະວາລະຂອງກອງປະຊຸມໃຫ້ກັບບັນດາ ຜູ້ຖືຮຸ້ນຮັບຊາບກ່ອນລ່ວງໜ້າສິບຫ້າ (15) ວັນລັດຖະການກ່ອນວັນເປີດກອງປະຊຸມ ເພື່ອໃຫ້ບັນດາຜູ້ຖືຮຸ້ນສຶກສາຂໍ້ມູນກ່ອນທີ່ ຈະຕົກລົງເຫັນດີ. ບໍ່ພຽງແຕ່ເທົ່ານັ້ນ, ບໍລິສັດຍັງເນັ້ນໜັກຕໍ່ຄວາມໝາຍຄວາມສຳຄັນຂອງຄວາມຖືກຕ້ອງ, ສົມບູນ ແລະໂປ່ງໃສ ໃນການເປີດເຜີຍຂໍ້ມູນ, ລວມທັງຂໍ້ມູນດ້ານການເງິນ, ຂໍ້ມູນທົ່ວໄປ ແລະ ບັນດາຂໍ້ມູນອື່ນໆ ທີ່ສຳຄັນເຊິ່ງອາດມີຜົນກະທົບຕໍ່ ລາຄາຫຼັກຊັບ ຜ່ານທາງເວບໄຊຂອງບໍລິສັດ ຫຼື ການຕິດຕໍ່ສື່ສານຜ່ານທາງລະບົບຕິດຕໍ່ສື່ສານສາທາລະນະ ຫຼື ການເປີດເຜີຍຂໍ້ມູນ ຜ່ານ ຕລຊລ ເຊິ່ງອາດມີຜົນສະທ້ອນເຖິງການຕັດສິນໃຈຂອງຜູ້ລົງທຶນ ຫຼື ຜູ້ຄົນທີ່ມີຄວາມສົນໃຈຕໍ່ກັບບໍລິສັດ.

10.2.3 ພະນັກງານ

ພະນັກງານແມ່ນເປັນຫນຶ່ງໃນຊັບພະຍາກອນຫຼັກເຊິ່ງເປັນສ່ວນສຳຄັນໃນການພັດທະນາ ແລະ ການ ເຕີບໂຕອີງກອນ. ດັ່ງນັ້ນ, ບໍລິສັດແມ່ນໃຫ້ການສະໜັບສະໜູນການພັດທະນາຊັບພະຍາກອນມະນຸດເພື່ອເຮັດໃຫ້ບໍລິສັດໄດ້ຮັບຜົນ ປະໂຫຍດສູງສຸດ. ໃນນັ້ນ, ບໍລິສັດໄດ້ປຸກລະດົມທີມງານຜູ້ປະຕິບັດວຽກເພື່ອເພີ່ມທະວີຄວາມຢຶດຢຸ່ນໃນການເຮັດວຽກງານແລະ ສົ່ງເສີມການພັດທະນາດ້ານຄວາມຮູ້ແລະຍົກລະດັບຄວາມສາມາດ, ລວມທັງການກຽມພ້ອມດ້ານຄວາມປອດໄພໃນການເຮັດວຽກ ງານຂອງພະນັກງານ ທັງຍັງດູແລເບິ່ງແຍງພະນັກງານໃຫ້ເທົ່າທຽມກັນ ແລະ ມີຄວາມເປັນທຳໃນການໄດ້ຮັບໂອກາດ, ສິ່ງຕອບ ແທນ, ຜົນປະໂຫຍດ ແລະ ການພັດທະນາທີ່ເໝາະສົມ.

10.2.4 ວິໃສທັດ

ບໍລິສັດມີຄວາມຕັ້ງໃຈເຮັດໃຫ້ຕົນເປັນບໍລິສັດແຖວໜ້າໃນ ສປປ ລາວ ເພື່ອເຮັດໃຫ້ການດຳເນີນທຸລະ ກິດມີປະສິດທິຜົນແລະຮັບປະກັນດ້ານເວລາ ແລະ ສາມາດຕອບສະໜອງໄດ້ຄວາມຕ້ອງການດ້ານພະລັງງານໄຟຟ້າຂອງການ ພັດທະນາເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ເຊິ່ງຈະກາຍເປັນບໍລິສັດໜຶ່ງທີ່ເຂົ້າຮ່ວມໃນສ້າງ ສປປ ລາວໃຫ້ກາຍເປັນຜູ້

ຜະລິດພະລັງງານໄຟຟ້າຂອງ ASEAN ແລະ ກາຍເປັນຜູ້ເຂົ້າຮ່ວມໃນການສ້າງຂົງເຂດ ASEAN ໃຫ້ກາຍເປັນເຂດທີ່ມີຄວາມໝັ້ນຄົງ ປອດໄພດ້ານກະແສໄຟຟ້າ.

10.2.5 ພາລະກິດ

(1) ຈະກາຍເປັນບໍລິສັດນຳໜ້າໃນການຈັດການກັບທຸລະກິດຜະລິດໄຟຟ້າເພື່ອສະໜອງໃຫ້ ສປປ ລາວ ຢ່າງມີປະສິດທິຜົນ ແລະ ເຮັດໃຫ້ບັນດາປະເທດໃນຂົງເຂດໄດ້ຮັບອັດຕາສ່ວນລາຄາໄຟຟ້າ ແລະ ສ້າງມູນຄ່າເພີ່ມໃຫ້ກັບຜູ້ຖືຮຸ້ນ.

(2) ຈະຢູ່ຄຽງຄ້າງກັບ ຟຟລ ແລະ ປະສານສົມທົບກັບ ຟຟລ ຢ່າງແໜ້ນແຟ້ນເພື່ອຮັກສາໄວ້ເຊິ່ງຄຸນນະພາບ ແລະ ປະລິມານໃນການຜະລິດໄຟຟ້າ ຫຼື ພະລັງງານທີ່ມີຄວາມປອດໄພ ແລະ ມີປະສິດທິຜົນ ຕອບສະໜອງໄດ້ຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ແລະ ຂອງ ASEAN.

(3) ຍົກສູງປະສິດທິພາບ ແລະ ພັດທະນາພະນັກງານຂອງຕົນ (ທຸກລະດັບ) ເຮັດໃຫ້ເປັນບຸກຄະລາກອນທີ່ມີຄວາມສາມາດໃນການເຂົ້າຮ່ວມການພັດທະນາຂອງບໍລິສັດດ້ວຍຄວາມພາກພູມໃຈ, ມີຄວາມຮັບຜິດຊອບ ແລະ ມີຄວາມເປັນເຈົ້າຂອງ.

10.2.6 ໜ້າທີ່ ແລະ ຄວາມຮັບຜິດຊອບ

ບໍລິສັດຈະຍົກລະດັບ ແລະ ຄວາມສາມາດຂອງພະນັກງານໃຫ້ມີປະສິດທິຜົນ ແລະ ສ້າງທຳນຽມຂອງອົງກອນໃຫ້ສອດຄ່ອງກັບການບໍລິຫານຈັດການອົງກອນທີ່ດີດັ່ງນີ້:

(1) ມີຄວາມຮັບຜິດຊອບຢ່າງເຕັມສ່ວນຕໍ່ຜູ້ຖືຮຸ້ນ ແລະ ຜູ້ສົນໃຈເພື່ອປົກປ້ອງຊັບສິນຂອງ ບໍລິສັດ. ຊັບສິນເຫຼົ່ານີ້ຄວນໄດ້ປົກປັກຮັກສາເພື່ອໃຫ້ເຕີບໂຕ ແລະ ໝັ້ນຄົງ.

(2) ປະຕິບັດຕາມຫຼັກການ ແລະ ການຢືດຢຸ່ນຕາມວິໃສທັດ ແລະ ພາລະກິດຂອງບໍລິສັດທີ່ ພົວພັນເຖິງ ຄວາມສ່ຽງໃນປະຈຸບັນ ແລະ ອະນາຄົດ.

(3) ມີຂັ້ນຕອນໃນການຕັດສິນໃຈທີ່ໂປ່ງໃສ ແລະ ເຊື່ອໝັ້ນໄດ້ໃນການປະຕິບັດ ແລະ ການດຳເນີນທຸລະກິດ.

(4) ເຮັດໃຫ້ທຸກຝ່າຍໄດ້ຮັບຄວາມເທົ່າທຽມ, ເປັນທຳ ແລະ ຫຼີກຫຼ້ຽງສະຖານະການທີ່ອາດກໍ່ໃຫ້ເກີດຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຫຼື ມີຜົນປະໂຫຍດຊ້ຳຊ້ອນ.

(5) ສ້າງມູນຄ່າ ແລະ ລາຄາຂອງຜູ້ຖືຮຸ້ນໃນລັກສະນະຍາວນານ.

(6) ນຳໃຊ້ແນວຄວາມຄິດທີ່ສ້າງສັນ, ມີໄຫວພິບ ແລະ ໃຊ້ເຕັກໂນໂລຢີທີ່ທັນສະໄໝ ເພື່ອສືບຕໍ່ເພີ່ມທະວີການບໍລິຫານທຸລະກິດ ແລະ ການຜະລິດໃຫ້ມີປະສິດທິຜົນ ເພື່ອເຮັດໃຫ້ບໍລິສັດ

ສາມາດແຂ່ງຂັນກັບບໍລິສັດອື່ນໄດ້.

(7) ດູແລສັງຄົມ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ.

10.2.7 ຈັນຍາບັນ

(1) ບໍລິສັດຈະປະຕິບັດ ດຳເນີນທຸລະກິດດ້ວຍຄວາມຊື່ສັດ ແລະ ເປັນທຳ.

(2) ບໍລິສັດຈະປະຕິບັດຕາມກົດໝາຍ, ຂໍ້ກຳນົດ ແລະ ລະບຽບການຂອງ ສປປ ລາວ ຢ່າງເຂັ້ມງວດ ແລະ ປະຕິບັດສັນຍາອື່ນໆ ທີ່ຕົນໄດ້ລົງລາຍເຊັນ.

(3) ບໍລິສັດຈະນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ.

(4) ບໍລິສັດຢັ້ງຢືນວ່າຈະປົກປ້ອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມ.

(5) ບໍລິສັດຈະໃຫ້ການສະໜັບສະໜູນການພັດທະນາອົງກອນຂອງຕົນ ແລະ ພັດທະນາພະນັກງານຂອງຕົນໃນຮູບແບບທີ່ວ່າ ພະນັກງານສາມາດພັດທະນາຕົນເອງ ໃນດ້ານຄວາມສາມາດ ແລະ ຄວາມມີສີມື ແລະ ຮັບປະກັນໃນການເປັນເຈົ້າຂອງດ້ານຄວາມສາມັກຄີໃນອົງກອນ.

11. ລາຍການທີ່ກ່ຽວພັນ

ການເຮັດທຸລະກຳກັບບຸກຄົນ ຫຼື ນິຕິບຸກຄົນທີ່ກ່ຽວພັນແມ່ນສ່ວນໜຶ່ງຂອງບໍລິສັດເພາະວ່າ ບໍລິສັດແມ່ນໄດ້ຮັບການສ້າງຕັ້ງຂຶ້ນເປັນບໍລິສັດມະຫາຊົນ ໃນວັນທີ 15 ທັນວາ 2010 ພາຍໃຕ້ກົດໝາຍຂອງ ສປປ ລາວ ເຊິ່ງເປັນບໍລິສັດລູກຂອງ ຟຟລ ທີ່ພົວພັນເຖິງການປັບປຸງໂຄງສ້າງທຸລະກິດພະລັງງານໄຟຟ້າຂອງ ຟຟລ ຄືນໃໝ່, ເຊິ່ງມີການໂອນຊັບສິນໃຫ້ກັບບໍລິສັດໃນວັນສ້າງຕັ້ງ ແລະ ພັນທະຂອງ ຟຟລ ພາຍໃຕ້ສັນຍາກູ້ຢືມ ແລະ ສັນຍາອື່ນໆ ທີ່ກ່ຽວຂ້ອງ ແມ່ນໄດ້ໂອນຈາກ ຟຟລ ໃຫ້ກັບບໍລິສັດ ໂດຍຂໍ້ຕົກລົງນາຍົກລັດຖະມົນຕີວ່າດ້ວຍການສ້າງຕັ້ງບໍລິສັດ ແລະ ມະຕິຕົກລົງ ຄສພຊ ວ່າດ້ວຍວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປີ 2010. ພາຍຫຼັງການສະເໜີຂາຍຫຼັກຊັບຂອງບໍລິສັດຄັ້ງທຳອິດຈົນເຖິງປະຈຸບັນ ຟຟລ ໄດ້ມີນະໂຍບາຍ ເພື່ອຮັກສາຖານະຂອງຕົນໃນນາມເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນທີ່ອອກທັງໝົດໃນບໍລິສັດ.

ເພາະສະນັ້ນ, ຈຶ່ງມີການດຳເນີນລາຍການທີ່ກ່ຽວພັນຈຳນວນໜຶ່ງ ລະຫວ່າງບໍລິສັດ ແລະ ຟຟລ ເຊັ່ນ: (i) ເປັນຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ; ແລະ (ii) ຜູ້ຊື້ກະແສໄຟຟ້າຂອງບໍລິສັດ ໂດຍອີງຕາມ PPAs ແລະ CAs.

ການເຮັດດຳເນີນລາຍການທີ່ກ່ຽວພັນທີ່ສຳຄັນແມ່ນເກີດຈາກການໂອນຊັບສິນຂອງ ຟຟລ, ພັນທະຂອງ ຟຟລ ພາຍໃຕ້ສັນຍາກູ້ຢືມ ແລະ ທຸລະກິດຜະລິດ ແລະ ຂາຍໄຟຟ້າ, ໂດຍມີລາຍລະອຽດຂອງການເຮັດທຸລະກຳດັ່ງກ່າວ, ເຊັ່ນ: ທຸລະກຳຊື້ຂາຍພະລັງງານໄຟຟ້າ, ບັນຊີລາຍຮັບ ແລະ ການກູ້ຢືມ. ລາຍລະອຽດຂອງການດຳເນີນລາຍການທີ່ກ່ຽວພັນແມ່ນໄດ້ສະແດງໃນບົດສະຫຼຸບການເງິນຂອງບໍລິສັດ ປີ 2014, ເຊິ່ງສາມາດສະຫຼຸບໄດ້ດັ່ງນີ້

ຕາຕະລາງ 11.1: ການດຳເນີນລາຍການທີ່ກ່ຽວພັນ

ບໍລິສັດ ຫຼື ນິຕິບຸກຄົນທີ່ກ່ຽວພັນ		ລັກສະນະຂອງການທຸລະກຳ	ມູນຄ່າຂອງການທຸລະກຳ (ລ້ານກີບ)	ເຫດຜົນຂອງການເຮັດທຸລະກຳ
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ການຂາຍໄຟຟ້າ	839.193	ການຊື້ໄຟຟ້າແມ່ນຕາມລາຄາ ແລະ ຕາມເງື່ອນໄຂ PPAs ເຊິ່ງເປັນທຸລະກິດປົກກະຕິຂອງບໍລິສັດ
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ໜີ້ຕ້ອງຮັບ	436.120	ໜີ້ຕ້ອງຮັບຈາກການດຳເນີນທຸລະກິດຕາມປົກກະຕິຂອງບໍລິສັດ ຈຳນວນ 112,851 ລ້ານກີບ ຢູ່ໃນໄລຍະເວລາສິນເຊື່ອປົກກະຕິ ແລະ ຈຳນວນ 323.269 ລ້ານກີບ ທີ່ເກີນກຳນົດຊຳລະໜີ້ຕ່ຳກວ່າ 3 ເດືອນ
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ໜີ້ຕ້ອງຮັບ	779.005	ເງິນຈຳນວນ 779.005 ລ້ານກີບໃນບັນຊີແມ່ນໄດ້ຊຳລະກ່ອນລ່ວງໜ້າໃຫ້ກັບ ຟຟລ ໃນໂຄງການເຂື່ອນໄຟຟ້າ ຫ້ວຍລຳພັນໃຫຍ່ ແລະ ໂຄງການເຂື່ອນໄຟຟ້ານ້ຳຄານ 2 ໂດຍອີງຕາມ MOU ກ່ຽວກັບການໂອນຊັບສິນຂອງສອງໂຄງການ ໃນຄັ້ງວັນທີ 8 ມິຖຸນາ 2011; ຈຳນວນ 42.908 ລ້ານກີບສຳລັບໂຄງການເຂື່ອນໄຟຟ້ານ້ຳງື່ມ 5 ໂດຍອີງຕາມ MOU ກ່ຽວກັບການໂອນຊັບສິນຂອງໂຄງການ ໃນຄັ້ງວັນທີ 20 ກຸມພາ 2012;

ບໍລິສັດ ຫຼື ນິຕິບຸກຄົນທີ່ກ່ຽວພັນ		ລັກສະນະຂອງການທຸລະກຳ	ມູນຄ່າຂອງການທຸລະກຳ (ລ້ານກີບ)	ເຫດຜົນຂອງການເຮັດທຸລະກຳ
				ຈຳນວນ 16,112 ລ້ານກີບສຳລັບໂຄງການເຂື່ອນໄຟຟ້ານ້ຳສະນາ ໂດຍອີງຕາມ MOU ກ່ຽວກັບການໂອນຊັບສິນຂອງໂຄງການໃນຄັ້ງວັນທີ 12 ກຸມພາ 2014; ແລະ ຈຳນວນ 143.069 ລ້ານກີບສຳລັບໂຄງການເຂື່ອນໄຟຟ້ານ້ຳຄານ 3 ໂດຍອີງຕາມ MOU ກ່ຽວກັບການໂອນຊັບສິນຂອງໂຄງການໃນຄັ້ງວັນທີ 17 ກຸມພາ 2014
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ຄ່າຕອບແທນທີ່ຈ່າຍໃຫ້ກັບຜູ້ອຳນວຍການແລະຜູ້ດຳເນີນການ	1.819	ຄ່າຕອບແທນທີ່ຈ່າຍໃຫ້ກັບຜູ້ອຳນວຍການ ແລະ ຜູ້ດຳເນີນການ
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ຄືນເງິນກູ້ຍືມໄລຍະຍາວ	598.782	ອີງຕາມຂໍ້ຕົກລົງວ່າດ້ວຍການຊຳລະໜີ້ສິນຄືນລະຫວ່າງບໍລິສັດ ແລະ ຟຟລ ໃນຄັ້ງວັນທີ 15 ທັນວາ 2010 ແລະ ຄັ້ງວັນທີ 28 ກຸມພາ 2013, ເຊິ່ງບໍລິສັດຕົກລົງເຫັນດີຊຳລະໜີ້ສິນທີ່ຄ້າງຈ່າຍໃຫ້ ຟຟລ ທີ່ເກີດຂຶ້ນຈາກການໂອນຊັບສິນຂອງ ຟຟລ.
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ຈ່າຍດອກເບ້ຍ	30.273	ອີງຕາມຂໍ້ຕົກລົງວ່າດ້ວຍການຊຳລະໜີ້ສິນຄືນລະຫວ່າງບໍລິສັດ ແລະ ຟຟລ ໃນຄັ້ງວັນທີ 15 ທັນວາ 2010 ແລະ ຄັ້ງວັນທີ 28 ກຸມພາ 2013, ເຊິ່ງບໍລິສັດຕົກລົງເຫັນດີຊຳລະໜີ້ສິນທີ່ຄ້າງຈ່າຍໃຫ້ ຟຟລ ທີ່ເກີດຂຶ້ນຈາກການໂອນຊັບສິນຂອງ ຟຟລ.
ຟຟລ	ບໍລິສັດແມ່ຖືຮຸ້ນ 75 ສ່ວນຮ້ອຍຂອງຮຸ້ນໃນບໍລິສັດ	ເງິນປັນຜົນ	436.840	ຟຟລ ມີສິດໄດ້ຮັບເງິນປັນຜົນຈາກການຖືຮຸ້ນຂອງຕົນໃນບໍລິສັດ

ແຫຼ່ງຂໍ້ມູນ: ຜ-ຟຟລ

11.1 ນະໂຍບາຍ ຫຼື ຄວາມຕັ້ງໃຈຂອງການເຮັດທຸລະກຳກັບຝ່າຍທີ່ກ່ຽວຂ້ອງໃນອະນາຄົດ

ບໍລິສັດຫວັງວ່າ ອາດຈະມີການດຳເນີນລາຍການທີ່ກ່ຽວພັນ ລະຫວ່າງບໍລິສັດ ແລະ ບໍລິສັດແມ່ຂອງຕົນໃນອະນາຄົດ, ຕົ້ນຕໍແມ່ນການດຳເນີນທຸລະກິດການຜະລິດ ແລະ ການຂາຍໄຟຟ້າແບບປົກກະຕິ ເຊິ່ງເປັນທຸລະກິດຫຼັກຂອງບໍລິສັດ. ເຖິງຢ່າງໃດກໍຕາມ, ຖ້າຫາກການດຳເນີນການທຸລະກຳດັ່ງກ່າວມີຫຼາຍ ແລະ ກະທົບຕໍ່ການຜະລິດ, ທຸລະກຳດັ່ງກ່າວອາດຈະຖືກເປີດເຜີຍ ແລະ ສະເໜີຂໍອະນຸມັດຈາກສະພາບໍລິຫານ ແລະ/ຫຼື ຜູ້ຖືຮຸ້ນຂອງບໍລິສັດເພື່ອທົບທວນ, ພິຈາລະນາ ແລະ ໃຫ້ຄຳເຫັນໃນດ້ານລາຄາທີ່ເໝາະສົມ ແລະ ມີເຫດຜົນໃນການເຮັດທຸລະກຳ, ມີຄວາມໂປ່ງໃສ ແລະ ມີຜົນສັກສິດ.

12. ຖານະທາງການເງິນ ແລະ ຂໍ້ມູນການດຳເນີນງານ

12.1 ຄຳເຫັນຂອງຜູ້ກວດສອບພາຍນອກ

ຄຳເຫັນຂອງຜູ້ກວດສອບພາຍນອກກ່ຽວກັບບົດລາຍງານທາງດ້ານການເງິນຂອງບໍລິສັດ ໃນວັນທີ 31 ທັນວາ 2014 ມີດັ່ງລຸ່ມນີ້:

"ພວກເຮົາມີຄຳເຫັນວ່າ, ເອກະສານລາຍງານການເງິນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສຳລັບປີບັນຊີສິ້ນສຸດ ວັນທີ 31 ທັນວາ 2014. ຖືກກະກຽມຂຶ້ນຕາມອົງປະກອບທີ່ສຳຄັນໂດຍສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ ໃນບົດອະທິບາຍຂໍ້ທີ່ 2 ຂອງເອກະສານລາຍງານການເງິນ."

ເບິ່ງຕາມເອກະສານຊ້ອນທ້າຍ 1" ບົດລາຍງານທາງດ້ານການເງິນຂອງບໍລິສັດ ໝາຍເຫດປະກອບງົບການເງິນ "

12.1.1 ພື້ນຖານການບັນຊີ

ພື້ນຖານການບັນຊີ ຖືກນຳໃຊ້ໃນການກະກຽມບົດລາຍງານທາງດ້ານການເງິນທີ່ອາດຈະມີຄວາມແຕກຕ່າງໄປຈາກບັນດາຫຼັກການທາງການບັນຊີທີ່ຖືກຍອມຮັບທີ່ໄດ້ນຳໃຊ້ໃນບັນດາປະເທດ ແລະ ເຂດອຳນາດອື່ນໆ. ດ້ວຍເຫດນັ້ນ, ຜູ້ອ່ານຈະຕ້ອງຮັບຮູ້ວ່າ ສ່ວນປະກອບຂອງບົດລາຍງານທາງດ້ານການເງິນແມ່ນບໍ່ມີຈຸດປະສົງທີ່ຈະສະແດງໃຫ້ເຫັນຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ອີງຕາມບັນດາຂອບເຂດອຳນາດອື່ນໆ ນອກຈາກ ສປປ ລາວ.

12.2 ຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີການບັນຊີ 2014 ແລະ 2013

ຕາຕະລາງ 12.1: ສະຫຼຸບຖານະການເງິນ ແລະ ຂໍ້ມູນການດຳເນີນງານສຳລັບປີການບັນຊີ 2014 ແລະ 2013

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ບົດລາຍງານຖານະການເງິນ		
ຊັບສິນ		
ຊັບສິນບໍ່ໝຸນວຽນ		
ເງິນລົງທຶນໃນວິສາຫະກິດຂະຮຸ້ນ	610.357	571.745
ເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	1.498.609	1.298.247
ເງິນລົງທຶນຈ່າຍລ່ວງໜ້າ	779.005	474.411
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	4.145.851	4.011.109
ຊັບສິນບໍ່ໝຸນວຽນອື່ນໆ	1.885	3.465
ລວມຊັບສິນບໍ່ໝຸນວຽນອື່ນໆ	**7.035.707**	**6.358.977**
ຊັບສິນໝຸນວຽນ		
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	1.251.534	159.914
ເງິນລົງທຶນໄລຍະສັ້ນ	20.000	20.000
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	502.382	519.355
ເຄື່ອງໃນສາງ, ສຸດທິ	4.043	3.020
ໜີ້ຕ້ອງຮັບອື່ນໆ	7.595	5.905
ລວມຊັບສິນໝຸນວຽນ	**1.785.554**	**708.194**
ລວມຊັບສິນ	**8.821.261**	**7.067.171**
ທຶນ		

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
ທຶນຂອງຜູ້ຖືຮຸ້ນ		
ເງິນລົງທຶນ	4.904.867	4.904.867
ສ່ວນເພີ່ມມູນຄ່າຮຸ້ນ	142.229	142.229
ຄ້າງສະສົມຕາມລະບຽບການ	297.210	206.442
ຜົດຕ່າງຂອງການແປງຄ່າເອກະສານລາຍງານການເງິນ	(1.476)	7.001
ກຳໄລສະສົມ	978.811	744.348
ລວມທຶນ	**6.321.641**	**6.004.887**
ໜີ້ສິນ		
ໜີ້ສິນບໍ່ໝຸນວຽນ		
ເງິນກູ້ຍືມໃນໄລຍະຍາວ, ສຸດທິ	499.263	805.295
ຮຸ້ນກູ້, ສຸດທິ	1.575.862	-
ໜີ້ຕ້ອງຈ່າຍຂອງສັນຍາ SWAP, ສຸດທິ	11.105	-
ລວມໜີ້ສິນບໍ່ໝຸນວຽນ	**2.086.230**	**805.295**
ໜີ້ສິນໝຸນວຽນ		
ໜີ້ຕ້ອງສິ່ງຜູ້ສະໜອງ	174.589	30.823
ເງິນກູ້ຍືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	99.519	132.003
ໜີ້ຕ້ອງສິ່ງອື່ນໆ	134.936	66.077
ໜີ້ຕ້ອງສິ່ງອາກອນລາຍໄດ້	4.306	9.278
ໜີ້ສິນໝຸນວຽນອື່ນໆ	40	18.808
ລວມໜີ້ສິນໝຸນວຽນ	**413.390**	**256.989**
ລວມຍອດໜີ້ສິນ	**2.499.620**	**1.062.284**
ລວມຍອດທຶນຕົນເອງ ແລະ ໜີ້ສິນ	**8.821.261**	**7.067.171**
ລາຍການກຳໄລ ແລະ ຂາດທຶນ		
ຂາຍ	839.193	862.429
ຕົ້ນທຶນໃນການຂາຍ	(215.613)	(203.935)
ກຳໄລ	**623.580**	**658.494**
ລາຍຮັບອື່ນໆ	5.680	6.700
ລາຍຈ່າຍຄ່າບໍລິຫານ	(123.528)	(113.489)
ກຳໄລ/(ຂາດທຶນ)	(18.098)	24.463
ລາຍຈ່າຍດອກເບ້ຍ	(31.722)	(30.845)
ກຳໄລຂອງຮຸ້ນຂອງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	474.467	453.746
ກຳໄລ ກ່ອນອາກອນກຳໄລ	**930.379**	**999.069**
ອາກອນກຳໄລ	(22.695)	(27.327)
ກຳໄລສຸດທິສຳລັບປີ	**907.684**	**971.742**
ໃບລາຍງານກະແສເງິນສົດ		
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ		
ກຳໄລ ອາກອນກຳໄລ	**930.379**	**999.069**
ປັບປຸງ		
ຄ່າສູນເສຍມູນຄ່າ	222	-
ຫັກຄ່າຫຼຸ້ຍຫ້ຽນ	181.555	167.060
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ, ສຸດທິ	(11.555)	(25.753)
ກຳໄລຮຸ້ນ ຈາກເງິນລົງທຶນ	(474.467)	(453.746)
ລາຍຈ່າຍການເງິນ	31.722	30.845
ກະແສເງິນສົດຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ	**657.756**	**717.475**
ການປ່ຽນແປງຈາກ ການດຳເນີນງານ ຊັບສິນ ແລະໜີ້ສິນ		
- ການເພີ່ມຂອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	16.973	(105.722)
- ການເພີ່ມຂອງເຄື່ອງໃນສາງ	(1.021)	108
- ຊັບສິນໝຸນວຽນອື່ນໆ	(1.691)	(4.100)

ສະຫຼຸບຖານະການເງິນ (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2014 (ລ້ານກີບ)	ບົດລາຍງານຖານະການເງິນຂອງ ບໍລິສັດ ປີ 2013 (ລ້ານກີບ)
- ໜີ້ຕ້ອງສົ່ງ	(30.373)	(34.520)
- ຊັບສິນອື່ນ	1.579	1.732
- ໜີ້ສິນໝຸນວຽນອື່ນໆ	(18.767)	15.537
- ໜີ້ຄ້າງຈ່າຍ	50.934	43.945
ກະແສເງິນສົດທີ່ກຳເນີດຈາກການດຳເນີນງານ	675.490	634.455
ອາກອນກຳໄລທີ່ໄດ້ຈ່າຍ	(27.668)	(24.878)
ເງິນສົດ ສຸດທິ ຈາກກິດຈະກຳການລົງທຶນ	**647.822**	**609.577**
ກະແສເງິນສົດຈາກກິດຈະກຳການລົງທຶນ		
ການເພີ່ມຂອງເງິນລົງທຶນຈ່າຍລ່ວງໜ້າ	(304.594)	(95.410)
ຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ	(142.162)	(168.379)
ຊື້ເງິນລົງທຶນໄລຍະສັ້ນ, ສຸດທິ	(20.000)	(20.000)
ການເພີ່ມຂອງເງິນລົງທຶນໄລຍະສັ້ນ, ສຸດທິ	20.000	40.000
ຮັບເງິນປັນຜົນ	227.016	313.129
ເງິນສົດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ	**(219.740)**	**(69.340)**
ກະແສເງິນສົດຈາກກິດຈະກຳການເງິນ		
ການເພີ່ມຂອງເງິນກູ້ໄລຍະຍາວ	-	90.113
ຈ່າຍເງິນກູ້ຍືມໄລຍະຍາວ	(333.145)	-
ຮັບເງິນຈາກເງິນກູ້ຍືມໄລຍະສັ້ນ	160.000	-
ຈ່າຍເງິນກູ້ຍືມໄລຍະສັ້ນ	(160.000)	-
ຮັບເງິນຈາກຮຸ້ນກູ້	1.616.810	-
ຕົ້ນທຶນການອອກຮຸ້ນກູ້	(17.734)	-
ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ	(436.840)	(424.884)
ຈ່າຍເງິນປັນຜົນ	(145.613)	(141.628)
ຈ່າຍດອກເບ້ຍ	(30.733)	(31.696)
ເງິນສົດສຸດທິ ຈາກກິດຈະກຳການເງິນ	**652.745**	**(682.758)**
ການຫຼຸດລົງສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	**1.080.827**	**(3.841)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ	159.914	164,511
ຜົນຂອງອັດຕາແລກປ່ຽນ ປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	10.793	(756)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	1.251.534	159.914
ລາຍການບໍ່ແມ່ນເງິນສົດ		
ໜີ້ສິນອື່ນໆ ສຳລັບການຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ	174.165	64.890
ເຈົ້າໜີ້ຄ້າງຄ່າໃຊ້ຈ່າຍໃນການອອກຮຸ້ນກູ້	16.936	-

ແຫຼ່ງຂໍ້ມູນ: ຜ-ຟຟລ

12.3 ອັດຕາສ່ວນທາງການເງິນ

ຕາຕະລາງ 12.2 ອັດຕາສ່ວນທາງການເງິນ

ອັດຕາສ່ວນທາງການເງິນ	ປີ 2014	ປີ 2013
ອັດຕາສ່ວນສະແດງຄວາມສາມາດໃນການຫາກຳໄລ		
ອັດຕາກຳໄລຂັ້ນຕົ້ນ (%)	74	76
ອັດຕາກຳໄລຈາກການດຳເນີນງານ (%)	87	91
ອັດຕາກຳໄລສຸດທິ (%)	69	74
ອັດຕາຜົນຕອບແທນຜູ້ຖືຮຸ້ນ (%)	14	16
ອັດຕາສ່ວນສະພາບຄ່ອງ		
ອັດຕາສ່ວນທຸນໝຸນວຽນ (ເທົ່າ)	5,7	5,7
ອັດຕາສ່ວນໝຸນວຽນຂອງລູກໜີ້ (ເທົ່າ)	1,7	1,7

ອັດຕາສ່ວນທາງການເງິນ	**ປີ 2014**	**ປີ 2013**
ໄລຍະເວລາໃນການຮຽກເກັບໜີ້ (ວັນ)	216	217
ອັດຕາສ່ວນສະແດງປະສິດທິພາບໃນການດຳເນີນງານ		
ອັດຕາຜົນຕອບແທນຈາກຊັບສິນ (%)	10	14
ອັດຕາຜົນຕອບແທນຈາກຊັບສິນຄົງທີ່ (%)	15	18
ອັດຕາການໝຸນວຽນຂອງຊັບສິນ (ເທົ່າ)	0,1	0,2
ອັດຕາສ່ວນວັດຄວາມສາມາດໃນການຊຳລະໜີ້		
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (ເທົ່າ)	0,4	0,2
ອັດຕາສ່ວນໜີ້ທີ່ມີພັນທະດອກເບ້ຍຕໍ່ສ່ວນຂອງຜູ້ຖືຮຸ້ນ (ເທົ່າ)	0,3	0,2
ຄວາມອາດສາມາດຊຳລະດອກເບ້ຍ (ເທົ່າ)	36,1	38,8
ອັດຕາສ່ວນຄວາມສາມາດໃນການຊຳລະໜີ້ (ເທົ່າ)	3,1	5,8

ແຫຼ່ງຂໍ້ມູນ: ຜ-ຟຟລ

<u>ນິຍາມຂອງອັດຕາສ່ວນທາງການເງິນທີ່ສຳຄັນ</u>

<u>ອັດຕາສ່ວນຄວາມສາມາດໃນການທຳກຳໄລ</u>

ອັດຕາກຳໄລຂັ້ນຕົ້ນ	ກຳໄລຂັ້ນຕົ້ນ/ ຂາຍສຸດທິ
ອັດຕາສ່ວນ EBITDA	EBITDA / ລາຍຮັບລວມ
ອັດຕາສ່ວນກຳໄລສຸດທິ	ກຳໄລສຸດທິ / ລາຍຮັບລວມ
ອັດຕາຜົນຕອບແທນຈາກສ່ວນຂອງຜູ້ຖືຮຸ້ນ	ກຳໄລສຸດທິ / ສ່ວນຂອງຜູ້ຖືຮຸ້ນ

<u>ອັດຕາສ່ວນສະພາບຄ່ອງ</u>

ອັດຕາສ່ວນທຶນໝຸນວຽນ	ຊັບສິນໝຸນວຽນ / ໜີ້ສິນໝຸນວຽນ
ອັດຕາໝຸນວຽນຂອງລູກໜີ້	ຂາຍສຸດທິ / ສະເລ່ຍໜີ້ຕ້ອງຮັບສຸດທິ
ໄລຍະເວລາໃນການຮຽກເກັບໜີ້ (ວັນ)	360 / ອັດຕາການໝຸນວຽນຂອງລູກໜີ້

<u>ອັດຕາສ່ວນສະແດງປະສິດທິພາບໃນການທຳງານ</u>

ອັດຕາຜົນຕອບແທນຈາກສິນຊັບທັງໝົດ	ກຳໄລສຸດທິ / ສະເລ່ຍຊັບສິນທັງໝົດ
ອັດຕາຜົນຕອບແທນຈາກສິນຊັບຖາວອນ	(ກຳໄລສຸດທິ + ຄ່າຫຼ້ຍຫ້ຽນ) / ສະເລ່ຍຊັບສິນບໍ່ໝຸນວຽນທັງໝົດ
ອັດຕາໝຸນວຽນຂອງສິນຊັບ	ລາຍຮັບສຸດທິ / ສະເລ່ຍຊັບສິນທັງໝົດ

<u>ອັດຕາສ່ວນວັດຄວາມສາມາດໃນການຊຳລະໜີ້</u>

ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ	ໜີ້ສິນທັງໝົດ / ສ່ວນຂອງຜູ້ຖືຮຸ້ນທັງໝົດ
ອັດຕາສ່ວນໜີ້ທີ່ມີພັນທະດອກເບ້ຍຕໍ່ສ່ວນຜູ້ຖືຮຸ້ນ	ໜີ້ສິນທີ່ມີພັນທະດອກເບ້ຍຈ່າຍ/ ສ່ວນຂອງຜູ້ຖືຮຸ້ນທັງໝົດ
ຄວາມສາມາດໃນການຈ່າຍດອກເບ້ຍ	EBIT / ຄ່າໃຊ້ຈ່າຍດອກເບ້ຍ
ອັດຕາສ່ວນຄວາມສາມາດໃນການຊຳລະໜີ້	EBITDA / ການຊຳລະໜີ້ຈາກລາຍຮັບ

12.4 ການພິຈາລະນາ ແລະ ການວິເຄາະ ຂອງສະພາບໍລິຫານທີ່ກ່ຽວກັບຖານະການເງິນ ແລະ ຜົນການດຳເນີນການ

12.4.1 ພາບລວມ

ບໍລິສັດໄດ້ສ້າງຕັ້ງຂຶ້ນໃນວັນທີ 15 ທັນວາ 2010 ຕາມການປັບປຸງໂຄງສ້າງຂອງທຸລະກິດພະລັງງານ ຂອງ ຟຟລ ດ້ວຍການໂອນຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງບໍລິສັດ ແລະ ຊັບສິນອື່ນທີ່ກ່ຽວຂ້ອງມາໃຫ້ແກ່ບໍລິສັດໃນວັນສ້າງຕັ້ງ. ບົດສະຫຼຸບຊັບສິນທີ່ໄດ້ໂອນໃຫ້ກັບບໍລິສັດໃນວັນສ້າງຕັ້ງຕາມທີ່ໄດ້ກຳນົດໄວ້ໃນຕາຕະລາງລຸ່ມນີ້:

ຕາຕະລາງ 12.3: ຊັບສິນທີ່ໂອນໃຫ້ບໍລິສັດໃນວັນສ້າງຕັ້ງ

ເຂື່ອນໄຟຟ້າ	ທີ່ຕັ້ງ	ກຳລັງການຜະລິດຕິດຕັ້ງ (MW)	COD	ມູນຄ່າສຸດທິຕາມບັນຊີ (ລ້ານກີບ)
ພາກກາງ				
ນ້ຳງຶ່ມ 1	ວຽງຈັນ	155,0	1971	1.552.085
ນ້ຳເລີກ	ວຽງຈັນ	60,0	2000	786.196
ນ້ຳມັງ 3	ວຽງຈັນ	40,0	2005	430.423
ນ້ຳຊອງ	ວຽງຈັນ	6,0	2012	134.540
ພາກໃຕ້				
ເຊເສັດ 1	ສາລະວັນ	45,0	1991	1.183.411
ເຊເສັດ 2	ສາລະວັນ	76,0	2009	
ແຊລະບຳ	ຈຳປາສັກ	5,0	1969	53.918
ລວມທັງໝົດ		**387,0**		**4.140.573**

ແຫຼ່ງຂໍ້ມູນ: ຜ-ຟຟລ

ບໍລິສັດໄດ້ມີການລົງທຶນເພີ່ມເຕີມໃນໂຄງການເຂື່ອນໄຟຟ້າອີກ 4 ແຫ່ງ ລວມກຳລັງຕິດຕັ້ງ 1.365 MW ຫຼື 494 MW ເພື່ອເປັນການປະກອບທຶນ. ຈາກຜົນຂອງການດຳເນີນການດັ່ງກ່າວ, ບໍລິສັດບັນລຸໄດ້ທັງໝົດ 881 MW ແລະ ສາມາດລະດົມທຶນໄດ້ໂດຍການເພີ່ມຈາກ 868.597.050 ຮຸ້ນ ມາເປັນ 1.226.216.765 ຮຸ້ນ ພາຍໃຕ້ສະພາບການດັ່ງກ່າວນີ້ ຟລລ ຍັງຮັກສາສັດສ່ວນຮຸ້ນຂອງຕົນໄວ້ໃນອັດຕາ 75 ສ່ວນຮ້ອຍ (919.662.892 ຮຸ້ນ).

ຕາຕະລາງ 12.4: ສັດສ່ວນການຖືຮຸ້ນໃນ 4 ໂຄງການທີ່ໄດ້ຈາກການລະດົມທຶນເພີ່ມ

ເຂື່ອນໄຟຟ້າ	ທີ່ຕັ້ງ	ກຳລັງການຜະລິດ (MW)	COD
ເຫີນຫີນບຸນ	ບໍລິຄຳໄຊ	300,0	1998, 2013
ນ້ຳງຶ່ມ 2	ວຽງຈັນ	153,8	2012
ຫ້ວຍເຫາະ	ອັດຕະປື	30,4	1998
ນ້ຳລີກ 1-2	ວຽງຈັນ	10,0	2010
ລວມທັງໝົດ		**494,2**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ໃນປີ 2014 ບໍລິສັດໄດ້ອອກຮຸ້ນກູ້ໃນຈຳນວນເງິນ 6.500 ລ້ານບາດ ເພື່ອລົງທຶນເຂົ້າໃນຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ ແລະ ລົງທຶນໃນເຂື່ອນໄຟຟ້າທີ່ມີກຳລັງການຜະລິດ 392 MW. ພາຍຫຼັງໄດ້ເລີ່ມການຜະລິດ ບໍລິສັດ ຄາດວ່າຈະຜະລິດໄດ້ເຖິງ 1.273 MW.

ຕາຕະລາງ 12.5: ເຂື່ອນໄຟຟ້າ ແລະ IPPs ທີ່ນຳໃຊ້ທຶນຈາກຮຸ້ນກູ້

ເຂື່ອນໄຟຟ້າ	ທີ່ຕັ້ງ	ກຳລັງການຜະລິດ (MW)	COD
ຊັບສິນທີ່ໂອນ			
ນ້ຳສະນາ	ວຽງຈັນ	14,0	2014
ຫ້ວຍລຳພັນໃຫຍ່	ເຊກອງ	88,0	2015
ນ້ຳຄານ 2	ຫຼວງພະບາງ	130,0	2016
ນ້ຳຄານ 3	ຫຼວງພະບາງ	60,0	2016
ລວມ		**292,0**	
ສັດສ່ວນການໂອນ			
ນ້ຳງຶ່ມ 5	ວຽງຈັນ	18,0	2014
ນ້ຳລອງ	ຫຼວງນ້ຳທາ	1,0	2015
ນ້ຳອຸ 2	ຜົ້ງສາລີ	18,0	2017
ນ້ຳອຸ 5	ຜົ້ງສາລີ	36,0	2017
ນ້ຳອຸ 6	ຜົ້ງສາລີ	27,0	2018
ລວມ		**100,00**	
ລວມທັ້ງໝົດ		**392,00**	

ແຫຼ່ງຂໍ້ມູນ: ຜ-ຟຟລ

ການປຶກສາຫາລື, ການວິເຄາະເງື່ອນໄຂດ້ານການເງິນ ແລະ ຜົນຂອງການດຳເນີນງານຂອງບໍລິສັດ ແມ່ນອີງໃສ່ການຄາດຄະເນຂອງບົດສະຫຼຸບການເງິນ. ບໍລິສັດດຳເນີນການຕໍ່ຊັບສິນທີ່ໄດ້ໂອນໃຫ້ກັບບໍລິສັດໃນອັນສ້າງຕັ້ງ ໂດຍ ການຜະລິດ ແລະ ການສະໜອງໄຟຟ້າໃຫ້ກັບ ຟຟລ ເປັນຕົ້ນຕໍ.

12.4.2 ການລາຍງານ ແລະ ການວິເຄາະຂອງຜົນການດຳເນີນງານ

ສຳລັບຜົນຂອງການດຳເນີນງານໃນປີ 2013 ແລະ 2014, ບໍລິສັດມີລາຍຮັບ ແລະ ກຳໄລສຸດທິ 971.742 ລ້ານກີບ ແລະ 907.684 ລ້ານກີບ ຕາມລຳດັບ. ມີການຫຼຸດລົງ 2,69 ສ່ວນຮ້ອຍ ແລະ 6,59 ສ່ວນຮ້ອຍ. ຈຸດ ສຳຄັນທີ່ເຮັດໃຫ້ຜົນຂອງການດຳເນີນງານຫຼຸດລົງ ແມ່ນເກີດຈາກການຫຼຸດລົງຂອງການຜະລິດຕົວຈິງ. ໃນປີ 2014 ການນຳໃຊ້ຊັບ ສິນເຂົ້າໃນການຜະລິດໄຟຟ້າມີໜ້ອຍກວ່າ ປີ 2013. ກຳລັງໃນການຜະລິດຫຼຸດລົງ ເຮັດໃຫ້ມີການເພີ່ມທະວີມູນຄ່າໃນການຜະລິດ ຍ້ອນຂາດຄວາມດຸນດ່ຽງທາງດ້ານເສດຖະກິດ. ໃນນັ້ນຍັງມີການເພີ່ມຄ່າໃຊ້ຈ່າຍໃນການບໍລິຫານໂດຍສະເພາະແມ່ນການຂາດທຶນ ຈາກອັດຕາແລກປ່ຽນໃນປີ 2014.

ລາຍຮັບຈາກການດຳເນີນງານໃນເບື້ອງຕົ້ນຂອງບໍລິສັດໃນປີ 2013 ແລະ 2014 ມີຈຳນວນ 658.494 ລ້ານກີບ ຫຼື 76 ສ່ວນຮ້ອຍ ແລະ 623.580 ລ້ານກີບ ຫຼື 74 ສ່ວນຮ້ອຍ ຕາມລຳດັບ. ຕົ້ນທຶນການຂາຍສ່ວນໃຫຍ່

ແມ່ນມາຈາກຄ່າຫຼຸຍຫ້ຽນເຊິ່ງມີຕົ້ນຕໍ່ມາຈາກຄ່າໃຊ້ຈ່າຍໃນການກໍ່ສ້າງ. ອັດຕາສ່ວນ EBITDA ແລະ ອັດຕາສ່ວນກຳໄລສຸດທິ ໃນປີ 2013 ແລະ 2014 ມີຈຳນວນ 91 ສ່ວນຮ້ອຍ, 74 ສ່ວນຮ້ອຍ ແລະ 87 ສ່ວນຮ້ອຍ, 69 ສ່ວນຮ້ອຍ ຕາມລຳດັບ. ການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍໃນການບໍລິຫານ ລວມໄປເຖິງການຂາດທຶນຈາກອັດຕາແລກປ່ຽນເຮັດໃຫ້ທັງ EBITDA ແລະ ກຳໄລສຸດທິຫຼຸດລົງ.

12.4.3 ລາຍຮັບ

ລາຍຮັບສ່ວນໃຫຍ່ແມ່ນໄດ້ມາຈາກການຂາຍໄຟຟ້າໃຫ້ກັບ ຟຟລ, ລາຍລະອຽດຕ່າງໆ ໄດ້ສະແດງໃຫ້ເຫັນໃນຕາຕະລາງລຸ່ມນີ້:

ຕາຕະລາງ 12.6: ລາຍລະອຽດຂອງລາຍຮັບ

	31 ທັນວາ 2014 (ລ້ານກີບ)	31 ທັນວາ 2013 (ລ້ານກີບ)
ລາຍຮັບຈາກການຂາຍກະແສໄຟຟ້າ	839.193	862.429
ລາຍຮັບອື່ນໆ	5.680	6.700
ລາຍຮັບທັງໝົດ	844.873	869.129

ແຫຼ່ງຂໍ້ມູນ: ຜ-ຟຟລ

ສຳລັບໝາກຜົນຂອງການດຳເນີນງານຂອງປີ 2014, ລາຍຮັບຈາກການຂາຍໄຟຟ້າເທົ່າກັບ 839.193 ລ້ານກີບ, ເທົ່າກັບ 99,32 ສ່ວນຮ້ອຍຂອງລາຍຮັບທັງໝົດ ແລະ ລາຍຮັບອື່ນສ່ວນໃຫຍ່ແມ່ນໄດ້ຈາກດອກເບ້ຍປະມານ 5.680 ລ້ານກີບ. ໃນປີ 2014, ການຜະລິດກະແສໄຟຟ້າສຳລັບຂາຍແມ່ນປະມານ 1.968 GWh ດ້ວຍລາຄາກະແສໄຟຟ້າ 426,43 ກີບ ຕໍ່ KWh. ຕາຕະລາງລຸ່ມນີ້ແມ່ນລາຍລະອຽດຂອງການຜະລິດໄຟຟ້າຂອງແຕ່ລະເຂື່ອນໃນປີ 2014:

ຕາຕະລາງ 12.7: ລາຍລະອຽດຂອງການຜະລິດ

	ລວມທັງໝົດ	ນ້ຳງື່ມ 1	ນ້ຳມັງ 3	ນ້ຳເລີກ	ເຊເຊັດ 1+2	ແຊລະບ່ຳ	ນ້ຳຊອງ
ການຜະລິດໄຟຟ້າ(GWh)	1.968	1.142	178	197	436	30	13

ແຫຼ່ງຂໍ້ມູນ: ຜ-ຟຟລ

ໃນປີ 2013, ບໍລິສັດໄດ້ຜະລິດໄຟຟ້າສຳລັບຂາຍ 2.043 GWh ໃນອັດຕາຄ່າໄຟຟ້າສະເລ່ຍ 422,21 ກີບຕໍ່ KWh.

ຜົນການດຳເນີນງານຂອງບໍລິສັດແມ່ນມີຄວາມແຕກຕ່າງໃນແຕ່ລະໄຕມາດ ແລະ ລະດູການ. ການຜະລິດໄຟຟ້າແມ່ນອີງໃສ່ການໄຫຼຂອງນ້ຳເຂົ້າໄປຍັງອ່າງເກັບນ້ຳຂອງແຕ່ລະເຂື່ອນໂດຍສິ່ງຜົນສະທ້ອນໃຫ້ຄວາມສາມາດໃນການຜະລິດໄຟຟ້າຂອງບໍລິສັດເພີ່ມຂຶ້ນໃນທ້າຍປີເຊິ່ງເປັນລະດູຜົນ.

12.4.4 ລາຍຈ່າຍໃນການດຳເນີນງານ

ຕົ້ນທຶນການຂາຍ ແລະ ລາຍຈ່າຍໃນການບໍລິຫານ. ຕາຕະລາງລຸ່ມນີ້ກຳນົດລາຍລະອຽດຂອງລາຍຈ່າຍທີ່ສຳຄັນ:

ຕາຕະລາງ 12.8: ລາຍລະອຽດຂອງລາຍຈ່າຍ

	ລາຍງານດ້ານການເງິນຂອງບໍລິສັດ ປີ 2014 (ລ້ານກີບ)	ລາຍງານດ້ານການເງິນຂອງບໍລິສັດ ປີ 2013 (ລ້ານກີບ)
ຕົ້ນທຶນ		
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	21.623	21.873
ຄ່າຫຼ້ຍຫ້ຽນຊັບສິນພາຍໃຕ້ສັນຍາສຳປະທານ	181.555	167.060
ລາຍຈ່າຍອື່ນໆ	12.435	15.002
ຕົ້ນທຶນຂອງການຂາຍທັງໝົດ	**215.613**	**203.935**
ລາຍຈ່າຍໃນການຂາຍ ແລະ ການບໍລິຫານ		
ຄ່າໃຊ້ຈ່າຍໃຫ້ພະນັກງານ	40.112	42.173
ການບໍລິຫານຈັດການທົ່ວໄປ	83.415	71.316
ອື່ນໆ (ການຫຼຸບທຶນໃນອັດຕາການແລກປ່ຽນເງິນຕາ)	18.098	(24.463)
ລາຍຈ່າຍໃນການຂາຍແລະການບໍລິຫານທັງໝົດ	**141.626**	**89.026**

ແຫຼ່ງຂໍ້ມູນ: ຜ-ຟຟລ

12.4.5 ລາຍຈ່າຍ

ສຳລັບຜົນການດຳເນີນງານຂອງປີ 2014, ມູນຄ່າແລະລາຍຈ່າຍມີຈຳນວນ 357.239 ລ້ານກີບ ເຊິ່ງເທົ່າກັບ 42,28 ສ່ວນຮ້ອຍຂອງລາຍຮັບທັງໝົດ. ຕົ້ນທຶນຂອງການຂາຍ, ລາຍຈ່າຍໃນການຂາຍ ແລະ ການບໍລິຫານມີຈຳນວນ 215.613 ລ້ານກີບ ແລະ 141.626 ລ້ານກີບຕາມລຳດັບ, ຕາມລາຍລະອຽດລຸ່ມນີ້:

(1) ຕົ້ນທຶນການຂາຍ 215.613 ລ້ານກີບ ຫຼື 25,52 ສ່ວນຮ້ອຍຂອງລາຍຮັບທັງໝົດ.ໃນນັ້ນປະກອບດ້ວຍຄ່າຫຼ້ຍຫ້ຽນ ແລະ ການຫັກລົບຫນີ້ເປັນຫຼັກ ໂດຍອີງຕາມໄລຍະສຳປະທານພາຍໃຕ້ CA ໃນໄລຍະເວລາ 30 ປີ ເທົ່າກັບ 181,555 ລ້ານກີບ ຫຼື ເທົ່າກັບ 84,20 ສ່ວນຮ້ອຍຂອງລວມຍອດຂາຍທັງໝົດ ແລະ ຄ່າບຳລຸງຮັກສາເທົ່າກັບ 21.623 ລ້ານກີບ ຫຼື ເທົ່າກັບ 10.03 ສ່ວນຮ້ອຍຂອງ ຕົ້ນທຶນການຂາຍທັງໝົດ. ຍິ່ງໄປກວ່ານັ້ນ, ພວກເຮົາຍັງໄດ້ຈ່າຍຄ່າພາກຫລວງໃນອັດຕາຫນຶ່ງສ່ວນຮ້ອຍຂອງການຂາຍກະແສໄຟຟ້າໄດ້ທັງໝົດ ແລະ ມີຄ່າໃຊ້ຈ່າຍອື່ນໆ ອີກ.

(2) ຄ່າໃຊ້ຈ່າຍໃນການຂາຍ ແລະ ບໍລິຫານ ແມ່ນ 141.626 ລ້ານກີບ ຫຼື 16,76 ສ່ວນຮ້ອຍຂອງລາຍຮັບທັງໝດ; ໃນນີ້, ມີລາຍຈ່າຍ ເງິນເດືອນ ແລະ ສະຫວັດດີການ ເທົ່າກັບ 40.112 ລ້ານກີບ ຫຼື 28,32 ສ່ວນຮ້ອຍຂອງຄ່າໃຊ້ຈ່າຍໃນການຂາຍ ແລະ ບໍລິຫານທັງໝົດ ຫຼື ເທົ່າກັບ 4,7 ສ່ວນຮ້ອຍຂອງລາຍຮັບທັງໝົດ.

12.4.6 ກຳໄລກ່ອນຫັກຕົ້ນທຶນທາງການເງິນ ແລະ ອາກອນຈາກການດຳເນີນທຸລະກິດ

ຜົນຈາກການດຳເນີນງານ ໃນປີ 2014 ແລະ 2013, ກຳໄລຈາກການດຳເນີນງານຂອງບໍລິສັດກ່ອນຫັກຕົ້ນທຶນທາງການເງິນ ແລະ ອາກອນຈາກການດຳເນີນທຸລະກິດແມ່ນ 487.634 ລ້ານກີບ ແລະ 576.168 ລ້ານກີບ ຫຼື 57,71 ສ່ວນຮ້ອຍ ແລະ 66,29 ສ່ວນຮ້ອຍ ຂອງຈຳນວນລາຍຮັບທັງໝົດ ຕາມລຳດັບ.

ຕາຕະລາງ 12.9: ຜົນການດຳເນີນການ

	ລາຍງານດ້ານການເງິນຂອງບໍລິສັດ ປີ 2014 (ລ້ານກີບ)	ລາຍງານດ້ານການເງິນຂອງບໍລິສັດ ປີ 2013 (ລ້ານກີບ)
ກຳໄລສຸດທິຈາກການດຳເນີນກິດຈະການກ່ອນຫັກຕົ້ນທຶນທາງການເງິນ ແລະ ອາກອນ	487.634	576.168
ຕົ້ນທຶນທາງການເງິນ	31.722	30.845
ອາກອນ	22.695	27.327
ກຳໄລສຸດທິກ່ອນການແບ່ງຜົນກຳໄລຈາກການຮ່ວມລົງທຶນ ແລະ ຮຸ້ນສ່ວນ	433.217	517.996
ການແບ່ງຜົນກຳໄລຈາກການຮ່ວມລົງທຶນ ແລະ ຮຸ້ນສ່ວນ	474.467	453.746
ກຳໄລສຸດທິ	**907.684**	**971.742**

ແຫຼ່ງຂໍ້ມູນ: ຜ-ຟຟລ

ກຳໄລສຸດທິຂອງບໍລິສັດກ່ອນການແບ່ງຜົນກຳໄລຈາກການຮ່ວມລົງທຶນ ແລະ ການຮຸ້ນສ່ວນ ໃນ ປີ 2014 ແລະ 2013 ມີ 433.217 ລ້ານກີບ ແລະ 517.996 ລ້ານກີບ ຫຼື ເທົ່າກັບ 51,28 ສ່ວນຮ້ອຍ ແລະ 59,60 ຈາກລາຍຮັບທັງໝົດ ຕາມລຳດັບ.

12.4.7 ຕົ້ນທຶນທາງການເງິນ

ປີ 2014, ຕົ້ນທຶນທາງການເງິນຂອງບໍລິສັດ ແມ່ນ 31.722 ລ້ານກີບ ຫຼື 3,75 ສ່ວນຮ້ອຍ ຂອງຈຳນວນລາຍຮັບທັງໝົດ ເຊິ່ງສ່ວນໃຫຍ່ແລ້ວແມ່ນມາຈາກການຊຳລະດອກເບ້ຍຂອງການກູ້ຢືມໄລຍະຍາວ ໂດຍທີ່ການເກັບດອກເບ້ຍດັ່ງກ່າວຢູ່ໃນລະຫວ່າງ 2,00 ສ່ວນຮ້ອຍ ເຖິງ 6,51 ສ່ວນຮ້ອຍ ຕໍ່ປີ.

ປີ 2014, ອາກອນລາຍໄດ້ຈາກການດຳເນີນທຸລະກິດແມ່ນ 22.695 ລ້ານກີບ ຫຼື 5 ສ່ວນຮ້ອຍ ຂອງອາກອນກຳໄລ. ເມື່ອຮຸ້ນຂອງບໍລິສັດໄດ້ຈົດທະບຽນທີ່ ຕລຊລ, ບໍລິສັດຈະໄດ້ຮັບບຸລິມະສິດຂອງອາກອນລາຍໄດ້ຈາກການດຳເນີນທຸລະກິດໃນອັດຕາສ່ວນຫຼຸດ 5 ສ່ວນຮ້ອຍ ເປັນໄລຍະ 4 ປີ ນັບຈາກ ປີ 2011 ເຖິງ ປີ 2014 ພາຍໃຕ້ກຳນົດເວລາຂອງ CA ຈາກອັດຕາປົກກະຕິ 10 ສ່ວນຮ້ອຍ. ຢ່າງໃດກໍ່ຕາມ, ຖ້າຫາກບໍລິສັດແຈ້ງວ່າບໍ່ມີກຳໄລ ຫຼື ມີກຳໄລຕ່ຳກວ່າລະດັບ, ບໍລິສັດຕ້ອງໄດ້ຈ່າຍໃນອັດຕາອາກອນຕ່ຳສຸດ 0.25 ສ່ວນຮ້ອຍ ຂອງຈຳນວນລາຍຮັບທັງໝົດ.

12.4.8 ກຳໄລສຸດທິ

ກຳໄລສຸດທິກ່ອນການຈັດສັນຜົນກຳໄລຈາກການຮ່ວມທຶນແລະຮຸ້ນສ່ວນໃນປີ 2014 ເທົ່າກັບ

433.217 ລ້ານກີບ ຫຼື 51,27 ສ່ວນຮ້ອຍຂອງລາຍຮັບທັງໝົດ, ມີການຫຼຸດລົງ 84.779 ລ້ານກີບ ຈາກປີຜ່ານມາ ຫຼື 16,40 ສ່ວນຮ້ອຍ. ຄວາມສາມາດຂອງການຜະລິດໄຟຟ້າຫຼຸດລົງ ເກີດຈາກສາຍເຫດທີ່ລະດັບນ້ຳຫຼຸດລົງ, ຈຶ່ງສົ່ງຜົນສະທ້ອນເຖິງການປະຕິບັດງານຫຼຸດລົງ. ຍິ່ງໄປກວ່ານັ້ນ, ໃນປີ 2013 ບໍລິສັດມີລາຍຮັບຈາກອັດຕາແລກປ່ຽນ 24.463 ລ້ານກີບ, ເຊິ່ງສົ່ງຜົນໃຫ້ລາຍຈ່າຍທັງໝົດຫຼຸດລົງ. ແຕ່ເຖິງຢ່າງໃດກໍ່ຕາມ, ພວກເຮົາພົບວ່າບໍລິສັດຍັງມີກຳໄລສຸດທິໃນອັດຕາທີ່ສູງ ຖ້າທຽບໃສ່ທຸລະກິດອື່ນຍ້ອນວ່າມູນຄ່າຂອງການຜະລິດກະແສໄຟຟ້າທັງໝົດໃນທຸລະກິດເຂື່ອນແມ່ນມີການບຳລຸງຮັກສາ ແລະ ການຫັກຄ່າເສື່ອມເຊິ່ງເປັນລາຍຈ່າຍທາງບັນຊີ, ບໍ່ແມ່ນລາຍຈ່າຍຈາກເງິນສົດ, ບໍ່ພຽງແຕ່ເທົ່ານັ້ນ, ມູນຄ່າຫນີ້ດ້ານການເງິນຂອງພວກເຮົາແມ່ນຢູ່ໃນລະດັບຕ່ຳ ແລະ ຫລຸດລົງຢ່າງຕໍ່ເນື່ອງ ເຊິ່ງເຮັດໃຫ້ບໍລິສັດຂອງພວກເຮົາມີໂອກາດທີ່ຈະໄດ້ຮັບຜົນກຳໄລສູງ.

12.5 ບົດລາຍງານ ແລະ ການວິເຄາະຖານະການເງິນ

12.5.1 ການວິເຄາະຊັບສິນ

ປີ 2014 ຊັບສິນຂອງບໍລິສັດທັງໝົດແມ່ນ 8.821.261 ລ້ານກີບ ເພີ່ມຂຶ້ນ 1.754.090 ລ້ານກີບ ຫຼື 24,8 ສ່ວນຮ້ອຍ ທຽບກັບປີ 2013. ສາຍເຫດຕົ້ນຕໍເນື່ອງມາຈາກການເພີ່ມຂຶ້ນຂອງເງິນສົດ ແລະ ທຽບເທົ່າເງິນສົດ ລາຍລະອຽດມີດັ່ງລຸ່ມນີ້:

(1) ຈຳນວນເງິນສົດ ແລະ ລາຍການທຽບເທົ່າເງິນສົດມີຈຳນວນເຖິງ 1.251.534 ລ້ານກີບ ຫຼື 14,19 ສ່ວນຮ້ອຍຂອງຈຳນວນຊັບສິນທັງໝົດ ໂດຍເພີ່ມຂຶ້ນ 1.091.620 ລ້ານກີບ ຈາກປີທີ່ຜ່ານມາ. ໃນຊ່ວງ ປີ 2014, ບໍລິສັດໄດ້ລະດົມທຶນຂອງຕົນໂດຍການອອກຮຸ້ນກູ້ ຈຳນວນ 6.500 ລ້ານບາດ ເປັນສາຍເຫດເຮັດໃຫ້ຊັບສິນເພີ່ມຂຶ້ນ.

(2) ລາຍຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ຈຳນວນ 502.382 ລ້ານກີບ ຫຼື 5,70 ສ່ວນຮ້ອຍ ຂອງຈຳນວນຊັບສິນທັງໝົດ ເຊິ່ງເພີ່ມຂຶ້ນເລັກນ້ອຍ 16,973 ລ້ານກີບ ຈາກປີທີ່ຜ່ານມາ. ກຳນົດເວລາດ້ານບັນຊີແມ່ນອີງຕາມຮອບວຽນ 45 ວັນ. ຢ່າງໃດກໍ່ຕາມວັນໃນຮອບວຽນບັນຊີຂອງປີ 2014 ແລະ 2013 ແມ່ນມີ 216 ວັນ, ເຮັດໃຫ້ອັດຕາການໝຸນວຽນຂອງລູກໜີ້ເປັນ 1,7 ຮອບ ເຊິ່ງອາດສົ່ງຜົນກະທົບຕໍ່ຮອບວຽນເງິນສົດ ແລະ ໂອກາດທີ່ຈະສູນເສຍດອກເບ້ຍ.

(3) ການລົງທຶນໄລຍະສັ້ນມີຈຳນວນເຖິງ 20.000 ລ້ານກີບ ທີ່ໄດ້ຝາກໄວ້ກັບສະຖາບັນການເງິນພາຍໃນ, ເລີ່ມຈາກ ວັນທີ 18 ພະຈິກ 2014 ເຖິງ 2015 ໂດຍມີອັດຕາດອກເບ້ຍ 10 ສ່ວນຮ້ອຍຕໍ່ປີ.

(4) ຊັບສິນທັງໝົດພາຍໃຕ້ CA ມີຈຳນວນເຖິງ 4.145.851 ລ້ານກີບ ຫຼື 46,99 ສ່ວນຮ້ອຍຂອງຈຳນວນຊັບສິນທັງໝົດ. ຊັບສິນດັ່ງກ່າວນັ້ນສ່ວນໃຫຍ່ແມ່ນເຂື່ອນໄຟຟ້າ ພາຍໃຕ້ CA ທີ່ມີກຳນົດເວລາ 30 ປີ ໂດຍອີງຕາມການກໍ່ສ້າງ ແລະ ການຕິດຕັ້ງເຂື່ອນໄຟຟ້າ.

(5) ຜົນຕອບແທນຂອງບໍລິສັດໃນຊັບສິນ ແລະ ຊັບສິນຄົງທີ່ ໃນປີ 2014 ມີ 10 ສ່ວນຮ້ອຍ ແລະ 15 ສ່ວນຮ້ອຍ ຕາມລຳດັບ ເຊິ່ງສະແດງໃຫ້ເຫັນເຖິງກຳໄລທີ່ໄດ້ຈາກການລົງທຶນເຂົ້າໃສ່ໃນຊັບສິນ

12.5.2 ການວິເຄາະໜີ້ສິນ

ວັນທີ 31 ທັນວາ 2014 ໜີ້ສິນທັງໝົດຂອງບໍລິສັດມີ 2.499.620 ລ້ານກີບ ທຽບໃສ່ປີ 2013 ເພີ່ມຂຶ້ນ 1.437.336 ລ້ານກີບ. ສາຍເຫດຂອງການເພີ່ມຂຶ້ນແມ່ນມາຈາກການອອກຮຸ້ນກູ້ດ້ວຍມູນຄ່າ 1.575.862 ລ້ານກີບ. ຈຸດປະສົງໃນການລະດົມທຶນດັ່ງກ່າວນີ້ແມ່ນເພື່ອລົງທຶນຊື້ເຂື່ອນໄຟຟ້າ ແລະ ລົງທຶນສ້າງເຂື່ອນເອງ. ການເພີ່ມຂຶ້ນຂອງໜີ້ທີ່ມີພາລະດອກເບ້ຍຈະເຮັດໃຫ້ໜີ້ນັ້ນສູງຂຶ້ນເຖິງ 4 ເທົ່າເມື່ອທຽບກັບທຶນ, ແມ້ນວ່າໃນສິ້ນປີ 2014 ໜີ້ດັ່ງກ່າວໄດ້ຫຼຸດລົງມາແລ້ວ.

ໜີ້ສິນຂອງບໍລິສັດທັງໝົດເປັນໜີ້ສິນໄລຍະຍາວມີຈຳນວນ 2.185.749 ລ້ານກີບ ຫຼື 87,44 ສ່ວນຮ້ອຍຂອງໜີ້ສິນທັງໝົດ, ການຊຳລະໜີ້ສິນຈາກການກູ້ຢືມພາຍໃນ 1 ປີ ມີ 99.519 ລ້ານກີບ ຫຼື 3,98 ສ່ວນຮ້ອຍ ແລະ ການຊຳລະໜີ້ສິນໄລຍະຍາວກວ່າ 1 ປີ ແມ່ນ 499.263 ລ້ານກີບ ຫຼື 19,97 ສ່ວນຮ້ອຍ ແລະ ມີໜີ້ສິນຈາກການອອກຮຸ້ນກູ້ອາຍຸ 10 ປີ ມູນຄ່າ 1.575.862 ລ້ານກີບ ຫຼື 63,04 ສ່ວນຮ້ອຍຂອງໜີ້ສິນທັງໝົດ.

12.5.3 ການຊຳລະໜີ້ຈາກລາຍຮັບ

ໃນປີ 2013 ແລະ 2014, ບໍລິສັດມີສັດສ່ວນທຶນໝຸນວຽນເຖິງ 5,7 ເທົ່າ ເຊິ່ງສະແດງໃຫ້ເຫັນເຖິງການບໍລິຫານຈັດການທຶນໝຸນວຽນທີ່ດີ. ນອກຈາກນີ້ແລ້ວ, ສັດສ່ວນໜີ້ຕໍ່ຊັບສິນຍັງຄົງຕ່ຳ ໂດຍຢູ່ທີ່ 0,2 ແລະ 0,4 ເທົ່າ ໃນປີ 2013 ແລະ 2014 ຕາມລຳດັບ. ໃນທາງດຽວກັນ, ດອກເບ້ຍທີ່ມີຕໍ່ສັດສ່ວນໜີ້ຕໍ່ຊັບສິນ ຢູ່ທີ່ 0,2 ແລະ 0,3 ເທົ່າ ໂດຍຖືເປັນອັດຕາທີ່ຂ້ອນຂ້າງຕ່ຳ.

ຢ່າງໃດກໍ່ຕາມ, ຄວນເອົາໃຈໃສ່ການປະກັນດອກເບ້ຍ ແລະ ການຊຳລະໜີ້ຈາກລາຍຮັບດ້ວຍ. ໃນປີ 2013 ແລະ 2014, ການປະກັນດອກເບ້ຍ ຢູ່ທີ່ 38,8 ແລະ 36,1 ເທົ່າ ຕາມລຳດັບ. ເຊິ່ງສະແດງໃຫ້ເຫັນວ່າຄວາມສາມາດໃນການຈ່າຍດອກເບ້ຍທີ່ມາຈາກຈຳນວນໜີ້ທີ່ເພີ່ມຂຶ້ນນັ້ນຫຼຸດລົງເລັກໜ້ອຍ. ຢ່າງໃດກໍ່ຕາມ, ພວກເຮົາພົບວ່າບໍລິສັດຍັງຄົງມີຄວາມສາມາດໃນການຊຳລະໜີ້ສິນ. ສັດສ່ວນໃນການປະກັນດອກເບ້ຍ ໃນປີ 2013 ແລະ 2014 ຢູ່ທີ່ 5,8 ແລະ 3,1 ຕາມລຳດັບ.

12.5.4 ການວິເຄາະຊັບສິນຂອງຜູ້ຖືຮຸ້ນ

ໃນວັນທີ 31 ທັນວາ 2014, ການສະໜຸບຊັບສິນຂອງບັນດາຜູ້ຖືຮຸ້ນມີເຖິງ 6.321.641 ລ້ານກີບ ຫຼື 71,66 ສ່ວນຮ້ອຍຂອງຈຳນວນຊັບສິນທັງໝົດ. ຊັບສິນຂອງບັນດາຜູ້ຖືຮຸ້ນປະກອບດ້ວຍທຶນທີ່ໄດ້ຊຳລະແລ້ວທີ່ມີຈຳນວນ ເຖິງ 4.904.867 ລ້ານກີບ ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ (ແບ່ງເປັນຮຸ້ນສາມັນທັງໝົດ 1.226.216.765 ຮຸ້ນ). ສ່ວນເກີນມູນຄ່າຮຸ້ນ ແມ່ນ 142.229 ລ້ານກີບ. ປະຈຸບັນຍັງມີເງິນໃນຄັງສຳຮອງຕາມກົດໝາຍແມ່ນ 295.734 ລ້ານກີບ ເພີ່ມຂຶ້ນເປັນຈຳນວນ 82.291 ລ້ານກີບ ໃນປີ 2013. ກຳໄລສະສົມມີຈຳນວນເຖິງ 978.811 ລ້ານກີບ ເພີ່ມຂຶ້ນເປັນ 234.463 ລ້ານກີບ ຈາກປີທີ່ຜ່ານມາ. ໃນປີ 2014 ການຫຼຸດລົງເລັກໜ້ອຍຂອງກຳໄລສຸດທິເຮັດໃຫ້ຜົນຕອບແທນຈາກທຶນຫຼຸດລົງ 14 ສ່ວນຮ້ອຍ.

12.6 ຄ່າຕອບແທນໃຫ້ກັບຜູ້ກວດສອບພາຍນອກຂອງບໍລິສັດ

ຄ່າຕອບແທນໃຫ້ກັບຜູ້ກວດສອບພາຍນອກຂອງບໍລິສັດສຳລັບປີ 2014 ແມ່ນ 94.500 ໂດລາສະຫະລັດ.

13. ຂໍ້ມູນອື່ນທີ່ກ່ຽວຂ້ອງ

ລາຍຊື່ຂອງທີ່ປຶກສາທາງການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍ, ຜູ້ຈັດສັນຮຸ້ນ, ທີ່ປຶກສາດ້ານກົດໝາຍ ແລະ ຜູ້ກວດສອບພາຍນອກ.

ຜູ້ອອກຮຸ້ນ :
ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ
ຊັ້ນ 7, ອາຄານສຳນັກງານໃຫຍ່,
ຖະໜົນ ມິດຕະພາບ ລາວ-ໄທ, ຕູ້ ປ.ນ 2392, ບ້ານ ທົ່ງກາງ,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທລະສັບ: (+856-21) 316-142 ເບີໂທລະສານ: (+856-21) 316-141
ເວັບໄຊ: www.edlgen.com.la

ທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ :
ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ
ຊັ້ນ 5, ຕຶກ ຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ,
ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ເບີໂທລະສັບ (+85621) 265-461-4, ເບີໂທລະສານ: (+85621) 265-465-6, ເວັບໄຊ: www.lxs.com.la

ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ :
ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ
ຊັ້ນ 16, ຕຶກລີເບີຕີ້ສະແຄວ 287, ຖະໜົນ ສີລົມ, ເຂດບາງຣັກ, ກຸງເທບ, ປະເທດໄທ.
ເບີໂທລະສັບ (+66) 695 2103, ເບີໂທລະສານ: (+66) 631 2242
ເວັບໄຊ: www.ktzmico.com

ບໍລິສັດທີ່ປຶກສາດ້ານກົດໝາຍ :
ບໍລິສັດ ລາວພຣີເມຍ ອິນເຕີເນຊັນແນລ ລໍອອຟຟິດ ຈຳກັດ
ຊັ້ນ 7, ຕຶກ ຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ,
ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ເບີໂທລະສັບ (+85621) 265-471, ເບີໂທລະສານ: (+85621) 265-474
ເວັບໄຊ: www.laopremier.com

ຜູ້ກວດສອບພາຍນອກ :
ບໍລິສັດ ພຣາຍສວໍເຕີເຮົ້າສກຸປເປີ ລາວ ຈຳກັດ
ໜ່ວຍ 1, ຊັ້ນ 4, ອາຄານວຽງຈັນພານິດ 33, ຖະໜົນລ້ານຊ້າງ,
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທລະສັບ : (+856-21) 222-718, ເບີໂທລະສານ: (+856-21) 222-723
ເວັບໄຊ: www.pwc.com.la

ພາກ 2
ຂໍ້ມູນທີ່ກ່ຽວຂ້ອງກັບການສະເໜີຂາຍຈຳໜ່າຍຮຸ້ນ

1. ລາຍລະອຽດຂອງການເພີ່ມທຶນ

ການເພີ່ມທຶນແມ່ນຈະໄດ້ຈັດສັນ ແລະ ສະເໜີຂາຍໃຫ້ກັບມວນຊົນທົ່ວໄປໃນ ສປປ ລາວ ໂດຍບໍລິສັດຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ, ເຊິ່ງການເພີ່ມທຶນດັ່ງກ່າວແມ່ນຈະບໍ່ໄດ້ມີການລົງທະບຽນພາຍໃຕ້ກົດໝາຍຫຼັກຊັບຂອງປະເທດອື່ນນອກຈາກກົດໝາຍຫຼັກຊັບຂອງ ສປປ ລາວ.

ລາຍລະອຽດການສະເໜີຂາຍຮຸ້ນດັ່ງລຸ່ມນີ້:

ຮຸ້ນສາມັນຈຳນວນ [x] ຮຸ້ນ ມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ ເຊິ່ງແບ່ງອອກເປັນ:

ພາກ 1: ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ກັບຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ 3 ຮຸ້ນເດີມ ຕໍ່ 1 ຮຸ້ນໃໝ່.

ສະເໜີຂາຍຮຸ້ນສາມັນເພີ່ມທຶນຈຳນວນ [x] ຮຸ້ນ ໃຫ້ກັບຜູ້ຖືຮຸ້ນເດີມ ດ້ວຍລາຄາທີ່ສະເໜີຂາຍ [x] ກີບຕໍ່ຮຸ້ນ.

ຈຳນວນຮຸ້ນສາມັນທີ່ຍັງເຫຼືອຈາກການບໍ່ໃຊ້ສິດໃນການຈອງຊື້ຮຸ້ນຂອງຜູ້ຖືຮຸ້ນເດີມ ຈະຕ້ອງຈັດສັນໃຫ້ກັບຜູ້ຖືຮຸ້ນເດີມລາຍອື່ນທີ່ສະເໜີຈອງຊື້ຮຸ້ນຫຼາຍກວ່າສັດສ່ວນທີ່ຕົນຈະໄດ້ຮັບການຈັດສັນ ຈົນກວ່າຈະບໍ່ມີຮຸ້ນເຫຼືອໃຫ້ຈັດສັນຕາມທີ່ບໍລິສັດເຫັນວ່າເໝາະສົມ.

ໝາຍເຫດ: ການສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບຜູ້ຖືຮຸ້ນເດີມ ທີ່ໄດ້ຮັບສິດໃນການຈອງຊື້ຮຸ້ນທີ່ເພີ່ມຂຶ້ນນີ້ໄດ້ໂດຍກົງຈາກບໍລິສັດ ຕາມສັດສ່ວນທີ່ຕົນຖືຄອງພາຍໃນໄລຍະເວລາທີ່ກຳນົດ. ມື້ບັນທຶກບັນຊີລາຍຊື່ຜູ້ຖືຄອງຮຸ້ນ/ມື້ປິດການບັນທຶກບັນຊີລາຍຊື່ຜູ້ຖືຄອງຮຸ້ນ ເຊິ່ງຈະເປັນສິ່ງທີ່ໃຊ້ໃນການໃຫ້ສິດແກ່ຜູ້ຖືຮຸ້ນທີ່ຈະໄດ້ຮັບການຈັດສັນຮຸ້ນສາມັນທີ່ອອກໃໝ່ຜ່ານການໃຊ້ສິດການສະເໜີຂາຍຮຸ້ນ ຈະປິດລົງໃນວັນທີ [x].

ພາກ 2: ການສະເໜີຂາຍຮຸ້ນໃໝ່ໃຫ້ກັບມວນຊົນທົ່ວໄປ (PO)

ສະເໜີຂາຍຮຸ້ນສາມັນເພີ່ມທຶນ [x] ຮຸ້ນ ໃຫ້ກັບມວນຊົນທົ່ວໄປ ຕາມລາຄາທີ່ສະເໜີຂາຍ [x] ກີບຕໍ່ຮຸ້ນ.

ໝາຍເຫດ: ການສະເໜີຂາຍຮຸ້ນໃຫ້ກັບມວນຊົນ ແມ່ນ ການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບມວນຊົນທົ່ວໄປ.

ຮຸ້ນສາມັນເພີ່ມທຶນນີ້ ຈະໄດ້ຮັບການຈົດທະບຽນໃນ ຕລຊລ. ຕລຊລ ແມ່ນ ຕະຫຼາດຊັ້ນສອງທີ່ຖືກສ້າງຕັ້ງຂຶ້ນຢູ່ ສປປ ລາວ ໃນເດືອນ ຕຸລາ 2010.

2. ຂໍ້ຈຳກັດໃນການໂອນຮຸ້ນ ແລະ ຂໍ້ຈຳກັດໃນການຖືຮຸ້ນໂດຍຄົນຕ່າງປະເທດ

ອີງຕາມກົດລະບຽບຂອງບໍລິສັດ, ຮຸ້ນຂອງບໍລິສັດສາມາດໂອນໄດ້ຢ່າງເສລີ ເວັ້ນເສຍແຕ່ການໂອນຮຸ້ນໃຫ້ບຸກຄົນ

ຕ່າງປະເທດ ຫຼື ນິຕິບຸກຄົນຕ່າງປະເທດທີ່ຖືຮຸ້ນໃນບໍລິສັດເກີນກວ່າຈຳນວນທີ່ໄດ້ລະບຸໄວ້ໃນລະບຽບຂອງ ສຄຄຊ ແລະ/ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງໃດໜຶ່ງ.

ໃນປະຈຸບັນ, ໄດ້ອີງໃສ່ຂໍ້ຕົກລົງຂອງ ຄລຕ ເລກທີ 021/ຄລຕ ວ່າດ້ວຍການເພີ່ມສັດສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ໃນບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ,, ອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດເປັນເຈົ້າຂອງຮຸ້ນໃນບໍລິສັດບໍ່ເກີນ 20 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ ເຊິ່ງບຸກຄົນຕ່າງປະເທດໜຶ່ງຄົນ ສາມາດຖືໄດ້ບໍ່ເກີນ 1 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດໃນບໍລິສັດ ແລະ ຜູ້ລົງທຶນທີ່ເປັນສະຖາບັນ ຫຼື ນິຕິບຸກຄົນສາມາດຖືໄດ້ບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດໃນບໍລິສັດ.

3. ການກຳນົດລາຄາສະເໜີຂາຍ

ການກຳນົດລາຄາສະເໜີຂາຍນັ້ນ ຈະຖືກກຳນົດດ້ວຍລາຄາຄົງທີ່ອ້າງອີງຈາກລາຄາໃນທ້ອງຕະຫຼາດຕາມທີ່ໄດ້ປຶກສາຫາລືຈາກຜູ້ທີ່ກ່ຽວຂ້ອງກັບການອອກຮຸ້ນໃນຄັ້ງນີ້ຕາມມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີ 2014 ເຊິ່ງເປັນໄປຕາມລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນຂອງ ສຄຄຊ ເລກທີ 017/ຄຄຊ ລົງວັນທີ 22 ຕຸລາ 2014.

4. ລາຍລະອຽດຂອງ ທີ່ປຶກສາທາງການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ

(i) ທີ່ປຶກສາທາງການເງິນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ

ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ, ຊັ້ນ 5, ຕຶກ ຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ເບີໂທລະສັບ (+85621) 265 461-4, ເບີໂທລະສານ: (+85621) 265 465-6, ເວັບໄຊ: www.lxs.com.la

(ii) ຕົວແທນຈຳໜ່າຍຮຸ້ນ ແລະ ຜູ້ຈັດສັນຮຸ້ນ

ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ, ຊັ້ນ 8, 15 - 17, 19, 21, ຕຶກລີເບີຕີ້ສະແຄວ 287, ຖະໜົນ ສີລົມ, ເຂດບາງຣັກ, ກຸງເທບ, ປະເທດໄທ. ເບີໂທລະສັບ (+66) 695 2103, ເບີໂທລະສານ: (+66) 631 2242, ເວັບໄຊ: www.ktzmico.com

5. ເງື່ອນໄຂຂອງການຄ້ຳປະກັນ

ບໍລິສັດໄດ້ແຕ່ງຕັ້ງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເພື່ອດຳເນີນການຈອງ ແລະ ການຊຳລະຄ່າຈອງຮຸ້ນ ຈຳນວນ [x] ຮຸ້ນ (ລວມທັງຈຳນວນຮຸ້ນທີ່ສະເໜີຂາຍບົນພື້ນຖານການໃຊ້ສິດຂອງຜູ້ຖືຮຸ້ນເດີມ), ດ້ວຍມູນຄ່າກຳນົດ 4.000 ກີບຕໍ່ຮຸ້ນ, ຕາມການຄ້ຳປະກັນ ແບບ Firm Commitment (ຖ້າຂາຍບໍ່ໝົດ ຜູ້ຄ້ຳປະກັນເປັນຜູ້ຮັບຜິດຊອບ) ໂດຍອີງຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາວ່າດ້ວຍການຄ້ຳປະກັນການຂາຍຮຸ້ນ.

6. ຄາດຄະເນລາຍຈ່າຍໃນການສະເໜີຂາຍຮຸ້ນ

ລາຍຈ່າຍທີ່ໃຊ້ໃນການສະເໜີຂາຍຮຸ້ນຈຳນວນ 580.000 ໂດລາສະຫະລັດ ບໍ່ລວມເອົາຄ່າທຳນຽມທີ່ຕ້ອງຈ່າຍໃຫ້ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ.

7. ຂັ້ນຕອນການຂໍຮັບເອົາໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນ

ໄລຍະການສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ: ເວລາ 8:30 ເຖິງ 16:30, ລະຫວ່າງວັນທີ [x]-[x] 2015. (ໃນວັນທີ [x] 2015, ໄລຍະການສະເໜີຂາຍຮຸ້ນຈະປິດ ໃນເວລາ 12:00 ທ່ຽງ)

ໄລຍະການສະເໜີຂາຍຮຸ້ນໃຫ້ກັບມວນຊົນທົ່ວໄປ: ເວລາ 8:30 ເຖິງ 16:30 ລະຫວ່າງວັນທີ [x]-[x] 2015. (ໃນວັນທີ [x] 2015, ໄລຍະການສະເໜີຂາຍຮຸ້ນຈະປິດ ໃນເວລາ 12:00 ທ່ຽງ)

ໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນນັ້ນ ຜູ້ລົງທຶນແມ່ນສາມາດພົວພັນເອົາໄດ້ຕາມທີ່ຢູ່ຂອງ (i) ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, (ii) ຕົວແທນຈຳໜ່າຍຮຸ້ນ ຫຼື ຜູ້ຈັດສັນຮຸ້ນ, (iii) ສາຂາແຕ່ລະແຫ່ງຂອງທະນາຄານພັດທະນາລາວ ໃນຖານະຜູ້ຕາງໜ້າຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ລາຍລະອຽດຕາມທີ່ລະບຸໄວ້ ດັ່ງນີ້:

ປະເທດ	ແຂວງ	ລ/ດ	ທີ່ຢູ່
ສປປ ລາວ, ນະຄອນຫຼວງວຽງຈັນ			
ສປປ ລາວ	ນະຄອນຫຼວງວຽງຈັນ	1.	ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 5 ຖະໜົນ: ກຳແພງເມືອງ, ບ້ານ: ໂພນທັນ ເມືອງ: ໄຊເຊດຖາ, ນະຄອນຫຼວງວຽງຈັນ ໂທ: (+856-21) 265 461-4 ແຟັກ: (+856-21)265 465-6
ສປປ ລາວ	ນະຄອນຫຼວງວຽງຈັນ	2.	ທະນາຄານ ພັດທະນາລາວ ສຳນັກງານໃຫຍ່ ບ້ານ ສີຫອມ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ. ເບີໂທລະສັບ : (+856-21) 213300 ເບີໂທລະສານ : (+856-21) 241275
ສປປ ລາວ	ນະຄອນຫຼວງວຽງຈັນ	3.	ທະນາຄານ ພັດທະນາລາວ ສາຂາ ນະຄອນຫຼວງວຽງຈັນ ບ້ານ ມີໄຊ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ. ເບີໂທລະສັບ : (+856-21) 213400 ເບີໂທລະສານ : (+856-21) 213404
ນອກເຂດນະຄອນຫຼວງວຽງຈັນ			
ສປປ ລາວ	ວຽງຈັນ	4.	ທະນາຄານ ພັດທະນາລາວ ສາຂາ ໂພນໂຮງ ບ້ານ ໂພນສີ, ເມືອງ ໂພນໂຮງ, ແຂວງ ວຽງຈັນ ເບີໂທລະສັບ : (+856-23) 211018 ເບີໂທລະສານ : (+856-23) 212070
ສປປ ລາວ	ຫຼວງພະບາງ	5.	ທະນາຄານ ພັດທະນາລາວ ສາຂາ ຫຼວງພະບາງ ບ້ານ ວິຊຸນ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ເບີໂທລະສັບ : (+856-71) 212411

ປະເທດ	ແຂວງ	ລ/ດ	ທີ່ຢູ່
			ເບີໂທລະສານ : (+856-71) 212185
ສປປ ລາວ	ໄຊຍະບູລີ	6.	ທະນາຄານ ພັດທະນາລາວ ສາຂາ ໄຊຍະບູລີ ບ້ານ ສີເມືອງ, ແຂວງ ໄຊຍະບູລີ ເບີໂທລະສັບ : (+856-74) 211153 ເບີໂທລະສານ : (+856-74) 211365
ສປປ ລາວ	ອຸດົມໄຊ	7.	ທະນາຄານ ພັດທະນາລາວ ສາຂາ ອຸດົມໄຊ ບ້ານ ພູຂຽວ, ເມືອງ ໄຊ, ແຂວງ ອຸດົມໄຊ ເບີໂທລະສັບ : (+856-81) 312059 ເບີໂທລະສານ : (+856-81) 312222
ສປປ ລາວ	ຫຼວງນ້ຳທາ	8.	ທະນາຄານ ພັດທະນາລາວ ສາຂາ ຫຼວງນ້ຳທາ ບ້ານ ໂພນໄຊ, ແຂວງ ຫຼວງນ້ຳທາ ເບີໂທລະສັບ : (+856-86) 211398 ເບີໂທລະສານ : (+856-86) 312073
ສປປ ລາວ	ບໍ່ແກ້ວ	9.	ທະນາຄານ ພັດທະນາລາວ ສາຂາ ຫ້ວຍຊາຍ ບ້ານ ຂອນແກ້ວ, ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ ເບີໂທລະສັບ : (+856-84) 211492 ເບີໂທລະສານ : (+856-84) 211024
ສປປ ລາວ	ຜົ້ງສາລີ	10.	ທະນາຄານ ພັດທະນາລາວ ສາຂາ ຜົ້ງສາລີ ບ້ານ ຜົ້ງສາລີ ເມືອງ ຜົ້ງສາລີ, ແຂວງ ຜົ້ງສາລີ ເບີໂທລະສັບ : (+856-88) 210076 ເບີໂທລະສານ : (+856-88) 210015
ສປປ ລາວ	ຫົວພັນ	11.	ທະນາຄານ ພັດທະນາລາວ ສາຂາ ຊຳເໜືອ ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງ ຫົວພັນ ເບີໂທລະສັບ : (+856-64) 312464 ເບີໂທລະສານ : (+856-64) 312824
ສປປ ລາວ	ຊຽງຂວາງ	12.	ທະນາຄານ ພັດທະນາລາວ ສາຂາ ຊຽງຂວາງ ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ເບີໂທລະສັບ : (+856-61) 213278 ເບີໂທລະສານ : (+856-61) 213301
ສປປ ລາວ	ຄຳມ່ວນ	13.	ທະນາຄານ ພັດທະນາລາວ ສາຂາ ຄຳມ່ວນ ບ້ານ ໂພນສະໜາມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ ເບີໂທລະສັບ : (+856-51) 212253 ເບີໂທລະສານ : (+856-51) 212073
ສປປ ລາວ	ບໍລິຄຳໄຊ	14.	ທະນາຄານ ພັດທະນາລາວ ສາຂາ ປາກຊັນ ບ້ານ ໂພໄຊ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ເບີໂທລະສັບ : (+856-54) 212025 ເບີໂທລະສານ : (+856-54) 212823
ສປປ ລາວ	ສະຫວັນນະເຂດ	15.	ທະນາຄານ ພັດທະນາລາວ ສາຂາ ສະຫວັນນະເຂດ ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ ເບີໂທລະສັບ : (+856-41) 212226

ປະເທດ	ແຂວງ	ລ/ດ	ທີ່ຢູ່
			ເບີໂທລະສານ : (+856-41) 212856
ສປປ ລາວ	ຈຳປາສັກ	16.	ທະນາຄານ ພັດທະນາລາວ ສາຂາ ປາກເຊ ບ້ານ ທ່າຫລວງ, ເມືອງ ປາກເຊ, ແຂວງ ຈຳປາສັກ ເບີໂທລະສັບ : (+856-31) 212168 ເບີໂທລະສານ : (+856-31) 213327
ສປປ ລາວ	ສາລະວັນ	17.	ທະນາຄານ ພັດທະນາລາວ ສາຂາ ສາລະວັນ ບ້ານ ນາກົກໂພ, ເມືອງ ສາລະວັນ, ແຂວງ ສາລະວັນ ເບີໂທລະສັບ : (+856-34) 211388 ເບີໂທລະສານ : (+856-34) 211301
ສປປ ລາວ	ເຊກອງ	18.	ທະນາຄານ ພັດທະນາລາວ ສາຂາ ເຊກອງ ບ້ານ ວັດຫຼວງ, ເມືອງ ລະມານ, ແຂວງ ເຊກອງ ເບີໂທລະສັບ : (+856-38) 211075 ເບີໂທລະສານ : (+856-38) 211022
ສປປ ລາວ	ອັດຕະປື	19.	ທະນາຄານ ພັດທະນາລາວ ສາຂາ ອັດຕະປື ບ້ານ ວັດຫຼວງ, ເມືອງ ສາມັກຄີໄຊ, ແຂວງ ອັດຕະປື ເບີໂທລະສັບ : (+856-36) 211185 ເບີໂທລະສານ : (+856-36) 211857
ສປປ ລາວ	ບໍລິຄຳໄຊ	20.	ທະນາຄານ ພັດທະນາລາວ ສາຂາ ຫຼັກຊາວ ບ້ານ ຫຼັກຊາວ, ເມືອງ ຄຳເກີດ, ແຂວງ ບໍລິຄຳໄຊ ເບີໂທລະສັບ : (+856-54) 341513 ເບີໂທລະສານ : (+856-54) 700405
ປະເທດໄທ			
ໄທ	ກຸງເທບ	21.	ບໍລິສັດ ຫຼັກຊັບ ເຄທີ ຊີມິໂກ້ ຈຳກັດ ຊັ້ນ 8, 15 - 17, 19, 21, ຕຶກລີເບີຕີ້ສະແຄວ 287, ຖະໜົນ ສີລົມ, ເຂດບາງຣັກ, ກຸງເທບ, ປະເທດໄທ. ເບີໂທລະສັບ (+66) 695 2103, ເບີໂທລະສານ: (+66) 631 2242

8. ວິທີການຈອງຊື້ຮຸ້ນ

ຜູ້ຈອງຊື້ຮຸ້ນສາມາດພິວພັນເອົາໜັງສືຊວນຊື້ ແລະ ໃບຈອງຊື້ໄດ້ຈາກຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ ພາຍໃນໄລຍະສະເໜີຂາຍຮຸ້ນທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້. ຜູ້ຈອງຊື້ຮຸ້ນຕ້ອງປະກອບຂໍ້ມູນໃສ່ໃບຈອງຊື້ຢ່າງຈະແຈ້ງ, ລົງລາຍເຊັນ ແລະ ຕ້ອງນຳເອົາບັດປະຈຳຕົວສະບັບສຳເນົາ, ໜັງສືຜ່ານແດນ ຫຼື ເອກະສານອື່ນໆ ເພື່ອຢັ້ງຢືນຕົວຕົນຂອງຜູ້ຈອງຊື້ຮຸ້ນ ຕາມທີ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນໄດ້ກຳນົດ ຕິດຄັດກັບແບບຟອມດັ່ງກ່າວ ແລະ ຍື່ນເອກະສານທັງໝົດໃຫ້ກັບຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍ (ແລ້ວແຕ່ກໍລະນີ), ພ້ອມທັງຊຳລະເງິນຄ່າຈອງຊື້ໃຫ້ຄົບຖ້ວນໂດຍປະຕິບັດຕາມຂັ້ນຕອນໃນພາກນີ້ໃຫ້ກັບຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍ, ພາຍໃນໄລຍະເວລາຂອງການສະເໜີຂາຍຮຸ້ນ.

ໃນການສະເໜີຂາຍຮຸ້ນທັງໝົດ, ການຈອງຊື້ຮຸ້ນໃນແຕ່ລະຄັ້ງຈະຕ້ອງຈອງຊື້ຕ່ຳສຸດ 100 ຮຸ້ນ ແລະ ເພີ່ມທະວີຄູນ 100 ຮຸ້ນ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຜູ້ຈຳໜ່າຍຮຸ້ນທີ່ຮັບຈອງຊື້ຮຸ້ນຈະອອກໃບຢັ້ງຢືນການຈອງຊື້ຮຸ້ນເພີ່ມທຶນໃຫ້ແກ່ຜູ້ຈອງຊື້ພາຍໃນ 10 ວັນລັດຖະການນັບແຕ່ມື້ສິ້ນສຸດໄລຍະການສະເໜີຂາຍ. ຜູ້ຈັດສັນຮຸ້ນຈະແຈ້ງຈຳນວນຮຸ້ນເພີ່ມທຶນທີ່ຖືກຈັດສັນໃຫ້ແກ່ຜູ້ຈອງຊື້ຮຸ້ນຊາບຫຼັງຈາກມື້ສິ້ນສຸດໄລຍະການສະເໜີຂາຍ.

ຈັດສັນ ຢ່າງໃດກໍ່ຕາມ, ຜູ້ຈັດສັນຮຸ້ນ ສະຫງວນສິດທີ່ຈະປະຕິເສດການຈອງຊື້ຮຸ້ນສາມັນເພີ່ມທຶນຕາມໃບຈອງຊື້ ຖ້າຫາກຜູ້ຈັດສັນຮຸ້ນເຫັນວ່າ ການຈອງຊື້ຮຸ້ນດັ່ງກ່າວບໍ່ສອດຄ່ອງກັບວິທີການຈອງຊື້ຮຸ້ນ.

9. ວິທີຊຳລະການຈອງຊື້ຮຸ້ນ

ຜູ້ລົງທຶນທີ່ມີຈຸດປະສົງຈອງຊື້ຮຸ້ນສາມັນເພີ່ມທຶນແຕ່ບໍ່ໄດ້ເປີດບັນຊີຫຼັກຊັບ ສາມາດຝາກເງິນເຂົ້າບັນຊີເພື່ອໃຊ້ສຳລັບການຈອງຊື້ຮຸ້ນສາມັນເພີ່ມທຶນເຂົ້າໄປໃນບັນຊີຫຼັກຊັບ. ຜູ້ຈັດສັນຮຸ້ນຈະຈັດໃຫ້ມີບັນຊີສຳລັບການໂອນໃນແຕ່ລະຄັ້ງສະເພາະໃນສະກຸນເງິນທີ່ຜູ້ຈັດສັນຮຸ້ນຍອມຮັບ ດັ່ງນີ້:

ເລກທີ່ບັນຊີ: [x]
ຊື່ບັນຊີ: [x]

ດັ່ງນັ້ນ, ຜູ້ຈອງຈະຕ້ອງທຳການໂອນຈຳນວນເງິນທີ່ຈອງຊື້ຮຸ້ນຕາມມູນຄ່າຂອງຮຸ້ນໃຫ້ຄົບຖ້ວນເພື່ອທຳການຈອງ ແລະ ຈອງຮຸ້ນສາມັນເພີ່ມທຶນກ່ອນລ່ວງໜ້າກ່ອນການສິ້ນສຸດໄລຍະເວລາຂອງການສະເໜີຂາຍ. ຖ້າບໍ່ປະຕິບັດດັ່ງນັ້ນ, ລະບົບຈອງຮຸ້ນສາມັນເພີ່ມທຶນຕາມຈຳນວນເງິນທີ່ມີໃນບັນຊີຫຼັກຊັບເທົ່ານັ້ນ.

10. ການຈັດສັນຈັດສັນຮຸ້ນໃນກໍລະນີທີ່ມີການຈອງຊື້ຮຸ້ນເກີນຈຳນວນຮຸ້ນທີ່ອອກຈຳໜ່າຍ

ກໍລະນີຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນໄດ້ຮັບການຈອງຊື້ຮຸ້ນທີ່ຖືກຕ້ອງຕາມຂັ້ນຕອນຫຼາຍກວ່າຈຳນວນຮຸ້ນທີ່ບໍລິສັດຕີກລົງເຫັນດີອອກຈຳໜ່າຍ, ຜູ້ຈັດສັນຮຸ້ນຈະມີສິດໃນການພິຈາລະນາໃນການຈັດສັນຮຸ້ນສາມັນເພີ່ມທຶນໃຫ້ກັບຜູ້ລົງທຶນໃດໜຶ່ງ ຫຼື ທັງໝົດ.

11. ການສົ່ງຄ່າຈອງຊື້ຮຸ້ນຄືນໃນກໍລະນີທີ່ບໍ່ໄດ້ຮັບການຈັດສັນຮຸ້ນ

ຜູ້ຈັດສັນຮຸ້ນ ຈະແຈ້ງຜົນການຈັດສັນຈຳນວນຮຸ້ນສາມັນເພີ່ມທຶນໃຫ້ຜູ້ຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການຈັດສັນຮຸ້ນສາມັນເພີ່ມທຶນຕາມຈຳນວນທີ່ຈອງຊື້ທັງໝົດ ຫຼື ບາງສ່ວນ ພາຍໃຕ້ລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ 017/ຄລຕ, ລົງວັນທີ 22 ຕຸລາ 2014, ຜູ້ຈັດສັນຮຸ້ນ ຈະສົ່ງເງິນຄ່າຈອງຊື້ຮຸ້ນຄືນແກ່ຜູ້ຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການຈັດສັນຮຸ້ນສາມັນເພີ່ມທຶນທີ່ສະເໜີຂາຍທີ່ຕົນຈອງຊື້ຢ່າງເຕັມຈຳນວນ ໂດຍການໂອນເງິນໃຫ້ແກ່ຜູ້ຈອງຊື້ຮຸ້ນ ພາຍໃນ 5 ວັນລັດຖະການຫຼັງຈາກໄລຍະສະເໜີຂາຍຮຸ້ນ. ເງິນທີ່ຈະສົ່ງຄືນຜູ້ຈອງຊື້ຮຸ້ນນັ້ນ ແມ່ນ ຈະຖືກຄິດໄລ່ຕາມສັດສ່ວນຂອງມູນຄ່າການຈອງຊື້ຮຸ້ນສາມັນເພີ່ມທຶນທີ່ບໍ່ໄດ້ຮັບການຈັດສັນ. ທັງນີ້, ການຄືນຄ່າຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການຈັດສັນຈະບໍ່ມີ ດອກເບ້ຍ ຫຼື ຄ່າຊົດເຊີຍຄວາມເສຍຫາຍໃດໆ ຖ້າການສົ່ງເງິນຄືນນັ້ນໄດ້ປະຕິບັດຕາມລະບຽບຂັ້ນຕອນທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້, ໃນກໍລະນີທີ່ຜູ້ຈັດສັນຮຸ້ນ ບໍ່ໄດ້ປະຕິບັດຕາມທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້, ຜູ້ຈັດສັນຮຸ້ນຈະຕ້ອງຮັບຜິດຊອບໃນດອກເບ້ຍປັບໃໝໃນອັດຕາ ດັ່ງນີ້:

- ຖ້າຜູ້ຈອງຊື້ຮຸ້ນແມ່ນບຸກຄົນ: 3,00 ສ່ວນຮ້ອຍ ຕໍ່ ປີ
- ຖ້າຜູ້ຈອງຊື້ຮຸ້ນແມ່ນສະຖາບັນການເງິນ: 1,10 ສ່ວນຮ້ອຍ ຕໍ່ ປີ
- ຖ້າຜູ້ຈອງຊື້ຮຸ້ນແມ່ນວິສາຫະກິດ ຫຼື ອົງການຈັດຕັ້ງ: 1,60 ສ່ວນຮ້ອຍ ຕໍ່ ປີ

ຂອງເງິນຄ່າຈອງຊື້ຮຸ້ນທີ່ບໍ່ໄດ້ຄືນໃຫ້ຜູ້ຈອງຊື້ຮຸ້ນ ຈົນກວ່າຈະໄດ້ຊຳລະຈຳນວນເງິນນັ້ນຢ່າງຄົບຖ້ວນ.

ຜູ້ຈອງຊື້ຮຸ້ນຈະຕ້ອງປະກອບລາຍລະອຽດທີ່ຈຳເປັນກ່ຽວກັບບັນຊີທະນາຄານຂອງຜູ້ຈອງຊື້ຮຸ້ນ ໃຫ້ກັບຜູ້ຈັດສັນຮຸ້ນເພື່ອໃຊ້ໃນການສົ່ງຄືນເງິນຄ່າຈອງຊື້ຮຸ້ນ.

12. ການຈັດສັນຮຸ້ນສາມັນເພີ່ມທຶນ

ຜູ້ຈັດສັນຮຸ້ນຈະດຳເນີນການຈັດສັນຮຸ້ນສາມັນເພີ່ມທຶນໂດຍຈະປະຕິບັດເພື່ອຜົນປະໂຫຍດສູງສຸດຂອງບໍລິສັດ. ເຖິງຢ່າງໃດກໍຕາມ, ການຈັດສັນຮຸ້ນສາມັນເພີ່ມທຶນໃຫ້ກັບບັນດາຜູ້ທີ່ຈອງຮຸ້ນແມ່ນຂຶ້ນກັບການພິຈາລະນາຂອງຜູ້ຈັດສັນຮຸ້ນໂດຍສອດຄ່ອງກັບໜັງສືຊວນຊື້.

ແຕ່ຢ່າງໃດກໍ່ຕາມ, ການຈັດສັນຮຸ້ນສາມັນເພີ່ມທຶນຈະຕ້ອງໄດ້ປະຕິບັດຕາມຂໍ້ຕົກລົງຂອງ ຄລຕ ເລກທີ 021/ຄລຕ ວ່າດ້ວຍການເພີ່ມສັດສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ໃນບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ,ໄດ້ອະນຸຍາດໃຫ້ບັນດາຜູ້ລົງທຶນຕ່າງປະເທດມີກຳມະສິດໃນຮຸ້ນຂອງບໍລິສັດບໍ່ເກີນ 20 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ ເຊິ່ງຜູ້ລົງທຶນໜຶ່ງລາຍສາມາດຊື້ຮຸ້ນໄດ້ໃນອັດຕາສ່ວນບໍ່ເກີນ 1 ສ່ວນຮ້ອຍຂອງການຖືຮຸ້ນທັງໝົດໃນບໍລິສັດ ແລະ ຜູ້ລົງທຶນທີ່ເປັນປະເພດສະຖາບັນ ຫຼື ນິຕິບຸກຄົນສາມາດຊື້ຮຸ້ນໄດ້ບໍ່ເກີນ 5 ສ່ວນຮ້ອຍຂອງການຖືຮຸ້ນທັງໝົດໃນບໍລິສັດ.

13. ການສົ່ງມອບຮຸ້ນສາມັນເພີ່ມທຶນ

ນາຍທະບຽນຮຸ້ນຈະຝາກຮຸ້ນສາມັນເພີ່ມທຶນເຂົ້າບັນຊີຫຼັກຊັບທີ່ຜູ້ຈອງຊື້ຮຸ້ນມີບັນຊີຊື້-ຂາຍຫຼັກຊັບຢູ່ນຳບໍລິສັດຫຼັກຊັບທີ່ເປັນສະມາຊິກຂອງສູນຮັບຝາກຫຼັກຊັບ ຂອງ ຕລຊລ ຕາມທີ່ໄດ້ແຈ້ງໃຫ້ຜູ້ຈອງຊື້ຮຸ້ນຮັບຊາບໄວ້ໃນໃບຈອງຊື້. ຢ່າງໃດກໍດີ, ຜູ້ຖືຮຸ້ນຂອງບໍລິສັດມີສິດທີ່ຈະຂໍໃຫ້ບໍລິສັດອອກໃບຮຸ້ນໃຫ້ໄດ້ ໂດຍປະຕິບັດຕາມຂັ້ນຕອນທີ່ກ່ຽວຂ້ອງ.

14. ການໂອນຮຸ້ນ

ຕາມກົດໝາຍວ່າດ້ວຍວິສາຫະກິດ, ການໂອນຮຸ້ນຂອງບໍລິສັດມະຫາຊົນຈະສຳເລັດໄດ້ກໍ່ຕໍ່ເມື່ອຜູ້ໂອນໄດ້ສະຫຼັກຫຼັງໃບຮຸ້ນ ໂດຍກຳນົດຊື່ຂອງຜູ້ຮັບໂອນ ພ້ອມດ້ວຍຊື່ແລະລາຍເຊັນຂອງຜູ້ກ່ຽວ ແລະ ຜູ້ໂອນໄດ້ມອບໃບຮຸ້ນໃຫ້ຜູ້ຮັບໂອນ. ການໂອນຮຸ້ນຈະມີຜົນໃຊ້ໄດ້ຕໍ່ເມື່ອບໍລິສັດໄດ້ຮັບຄຳຮ້ອງຂໍໃຫ້ຂຶ້ນທະບຽນການໂອນ. ພາຍຫຼັງບໍລິສັດໄດ້ຂຶ້ນທະບຽນການໂອນຮຸ້ນແລ້ວ, ການໂອນຮຸ້ນຈະມີຜົນຕໍ່ບຸກຄົນພາຍນອກ. ເຖິງຢ່າງໃດກໍຕາມ, ການໂອນຮຸ້ນຈະຕ້ອງປະຕິບັດຕາມ ກົດລະບຽບຂອງ ຕລຊລ ເນື່ອງຈາກຮຸ້ນນັ້ນອອກເພື່ອທຳການຊື້-ຂາຍໃນ ຕລຊລ.

15. ເງິນປັນຜົນ

ການແບ່ງເງິນປັນຜົນຕ້ອງໄດ້ຮັບການຕົກລົງເຫັນດີລ່ວງໜ້າຈາກກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ແລະ ຈະຕ້ອງຈັດສັນ

ໃຫ້ແຕ່ລະຮຸ້ນໃນອັດຕາສ່ວນທີ່ເທົ່າກັນ.

ຕາມກົດໝາຍວິສາຫະກິດ, ບໍລິສັດຈະບໍ່ແບ່ງເງິນປັນຜົນ ຖ້າຍັງມີການຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ. ນອກຈາກນັ້ນ, ບໍລິສັດຕ້ອງຫັກ 10 ສ່ວນຮ້ອຍຂອງກຳໄລສຸດທິ ເຂົ້າຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນ (ຖ້າມີ) ພາຍຫຼັງທີ່ໄດ້ຫັກເງິນຂາດທຶນຕໍ່ເນື່ອງອອກໄປແລ້ວ. ບໍລິສັດສາມາດໂຈະການຫັກຜົນກຳໄລສຸດທິເຂົ້າຄັງສຳຮອງດັ່ງກ່າວ ເມື່ອຄັງສຳຮອງມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນຂອງບໍລິສັດແລ້ວ ເວັ້ນແຕ່ວ່າກົດລະບຽບບໍລິສັດ ໄດ້ກຳນົດໄວ້ຢ່າງອື່ນ.

ເຈົ້າຂອງຮຸ້ນຈະໄດ້ຮັບເງິນປັນຜົນຕາມການຕົກລົງເຫັນດີ ໃນກອງປະຊຸມຜູ້ຖືຮຸ້ນໃນອັດຕາບໍ່ຕ່ຳກວ່າ 50 ສ່ວນຮ້ອຍ ຂອງກຳໄລສຸດທິຂອງບໍລິສັດ ພາຍຫຼັງຫັກອາກອນ, ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນ (ຖ້າມີ).

ເງິນປັນຜົນທີ່ພົວພັນເຖິງຮຸ້ນໃນບໍລິສັດຂອງ ສປປ ລາວ ແມ່ນຕ້ອງເສຍອາກອນຕາມກົດໝາຍຂອງ ສປປ ລາວ ໃນອັດຕາ 10 ສ່ວນຮ້ອຍ. ເຖິງຢ່າງໃດກໍ່ຕາມ, ລາຍຮັບທີ່ພົວພັນເຖິງການຈັດສັນເງິນປັນຜົນ ສຳລັບບໍລິສັດທີ່ໄດ້ຮັບການຈົດທະບຽນ ໃນ ຕລຊລ ແມ່ນໄດ້ຮັບການຍົກເວັ້ນ.

16. ກອງປະຊຸມສາມັນຜູ້ຖືຮຸ້ນ

ຕາມກົດໝາຍວິສາຫະກິດ ແລະ ກົດລະບຽບຂອງບລີສັດ, ສະພາຜູ້ບໍລິຫານຂອງບໍລິສັດຈະຮຽກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ພາຍໃນສີ່ເດືອນ ນັບຈາກມື້ສຸດທ້າຍຂອງປີ. ສະພາບໍລິຫານຂອງບໍລິສັດສາມາດຮຽກປະຊຸມວິສາມັນຜູ້ຖືຮຸ້ນ ຖ້າເຫັນວ່າມີຄວາມຈຳເປັນເຊັ່ນ: ກໍລະນີຕຳແໜ່ງຜູ້ກວດສອບບັນຊີວ່າງລົງ ຫຼື ຜູ້ອຳນວຍການເກີນກວ່າເຄິ່ງໜຶ່ງເຫັນດີໃຫ້ເປີດກອງປະຊຸມຜູ້ຖືຮຸ້ນ ຫຼື ເມື່ອມີຜູ້ຖືຮຸ້ນຍື່ນຄຳຮ້ອງຟ້ອງ ແລະ ສານສັ່ງໃຫ້ເປີດກອງປະຊຸມ ແລະ ຜູ້ຖືຮຸ້ນຢ່າງໜ້ອຍເທົ່າກັບ 20 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດສະເໜີເປັນລາຍລັກອັກສອນໂດຍແຈ້ງຈຸດປະສົງຂໍເປີດກອງປະຊຸມ. ພາຍຫຼັງໄດ້ຮັບການສະເໜີ, ສະພາບໍລິຫານກໍ່ຕ້ອງເປີດກອງປະຊຸມວິສາມັນຜູ້ຖືຮຸ້ນ ພາຍໃນ 30 ວັນ ຈາກວັນໄດ້ຮັບການສະເໜີ.

ໜັງສືແຈ້ງປະຊຸມຂອງຜູ້ຖືຮຸ້ນຕ້ອງສົ່ງໂດຍກົງ ຫຼື ຜ່ານລະບົບສື່ສານທີ່ເໝາະສົມໃຫ້ແກ່ຜູ້ຖືຮຸ້ນຂອງບໍລິສັດທຸກຄົນຢ່າງໜ້ອຍຫ້າວັນລັດຖະການ ກ່ອນວັນເປີດກອງປະຊຸມ.

ບໍລິສັດທີ່ໄດ້ຮັບການຈົດທະບຽນຈະຕ້ອງປະຕິບັດຕາມກົດລະບຽບຂອງ ສຄຄຊ ສະບັບເລກທີ 257/ຄຄຊ, ລົງວັນທີ 3 ມີນາ 2014 ແລະ ປະຕິບັດຕາມຄຳແນະນຳຂອງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດທີ່ໄດ້ຮັບການຈົດທະບຽນ.

ພາຍໃຕ້ຄຳແນະນຳຂອງກອງປະຊຸມຜູ້ຖືຮຸ້ນໃນບໍລິສັດທີ່ໄດ້ຮັບການຈົດທະບຽນຕາມທີ່ກ່າວມາຂ້າງເທິງນີ້, ເມື່ອສະພາບໍລິຫານເປີດກອງປະຊຸມ ແມ່ນມີໜ້າທີ່ໃນການພິຈາລະນາ ແລະ ກຳນົດປະເດັນທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ. ແຈ້ງການ ແລະ ເອກະສານຕ່າງໆ ຈະຕ້ອງສົ່ງໃຫ້ກັບບັນດາຜູ້ຖືຮຸ້ນຕາມລາຍຊື່ ທີ່ລະບຸໄວ້ໃນປຶ້ມບັນທຶກຜູ້ຖືຮຸ້ນ ແລະ ຕ້ອງແຈ້ງກ່ອນລ່ວງໜ້າ 15 ວັນລັດຖະການກ່ອນວັນເປີດກອງປະຊຸມ.

ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ຕ້ອງມີຜູ້ຖືຮຸ້ນເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

17. ສິດໃນການລົງຄະແນນສຽງ

ໂດຍທົ່ວໄປ, ຜູ້ຖືຮຸ້ນມີໜຶ່ງສຽງຕໍ່ຮຸ້ນ. ກອງປະຊຸມຜູ້ຖືຮຸ້ນສາມາດລົງມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ. ແຕ່ບາງບັນຫາຕ້ອງໄດ້ຮັບມະຕິສະເພາະ ເຊິ່ງຈະຕ້ອງໄດ້ຮັບສຽງຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນ ຢ່າງໜ້ອຍສອງສ່ວນສາມຂອງຜູ້ເຂົ້າຮ່ວມປະຊຸມ ແລະ ຕ້ອງມີຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ເຊັ່ນ;

(i) ການລົງຄະແນນສຽງໃນບັນຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

(ii) ການປ່ຽນແປງກົດລະບຽບບໍລິສັດ ແລະ ສັນຍາສ້າງຕັ້ງບໍລິສັດ;

(iii) ການເພີ່ມທຶນ ຫຼື ການຫຼຸດທຶນ;

(iv) ການຄວບ ຫຼື ການຍຸບເລີກບໍລິສັດ;

(v) ການຂາຍ ຫຼື ໂອນກິດຈະການທັງໝົດ ຫຼື ບາງສ່ວນທີ່ມີຄວາມສຳຄັນຂອງບໍລິສັດໃຫ້ບຸກຄົນອື່ນ; ແລະ

(vi) ການຊື້ ຫຼື ຮັບໂອນກິດຈະການຂອງວິສາຫະກິດອື່ນ.

ໂດຍອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ຜູ້ຖືຮຸ້ນອາດຈະຖືກຈຳກັດສິດໃນການລົງຄະແນນສຽງ ຫາກຜູ້ຖືຮຸ້ນນັ້ນມີສ່ວນໄດ້ເສຍ ຫຼື ມີຜົນປະໂຫຍດໂດຍກົງກັບບັນຫາທີ່ລົງຄະແນນສຽງຮັບຮອງ ໂດຍການກຳນົດຜູ້ຖືຮຸ້ນໃນເລື່ອງນີ້ ແມ່ນໃຫ້ກອງປະຊຸມຜູ້ຖືຮຸ້ນຕົກລົງກັນເອງວ່າຜູ້ຖືຮຸ້ນນັ້ນຈະຖືກຈຳກັດສິດ ຫຼື ບໍ່. ດັ່ງນັ້ນ, ຫາກໃນກໍລະນີທີ່ບໍລິສັດຈະຊື້ຊັບສິນໃນອະນາຄົດຈາກ ຟຟລ ພາຍຫຼັງການສະເໜີຂາຍຮຸ້ນນີ້, ຟຟລ ອາດຖືກຈຳກັດສິດໃນການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນໃນເລື່ອງທີ່ກ່ຽວພັນກັບການຂາຍຊັບສິນໃຫ້ແກ່ບໍລິສັດ ຍ້ອນວ່າ ຟຟລ ຈະແມ່ນມີຜົນປະໂຫຍດໂດຍກົງກັບການຂາຍຊັບສິນ ຍົກເວັ້ນແຕ່ກອງປະຊຸມຜູ້ຖືຮຸ້ນຈະຕົກລົງກັນໃຫ້ ຟຟລ ລົງຄະແນນສຽງໃນເລື່ອງດັ່ງກ່າວໄດ້. ໃນກໍລະນີທີ່ຍັນດາຜູ້ຖືຮຸ້ນບໍ່ສາມາດຕົກລົງກັນໄດ້, ຜູ້ຖືຮຸ້ນຈະບໍ່ສາມາດມີມະຕິອະນຸມັດໃຫ້ລົງທຶນຊື້ຊັບສິນໃນອະນາຄົດຈາກ ຟຟລ ໄດ້ ຍ້ອນວ່າມະຕິທີ່ຈະຕ້ອງໄດ້ສຳລັບການເພີ່ມທຶນແມ່ນ ຕ້ອງມີສຽງຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງນ້ອຍສອງສ່ວນສາມຂອງຜູ້ເຂົ້າຮ່ວມປະຊຸມ ແລະມີຢ່າງນ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

18. ສິດໃນການຈອງຊື້ຮຸ້ນໃໝ່ ແລະ ການອອກຮຸ້ນສາມັນເພີ່ມທຶນ

ກົດໝາຍວ່າດ້ວຍວິສາຫະກິດກຳນົດວ່າ ການເພີ່ມທຶນຂອງບໍລິສັດຈະຕ້ອງໄດ້ຮັບການຕົກລົງເຫັນດີຈາກຜູ້ຖືຮຸ້ນ. ຜູ້ຖືຮຸ້ນມີສິດຊື້ຮຸ້ນເພີ່ມຕາມລຳດັບບຸລິມະສິດ. ຮຸ້ນເພີ່ມທຶນຈະໄດ້ສະເໜີຂາຍໃຫ້ຜູ້ຖືຮຸ້ນຕາມອັດຕາສ່ວນຮຸ້ນເດີມທີ່ຜູ້ຖືຮຸ້ນແຕ່ລະຄົນຖືກ່ອນ. ຮຸ້ນເພີ່ມທຶນໃດທີ່ບໍ່ໄດ້ຊື້ພາຍໃນກຳນົດເວລາທີ່ວາງໄວ້ ຫຼື ທີ່ຖືຮຸ້ນປະຕິເສດການຊື້ຮຸ້ນຕາມອັດຕາສ່ວນຂອງຕົນ ກໍ່ຈະສາມາດສະເໜີຂາຍໃຫ້ຜູ້ຖືຮຸ້ນລາຍອື່ນທີ່ສົນໃຈຊື້. ຈາກນັ້ນ, ຜູ້ອຳນວຍການຂອງບໍລິສັດຈະມີສິດຊື້ຮຸ້ນສ່ວນທີ່ເຫຼືອ ແລະ ຮຸ້ນສ່ວນທີ່ຍັງເຫຼືອ ກໍ່ຈະສະເໜີຂາຍໃຫ້ບຸກຄົນພາຍນອກ.

ໂດຍອີງຕາມມະຕິຕົກລົງຂອງ ຄສພຊ ໃນປີ 2010 ວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ບໍລິສັດໄດ້ຮັບສິດຊື້ຮຸ້ນ ຈາກການທີ່ຜູ້ຖືຮຸ້ນເດີມສະລະສິດກ່ຽວກັບການສະເໜີຂາຍຮຸ້ນໃນຄັ້ງນີ້, ທຸກຄັ້ງທີ່ມີການສະເໜີຂາຍຮຸ້ນຂອງບໍລິສັດໃຫ້ກັບມວນຊົນທົ່ວໄປ ແລະ ການສະເໜີຂອງບໍລິສັດໃດໜຶ່ງທີ່ໄດ້ຮັບການຈົດທະບຽນໃນ ຕລຊລ. ຕາມກົດໝາຍວ່າດ້ວຍວິສາຫະກິດ, ບໍ່ວ່າໃນກໍລະນີໃດໆ ບໍລິສັດຕ້ອງຮຽກເປີດກອງປະຊຸມ ຜູ້ຖືຮຸ້ນເພື່ອຂໍອະນຸມັດການເພີ່ມທຶນຂອງບໍລິສັດ.

ກົດໝາຍວ່າດ້ວຍວິສາຫະກິດຍັງກຳນົດໃຫ້ບໍລິສັດຂຶ້ນທະບຽນການເພີ່ມທຶນກັບຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ພາຍໃນ 10 ວັນລັດຖະການນັບແຕ່ວັນທີ່ໄດ້ກຳນົດໃຫ້ຊຳລະເງິນຄ່າຮຸ້ນທີ່ຈອງໄວ້. ນອກຈາກນີ້, ບໍລິສັດຈະແຈ້ງໃຫ້ມວນຊົນທົ່ວໄປຮັບຮູ້ເຖິງການຂຶ້ນທະບຽນການເພີ່ມທຶນຢ່າງໜ້ອຍໜຶ່ງຄັ້ງ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບການຈົດທະບຽນເປັນຕົ້ນໄປ.

19. ການເປີດເຜີຍບົດລາຍງານດ້ານການເງິນ

ກົດໝາຍວ່າດ້ວຍວິສາຫະກິດກຳນົດໃຫ້ສະພາບໍລິຫານຮ່ວມມືກັບຜູ້ກວດສອບພາຍນອກ ໂດຍໃຫ້ຄວາມກະຈ່າງແຈ້ງກ່ຽວກັບແຫຼ່ງ, ຄວາມຊັດເຈນຂອງຕົວເລກ ແລະ ຂໍ້ມູນທີ່ປາກົດໃນໃບລາຍງານຖານະການເງິນຂອງບໍລິສັດກ່ອນສະເໜີຜ່ານກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ. ໃບລາຍງານຖານະການເງິນຂອງບໍລິສັດຕ້ອງໄດ້ຮັບການຢັ້ງຢືນຈາກຜູ້ກວດສອບບັນຊີ ແລະ ການຕົກລົງຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ.

ນອກຈາກນີ້ການລາຍງານ ແລະ ການເປີດເຜີຍຂໍ້ມູນຕາມກົດລະບຽບສະບັບເລກທີ 007/ຄຄຊ, ລົງວັນທີ 3/4/2014 ກຳນົດໃຫ້ບໍລິສັດກຽມ ແລະ ສະເໜີບົດລາຍງານການເງິນປະຈຳປີທີ່ຜ່ານການກວດສອບແລ້ວ ແລະ ບົດລາຍງານການເງິນປະຈຳໄຕມາດທີ່ຜ່ານການກວດກາແລ້ວຕໍ່ ສຄຄຊ. ນອກຈາກນີ້, ບໍລິສັດຍັງຕ້ອງປະຕິບັດຕາມຂໍ້ກຳນົດອື່ນຂອງ ຕລຊລ.

ໂດຍພາຍໃຕ້ກົດລະບຽບວ່າດ້ວຍ: ການລາຍງານ ແລະ ການເປີດເຜີຍຂໍ້ມູນຕາມກົດລະບຽບສະບັບເລກທີ 007/ຄຄຊ, ລົງວັນທີ 3/4/2014, ການລາຍງານ ແລະ ການເປີດເຜີຍຂໍ້ມູນໂດຍປົກກະຕິແມ່ນເຊັ່ນ ໄຕມາດ, ຫົກເດືອນ ແລະ ປະຈຳປີ

1) ການລາຍງານ ແລະ ການເປີດເຜີຍຂໍ້ມູນປະຈຳໄຕມາດ: ບໍລິສັດທີ່ອອກຫຼັກຊັບ ແລະ ບໍລິສັດທີ່ໄດ້ຈົດທະບຽນຢູ່ທີ່ຕະຫຼາດຫຼັກຊັບຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ສຳລັບໄຕມາດທີໜຶ່ງ ແລະ ທີສາມຂອງປີ ພາຍໃນເວລາ 45 ວັນ ນັບຈາກວັນສຸດທ້າຍຂອງວັນໄຕມາດທີໜຶ່ງ ແລະ ໄຕມາດທີສາມຕາມລຳດັບ. ການລາຍງານປະຈຳໄຕມາດປະກອບມີບົດສະຫຼຸບການລາຍງານການເຄື່ອນໄຫວທຸລະກິດຂອງບໍລິສັດສຳລັບໄຕມາດນັ້ນ ແລະ ບົດລາຍງານດ້ານການເງິນທີ່ໄດ້ຮັບການຢັ້ງຢືນຈາກພະແນກການເງິນຂອງບໍລິສັດ, ພະແນກກວດສອບພາຍໃນ ແລະ ຜູ້ອຳນວຍການ.

2) ການລາຍງານ ແລະ ການເປີດເຜີຍຂໍ້ມູນປະຈຳ ຫົກເດືອນ ບໍລິສັດທີ່ອອກຫຼັກຊັບ ແລະ ບໍລິສັດທີ່ໄດ້ຈົດທະບຽນຢູ່ທີ່ຕະຫຼາດຫຼັກຊັບຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ສຳລັບໄຕມາດທີໜຶ່ງ ແລະ ທີສາມຂອງປີ ພາຍໃນກຳນົດເວລາ 60 ວັນ ນັບຈາກວັນສຸດທ້າຍຂອງວັນໄຕມາດທີສອງ. ບົດລາຍງານຕ້ອງປະກອບດ້ວຍ ບົດສະຫຼຸບການດຳເນີນທຸລະກິດຂອງບໍລິສັດສຳລັບເຄິ່ງປີທຳອິດ ແລະ ບົດສະຫຼຸບລາຍງານດ້ານການເງິນ ທີ່ໄດ້ຮັບການກວດສອບໂດຍຜູ້ກວດສອບພາຍນອກ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ແລະ ໄດ້ຮັບຮອງຈາກ

ກອງປະຊຸມສະພາບໍລິຫານຂອງບໍລິສັດ. ບົດລາຍງານດ້ານການເງິນເຄິ່ງປີໃນຫົກເດືອນສຸດທ້າຍຈະຕ້ອງປະກອບມີຂໍ້ມູນຂອງບໍລິສັດໃນໄຕມາດທີສອງ.

3) ບົດລາຍງານ ແລະ ການເປີດເຜີຍຂໍ້ມູນປະຈຳປີ: ບໍລິສັດອອກຫຼັກຊັບ ແລະ ບໍລິສັດທີ່ໄດ້ຮັບການຈົດທະບຽນຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນປະຈຳປີ ພາຍໃນເວລາ 120 ວັນ ນັບຈາກວັນສຸດທ້າຍຂອງປີການບັນຊີຂອງແຕ່ລະປີ ບົດລາຍງານຈະຕ້ອງປະກອບມີ ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີ ແລະ ບົດລາຍງານດ້ານການເງິນຂອງບໍລິສັດທີ່ໄດ້ຮັບການກວດການກວດສອບໂດຍຜູ້ກວດສອບພາຍນອກ ລວມທັງໄດ້ຮັບການຮັບຮອງຈາກ ສຄຄຊ ແລະ ກອງປະຊຸມສະພາບໍລິຫານຂອງບໍລິສັດ. ບົດລາຍງານການເງິນປະຈຳປີດັ່ງກ່າວຕ້ອງປະກອບມີຂໍ້ມູນຂອງບໍລິສັດ ສຳລັບໄຕມາດທີສີ.

20. ສິດໃນການຊຳລະສະສາງ

ໃນກໍລະນີຊຳລະສະສາງ, ຊັບສິນສ່ວນທີ່ເຫຼືອ ພາຍຫຼັງຈັດສັນໃຫ້ເຈົ້າໜີ້ຢ່າງຄົບຖ້ວນແລ້ວຈະໄດ້ຈັດສັນໃຫ້ກັບບັນຜູ້ຖືຮຸ້ນຕາມອັດຕາສ່ວນຈຳນວນຮຸ້ນທີ່ໄດ້ຖື.

21. ການຊື້ຮຸ້ນຄືນຂອງບໍລິສັດ

ກົດໝາຍວ່າດ້ວຍວິສາຫະກິດ ຫ້າມບໍລິສັດຊື້ຮຸ້ນຂອງຕົນເອງຄືນ.

22. ການຈົດທະບຽນຜູ້ຖືຮຸ້ນ

ນາຍທະບຽນຂອງບໍລິສັດຈະບັນທຶກຊື່ຂອງຜູ້ຖືຮຸ້ນໄວ້ໃນປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງບໍລິສັດ. ຂໍ້ມູນກ່ຽວກັບຜູ້ຖືຮຸ້ນຈະຢູ່ໃນປຶ້ມບັນຊີດັ່ງກ່າວ ແລະ ຈະຖືວ່າເປັນຫຼັກຖານທີ່ຖືກຕ້ອງທີ່ໃຊ້ອ້າງອີງເຖິງສິດໃນຮຸ້ນຂອງບໍລິສັດ.

ພາກ 3
ໃບຢັ້ງຢືນຄວາມຖືກຕ້ອງຂອງໜັງສືຊວນຊື້ສະບັບພາສາລາວ

1. ຢັ້ງຢືນຄວາມຖືກຕ້ອງໂດຍບໍລິສັດ

ພວກຂ້າພະເຈົ້າໄດ້ກວດກາຂໍ້ມູນທີ່ລະບຸໃນໜັງສືຊວນຊື້ສະບັບພາສາລາວ ພ້ອມດ້ວຍຄຳເຕືອນໃນນາມຕຳແໜ່ງ ຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) ຂໍຢັ້ງຢືນວ່າ ຂໍ້ມູນດັ່ງກ່າວແມ່ນຖືກຕ້ອງ ແລະ ສົມບູນ.

ເພື່ອເປັນຫຼັກຖານ, ພວກຂ້າພະເຈົ້າຂໍຢັ້ງຢືນອີກວ່າ ຂໍ້ມູນທັງໝົດແມ່ນເປັນເອກະສານທີ່ໄດ້ຮັບການຢັ້ງຢືນວ່າມີຈິງ ແລະ ຖືກຕ້ອງເປັນຊຸດດຽວກັນ. ພວກຂ້າພະເຈົ້າໄດ້ມອບສິດອຳນາດໃຫ້ ທ່ານ ບຸນອູ້ມ ສີວັນເພັງ ເຊັນກຳກັບໄວ້ໃນທຸກໜ້າຂອງ ເອກະສານ.ຖ້າຫາກເອກະສານໃດໜຶ່ງບໍ່ມີການເຊັນກຳກັບຂອງ ທ່ານ ບຸນອູ້ມ ສີວັນເພັງ ດັ່ງກ່າວມານັ້ນ, ພວກຂ້າພະເຈົ້າຈະຖືວ່າ ເອກະສານດັ່ງກ່າວບໍ່ແມ່ນຂໍ້ມູນທີ່ພວກຂ້າພະເຂົ້າໄດ້ມີການຢັ້ງຢືນແລ້ວ.

ຊື່	ຕຳແໜ່ງ	ລາຍເຊັນ
1. ທ່ານ ບຸນອູ້ມ ສີວັນເພັງ	ຜູ້ອຳນວຍການໃຫຍ່	

ເຊັນໂດຍຜູ້ອຳນວຍການຂອງບໍລິສັດ

ຊື່	ຕຳແໜ່ງ	ລາຍເຊັນ
1. ທ່ານ ດຣ. ຄຳມະນີ ອິນທິລາດ	ປະທານສະພາບໍລິຫານ	
2. ທ່ານ ສີສະຫວາດ ທິຣະວົງ	ຮອງປະທານສະພາບໍລິຫານ	
3. ທ່ານ ບຸນອູ້ມ ສີວັນເພັງ	ຜູ້ອຳນວຍການ	
4. ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການ	
5. ທ່ານ ບຸນມາ ມະນີວົງ	ຜູ້ອຳນວຍການ	
6. ທ່ານ ນາງ ອານິດາ ສະຫວັດດີ	ຜູ້ອຳນວຍການ	
7. ທ່ານ ສີຈາດ ບຸດຊາກົດຕິລາດ	ຜູ້ອຳນວຍການ	
8. ທ່ານ ຮສ. ດຣ. ກອງສີ ແສງມະນີ	ຜູ້ອຳນວຍການອິດສະຫຼະ	
9. ທ່ານ ສຈ. ດຣ. ຄຳລືຊາ ນວນສະຫວັນ	ຜູ້ອຳນວຍການອິດສະຫຼະ	
10. ທ່ານ ຮສ. ຄຳເຜີຍ ພົມມະຈັນ	ຜູ້ອຳນວຍການອິດສະຫຼະ	

ເຊັ່ນໂດຍຄະນະກວດສອບພາຍໃນ

ຊື່	ຕຳແໜ່ງ	ລາຍເຊັ່ນ
1. ທ່ານ ດຣ. ບຸນສະຫງອງ ສຸດທິດາຣາ	ປະທານ	

ເຊັ່ນໂດຍພະແນກການເງິນ

ຊື່	ຕຳແໜ່ງ	ລາຍເຊັ່ນ
1. ທ່ານ ອັນແສງ ອັນນະວົງ	ວ່າການຜູ້ອຳນວຍການ ຝ່າຍການເງິນ	

2. ໃບຢັ້ງຢືນຄວາມຖືກຕ້ອງຂອງບໍລິສັດຫຼັກຊັບ

ໜັງສືຊວນຊື້ສະບັບນີ້ ແມ່ນ ສ່ວນໜຶ່ງຂອງຂໍ້ມູນທີ່ນຳໃຊ້ເຂົ້າໃນການອອກຮຸ້ນໃໝ່ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ໂດຍທີ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ ໄດ້ກະກຽມໂດຍອີງຕາມສັນຍາດ້ວຍຄ້ຳປະກັນການຂາຍຮຸ້ນ.

ພວກຂ້າພະເຈົ້າຂໍຢັ້ງຢືນວ່າ ບົດວິເຄາະ, ການປະເມີນ, ແລະ ປະໂຫຍດໃນໜັງສືຊວນຊື້ສະບັບນີ້ ແມ່ນ ມີຈິງ,ຖືກຕ້ອງ ແລະ ອີງໃສ່ຂໍ້ມູນທີ່ຕອບສະໜອງໂດຍ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ

ຊື່	**ຕຳແໜ່ງ**	**ລາຍເຊັນ**
ທ່ານ ນາລິນ ສີລະວົງສິດ	ອຳນວຍການໃຫຍ່ (ຜູ້ບໍລິຫານຂັ້ນສູງ)	

ເອກະສານຊ້ອນທ້າຍ 1 ບົດລາຍງານດ້ານການເງິນ

ເອກະສານລາຍງານການເງິນ 31 ທັນວາ 2014

Financial Statement December 31st, 2014

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ເອກະສານລາຍງານການເງິນ
ສຳລັບປີການບັນຊີ ສິ້ນສຸດ ວັນທີ 31 ທັນວາ 2014

pwc

www.pwc.com/la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບປີການບັນຊີ ສິ້ນສຸດ ວັນທີ 31 ທັນວາ 2014

pwc

ບົດລາຍງານຂອງຜູ້ກວດສອບອິດສະລະ

ສະເໜີຕໍ່ສະພາບໍລິຫານ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ກວດສອບເອກະສານລາຍງານການເງິນ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ບໍລິສັດ), ເຊິ່ງປະກອບມີ ໃບສະຫລຸບຊັບສົມບັດ ໃນວັນທີ 31 ທັນວາ 2014 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ ແລະ ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດມື້ດຽວກັນ, ພ້ອມທັງ ບົດສະຫລຸບສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຂໍ້ມູນອື່ນ. ເອກະສານລາຍງານການເງິນໄດ້ຖືກກະກຽມໂດຍຜູ້ບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ ໃນບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນ.

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ

ຜູ້ບໍລິຫານ ມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນເຫຼົ່ານີ້ ໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ ໃນບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນ ເຊັ່ນ: ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ວາງອອກຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານຜິດພາດ ອັນເນື່ອງມາຈາການສໍ້ໂກງ ຫຼື ຂໍ້ຜິດພາດ.

ຄວາມຮັບຜິດຊອບຂອງຜູ້ກວດສອບ

ຄວາມຮັບຜິດຊອບຂອງພວກເຮົາ ແມ່ນເພື່ອສະແດງຄວາມເຫັນ ຕໍ່ເອກະສານລາຍງານການເງິນ ທີ່ພວກເຮົາໄດ້ກວດສອບ. ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ, ມາດຕະຖານດັ່ງກ່າວ ຮຽກຮ້ອງໃຫ້ປະຕິບັດຕາມ ຫຼັກຈັນຍາບັນ ແລະ ໃຫ້ມີການວາງແຜນການກວດສອບ ເພື່ອການຮັບປະກັນວ່າ ເອກະສານລາຍງານການເງິນ ດັ່ງກ່າວນີ້ ແມ່ນໄດ້ຖືກກະກຽມໂດຍປາສະຈາກລາຍການຜິດພາດ ທີ່ມີຄວາມສຳຄັນໂດຍທຽບຖານ.

ການກວດສອບຄັ້ງນີ້ ໄດ້ກວດສອບເອກະສານຫຼັກຖານ ກ່ຽວກັບ ຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນ ໃນເອກະສານລາຍງານການເງິນເຫຼົ່ານີ້. ວິທີການເລືອກເຟັ້ນກຸ່ມຕົວຢ່າງ ຂຶ້ນກັບການປະເມີນຂອງຜູ້ກວດສອບ ເຊິ່ງປະກອບດ້ວຍ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ມີຄວາມສຳຄັນໂດຍທຽບຖານ ຂອງເອກະສານລາຍງານການເງິນ ຫຼື ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ໃນການປະເມີນຄວາມສ່ຽງເຫຼົ່ານີ້, ຜູ້ກວດສອບ ໄດ້ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນ ທີ່ກ່ຽວກັບການສະເໜີຂໍ້ມູນເອກະສານລາຍງານການເງິນຂອງບໍລິສັດ ເພື່ອກຳນົດຂັ້ນຕອນໃນການກວດສອບ ທີ່ແທດເໝາະກັບສະພາບຕົວຈິງ ແຕ່ບໍ່ມີຈຸດປະສົງ ເພື່ອສະແດງຄວາມເຫັນ ກ່ຽວກັບ ປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ. ໃນການກວດສອບ ດັ່ງກ່າວແມ່ນລວມເອົາການຕີລາຄາຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງຕົວເລກຄາດຄະເນປະຕິບັດ ທີ່ສ້າງຂຶ້ນໂດຍຜູ້ບໍລິຫານ ລວມທັງການປະເມີນພາບລວມຂອງການກະກຽມ ເອກະສານລາຍງານການເງິນຂອງບໍລິສັດ.

ພວກເຮົາເຊື່ອວ່າ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ສົມເຫດສົມຜົນ ເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ.

pwc

ຄຳເຫັນ

ພວກເຮົາມີຄຳເຫັນວ່າ, ເອກະສານລາຍງານການເງິນ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2014. ຖືກກະກຽມຂຶ້ນຕາມອີງປະກອບທີ່ສຳຄັນໂດຍສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ ໃນບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນ.

ພື້ນຖານການບັນຊີ ແລະ ຂໍ້ຈຳກັດການນຳໃຊ້

ໂດຍທີ່ພວກເຮົາບໍ່ໄດ້ມີເງື່ອນໄຂໃນການອອກຄຳເຫັນ, ພວກເຮົາໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ອະທິບາຍເຖິງພື້ນຖານການບັນຊີ. ຫຼັກການ ການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບນະໂຍບາຍບັນຊີທີ່ຖືກຮັບຮອງໂດຍມາດຕະຖານຂອງປະເທດອື່ນ. ດັ່ງນັ້ນ ຜູ້ນຳໃຊ້ເອກະສານລາຍງານການເງິນສະບັບນີ້ ຄວນມີຄວາມເຂົ້າໃຈວ່າເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອທີ່ສະແດງ ໃນສະຫລຸບຊັບສິນສຸດ, ໃນລາຍງານຜົນໄດ້ຮັບ ແລະ ບົດລາຍງານກະແສເງິນສົດ ໃນປະເທດອື່ນ ຫລື ຂົງເຂດອື່ນ ນອກເໜືອຈາກ ສປປ ລາວ.

ບໍລິສັດ ພຣາຍສ໌ເຕີ້ເຮົ້າກຸບເປີ້ສ໌ (ລາວ) ຈຳກັດ.

ທ່ານ ໄພບູນ ຕົ້ນງາມ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 23 ມີນາ 2015

	ບົດອະທິບາຍ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ເງິນລົງທຶນໃນວິສາຫະກິດຂາຮຸ້ນ	4	610.357	571.745
ເງິນລົງທຶນໃນ ບໍລິສັດ ຮຸ້ນສ່ວນ	4	1.498.609	1.298.247
ເງິນລົງທຶນຈ່າຍລ່ວງໜ້າ	5	779.005	474.411
ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ	6	4.145.851	4.011.109
ຊັບສິນບໍ່ໝຸນວຽນອື່ນໆ		1.885	3.465
ລວມຊັບສິນບໍ່ໝຸນວຽນອື່ນໆ		7.035.707	6.358.977
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	7	1.251.534	159.914
ເງິນລົງທຶນໄລຍະສັ້ນ	8	20.000	20.000
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	9	502.382	519.355
ເຄື່ອງໃນສາງ, ສຸດທິ		4.043	3.020
ໜີ້ຕ້ອງຮັບອື່ນໆ		7.595	5.905
ລວມຊັບສິນໝຸນວຽນ		1.785.554	708.194
ລວມຍອດຊັບສິນ		8.821.261	7.067.171

ທ່ານ ບຸນອຸ້ມ ສີວັນເພັ້ງ
ຜູ້ອຳນວຍການໃຫຍ່
ວັນທີ: 23 MAR 2015

ທ່ານ ບຸນສະໜອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 23 MAR 2015

ບົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

	ປົດອະທິບາຍ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ທຶນ			
ທຶນຂອງຜູ້ຖືຮຸ້ນ			
ເງິນລົງທຶນ	10	4.904.867	4.904.867
ສ່ວນເພີ່ມມູນຄ່າຮຸ້ນ	10	142.229	142.229
ຄັງສະສົມຕາມລະບຽບການ	11	297.210	206.442
ຜົດຕ່າງຂອງການແປງຄ່າເອກະສານລາຍງານການເງິນ		(1.476)	7.001
ກຳໄລສະສົມ		978.811	744.348
ລວມທຶນ		6.321.641	6.004.887
ໜີ້ສິນ			
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ, ສຸດທິ	12	499.263	805.295
ຮຸ້ນກູ້, ສຸດທິ	13	1.575.862	-
ໜີ້ຕ້ອງຈ່າຍ ຂອງສັນຍາ SWAP, ສຸດທິ	14	11.105	-
ລວມໜີ້ສິນບໍ່ໝຸນວຽນ		2.086.230	805.295
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງຜູ້ສະໜອງ		174.589	30.823
ເງິນກູ້ຢືມໄລຍະຍາວ ເຖິງກຳນົດຈັດເປັນໄລຍະສັ້ນ	12	99.519	132.003
ໜີ້ຕ້ອງສົ່ງອື່ນໆ	16	134.936	66.077
ໜີ້ຕ້ອງສົ່ງອາກອນລາຍໄດ້	17	4.306	9.278
ໜີ້ສິນໝຸນວຽນອື່ນໆ	18	40	18.808
ລວມໜີ້ສິນໝຸນວຽນ		413.390	256.989
ລວມຍອດໜີ້ສິນ		2.499.620	1.062.284
ລວມຍອດທຶນຕົນເອງ ແລະ ໜີ້ສິນ		8.821.261	7.067.171

ທ່ານ ບຸນອຸ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
ວັນທີ: 23 MAR 2015

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 23 MAR 2015

ປົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

	ບົດອະທິບາຍ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຂາຍ		839.193	862.429
ຕົ້ນທຶນໃນການຂາຍ	19	(215.613)	(203.935)
ກຳໄລ		623.580	658.494
ລາຍຮັບອື່ນໆ		5.680	6.700
ລາຍຈ່າຍຄ່າບໍລິຫານ	19	(123.528)	(113.489)
ກຳໄລ/(ຂາດທຶນ) ອັດຕາແລກປ່ຽນ, ສຸດທິ		(18.098)	24.463
ລາຍຈ່າຍດອກເບ້ຍ	20	(31.722)	(30.845)
ກຳໄລຂອງຮຸ້ນຂອງເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	4	474.467	453.746
ກຳໄລ ກ່ອນອາກອນກຳໄລ		930.379	999.069
ອາກອນກຳໄລ	21	(22.695)	(27.327)
ກຳໄລສຸດທິສຳລັບປີ		907.684	971.742
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	22	740,36	792,61

ທ່ານ ບຸນອຸ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
ວັນທີ: 23 MAR 2015

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 23 MAR 2015

ບົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

		ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2014					
	ບົດອະທິບາຍ	ຮຸ້ນທຶນ/ທຶນຈົດທະບຽນ (ໝາຍເຫດ 10) ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ (ໝາຍເຫດ 10) ລ້ານກີບ	ຖັງສະສົມຕາມ ລະບຽບການ (ໝາຍເຫດ 11) ລ້ານກີບ	ຜົດຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ ລ້ານກີບ	ກຳໄລ ສ່ຳ້າແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຮອດ ວັນທີ 1 ມັງກອນ 2014		4.904.867	142.229	206.442	7.001	774.348	6.004.887
ກຳໄລສຸດທິ ໃນຮອບເວລາລາຍງານ		-	-	-	-	907.684	907.684
ການອອກຮຸ້ນເພີ່ມທຶນ		-	-	-	-	-	-
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	(8.477)	-	(8.477)
ເງິນປັນຜົນຈ່າຍ	23	-	-	-	-	(582.453)	(582.453)
ໂອນເຂົ້າຖັງສະສົມ	11	-	-	90.768	-	(90.768)	-
ຮອດ ວັນທີ 31 ທັນວາ 2014		4.904.867	142.229	297.210	(1.476)	978.811	6.321.641

		ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2013					
	ບົດອະທິບາຍ	ຮຸ້ນທຶນ/ທຶນຈົດທະບຽນ (ໝາຍເຫດ 10) ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ (ໝາຍເຫດ 10) ລ້ານກີບ	ຖັງສະສົມຕາມ ລະບຽບການ (ໝາຍເຫດ 11) ລ້ານກີບ	ຜົດຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ ລ້ານກີບ	ກຳໄລ ສ່ຳ້າແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຮອດ ວັນທີ 1 ມັງກອນ 2013		4.904.867	142.229	109.268	(324)	436.292	5.592.332
ກຳໄລສຸດທິ ໃນຮອບເວລາລາຍງານ		-	-	-	-	971.472	971.742
ການອອກຮຸ້ນເພີ່ມທຶນ				-		-	-
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	7.325	-	7.325
ຈ່າຍເງິນປັນຜົນ	23	-	-	-	-	(566.512)	(566.512)
ໂອນເຂົ້າຖັງສະສົມ	11	-	-	97.174	-	(97.174)	-
ຮອດ ວັນທີ 31 ທັນວາ 2013		4.904.867	142.229	206.442	7.001	744.348	6.004.887

ທ່ານ ບຸນອຸ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
ວັນທີ: 23 MAR 2015

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 23 MAR 2015

ບົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

	ບົດອະທິບາຍ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນກຳໄລ		930.379	999.069
ປັບປຸງ			
ຄ່າຊົນເສຍມູນຄ່າ	13	222	-
ຕັດຄ່າຫຸ້ຍຫ້ຽນ	6	181.555	167.060
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ, ສຸດທິ		(11.555)	(25.753)
ກຳໄລຮຸ້ນ ຈາກເງິນລົງທຶນ	4	(474.467)	(453.746)
ລາຍຈ່າຍການເງິນ		31.722	30.845
ກະແສເງິນສົດຈາກ ການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		657.856	717.475
ການປ່ຽນແປງຈາກ ການດຳເນີນງານ ຊັບສິນ ແລະ ໜີ້ສິນ			
- ການເພີ່ມຂອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		16.973	(105.722)
- ການເພີ່ມຂອງເຄື່ອງໃນສາງ		(1.021)	108
- ຊັບສິນໝຸນວຽນອື່ນໆ		(1.691)	(4.100)
- ໜີ້ຕ້ອງສົ່ງ		(30.373)	(34.520)
- ຊັບສິນອື່ນໆ		1.579	1.732
- ໜີ້ສິນໝຸນວຽນອື່ນໆ		(18.767)	15.537
- ໜີ້ຄ້າງຈ່າຍ		50.934	43.945
ກະແສເງິນສົດທີ່ກຳເນີດຈາກການດຳເນີນງານ		675.490	634.455
ອາກອນກຳໄລທີ່ໄດ້ຈ່າຍ	17	(27.668)	(24.878)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		647.822	609.577
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ການເພີ່ມຂອງເງິນລົງທຶນຈ່າຍລ່ວງໜ້າ	5	(304.594)	(95.410)
ຊື້ຊັບສິນບັດພາຍໃຕ້ສັນຍາສຳປະທານ	6	(142.162)	(168.379)
ຊື້ເງິນລົງທຶນໄລຍະສັ້ນ, ສຸດທິ	8	(20.000)	(20.000)
ການເພີ່ມຂອງເງິນລົງທຶນໄລຍະສັ້ນ, ສຸດທິ	8	20.000	40.000
ຮັບເງິນປັນຜົນ	4	227.016	313.129
ເງິນສົດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ		(219.740)	69.340

ບົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

	ບົດອະທິບາຍ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ການເພີ່ມຂອງເງິນກູ້ຍືມໄລຍະຍາວ	12	-	90.113
ຈ່າຍເງິນກູ້ຍືມໄລຍະຍາວ	12	(333.145)	(174.663)
ຮັບເງິນຈາກເງິນກູ້ຍືມໄລຍະສັ້ນ	15	160.000	-
ຈ່າຍເງິນກູ້ຍືມໄລຍະສັ້ນ	15	(160.000)	-
ຮັບເງິນຈາກຮຸ້ນກູ້	13	1.616.810	-
ຕົ້ນທຶນການອອກຮຸ້ນກູ້		(17.734)	-
ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ	23	(436.840)	(424.884)
ຈ່າຍເງິນປັນຜົນ	23	(145.613)	(141.628)
ຈ່າຍດອກເບ້ຍ		(30.733)	(31.696)
ເງິນສົດສຸດທິ ຈາກກິດຈະກຳການເງິນ		652.745	(682.758)
ການຫຼຸດລົງສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		1.080.827	(3.841)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ		159.914	164.511
ຜົນຂອງອັດຕາແລກປ່ຽນ ປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		10.793	(756)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ	7	1.251.534	159.914
ລາຍການບໍ່ແມ່ນເງິນສົດ			
ໜີ້ສິນອື່ນໆ ສຳລັບການຊື້ຊັບສິນຍັງບໍ່ທັນໄດ້ສັນຍາສຳປະທານ	6	174.135	64.890
ເຈົ້າໜີ້ຄ້າງຄ່າໃຊ້ຈ່າຍໃນການອອກຮຸ້ນກູ້		16.936	-

ທ່ານ ບຸນອຸ້ມ ສີວັນເພັງ
ຜູ້ອຳນວຍການໃຫຍ່
ວັນທີ: 23 MAR 2015

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 23 MAR 2015

ບົດອະທິບາຍເອກະສານລາຍງານການເງິນແຕ່ໜ້າ 9 ເຖິງ ໜ້າ 44 ເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ

1. ຂໍ້ມູນທົ່ວໄປ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ" ຫຼື "ຜ ຟຟລ") ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນ ເຂົ້າໃນ ຕະຫຼາດ ຫຼັກຊັບ ແຫ່ງ ສປປ ລາວ ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 (ວັນສ້າງຕັ້ງບໍລິສັດ).

ໃນວັນທີ 15 ທັນວາ 2010, ກ່ຍ້ງແມ່ນວັນທີ ເລີ່ມດຳເນີນທຸລະກິດຂອງ ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ ຕາມ ການໂອນ ຊັບສິນ ແລະ ໜີ້ສິນທີ່ກ່ຽວຂ້ອງ, ສັນຍາສຳປະທານ, ສັນຍາຊື້ຂາຍໄຟຟ້າ ກັບ ລັດວິສາຫະກິດ ໄຟຟ້າ ລາວ (ຟຟລ ຫຼື ບໍລິສັດແມ່).

ບໍລິສັດ ໄດ້ເລີ່ມດຳເນີນທຸລະກິດໄຟຟ້າ ນັບແຕ່ມື້ໂອນຊັບສິນ ຈາກບໍລິສັດ ຟຟລ ແລະ ບໍລິສັດຈະຂາຍໄຟຟ້າທັງໝົດ ໃຫ້ກັບລັດຖະບານ ສປປ ລາວ ຕາມການຕົກລົງ ແລະ ເງື່ອນໄຂທ່ວງໄວ້. ຊັບສິນຕົ້ນຕໍ ທີ່ສະເໜີໂອນ ມີເຂື່ອນໄຟຟ້າ 7 ແຫ່ງ ພາຍໃຕ້ການສຳປະທານ 30 ປີ ເຂື່ອນໄຟຟ້າ 7 ແຫ່ງດັ່ງກ່າວນີ້ ລວມມີເຂື່ອນນ້ຳງຶມ 1, ເຂື່ອນນ້ຳເລີກ, ເຂື່ອນ ນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບໍ.

ນອກຈາກນີ້, ບໍລິສັດ ໄດ້ສືບຕໍ່ຊື້ໂຄງການ ແລະ ສ້າງບໍລິສັດຮ່ວມລົງທຶນໃໝ່ທີ່ມີຄູ່ສັນຍາທີ່ກ່ຽວຂ້ອງລວມທັງ 4 ຜູ້ຜະລິດພະລັງງານໄຟຟ້າເອກະລາດ ຈາກ ຟຟລ ໃນປີ 2012 ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍ ຂໍ້ທີ 4 ແລະ ບາງໂຄງການພາຍໃຕ້ບົດບັນທຶກຄວາມເຂົ້າໃຈກັບ ລັດວິສາຫະກິດ ໄຟຟ້າລາວ ທີ່ໄດ້ເປີດເຜີຍໃນບົດອະທິບາຍ ຂໍ້ທີ 5.

ທີ່ຢູ່ ລົງທະບຽນ ຂອງ ບໍລິສັດ ມີດັ່ງລຸ່ມນີ້:

ອາຄານ ລັດວິສາຫະກິດ ໄຟຟ້າລາວ ສຳນັກງານໃຫຍ່, ຊັ້ນ 7
ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງຫາງ, ເມືອງ ສີສັດຕະນາກ
ຕູ້ ປ.ນ 2392 ນະຄອນຫຼວງວຽງຈັນ, ສປປ ລາວ

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບແຫ່ງ ສປປ ລາວ ໃນວັນທີ 11 ມັງກອນ 2011 ແລະ ໄດ້ເປີດຊື້-ຂາຍຮຸ້ນ ເປັນມື້ທຳອິດ.

ເອກະສານລາຍງານການເງິນ ໄດ້ຮັບອະນຸມັດໂດຍສະພາຜູ້ບໍລິຫານ ລົງວັນທີ 23 ມີນາ 2015.

ກ) ການສ້າງຕັ້ງບໍລິສັດ

ການສ້າງຕັ້ງບໍລິສັດ ທຳອິດແມ່ນເລີ່ມຕົ້ນຈາກ ລັດວິສາຫະກິດໄຟຟ້າລາວ ເຊິ່ງຈັດຕັ້ງຂຶ້ນໃໝ່ດ້ານທຸລະກິດ ພະລັງງານຈາກລັດວິສາຫະກິດ ໄຟຟ້າລາວ ໂດຍການໂອນຊັບສິນທີ່ມີຢູ່ຂອງຕົນ ຕາມຂໍ້ຕົກລົງຂອງສຳນັກງານ ນາຍົກລັດຖະມົນຕີ (ສນຍ) ໃນເມື່ອກ່ອນ, ເລກທີ 180 ລົງວັນທີ 13 ທັນວາ 2010 ແລະ ສນຍ ອະນຸມັດ ໃຫ້ລັດວິສາຫະກິດ ໄຟຟ້າລາວ ສາມາດຂາຍຮຸ້ນໃນໂຄງການ ພະລັງງານໄຟຟ້າເອກະລາດໃຫ້ແກ່ບໍລິສັດ.

1. ຂໍ້ມູນທົ່ວໄປ (ຕໍ່)

ຂ) ການໂອນຊັບສິນການດຳເນີນງານ, ຊັບສິນອື່ນໆ ແລະ ໜີ້ສິນທີ່ກ່ຽວຂ້ອງ ກັບທຸລະກິດ

ໃນວັນທີ 15 ທັນວາ 2010, ວັນສ້າງຕັ້ງບໍລິສັດ ຟຟລ ໄດ້ໂອນຊັບສິນການດຳເນີນງານ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນພະລັງນ້ຳ ຕາມມູນຄ່າຕາມບັນຊີສຸດທ້າ ໃນວັນທີ 20 ຕຸລາ 2010 ໃຫ້ບໍລິສັດ ເປັນ ຈຳນວນລວມ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ກິດຈະກຳກ່ຽວກັບລະບົບສາຍສົ່ງ ແລະ ການກະຈາຍ ໄຟຟ້າທີ່ຜະລິດໄດ້ຈາກຊັບສິນການດຳເນີນງານກັບຜູ້ໃຊ້ໄຟຟ້າ ນັບຕັ້ງແຕ່ວັນທີ 15 ທັນວາ 2010, ບໍລິສັດ ໄດ້ດຳເນີນການຜະລິດໄຟຟ້າຂອງຕົນໂດຍອີງໃສ່ຊັບສິນທີ່ໂອນດັ່ງກ່າວເພື່ອສະໜອງໄຟຟ້າທີ່ຜະລິດກັບ ຟຟລ.

ຄ) ສັນຍາ ທີ່ສຳຄັນຕ່າງໆ

ສັນຍາທີ່ສຳຄັນທີ່ກ່ຽວຂ້ອງໃນການດຳເນີນທຸລະກິດຂອງບໍລິສັດ ມີດັ່ງລຸ່ມນີ້:

i) ສັນຍາສຳປະທານ ("CA")

ໃນວັນທີ 15 ທັນວາ 2010 ບໍລິສັດ ໄດ້ເຮັດສັນຍາສຳປະທານ ເຊິ່ງມີການແກ້ໄຂ ສັນຍາສຳປະທານໃໝ່ ໃນວັນທີ 24 ກໍລະກົດ 2013 ("CA") ກັບລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("GOL") ເຊິ່ງຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ("MPI"). ສັນຍາສຳປະທານ ແມ່ນໄດ້ ກຳນົດໃຫ້ເວລາສຳປະທານ 30 ປີ ແລະ ສາມາດຕໍ່ອາຍຸສຳປະທານໄດ້ອີກ 10 ປີ ສຳລັບໂຄງການໂຮງໄຟຟ້າ ຄື ດັ່ງທີ່ອະທິບາຍໃນບົດອະທິບາຍຂໍ້ 1 (ຂ) ເມື່ອສິ້ນສຸດໄລຍະເວລາສຳປະທານແລ້ວ ບໍລິສັດ ຈະຕ້ອງໄດ້ໂອນ ສິດ, ກຳມະສິດ ແລະ ຜົນປະໂຫຍດ ຂອງໂຄງການ ລວມທັ້ງ ຊັບສິນຕ່າງໆ ທີ່ຄອບຄອງໂດຍບໍລິສັດ ໃນການ ດຳເນີນງານ ໃຫ້ແກ່ລັດຖະບານ ຫຼື ຜູ້ຕາງໜ້າ ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ດັ່ງທີ່ໄດ້ກຳນົດໄວ້ໃນສັນຍາສຳ ປະທານ.

ພາຍໃຕ້ສັນຍາສຳປະທານນີ້, ລັດຖະບານຍິນຍອມໃຫ້ບໍລິສັດມີສິດແຕ່ພຽງຜູ້ດຽວໃນຊ່ວງໄລຍະເວລາໃນການ ສຳປະທານ. ສິດທີ່ສຳຄັນພາຍໃຕ້ສັນຍາສຳປະທານ ລວມມີ 1) ສິດເປັນເຈົ້າຂອງ, ດຳເນີນງານ ແລະ ບຳລຸງ ຮັກສາສິ່ງອຳນວຍຄວາມສະດວກຂອງໂຄງການ ແລະ ຊັບສົມບັດອື່ນໆ ຫຼື ຊັບສິນທີ່ບໍລິສັດ ໄດ້ມາ, 2) ສິດນຳໃຊ້ເຂື່ອນ, ສັນເຂື່ອນ ແລະ ແມ່ນ້ຳ, 3) ສິດໃນການຂາຍໄຟຟ້າໃຫ້ກັບລັດວິສາຫະກິດ ໄຟຟ້າລາວ, 4) ເສຍອາກອນກຳໄລ 10%. 5) ຄ່າທຳນຽມ (ຄ່າພາກຫລວງ) 1% ຈາກຍອດຂາຍໄຟຟ້າ.

ພ້ອມກັນນັ້ນ ບໍລິສັດ ໄດ້ຖືກຮຽກຮ້ອງໃຫ້ປະຕິບັດ ຕາມໜ້າຍຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ເຊິ່ງລວມມີຢູ່ ໃນສັນຍາສຳປະທານສະບັບນີ້, ແຕ່ບໍ່ຈຳກັດ ການກໍ່ສ້າງ, ການປະກອບທຶນ, ຄ່າທຳນຽມ, ສຸຂະພາບ ແລະ ຄວາມປອດໄພ, ອາກອນ ແລະ ຄ່າຊົ່ຳທີ່ດິນ. ຈ່າຍອາກອນມູນຄ່າເພີ່ມ ໃນສ່ວນຂອງອຸປະກອນໄຟຟ້າ ທີ່ ເຮັດໃຫ້ ຟຟລ.

1. ຂໍ້ມູນທົ່ວໄປ (ຕໍ່)

ຄ) ສັນຍາ ທີ່ສຳຄັນຕ່າງໆ (ຕໍ່)

ii) ສັນຍາການຮັບຊື້ໄຟຟ້າ ("PPA")

ໃນວັນທີ 15 ທັນວາ 2010 ແລະ ໃນວັນທີ 9 ທັນວາ 2011 ບໍລິສັດ ໄດ້ເຮັດສັນຍາຊື້-ຂາຍ ໄຟຟ້າ ("PPA") ກັບ ຟຟລ ຕາມລຳດັບ, ສັນຍາດັ່ງກ່າວ ມີໄລຍະເວລາ 30 ປີ ແລະ ສາມາດຕໍ່ອາຍຸໄດ້ 10 ປີ ຄືກັນກັບສັນຍາສຳປະທານ.

ແຫຼ່ງຂອງລາຍຮັບຕົ້ນຕໍຂອງບໍລິສັດ ແມ່ນການຂາຍໄຟຟ້າ ໃຫ້ລັດວິສາຫະກິດ ໄຟຟ້າ ລາວ ຕາມສັນຍາ ຊື້-ຂາຍ ໄຟຟ້າ ທີ່ຜະລິດຈາກຊັບສິນທີ່ມີຢູ່. ການຂາຍກະແສໄຟຟ້າ ແມ່ນຂຶ້ນກັບ ອັດຕາຄ່າໄຟຟ້າ ທີ່ໄດ້ຕົກລົງກັບ ຟຟລ ແລະ ກຳນົດໄວ້ໃນສັນຍາຊື້-ຂາຍ ໄຟຟ້າ ສຳລັບແຕ່ລະຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ.

ພາຍໃຕ້ສັນຍາຊື້-ຂາຍໄຟຟ້າ ສະບັບນີ້, ບໍລິສັດ ມີຂໍ້ຜູກພັນ ຫຼື ຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂ ດັ່ງຕໍ່ໄປນີ້ : 1) ບໍລິສັດ ຈະຕ້ອງຮັບຜິດຊອບໃນການດຳເນີນງານ ແລະ ການບຳລຸງຮັກສາກຳລັງການຜະລິດ ພາຍໃຕ້ການດຳເນີນງານປົກກະຕິ ທີ່ໄດ້ຕົກລົງໄວ້ໃນສັນຍາຕະຫຼອດໄລຍະເວລາຂອງສັນຍາຊື້-ຂາຍໄຟຟ້າ, 2) ບໍລິສັດ ຈະຕ້ອງບໍ່ໃຫ້ພາກສ່ວນທີສາມ ມີສິດໃນການສະໜອງ ຫຼື ໃຊ້ພະລັງງານໄຟຟ້າ ທີ່ເກີດຈາກສິ່ງ ອຳນວຍຄວາມສະດວກໃດໆ ໃນຕະຫຼອດໄລຍະເວລາ ສັນຍາຊື້-ຂາຍໄຟຟ້າ, 3) ບໍລິສັດ ມີພັນທະວ່າງແຜນ ຜະລິດໄຟຟ້າ ຈາກສິ່ງອຳນວຍຄວາມສະດວກ ຫຼື ລະບົບຕາຂ່າຍ ຂອງ ຟຟລ ກ່ອນການ ຕົກລົງຊື້-ຂາຍ ໄຟຟ້າໃນແຕ່ລະປີ, 4) ຮັບການຊຳລະຈາກ ຟຟລ ຂອງການຈຳໜ່າຍໄຟຟ້າສຸດທິ, 5) ເງື່ອນໄຂການຊຳລະ, ຟຟລ ສາມາດແບ່ງຊຳລະເປັນງວດ ແລະ ຍອດເຫຼືອຄ້າງຊຳລະ ໃຫ້ຫັກທົດແທນກັບເງິນປັນຜົນຕ້ອງຈ່າຍ ທີ່ ປະກາດໂດຍບໍລິສັດ ໃນແຕ່ລະປີ, 6) ບໍລິສັດ ເຫັນດີຈະອຳນວຍຄວາມສະດວກໃນການສະໜອງໄຟຟ້າທີ່ ຜະລິດ ໃຫ້ກັບ ຟຟລ ບໍ່ຕ່ຳກວ່າ 90% ທີ່ໄດ້ແຈ້ງໄວ້ໂດຍລວມເຖິງການຜະລິດໄຟຟ້າທັງໝົດ ຂອງການສົ່ງ ໄຟຟ້າ ແລະ ການລົ້ມເຫຼວ ຂອງຜົນຜະລິດໄຟຟ້າ ຟຟລ ໄດ້ຕົກລົງຊື້ ຈາກບໍລິສັດບໍ່ຕ່ຳກວ່າ 90%, 7) ຖ້າຫາກວ່າອັດຕາແລກປ່ຽນຕາມທີ່ໄດ້ຕົກລົງໃນສັນຍາມີການປ່ຽນແປງ ບໍລິສັດທັ້ງສອງສາມາດມາຕົກລົງ ອັດຕາຄ່າໄຟຟ້າຄືນໃໝ່.

iii) ສັນຍາຂໍ້ຕົກລົງການຊຳລະໜີ້

ບໍລິສັດ ໄດ້ເຮັດຂໍ້ຕົກລົງ ການຊຳລະໜີ້ ("ຂໍ້ຕົກລົງ") ກັບ ຟຟລ ໃນວັນທີ 15 ທັນວາ 2010. ຟຟລ ຄືຜູ້ກູ້ ຢືມຕາມສັນຍາເງິນກູ້ກັບລັດຖະບານແຫ່ງ ສປປ ລາວ ເຊິ່ງໄດ້ເງິນຈາກຜູ້ໃຫ້ກູ້ຫຼາຍແຫຼ່ງ ແລະ ໃຫ້ຜ່ານ ລັດຖະບານ. ນອກຈາກການໂອນຊັບສິນໃຫ້, ບໍລິສັດ ໄດ້ຕົກລົງກັບ ຟຟລ ວ່າຈະຊຳລະໜີ້ ໃຫ້ ຟຟລ ແລະ ຟຟລ ຈະຊຳລະເງິນດັ່ງກ່າວໄປໃຫ້ລັດຖະບານ ແຫ່ງ ສປປ ລາວ, ເຊິ່ງອີງຕາມ ສັນຍາກູ້ຢືມ ຕໍ່ຈາກລັດຖະບານ ເງິນກູ້ເຫຼົ່ານີ້ ແມ່ນບໍ່ມີຫຼັກປະກັນ ແລະ ບໍ່ມີພັນທະໃດໆ ນອກເໜືອຈາກການຊຳລະຕາມຕາຕະລາງເງິນກູ້.

1. ຂໍ້ມູນທົ່ວໄປ (ຕໍ່)

ຄ) ສັນຍາ ທີ່ສຳຄັນຕ່າງໆ (ຕໍ່)

iii) ສັນຍາຂໍ້ຕົກລົງການຊຳລະໜີ້ (ຕໍ່)

ໃນວັນທີ 28 ກຸມພາ 2013. ບໍລິສັດ ໄດ້ເຮັດສັນຍາຂໍ້ຕົກລົງການຊຳລະໜີ້ ກັບ ຟຟລ ໂດຍທີ ຟຟລ ຄືຜູ້ກູ້ຢືມຕາມສັນຍາເງິນກູ້ຢືມເພື່ອໃຊ້ໃນ ໂຄງການກໍ່ສ້າງເຂື່ອນນ້ຳຊອງ ພາຍໃຕ້ສັນຍາເງິນໃຫ້ກູ້ຢືມຕໍ່ ເລກທີ 0229/ຟຟລ, ລົງວັນທີ 21 ມັງກອນ 2013 ກັບລັດຖະບານແຫ່ງ ສປປ ລາວ ເຊິ່ງໄດ້ຈາກ ທະນາຄານ ຂາອອກ-ຂາເຂົ້າ ແຫ່ງປະເທດອິນເດຍ (ຜູ້ໃຫ້ກູ້). ນອກຈາກການໂອນຊັບສິນໃຫ້, ບໍລິສັດ ໄດ້ຕົກລົງກັບ ຟຟລ ວ່າຈະຊຳລະໜີ້ ໃຫ້ ຟຟລ ແລະ ຟຟລ ຈະຊຳລະເງິນດັ່ງກ່າວໄປໃຫ້ລັດຖະບານ ແຫ່ງ ສປປ ລາວ, ເຊິ່ງອີງຕາມ ສັນຍາກູ້ຢືມ ຕົ້ນສະບັບກັບລັດຖະບານ ເງິນກູ້ເຫຼົ່ານີ້ ແມ່ນບໍ່ມີຫຼັກປະກັນ ແລະ ບໍ່ມີພັນທະໃດໆ ນອກເໜືອຈາກການຊຳລະ ຕາມຕາຕະລາງເງິນກູ້.

iv) ການໂອນພະນັກງານຈາກ ລັດວິສາຫະກິດ ໄຟຟ້າລາວ

ພາຍຫຼັງສ້າງຕັ້ງ, ພະນັກງານ ຂອງ ຟຟລ ທີ່ດຳເນີນການຜະລິດ ຈະຖືກໂອນໄປເຮັດວຽກໃຫ້ບໍລິສັດ ພາຍໃຕ້ເງື່ອນໄຂຂໍ້ຕົກລົງຂອງການໂອນພະນັກງານຕາມສັນຍາທີ່ໄດ້ຖືກສ້າງຂຶ້ນສະບັບຫຼ້າສຸດ, ໃນວັນທີ 28 ກຸມພາ 2011, ພະນັກງານທີ່ຖືກໂອນມາຈາກ ຟຟລ ແມ່ນໄດ້ເຊັນສັນຍາວ່າຈ້າງ ກັບບໍລິສັດໃໝ່ ເຊິ່ງເນື້ອໃນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຕ່າງໆ ແມ່ນບໍ່ມີການປ່ຽນແປງຈາກບໍລິສັດເດີມ.

v) ສັນຍາການເຊົ່າທີ່ດິນ

ອີງຕາມເອກະສານແຈ້ງການ ຂອງ ສນຍ ເລກທີ 180 ລົງວັນທີ 13 ທັນວາ 2010 ອະນຸມັດໃຫ້ ບໍລິສັດ ມີສິດ ນຳໃຊ້ທີ່ດິນ ເພື່ອການດຳເນີນກິດຈະການຜະລິດໄຟຟ້າ. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ ແລະ ບໍລິສັດ ກຳລັງຢູ່ໃນຂັ້ນຕອນການສຳຫຼວດ ແລະ ຮ່າງສັນຍາເຊົ່າທີ່ດິນ. ຄ່າເຊົ່າຈະຖືກບັນທຶກ ເມື່ອ ທັງສອງຝ່າຍຕົກລົງເຫັນດີກ່ຽວກັບຂໍ້ກຳນົດ ແລະ ເງື່ອນໄຂ ສັນຍາເຊົ່າທີ່ດິນ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນ (ສັນຍາ) ໃນ 30 ມັງກອນ 2014. ອີງຕາມສັນຍາ, ບໍລິສັດມີສິດທິໃນການນຳໃຊ້ທີ່ດິນ 30 ປີ ສຳລັບການດຳເນີນ ທຸລະກິດ, ໄດ້ເລີ່ມຕົ້ນຈາກວັນທີ ທີ່ເຊັນສັນຍາ. ພັນທະຂອງຄ່າເຊົ່າແມ່ນໄດ້ອະທິບາຍໄວ້ ໃນ ບົດອະທິບາຍຂໍ້ 25.

1. ຂໍ້ມູນທົ່ວໄປ (ຕໍ່)

ຄ) ສັນຍາ ທີ່ສຳຄັນຕ່າງໆ (ຕໍ່)

vi) ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ຫ້ວຍລຳພັນໃຫຍ່ ແລະ ນ້ຳຄານ 2 (ໂຄງການ)

ໃນວັນທີ 8 ກໍລະກົດ 2011, ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການມອບໂອນຊັບສິນຂອງໂຄງການ ຫ້ວຍລຳພັນໃຫຍ່ ແລະ ນ້ຳຄານ 2. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຟຟລ ມີຈຸດປະສົງ ຈະໂອນບັນດາຊັບສິນທັງໝົດຂອງໂຄງການທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ ຫຼື ເລືອກເອົາອັນໃດໜຶ່ງ ຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ : i) ບໍລິສັດເຫັນດີ ທີ່ຈະຫົດແທນຄືນທຸກຄ່າໃຊ້ຈ່າຍ ໂດຍ ຟຟລ ຈົນເຖິງປະຈຸບັນ ຫຼື ກຳລັງເກີດຂຶ້ນອີກ ຈົນກວ່າຈະສຳເລັດ ແລະ ໂອນກຳມະສິດຂອງໂຄງການໃຫ້ກັບ ບໍລິສັດ, ii) ບໍລິສັດ ຈະຮັບຜິດຊອບຈ່າຍຫົດແທນຄືນລາຍຈ່າຍ, ລາຍຈ່າຍໆ ລ່ວງໜ້າ, ລາຍຈ່າຍທີ່ ສືບຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງຈະເກີດຂຶ້ນອີກ ໃຫ້ ຟຟລ ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້. ທຸກພັນທະທາງດ້ານການເງິນ ໃນຕໍ່ໜ້າຂອງ ຟຟລ ທີ່ກ່ຽວພັນກັບໂຄງການແມ່ນອາດຈະຂຶ້ນກັບການກຳນົດຕາມສັນຍາ ບໍລິສັດ ຄາດຄະເນວ່າຈະສາມາດສັງລວມໂຄງການເຫຼົ່ານີ້ກັບທຸກຄົນທີ່ສຳຄັນທີ່ກ່ຽວຂ້ອງໃນທ້າຍປີ 2015.

ໃນວັນທີ 31 ທັນວາ 2014 ບໍລິສັດ ໄດ້ຈ່າຍເງິນທີ່ກ່ຽວຂ້ອງກັບ ບົດບັນທຶກຄວາມເຂົ້າໃຈ ທີ່ກ່າວ ໄວ້ໃນ ຂ້າງເທິງເປັນຈຳນວນເງິນ 577.726 ລ້ານກີບ (2013: 432.313 ລ້ານກີບ) (ບົດອະທິບາຍ ຂໍ້ທີ 5).

vii) ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ນ້ຳງື່ມ 5

ໃນວັນທີ 20 ກຸມພາ 2012, ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈສຳລັບການໂອນຮຸ້ນຂອງ ບໍລິສັດ ໄຟຟ້ານ້ຳງື່ມ 5 ຈຳກັດ.

ທັງສອງພາກສ່ວນເຫັນດີທີ່ຈະໂອນຮຸ້ນ ແລະ ຜົນປະໂຫຍດຂອງບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ ພາຍໃນວັນ ທີ 31 ທັນວາ 2014. ບໍລິສັດ ແມ່ນຖືກຮຽກຮ້ອງໃຫ້ຈ່າຍ i) ຈ່າຍເງິນລ່ວງໜ້າ ຈຳນວນ 2.000.000 ໂດລາສະຫະລັດ ii) ມູນຄ່າຍັງເຫຼືອຂອງໂຄງການ, ເງິນລ່ວງໜ້າເພີ່ມເຕີມ ຫຼື ສ່ວນຕ່າງທີ່ເກີດຂຶ້ນ ຫາກມີ ຫຼື ໄດ້ຈ່າຍເງິນຕາມສັນຍາໂອນຮຸ້ນ.

ໃນວັນທີ 31 ທັນວາ 2014, ບໍລິສັດ ມີລາຍຈ່າຍທີ່ຈຳເປັນເຊິ່ງກ່ຽວຂ້ອງກັບບົດບັນທຶກຄວາມເຂົ້າໃຈຂ້າງເທິງນີ້ ຈຳນວນ 5.250.000 ໂດລາສະຫະລັດ ຫຼື ທຽບເທົ່າ 42.098 ລ້ານກີບ (ບົດອະທິບາຍຂໍ້ 5).

1. ຂໍ້ມູນທົ່ວໄປ (ຕໍ່)

ຄ) ສັນຍາ ທີ່ສຳຄັນຕ່າງໆ (ຕໍ່)

viii) ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ນ້ຳສະນາ

ໃນວັນທີ 12 ກຸມພາ 2014, ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການມອບໂອນຊັບສິນຂອງໂຄງການ ນ້ຳສະນາ. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຟຟລ ມີຈຸດປະສົງຈະໂອນບັນດາຊັບສິນທັງໝົດຂອງໂຄງການທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ ຫຼື ເລືອກເອົາວັນໃດໜຶ່ງ ຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ: i) ບໍລິສັດເຫັນດີ ທີ່ຈະຫົດແທນຄືນທຸກຄ່າໃຊ້ຈ່າຍ ໂດຍ ຟຟລ ຈົນເຖິງປະຈຸບັນ ຫຼື ກຳລັງເກີດຂຶ້ນອີກຈົນກວ່າຈະສຳເລັດ ແລະ ໂອນກຳມະສິດຂອງໂຄງການໃຫ້ກັບບໍລິສັດ, ii) ບໍລິສັດ ຈະຮັບຜິດຊອບຈ່າຍຫົດແທນຄືນລາຍຈ່າຍ, ລາຍຈ່າຍໆ ລ່ວງໜ້າ, ລາຍຈ່າຍທີ່ ສືບຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງຈະເກີດຂຶ້ນອີກ ໃຫ້ ຟຟລ ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້ ທຸກພັນທະທາງດ້ານການເງິນໃນ ຕ່ໜ້າຂອງ ຟຟລ ທີ່ກ່ຽວພັນກັບໂຄງການ ແມ່ນອາດຈະຂຶ້ນກັບການກຳນົດຕາມສັນຍາ, iii) ທັງສອງຝ່າຍມີການຕົກລົງໃນການຈັດການວຽກງານເອກະສານທີ່ກ່ຽວຂ້ອງໃຫ້ສຳເລັດພາຍໃນວັນທີ 31 ຕຸລາ 2014 iv) ໃນການຄິດໄລ່ສິ່ງທີ ຟຟລ ຕ້ອງຈ່າຍ ແມ່ນບໍ່ໃຫ້ ເກີນ 2,4 ລ້ານ ໂດລາສະຫະລັດ ຖ້າຫາກວ່າ ມີລາຍຈ່າຍທີ່ເພີ່ມຂຶ້ນ ຫຼາຍກວ່າທີ່ ຟຟລ ຮັບໄດ້, ບໍລິສັດ ຈະຕ້ອງຈ່າຍພາກສ່ວນ ທີ່ເພີ່ມຂຶ້ນ ໃຫ້ກັບ ຟຟລ ພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໃນ ບົດບັນທຶກຄວາມເຂົ້າໃຈ ໃນວັນທີ 31 ທັນວາ 2014 ບໍລິສັດ ໄດ້ຈ່າຍເງິນທີ່ກ່ຽວຂ້ອງກັບ ບົດບັນທຶກຄວາມເຂົ້າໃຈ ທີ່ກ່າວໄວ້ໃນຂ້າງເທິງເປັນຈຳນວນເງິນ 16.112 ລ້ານກີບ (ບົດອະທິບາຍ ຂໍ້ 5).

ix) ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ນ້ຳຄານ 3

ໃນວັນທີ 17 ກຸມພາ 2014 ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການມອບໂອນຊັບສິນຂອງໂຄງການ ນ້ຳຄານ 3. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຟຟລ ມີຈຸດປະສົງຈະໂອນບັນດາຊັບສິນທັງໝົດຂອງໂຄງການທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ ຫຼື ເລືອກເອົາວັນໃດໜຶ່ງ ຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ : i) ບໍລິສັດເຫັນດີ ທີ່ຈະຫົດແທນຄືນທຸກຄ່າໃຊ້ຈ່າຍ ໂດຍ ຟຟລ ຈົນເຖິງປະຈຸບັນ ຫຼື ກຳລັງເກີດຂຶ້ນອີກ ຈົນກວ່າຈະສຳເລັດ ແລະ ໂອນກຳມະສິດຂອງໂຄງການໃຫ້ກັບ ບໍລິສັດ, ii) ບໍລິສັດ ຈະຮັບຜິດຊອບຈ່າຍຫົດແທນຄືນລາຍຈ່າຍ, ລາຍຈ່າຍໆ ລ່ວງໜ້າ, ລາຍຈ່າຍທີ່ ສືບຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງຈະເກີດຂຶ້ນອີກ ໃຫ້ ຟຟລ ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້. ທຸກພັນທະທາງດ້ານການເງິນ ໃນຕ່ໜ້າຂອງ ຟຟລ ທີ່ກ່ຽວພັນກັບໂຄງການແມ່ນອາດຈະຂຶ້ນກັບການກຳນົດຕາມສັນຍາ. iii) ທັງສອງຝ່າຍມີການຕົກລົງໃນການຈັດການວຽກງານເອກະສານທີ່ກ່ຽວຂ້ອງໃຫ້ສຳເລັດພາຍໃນວັນທີ 31ທັນວາ 2015. iv) ໃນການຄິດໄລ່ສິ່ງທີ ຟຟລ ຕ້ອງຈ່າຍແມ່ນບໍ່ໃຫ້ເກີນ 18,13 ລ້ານໂດລາສະຫະລັດ. ຖ້າຫາກວ່າມີລາຍຈ່າຍທີ່ເພີ່ມຂຶ້ນຫລາຍກວ່າທີ່ ຟຟລ ຮັບໄດ້, ບໍລິສັດຈະຕ້ອງຈ່າຍພາກສ່ວນທີ່ເພີ່ມຂຶ້ນໃຫ້ກັບ ຟຟລ ພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໃນບົດບັນທຶກຄວາມເຂົ້າໃຈ.

1. ຂໍ້ມູນທົ່ວໄປ (ຕໍ່)

ຄ) ສັນຍາ ທີ່ສຳຄັນຕ່າງໆ (ຕໍ່)

ix) ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ນ້ຳຄານ 3

ໃນວັນທີ 31 ທັນວາ 2014 ບໍລິສັດ ໄດ້ຈ່າຍເງິນທີ່ກ່ຽວຂ້ອງກັບ ບົດບັນທຶກຄວາມເຂົ້າໃຈ ທີ່ກ່າວ ໄວ້ໃນຂ້າງ ເທິງເປັນຈຳນວນເງິນ 143.069 ລ້ານກີບ (ບົດອະທິບາຍ ຂໍ້ 5).

x) ການອອກຮຸ້ນກູ້ໃນ ປະເທດໄທ

ວັນທີ 12 ທັນວາ 2014 ບໍລິສັດໄດ້ອອກຮຸ້ນກູ້ແບບບໍ່ມີຫຼັກຊັບປະກັນ ບໍ່ດ້ອຍສິດ (ຮຸ້ນກູ້) ເຊິ່ງມີລາຄາທຶນ ແລະ ລາຄາສະເໜີຂາຍ 1.000 ບາດ ຕໍ່ໜຶ່ງຫນ່ວຍ ລວມທັງໝົດ 6,5 ລ້ານຫນ່ວຍ ເຊິ່ງມີມຸນຄ່າ ລວມ 6.500 ລ້ານບາດ (ປະມານ 1.616.810 ລ້ານກີບ) ໂດຍອອກທີ່ຕະຫລາດຫຼັກຊັບແຫ່ງປະເທດໄທ ໂດຍ ເປັນການອອກແບບສະເພາະເຈາະຈົງໃຫ້ກຸ່ມນັກລົງທຶນ ທີ່ມີຄວາມສຳພັນທີ່ດີ ແລະ ກຸ່ມນັກລົງທຶນສະຖາບັນ ລວມເຖິງ ທະນາຄານ ກອງທຶນລວມ, ກອງທຶນການຈັດການຊັບສິນ ແລະ ບໍລິສັດ ປະກັນໄພ (ຂໍ້ມູນເພີ່ມເຕີ່ມ ໃນບົດອະທິບາຍຂໍ້ທີ 13).

xi) ສັນຍາ SWAP ລະຫວ່າງສະກຸນເງິນ ແລະ ອັດຕາດອກເບ້ຍ

ໃນວັນທີ 14 ທັນວາ 2014 ບໍລິສັດໄດ້ເຮັດສັນຍາ SWAP ສຳລັບຮຸ້ນກູ້ ຂອງບໍລິສັດຈາກສະກຸນເງິນບາດໄປ ເປັນສະກຸນເງິນໂດລາສະຫະລັດ ແລະ ປ່ຽນອັດຕາດອກເບ້ຍຈາກອັດຕາດອກເບ້ຍຄົງທີ່ເປັນອັດຕາດອກເບ້ຍ ລອຍຕົວ ກັບສະຖາບັນການເງິນໃນປະເທດໄທ ເພື່ອປ້ອງກັນຄວາມສ່ຽງ ຈາກການປ່ຽນແປງຂອງອັດຕາ ແລກປ່ຽນ ແລະ ອັດຕາດອກເບ້ຍ ສຳລັບຮຸ້ນກູ້ ທີ່ອອກໃນປະເທດໄທ.

ຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນພາຍໃຕ້ສັນຍາໂດຍມີລາຍລະອຽດດັ່ງນີ້:

ລຳດັບ	ເງິນຕົ້ນ			ອັດຕາດອກເບ້ຍ ຕໍ່ປີ		
	ເງິນຕົ້ນ ສະກຸນທີ່ ອອກຮຸ້ນກູ້ (ລ້ານບາດ)	ເງິນຕົ້ນຕາມ ສັນຍາ Swap (ລ້ານໂດລາ)	ໄລຍະເວລາ ການຊຳລະ ເງິນ	ອັດຕາ ດອກເບ້ຍ ຕາມໃບຮຸ້ນ	Swap	ໄລຍະເວລາການຊຳລະ ເງິນ
1	1.500	45,59	12 ທັນວາ 2019	4,95%	Libor 6 ເດືອນ+ 3,36%	ສອງຄັ້ງຕໍ່ປີ ໂດຍເລີ່ມ ຈາກ ວັນທີ 12 ມິຖຸນາ 15 ເຖິງ 12 ທັນວາ 2019
2	2.000	60,79	12 ທັນວາ 2021	5,20%	Libor 6 ເດືອນ+ 3,61%	ສອງຄັ້ງຕໍ່ປີ ໂດຍເລີ່ມ ຈາກ ວັນທີ 12 ມິຖຸນາ 15 ເຖິງ 12 ທັນວາ 2021
3	3.000	91,18	12 ທັນວາ 2024	5,45%	Libor 6 ເດືອນ+ 3,795%	ສອງຄັ້ງຕໍ່ປີ ໂດຍເລີ່ມ ຈາກ ວັນທີ 12 ມິຖຸນາ 15 ເຖິງ 12 ທັນວາ 2024
ລວມ	**6.500**	**197,56**				

2 ວິທີການບັນຊີທີ່ນຳໃຊ້

ວິທີການບັນຊີຕົ້ນຕໍ ທີ່ຮັບຮອງເອົາໃນການສ້າງເອກະສານລາຍງານການເງິນມີດັ່ງນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຂໍ້ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຂໍ້ຕົກລົງຮັບເຂົ້າຕາມຕົ້ນທຶນເດີມ ຍົກເວັ້ນແຕ່ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ (ບົດອະທິບາຍ 2.2).

ໃນ ສປປ ລາວ ຍັງບໍ່ທັນໄດ້ມີການອາງມາດຕະຖານບັນຊີອອກ. ມາດຕະຖານດ້ານການບັນຊີລາວ ແມ່ນກຳລັງມີການພັດທະນາພາຍໃຕ້ ກົມບັນຊີ ແລະ ອົງການຈັດຕັ້ງວິຊາຊີບການບັນຊີລາວ (LICPA). ໃນປັດຈຸບັນ, ບັນດາບໍລິສັດ ໄດ້ນຳໃຊ້ປຶ້ມຄູ່ມື ກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີ ທີ່ອາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມື ດັ່ງກ່າວ ໄດ້ອາງຂໍ້ແນະນຳ ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມື ດັ່ງກ່າວ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສິນບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ, ພັນປະໂຫຍດພະນັກງານ, ຜົນກະທົບຈາກການປ່ຽນແປງ ອັດຕາແລກປ່ຽນເງິນຕາຕ່າງປະເທດ, ລາກອນລາຍໄດ້ ແລະ ສ່ວນຄ່ຽງຂອງອາກອນລາຍໄດ້, ເຄື່ອງມືທາງດ້ານການເງິນ, ເອກະສານລາຍງານການເງິນແບບລວມ ແລະ ເອກະສານລາຍງານການເງິນສະເພາະຂອງ ບໍລິສັດ, ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ, ຄ່າໃຊ້ຈ່າຍໃນການກູ້ຢືມ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ (ບົດອະທິບາຍ ຂໍ້ 2.15). ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງທີ່ສຳຄັນ ໂດຍທຽບຖານ ຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງ ມາດຕະຖານສາກົນ ດ້ານການລາຍງານການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂົງເຂດ.

ໃນ ສປປ ລາວ ແມ່ນຍັງບໍ່ທັນມີມາດຕະຖານການບັນຊີ ແລະ ຄູ່ມືແນະນຳສະເພາະເຈາະຈົງໃນບາງພາກສ່ວນເຊັ່ນ: ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ ໃນເມື່ອບໍ່ມີມາດຕະຖານການບັນຊີທີ່ກ່ຽວຂ້ອງ, ບໍລິສັດ ໄດ້ຕັດສິນໃຈຮັບຮອງເອົາບັນຊີເຊັ່ນ: ວິທີສ່ວນໄດ້ສ່ວນເສຍສຳລັບການລົງທຶນຂອງບໍລິສັດ ເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍຂໍ້ 2.2 ເຊິ່ງຜູ້ບໍລິຫານເຊື່ອໝັ້ນວ່າມັນສອດຄ່ອງກັບວິທີປະຕິບັດແບບສາກົນ.

ການສ້າງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບວິທີການບັນຊີຂອງສາຂາທີ່ຮັບຮອງເອົານັ້ນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ສ້າງເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດຕົ້ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງຜົນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

ໃນວັນທີ 31 ທັນວາ 2014 ທາງບໍລິສັດໄດ້ມີການນຳສະເໜີໃບລາຍງານຜົນໄດ້ຮັບໃນໄລຍະເວລາ 3 ເດືອນ ພາຍໃຕ້ບົດອະທິບາຍຂໍ້ມູນເພີ່ມເຕີມ. ເຊິ່ງໄດ້ອີງຕາມຂໍ້ກຳນົດໃນການເຜີຍແຜ່ຂໍ້ມູນ ສະບັບ ເລກທີ 007/SECO, ລົງວັນທີ 03 ເມສາ 2014 ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.2 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ

ວິສາຫະກິດຂາຮຸ້ນ

ວິສາຫະກິດຂາຮຸ້ນ ແມ່ນວິສາຫະກິດທີ່ມີອິດທິພົນທີ່ສຳຄັນຕໍ່ກັບບໍລິສັດ ແຕ່ບໍ່ໄດ້ຄວບຄຸມ ໂດຍທົ່ວໄປ ບໍລິສັດມີສິດອອກສຽງ ຢູ່ໃນລະຫວ່າງ 20% ແລະ 50% ຂອງສິດອອກສຽງທັງໝົດ. ເງິນລົງທຶນໃນວິສາຫະກິດຂາຮຸ້ນເບື້ອງຕົ້ນແມ່ນຮັບຮູ້ໃນມູນຄ່າຕົ້ນທຶນ ແລະ ນຳໃຊ້ແບບວິທີສ່ວນໄດ້ສ່ວນເສຍໃນການສະແດງຢູ່ໃນບົດລາຍງານການເງິນ.

ສ່ວນແບ່ງກຳໄລ ຫຼື ຂາດທຶນ ໃນວິສາຫະກິດຂາຮຸ້ນທີ່ເກີດຂຶ້ນພາຍຫຼັງການໄດ້ມາ ຈະລວມໄວ້ໃນກຳໄລ ຫຼື ຂາດທຶນ ຜົນສະສົມຂອງການປ່ຽນແປງພາຍຫຼັງການໄດ້ມາຈະປັບປຸງກັບລາຄາຕາມບັນຊີຂອງເງິນລົງທຶນ ເມື່ອສ່ວນແບ່ງຂາດທຶນໃນວິສາຫະກິດຂາຮຸ້ນມີມູນຄ່າເທົ່າກັບ ຫຼື ຫຼາຍກວ່າມູນຄ່າເງິນລົງທຶນໃນວິສາຫະກິດ ລວມເຖິງໜີ້ຕ້ອງຮັບທີ່ບໍ່ມີການຄ້ຳປະກັນອື່ນໆ ບໍລິສັດຈະບໍ່ຮັບຮູ້ສ່ວນແບ່ງຂາດທຶນເພີ່ມເຕີມ ນອກຈາກວ່າ ບໍລິສັດ ໄດ້ມີພັນທະທີ່ຕ້ອງຊຳລະຕາມສັນຍາພາຍໃຕ້ວິສາຫະກິດຂາຮຸ້ນ ທີ່ຕ້ອງຈ່າຍໜີ້ແທນວິສາຫະກິດຂາຮຸ້ນ.

ລາຍການກຳໄລທີ່ຍັງບໍ່ທັນໄດ້ເກີດຂຶ້ນຈົ່ງລະຫວ່າງບໍລິສັດ ກັບວິສາຫະກິດຂາຮຸ້ນ ແມ່ນໄດ້ຕັດກັບບັນຊີຕາມວິທີສ່ວນໄດ້ສ່ວນເສຍໃນວິສາຫະກິດຂາຮຸ້ນນັ້ນ. ລາຍການຂາດທຶນທີ່ຍັງບໍ່ທັນໄດ້ເກີດຂຶ້ນຈົ່ງກໍ່ຈະຕັດບັນຊີໃນແບບດຽວກັນ ຍົກເວັ້ນແຕ່ລາຍການດ້ອຍຄ່າເທົ່ານັ້ນ ມີຫຼັກຖານວ່າຊັບສິນບັດທີ່ໂອນລະຫວ່າງກັນເກີດການດ້ອຍຄ່າ.

ວິສາຫະກິດຂາຮຸ້ນຈະປ່ຽນນະໂຍບາຍການບັນຊີເທົ່າທີ່ຈຳເປັນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ກຳໄລ ແລະ ຂາດທຶນເງິນລົງທຶນ ຈາກການຫຼຸດສັດສ່ວນໃນວິສາຫະກິດຂາຮຸ້ນ ແມ່ນຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

ລາຍການທີ່ສຳຄັນຂອງວິສາຫະກິດຂາຮຸ້ນ ຂອງບໍລິສັດ ໄດ້ອະທິບາຍໃນບົດອະທິບາຍຂໍ້ 4.

ບໍລິສັດ ຮຸ້ນສ່ວນ

ບໍລິສັດ ຮຸ້ນສ່ວນ ແມ່ນບໍລິສັດທີ່ມີສິດຄວບຄຸມຮ່ວມກັບ ບໍລິສັດ ຮຸ້ນສ່ວນອື່ນ ແຕ່ບໍ່ໄດ້ຄວບຄຸມພຽງຜູ້ດຽວ ເງິນລົງທຶນໃນບໍລິສັດ ຮຸ້ນສ່ວນນີ້ນຳໃຊ້ແບບວິທີສ່ວນໄດ້ສ່ວນເສຍໃນການສະແດງຢູ່ໃນເອກະສານລາຍງານການເງິນ. ສ່ວນແບ່ງກຳໄລ ຫຼື ຂາດທຶນ ໃນວິສາຫະກິດຮຸ້ນສ່ວນທີ່ເກີດຂຶ້ນພາຍຫຼັງການໄດ້ມາ ຈະລວມໄວ້ໃນກຳໄລ ຫຼື ຂາດທຶນ ຜົນສະສົມຂອງການປ່ຽນແປງພາຍຫຼັງການໄດ້ມາຈະປັບປຸງກັບລາຄາຕາມບັນຊີຂອງເງິນລົງທຶນ ເມື່ອສ່ວນແບ່ງຂາດທຶນໃນວິສາຫະກິດຮຸ້ນສ່ວນມີມູນຄ່າເທົ່າກັບ ຫຼື ຫຼາຍກວ່າມູນຄ່າເງິນລົງທຶນໃນວິສາຫະກິດ ລວມເຖິງໜີ້ຕ້ອງຮັບທີ່ບໍ່ມີການຄ້ຳປະກັນອື່ນໆ ບໍລິສັດຈະບໍ່ຮັບຮູ້ສ່ວນແບ່ງຂາດທຶນເພີ່ມເຕີມ ນອກຈາກວ່າ ບໍລິສັດ ໄດ້ມີພັນທະທີ່ຕ້ອງຊຳລະຕາມສັນຍາພາຍໃຕ້ວິສາຫະກິດຮຸ້ນສ່ວນ ທີ່ຕ້ອງຈ່າຍໜີ້ແທນວິສາຫະກິດຮຸ້ນສ່ວນ.

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.2 ເງິນລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດ ຮຸ້ນສ່ວນ (ຕໍ່)

ບໍລິສັດ ຮຸ້ນສ່ວນ (ຕໍ່)

ລາຍການກຳໄລ ຫຼື ຂາດທຶນ ທີ່ຍັງບໍ່ທັນໄດ້ເກີດຂຶ້ນຈິງລະຫວ່າງບໍລິສັດ ກັບວິສາຫະກິດຮຸ້ນສ່ວນ ແມ່ນໄດ້ຕັດກັບບັນຊີ ຕາມວິທີສ່ວນໄດ້ສ່ວນເສຍໃນວິສາຫະກິດຮຸ້ນສ່ວນນັ້ນ. ລາຍການຂາດທຶນທີ່ຍັງບໍ່ທັນໄດ້ເກີດຂຶ້ນຈິງກໍ່ຈະຕັດບັນຊີໃນ ແບບດຽວກັນ ຍົກເວັ້ນແຕ່ລາຍການດັ່ງກ່າວນັ້ນ ມີຫຼັກຖານວ່າຊັບສິນບັດທີ່ໂອນລະຫວ່າງກັນເກີດການດ້ອຍຄ່າ.

ວິສາຫະກິດຮຸ້ນສ່ວນຈະປ່ຽນນະໂຍບາຍການບັນຊີເທົ່າທີ່ຈຳເປັນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ກຳໄລ ແລະ ຂາດທຶນ ເງິນລົງທຶນຈາກການຫຼຸດສັດສ່ວນໃນວິສາຫະກິດຮຸ້ນສ່ວນ ແມ່ນຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

ລາຍການທີ່ສຳຄັນຂອງ ບໍລິສັດ ຮຸ້ນສ່ວນ ໄດ້ອະທິບາຍໃນບົດອະທິບາຍຂໍ້ 4.

2.3 ການແລກປ່ຽນເງິນຕາຕ່າງປະເທດ

ກ) ທຸກລາຍການໃນເອກະສານລາຍງານການເງິນ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ (ກີບ)

ຂ) ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ ດ້ວຍອັດຕາແລກປ່ຽນຂອງມື້ ທີ່ມີລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນໃນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນ ສະກຸນເງິນ ລາວກີບ ດ້ວຍອັດຕາແລກປ່ຽນຕາມວັນທີຂອງການລາຍງານ. ລາຍການກຳໄລ ແລະ ລາຍການຂາດທຶນ ທີ່ເກີດຈາກການຮັບ ຫຼື ຈ່າຍທີ່ເປັນເງິນຕາຕ່າງປະເທດ ແລະ ເກີດການແປງຄ່າຊັບສິນ ແລະ ໜີ້ສິນທີ່ເປັນເງິນຕາ ຕ່າງປະເທດໄດ້ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

ຄ) ວິສາຫະກິດຮ່ວມ ແລະ ບໍລິສັດ ຮຸ້ນສ່ວນ, ຜົນໄດ້ຮັບ ແລະ ໃບສະຫລຸບຊັບສິນບັດຂອງວິສາຫະກິດຮ່ວມ ແລະ ບໍລິສັດ ຮຸ້ນສ່ວນ (ແມ່ນບໍ່ໄດ້ລວມອັດຕາເງິນເຟີ້ຂອງສະກຸນເງິນດັ່ງກ່າວ) ທີ່ມີສະກຸນເງິນໃນການລາຍງານການເງິນ ຕ່າງກັບບໍລິສັດ ແມ່ນແປງຄ່າມາສະກຸນເງິນໃນການລາຍງານ ດັ່ງລຸ່ມນີ້:

- ຊັບສິນ ແລະ ໜີ້ສິນສຳລັບທຸກໆ ໃບສະຫລຸບຊັບສິນບັດທີ່ ນຳສະແດງ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນ ຂອງມື້ໃບສະຫລຸບຊັບສິນບັດ;
- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນ ສະເລ່ຍຂອງປີນັ້ນໆ; ແລະ
- ຜົນຕ່າງຕ່າງຈາກການແປງຄ່າ ແມ່ນຮັບຮູ້ ແລະ ສະແດງລາຍການແຍກຕ່າງຫາກໃນສ່ວນປ່ຽນແປງທຶນຕົນເອງ ຂອງຜູ້ຖືຮຸ້ນ

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.4 ເຄື່ອງອາໄລ່ ແລະ ເຄື່ອງໃນສາງອື່ນໆ

ເຄື່ອງອາໄລ່ ແລະ ເຄື່ອງໃນສາງອື່ນໆ ສະແດງອອກ ຕາມລາຄາທີ່ຕ່ຳກວ່າໝູ່ ລະຫວ່າງ ລາຄາຕົ້ນທຶນ ແລະ ລາຄາຂາຍ ອອກສຸດທິ. ການຄິດໄລ່ຕົ້ນທຶນຈ່າຍອອກສາງ ໄດ້ນຳໃຊ້ວິທີສະເລ່ຍຕາມນ້ຳໜັກ. ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດ້ຮັບ. ລາຄາຂາຍອອກ ສຸດທິ ແມ່ນລາຄາທີ່ເຄື່ອງໃນສາງ ສາມາດຂາຍອອກໃນຮອບວຽນ ປົກກະຕິຂອງວິສາຫະກິດ ຫຼັງຈາກຫັກຕົ້ນທຶນໃນ ການຂາຍອອກ. ຄ່າສູນເສຍມູນຄ່າເກີດຂຶ້ນ, ກໍລະນີ ການພົ້ນສະໄໝ, ເສຍຄຸນ ຂອງເຄື່ອງອາໄລ່ ແລະ ເຄື່ອງໃນ ສາງອື່ນໆ.

2.5 ຊັບສົມບັດ ພາຍໃຕ້ສຳປະທານ

ຊັບສົມບັດທີ່ຢູ່ພາຍໃຕ້ການສຳປະທານ ສ່ວນໃຫຍ່ປະກອບດ້ວຍ ອາຄານ, ເຂື່ອນໄຟຟ້າ, ເຄື່ອງຈັກ ສະແດງອອກມູນ ຄ່າຕາມບັນຊີສຸດທິ ໃນມື້ໂອນຈາກ ຟຟລ (ປົດອະທິບາຍ ຂໍ້ 1 ຂ) ແລະ ຕົ້ນທຶນເດີມ ສຳລັບຊັບສົມທີ່ໄດ້ມາຫຼັງຈາກ ວັນທີ 15 ທັນວາ 2010. ຕົ້ນທຶນເດີມ ລວມລາຍການຄ່າໃຊ້ຈ່າຍໂດຍກົງກ່ຽວກັບການຊື້ຊັບສົມບັດ.

ອີງຕາມສັນຍາສຳປະທານ ບໍລິສັດ ຈະຕ້ອງໄດ້ໂອນຊັບສົນທັງໝົດທີ່ຮັບໃຊ້ການດຳເນີນງານໂຄງການ ທີ່ໄດ້ກຳນົດໄວ້ໃນ ສັນຍາສຳປະທານ ໃຫ້ກັບລັດຖະບານ ໃນເວລາສິ້ນສຸດສັນຍາສຳປະທານ (ປົດອະທິບາຍຂໍ້ 1 ຄ i).

ຄ່າໃຊ້ຈ່າຍ ທີ່ເກີດຂຶ້ນຕາມພາຍຫຼັງ ຈະຖືກຈັດເຂົ້າໃນມູນຄ່າຍັງເຫຼືອໃນບັນຊີ ຕາມຄວາມເໝາະສົມ ເມື່ອເປັນໄປໄດ້ວ່າ ຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ທີ່ຕິດພັນຈະໄຫຼເຂົ້າສູ່ບໍລິສັດ ແລະ ຕົ້ນທຶນສາມາດຕີມູນຄ່າຢ່າງໜ້າເຊື່ອຖື ໄດ້. ຈຳນວນເງິນຍັງເຫຼືອໃນບັນຊີຖືກປົດອອກຈາກບັນຊີ. ຄ່າໃຊ້ຈ່າຍໃນການສ້ອມແປງ ແລະ ບຳລຸງຮັກສາທີ່ເກີດຂຶ້ນ ໃນຮອບເວລາລາຍງານ ຈະຖືກບັນທຶກເປັນລາຍຈ່າຍ ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນເວລາເກີດຂຶ້ນ.

ຊັບສົມບັດທີ່ຢູ່ພາຍໃຕ້ສຳປະທານທີ່ສະແດງອອກຕາມມູນຄ່າ ຕົ້ນທຶນ ລົບໃຫ້ຄ່າຫຼ້ຍຫ້ຽນສະສົມ. ຄ່າຫຼ້ຍຫ້ຽນ ຄິດໄລ່ ແບບວິທີສະເລ່ຍ ຕາມອາຍຸການໃຊ້ງານທີ່ຄາດຫວັງ ແຕ່ບໍ່ໃຫ້ເກີນໄລຍະການສຳປະທານ ຕາມສັນຍາ ທີ່ກ່ຽວຂ້ອງ 30 ປີ. ອັດຕາທີ່ນຳໃຊ້ແຕ່ລະປະເພດຊັບສົມ ສະແດງອອກ ດັ່ງນີ້:

	ປີ
ອາຄານ	1,2,4-30
ເຂື່ອນໄຟຟ້າ	20-30
ເຄື່ອງຈັກ	1,4, 10-30
ພາຫະນະ (ລົດ)	1-6
ອຸປະກອນຫ້ອງການ	1-9
ເຟີນີເຈີ ແລະ ເຄື່ອງໃຊ້ສຳນັກງານ	1-10

2 ນະໂຍບາຍບັນຊີທີ່ນຳໃຊ້ (ຕໍ່)

2.5 ຊັບສິນຄົງທີ່ ພາຍໃຕ້ສຳປະທານ (ຕໍ່)

ບໍລິສັດ ບັນທຶກຄ່າຫຼ້ຽຫ້ຽນເປັນລາຍຈ່າຍໃນລະຫວ່າງປີ. ເມື່ອຊັບສິນບັດຄົງທີ່ໝົດອາຍຸການນຳໃຊ້, ບໍລິສັດ ຈະໄດ້ຈົດ ອອກຈາກບັນຊີຊັບສິນບັດ ແລະ ຄ່າຫຼ້ຽຫ້ຽນສະສົມທີ່ກ່ຽວຂ້ອງ ແລະ ບັນທຶກກຳໄລ ຫຼື ຂາດທຶນ ຈາກການສະສາງ ອອກ ເຂົ້າໃບລາຍງານຜົນໄດ້ຮັບ.

ມູນຄ່າຍັງເຫລືອສຸດທິຂອງຊັບສິນ ຈະຖືກບັນທຶກທັນທີ ໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້ ຖ້າຫາກມູນຄ່າສຸດທິ ຂອງຊັບສິນຫາກສູງກວ່າມູນຄ່າທີ່ຄາດຄະເນ ສາມາດເກັບຄືນໄດ້ (ເບິ່ງອະທິບາຍຂໍ້ 2.6).

ກຳໄລຂາດທຶນຈາກການຂາຍ ຈະຖືກກຳນົດ ໂດຍການສົມທຽບ ຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກ (ຂາດທຶນ)/ກຳໄລ ສຸດທິ ໃນໃບລາຍງານຜົນໄດ້ຮັບ.

2.6 ຄ່າສູນເສຍມູນຄ່າຂອງຊັບສິນ

ບັນດາຊັບສິນ ທີ່ຫັກຄ່າຫຼ້ຽຫ້ຽນ ຈະຖືກທົດສອບຄ່າສູນເສຍມູນຄ່າ. ໃນກໍລະນີການປ່ຽນແປງ ຫຼື ເຫດການ ທີ່ຊີ້ໃຫ້ເຫັນວ່າ ຈຳນວນເງິນຍັງເຫຼືອໃນ ບັນຊີ ບໍ່ສາມາດເກັບກູ້ຄືນໄດ້. ຄ່າສູນເສຍມູນຄ່າ ບັນທຶກຕາມຈຳນວນເງິນ ເຊິ່ງ ຈຳນວນເງິນຍັງເຫຼືອ ໃນບັນຊີຂອງຊັບສິນ ຫຼາຍກວ່າ ມູນຄ່າຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ ເຊິ່ງສູງກວ່າມູນຄ່າຍຸຕິ ທຳຂອງ ຊັບສິນ ຫັກຄ່າໃຊ້ຈ່າຍໃນ ການຂາຍອອກ ແລະ ມູນຄ່າການໃຊ້ (ມູນຄ່າຜົນປະໂຫຍດ). ເພື່ອຈຸດປະສົງ ທົດ ສອບຄ່າສູນເສຍມູນຄ່າ, ຊັບສິນຖືກຈັດເປັນກຸ່ມໃນລະດັບຕ່ຳສຸດ ທີ່ສາມາດຈຳແນກການສ້າງ ກະແສເງິນສົດລວມ. ຊັບສິນອື່ນໆ ທີ່ບໍ່ແມ່ນ ການເງິນ ນອກຈາກຄ່ານິຍົມ ຈະຖືກທົດສອບຄືນ ເພື່ອເປັນໄປໄດ້ວ່າ ອາດຈະມີການເກັບຄືນຄ່າ ສູນເສຍມູນຄ່າໃນແຕ່ລະຮອບເວລາລາຍງານ.

2.7 ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນ, ບວກຄ່າໃຊ້ຈ່າຍສຸດທິ ທີ່ເກີດຂຶ້ນຕິດພັນກັບເງິນກູ້ຢືມ, ຖ້າມີ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງຈາກມື້ປິດບັນຊີພາຍໃນປີ.

2.8 ຮຸ້ນກູ້

ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນໂດຍການຫັກຕົ້ນທຶນການຈັດຫາ ຫຼັງຈາກນັ້ນຮຸ້ນກູ້ຈະຖືກຮັບຮູ້ຕາມວິທີ amortised cost ສ່ວນຕ່າງລະຫວ່າງ ຜົນຕອບແທນ (ຫັກດ້ວຍຕົ້ນທຶນການດຳເນີນການ) ເມື່ອທຽບກັບ ມູນຄ່າທີ່ ຈ່າຍຄືນ ຈະຖືກຮັບຮູ້ເປັນກຳໄລ/ຂາດທຶນ ຕະຫຼອດຊ່ວງເວລາການກູ້ຢືມນັ້ນໂດຍໃຊ້ວິທີອັດຕາດອກທີ່ແທ້ຈິງ.

ຕົ້ນທຶນໃນການອອກຮຸ້ນກູ້ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນກູ້ໃນປະເທດໄທ ເຊິ່ງລວມຄ່າທີ່ປຶກສາທາງ ການເງິນ, ຄ່າທີ່ປຶກສາທາງກົດໝາຍ ແລະ ຄ່າທຳນຽມຕ່າງໆ ຄ່າໃຊ້ຈ່າຍເຫຼົ່ານີ້ ແມ່ນໄດ້ບັນທຶກໃນບັນຊີ ຊັບສິນລໍຖ້າ ຕັດຈຳໜ່າຍ ແລະ ຈະຕັດຈຳໜ່າຍ ແລະຮັບຮູ້ໃນບົດລາຍງານຜົນໄດ້ຮັບ ໂດຍອີງຕາມອາຍຸຂອງຮຸ້ນກູ້.

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.8 ຮຸ້ນກູ້ (ຕໍ່)

ຮຸ້ນກູ້ທີ່ຖືກຈັດປະເພດເປັນໜີ້ສິນໝຸນວຽນ ບໍລິສັດບໍ່ມີເງື່ອນໄຂພຽງພໍໃນການຊຳລະໜີ້ ຈະສາມາດເລື່ອນການຊຳລະໜີ້ ອອກໄປອີກເປັນເວລາຢ່າງຫນ້ອຍ 12 ເດືອນ ນັບແຕ່ມື້ອອກບົດລາຍງານ.

2.9 ການເຊົ່າບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າ ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນ ໃຫ້ແກ່ຜູ້ເຊົ່າ ຈຶ່ງຈຳແນກເປັນສັນຍາເຊົ່າ ທຳມະດາ (ສັນຍາເຊົ່າໃນການທຸລະກິດ). ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າທຳມະດາ (ລົບທຸກລາຍການທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ໄດ້ຈັດເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ບົນພື້ນຖານວິທີສະເລ່ຍ ຕະຫຼອດ ໄລຍະອາຍຸການເຊົ່າ. ເມື່ອສັນຍາເຊົ່າ ມີການຍົກເລີກກ່ອນໄລຍະການເຊົ່າສິ້ນສຸດ, ຈຳນວນເງິນຄ່າເຊົ່າ ແລະ ຄ່າປັບໃໝຕ່າງໆຕ້ອງໄດ້ຈ່າຍໃຫ້ກັບຜູ້ໃຫ້ເຊົ່າ ແລະ ຮັບຮູ້ເປັນລາຍຈ່າຍໃນເວລາທີ່ມີການຍົກເລີກ.

2.10 ຜົນປະໂຫຍດໃຫ້ພະນັກງານ

i) ພັນທະດ້ານເງິນບຳນານ

ບໍລິສັດ ມີແຜນການເບີກຈ່າຍເງິນບຳນານ. ແຜນການດັ່ງກ່າວ ເຊິ່ງບໍລິສັດ ກຳນົດການປະກອບສ່ວນ ບົນພື້ນຖານ ຈຳນວນເງິນເດືອນພື້ນຖານຄົງທີ, ຈຳນວນປີເຮັດວຽກ ແລະ ລະດັບການສຶກສາ ເຊິ່ງພະນັກງານມີສິດຮັບ ໃນເວລາລາອອກ ຫຼື ບຳນານ. ຂໍ້ກຳນົດ ແລະ ເງື່ອນໄຂສຳຄັນ ມີດັ່ງນີ້ :

ການລາອອກ:

ບໍລິສັດເບີກຈ່າຍໃຫ້ພະນັກງານຜູ້ທີ່ລາອອກຄົບຖ້ວນເທື່ອດຽວ ເມື່ອໄລຍະເວລາການເຮັດວຽກ ຖືກຕ້ອງຕາມນະໂຍບາຍ ຂອງບໍລິສັດ. ໄລຍະການເຮັດວຽກຂຶ້ນຢູ່ກັບພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ຕຳແໜ່ງ. ຈຳນວນເງິນທີ່ຕ້ອງຈ່າຍ ແມ່ນໄດ້ຄິດໄລ່ບົນພື້ນຖານເງິນເດືອນ ເດືອນສຸດທ້າຍ ຄູນ ໄລຍະປີການເຮັດວຽກ ບວກ ເງິນປະຈຳຕຳແໜ່ງ ຫຼື ເງິນອຸດໜູນພິເສດ ຕາມນະໂຍບາຍຂອງບໍລິສັດ.

ເງື່ອນໄຂສຳລັບພະນັກງານ:

- ພະນັກງານທີ່ເຮັດວຽກ ໃນລະດັບນັກຊ່ຽວຊານ ຈະຕ້ອງມີອາຍຸການເຮັດວຽກ ຫຼາຍກ່ວາ ຫ້າ ປີ.
- ພະນັກງານທີ່ບໍ່ບັນລຸເງື່ອນໄຂຂ້າງເທິງນັ້ນ ຈະຕ້ອງມີອາຍຸການເຮັດວຽກ ຫຼາຍກວ່າ ສາມ ປີ.

ບໍລິສັດຈະບັນທຶກລາຍຈ່າຍເມື່ອພະນັກງານລາອອກ.

2 ນະໂຍບາຍບັນຊີທີ່ນຳໃຊ້ (ຕໍ່)

2.10 ຜົນປະໂຫຍດໃຫ້ພະນັກງານ (ຕໍ່)

ການອອກບຳນານ:

ເມື່ອເຖິງບຳນານ, ບໍລິສັດ ຈະຈ່າຍເງິນໃຫ້ກັບພະນັກງານທີ່ມີອາຍຸ ແລະ ຖືກຕ້ອງກັບນະໂຍບາຍຂອງບໍລິສັດ ດ້ານການບຳນານຄົບຖ້ວນເທື່ອດຽວ. ຈຳນວນເງິນທີ່ຕ້ອງຈ່າຍອີງຕາມຈຳນວນທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ ບວກ ກັບສາມເທົ່າຂອງເງິນເດືອນ ເດືອນສຸດທ້າຍ ຄູນ ໄລຍະປີການເຮັດວຽກ ບວກ ກັບເງິນປະຈຳຕຳແໜ່ງ ຫຼື ເງິນ ອຸດໜູນພິເສດຕາມນະໂຍບາຍບໍລິສັດ.

ເງື່ອນໄຂສຳລັບພະນັກງານ:

- ພະນັກງານ ທັງເພດຍິງ ແລະ ເພດຊາຍ ທີ່ອາຍຸ 60 ແລະ ການເຮັດວຽກຫຼາຍກວ່າ 25 ປີ. ເຖິງຢ່າງໃດກໍ່ ຕາມ, ພະນັກງານ ເພດຍິງ ທີ່ອາຍຸການ 55 ປີ ແລະ ປີການເຮັດວຽກ ບໍ່ຕ່ຳກວ່າ 25 ປີ ຖ້າມີການສະເໜີ ແມ່ນຈະຕ້ອງຜ່ານການພິຈາລະນາ.
- ໄລຍະປີການເຮັດວຽກ ໃນແຕ່ລະຕຳແໜ່ງງານ ທີ່ຄົບຖ້ວນ, ຖືກຕ້ອງ ກັບນະໂຍບາຍຂອງບໍລິສັດ.

ເງິນເຣ ແມ່ນການຕັ້ງເຜື່ອຮັບຮູ້ຜົນປະໂຫຍດຂອງພະນັກງານ ບໍ່ໄດ້ບັນທຶກບັນຊີເປັນແຕ່ລະປີ. ໜີ້ສິນໄດ້ບັນທຶກໄວ້ໃນໃບສະຫຼຸບຊັບສິນບັດ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ເຂົ້າໃນໃບລາຍງານຜົນໄດ້ຮັບ ອີງຕາມຈຳນວນຕົວຈິງ ໃນເວລາພະນັກງານລາອອກ ຫຼື ບຳນານ.

ພັນທະອື່ນໆ ດ້ານຜົນປະໂຫຍດພະນັກງານ:

ບໍລິສັດຍັງສະໜອງຜົນປະໂຫຍດອື່ນໆອີກ ໃຫ້ກັບພະນັກງານ ເຊັ່ນວ່າ: ກອງທຶນປະກັນສັງຄົມຕາມ ກົດໝາຍ. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນອຸດໜູນ 5% ແລະ 4,5% ຂອງເງິນເດືອນ ໃຫ້ກອງທຶນ ອົງການປະກັນສັງຄົມ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນພື້ນຖານໃນການຄິດໄລ່, ແຕ່ບໍ່ເກີນ 1,5 ລ້ານ ກີບ. ບໍລິສັດ ບັນທຶກໜີ້ສິນ ແລະ ລາຍຈ່າຍ ໃນເວລາລາຍການດັ່ງກ່າວເກີດຂຶ້ນ.

2.11 ການຫັກເງິນເຣ

ເງິນເຣ ຖືກບັນທຶກບັນຊີ ໃນເວລາມີຂໍ້ພັນທະໃນປະຈຸບັນຕາມກົດໝາຍ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າແຫຼ່ງຊັບພະຍາກອນຈະໄຫຼອອກ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນເຣ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍ ໃນຂໍ້ 2.9.

2.12 ເງິນລົງທຶນໄລຍະສັ້ນ

ເງິນລົງທຶນໄລຍະສັ້ນເປັນເງິນລົງທຶນທີ່ຝາກຈົນຄົບກຳນົດ ໂດຍບັນທຶກບັນຊີຕາມຈຳນວນທີ່ໄດ້ຈ່າຍຈິງ ດອກເບ້ຍຈະຖືກຮັບຮູ້ຕາມໄລຍະເວລາຂອງການຝາກເງິນ.

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.13 ບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ

ບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນປະກອບມີລັດຖະບານລາວ ເຊິ່ງເປັນຜູ້ມີກຳມະສິດ ທີ່ແນ່ນອນ ໃນຮຸ້ນສ່ວນ ຫຼື ກິດຈະການໃນ ຟຟລ ໂດຍການຄຸ້ມຄອງບໍລິຫານ ຫຼື ມີອຳນາດການຕັດສິນໃຈ. ບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ ຍັງປະກອບມີ ສະມາຊິກຜູ້ບໍລິຫານ, ໜ່ວຍງານທີ່ຄຸ້ມຄອງຂອງ ພາກລັດຖະບານ ແລະ ໜ່ວຍງານອື່ນໆ.

ໃນການພິຈາລະນາຄວາມສຳພັນລະຫວ່າງບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ ເຊິ່ງອາດມີຂຶ້ນໄດ້ ຕ້ອງຄຳນຶງ ເຖິງ ລາຍລະອຽດຂອງຄວາມສຳພັນຫຼາຍກວ່າຮູບແບບຄວາມສຳພັນຕາມກົດໝາຍ.

2.14 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມກັນເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີ ສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ຊື້ ແຕ່ບໍ່ລວມເງິນຝາກທະນາຄານ ທີ່ຝາກ ຈົນຄົບກຳນົດ.

2.15 ການຮັບຮູ້ລາຍຮັບ

ລາຍຮັບຕົ້ນຕໍ ລວມມີລາຍຮັບຈາກການຂາຍກະແສໄຟຟ້າ ແລະ ການບໍລິການ ເຊິ່ງມີທັງຄ່າບໍລິການຕິດຕັ້ງ ແລະ ລາຍ ໄດ້ຈາກເງິນປັນຜົນ.

ກ) ການຂາຍກະແສໄຟຟ້າ

ບໍລິສັດ ຮັບຮູ້ການລົງບັນຊີລາຍຮັບຈາກການຂາຍ ໃນເມື່ອ :

- ໄດ້ເຊັນສັນຍາຊື້-ຂາຍພະລັງງານໄຟຟ້າ
- ມີການສົ່ງກະແສໄຟຟ້າ
- ສາມາດກຳນົດລາຄາຕໍ່ບໍລິມາດ ຫຼື ສາມາດຄິດໄລ່ໄດ້
- ໜີ້ທີ່ຕ້ອງຮັບສາມາດເກັບກູ້ຄືນໄດ້

ການນຳສົ່ງກະແສໄຟຟ້າເກີດຂຶ້ນ ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດຕິດພັນ ຖືກໂອນໃຫ້ຜູ້ຊື້.

ໂດຍທົ່ວໄປ, ລາຍຮັບຈາກການຂາຍກະແສໄຟຟ້າ ຄິດໄລ່ຈາກຫົວໜ່ວຍໄຟ ໃນຈຸດນຳສົ່ງ ຄູນ ອັດຕາທີ່ຕົກລົງກັນ ແລະ ກຳນົດໃນສັນຍາຊື້ກະແສໄຟຟ້າ.

ຂ) ການບໍລິການອື່ນໆ

ການບໍລິການອື່ນໆ ໂດຍສ່ວນໃຫ່ຍແລ້ວ ປະກອບມີ ຄ່າຕິດຕັ້ງ ເຊິ່ງຮັບຮູ້ການລົງບັນຊີ ເມື່ອການບໍລິການ ສຳເລັດ.

2 ວິທີການບັນຊີທີ່ນຳໃຊ້ (ຕໍ່)

2.15 ການຮັບຮູ້ລາຍຮັບ (ຕໍ່)

ຄ) ລາຍໄດ້ຈາກເງິນປັນຜົນ

ລາຍໄດ້ຈາກເງິນປັນຜົນ ໄດ້ຖືກຮັບຮູ້ການລົງບັນຊີ ເມື່ອເກີດສິດທີ່ໄດ້ຮັບ ເຊິ່ງໂດຍປົກກະຕິແລ້ວຈະມີການຮັບຮູ້ ເມື່ອຜູ້ຖືຮຸ້ນມີສິດ ທີ່ຈະໄດ້ຮັບການຊຳລະ.

2.16 ອາກອນ

ບໍລິສັດ ບໍ່ໄດ້ບັນທຶກ ອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ ລະຫວ່າງ ພື້ນຖານຄິດໄລ່ອາກອນຂອງຊັບສິນ ແລະ ໜີ້ສິນ, ຈຳນວນເງິນຍົກເຫຼືອໃນບັນຊີ ຂອງຊັບສິນ ແລະ ໜີ້ສິນດັ່ງກ່າວ ໃນ ເອກະສານລາຍງານການເງິນ. ລາຍຈ່າຍອາກອນໃນປີ ຄິດໄລ່ບົນພື້ນຖານກຳໄລຂອງບໍລິສັດ ຕາມລະບຽບການບັນຊີ-ສ່ວຍ ສາອາກອນ ຂອງ ສປປ ລາວ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ, ການ ກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສຳເລັດ.

2.17 ສັນຍາ SWAP ລະຫວ່າງສະກຸນເງິນ ແລະ ອັດຕາດອກເບ້ຍ

ບໍລິສັດ ຈະບັນທຶກສັນຍາ SWAP ໂດຍຮັບຮູ້ລູກໜີ້ຈາກສັນຍາ SWAP ໂດຍໃຊ້ອັດຕາແລກປ່ຽນໃນວັນທີ່ເກີດ ລາຍການ ແລະ ບັນທຶກເຈົ້າໜີ້ຕາມສັນຍາ SWAP ໂດຍໃຊ້ອັດຕາຕາມສັນຍາທີ່ໄດ້ເຮັດໄວ້ກັບສະຖາບັນການເງິນ ໂດຍສ່ວນຕ່າງຕ່າງຈະຖືກບັນທຶກເປັນສ່ວນເພີ່ມ ຫຼື ສ່ວນຫຼຸດໃນບົດລາຍງານຖານະການເງິນ ສ່ວນເພີ່ມ ຫຼື ສ່ວນຫຼຸດ ດັ່ງກ່າວຈະຖືກຕັດຈ່າຍ ແລະ ຮັບຮູ້ເຂົ້າໃນບົດລາຍງານຜົນໄດ້ຮັບ ໂດຍວິທີເສັ້ນຕົງຕາມອາຍຸສັນຍາຂອງອຸ້ມກູ້.

3 ການຄຸ້ມຄອງຄວາມສ່ຽງທາງດ້ານການເງິນ

3.1 ປັດໃຈຄວາມສ່ຽງທາງດ້ານການເງິນ

ໃນການດຳເນີນທຸລະກິດຂອງບໍລິສັດ ຈະປະເຊີນກັບຄວາມສ່ຽງດ້ານການເງິນ ທີ່ສຳຄັນ ເຊັ່ນ: ຜົນກະທົບຈາກ ອັດຕາ ແລກປ່ຽນເງິນຕາ, ອັດຕາດອກເບ້ຍ, ຄວາມສ່ຽງທາງດ້ານສິນເຊື່ອ ແລະ ຄວາມສ່ຽງດ້ານສະພາບຄ່ອງ.

ການຄຸ້ມຄອງຄວາມສ່ຽງ ໂດຍຄວບຄຸມຂອງບໍລິສັດທີ່ເນັ້ນໃສ ເຮັດແນວໃດເຮັດໃຫ້ສິ່ງອັນຕະລາຍບໍ່ມຊ້ອນ ກະທົບຕໍ່ ການ ດຳເນີນງານດ້ານການເງິນ ຂອງບໍລິສັດ ໂດຍພິຈາລະນາຄວາມຄຸ້ມຄ່າຂອງຕົ້ນທຶນທີ່ຕ້ອງລົງທຶນ.

ການບໍລິຫານຄວາມສ່ຽງໂດຍຄວບຄຸມຂອງບໍລິສັດຈະເນັ້ນເລື່ອງການເຮັດແນວໃດໃຫ້ສິ່ງທີ່ເປັນຄວາມສ່ຽງຕໍ່ບໍລິສັດ ຈະມີ ຜົນກະທົບຕໍ່ດຳເນີນງານດ້ານການເງິນຂອງບໍລິສັດໃຫ້ໜ້ອຍທີ່ສຸດ ໂດຍພິຈາລະນາຄວາມຄຸ້ມຄ່າຂອງຕົ້ນທຶນທີ່ຕ້ອງ ລົງທຶນ.

3 ການຄຸ້ມຄອງຄວາມສ່ຽງທາງດ້ານການເງິນ (ຕໍ່)

3.1 ປັດໃຈຄວາມສ່ຽງທາງດ້ານການເງິນ (ຕໍ່)

ການບໍລິຫານຄວາມສ່ຽງ ໂດຍທົ່ວໄປຢູ່ພາຍໃຕ້ອຳນາດຂອງຄະນະຜູ້ບໍລິຫານ ພາຍໃຕ້ການຊີ້ນຳໆພາ ໂດຍສະພາບໍລິຫານ.

3.2 ຄວາມສ່ຽງການແລກປ່ຽນເງິນຕາຕ່າງປະເທດ

ບໍລິສັດ ດຳເນີນທຸລະກິດພາຍໃນປະເທດ ແຕ່ຍັງມີຄວາມສ່ຽງທາງດ້ານອັດຕາແລກປ່ຽນໃນສະກຸນເງິນໂດລາສະຫະລັດ, ເງິນເຢັນ ແລະ ເງິນບາດ. ຄວາມສ່ຽງຈາກອັດຕາແລກປ່ຽນ ເກີດຈາກການຊຳລະໜີ້ສິນເຖິງກຳນົດ ທີ່ເປັນສະກຸນເງິນຕາຕ່າງປະເທດ, ຮຸ້ນກູ້, ການສັ່ງຊື້ເຄື່ອງຈັກ ແລະ ອຸປະກອນຕ່າງໆ ທີ່ເປັນສະກຸນເງິນຕາຕ່າງປະເທດ.

ບໍລິສັດເຮັດສັນຍາ SWAP ເພື່ອປ້ອງກັນຄວາມສ່ຽງສຳລັບອັດຕາແລກປ່ຽນ ເຊິ່ງອາດຈະເກີດຂຶ້ນສຳລັບຮຸ້ນກູ້ ຈຳນວນ 6.500 ລ້ານບາດ (ອະທິບາຍໄວ້ໃນ ຂໍ້ທີ 13).

ໃນວັນທີ 31 ທັນວາ 2014, ນອກຈາກທີ່ໄດ້ກ່າວມາຂ້າງເທິງນັ້ນ ຜູ້ບໍລິຫານບໍ່ມີນະໂຍບາຍທີ່ເປັນທາງການ ແລະ ບໍ່ໄດ້ໃຊ້ເຄື່ອງມືທາງດ້ານ ການເງິນ ຫຼື ອານຸພັນ ເພື່ອທີ່ຈະມາຄວບຄຸມຄວາມສ່ຽງທາງດ້ານການແລກປ່ຽນເງິນຕາຕ່າງປະເທດ ສຳລັບເງິນກູ້ຢືມ. ເຖິງຢ່າງໃດກໍ່ຕາມ, ຜູ້ບໍລິຫານໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ຢ່າງທັນເວລາ ແລະ ບາງທີຈະນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ອານຸພັນ ເພື່ອຈັດການກັບຄວາມສ່ຽງຕ່າງໆ ຖ້າຜູ້ບໍລິຫານຫາກເຫັນວ່າຈຳເປັນ. ດັ່ງນັ້ນ, ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງອັດຕາແລກປ່ຽນເງິນຕາຕ່າງປະເທດນັ້ນ, ອາດສົ່ງຜົນກະທົບທີ່ມີຄວາມສຳຄັນໂດຍທຽບຖານ ຕໍ່ການດຳເນີນທຸລະກິດ, ຜົນການປະຕິບັດງານ, ເງື່ອນໄຂທາງດ້ານການເງິນ ແລະ ອື່ນໆ.

3.3 ອັດຕາຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ຄວາມສ່ຽງດອກເບ້ຍ ຕົ້ນຕໍເກີດຈາກເງິນກູ້ຢືມ ແລະ ຮຸ້ນກູ້. ເງິນກູ້ຢືມ ຕາມການປ່ຽນແປງອັດຕາປະກິດຕິ ສົ່ງຜົນກະທົບ ຕໍ່ຄວາມສ່ຽງດອກເບ້ຍຂອງບໍລິສັດ. ບໍລິສັດ ວິໄຈອັດຕາດອກເບ້ຍທີ່ປາກົດຕິຢ່າງທັນການ ແລະ ບໍ່ທັນໄດ້ຕັດສິນໃຈ ນຳໃຊ້ເຄື່ອງມືການເງິນ ຫຼື ອານຸພັນທາງການເງິນ ໃນການຄຸ້ມຄອງຄວາມສ່ຽງດັ່ງກ່າວ.

ບໍລິສັດໄດ້ເຮັດສັນຍາ SWAP ອັດຕາດອກເບ້ຍ ເພື່ອປ້ອງກັນຄວາມສ່ຽງ ໃນເລື່ອງອັດຕາດອກເບ້ຍ ໂດຍສັນຍາ SWAP ອັດຕາດອກເບ້ຍ ຈະປ່ຽນອັດຕາດອກເບ້ຍຂອງຮຸ້ນກູ້ຈາກອັດຕາຄົງທີ ເປັນອັດຕາລອຍຕົວ.

3.4 ຄວາມສ່ຽງທາງດ້ານສິນເຊື່ອ

ບໍລິສັດຂາຍຜົນຜະລິດໃຫ້ກັບ ຟຟລ ເຊິ່ງເປັນວິສາຫະກິດຂອງລັດ ທີ່ເຄື່ອນໄຫວ ພາຍໃຕ້ການຄຸ້ມຄອງ ຂອງກະຊວງ ການເງິນ ແລະ ເປັນລູກຄ້າລາຍໃຫຍ່ລາຍດຽວ. ຄວາມສ່ຽງ ໄດ້ຖືກພິຈາລະນາຢ່າງເຂັ້ມງວດ ຫຼື ຂຶ້ນກັບລູກຄ້າລາຍດຽວ ເຊິ່ງຜູ້ບໍລິຫານ ໄດ້ມີການປະເມີນ ແລະ ສາມາດຄວບຄຸມໄດ້.

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ແມ່ນຝາກໄວ້ກັບທະນາຄານ ທີ່ມີຊື່ສຽງ ແລະ ມີຄວາມໜ້າເຊື່ອຖື.

3 ການຄຸ້ມຄອງຄວາມສ່ຽງທາງດ້ານການເງິນ (ຕໍ່)

3.5 ຄວາມສ່ຽງທາງດ້ານສະພາບຄ່ອງ

ການຄຸ້ມຄອງຄວາມສ່ຽງ ມີຄວາມຮອບຄອບຢ່າງພຽງພໍ ໃນການນຳໃຊ້ເງິນສົດລົງທຶນໄລຍະສັ້ນ. ບໍລິສັດ ຍັງຢູ່ໃນໄລຍະເລີ່ມຕົ້ນ, ຜູ້ບໍລິຫານຂອງບໍລິສັດ ໄດ້ດຳເນີນການວາງແຜນການເງິນສົດ ເພື່ອຊ່ວຍໃນການຄຸ້ມຄອງຄວາມສ່ຽງ ແລະ ໝັ້ນໃຈວ່າ ມີສະພາບຄ່ອງຢ່າງພຽງພໍ ສຳລັບການດຳເນີນງານໄລຍະສັ້ນທີ່ຈຳເປັນ ລວມທັງ ການຊຳລະເງິນກູ້ຢືມຄືນ ແລະ ການວາງແຜນລົງທຶນໄລຍະຍາວ.

3.6 ການຄຸ້ມຄອງຄວາມສ່ຽງຂອງທຶນ

ວັດຖຸປະສົງຂອງບໍລິສັດ ເພື່ອການຄຸ້ມຄອງທຶນ ໃຫ້ຢູ່ໃນລະດັບປອດໄພ ເຮັດໃຫ້ມີຄວາມອາດສາມາດດຳເນີນງານຢ່າງຕໍ່ເນື່ອງ ແນໃສ່ຊຳລະຄືນຜົນປະໂຫຍດໃຫ້ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນ, ຫຼຸດຜ່ອນຄ່າໃຊ້ຈ່າຍຂອງທຶນ.

ເພື່ອທີ່ຈະຮັກສາ ຫຼື ປັບປຸງ ໂຄງສ້າງທຶນ ໃຫ້ສະດວກໃນການດຳເນີນງານ ແລະ ແຜນການລົງທຶນ, ບໍລິສັດ ອາດຢືມເງິນທຶນໃໝ່, ອອກຮຸ້ນໃໝ່, ຊອກຫາແຫຼ່ງເງິນກູ້ໃໝ່ແທນແຫຼ່ງເງິນກູ້ເກົ່າ ແລະ ດັດແກ້ຈຳນວນເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ໃນອະນາຄົດ.

4 ເງິນລົງທຶນໃນ ວິສາຫະກິດ ຮ່ວມ ແລະ ບໍລິສັດ ຮຸ້ນສ່ວນ

	2014 ລ້ານກີບ	2013 ລ້ານກີບ
ຍອດຍົກມາ	1.869.992	1.722.049
ສ່ວນແບ່ງກຳໄລຈາກວິສາຫະກິດຮ່ວມ	75.550	63.782
ສ່ວນແບ່ງກຳໄລຈາກບໍລິສັດຮຸ້ນສ່ວນ	398.917	389.964
ເງິນປັນຜົນ	(227.016)	(313.128)
ສ່ວນຕ່າງຂອງອັດຕາແລກປ່ຽນ	(8.477)	7.325
ຍອດເຫຼືອທ້າຍ	2.108.966	1.869.992

ບໍ່ມີການລົງທຶນເພີ່ມ ຫຼື ຂາຍກ່ຽວກັບວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ ໃນລະຫວ່າງປີ 2014 ແລະ 2013.

4. ເງິນລົງທຶນໃນ ວິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ (ຕໍ່)

4.1 ວິສາຫະກິດຂາຮຸ້ນ

ສ່ວນແບ່ງກຳໄລ ເງິນລົງທຶນຂອງບໍລິສັດ ມາຈາກວິສາຫະກິດຂາຮຸ້ນເຊິ່ງທັງໝົດແມ່ນບໍ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບ ແລະ ສ່ວນແບ່ງຂອງການຈ່າຍເງິນປັນຜົນມີດັ່ງຕໍ່ໄປນີ້:

2014
(ລ້ານກີບ)

ຊື່	ປະເທດທີ່ດຳເນີນທຸລະກິດ	ທຸລະກິດ	ອັດຕາສ່ວນຂອງເງິນລົງທຶນ(%)	ຕາມຕົ້ນທຶນ	ຕາມສ່ວນ	ເງິນປັນຜົນ
ນ້ຳງື່ມ 2	ສປປ ລາວ	ຜະລິດໄຟຟ້າ	25	454.742	547.777	(18.118)
ນ້ຳລີກ 1-2	ສປປ ລາວ	ຜະລິດໄຟຟ້າ	10	32.240	62.580	(9.205)
ລວມເງິນລົງທຶນໃນວິສາຫະກິດ ຂາຮຸ້ນ				486.982	610.357	(27.323)

2013
(ລ້ານກີບ)

ຊື່	ປະເທດທີ່ດຳເນີນທຸລະກິດ	ທຸລະກິດ	ອັດຕາສ່ວນຂອງເງິນລົງທຶນ(%)	ຕາມຕົ້ນທຶນ	ຕາມສ່ວນ	ເງິນປັນຜົນ
ນ້ຳງື່ມ 2	ສປປ ລາວ	ຜະລິດໄຟຟ້າ	25	454.742	499.437	(19.431)
ນ້ຳລີກ 1-2	ສປປ ລາວ	ຜະລິດໄຟຟ້າ	10	32.240	72.308	(6.521)
ລວມເງິນລົງທຶນໃນວິສາຫະກິດ ຂາຮຸ້ນ				486.982	571.745	(25.952)

ບໍລິສັດໄດ້ຮັບສິດທິໃນການອອກສຽງ ແລະ ມີຄະນະຜູ້ອຳນວຍການ ແລະ ສິດໃນການຕັດສິນໃຈທີ່ສຳຄັນໃນທາງດ້ານການເງິນ ແລະ ການດຳເນີນງານ (ແຕ່ບໍ່ໃຫ້ຫຼາຍເກີນ ວິສາຫະກິດຂາຮຸ້ນ) ໃນ ບໍລິສັດ ນ້ຳລີກ 1-2 ຈຳກັດ ຕາມສັນຍາຜູ້ຖືຮຸ້ນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້. ຜູ້ບໍລິຫານ ໄດ້ສະຫຼຸບວ່າເງິນລົງທຶນ ໃນ ບໍລິສັດ ນ້ຳລີກ 1-2 ຈຳກັດ ເປັນເງິນລົງທຶນໃນວິສາຫະກິດ ຂາຮຸ້ນ.

4. ເງິນລົງທຶນໃນ ອິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ (ຕໍ່)

4.1 ອິສາຫະກິດຂາຮຸ້ນ (ຕໍ່)

ຄຳຫຍໍ້

ນ້ຳງຶມ 2 = ບໍລິສັດ ໄຟຟ້າ ນ້ຳງຶມ 2 ຈຳກັດ
ນ້ຳລີກ 1-2 = ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ

4.2 ບໍລິສັດຮຸ້ນສ່ວນ

ສ່ວນແບ່ງກຳໄລ ເງິນລົງທຶນຂອງບໍລິສັດ ມາຈາກອິສາຫະກິດຂາຮຸ້ນເຊິ່ງທັງໝົດແມ່ນບໍ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບ ແລະ ສ່ວນແບ່ງຂອງການຈ່າຍເງິນປັນຜົນມີດັ່ງຕໍ່ໄປນີ້:

2014
(ລ້ານກີບ)

ຊື່	ປະເທດທີ່ດຳເນີນທຸລະກິດ	ທຸລະກິດ	ອັດຕາສ່ວນຂອງເງິນລົງທຶນ (%)	ຕາມຕົ້ນທຶນ	ຕາມສ່ວນ	ເງິນປັນຜົນ
ເຫີນຫີນບຸນ	ສປປ ລາວ	ຜະລິດໄຟຟ້າ	60	1.120.696	1.463.621	(192.789)
ຫ້ວຍເຫາະ	ສປປ ລາວ	ຜະລິດໄຟຟ້າ	20	17.447	31.607	(6.904)
ຫ້ວຍລຳພັນ	ສປປ ລາວ	ຜະລິດໄຟຟ້າ	60	3.381	3.381	-
ລວມເງິນລົງທຶນໃນບໍລິສັດ ຮຸ້ນສ່ວນ				1.141.524	1.498.609	(199.693)

2013
(ລ້ານກີບ)

ຊື່	ປະເທດທີ່ດຳເນີນທຸລະກິດ	ທຸລະກິດ	ອັດຕາສ່ວນຂອງເງິນລົງທຶນ(%)	ຕາມຕົ້ນທຶນ	ຕາມສ່ວນ	ເງິນປັນຜົນ
ເຫີນຫີນບຸນ	ສປປ ລາວ	ຜະລິດໄຟຟ້າ	60	1.120.696	1.280.118	(274.816)
ຫ້ວຍເຫາະ	ສປປ ລາວ	ຜະລິດໄຟຟ້າ	20	17.447	14.748	(12.360)
ຫ້ວຍລຳພັນ	ສປປ ລາວ	ຜະລິດໄຟຟ້າ	60	3.381	3.381	-
ລວມເງິນລົງທຶນໃນບໍລິສັດ ຮຸ້ນສ່ວນ				1.141.524	1.298.247	(287.176)

4. ເງິນລົງທຶນໃນ ວິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ (ຕໍ່)

4.2 ບໍລິສັດຮຸ້ນສ່ວນ

ໃນສ່ວນຂອງ ເທີນຫີນບຸນ ແລະ ຫ້ວຍລຳພັນ, ເຖິງແມ່ນວ່າບໍລິສັດມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ 60% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂໃນສັນຍາຂອງວິສາຫະກິດຫຸ້ນສ່ວນ. ບໍລິສັດໄດ້ ເກັບກຳການລົງມະຕິຄະແນນສຽງ ແລະ ສຽງໃນສະພາຜູ້ບໍລິຫານ ເຊິ່ງສາມາດຕັດສິນໃຈໃນເລື່ອງ ການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີ ອຳນາດຄວບຄຸມທັງໝົດ). ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດ ຮຸ້ນສ່ວນ.

ຄຳຫຍໍ້

ເທີນຫີນບຸນ = ບໍລິສັດ ໄຟຟ້າ ເທີນຫີນບຸນ ຈຳກັດ
ຫ້ວຍເຫາະ = ບໍລິສັດ ໄຟຟ້າ ຫ້ວຍເຫາະ ຈຳກັດ
ຫ້ວຍລຳພັນ = ບໍລິສັດ ໄຟຟ້າ ຫ້ວຍ ລຳພັນ ຈຳກັດ

5. ເງິນລົງທຶນຈ່າຍລ່ວງໜ້າ

ເງິນລົງທຶນຈ່າຍລ່ວງໜ້າປະກອບດ້ວຍ:

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ເງິນຈ່າຍລ່ວງໜ້າພາຍໃຕ້ບົດບັນທຶກຄວາມເຂົ້າໃຈກ່ຽວກັບການໂອນ ຊັບສິນຂອງໂຄງການ	779.005	474.411
	779.005	474.411

ເງິນຈ່າຍລ່ວງໜ້າພາຍໃຕ້ບົດບັນທຶກຄວາມເຂົ້າໃຈກ່ຽວກັບ ການໂອນຊັບສິນຂອງໂຄງການ ໄດ້ຈ່າຍໃຫ້ ຟຟລ ເຊິ່ງໄດ້ ເປີດເຜີຍໃນ ບົດອະທິບາຍ 1 ຄ vi) to x). ບໍລິສັດໄດ້ຈ່າຍເງິນລົງທຶນຈ່າຍລ່ວງໜ້າພາຍໃຕ້ບົດບັນທຶກຄວາມເຂົ້າໃຈກ່ຽວ ກັບ ການໂອນຊັບສິນຂອງໂຄງການດັ່ງນີ້:

ຊື່ໂຄງການ	ບົດອະທິບາຍ	31 ທັນວາ 2014	31 ທັນວາ 2013
		ລ້ານກີບ	ລ້ານກີບ
ຫ້ວຍລຳພັນໃຫຍ່ ແລະ ນ້ຳຄານ 2	1ຄ) vi	577.726	432.313
ບໍລິສັດ ໄຟຟ້ານ້ຳງຶ່ມ 5	1ຄ) vii	42.098	42.098
ນ້ຳສະນາ	1ຄ) viii	16.112	-
ນ້ຳຄານ 3	1ຄ) ix	143.069	-
ລວມ		**779.005**	**474.411**

6. ຊັບສິນບັດພາຍໃຕ້ສັນຍາສຳປະທານ, ຕາມມູນຄ່າສຸດທິ

	ຕຶກອາຄານ ລ້ານກີບ	ເຂື່ອນໄຟຟ້າ ລ້ານກີບ	ໂຮງງານ ແລະ ເຄື່ອງຈັກ ລ້ານກີບ	ລິດໃຫຍ່ ລ້ານກີບ	ເຄື່ອງໃຊ້ ຫ້ອງການ ລ້ານກີບ	ເຟີນີເຈີ້ ລ້ານກີບ	ດຳເນີນກໍ່ສ້າງ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2013								
ຕົ້ນທຶນ	309.029	2.457.596	1.699.623	5.631	1.969	5.566	11.732	4.491.146
ຄ່າຫລຸ້ຍຫ້ຽນສະສົມ	(50.232)	(246.944)	(177.746)	(2.684)	(720)	(1.711)	-	(480.037)
ມູນຄ່າຍັງເຫຼືອຕາມບັນຊີ	258.797	2.210.652	1.521.877	2.947	1.249	3.855	11.732	4.011.109
ຍອດຍົກມາຕາມບັນຊີ								
ໃນວັນທີ 1 ມັງກອນ 2014	258.797	2.210.652	1.521.877	2.947	1.249	3.855	11.732	4.011.109
ສ່ວນເພີ່ມ	48.414	-	261.569	4.767	660	887	-	316.297
ໂອນຈາກວຽກດຳເນີນການກໍ່ສ້າງ	-	-	11.732	-	-	-	(11.732)	-
ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນປີ	(19.489)	(82.642)	(76.090)	(1.666)	(466)	(1.202)	-	(181.555)
ມູນຄ່າຍັງເຫຼືອຕາມບັນຊີ	287.722	2.128.010	1.719.088	6.048	1.443	3.540	-	4.145.851
ໃນວັນທີ 31 ທັນວາ 2014								
ຕົ້ນທຶນ	357.443	2.457.596	1.972.923	10.398	2.630	6.452	-	4.807.443
ຄ່າຫລຸ້ຍຫ້ຽນສະສົມ	(69.721)	(329.586)	(253.835)	(4.350)	(1.187)	(2.912)	-	(661.192)
ມູນຄ່າຍັງເຫຼືອຕາມບັນຊີ	287.722	2.128.010	1.719.088	6.048	1.443	3.540	-	4.145.851

ໃນປີ 2014, ສ່ວນເພີ່ມທັງໝົດ 316.272 ລ້ານກີບ ເຊິ່ງປະກອບດ້ວຍລາຍການເຄື່ອນໄຫວເງິນສົດ 142.162 ລ້ານກີບ ແລະ ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ 174.135 ລ້ານກີບ.

7. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ເງິນສົດໃນມື	88	98
ເງິນຝາກທະນາຄານກະແສລາຍວັນ	1.251.446	159.816
	1.251.534	159.914

ເງິນສົດໃນມື ມີໄວ້ເພື່ອໃຊ້ຈ່າຍຫົ່ວໄປໃນບໍລິສັດ

ເງິນຝາກໃນທະນາຄານ ປະກອບດ້ວຍເງິນຝາກທະນາຄານໃນ 3 ສະກຸນເງິນຄືໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ ບໍ່ມີອັດຕາດອກເບ້ຍ 0-1% ຕໍ່ປີ ກັບທະນາຄານຢູ່ໃນ ສປປ ລາວ.

8. ເງິນລົງທຶນໄລຍະສັ້ນ

ບໍລິສັດ ໄດ້ລົງທຶນໄລຍະສັ້ນໃນໄລຍະເວລາ 12 ເດືອນ ຈຳນວນ 20.000 ລ້ານກີບ (2013: 20.000 ລ້ານກີບ), ໂດຍຝາກເງິນໄວ້ກັບສະຖາບັນການເງິນພາຍໃນປະເທດ, ເລີ້ມ ຈາກວັນທີ 18 ພະຈິກ 2014 ເຖິງ ວັນທີ 18 ພະຈິກ 2015 (2013: ເລີ້ມ ຈາກວັນທີ 18 ພະຈິກ 2013 ເຖິງ ວັນທີ 18 ພະຈິກ 2014) ມີອັດຕາດອກເບ້ຍທີ່ 10% ຕໍ່ປີ (2013: 10% ຕໍ່ປີ).

9. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ໜີ້ຕ້ອງຮັບການຄ້າ - ບໍລິສັດ ແມ່ (ບົດອະທິບາຍ 24 ງ) (i)	436.120	451.654
ໜີ້ຕ້ອງຮັບອື່ນ - ບໍລິສັດ ແມ່ (ບົດອະທິບາຍ 24 ງ) (ii)	65.944	65.944
ໜີ້ຕ້ອງຮັບອື່ນໆ	318	1.757
	502.382	519.355

9. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ (ຕໍ່)

i) ອາຍຸໜີ້ຕ້ອງຮັບການຄ້າວິເຄາະໄດ້ດັ່ງລຸ່ມນີ້:

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ບໍ່ເຖິງກຳນົດ	112.851	235.404
ຄ້າງຊຳລະຕ່ຳກວ່າ 3 ເດືອນ	323.269	216.250
ຄ້າງຊຳລະ 3-6 ເດືອນ	-	-
ຄ້າງຊຳລະ 6-12 ເດືອນ	-	-
ຄ້າງຊຳລະເກີນ 12 ເດືອນ	-	-
	436.120	451.654
ຫັກ ຄ່າສູນເສຍມູນຄ່າໜີ້ຕ້ອງຮັບຫວ່ຽງຍາກ	-	-
ໜີ້ຕ້ອງຮັບສຸດທິ	436.120	451.654

ii) ໜີ້ຕ້ອງຮັບຈາກບໍລິສັດ ແມ່ ຄາດວ່າຈະຊຳລະໃນປີ 2015, ບໍລິສັດ ກຳລັງເຈລະຈາ ກັບ ຟຟລ ໃນເລື່ອງການຊຳລະເງິນ ໜີ້ຕ້ອງຮັບເກີດຂຶ້ນໃນລະຫວ່າງການໂອນ ຊັບສິນໃນເດືອນທັນວາ 2010 ດັ່ງທີ່ເປີດເຜີຍໃນ (ບົດອະທິບາຍຂໍ້ 1 ຂ).

10. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ (ຮຸ້ນ)	ຮຸ້ນ (ລ້ານກີບ)	ສ່ວນເພີ່ມມູນ ຄ່າຮຸ້ນ (ລ້ານກີບ)	ລວມ (ລ້ານກີບ)
ວັນທີ 1 ມັງກອນ 2013	1.226.216.765	4.904.867	142.229	5.047.096
ອອກຮຸ້ນໃໝ່	-	-	-	-
ໃນວັນທີ 31 ທັນວາ 2013	1.226.216.765	4.904.867	142.229	5.047.096
ອອກຮຸ້ນໃໝ່	-	-	-	-
ໃນວັນທີ 31 ທັນວາ 2014	1.226.216.765	4.904.867	142.229	5.047.096

ວັນທີ 31 ທັນວາ 2014, ລວມຍອດຈຳນວນຮຸ້ນສາມັນທີ່ໄດ້ຮັບຈາກການອະນຸມັດທັງໝົດ 1.226.216.765 ຮຸ້ນ (31 ທັນວາ 2013: 1.226.216.765 ຮຸ້ນ) ມູນຄ່າ 4.000 ຕໍ່ຮຸ້ນ ກີບ (31 ທັນວາ 2013 : 4.000 ກີບຕໍ່ຮຸ້ນ). ຮຸ້ນທີ່ໄດ້ອອກທັງໝົດ ໄດ້ຊຳລະຄົບຖ້ວນຕາມຈຳນວນເງິນດັ່ງກ່າວ.

11. ຄ້າງສະສົມຕາມລະບຽບການ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ວັນທີ 1 ມັງກອນ	206.442	109.268
ຄ້າງສະສົມຕາມລະບຽບການ ເກີດຂຶ້ນໃນປີ	90.768	97.174
ວັນທີ 31 ທັນວາ	297.210	206.442

ຄ້າງສະສົມຕາມລະບຽບການ ສ້າງຂຶ້ນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 151 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳປີ ຈົນກວ່າ ຄ້າງສະສົມດັ່ງກ່າວ ເທົ່າກັບ 50% ຂອງທຶນຈົດທະບຽນ.

12. ເງິນກູ້ຍືມໄລຍະຍາວ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຍອດລວມເງິນກູ້ໄລຍະຍາວ	598.782	937.298
ລົບ:ສ່ວນຂອງເງິນກູ້ໄລຍະຍາວຈັດເປັນໄລຍະສັ້ນ	(99.519)	(132.003)
ເງິນກູ້ໄລຍະຍາວ, ມຸນຄ່າຍັງເຫຼືອສຸດທິ	499.263	805.295

ການເຄື່ອນໄຫວ ຂອງເງິນກູ້ຍືມໄລຍະຍາວ ສາມາດວິໄຈໄດ້ ດັ່ງນີ້:

	31 ທັນວາ 2013 ລ້ານກີບ	31 ທັນວາ 2012 ລ້ານກີບ
ວັນທີ 1 ມັງກອນ	937.298	1.048.356
ເພີ່ມເຕີມລະຫວ່າງປີ	-	90.113
ຫັກ: ລາຍຈ່າຍລະຫວ່າງປີ	(333.145)	(174.663)
(ກຳໄລ)/ຂາດທຶນ ໃນອັດຕາແລກປ່ຽນ	(5.371)	(26.508)
ໃນວັນທີ 31 ທັນວາ	598.782	937.298

12. ເງິນກູ້ຍືມໄລຍະຍາວ (ຕໍ່)

ບໍລິສັດ ໄດ້ເຮັດສັນຍາການຊຳລະໜີ້ (ສັນຍາ) ກັບ ຟຟລ ໃນວັນທີ 15 ທັນວາ 2010 (ບົດອະທິບາຍ ຂໍ້ 1 ຄ iii). ຟຟລ ແມ່ນເປັນຜູ້ຍືມຈາກຫລາຍແຫລ່ງທຶນ ເຊິ່ງເປັນເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນຈາກ ລັດຖະບານ ແຫ່ງ ສປປ ລາວ, ເຊິ່ງມູນຄ່າດັ່ງເດີມຈາກທຶນໄດ້ມາຈາກຜູ້ສະໜອງທຶນຫລາຍແຫ່ງ ເຊິ່ງຖືກສະໜອງຜ່ານລັດຖະບານແຫ່ງ ສປປ ລາວ. ນອກຈາກນັ້ນ ສຳລັບ ຊັບສິນທີ່ຖືກໂອນຖ່າຍ, ບໍລິສັດໄດ້ມີການເຊັນສັນຍາ ວ່າຈະຊຳລະຍອດຄ້າງໜີ້ທີ່ເຫລືອ ໃຫ້ກັບ ຟຟລ ແລະ ຟຟລ ເປັນຜູ້ສືບຕໍ່ຈ່າຍໃຫ້ ລັດຖະບານ ແຫ່ງ ສປປ ລາວ, ສຳລັບໄລຍະເວລາ ຈາກ ວັນທີ 10 ມັງກອນ 2010 ເຖິງ 15 ກໍລະກົດ 2022, ຫຼັງຈາກນັ້ນ ລັດຖະບານຈະສືບຕໍ່ ຈ່າຍໂດຍກົງໃຫ້ກັບຜູ້ສະໜອງທຶນຕາມການ ຕົກລົງທີ່ໄດ້ລະບຸໄວ້ໃນສັນຍາກູ້ຍືມດັ່ງເດີມ.

ລາຍການເຄື່ອນໄຫວທີ່ສຳຄັນມີດັ່ງນີ້:

2014:

ບໍ່ມີ

2013:

ບໍລິສັດ ໄດ້ຕົກລົງເຮັດສັນຍາການໂອນຊຳລະໜີ້ໃໝ່ກັບ ຟຟລ ໃນວັນທີ 28 ກຸມພາ 2013 ສຳລັບໂຄງການ ເຂື່ອນໄຟຟ້ານ້ຳຊອງ, ອີງຕາມສັນຍານີ້ ບໍລິສັດ ຈະຕ້ອງຊຳລະເງິນໃຫ້ ຟຟລ ເທົ່າກັບ ຟຟລ ຊຳລະໃຫ້ ລັດຖະບານ ເລີ່ມ 27 ມັງກອນ 2014 ຫາ 27 ກັນຍາ 2027 (ບົດອະທິບາຍຂໍ້ 1 ຄ iii).

ຈຳນວນເງິນໃນບັນຊີ ເງິນກູ້ຍືມ ຂອງບໍລິສັດ ມີດັ່ງນີ້ :

	31 ທັນວາ 2014	31 ທັນວາ 2013
ໂດລາສະຫະລັດ (ລ້ານ)	64	103
ເຢັນ (ລ້ານ)	1.221	1.424

ການຈຳແນກ ອາຍຸຂອງເງິນກູ້ຍືມ ດັ່ງນີ້:

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ໜຶ່ງປີລົງມາ (1 ປີ)	99.519	132.003
ເກີນໜຶ່ງປີ (1 ປີ) ແຕ່ບໍ່ເກີນຫ້າປີ (5 ປີ)	398.074	524.745
ຫ້າປີ (5 ປີ) ຂຶ້ນໄປ	101.189	280.550
	598.782	937.298

13. ຮຸ້ນກູ້, ສຸດທິ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຮຸ້ນກູ້	1.610.310	-
ຫລຸດ: ຕົ້ນທຶນໃນການອອກຮຸ້ນກູ້	(34.448)	-
	1.575.862	-
ຫລຸດ: ຮຸ້ນກູ້ສ່ວນທີ່ເຖິງກຳນົດພາຍໃນ 1 ປີ	-	-
	1.575.862	-

ການເຄື່ອນໄຫວຮຸ້ນກູ້ສຳລັບ ປີສິ້ນສຸດ 31 ທັນວາ ມີດັ່ງລຸ່ມນີ້:

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຍອດຍົກມາ	-	-
ເພີ່ມຂຶ້ນ	1.616.810	-
ຕົ້ນທຶນໃນການອອກຮຸ້ນກູ້	(34.670)	-
ລາຍຈ່າຍຕັດຕົ້ນທຶນໃນການອອກຮຸ້ນກູ້	222	-
ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ	(6.500)	-
	1.575.862	-

ວັນທີ 12 ທັນວາ 2014 ບໍລິສັດໄດ້ອອກຮຸ້ນກູ້ 5-10 ປີ ໃນອັດຕາຄົງທີ ແລະ ເປັນຮຸ້ນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ, ໃນສະກຸນໄທຍບາດ ລາຄາສະເໜີຂາຍ 1.000 ບາດ ຕໍ່ໜຶ່ງໜ່ວຍ ລວມທັງໝົດ 6,5 ລ້ານໜ່ວຍ ເຊິ່ງມີມູນຄ່າ ລວມ 6.500 ລ້ານບາດ (ປະມານ 1.616.810 ລ້ານກີບ). ຮຸ້ນກູ້ ແມ່ນອອກໃນລາຄາໜ້າໃບຮຸ້ນ ແລະ ບໍ່ມີສ່ວນຫຼຸດ ຫຼື ສ່ວນເພີ່ມມູນຄ່າຮຸ້ນ ທີ່ເກີດຈາກການອອກຮຸ້ນກູ້. ອັດຕາດອກເບ້ຍ ຫຼື ອັດຕາ Coupon ແມ່ນຖືກກຳນົດຄົງທີ ຈາກ 4,95% ຫາ 5,45% ຕໍ່ປີ. ດອກເບ້ຍຕ້ອງຈ່າຍສອງຄັ້ງຕໍ່ປີ ໃນ ມິຖຸນາ ແລະ ທັນວາ ແລະ ການຈ່າຍດອກເບ້ຍຄັ້ງທີ ໜຶ່ງແມ່ນຄົບກຳນົດ ວັນທີ 12 ມິຖຸນາ 2015. ຮຸ້ນກູ້ ແມ່ນຖືກສະເໜີຜ່ານວິທີສະເພາະ ໂດຍອອກທີ່ຕະຫລາດຫຼັກຊັບແຫ່ງປະເທດໄທໃຫ້ ກຸ່ມນັກລົງທຶນສະຖາບັນ ລວມເຖິງ ທະນາຄານ, ກອງທຶນລວມ, ກອງທຶນການຈັດການຊັບສິນ ແລະ ບໍລິສັດ ປະກັນໄພ. ຮຸ້ນກູ້ດັ່ງກ່າວ ໄດ້ຮັບການຈັດລະດັບຄວາມສ່ຽງ BBB+ ຈາກ ບໍລິສັດ TRIS Rating Co., Ltd ຂອງປະເທດໄທ.

ຕົ້ນທຶນໃນການອອກຮຸ້ນກູ້ ປະມານ 34.670 ລ້ານກີບ ແມ່ນເກີດໃນການກະກຽມ ແລະ ການຂາຍຮຸ້ນກູ້. ຕົ້ນທຶນດັ່ງກ່າວປະກອບດ້ວຍຄ່າທຳນຽມສຳລັບທີ່ປຶກສາ, ທະນາຍຄວາມ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ຕົ້ນທຶນໃນການອອກຮຸ້ນກູ້ ແມ່ນຮັບຮູ້ເປັນຊັບສິນ ແລະ ຕັດຈ່າຍແບບເສັ້ນຊື່ຕາມອາຍຸຂອງຮຸ້ນກູ້. ນອກຈາກນີ້, ຕົ້ນທຶນດັ່ງກ່າວ ແມ່ນຖືກນຳສະເໜີມູນຄ່າສຸດທິ ກັບມູນຄ່າຍັງເຫຼືອຂອງຮຸ້ນກູ້ (ບົດອະທິບາຍ 2.16).

13. ຮຸ້ນກູ້, ສຸດທິ (ຕໍ່)

ລາຍລະອຽດຂອງຮຸ້ນກູ້ທີ່ສຳຄັນມີລາຍລະອຽດ ດັ່ງນີ:

ລາຍການ	ຮູບແບບ 1	ຮູບແບບ 2	ຮູບແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.
ລວມ ລາຄາທີ່ສະເໜີ	1.500 ລ້ານບາດ	2.000 ລ້ານບາດ	3.000 ລ້ານບາດ
ຈຳນວນທີ່ອອກ	1.500.000 ໜ່ວຍ	2.000.000 ໜ່ວຍ	3.000.000 ໜ່ວຍ
ອັດຕາດອກເບ້ຍ	4,95% ຕໍ່ ປີ	5,20% ຕໍ່ ປີ	5,45% ຕໍ່ ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,26% ຕໍ່ ປີ	5,54% ຕໍ່ ປີ	5,62% ຕໍ່ ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 12 ມີຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມີຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມີຖຸນາ ແລະ 12 ທັນວາ
ອາຍຸ	5 ປີ	7 ປີ	10 ປີ
ວັນທີ ຄົບກຳນົດ	12 ທັນວາ 2019	12 ທັນວາ 2021	12 ທັນວາ 2024

14. ໜີ້ຕ້ອງຈ່າຍ ຂອງສັນຍາ SWAP, ສຸດທິ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ໜີ້ຕ້ອງຈ່າຍ ຂອງສັນຍາ SWAP	1.601.884	-
ໜີ້ຕ້ອງຮັບ ຂອງສັນຍາ SWAP	(1.610.310)	-
ລາຍການລໍຕັດຈຳໜ່າຍຈາກສັນຍາ swap	19.531	-
	11.105	-

ບໍລິສັດ ໄດ້ເຊັນສັນຍາ SWAP ໂດຍປ່ຽນສະກຸນເງິນຂອງຮຸ້ນກູ້ຈາກບາດ ເປັນ ໂດລາສະຫະລັດ ເພື່ອປ້ອງກັນຄວາມສ່ຽງຈາກການປ່ຽນແປງຂອງສະກຸນເງິນຕ່າງໆປະເທດຂອງຮຸ້ນກູ້ທີ່ອອກ ແລະ ໄດ້ເຮັດສັນຍາ SWAP ອັດຕາດອກເບ້ຍ ໂດຍປ່ຽນອັດຕາດອກເບ້ຍຈາກດອກເບ້ຍຄົງທີ່ ເປັນ ອັດຕາດອກເບ້ຍແບບລອຍໂຕ ກັບສະຖາບັນການເງິນຂອງປະເທດໄທ (ບົດອະທິບາຍ 1 ຄ xi).

15. ເງິນກູ້ຢືມໄລຍະສັ້ນ

ບໍລິສັດ ໄດ້ກູ້ເງິນ ບໍ່ມີຫຼັກຊັບຄ້ຳປະກັນ ກັບທະນາຄານແຫ່ງ ສປປ ລາວ ໃນອັດຕາດອກເບ້ຍ 7% ຕໍ່ປີ. ເຊິ່ງເງິນກູ້ດັ່ງກ່າວ ໄດ້ຈ່າຍຄືນໝົດແລ້ວໃນລະຫວ່າງປີ 2014.

16. ລາຍຈ່າຍຕ້ອງຈ່າຍ

ລາຍຈ່າຍດອກເບ້ຍຕ້ອງຈ່າຍ ປະກອບດ້ວຍ :

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ລາຍຈ່າຍດອກເບ້ຍຕ້ອງຈ່າຍ	8.936	7.948
ຄ່າພາກຫຼວງ ແລະ ອາກອນອື່ນໆ	103.950	47.605
ຕົ້ນທຶນໃນການອອກຮຸ້ນກູ້	16.935	-
ອື່ນໆ	5.115	10.524
	134.936	66.077

17. ໜີ້ຕ້ອງສົ່ງອາກອນລາຍໄດ້

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຍອດຕົ້ນປີ	9.278	6.829
ຈ່າຍໃນລະຫວ່າງປີ	(27.667)	(24.878)
(ບົດອະທິບາຍຂໍ້ 21)	22.695	27.327
	4.306	9.278

18. ໜີ້ສິນໝຸນວຽນອື່ນໆ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ເງິນຫັກໄວ້ຈາກຜູ້ຮັບເໝົາ (i)	-	18.785
ອື່ນໆ	40	23
	40	18.808

(i) ເງິນຫັກໄວ້ຈາກຜູ້ຮັບເໝົາສ່ວນໃຫຍ່ ແມ່ນຫັກໄວ້ຈາກການກໍ່ສ້າງ ໂຄງການ ພະລັງງານໄຟຟ້າ ນ້ຳງື່ມ 1 ຈຳນວນ 15.338 ລ້ານກີບ. ເງິນຄ້ຳປະກັນແມ່ນໄດ້ຖືກສະສາງ ແລະ ສົ່ງຄືນໃຫ້ຜູ້ຮັບເໝົາໃນປີ 2014.

19. ລາຍຈ່າຍ ຈັດຕາມລັກສະນະເນື້ອໃນ

ລາຍການລາຍຈ່າຍທີ່ເປັນສາລະສຳຄັນ, ໄດ້ຖືກແຍກຕາມລັກສະນະເນື້ອໃນ, ໄດ້ລວມຢູ່ໃນກຳໄລຈາກການດຳເນີນງານ:

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຄ່າໃຊ້ຈ່າຍໃຫ້ພະນັກງານ	40.112	42.173
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	21.623	21.873
ຫັກຄ່າຫລຸ້ຍຫ້ຽນຊັບສິນພາຍໃຕ້ສົນຍາສຳປະທານ (ບົດອະທິບາຍ ຂໍ້ 6)	181.555	167.060
ລາຍຈ່າຍອາກອນເງິນປັນຜົນ	22.702	31.313
ນ້ຳມັນເຊື້ອໄຟ	5.507	5.140
ອື່ນໆ	67.642	49.865
	339.141	317.424

20. ລາຍຈ່າຍດອກເບ້ຍ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ດອກເບ້ຍຈ່າຍຈາກເງິນກູ້ຢືມ	31.722	30.845

ຄ່າໃຊ້ຈ່າຍດອກເບ້ຍ ຈຳນວນ 30.273 ລ້ານກີບ ແມ່ນຕົດພັນກັບ ສັນຍາການໂອນເງິນກູ້ຈາກ ຟຟລ (ບົດອະທິບາຍ ຂໍ້ 1 ຄ iii ແລະ ບົດອະທິບາຍ ຂໍ້ 24 ຄ).

21. ລາຍຈ່າຍອາກອນກຳໄລ

ອີງຕາມສັນຍາສຳປະທານ ສະບັບປັບປຸງ ລົງວັນທີ 24 ກໍລະກົດ 2013 (ບົດອະທິບາຍຂໍ້ 1 ຄ i) ບໍລິສັດ ມີພັນທະໃນ ການຊຳລະອາກອນກຳໄລ ໃນອັດຕາ 10% ຂອງມູນຄ່າລາຍຮັບ. ນອກຈາກນັ້ນ ພາຍໃຕ້ສິດໃນການເສຍອາກອນຂອງ ບໍລິສັດ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ບໍລິສັດແມ່ນຈະໄດ້ຮັບການຫລຸດຜ່ອນອັດຕາອາກອນໃນ ອັດຕາ 5% ຈາກ ອັດຕາປົກກະຕິພາຍໃນ 4 ປີ ເລີ່ມຈາກປີ 2011 ຫາ ປີ 2015 (ເຊິ່ງເປັນອັດຕາ 5% ຈາກອັດຕາປົກກະຕິ 10%).

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ການສົມທຽບລະຫວ່າງລາຍຈ່າຍອາກອນກຳໄລ ແລະ ກຳໄລທາງ ດ້ານບັນຊີ:		
ກຳໄລທາງດ້ານບັນຊີກ່ອນອາກອນກຳໄລ	930.379	999.069
ລາຍຈ່າຍທີ່ຫັກອອກບໍ່ໄດ້ ແລະ ການປັບປຸງລາຍຈ່າຍ ເພື່ອ ຈຸດປະສົງທາງດ້ານອາກອນ	(2.000)	1.206
ກຳໄລຮຸ້ນຈາກວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ ພາຍໃຕ້ວິທີສ່ວນໄດ້ເສຍ (ບົດອະທິບາຍຂໍ້ 4)	(474.467)	(453.746)
ພື້ນຖານຖືກເສຍອາກອນກຳໄລ	453.912	546.520
ຄິດໄລ່ອາກອນກຳໄລອັດຕາ 5% (2013: 5%)	22.695	27.327

22. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນ ໄດ້ຄິດໄລ່ ໂດຍການເອົາກຳໄລສຸດທິໃນປີ ຫານໃຫ້ ຈຳນວນຮຸ້ນ ແບບວິທີສະເລ່ຍຕາມ ນ້ຳໜັກ ຂອງຮຸ້ນສາມັນທີ່ອອກຢູ່ໃນລະຫວ່າງປີ.

	31 ທັນວາ 2014	31 ທັນວາ 2013
ກຳໄລສຸດທິຂອງຜູ້ຖືຮຸ້ນ (ລ້ານກີບ)	907.684	971.742
ຈຳນວນຮຸ້ນ ແບບວິທີສະເລ່ຍຕາມນ້ຳໜັກຂອງຮຸ້ນສາມັນ (ລ້ານຮຸ້ນ)	1.226	1.226
ກຳໄລຕໍ່ຮຸ້ນ (ກີບ)	740,36	792,61

23. ເງິນປັນຜົນ

ບໍລິສັດອາດຈະແຈກຢາຍເງິນປັນຜົນບໍ່ຕ່ຳກວ່າ 50 ສ່ວນຮ້ອຍຂອງຜົນກຳໄລສຸດທິ ທີ່ມີຢູ່ຂອງບໍລິສັດ ຫຼັງຈາກທີ່ ຫັກ ອາກອນ, ເງິນສຳຮອງ / ສຳຮອງເງິນຕາມກົດໝາຍ ແລະ ເງິນສຳຮອງອື່ນໆ (ຖ້າມີ). ການຈັດສັນເງິນປັນຜົນຈະເຮັດຂຶ້ນ ຕາມສະພາບເສດຖະກິດ ແລະ ແຜນການລົງທຶນຂອງບໍລິສັດ. ເງິນປັນຜົນປະຈຳປີຕ້ອງຈ່າຍແມ່ນບໍ່ທັນໄດ້ຄິດໄລ່ ຈົນກວ່າ ຈະໄດ້ຮັບອະນຸມັດຈາກມະຕິກອງປະຊຸມປະຈຳປີ.

ສະຫລຸບເງິນປັນຜົນຈ່າຍມີດັ່ງຕໍ່ໄປນີ້:

ລາຍລະອຽດ	ອະນຸມັດ ວັນທີ / ໂດຍ	ເງິນປັນຜົນຕໍ່ຮຸ້ນ (ກີບ/ຮຸ້ນ)	ຈຳນວນ ລ້ານກີບ	ວັນທີ່ຈ່າຍ
2014:				
ເງິນປັນຜົນຈາກການດຳເນີນງານ ໃນໄລຍະ 6 ເດືອນ ຈາກວັນທີ 1 ກໍລະກົດ ເຖິງ ວັນທີ 31 ທັນວາ 2013	24 ເມສາ 2014 ດ້ວຍສະພາຜູ້ຖືຮຸ້ນ	293	359.282	ເມສາ 2014
ເງິນປັນຜົນຈາກການດຳເນີນງານ ໃນໄລຍະ 6 ເດືອນ ຈາກວັນທີ 1 ມັງກອນ ເຖິງ ວັນທີ 30 ມິຖຸນາ 2014	14 ສິງຫາ 2014 ດ້ວຍສະພາຜູ້ຖືຮຸ້ນ	182	223.171	ຕຸລາ 2014
		ລວມ	**582.453**	
2013:				
ເງິນປັນຜົນຈາກການດຳເນີນງານ ໃນໄລຍະ 6 ເດືອນ ຈາກວັນທີ 1 ກໍລະກົດ ເຖິງ ວັນທີ 31 ທັນວາ 2012	28 ມີນາ 2013 ດ້ວຍສະພາຜູ້ຖືຮຸ້ນ	280	343.341	ເມສາ 2013
ເງິນປັນຜົນຈາກການດຳເນີນງານ ໃນໄລຍະ 6 ເດືອນ ຈາກວັນທີ 1 ມັງກອນ ເຖິງ ວັນທີ 30 ມິຖຸນາ 2013	13 ສິງຫາ 2013 ດ້ວຍສະພາຜູ້ຖືຮຸ້ນ	182	223.171	ກັນຍາ 2013
		ລວມ	**566.512**	

24. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ຜູ້ຖືຮຸ້ນໃຫ່ຍຂອງບໍລິສັດຄື ຟຟລ ເຊິ່ງຖືເປັນຈຳນວນ 75% ຂອງຮຸ້ນສາມັນທັງໝົດ ຜູ້ທີ່ຖືຮຸ້ນທີ່ເຫຼືອແມ່ນຜູ້ຖືຮຸ້ນທົ່ວໄປ.

ລາຍການເຄື່ອນໄຫວ ທີ່ມີຄວາມສຳຄັນ ກັບພາກສ່ວນທີ່ກ່ຽວຂ້ອງກັນ ໃນປີ ສາມາດສັງລວມໄດ້ ດັ່ງນີ້:

ກ) ຂາຍຜົນຜະລິດ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ຂາຍໄຟຟ້າ ໃຫ້ ຟຟລ	839.193	862.429

ການຂາຍໄຟຟ້າກັບ ຟຟລ ແມ່ນອີງໃສ່ຂໍ້ກຳນົດ ແລະ ເງື່ອນໄຂ ທີ່ໄດ້ຕົກລົງໃນສັນຍາຊື້ ("PPA") ລົງວັນທີ 15 ທັນວາ 2010 ແລະ ສະບັບປັບປຸງ ໃນວັນທີ 9 ທັນວາ 2011 (ບົດອະທິບາຍຂໍ້ 1 ຄ ii).

ຂ) ລາຍຈ່າຍເງິນປັນຜົນ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ເງິນປັນຜົນຈ່າຍໃຫ້ ຟຟລ	436.840	424.884

ຄ) ລາຍຈ່າຍດອກເບ້ຍ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ລາຍຈ່າຍດອກເບ້ຍ - ຟຟລ (ບົດອະທິບາຍຂໍ້ 20)	30.273	30.845

ອີງຕາມສັນຍາຈ່າຍຄືນໜີ້ສິນລະຫວ່າງບໍລິສັດ ແລະ ຟຟລ (ບົດອະທິບາຍຂໍ້ 1 ຄ iii), ບໍລິສັດ ມີພັນທະ ຕ້ອງໄດ້ຈ່າຍເງິນໃນຍອດຄ້າງຊຳລະເງິນກູ້ຢືມໃຫ້ແກ່ ຟຟລ ແລະ ຟຟລ ຈະດຳເນີນການຊຳລະເງິນຄືນໃຫ້ລັດຖະບານ, ລັດຖະບານ ຈະສືບຕໍ່ ຈ່າຍໂດຍກົງໃຫ້ກັບຜູ້ສະໜອງທຶນຕາມການຕົກລົງທີ່ໄດ້ລະບຸໄວ້ໃນສັນຍາກູ້ຢືມດັ່ງເດີມ.

24. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ງ) ຍອດເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງ

	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ບັນຊີໜີ້ຕ້ອງຮັບການຄ້າ (ບົດອະທິບາຍຂໍ້ 9)	436.120	451.654
ບັນຊີໜີ້ຕ້ອງຮັບອື່ນໆ (ບົດອະທິບາຍຂໍ້ 9)	65.944	65.944
ຈ່າຍເງິນລ່ວງໜ້າສຳລັບເງິນລົງທຶນ (ບົດອະທິບາຍຂໍ້ 5)	779.005	474.411
ເງິນກູ້ຢືມໄລຍະຍາວ (ບົດອະທິບາຍຂໍ້ 12)	598.782	937.298

ຈ) ເງິນຕອບແທນກຳມະການ ແລະ ຜູ້ບໍລິຫານ

ສຳລັບປີສິ້ນສຸດວັນທີ 31 ທັນວາ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ເງິນຕອບແທນກຳມະການ ແລະ ຜູ້ບໍລິຫານ	1.819	1.984

ເງິນຕອບແທນກຳມະການ ແລະ ຜູ້ບໍລິຫານ ແມ່ນປະກອບມີເງິນເດືອນ, ເອົາເງິນໝູນກອງປະຊຸມ ແລະ ພີນ ປະໂຫຍດອື່ນໆສຳລັບ ຄະນະກຳມະການ ແລະ ຜູ້ບໍລິຫານຫຼັກ.

ສ) ສັນຍາທີ່ສຳຄັນຕ່າງໆກັບ ຟຟລ

ບໍລິສັດ ໄດ້ເຊັນສັນຍາທີ່ສຳຄັນຕ່າງໆ ກັບ ຟຟລ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍ ຂໍ້ 1 ຄ ແລະ ຂໍ້ 12.

2014:

ພາລະຜູກພັນທຶນ

ບໍລິສັດມີທຸລະກຳທີ່ສຳຄັນ ແລະ ບໍລິສັດໄດ້ ມີພາລະຜູກພັນ ຈາກການເຮັດ ຂໍ້ຕົກລົງ ກ່ຽວກັບ ການບໍລິການ ບຳລຸງຮັກສາ ກັບຫຼາຍຜູ້ສະໜອງ ແລະ ໄດ້ ເຮັດສັນຍາ ຂໍ້ຕົກລົງ ກ່ຽວກັບ ການກໍ່ສ້າງ ກັບຫຼາຍຜູ້ສະໜອງ ກ່ຽວຂ້ອງກັບການຕິດຕັ້ງ ອຸປະກອນຜະລິດໄຟຟ້າ ດັ່ງຕໍ່ໄປນີ້:

ປີ	ມູນຄ່າ (ລ້ານກີບ)	ໄລຍະທີ່ກຳນົດ
2014	68.273	1-5 ປີ
2013	633.227	1-5 ປີ

25. ພາລະຜູກພັນ ແລະ ການເຄື່ອນໄຫວ ທີ່ມີຄວາມສຳຄັນ

ພາລະຜູກພັນຕາມສັນຍາເຊົ່າດຳເນີນງານ - ບໍລິສັດ ເປັນຜູ້ເຊົ່າ.

ບໍລິສັດ ເຊົ່າທີ່ດິນພາຍໃຕ້ສັນຍາເຊົ່າດຳເນີນງານ ສຳລັບເຄື່ອນໄຟຟ້າພະລັງງານນ້ຳ ທີ່ບໍ່ສາມາດຍົກເລີກ. ໄລຍະເວລາ ການເຊົ່າແມ່ນ 30 ປີ.

ສຳລັບ ປີສິ້ນສຸດວັນທີ 31 ທັນວາ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
ບໍ່ເກີນ 1 ປີ	28.637	28.637
ເກີນກວ່າ 1 ປີ ແລະ ບໍ່ເກີນ 5 ປີ	126.395	124.963
ເກີນກວ່າ 5 ປີ	876.214	908.887
	1.031.246	1.062.487

26. ເຫດການພາຍຫຼັງວັນທີ່ປິດລາຍງານຖານະການເງິນ

2014:

ໃນກອງປະຊຸມສະພາຜູ້ບໍລິຫານບໍລິສັດຄັ້ງທີ 1/2015 ໄດ້ຈັດຂຶ້ນໃນວັນທີ 23 ມີນາ 2015, ສະພາຜູ້ບໍລິຫານໄດ້ ລົງມະຕິອະນຸມັດລາຍການເຄື່ອນໄຫວທີ່ສຳຄັນດັ່ງຕໍ່ໄປນີ້:

<u>ອະນຸມັດຈ່າຍເງິນປັນຜົນ</u>

ສະພາຜູ້ບໍລິຫານໄດ້ລົງມະຕິອະນຸມັດການຈ່າຍປັນຜົນ ສຳລັບ ກຳໄລສຸດທິ ສຳລັບເຄິ່ງທີ່ສອງປີ ຫຼື 6 ເດືອນທ້າຍປີ ຈາກ ວັນທີ 1 ກໍລະກົດ ເຖິງ 31 ທັນວາ 2014 ຈຳນວນ 268 ກີບ ຕໍ່ຮຸ້ນ (31 ທັນວາ 2013: 293 ກີບ ຕໍ່ ຮຸ້ນ) ລວມຈຳ ນວນເງິນ 328.625 ລ້ານກີບ (31 ທັນວາ 2013: 359.281 ລ້ານກີບ).

ການອະນຸມັດເງິນປັນຜົນນີ້ ຈະຈ່າຍໃນວັນທີ 5 ພຶດສະພາ 2015. ນອກຈາກ ອະນຸມັດຈ່າຍເງິນປັນຜົນນີ້ ບໍລິສັດ ຍັງ ໄດ້ຈ່າຍເງິນປັນຜົນງວດ ເຄິ່ງປີທຳອິດ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ ທີ 23.

<u>ການຊື້ກິດຈະການຜູ້ຜະລິດພະລັງງານໄຟຟ້າເອກະລາດ ຈາກ ຟຟລ</u>

ສະພາຜູ້ບໍລິຫານໄດ້ອະນຸມັດ ຊື້ເງິນລົງທຶນໃນໂຄງການນ້ຳຄານ 2 ແລະ ຫຍ້ອຍລຳພັນໃຫຍ່ ຈາກ ຟຟລ. ການໂອນກຳ ມະສິດດັ່ງກ່າວຈະສຳເລັດໄດ້ຕໍ່ເມື່ອທັງສອງຝ່າຍໄດ້ເຮັດຕາມຂໍ້ຕົກລົງຕ່າງໆໃນບົດບັນທຶກຄວາມເຂົ້າໃຈສຳລັບການໂອນ ຊັບສິນໂຄງການໃຫ້ສຳເລັດ.

26. ເຫດການພາຍຫຼັງວັນທີບົດລາຍງານຖານະການເງິນ (ຕໍ່)

<u>ການເພີ້ມທຶນຈົດທະບຽນ</u>

ສະພາຜູ້ບໍລິຫານໄດ້ລົງມະຕິອະນຸມັດການເພີ້ມທຶນຈົດທະບຽນຂອງ ບໍລິສັດໂດຍອອກຮຸ້ນໃໝ່ບໍ່ເກີນ 464.783.334 ຮຸ້ນ ໃນມູນຄ່າ ຮຸ້ນລະ 4.000 ກີບ ແລະ ຈະໄດ້ຮັບການສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນຄົນເກົ່າ, ຜູ້ຖືຮຸ້ນສະເພາະເຈາະຈົງ ແລະ ປະຊາຊົນທົ່ວໄປ ຫຼັງຈາກການຂາຍຮຸ້ນໃໝ່ ບໍລິສັດຈະມີທຶນເພີ້ມຂຶ້ນຈາກ 1.226.216.765 ຮຸ້ນ ເປັນ 1.690.985.099 ຮຸ້ນ.

ລາຍການທັງໝົດຂ້າງເທິງຈະຖືກສະເໜີເຂົ້າໃນກອງປະຊຸມຜູ້ຖືຮຸ້ນປະຈຳປີ ໂດຍຜູ້ຖືຮຸ້ນຈະມອບສິດໃຫ້ສະພາຜູ້ບໍລິຫານ ຫຼື ບຸກຄົນ ທີ່ສະພາຜູ້ບໍລິຫານແຕ່ງຕັ້ງ ໃຫ້ມີສິດຕັດສິນໃຈ ແລະ ອະນຸມັດ ລາຍການດັ່ງກ່າວຂ້າງເທິງນີ້.

2013:

ໃນກອງປະຊຸມສະພາຜູ້ບໍລິຫານບໍລິສັດຄັ້ງທີ 1/2014 ໄດ້ຈັດຂຶ້ນໃນວັນທີ 5 ມີນາ 2014, ສະພາຜູ້ບໍລິຫານໄດ້ລົງມະຕິອະນຸມັດລາຍການເຄື່ອນໄຫວທີ່ສຳຄັນດັ່ງຕໍ່ໄປນີ້:

<u>ອະນຸມັດຈ່າຍເງິນປັນຜົນ</u>

ສະພາຜູ້ບໍລິຫານໄດ້ລົງມະຕິອະນຸມັດການຈ່າຍປັນຜົນ ສຳລັບ ກຳໄລສຸດທິ 6 ເດືອນ ສຳລັບງວດວັນທີ 2 ກໍລະກົດ ເຖິງ 31 ທັນວາ 2013 ເປັນຈຳນວນ 293 ກີບຕໍ່ຮຸ້ນ (31 ທັນວາ 2012: 280 ກີບ ຕໍ່ຮຸ້ນ) ເປັນເງິນລວມທັງໝົດ 359.281 ລ້ານ ກີບ (31 ທັນວາ 2012: 343.341 ລ້ານກີບ).

ການອະນຸມັດເງິນປັນຜົນນີ້ ຈະຈ່າຍໃນວັນທີ 30 ເມສາ 2014. ນອກຈາກ ອະນຸມັດຈ່າຍເງິນປັນຜົນນີ້ ບໍລິສັດ ຍັງໄດ້ຈ່າຍເງິນປັນຜົນງວດ ເຄິ່ງປີທຳອິດ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ ທີ 20.

<u>ການຊື້ກິດຈະການຜູ້ຜະລິດພະລັງງານໄຟຟ້າເອກະລາດ ຈາກ ຟຟລ</u>

ສະພາຜູ້ບໍລິຫານໄດ້ອະນຸມັດ ຊື້ເງິນລົງທຶນໃນນ້ຳຄານ Nam Sana Hydropower Project ຈາກ ຟຟລ.

ການລົງທຶນທັງໝົດທີ່ຈະໄດ້ຮັບ ແລະ ຈະຖືກໂອນມາຍັງບໍລິສັດເມື່ອເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ ສຳລັບການໂອນຊັບສິນໂຄງການສຳເລັດ.

<u>ການອອກພັນທະບັດຂອງບໍລິສັດ</u>

ສະພາຜູ້ບໍລິຫານໄດ້ອະນຸມັດ ໃຫ້ບໍລິສັດ ອອກພັນທະບັດ ຈຳນວນ 200-300 ລ້ານ ໂດລາ ສຳລັບການຂະຫຍາຍທຸລະກິດຂອງບໍລິສັດ.

ທັງໝົດຂ້າງເທິງຈະຖືກສະເໜີເຂົ້າໃນກອງປະຊຸມຜູ້ຖືຮຸ້ນປະຈຳປີ ໂດຍຜູ້ຖືຮຸ້ນຈະມອບສິດໃຫ້ສະພາຜູ້ບໍລິຫານ ຫຼື ບຸກຄົນ ທີ່ສະພາຜູ້ບໍລິຫານແຕ່ງຕັ້ງ ໃຫ້ມີສິດຕັດສິນໃຈ ແລະ ອະນຸມັດ ລາຍການດັ່ງກ່າວຂ້າງເທິງນີ້.

27. ຂໍ້ມູນເພີ່ມເຕີມ

ນອກຈາກນີ້ ບໍລິສັດ ໄດ້ນຳສະເໜີ ໃບລາຍງານຜົນໄດ້ຮັບສຳລັບໄລຍະສາມເດືອນທ້າຍ ສິ້ນສຸດວັນທີ 31 ທັນວາ 2014 ພາຍໃຕ້ບົດອະທິບາຍນີ້. ການນຳສະເໜີນີ້ ໄດ້ປະຕິບັດຕາມລະບຽບໃນການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ ອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງປະເທດລາວ (ບົດອະທິບາຍ 2.1).

ບົດສະຫຼຸບຂອງໃບລາຍງານຜົນໄດ້ຮັບ
ສຳລັບ ໄລຍະ 3 ເດືອນ ສິ້ນສຸດວັນທີ 31 ທັນວາ 2014

	ທົ່ວທອນຄົນ ລ້ານກີບ
ຂາຍຜະລິດຕະພັນ	186.079
ຕົ້ນທຶນການຂາຍ	(47.844)
ກຳໄລລວມ	138.235
ລາຍຮັບອື່ນໆ	1.076
ລາຍຈ່າຍບໍລິຫານ	(74.107)
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນສຸດທິ	(12.467)
ລາຍຈ່າຍດອກເບ້ຍ	(7.302)
ສ່ວນແບ່ງກຳໄລຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	106.557
ກຳໄລກ່ອນອາກອນ	151.992
ອາກອນກຳໄລ	(15.401)
ກຳໄລສຸດທິ	136.591

ผู้อำนวยการใหญ่
Managing Director




ບຸນລ້ຽນ ສີວັນເພັງ

หัวหน้าพะแนกบัญชี
Manager of Accounting Division

อันแสง อันมะวิง

หัวหน้าพะแนกการตรวจสอบภายใน
Manager of Internal Audit Division

มะนิวัน ยอดกองมี



ສຳນັກງານໃຫຍ່ຕັ້ງຖະໜົນ ລາວ - ໄທ, ຕູ້ ປ.ນ 2392, ບ້ານ ທົ່ງກາງ ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ.
ສປປ ລາວ ໂທລະສັບ : (856-21) 316142, ແຟັກ : (856-21) 316141
E-Mail : edlgenhq@edlgen.com.la; Website : www.edlgen.com.la